ພັກກອມມູນິດຫວຽດນາມ

ເອກະສານ ກອງປະຊຸມໃຫຍ່ ຄັ້ງທ VIII

ສຳນັກພິມການເມືອງແຫ່ງຊາດຫວຽດນາມ
ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ ສ.ປ.ປ.ລາວ

ພັກກອມມູນິດຫວຽດນາມ

ເອກະສານ ກອງປະຊຸມໃຫຍ່ ຄັ້ງທີ VIII

ແປໂດຍ: ຫງວຽນຕ໋ຽນງອກ

ສຳນັກພິມການເມືອງແຫ່ງຊາດຫວຽດນາມ
ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ ສ.ປ.ປ.ລາວ
ຮ່າໂນ້ຍ - 1996

ขอให้ทุกคน
มีความสุข
เจริญก้าวหน้า

LỜI NHÀ XUẤT BẢN

Sau 10 năm đổi mới, với việc thực hiện thắng lợi nghị quyết của hai kỳ đại hội Đảng (Đại hội VI và Đại hội VII), nhân dân Việt Nam đã thu được những thành tựu to lớn trên tất cả các mặt. Đại hội lần thứ VIII Đảng Cộng sản Việt Nam là Đại hội tiếp tục đổi mới đất nước Việt Nam theo con đường xã hội chủ nghĩa. Đại hội đã kiểm điểm việc thực hiện nghị quyết Đại hội VII, tổng kết 10 năm đổi mới, rút ra những bài học kinh nghiệm, đề ra mục tiêu, phương hướng, nhiệm vụ của toàn Đảng, toàn dân trong thời kỳ mới. Đại hội VIII có ý nghĩa lịch sử, đánh dấu bước ngoặt chuyển đất nước sang thời kỳ mới - thời kỳ đẩy mạnh công nghiệp hóa, hiện đại hóa.

Với ý nghĩa đó, Nhà xuất bản Chính trị quốc gia Việt Nam và Nhà xuất bản và phát hành sách Nhà nước Cộng hòa dân chủ nhân dân Lào liên kết xuất

bản bằng tiếng Lào cuốn: "***Văn kiện Đại hội VIII Đảng cộng sản Việt Nam***" để phục vụ bạn đọc lào. Đây là bước phát triển mới trong sự hợp tác giữa hai nhà xuất bản, nhằm góp phần tăng cường tình hữu nghị và hợp tác toàn diện giữa hai Đảng và nhân dân hai nước Việt Nam và Lào trong sự nghiệp đổi mới hiện nay ở mỗi nước.

Xin trân trọng giới thiệu cuốn sách cùng bạn đọc Lào.

Tháng 8 năm 1996

NHÀ XUẤT BẢN CHÍNH TRỊ QUỐC GIA VIỆT NAM

VÀ NHÀ XUẤT BẢN VÀ PHÁT HÀNH SÁCH

NHÀ NƯỚC CHDCND LÀO.

ຄຳນຳຂອງສຳນັກພິມຈຳໜ່າຍ

ພາຍຫລັງສິບປີແຫ່ງການປ່ຽນແປງໃໝ່, ດ້ວຍການປະຕິບັດມະຕິກອງປະຊຸມໃຫຍ່ຂອງພັກສອງຄັ້ງ (ຄັ້ງທີ VI ແລະ ຄັ້ງທີ VII) ຢ່າງມີໄຊ, ປະຊາຊົນຫວຽດນາມໄດ້ຍາດເອົາຜົນສຳເລັດອັນໃຫຍ່ໂຕໃນທຸກດ້ານ. ກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກກອມມູນິດຫວຽດນາມເຊິ່ງແມ່ນກອງປະຊຸມໃຫຍ່ສືບຕໍ່ພາລະກິດປ່ຽນແປງໃໝ່ໃຫ້ປະເທດກ້າວຂຶ້ນຕາມເສັ້ນທາງສັງຄົມນິຍົມ. ກອງປະຊຸມໃຫຍ່ໄດ້ສຳຫລວດການປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VII, ສະຫລຸບສິບປີແຫ່ງການປ່ຽນແປງໃໝ່, ຖອດຖອນບົດຮຽນຕ່າງໆ, ວາງຈຸດໝາຍ, ທິດທາງ, ໜ້າທີ່ໃຫ້ທົ່ວພັກ, ທົ່ວປວງຊົນໃນໄລຍະໃໝ່.

ກອງປະຊຸມໃຫຍ່ຄັ້ງທີ VIII ມີຄວາມໝາຍປະຫວັດສາດ, ເຊິ່ງຂີດໝາຍບາດລ້ຽວຫັນປ່ຽນປະເທດມາສູ່ໄລຍະໃໝ່-ໄລຍະຊຸກຍູ້ການຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝຢ່າງແຂງແຮງ.

ດ້ວຍຄວາມໝາຍດັ່ງກ່າວ, ສຳນັກພິມການເມືອງແຫ່ງຊາດຂອງຫວຽດນາມ ແລະ ສຳນັກພິມແລະຈຳໜ່າຍປຶ້ມແຫ່ງລັດ ສປປລາວ

ຈິ່ງຮ່ວມສຳພັນກັບໃນການຈັດພິມ: *"ເອກະສານກອງປະຊຸມໃຫຍ່ຄັ້ງ ທີ VIII ຂອງພັກກອມມູນິດຫວຽດນາມ"* ເປັນພາສາລາວເພື່ອຮັບ ໃຊ້ເພື່ອນຜູ້ອ່ານລາວທັງຫລາຍ. ທັງນີ້ແມ່ນບາດກ້າວຂະຫຍາຍຕົວ ໃໝ່ໃນການຮ່ວມມືລະຫວ່າງສຳນັກພິມທັງສອງແນໃສ່ປະກອບສ່ວນ ເພີ່ມທະວີຄວາມມິດຕະພາບ ແລະ ການຮ່ວມມືຮອບດ້ານລະຫວ່າງພັກ ແລະ ປະຊາຊົນຫວຽດນາມ ແລະ ລາວທັງສອງຊາດໃນພາລະກິດປ່ຽນ ແປງໃໝ່ຂອງແຕ່ລະປະເທດໃນປະຈຸບັນນີ້.

ດ້ວຍຄວາມນັບຖືຢ່າງສູງຂໍແນະນຳປຶ້ມດັ່ງກ່າວມາຍັງທ່ານຜູ້ອ່ານ ລາວທັງຫລາຍ.

ເດືອນສິງຫາ 1996

ສຳນັກພິມການເມືອງແຫ່ງຊາດຫວຽດນາມ ແລະ

ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ

ສປປລາວ

ສຸນທອນພົດໄຂກອງປະຊຸມໃຫຍ່
ຜູ້ແທນທົ່ວປະເທດຄັ້ງທີ VIII

(ສະເໜີໂດຍສະຫາຍເລດຶກແອງ, ກຳມະການກົມການເມືອງ
ຄະນະບໍລິຫານງານສູນກາງສະໄໝທີ VII,
ອ່ານຕອນເຊົ້າວັນທີ 28 ມີຖຸນາ 1996).

ຮອນຄະນະປະທານກອງປະຊຸມໃຫຍ່,

ຮອນບັນດາທ່ານແຂກທີ່ຮັກແພງທັງຫລາຍ,

ຮອນບັນດາສະຫາຍຜູ້ແທນກອງປະຊຸມໃຫຍ່,

ມື້ນີ້, ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ VIII ຂອງພັກກອມມູ ນິດຫວຽດນາມໄດ້ໄຂຂຶ້ນທີ່ນະຄອນຫລວງຮ່າໂນ້ຍ. ກ່ອນອື່ນໝົດ, ໃນ ນາມຕາງໜ້າຄະນະປະທານກອງປະຊຸມໃຫຍ່ ແລະ ຄະນະບໍລິຫານງານ ສູນກາງຄັ້ງທີ VII, ຂ້າພະເຈົ້າຂໍສະແດງຄວາມຄຳນັບຊົມເຊີຍສະຫາຍ ຜູ້ແທນທັງຫລາຍຢ່າງສຸດອົກສຸດໃຈ, ອັນນັ້ນກໍ່ແມ່ນບັນດາສະມາຊິກພັກ ຜູ້ທີ່ດີເດັ່ນທັງຫລາຍໄດ້ພ້ອມກັນກັບທົ່ວພັກ, ທົ່ວປວງຊົນ, ທົ່ວກອງທັບສ້າງ ໄຊຍະມະອັນສະຫງ່າງາມຂຶ້ນໃນ 50 ປີແຫ່ງການກໍ່ສ້າງ ແລະ ປົກປັກ

ຮັກສາປະເທດຊາດທີ່ຮັກແພງຂອງພວກເຮົາ.

ກອງປະຊຸມໃຫຍ່ຂອງພວກເຮົາຂໍສະແດງຄວາມຄຳນັບຊົມເຊີຍຢ່າງ ສຸດອົດສຸດໃຈ ແລະ ຂໍສະແດງຄວາມຂອບອົກຂອບໃຈຢ່າງຈິງໃຈຕໍ່ບັນ ດາຜູ້ແທນສາກົນ, ບັນດາທ່ານແຂກທີ່ຮັກແພງໄດ້ມາຮ່ວມກອງປະຊຸມ ໃຫຍ່, ເຊິ່ງໄດ້ນຳເອົາຄວາມສັນທະວະໄມຕີອັນສະໜິດສະໜົມ ແລະ ຄວາມລະດົມສິ່ງເສີມອັນໃຫຍ່ຫລວງມາສູ່ພັກ ແລະ ປະຊາຊົນເຮົາ.

ກອງປະຊຸມໃຫຍ່ຂໍຄຳນັບຊົມເຊີຍຢ່າງສຸດອົກສຸດໃຈ ແລະ ສະແດງ ຄວາມຮູ້ບຸນຄຸນຕໍ່ບັນດາສະຫາຍທີ່ປຶກສາຄະນະບໍລິຫານງານສູນກາງໄດ້ ເຮັດວຽກທຳງານຢ່າງລົ້ນຕົວໃນການປະກອບສ່ວນເຂົ້າວຽກງານຂອງ ພັກ ແລະ ລັດ ຢ່າງຕັ້ງໜ້າ ແລະ ມີປະສິດທິຜົນ.

ກອງປະຊຸມໃຫຍ່ຂໍສະແດງຄວາມຄຳນັບຊົມເຊີຍຢ່າງສຸດອົກສຸດໃຈຕໍ່ ບັນດາສະຫາຍຜູ້ແທນປະຕິວັດຜູ້ອາວຸໂສ, ບັນດາແມ່ຫວຽດນາມຜູ້ວິລະ ຊົນ, ບັນດາຜູ້ຊົງຄຸນວຸດທິ, ນັກຮຽນຮູ້ປັນຍາຊົນໄດ້ອຸທິດຕັ້ງຫລາຍສິ່ງ ຫລາຍຢ່າງທີ່ສຸດໃຫ້ແກ່ພາລະກິດປະຕິວັດຂອງຊາດ.

ໃນໂມງ ແລະ ວິນາທີອັນສະຫງ່າຜ່າເຜີຍນີ້, ກອງປະຊຸມໃຫຍ່ພວກ ເຮົາຂໍສະແດງຄວາມເຄົາລົບນັບຖືຢ່າງຈິງໃຈໃຫ້ຫານຄຳນຶງເຖິງ ແລະ ຮູ້ບຸນຄຸນຢ່າງບໍ່ມີຂອບເຂດຕໍ່ປະທານໂຮ່ຈິມິນ, ທ່ານຜູ້ນຳຜູ້ຍິ່ງໃຫຍ່ທີ່ເຄົາ ລົບຮັກຢ່າງຫລົ້ນເຫລືອຂອງພັກ ແລະ ຂອງຊາດເຮົາ, ເພື່ອນທີ່ສະໜິດ ສະໜົມຂອງປະຊາຊົນບັນດາຊາດໃນໂລກໄດ້ຕໍ່ສູ້ເພື່ອສັນຕິພາບ, ເອກະ ລາດ, ເສລີພາບ, ປະຊາທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມ.

ກອງປະຊຸມໃຫຍ່ຂອງພວກເຮົາມວນຄະນິງຄິດເຖິງບັນດາສະຫາຍ ກຳມະກອນ ຄະນະບໍລິຫານງານສູນກາງສະໄໝທີ VII ໄດ້ລ່ວງລັບໄປ ແລ້ວກ່າວຄື: ຫງຽນໄຫນິນ, ໂດຈີງ, ບຸ່ຍທັນເວີນ, ເລມາຍພ້ອມກັບສະ ມາຊິກພັກ, ພະນັກງານ, ນັກຮົບ ແລະ ຜີນ້ອງຮ່ວມຊາດ ທີ່ຮັກແພງຫລາຍ ຄົນໄດ້ເສຍສະຫລະເພື່ອພາລະກິດກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດ ນັບຕັ້ງແຕ່ພາຍຫລັງກອງປະຊຸມໃຫຍ່ຄັ້ງທີ VII ເປັນຕົ້ນມາຮອດປະຈຸບັນ ນີ້.

ໃນຫ້າປີທີ່ຜ່ານມາ, ທົ່ວພັກ, ທົ່ວປວງຊົນ, ທົ່ວກອງທັບເຮົາໄດ້ສູ້ຊົນ ຜ່ານຜ່າທຸກຄວາມຫຍຸ້ງຍາກຂໍ້ທົດລອງທຸກປະການຢ່າງບໍ່ຢຸດບໍ່ເຊົາ, ສືບ ຕໍ່ຊຸກຍູ້ກິດຈະການປ່ຽນແປງໃໝ່ອັນຮອບດ້ານຂອງປະເທດເຮົາຢ່າງ ແຂງແຮງ ແລະ ໄດ້ບັນລຸບັນດາຜົນງານອັນຍິ່ງໃຫຍ່, ມີຄວາມໝາຍ ອັນສຳຄັນທີ່ສຸດ. ຊີວິດການເປັນຢູ່ທາງດ້ານວັດຖຸຂອງປະຊາຊົນສ່ວນ ຫລວງຫລາຍໄດ້ຮັບການປົວແປງໃຫ້ດີຂຶ້ນ; ປະເທດຊາດ ບ້ານເມືອງມີ ຄວາມສະຖຽນລະພາບ ແລະ ຂະຫຍາຍຕົວ, ອັນໄດ້ພົ້ນອອກຈາກວິກິດ ການດ້ານເສດຖະກິດ-ສັງຄົມ ແລະ ຫັນມາສູ່ໄລຍະໃໝ່, ໄລຍະຊຸກຍູ້ການ ຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝຢ່າງແຂງແຮງ. ພວກເຮົາ ຮູ້ສຶກມ່ວນຊື່ນ ແລະ ເອກອ້າງທະນົງໃຈຕໍ່ສິ່ງດັ່ງກ່າວ. ເພື່ອນມິດສາ ກົນກໍ່ຮັບຮອງ ແລະ ແບ່ງປັນຄວາມມ່ວນຊື່ນກັບພວກເຮົາ.

ພາຍໃຕ້ແສງສະຫວ່າງຂອງລັດທິມາກ-ເລນິນ ແລະ ແນວຄິດໂຮ່ ຈິມິນ, ບົນພື້ນຖານນັບຖືເປັນຢ່າງຍິ່ງຕໍ່ບັນດາຜົນງານຂອງ 20 ປີແຫ່ງ

ການກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດ ທີ່ຜ່ານມາ, ກອງປະຊຸມໃຫຍ່ຄັ້ງທີ VIII ຈະເດີນເລິກໃນການສຳຫລວດຜົນໄດ້ໃນ 5 ປີປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VII; ສະຫລຸບ 10 ປີແຫ່ງການປ່ຽນແປງໃໝ່; ວາງຈຸດໝາຍທິດທາງ, ໜ້າທີ່ຂອງທົ່ວພັກ, ທົ່ວປວງຊົນ, ທົ່ວກອງທັບ ໃນໄລຍະໃໝ່.

ກອງປະຊຸມໃຫຍ່ຄັ້ງທີ VIII ກໍ່ຈະສຳຫລວດການນຳພາຂອງພັກ, ວາງທິດທາງ, ໜ້າທີ່ກໍ່ສ້າງພັກ, ດັດແປງກົດລະບຽບຂອງພັກ, ເລືອກຕັ້ງຄະນະບໍລິຫານງານສູນກາງພັກສະໄໝໃໝ່ ເຊິ່ງເປັນຕົວແທນກ່ຽວກັບຄຸນທາດທາງດ້ານການເມືອງ ແລະ ຄຸນສົມບັດປະຕິວັດ, ມີຫົວຄິດປັນຍາ ແລະ ຄວາມສາມາດຢ່າງພຽງພໍເພື່ອປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VIII ໃຫ້ສຳເລັດຜົນດີ.

ໃນຂະບວນວິວັດກະກຽມດຳເນີນກອງປະຊຸມໃຫຍ່, ພວກເຮົາໄດ້ຮັບຄວາມຄິດຄວາມເຫັນອັນອຸດົມສົມບູນ, ປະເສີດເລີດລ້ຳຫລາຍຢ່າງຈາກບັນດາອົງຄະນະພັກ ແລະ ປະຊາຊົນຊັ້ນຄົນຕ່າງໆ ເຊິ່ງປະກອບໃຫ້ກອງປະຊຸມໃຫຍ່ກ່ຽວກັບແນວທາງ, ທິດທາງ, ຈຸດໝາຍ ແລະ ໜ້າທີ່ຕົ້ນຕໍເພື່ອພັດທະນາປະເທດຊາດ, ບັນດາເອກະສານອັນສຳຄັນທີ່ສະເໜີຕໍ່ກອງປະຊຸມໃຫຍ່ມື້ນີ້ແມ່ນຍອດແຍ້ຂອງຫົວຄິດປັນຍາຂອງທົ່ວພັກ, ທົ່ວປວງຊົນ ແລະ ທົ່ວກອງທັບເຮົາ. ກອງປະຊຸມໃຫຍ່ຂອງພວກເຮົາສະແດງຄວາມຂອບອົກຂອບໃຈຢ່າງສຸດອົກສຸດໃຈຕໍ່ ແນວໂຮມ ປະເທດຊາດຂັ້ນຕ່າງໆ, ຂະແໜງການຕ່າງໆ, ອົງການຈັດຕັ້ງຕ່າງໆ

ຂອງປະຊາຊົນ, ບັນດາວົງຜູ້ຊົງຄຸນວຸດທິ, ນັກຮຽນຮູ້ປັນຍາຊົນ, ສາສະໜາ, ຊົນຊາດ, ວັນນະຄະດີ, ສິລະປະກຳ, ຜີນ້ອງຮ່ວມຊາດທີ່ອາໃສຢູ່ຕ່າງປະເທດ ແລະ ເພື່ອນມິດສາກົນທັງຫລາຍໄດ້ປະກອບສ່ວນເຂົ້າໃຫ້ຄວາມສຳເລັດຜົນດີຂອງກອງປະຊຸມໃຫຍ່.

ກອງປະຊຸມໃຫຍ່ມີຄວາມໝາຍປະຫວັດສາດເຊິ່ງຂີດໝາຍບາດລ້ຽວຂອງປະເທດເຮົາຫັນສູ່ສະໄໝໃໝ່-ສະໄໝຊຸກຍູ້ການຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝຢ່າງແຂງແຮງ, ກໍ່ສ້າງປະເທດຫວຽດນາມເອກະລາດ, ປະຊາທິປະໄຕ, ຮັ່ງມີເຂັ້ມແຂງສັງຄົມຍຸດຕິທຳ, ສີວິໄລຕາມທິດກຳນົດສັງຄົມນິຍົມ, ທັງນີ້ກໍ່ເພື່ອຄວາມສົມບູນພຸນສຸກ ຂອງປະຊາຊົນເຮົາ, ເພື່ອຄວາມເປັນມິດຈິດມິດໃຈ ແລະ ການຮ່ວມມືກັບປະຊາຊົນປະເທດຕ່າງໆ ໃນໂລກ.

ດ້ວຍຈິດໃຈດັ່ງກ່າວ, ຂ້າພະເຈົ້າຂໍປະກາດໄຂກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກກອມມູນິດຫວຽດນາມ.

ຂໍອວຍໃຊ້ໃຫ້ກອງປະຊຸມໃຫຍ່ສຳເລັດຜົນດີຢ່າງສວຍສົດງົດງາມ.

ສືບຕໍ່ພາລະກິດປ່ຽນແປງໃຫມ່,
ຊຸກຍູ້ການທັນເປັນອຸດສາຫະກຳ, ທັນເປັນທັນສະໄຫມ
ຢ່າງແຂງແຮງເພື່ອຈຸດຫມາຍໃຫ້ປະຊາຊົນຮັ່ງມີ,
ປະເທດຊາດເຂັ້ມແຂງ, ສັງຄົມມີຄວາມຍຸດຕິທຳ, ສີວິໄລ,
ກ້າວຂຶ້ນສັງຄົມນິຍົມຢ່າງຫນັກແຫນ້ນ

(ລາຍງານຂອງຄະນະບໍລິຫານງານສູນກາງພັກສະໄຫມທີ VII ວ່າດ້ວຍເອກະສານຕ່າງໆ ທີ່ສະເຫນີໃນກອງປະຊຸມໃຫຍ່ ຄັ້ງທີ VIII ສະເຫນີໂດຍສະຫາຍໂດເມືອຍ, ເລຂາທິການໃຫຍ່ ເມື່ອວັນທີ 28 ມີຖຸນາ 1996)

ຮອງຄະນະປະທານ,

ຮອງບັນດາສະຫາຍທີ່ປຶກສາຂອງຄະນະບໍລິຫານງານສູນກາງ,

ຮອງສະຫາຍຜູ້ແທນທັງຫລາຍ,

ຮອງບັນດາທ່ານແຂກທີ່ຮັກແພງທັງຫລາຍ,

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ VIII ຂອງພັກມີຄວາມຫມາຍອັນສຳຄັນເປັນພິເສດ, ຂີດຫມາຍຫລັກໃຫມ່ໃນວິວັດທະນາການຂະຫຍາຍຕົວຂອງການປະຕິວັດຢູ່ປະເທດເຮົາ. ກອງປະຊຸມໃຫຍ່ມີຫນ້າທີ່

ສຳຫລວດກວດກາການປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VII, ສະຫລຸບ 10 ປີແຫ່ງການປ່ຽນແປງໃໝ່; ວາງເປົ້າໝາຍ, ທິດທາງ, ວິທີການແກ້ໄຂສຳລັບການປະຕິບັດການຫັນປະເທດຊາດເປັນອຸດສາຫະກຳ, ເປັນທັນສະໄໝເຖິງປີ 2000 ແລະ 2020; ເພີ່ມເຕີມ, ດັດແປງກົດລະບຽບຂອງພັກ.

ໃນຂະບວນວິວັດແຫ່ງການກະກຽມເອກະສານຕ່າງໆນີ້, ອົງຄະນະພັກຂັ້ນຕ່າງໆ,ແນວໂຮມປະເທດຊາດ, ບັນດາອົງການຈັດຕັ້ງຂອງມະຫາຊົນ, ບັນດາການຈັດຕັ້ງການເມືອງ, ສັງຄົມ, ບັນດາສະຫາຍນັກປະຕິວັດຜູ້ອາວຸໂສ, ບັນດາຜູ້ຊ່ຽວຊານວຸດທິ, ປັນຍາຊົນໄດ້ປະກອບຄຳຄິດຄຳເຫັນຫລາຍຢ່າງທີ່ສຳຄັນ ແລະ ຖືກຕ້ອງຊັດເຈນ. ຫລັງຈາກທີ່ລາຍງານການເມືອງໄດ້ຮັບການປະກາດເປັນທາງການຢ່າງກ້ວາງຂວາງແລ້ວ, ປະຊາຊົນທຸກຊັ້ນຄົນສ່ວນຫລວງຫລາຍໃນທົ່ວປະເທດ ແລະ ພີ່ນ້ອງຮ່ວມຊາດທີ່ດຳລົງຊີວິດຢູ່ຕ່າງປະເທດ ໄດ້ຜາກັນຢ່າງຝຶດເຕືອດໃນການປະກອບຄຳຄິດຄຳເຫັນຫລາຍຄຳອັນປະເສີດ, ເຕັມໄປດ້ວຍຄວາມສຸດອົກສຸດໃຈ, ທັງນີ້ກໍ່ສະແດງເຈດຈຳນົງ, ຄວາມມຸ່ງມາດປາດຖະໜາ ແລະ ຄວາມຕັດສິນໃຈຂອງທົ່ວປວງຊົນສາມັກຄີກັນອ້ອມຂ້າງພັກກອມມູນິດຫວຽດນາມ, ພ້ອມພຽງຮຽງໜ້າກັບພັກໃນການປຶກສາຫາລືຕໍ່ວຽກບ້ານວຽກເມືອງ. ສາມາດເວົ້າໄດ້ວ່າເອກະສານຕ່າງໆ ທີ່ຖືກສະເໜີຕໍ່ກອງປະຊຸມໃຫຍ່ເທື່ອນີ້ແມ່ນຄວາມຍອດແຍ້ທາງຫົວຄິດປັນຍາຂອງທົ່ວພັກ, ທົ່ວປວງຊົນເຮົາ.

ຕາງໜ້າຄະນະບໍລິຫານງານສູນກາງພັກສະໄໝທີ VII, ຂ້າພະ

ເຈົ້າຂໍສະເໜີບັນດາເນື້ອໃນຕົ້ນຕໍຂອງເອກະສານຕ່າງໆດັ່ງນີ້:

I - ຕີລາຄາການປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VII ພາຍໃນ 5 ປີ ແລະ 10 ປີແຫ່ງການປ່ຽນແປງໃຫມ່

ກອງປະຊຸມໃຫຍ່ຄັ້ງທີ VIII ຕ້ອງຕີລາຄາຢ່າງຖືກຕ້ອງກ່ຽວກັບຜົນໄດ້ພາຍໃນ 5 ປີ ແຫ່ງການປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VII ແລະ 10 ປີແຫ່ງການປະຕິບັດແນວທາງປ່ຽນແປງໃໝ່ທີ່ຖືກວາງອອກມານັບຕັ້ງແຕ່ກອງປະຊຸມໃຫຍ່ຄັ້ງທີ VI ຂອງພັກເປັນຕົ້ນໃຫ້ຖອດຖອນບັນດາບົດຮຽນໃຫຍ່, ເພື່ອເປັນຫລັກຖານແກ່ການກຳນົດຈຸດໝາຍ, ໜ້າທີ່ຢ່າງຖືກຕ້ອງສຳລັບໄລຍະຫາງທີ່ຈະເຖິງ.

ພາຍໃນສິບປີກ່ອນໆນີ້, ເມື່ອພັກເຮົາວາງແນວທາງປ່ຽນແປງໃໝ່ອັນຮອບດ້ານ, ປະເທດເຮົາພວມຢູ່ໃນພາວະການອັນໜັກໜ່ວງທີ່ສຸດຂອງວິກິດການເສດຖະກິດ-ສັງຄົມ: ການຜະລິດຂຸດໂຊມຢຸດຊະງັກ, ເງິນເຟີ້ເພີ່ມກະໂດດຂັ້ນ, ບ້ານເມືອງຖືກປິດລ້ອມທາງດ້ານເສດຖະກິດ, ຊີວິດການເປັນຢູ່ຂອງປະຊາຊົນພົບຄວາມຫຍຸ້ງຍາກທີ່ສຸດ, ຄວາມເຊື່ອກໍ່ຫລຸດຜ່ອນລົງ. ຫລັງຈາກເກືອບ 5 ປີແຫ່ງການສູ້ຊົນອັນລຳບາກຍາກແຂ້ນ, ກ້າແກ່ນໃນການປະຕິບັດແນວທາງປ່ຽນແປງໃໝ່, ປະຊາຊົນເຮົາຈຶ່ງຍາດເອົາບັນດາໄຊຊະນະໃນບາດກ້າວເບື້ອງຕົ້ນອັນສຳຄັນທີ່ສຸດທັງທາງດ້ານເສດຖະກິດ, ສັງຄົມ, ການເມືອງຕໍ່ພາຍໃນ ແລະ ຕໍ່ພາຍນອກ, ລະດັບເຄັ່ງຮ້ອນຂອງວິກິດການໄດ້ຫລຸດຜ່ອນລົງສ່ວນໜຶ່ງ

ແລ້ວ. ແນວທາງປ່ຽນແປງໃໝ່ໂດຍກອງປະຊຸມໃຫຍ່ຄັ້ງທີ VI ວາງ ອອກມາກໍ່ຖືກເພີ່ມເຕີມ ແລະ ຂະຫຍາຍຕົວຈາກກອງປະຊຸມໃຫຍ່ຄັ້ງ ທີ VII, ເຊິ່ງສະແດງອອກໃນໂຄງການການເມືອງ, ຍຸດທະສາດ ແລະ ລາຍງານການເມືອງເຊິ່ງກອງປະຊຸມໃຫຍ່ຄັ້ງທີ VII ໄດ້ຜ່ານອະນຸມັດ ແລ້ວ.

ແຕ່ວ່າໃນເວລານັ້ນໆ, ຜົນສຳເລັດຂອງການປ່ຽນແປງໃໝ່ຍັງຄົງ ຈຳກັດ. ການເຕີບໂຕທາງເສດຖະກິດຍັງຊ້າໆ, ເງິນເຟີ້ຍັງບໍ່ທັນຫລຸດ ລົງ, ບັນຫາສັງຄົມໃໝ່ຫລາຍບັນຫາເກີດຂຶ້ນ, ເຊິ່ງມີດ້ານຄັບຂັນຢູ. ອາ ເມລິກາຍັງຄົງສືບຕໍ່ການປິດລ້ອມຂວ້ຳບາດ. ອິດທິກຳລັງທີ່ເປັນສັດຕູ ຊຸກຍູ້ການເຄື່ອນໄຫວຢ່າງແຂງແຮງ ໂດຍຫວັງກໍ່ຄວາມບໍ່ມີສະຖຽຍລະ ພາບດ້ານການເມືອງ, ມ້າງເພທຳລາຍຄວາມສະຫງົບແຫ່ງຊາດ, ທຳ ຮ້າຍເອກະລາດ, ອະທິປະໄຕແຫ່ງຊາດ. ປະເທດເຮົາຊ້ຳພັດຢືນຕໍ່ໜ້າ ບັນດາການທ້ົດສອບອັນເຄັ່ງຮ້ອນທີ່ສຸດ.

ໃນສະພາວະການດັ່ງກ່າວນັ້ນ, ພັກ ແລະ ປະຊາຊົນເຮົາໄດ້ສະແດງ ຫົວຄິດປັນຍາ ແລະ ຄຸນວຸດທິປະຕິວັດຂອງຕົນ, ເສີມຂະຫຍາຍມູນເຊື້ອ ສາມັກຄີ, ຕໍ່ສູ້ອັນກ້າແກ່ນ, ຍູ້ໄພອັນຕະລາຍລະຖອຍໄປ, ຜ່ານຜ່າຄວາມ ທ້ົດສອບ, ພາພາລະກິດປ່ຽນແປງໃໝ່ສືບຕໍ່ກ້າວຂຶ້ນ.

ເບິ່ງສັງລວມ, ກິດຈະການປ່ຽນແປງໃໝ່ໃນ 10 ປີທີ່ຜ່ານມາໄດ້ຍາດ ເອົາຜົນງານອັນໃຫຍ່ຫລວງ, ມີຄວາມໝາຍອັນສຳຄັນທີ່ສຸດ. ໜ້າທີ່ ເຊິ່ງກອງປະຊຸມໃຫຍ່ຄັ້ງທີ VII ວາງອອກມາສຳລັບ 5 ປີ 1991-1995

ໄດ້ສຳເລັດຜົນດີໂດຍພື້ນຖານ.

ພາວະການຢຸດຊະງັກໃນການຜະລິດ, ກໍ່ກວມອຸ້ມວາຍໃນການຈໍລະຈອນສິນຄ້າໄດ້ຮັບການຜ່ານຜ່າແກ້ໄຂ. ເສດຖະກິດເຕີບໂຕໂດຍໄວ, ຍອດຜະລິດຕະພັນພາຍໃນປະເທດ (GDP) ດ້ວຍຈັງຫວະເພີ່ມຂຶ້ນສະເລ່ຍ 8,2% ຕໍ່ປີສຳລັບໄລຍະ 1991-1995. ເງິນເຟີ້ຖືກຍູ້ຖອຍແຕ່ 774,7% ຕໍ່ປີ 1986 ລົງ 67,1% ຕໍ່ປີ 1991, 12,7% ຕໍ່ປີ 1995. ການລົງທຶນໃນທົ່ວສັງຄົມດ້ວຍແຫລ່ງທຶນພາຍໃນ ແລະ ພາຍນອກປະເທດ ເມື່ອປຽບກັບ GDP ຂອງປີ 1990 ແມ່ນ 15,8%, ປີ 1995 ໄດ້ເພີ່ມຂຶ້ນ 27,4 %. ທັນຍາຫານບໍ່ພຽງແຕ່ກຸ້ມກິນເທົ່ານັ້ນແຕ່ຫາກຍັງມີເຂົ້າສານສົ່ງອອກໄດ້ລະຫວ່າງ 2 ລ້ານໂຕນຕໍ່ປີ. ກິດຈະການຫລາຍແຫ່ງທີ່ຂຶ້ນກັບໂຄງປະກອບໂຄງລ່າງແລະພື້ນຖານອຸດສາຫະກຳອັນສຳຄັນຕົ້ນຕໍ່ຖືກກໍ່ສ້າງຂຶ້ນ, ອັນໄດ້ສ້າງກຳລັງແຮງດ້ານວັດຖຸ ແລະ ທ່າດຸ່ນດ່ຽງໃໝ່ເພີ່ມຂຶ້ນແກ່ບາດກ້າວຂະຫຍາຍຕົວຕໍ່ໄປ.

ຄວາມພົວພັນແຫ່ງການຜະລິດຖືກດັດປຽນໃຫ້ສອດຄ່ອງກັບລັກສະນະ, ລະດັບ ແລະ ຄວາມຮຽກຮ້ອງຕ້ອງການຂະຫຍາຍຕົວຂອງກຳລັງການຜະລິດ, ປົດປ່ອຍ ແລະ ເສີມຂະຫຍາຍກຳລັງບົ່ມຊ້ອນອັນໃຫຍ່ໂຕພາຍໃນປະເທດ, ສ້າງເງື່ອນໄຂອັນສະດວກຂຶ້ນແກ່ການຂຸດຄົ້ນແຫລ່ງກຳລັງຈາກພາຍນອກ. ຟື້ນຖານເສດຖະກິດທີ່ມີຫລາຍພາກສ່ວນເຄື່ອນໜູນຕາມກົນໄກຕະຫລາດໂດຍມີການຄຸ້ມຄອງຈາກລັດຕາມກຳນົດ ທິດສັງຄົມນິຍົມສືບຕໍ່ໄດ້ຮັບການກໍ່ສ້າງຂຶ້ນຢ່າງຄົບຊຸດກວ່າເກົ່າ ແລະ ມີຜົນສັກສິດກວ່າເກົ່າ.

ຈຳນວນວຽກເຮັດງານທຳແຕ່ລະປີທີ່ຖືກສ້າງຂຶ້ນຫວ່າງມໍ່ໆມີ້ເກືອບ ເທົ່າກັບຈຳນວນຄົນທີ່ຫາກໍ່ເພີ່ມເຕີມເຂົ້າກຳລັງແຮງງານ. ຊີວິດການ ເປັນຢູ່ດ້ານວັດຖຸຂອງປະຊາຊົນສ່ວນຫລວງຫລາຍໄດ້ຮັບການປ໋ອແປງ ໃຫ້ດີຂຶ້ນ. ລະດັບຄວາມຮູ້ຂອງປະຊາຊົນ ແລະ ລະດັບການຊົມໃຊ້ວັດ ທະນະທຳ ຂອງປະຊາຊົນກໍ່ໄຄແດ່ກວ່າເກົ່າ. ບັນດາຂະບວນການຕອບ ບຸນແທນຄຸນ, ລົບລ້າງຄວາມອຶດຢາກ,ຫລຸດຜ່ອນຄວາມທຸກຍາກໄດ້ຮັບ ການສະໜັບສະໜູນຈາກທົ່ວປວງຊົນ. ປະຊາທິປະໄຕໄດ້ຮັບການເສີມ ຂະຫຍາຍ. ຄວາມເຊື່ອຂອງປະຊາຊົນທີ່ມີຕໍ່ລະບອບ ແລະ ອະນາຄົດ ຂອງປະເທດຊາດ, ຕໍ່ພັກ ແລະ ລັດຖືກຢັ້ງຢືນ.

ຄວາມສະຖຽລະພາບທາງການເມືອງ-ສັງຄົມໄດ້ຮັບການປົກ ປັກຮັກສາແໜ້ນ, ການປ້ອງກັນປະເທດ, ປ້ອງກັນຄວາມສະຫງົບໄດ້ ຮັບການປັບປຸງ. ຄວາມພົວພັນການຕ່າງປະເທດຂະຫຍາຍຕົວຢ່າງ ແຂງແຮງ; ອັນໄດ້ນ້າງທ່າປິດລ້ອມ, ໂດດດ່ຽວແລ້ວ; ເປີດກວ້າງການ ຮ່ວມມື ແລະ ເຂົ້າຮ່ວມຢ່າງຕັ້ງໜ້າໃນຊີວິດການເປັນຢູ່ຂອງວົງຄະ ນາຍາດສາກົນ.

ວຽກງານກໍ່ສ້າງພັກ, ກໍ່ສ້າງອຳນາດລັດສັງຄົມນິຍົມ, ເຟີ່ມທະວີ ຄວາມມະຫາສາມັກຄີທົ່ວປວງຊົນທັງນັ້ນທີ່ມີຄວາມຫັນປ່ຽນຫລາຍອັນ ຢ່າງຕັ້ງໜ້າ.

ໃນເມື່ອຕີລາຄາຜົນສຳເລັດໃຫ້ຖືກຕ້ອງ, ພວກເຮົາຕ້ອງເຫັນຂໍ້ຄົງ ຄ້າງ ແລະ ຈຸດອ່ອນຕ່າງໆ ຢ່າງຈະແຈ້ງ: ປະເທດເຮົາຍັງທຸກຍາກ ແລະ

ດ້ອຍພັດທະນາ; ພວກເຮົາຊໍ້າພັດບໍ່ທັນປະຕິບັດໃຫ້ດີຕໍ່ການໝັ້ນປະຢັດ ໃນການຜະລິດ, ປະຢັດໃນການໃຊ້ສອຍ, ຈົ່ງທຶນໄວ້ໃຫ້ແກ່ການລົງທຶນ, ພັດທະນາ. ສະພາບການສັງຄົມຍັງມີຄວາມຫຍໍ້ທໍ້ຫລາຍປະການ ແລະ ມີຫລາຍບັນຫາທີ່ຈະຕ້ອງແກ້ໄຂໃຫ້ຕົກ. ການນຳພາສຳລັບການກໍ່ສ້າງ ຄວາມພ້ອມພັນແຫ່ງການຜະລິດໃໝ່ທັງມີສ່ວນສຸນລະມຸນ, ທັງປ່ອຍປະ ລະເລີຍ. ການຄຸ້ມຄອງຂອງລັດກ່ຽວກັບເສດຖະກິດ, ສັງຄົມຍັງມີຂໍ້ຂາດ ຕົກບົກພ່ອງຫລາຍຢ່າງ. ລະບົບການເມືອງຍັງມີຈຸດອ່ອນຫລາຍແນວ.

ເຖິງຢ່າງນັ້ນກໍ່ຕາມ, ນາຮອດປະຈຸບັນນີ້, ທ່າ ແລະ ກຳລັງຂອງບ້ານ ເມືອງເຮົາໄດ້ມີການຫັນປ່ຽນກ່ຽວກັບຄຸນນະພາບຢ່າງຈະແຈ້ງ. *ປະ ເທດໄດ້ພົ້ນອອກຈາກວິກິດການດ້ານເສດຖະກິດ-ສັງຄົມ* ທີ່ແກ່ຍາວຕັ້ງ 15 ປີກວ່າ ຢ່າງຄັບຂັນ, ເຖິງວ່າຍັງມີດ້ານຈຳນວນໜຶ່ງທີ່ບໍ່ທັນໝັກ ແໜ້ນກໍ່ຕາມ, ແຕ່ມັນກໍ່ໄດ້ສ້າງຂໍ້ມູນທີ່ຈຳເປັນຂຶ້ນມາເພື່ອຫັນໄປສູ່ໄລ ຍະພັດທະນາໃໝ່: ຊຸກຍູ້ການຫັນປະເທດຊາດເປັນອຸດສາຫະກຳ, ເປັນ ທັນສະໄໝ.

ຈາກບັນດາບົດຮຽນທີ່ມີຜົນສຳເລັດ ແລະ ຍັງບໍ່ທັນມີຜົນສຳເລັດ, ພວກເຮົາໄດ້ດັດປ່ຽນ ແລະ ເພີ່ມເຕີມຄວາມຮູ້, ເຮັດໃຫ້ທັດສະນະກ່ຽວ ກັບສັງຄົມນິຍົມນັບມື້ນັບລະອຽດ; ແນວທາງ, ແຜນນະໂຍບາຍ, ນະໂຍ ບາຍນັບມື້ນັບຄົບຊຸດ, ມີຫລັກຖານວິທະຍາສາດ ແລະຜິດຕິກຳ. *ເສັ້ນ ທາງກ້າວຂຶ້ນສູ່ສັງຄົມນິຍົມ ຢູ່ປະເທດເຮົາມັນມື້ນັບໄດ້ຮັບການຢືນຢັນ ຢ່າງຈະແຈ້ງກວ່າເກົ່າ.*

ກອງປະຊຸມໃຫຍ່ຄັ້ງທີ VI ວາງແນວທາງປ່ຽນແປງໃໝ່ຢ່າງຮອບດ້ານ, ກອງປະຊຸມໃຫຍ່ຄັ້ງທີ VII ຜ່ານ *ໂຄງການການເມືອງກໍ່ສ້າງປະເທດຊາດໃນໄລຍະຂ້າມຜ່ານຂຶ້ນສູ່ສັງຄົມນິຍົມ, ຍຸດທະສາດສະຖຽຍລະພາບ ແລະ ພັດທະນາເສດຖະກິດ-ສັງຄົມໄປຮອດປີ 2000*. ບັນດາມະຕິຂອງຄະນະບໍລິຫານງານສູນກາງ ແລະ ຂອງກອງປະຊຸມໃຫ່ຜູ້ແທນທົ່ວປະເທດລະຫວ່າງກາງອາຍຸການຂອງສະໄໝທີ VII ໄດ້ເຮັດໃຫ້ໂຄງການການເມືອງ, ຍຸດທະສາດເປັນອັນລະອຽດໃນເກືອບໝົດທຸກຂົງເຂດ, ນັບຕັ້ງແຕ່ເສດຖະກິດມາຫາວັດທະນະທຳ; ສັງຄົມ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ຄວາມພົວພັນການຕ່າງປະເທດ, ກໍ່ສ້າງພັກ, ກໍ່ສ້າງລັດ. ເອກະສານຕ່າງໆ ທີ່ສະເໜີຕໍ່ກອງປະຊຸມໃຫຍ່ຄັ້ງທີ VIII ໄດ້ສືບຕໍ່ ແລະ ເຮັດໃຫ້ບັນດາແນວທາງ, ແຜນນະໂຍບາຍອັນຖືກຕ້ອງດັ່ງກ່າວຂະຫຍາຍຕົວກວ່ານັ້ນອີກ.

ສັງເກດກ່ຽວກັບສົມບູນພາບ, ການວາງກຳນົດ ແລະ ປະຕິບັດແນວທາງປ່ຽນແປງໃໝ່ໃນຊຸມປີທີ່ຜ່ານມາແມ່ນຖືກຕ້ອງ ໂດຍພື້ນຖານ, ຖືກຕ້ອງຕາມທິດສັງຄົມນິຍົມ. ພວກເຮົາຕ້ອງກຳແໜ້ນ ແລະ ຍຶດໝັ້ນກັບແນວທາງດັ່ງກ່າວ, ຄົ້ນຄວ້າ, ສະຫລຸບຜົດຕິກຳຢ່າງເປັນປະຈຳກໍ່ເພື່ອມີບັນດາການດັດໃຫ້ເໝາະ, ເພີ່ມເຕີມ ແລະ ຂະຫຍາຍສິ່ງທີ່ຈຳເປັນ, ຍູ້ພາລະກິດປ່ຽນແປງໃໝ່ກ້າວຂຶ້ນຍາດເອົາໄຊຍະນະທີ່ໃຫຍ່ຫລວງກວ່ານັ້ນອີກ.

ເຖິງຢ່າງນັ້ນກໍ່ຕາມ, ໃນຂະບວນວິວັດແຫ່ງການປະຕິບັດ, ພວກ

ເຮົາໄດ້ມີຂໍ້ຂາດຕົກບົກພ່ອງ, ຂໍ້ຜິດພາດຈຳນວນຫນຶ່ງທີ່ແກ່ຍາວໄປ, ເຊິ່ງພາໄປ*ເຖິງຄວາມບໍ່ຖືກທີ່ຢູ່ຂົງເຂດນີ້ຫລືຂົງເຂດອື່ນ, ຢູ່ລະດັບນີ້ ຫລືລະດັບອື່ນຊ້ຳ*. ຖ້າວ່າບໍ່ມີການຜ່ານຜ່າແກ້ໄຂສິ່ງດັ່ງກ່າວຢ່າງມີຜົນ ສັກສິດນັ້ນ, ຂໍ້ຂາດຕົກບົກພ່ອງ, ຂໍ້ຜິດພາດນັ້ນຈຶ່ງຈະເຮັດໃຫ້ພັກເຮົາ ອ່ອນເພຍ, ເຮັດໃຫ້ກົງຈັກລັດຖືກເປ້ເພ, ລະບອບຖືກເສຍຫາຍ, ພາປະ ເທດສາດໄປບໍ່ຖືກຕາມເສັ້ນທາງສັງຄົມນິຍົມ. ຮັກສາກຳນົດທິດສັງຄົມ ນິຍົມໃຫ້ຫນັກແຫນ້ນແມ່ນການຕໍ່ສູ້ອັນຫຍຸ້ງຍາກ, ສັບສົນເຊິ່ງສະແດງ ອອກຢ່າງເປັນປະຈຳ. ສິ່ງທີ່ສຳຄັນອັນແມ່ນການຄົ້ນພົບຂໍ້ຜິດພາດ, ຈຸດ ບົກພ່ອງໂດຍໄວ, ວາງວິທີການດັດແປງຢ່າງຖືກຕ້ອງ ແລະ ທັນເວລາ.

ສະຫລຸບໄລຍະທາງປຽນແປງໃຫມ່ໃນ 10 ປີທີ່ຜ່ານມາ, ພັກເຮົາ ໄດ້ຖອດຖອນເປັນ*ບົດຮຽນຕົ້ນຕໍ*ຈຳນວນຫນຶ່ງ:

- ໃນຂະບວນວິວັດແຫ່ງການປຽນແປງໃຫມ່, ຕ້ອງຮັກສາຈຸດໝາຍ ເອກະລາດແຫ່ງຊາດ ແລະ ສັງຄົມນິຍົມໃຫ້ແຫນ້ນ, ກຳແຫນ້ນ 2 ໜ້າ ທີ່ຍຸດທະສາດກໍ່ສ້າງ ແລະ ປົກປັກຮັກສາປະເທດສາດ, ຢຶດໝັ້ນລັດທິ ມາກ-ເລນິນ, ແນວຄິດໂຮ່ຈິມິນ, ສົມທົບການຕັ້ງໝັ້ນກ່ຽວກັບຫລັກ ການ ແລະ ຍຸດທະສາດປະຕິວັດກັບຄວາມຜິກໄຫວ, ປະດິດສ້າງໃນຍຸດ ທະວິທີ, ສຳຜັດໄວໃນການກຳເອົາສິ່ງໃຫມ່ໆ.

- ສົມທົບການປຽນແປງໃຫມ່ທາງດ້ານເສດຖະກິດກັບການປຽນ ແປງໃຫມ່ທາງດ້ານການເມືອງຢ່າງແຫນ້ນແຟ້ນນັບຕັ້ງແຕ່ຫົວທີມີ ເອງ, ເອົາການປຽນແປງໃຫມ່ທາງດ້ານເສດຖະກິດເປັນຈຸດໜັກ,

ພ້ອມກັນນັ້ນກໍ່ທຳການປ່ຽນແປງໃໝ່ທາງດ້ານການເມືອງເປັນກ້າວໆ. ເສີມຂະຫຍາຍປະຊາທິປະໄຕ, ຜ່ານຜ່າແກ້ໄຂປະກົດການຕ່າງໆທີ່ລ່ວງລະເມີດຕໍ່ສິດເປັນເຈົ້າການຂອງປະຊາຊົນ, ພ້ອມກັນນັ້ນກໍ່ຕ້ານທ່າອ່ຽງປະຊາທິປະໄຕຈັດ, ລ່ວງເກີນທຸກປະການ, ຕ້ານທຸກກົນອຸບາຍທີ່ສວຍໃຊ້ໃບໄພ "ປະຊາທິປະໄຕ", "ສິດຂອງປະຊາຊົນ" ແນໃສ່ກໍ່ຄວາມວຸ່ນວາຍທາງດ້ານການເມືອງ, ຕ້ານແລະທຳລາຍລະບອບ, ແຊກແຊງເຂົ້າພາຍໃນປະເທດເຮົາ.

- ກໍ່ສ້າງເສດຖະກິດສິນຄ້າທີ່ມີຫລາຍພາກສ່ວນໃຫ້ໝູນວຽນຕາມກົນໄກຕະຫລາດຕ້ອງໄປຄຽງຄູ່ກັນກັບການເພີ່ມທະວີບົດບາດການຄຸ້ມຄອງຂອງລັດຕາມກຳນົດທິດສັງຄົມນິຍົມ. ການເຕີບໂຕທາງດ້ານເສດຖະກິດຕ້ອງຕິດພັນກັບຄວາມກ້າວໜ້າ ແລະ ຍຸດຕິທຳແຫ່ງຊາດ, ປົກປັກຮັກສາສິ່ງແວດລ້ອມຊີວະຖາບ.

- ເປີດກວ້າງ ແລະ ເພີ່ມທະວີກ້ອນມະຫາສາມັກຄີທົ່ວປວງຊົນ, ເສີມຂະຫຍາຍນ້ຳໃຈຮັກຊາດ, ເຈດຈຳນົງເຜິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍກຳລັງຕົນເອງ, ປຸກລະດົມກຳລັງແຮງຂອງທົ່ວທັງຊາດໃຫ້ບຸກປົນສູ້ຊົນເພື່ອຈຸດໝາຍແຫ່ງຄວາມຮັ່ງມີຂອງປະຊາຊົນ, ປະເທດເຂັ້ມແຂງ, ສັງຄົມຍຸດຕິທຳ, ສີວິໄລ.

- ເປີດກວ້າງການຮ່ວມມືກັບສາກົນ, ຍາດແຍ່ງຄວາມເປັນໃຈ, ສະໜັບສະໜູນ ແລະ ຊ່ວຍເຫລືອຈາກປະຊາຊົນໃນໂລກ, ປະສານສົມທົບກຳລັງແຮງຂອງຊາດກັບກຳລັງແຮງຂອງຍຸກສະໄໝ. ລະດົມສົ່ງເສີມ

ທຸກແຫລ່ງກຳລັງພາຍໃນເປັນຕົ້ນຕໍ, ພ້ອມກັນນັ້ນກໍ່ຂຸດຄົ້ນເປັນຢ່າງ ດີກ່ຽວກັບເງື່ອນໄຂອຳນວຍຄວາມສະດວກໃໝ່ໃນຄວາມພົວພັນການ ຕ່າງປະເທດ, ສ້າງສະພາບແວດລ້ອມສາກົນທີ່ອຳນວຍຄວາມສະດວກ ແລະ ຍາດແຍ່ງບັນດາປັດໄຈອັນຕັ້ງໜ້າໃນການຮັບໃຊ້ກິດຈະການກໍ່ ສ້າງ ແລະ ປົກປັກຮັກສາປະເທດຊາດບ້ານເມືອງ. ເປີດກວ້າງຄວາມ ພົວພັນການຕ່າງປະເທດແຕ່ຢູ່ບົນພື້ນຖານຮັກສາເອກະລາດ, ເປັນເຈົ້າ ຕົນເອງຢ່າງໜັກແໜ້ນ, ຮັກສາແລະ ເສີມຂະຫຍາຍເອກະລັກ ແລະ ມູນເຊື້ອອັນດີງາມຂອງຊາດ.

- ເຝິ້ມທະວີບົດບາດການນຳຂອງພັກ, ຖືການກໍ່ສ້າງພັກເປັນໜ້າ ທີ່ກຸນແຈ. ພັກເຮົາຕ້ອງປ່ຽນແປງຕົນເອງ ແລະ ປັບປຸງຢູ່ເລື້ອຍ. ປັບ ປຸງ ແລະ ກໍ່ສ້າງພັກທັງທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ, ພະນັກງານ; ເຝິ້ມທະວີທາດແທ້ຊົນຊັ້ນກຳມະກອນ ແລະ ລັກສະນະນຳ ໜ້າຂອງພັກ, ປ່ຽນແປງໃໝ່ສຳລັບແບບວິທີ, ວິທີເຮັດວຽກ, ຍົກສູງ ລະດັບ ແລະ ຜົນສັກສິດໃນການນຳພາຂອງພັກຕໍ່ລະບົບການເມືອງ ແລະ ທົ່ວສັງຄົມ.

ກຳແໜ້ນ ແລະ ໝຸນໃຊ້ບັນດາບົດຮຽນດັ່ງກ່າວເທິງນີ້ຢ່າງມີຫົວ ຄິດປະດິດສ້າງແມ່ນຮັບປະກັນໃຫ້ແກ່ຜົນສຳເລັດຂອງພາລະກິດພັດທະ ນາປະເທດຊາດໃນໄລຍະໃໝ່.

II- ບາດກ້າວຂະຫຍາຍຕົວໃໝ່-ຊຸກຍູ້ການຫັນປ

ເທດຊາດໄປສູ່ລະບົບອຸດສາຫະກຳ, ແລະ ທັນສະໄໝ

ພັກເຮົາສັງເກດເຫັນວ່າພາລະກິດປ່ຽນແປງໃໝ່, ກໍ່ສ້າງ ແລະ ປົກ ປັກຮັກສາປະເທດຊາດສືບຕໍ່ຂະຫຍາຍຕົວໃນສະພາບການຂອງ ໂລກ ຜັນແປໄປໂດຍໄວ, ສັບສົນ ແລະ ບັນຈຸມຸນພາກຕ່າງໆ ທີ່ຄາດຄະເນ ໄດ້ຍາກ.

ຍົກຈຸດພິເສດ 5 ຢ່າງຂອງສະພາບການໃນໂລກ ແລະ ທ່າອ່ຽງຕົ້ນ ຕໍ 5 ຢ່າງຂຶ້ນໃນຄວາມຜົວພັນສາກົນໃນປະຈຸບັນນີ້, ພັກເຮົາຢັ້ງຢືນ: ຫລັງຈາກບັນດາເຫດການທາງການເມືອງຢູ່ສະຫະພາບໂຊວຽດ ແລະ ຢູຣົບຕາເວັນອອກເຊິ່ງສັງຄົມນິຍົມຕົກໃສ່ຂະບວນການຖອຍລົງເປັນຊົ່ວ ຄາວ ແຕ່ສິ່ງດັ່ງກ່າວນີ້ຈະບໍ່ເຮັດໃຫ້ລັກສະນະຂອງຍຸກສະໄໝປ່ຽນ ແປງເທື່ອ; ມະນຸດຊາດຍັງພວມຢູ່ໃນໄລຍະຜ່ານຂ້າມຈາກລັດທິທຶນ ນິຍົມຂຶ້ນສູ່ສັງຄົມນິຍົມ. ບັນດາຂໍ້ຂັດແຍ່ງພື້ນຖານໃນໂລກຍັງຄົງຕົວ ແລະ ຂະຫຍາຍຕົວ, ເຊິ່ງມີດ້ານເລິກເຊິ່ງກວ່າ, ເນື້ອໃນ ແລະ ຮູບການ ສະແດງໃຫ້ເຫັນມີສິ່ງໃໝ່ຫລາຍອັນ. ການຕໍ່ສູ້ລະຫວ່າງຊາດ ແລະ ການຕໍ່ສູ້ລະຫວ່າງຊົນຊັ້ນສະແດງອອກພາຍໃຕ້ຫລາຍຮູບການ.

ການປະຕິວັດທາງດ້ານວິທະຍາສາດ ແລະ ເຕັກໂນໂລຍີສືບຕໍ່ຂະ ຫຍາຍຕົວໂດຍໄວດ້ວຍລະດັບອັນນັບມື້ນັບສູງຂຶ້ນ, ເຊິ່ງຊຸກຍູ້ຂະບວນ ວິວັດແຫ່ງການເຄື່ອນຍ້າຍໂຄງຮ່າງເສດຖະກິດໃນໂລກ, ທັນເສດຖະ ກິດ ແລະ ຊີວິດການເປັນຢູ່ທາງສັງຄົມເປັນສາກົນ. ສະນັ້ນບັນດາປະ

ເທດລ້ວນແຕ່ຢືນຕໍ່ໜ້າການລະໂອກາດຕ່າງໆເພື່ອຂະຫຍາຍຕົວ. ເຖິງ ຢ່າງໃດກໍ່ດີ, ຍ້ອນທ່າດີກ່ຽວກັບທຶນຮອນ, ເຕັກໂນໂລຍີ, ຕະຫລາດຂັ້ນ ກັບບັນດາປະເທດພັດທະນາ, ເຊິ່ງພາໃຫ້ບັນດາປະເທດດ້ອຍພັດທະນາ ຢືນຕໍ່ໜ້າບັນດາຄວາມທ້າທາຍອັນໃຫຍ່ໂຕ.

ທະວີບອາຊີ-ປາຊີຟິກພວມເປັນພາກພື້ນພັດທະນາທີ່ມີໄຫວພິບດ້ວຍ ຈັ່ງຫວະເຕີບໂຕສູງ. ພ້ອມກັນນັ້ນໃນພາກພື້ນດັ່ງກ່າວນີ້ກໍ່ມີປັດໄຈທີ່ສາ ມາດກໍ່ຄວາມບໍ່ມີຄວາມສະຖຽຍລະພາບຈໍານວນໜຶ່ງທີ່ພວມຢູ່ບົ່ມ ຊ້ອນລັບລີ້.

ໃນການພົວພັນທາງສາກົນ, ສັນຕິພາບ, ສະຖຽຍລະພາບ ແລະ ຮ່ວມມືເພື່ອພັດທະນາກໍ່ນັບມື້ນັບກາຍເປັນຄວາມຮຽກຮ້ອງຕ້ອງການ ທີ່ຈໍາເປັນຂອງບັນດາປະຊາຊາດ ແລະ ບັນດາຊາດໃນໂລກ. ບັນດາ ປະເທດຈົ່ງສ່ວນບູລິມະສິດໄວ້ໃຫ້ແກ່ການພັດທະນາເສດຖະກິດ, ຖືການ ພັດທະນາເສດຖະກິດມີຄວາມໝາຍຕັດສິນຊີ້ຂາດຕໍ່ການເຝີ່ມທະວີກໍາ ລັງແຮງສັງລວມຂອງຊາດ; ເຂົ້າຮ່ວມອັນນັບມື້ນັບຫລາຍໃນຂະບວນ ວິວັດຮ່ວມມື ແລະ ຮ່ວມສໍາພັນຂອງພາກພື້ນ, ຮ່ວມສໍາພັນໃນສາກົນ ວ່າດ້ວຍເສດຖະກິດ, ການຄ້າ, ແລະ ຂົງເຂດ ເຄື່ອນໄຫວອື່ນໆຕັ້ງ ຫລາຍຂົງເຂດ. ການຮ່ວມມືກໍ່ນັບມື້ນັບເຝີ່ມຂຶ້ນການແຂ່ງຂັນກັນທີ່ເຄັ່ງ ຮ້ອນທີ່ສຸດ.

ບັນດາປະຊາຊາດຕ່າງກໍ່ຍົກສູງສະຕິເອກະລາດ, ເປັນເຈົ້າຕົນເອງ, ຕໍ່ສູ້ຕ້ານການບັງຄັບມິບຮັດ ແລະ ແຊກແຊງຈາກປະເທດນອກ, ປົກ

ປັກຮັກສາວັດທະນະທຳແຫ່ງຊາດ; ບັນດາກຳລັງສັງຄົມນິຍົມ, ປະຕິວັດ ແລະ ກ້າວໜ້າໃນໂລກຍຶດໝັ້ນໃນການຕໍ່ສູ້ເພື່ອສັນຕິພາບ, ເອກະລາດ ແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມ. ບັນ ດາປະເທດທີ່ມີລະບອບສັງຄົມການເມືອງແຕກຕ່າງກັນນີ້ທັງຮ່ວມມືກັນ ທັງຕໍ່ສູ້ເພື່ອພ້ອມກັນຢືນຍົງຄົງຕົວໂດຍສັນຕິພາບ.

ຕໍ່ໜ້າພວກເຮົາໄດ້ມີ*ທັງກາລະໂອກາດໃຫຍ່ ແລະ ບັນດາການທ້າ ທາຍໃຫຍ່.*

ກາລະໂອກາດໃຫຍ່ຖືກສ້າງຂຶ້ນເຊິ່ງກ່ອນອື່ນໝົດແມ່ນຍ້ອນບັນດາ ຜົນງານຂອງກິດຈະການປ່ຽນແປງໃໝ່, ກໍ່ສ້າງ ແລະ ປົກປັກຮັກສາ ປະເທດຊາດ, ພ້ອມກັນນັ້ນກໍ່ເນື່ອງມາຈາກການກະຕຸກຊຸກຍູ້ຂອງທ່າ ອ່ຽງອັນຕັ້ງໜ້າຫລາຍຢ່າງໃນໂລກ.

ຄວາມທ້າທາຍໃຫຍ່ເກີດຂຶ້ນຈາກໄພອັນຕະລາຍສີ່ຢ່າງເຊິ່ງກອງ ປະຊຸມຜູ້ແທນທົ່ວປະເທດລະຫວ່າງກາງສະໄໝປະຊຸມໄດ້ຍົກຂຶ້ນ. ໄພ ອັນຕະລາຍເຫລົ່ານັ້ນມີຄວາມກ່ຽວຂ້ອງກະທົບຊຶ່ງກັນ ແລະ ກັນ ແລະ ຕ່າງກໍ່ອັນຕະລາຍໂດຍບໍ່ຖືເບົາຕໍ່ບໍ່ວ່າໄພອັນຕະລາຍໃດໜຶ່ງ.

ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ, ກາລະໂອກາດ ແລະ ໄພອັນຕະລາຍ ສະຫລັບສັບຊ້ອນກັນ. ພວກເຮົາຕ້ອງເປັນເຈົ້າການໃນການກຳເອົາກາ ລະໂອກາດ, ປັນຕົວຂຶ້ນໃນການພັດທະນາໂດຍໄວ ແລະ ໜັກແໜ້ນ, ສ້າງທ່າ ແລະ ກຳລັງໃໝ່ຂຶ້ນ, ພ້ອມກັນນັ້ນກໍ່ທູ່ນທ່ຽງ ສ່ອງໃສຢູ່ສະ ເໝີ, ເດັດດ່ຽວຍູ້ຖອຍ ແລະ ຜ່ານຜ່າໄພອັນຕະລາຍຕ່າງໆ, ລວມທັງ

ໄພອັນຕະລາຍທີ່ຫາກໍ່ເກີດຂຶ້ນ, ຮັບປະກັນການພັດທະນາເປັນໄປຢ່າງ
ຖືກທິດ.

ເລີ່ມຈາກຜົນໄດ້ໃນ 10 ປີ ແຫ່ງການປ່ຽນແປງໃໝ່, ຈາກຍັນດາ
ຂໍ້ມູນທີ່ໄດ້ຮັບການສ້າງຂຶ້ນ, ພັກເຮົາກຳນົດວ່າປະເທດເຮົາພວມຍ້າຍ
ມາສູ່ໄລຍະຂະຫຍາຍຕົວໃໝ່, ໄລຍະຊຸກຍູ້ການຫັນເປັນອຸດສາຫະກຳ,
ຫັນເປັນທັນສະໄໝຢ່າງແຂງແຮງ. ນີ້ແມ່ນຄວາມພິນິດໄສອັນໜຶ່ງ
ທີ່ສຳຄັນຢ່າງສຸດຂີດ, ມັນມີຄວາມໝາຍໃນການຊີ້ນຳສຳລັບການ
ວາງທິດທາງ, ໜ້າທີ່ອອກໃນຕໍ່ໜ້າ.

ຈຸດໝາຍຂອງການຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝ
ກ່າວຄືກໍ່ສ້າງປະເທດເຮົາເປັນປະເທດອຸດສາຫະກຳທີ່ມີພື້ນຖານວັດ
ຖຸ-ເຕັກນິກທັນສະໄໝ, ໂຄງຮ່າງເສດຖະກິດອັນສົມເຫດສົມຜົນ, ຄວາມ
ພົວພັນແຫ່ງການຜະລິດທີ່ກ້າວໜ້າ, ສອດຄ່ອງກັບລະດັບຂະຫຍາຍຕົວ
ຂອງກຳລັງການຜະລິດ, ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈ
ສູງ, ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບອັນໜັກແໜ້ນ, ປະ
ຊາຊົນຮັ່ງມີ, ປະເທດຊາດເຂັ້ມແຂງ, ສັງຄົມຍຸດຕິທຳ, ສີວິໄລ, ກໍ່
ສ້າງສັງຄົມນິຍົມສຳເລັດຜົນ.

ນັບຕັ້ງແຕ່ນີ້ຮອດປີ 2020, ອອກແຮງສູ້ຊົນພາປະເທດເຮົາກາຍ
ເປັນປະເທດອຸດສາຫະກຳໂດຍພື້ນຖານ.

ກຳລັງການຜະລິດເຊິ່ງຮອດເວລານັ້ນຈະບັນລຸລະດັບທັນສະໄໝພໍສົມ
ຄວນ, ການອອກແຮງງານດ້ວຍຮ່າງກາຍເປັນສ່ວນຫລາຍນັ້ນກໍ່

ຖືກປ່ຽນແທນດ້ວຍການອອກແຮງງານໂດຍນຳໃຊ້ເຄື່ອງຈັກເຄື່ອງ ຍົນ, ການຫັນໃຊ້ໄຟຟ້າຈະຖືກປະຕິບັດໂດຍພື້ນຖານໃນທົ່ວປະເທດ, ສະ ມັດຖະພາບຂອງງານສັງຄົມ ແລະ ຜົນສັກສິດໃນການຜະລິດທຸລະກິດ ກໍ່ສູງຂຶ້ນຫລາຍກວ່າເມື່ອທຽບກັບປະຈຸບັນ. ຍອດປະລິມານຜະລິດຕະ ພັນພາຍໃນປະເທດ(GDP)ເພີ່ມຂຶ້ນແຕ່ 8 ເຖິງ 10 ເທົ່າເມື່ອປຽບ ກັບປີ 1990.

ກ່ຽວກັບຄວາມພົວພັນແຫ່ງການຜະລິດ, ລະບອບກຳມະສິດ, ກົນ ໄກການຄຸ້ມຄອງ ແລະ ລະບອບແຈກຢາຍຕິດພັນນຳກັນ, ປົດປ່ອຍກຳ ລັງການຜະລິດ, ສ້າງກຳລັງໜູນຂຶ້ນຢ່າງແຂງແຮງໃນການຊຸກຍູ້ ຄວາມເຕີບໂຕທາງດ້ານເສດຖະກິດ, ປະຕິບັດຄວາມຍຸດຕິທຳທາງສັງ ຄົມ.

ເສດຖະກິດແຫ່ງລັດດຳລົງບົດບາດເປັນເຈົ້າພາທາງເປັນຢ່າງດີ ແລະ ພ້ອມພຽງຮຽງໜ້າກັບເສດຖະກິດສະຫະກອນກາຍເປັນພື້ນຖານ. ເສດຖະກິດທຶນນິຍົມແຫ່ງລັດພາຍໃຕ້ຮູບການຕ່າງໆ ທີ່ຕ່າງກັນນັ້ນຍັງຄົງ ຕົວຢູ່ຢ່າງແຜ່ຫລາຍ. ເສດຖະກິດເອກະເທດ, ເຈົ້າຊັບນ້ອຍ, ເສດຖະ ກິດທຶນນິຍົມເອກະຊົນຍຶດຊົ່ງອັດຕາສ່ວນເປັນເຈົ້າຫລາຍສົມຄວນ.

ກ່ຽວກັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ວັດທະນະທຳ, ປະຊາ ຊົນມີການດຳລົງຊີວິດອີ່ມໜຳສຳລານ, ມີເຮືອນຢູ່ດີພໍຄວນ, ມີເງື່ອນໄຂ ອັນອຳນວຍໃນການສັນຈອນ, ຮ່ຳຮຽນ, ປົວພະຍາດ, ມີລະດັບຊົມໃຊ້ ວັດທະນະທຳໄຄແດ່. ຄວາມພົວພັນທາງສັງຄົມອັນສົດໃສ, ແບບແຜນ

ດຳລົງຊີວິດອັນສີວິໄລ; ເສີມຂະຫຍາຍບັນດາມູນຄ່າອັນຈົບງາມ ແລະ ມູນເຊື້ອອັນສະຫງ່າງາມຂອງຊາດ.

ເຮັດໄດ້ວຽກງານຕ່າງໆ ທີ່ກ່າວມາເທິງນີ້ແມ່ນບາດກ້າວເດີນອັນກ້າວໜ້າທີ່ສຸດບົນເສັ້ນທາງກ້າວຂຶ້ນສູ່ສັງຄົມນິຍົມຢູ່ປະເທດເຮົາ.

ໄລຍະຕັ້ງແຕ່ປະຈຸບັນນີ້ມາຮອດປີ 2000 ແມ່ນບາດກ້າວສຳຄັນທີ່ສຸດຂອງໄລຍະພັດທະນາໃໝ່, ຊຸກຍູ້ການຫັນປະເທດຊາດເປັນອຸດສາຫະກຳ, ເປັນທັນສະໄໝຢ່າງແຂງແຮງ. ໜ້າທີ່ຂອງປະຊາຊົນເຮົາ ແມ່ນສຸມທຸກກຳລັງ, ຍາດແຍ່ງກາລະໂອກາດ, ຜ່ານຜ່າຂໍ້ທົດລອງ, ຊຸກຍູ້ກິດຈະການປ່ຽນແປງໃໝ່ຢ່າງຮອບດ້ານ ແລະ ຄົບຊຸດ, ສືບຕໍ່ພັດທະນາເສດຖະກິດສິນຄ້າທີ່ມີຫລາຍພາກສ່ວນ ເຄື່ອນເດີນຕາມກົນໄກຕະຫລາດໂດຍມີການຄຸ້ມຄອງຂອງລັດຕາມກຳນົດທິດສັງຄົມນິຍົມ, ສູ້ຊົນໃຫ້ບັນລຸ ແລະ ລື່ນກາຍຈຸດໝາຍທີ່ໄດ້ວາງອອກມາໃນຍຸດທະສາດມີສະຖຽຍລະພາບ ແລະ ພັດທະນາເສດຖະກິດ-ສັງຄົມເຖິງປີ 2000: ການເຕີບໂຕທາງດ້ານເສດຖະກິດໄວ, ຜົນສັກສິດສູງ ແລະ ໝັ້ນແກ່ນ ໄປຄຽງຄູ່ກັນກັບການແກ້ໄຂບັນຫາຕ່າງໆທີ່ຄັບຂັນທາງດ້ານສັງຄົມ, ຮັບປະກັນການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ປ່ຽນແປງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ຍົກສູງການສະສົມຕັ້ງແຕ່ພາຍໃນເສດຖະກິດ, ສ້າງປະຖົມປັດໄຈອັນໜັກແໜ້ນໃຫ້ແກ່ບາດກ້າວຂະຫຍາຍຕົວອັນສູງກວ່າໃນຕົ້ນສະຕະວັດຕໍ່ໄປ.

III - ຂະຫຍາຍກຳລັງການຜະລິດ ແລະ ກໍ່ສ້າງການພົວພັນແຫ່ງການຜະລິດໃຫມ່ຕາມກຳນົດທິດສັງຄົມນິຍົມ

ຈາກປະເທດກະສິກຳປະເທດຫນຶ່ງທີ່ຫລ້າຫລັງກ້າວຂຶ້ນສູ່ສັງຄົມນິຍົມ, ພັກເຮົາຍືນຢັນຢູ່ສະເຫມີວ່າຈະຕ້ອງກໍ່ສ້າງພື້ນຖານວັດຖຸເຕັກນິກຂອງສັງຄົມນິຍົມ, ປະຕິບັດການຫັນເປັນອຸດສາຫະກຳຂອງສັງຄົມນິຍົມ ແມ່ນຫນ້າທີ່ໃຈກາງໃນຕະຫລອດໄລຍະຜ່ານມາ. ໃນຊຸມປີທີ່ດຳເນີນການຫັນເປັນອຸດສາຫະກຳໃນປາງກ່ອນຫນ້ານີ້, ເຖິງວ່າມີຂໍ້ຂາດຕົກບົກພ່ອງຕ່າງໆ ກໍ່ຕາມ, ພວກເຮົາກໍ່ບັນລຸໄດ້ຜົນງານຈຳນວນຫນຶ່ງເທົ່າທີ່ຄວນ. ກິດຈະການໃຫຍ່ຈຳນວນຫນຶ່ງໄດ້ຮັບການກໍ່ສ້າງຂຶ້ນ ແລະ ເສີມຂະຫຍາຍຄຸນປະໂຫຍດ. ພວກເຮົາຕ້ອງສືບທອດຜົນສຳເລັດຂອງໄລຍະກ່ອນ, ຈາກບັນດາຂໍ້ຜິດພາດ, ຂາດຕົກບົກພ່ອງເພື່ອຖອດຖອນເປັນບົດຮຽນມາເຝີ້ມເຕີ້ມ, ຂະຫຍາຍຄວາມຮູ້, ວາງບັນດາບາດກ້າວເດີ້ນ, ວິທີແກ້ໄຂອັນເຫມາະສົມ, ແນໃສ່ແຜ່ຂະຫຍາຍພາລະກິດຫັນປະເທດຊາດເປັນອຸດສາຫະກຳ, ເປັນທັນສະໄຫມໃນໄລຍະໃຫມ່ຢ່າງມີຜົນສັກສິດ.

ປະຈຸບັນນີ້, ການຫັນເປັນອຸດສາຫະກຳຕິດພັນຢູ່ສະເຫມີກັບການຫັນເປັນທັນສະໄຫມ, ກັບການນຳໃຊ້ບັນດາຜົນງານຂອງວິທະຍາສາດແລະເຕັກໂນໂລຢີອັນກ້າວຫນ້າຂອງຍຸກສະໄຫມຢ່າງກວ້າງຂວາງ. ວິທະຍາສາດ ແລະ ເຕັກໂນໂລຢີກາຍເປັນພື້ນຖານ ຂອງການຫັນເປັນອຸດສາຫະກຳ, ຫັນເປັນທັນສະໄຫມ. ຍົກສູງຄວາມຮູ້ຂອງປະຊາຊົນ, ບຳລຸງສ້າງ ແລະ ເສີມຂະຫຍາຍແຫລ່ງກຳລັງອັນໃຫຍ່ໂຕຂອງ

ຄົນຫວຽດນາມແມ່ນປັດໄຈຕັດສິນຊີ້ຂາດຕໍ່ໄຊຊະນະແຫ່ງພາລະກິດທັນ ເປັນອຸດສາຫະກຳ, ທັນເປັນທັນສະໄໝ.

ໃນສະພາບແວດລ້ອມໃໝ່, ພວກເຮົາວາງແຜນນະໂຍບາຍກໍ່ສ້າງ ເສດຖະກິດເປີດປະຕູ, ທັນເປັນຫລາຍຝ່າຍ ແລະ ເປັນຫລາຍຮູບຫລາຍ ສີໃນການພົວພັນດ້ານເສດຖະກິດກັບຕ່າງປະເທດ, ສຸມໃສ່ຢ່າງແຂງ ແຮງໃນການຂາອອກ, ພ້ອມກັນນັ້ນຈະເຂົ້າແທນທີ່ການຂາເຂົ້າສິນຄ້າ ຕ່າງໆເຊິ່ງຢູ່ພາຍໃນປະເທດທຳການຜະລິດກໍ່ມີຜົນສັກສິດເຊັ່ນກັນ. ຍາດແຍ່ງທຶນ, ເຕັກໂນໂລຍີ ແລະ ຕະຫລາດສາກົນເພື່ອທັນເປັນອຸດ ສາຫະກຳ, ທັນເປັນທັນສະໄໝ. ແຕ່ບົດຮຽນຊີ້ໃຫ້ເຫັນວ່າຖ້າບໍ່ສ້າງທີ່ ຕັ້ງ ແລະ ທ່າເອກະລາດ, ເປັນເຈົ້າຕົນເອງຂຶ້ນ, ຖ້າບໍ່ມີກຳລັງພາຍ ໃນທີ່ຈຳເປັນ, ກໍ່ບໍ່ສາມາດເຂົ້າຮ່ວມການຮ່ວມມືກັບສາກົນມີຄວາມສະ ເໝີພາບຢ່າງແທ້ຈິງ ແລະ ມີຜົນປະໂຫຍດ, ບໍ່ສາມາດຂຸດຄົ້ນ ແລະ ນຳໃຊ້ແຫລ່ງກຳລັງທາງພາຍນອກຢ່າງມີຜົນສັກສິດຈັກເທື່ອ. ດ້ວຍ ເຫດນັ້ນ, ຕ້ອງກໍ່ສ້າງ ໂຄງປະກອບເສດຖະກິດອັນສົມເຫດສົມຜົນຂຶ້ນ, ຮັບປະກັນຄວາມສາມາດໃນການຮັກສາເອກະລາດຢ່າງໜັກແໜ້ນ, ເປັນເຈົ້າຕົນເອງທາງດ້ານເສດຖະກິດ, ປ້ອງກັນຊາດ, ປ້ອງກັນຄວາມ ສະຫງົບ, ເປັນເຈົ້າການໃນການເຂົ້າຮ່ວມການແບ່ງງານ ແລະ ຮ່ວມ ມືກັບສາກົນ. ຍົກສູງທິດນຳອີງໃສ່ແຫລ່ງກຳລັງພາຍໃນປະເທດເປັນ ຕົ້ນຕໍຢູ່ສະເໝີ, ໄປຄຽງຄູ່ກັນກັບການຍາດແຍ່ງແຫລ່ງກຳລັງ ພາຍນອກໃຫ້ໄດ້ຫລາຍທີ່ສຸດເທົ່າທີ່ຈະຫລາຍໄດ້, ລະດົມທຸກຄົນ, ທຸກ

ຄອບຄົວ, ທຸກຂັ້ນ, ທຸກຂະແໜງການໝັ້ນປະຢັດໃນການຜະລິດ, ປະຢັດໃນການໃຊ້ສອຍ, ຈົ່ງທຶນໄວ້ໃຫ້ແກ່ການລົງທຶນພັດທະນາ.

ໃນຊຸມປີສະເພາະໜ້າ, ຄວາມສາມາດທາງດ້ານທຶນຍັງມີໜ້ອຍ, ຄວາມຕ້ອງການໃຫ້ມີວຽກເຮັດງານທຳແມ່ນຮ້ອນຮົນທີ່ສຸດ, ຊີວິດການເປັນຢູ່ຂອງປະຊາຊົນຍັງມີຂໍ້ຫຍຸ້ງຍາກຫລາຍປະການ, ສະພາບການເສດຖະກິດ, ສັງຄົມຍັງບໍ່ທັນມີສະຖຽນລະພາບອັນໜັກແໜ້ນຢ່າງແທ້ຈິງ. ພວກເຮົາຕ້ອງຫລີກລ່ຽງຂໍ້ຜິດພາດອັດຕະວິໄສຝ່າຝືງຮ້ອນຮົນ, ເຊິ່ງອ່ຽງໄປທາງອຸດສາຫະກຳໜັກດ້ວຍຄວາມໂຜດເຫລືອ, ມັກຂະໜາດໃຫຍ່. ຕ້ອງຖືສຳຄັນເປັນພິເສດໃນການຫັນກະສິກຳ ແລະ ຊົນນະບົດເປັນອຸດສາຫະກຳ, ອອກແຮງຂະຫຍາຍກະສິກຳການປ່າໄມ້ ການປະມົງ, ບັນດາຂະແໜງການອຸດສາຫະກຳປຸງແຕ່ງກະເສດຕະພັນ-ເຄື່ອງປ່າຂອງດົງ - ສິນນ້ຳ, ອຸດສາຫະກຳຜະລິດສິນຄ້າໃຊ້ສອຍ ແລະ ສິນຄ້າຂາອອກ, ບັນດາຂະແໜງການທ່ອງທ່ຽວ, ການບໍລິການ; ຟື້ນຟູ, ຂະຫຍາຍ ແລະ ຫັນບັນດາຂະແໜງອາຊີບຫັດຖະກຳມູນເຊື້ອເປັນກ້າວໆໄປຄຽງຄູ່ກັນກັບການແຜ່ຂະຫຍາຍບັນດາຂະແໜງອາຊີບໃໝ່.

ຊົ່ວຊາ, ເລືອກເຟັ້ນບັນດາຮ່າງຍັດຕິກ່ຳຄ້ຳຈຸດການລະເວລາໃຫ້ເລີ່ມລົງມືທຳການກໍ່ສ້າງບັນດາກິດຈະການອຸດສາຫະກຳໜັກສຳຄັນຍິ່ງເຊິ່ງຄວາມຕ້ອງການຈະຮຽກຮ້ອງຢ່າງຮ້ອນຮົນ ແລະ ມີເງື່ອນໄຂວ່າດ້ວຍທຶນ, ເຕັກໂນໂລຍີ, ຕະຫລາດ, ເຊິ່ງມີຄວາມສາມາດເສີມຂະຫຍາຍ

ຄຸນປະໂຫຍດໂດຍໄວ ແລະ ມີຜົນສັກສິດສູງ. ຍົກລະດັບຄຸນນະພາບຂຶ້ນ, ດັດສ້າງ, ເປີດກວ້າງ ແລະ ກໍ່ສ້າງໃໝ່ຢ່າງມີຈຸດໝັກສຳລັບໂຄງ ຮ່າງຊັ້ນລ່າງທາງເສດຖະກິດຢູ່ບັນດາຂອດຂ້າງຄາກວ່າໝູ່ ທີ່ພວມ ກີດຂວາງການຂະຫຍາຍຕົວ.

ກໍ່ສ້າງແຜນກຳນົດຜັດທະນາສົມບູນພາກດ້ວຍກຳນົດເວລາຍາວ ນານສຳລັບບັນດາຂະແໜງການ, ບັນດາຂົງເຂດ, ບັນດາອານາບໍລິ ເວນເພື່ອໃຫ້ມີບາດກ້າວເດີນອັນເໝາະສົມ, ປະສານສົມທົບລະຫວ່າງ ຄວາມຕ້ອງການສະເພາະໜ້າ ແລະ ຈຸດໝາຍຍາວນານ, ລະຫວ່າງ ຈຸດ ແລະ ໜ້າດ້ານ, ລະຫວ່າງເສດຖະກິດ ແລະ ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ລະຫວ່າງອຸດສາຫະກຳ, ກະສິກຳ ແລະ ການບໍ ລິການ. ຂະຫຍາຍບັນດາຮູບການວິສາຫະກິດຂະໜາດໜ້ອຍ ແລະ ຜ່ານກາງເປັນຕົ້ນຕໍ, ດ້ວຍເຕັກໂນໂລຍີອັນເໝາະສົມ, ທຶນສຳລັບ ການລົງທຶນບໍ່ຫລາຍ, ສ້າງວຽກເຮັດງານທຳຂຶ້ນໃຫ້ຫລາຍ, ໄລຍະເວ ລາຖອນທຶນຄືນໂດຍໄວ. ເອົາໃຈໃສ່ສຳຄັນໃນການລົງທຶນຕາມລວງ ເລິກ, ປຽນແປງໃໝ່ເຄື່ອງປະກອບແນໃສ່ຂຸດຄົ້ນກຳລັງຄວາມສາ ມາດການຜະລິດທີ່ມີໃນປະຈຸບັນຢ່າງມີຜົນສັກສິດພ້ອມກັນນັ້ນກໍ່ທຳການ ກໍ່ສ້າງຫລີກະກຽມຢ່າງຕັ້ງໜ້າເພື່ອກໍ່ສ້າງກີດຈະການໃຫຍ່ຈຳນວນ ໜຶ່ງທີ່ຈຳເປັນແທ້ໆ.

ນະໂຍບາຍຂະຫຍາຍອຸດສາຫະກຳຕ້ອງຕິດພັນຢ່າງແໜ້ນ ແຟ້ນກັບນະໂຍບາຍ ແລະ ວິທີການພັດທະນາບັນດາຂະແໜງການ

ແລະ ບັນດາຂົງເຂດອື່ນໆ, ຊ່ວຍໜູນ ແລະ ຊຸກຍູ້ຊຶ່ງກັນ ແລະ ກັນ, ສ້າງການຂະຫຍາຍຕົວຂຶ້ນຢ່າງຄົບຊຸດໃນຊີວິດການເປັນຢູ່ທາງເສດຖະກິດ, ສັງຄົມ. ເອົາໃຈໃສ່ເປັນພິເສດເຖິງການກໍ່ສ້າງຄວາມຜົວພັນຮ່ວມມືແບບສະເໝີພາບ, ຕ່າງຝ່າຍຕ່າງກໍ່ມີຜົນປະໂຫຍດ, ຊ່ວຍເຫລືອຊຶ່ງກັນ ແລະ ກັນໃນການຂະຫຍາຍຕົວເປັນພ້ອມໆ ລະຫວ່າງອຸດສາຫະກຳ ແລະ ກະສິກຳ, ຕົວເມືອງ ແລະ ຊົນນະບົດ, ກຳມະກອນ, ຊາວກະສິກອນ ແລະ ປັນຍາຊົນໃນຂະບວນວິວັດແຫ່ງການຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝ.

ຖ້າວ່າການຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝຫາກສ້າງກຳລັງການຜະລິດທີ່ຈຳເປັນຂຶ້ນໃຫ້ແກ່ລະບອບສັງຄົມໃໝ່ທັງນັ້ນການ*ພັດທະນາເສດຖະກິດທີ່ມີຫລາຍພາກສ່ວນ*ກໍ່ແມ່ນເພື່ອກໍ່ສ້າງລະບົບຄວາມຜົວພັນແຫ່ງການຜະລິດອັນສອດຄ່ອງ.

ນະໂຍບາຍເສດຖະກິດ ທີ່ມີຫລາຍພາກສ່ວນໄດ້ປະກອບສ່ວນອັນໃຫຍ່ໂຕໃນການປົດປ່ອຍ ແລະ ຂະຫຍາຍກຳລັງການຜະລິດ, ເຊິ່ງນຳເອົາບັນດາຜົນສຳເລັດດ້ານເສດຖະກິດ-ສັງຄົມອັນສຳຄັນມາໃນ 10 ປີແຫ່ງການປ່ຽນແປງໃໝ່. ເອກະສານກອງປະຊຸມໃຫຍ່ຄັ້ງທີ VIII ຢັ້ງຢືນໃຫ້ສືບຕໍ່ປະຕິບັດນະໂຍບາຍດັ່ງກ່າວນີ້ຢ່າງສະເໝີຕົ້ນສະເໝີປາຍ ແລະ ຍາວນານ, ສົ່ງເສີມທຸກວິສາຫະກິດ, ເອກະຊົນທີ່ຢູ່ພາຍໃນ ແລະ ພາຍນອກປະເທດຊຸດຄົ້ນບັນດາຄວາມສາມາດບົ່ມຊ້ອນ, ອອກແຮງ

ລົງທຶນໃສ່ການພັດທະນາ, ດ້ວຍຄວາມອຸ່ນອຽນທຳມາຫາກິນເປັນເວ
ລາອັນຍາວນານ, ຊອບດ້ວຍກົດໝາຍ. ມີຜົນປະໂຫຍດແກ່ແຜນການ
ແຫ່ງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ; ທຳການປະຜິດອັນ
ສະເໝີພາບກັບທຸກໆ ພາກສ່ວນເສດຖະກິດຕໍ່ໜ້າກົດໝາຍ, ໂດຍບໍ່
ຈຳແນກການເປັນກຳມະສິດ ແລະ ຮູບການຈັດຕັ້ງທຸລະກິດເລີຍ.

ເສດຖະກິດທີ່ມີຫລາຍພາກສ່ວນເຊິ່ງພັກເຮົາວາງແຜນນະໂຍບາຍ
ແມ່ນເສດຖະກິດຕາມກຳນົດທິດສັງຄົມນິຍົມ. ສະນັ້ນເອກະສານຈຶ່ງເນັ້ນ
ໜັກຄວາມຈຳເປັນທີ່ຈະຕ້ອງເອົາໃຈໃສ່ຢ່າງຈົດຈໍ່ນຳການປ່ຽນແປງ
ໃໝ່ ແລະ ພັດທະນາເສດຖະກິດແຫ່ງລັດ ແລະ ເສດຖະກິດຂອງສະຫະ
ກອນ, ເຮັດໃຫ້ເສດຖະກິດແຫ່ງລັດທຳມາຫາກິນທີ່ມີຜົນສັກສິດອັນແທ້
ຈິງ, ເສີມຂະຫຍາຍບົດບາດເປັນເຈົ້າພາຫາງເປັນຢ່າງດີ, ພ້ອມກັບ
ເສດຖະກິດຂອງສະຫະກອນສູ້ຊົນເພື່ອກາຍເປັນພື້ນຖານຂອງເສດຖະກິດ
ແຫ່ງຊາດເທື່ອລະກ້າວ.

ເຕົ້າໂຮມແຫລ່ງກຳລັງເພື່ອພັດທະນາເສດຖະກິດແຫ່ງລັດໃນຂະ
ແໜງການຕ່າງໆ, ຂົງເຂດຕ່າງໆທີ່ສະຫລັກສຳຄັນເຊັ່ນໂຄງປະກອບຊັ້ນ
ລ່າງເສດຖະກິດ, ສັງຄົມ, ລະບົບການເງິນ, ທະນາຄານ, ປະກັນໄພ,
ບັນດາຮາກຖານ ການຜະລິດ ແລະ ການຄ້າ, ການບໍລິການທີ່ສຳຄັນ,
ວິສາຫະກິດຈຳນວນໜຶ່ງທີ່ປະຕິບັດໜ້າທີ່ຕ່າງໆ ທີ່ມີຄວາມພົວພັນ
ເຖິງການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ.

ປ່ຽນແປງໃໝ່ຕໍ່ການຈັດຕັ້ງຄຸ້ມຄອງວິສາຫະກິດແຫ່ງລັດ, ເສີມຂະ

ຫຍາຍສິດເປັນເຈົ້າຕົນເອງຂອງວິສາຫະກິດດ້ວຍລະດັບສູງໃນການປະຕິບັດໜ້າທີ່ທີ່ໄດ້ຮັບການ ມອບໝາຍໃຫ້. ປະຕິບັດແຜນນະໂຍບາຍຫັນພາກສ່ວນວິສາຫະກິດແຫ່ງລັດເປັນຫຸ້ນສ່ວນເປັນຢ່າງດີເພື່ອລະດົມສົ່ງເສີມທຶນຂຶ້ນຕື່ມ, ສ້າງກຳລັງໜູນຂຶ້ນຕື່ມ, ເພື່ອຊຸກຍູ້ວິສາຫະກິດທຳມາຫາກິນຢ່າງມີຜົນສັກສິດ, ເຮັດໃຫ້ຊັບສົມບັດຂອງລັດເປັນກຳມະສິດນັບມື້ນັບເພີ່ມຂຶ້ນຕື່ມ.

ເພີ່ມທະວີການນຳພາ, ຊີ້ນຳ ແລະ ມີນະໂຍບາຍເອື້ອເຟື້ອ, ຊ່ວຍເຫລືອໃຫ້ເສດຖະກິດຂອງສະຫະກອນເຊິ່ງເປັນຫລັກແຫລ່ງແມ່ນບັນດາສະຫະກອນທີ່ຂະຫຍາຍຕົວເປັນຢ່າງດີ. ປະສານສົມທົບກຳລັງແຮງຂອງແຕ່ລະສະມາຊິກກັບກຳລັງແຮງຂອງລວມໝູ່ດ້ວຍຄວາມສະໝັກໃຈເພື່ອແກ້ໄຂບັນຫາຕ່າງໆ ຂອງການຜະລິດທຸລະກິດ ແລະ ຊີວິດການເປັນຢູ່ຂອງຊາວຜູ້ອອກແຮງງານຢ່າງມີຜົນສັກສິດກວ່າເກົ່າ.

ຂະຫຍາຍບັນດາຮູບການເສດຖະກິດທຶນນິຍົມແຫ່ງລັດຢ່າງກວ້າງຂວາງ. ນຳໃຊ້ຫລາຍແບບວິທີຮ່ວມມື, ຮ່ວມສຳພັນລະຫວ່າງລັດກັບບັນດາເຈົ້າທຶນພາຍໃນປະເທດ ແລະ ບັນດາບໍລິສັດທຶນນິຍົມຂອງຕ່າງປະເທດ. ສ້າງທ່າ ແລະ ກຳລັງຂຶ້ນໃຫ້ແກ່ວິສາຫະກິດຫວຽດນາມຂະຫຍາຍຕົວ, ເພີ່ມຄວາມສາມາດໃນການຮ່ວມມື ແລະ ແຂ່ງຂັນ. ປົວແປງສິ່ງແວດລ້ອມລົງທຶນໃຫ້ດີຂຶ້ນ ແລະ ຍົກກຳລັງຄວາມສາມາດການຄຸ້ມຄອງໃຫ້ສູງຂຶ້ນເພື່ອດຶງດູດທຶນຂອງຕ່າງປະເທດໃນການລົງ

ທຶນໂດຍກົງຢ່າງມີຜົນສັກສິດ.

ຊ່ວຍເຫລືອໃຫ້ເສດຖະກິດເອກະຊົນ, ເຈົ້າຊຸບນ້ອຍໃນການແກ້ໄຂຂໍ້ຫຍຸ້ງຍາກຕ່າງໆ ວ່າດ້ວຍທຶນ, ວິທະຍາສາດ ແລະ ເຕັກໂນໂລຍີ, ວ່າດ້ວຍຕະຫລາດບໍລິໂພກຜະລິດຕະພັນ, ແນະນຳເຂົ້າເຈົ້າເຂົ້າຮ່ວມການທຳມາຫາກິນແບບຮ່ວມມືເປັນກ້າວໆຢ່າງສະໝັກໃຈ, ຫລືເປັນດາວທຽມໃຫ້ແກ່ບັນດາວິສາຫະກິດແຫ່ງລັດຫລືສະຫະກອນ.

ສົ່ງເສີມທຶນນິຍົມເອກະຊົນລົງທຶນໃສ່ການຜະລິດ, ດ້ວຍຄວາມອຸ່ນອຽນໃນການທຳມາຫາກິນຕາມໄລຍະເວລາອັນຍາວນານ, ປ້ອງກັນສິດກຳມະສິດ ແລະ ຜົນປະໂຫຍດອັນຊອບກົດໝາຍ, ສ້າງເງື່ອນໄຂທີ່ອຳນວຍຄວາມສະດວກໄປຄຽງຄູ່ກັນກັບການເຝີ້ມທະວີການຄຸ້ມຄອງ, ແນະນຳການທຳມາຫາກິນໃຫ້ຖືກຕ້ອງຕາມກົດໝາຍ, ມີຜົນໃຫ້ແກ່ແຜນການແຫ່ງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ.

ຊຸກຍູ້ການຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝຢ່າງແຂງແຮງ, ຂະຫຍາຍເສດຖະກິດທີ່ມີຫລາຍພາກສ່ວນກໍ່ບໍ່ອາດແຍກອອກຈາກການ*ກໍ່ສ້າງກົນໄກຕະຫລາດຢ່າງຄົບຊຸດ ແລະ ເຮັດໃຫ້ກົນໄກຕະຫລາດນັ້ນເຄື່ອນໄຫວຢ່າງມີຜົນສັກສິດ ໂດຍມີການຄຸ້ມຄອງຂອງລັດຕາມກຳນົດທິດສັງຄົມນິຍົມ.*

ກົນໄກຕະຫລາດໄດ້ເສີມຂະຫຍາຍຄຸນປະໂຫຍດອັນຕັ້ງໜ້າໃຫຍ່ຍິ່ງເຖິງການພັດທະນາເສດຖະກິດ-ສັງຄົມ. ມັນບໍ່ພຽງແຕ່ບໍ່ກົງກັນຂ້າມເທົ່ານັ້ນຫາກຍັງເປັນປັດໄຈພາວະວິໄສຢ່າງໜຶ່ງທີ່ຈຳເປັນຂອງການ

ກໍ່ສ້າງແລະພັດທະນາປະເທດຊາດໃຫ້ເດີນຕາມເສັ້ນທາງສັງຄົມນິຍົມ.

ດ້ານອື່ນ, ກົນໄກຕະຫລາດກໍ່ມີບັນດາການກະທົບອັນຫຍໍ້ທໍ້ເຊິ່ງຂັດແຍ່ງກັບທາດແທ້ຂອງສັງຄົມນິຍົມ. ໝຸນໃຊ້ກົນໄກຕະຫລາດຈະຮຽກຮ້ອງຕ້ອງຍົກສູງກຳລັງຄວາມສາມາດໃນການຄຸ້ມຄອງມະຫາພາກຂອງລັດ, ແນໃສ່ເສີມຂະຫຍາຍຄຸນປະໂຫຍດອັນຕົ້ງໜ້າໄປຄຽງຄູ່ກັນກັບການກັນໄວ້, ຈຳກັດ ແລະ ຜ່ານຜ່າແກ້ໄຂບັນດາດ້ານຫຍໍ້ທໍ້. ຕ້ອງລົບລ້າງກົນໄກແບບລວມສູນອາດຍາສິດເກື້ອກຸ້ນ, ເຮັດໃຫ້ບັນດາມູນພາກຂອງຕະຫລາດປະກົດເປັນຮູບເປັນຮ່າງຂຶ້ນ. ພ້ອມກັນນັ້ນກໍ່ສ້າງ ແລະ ບູລະນະໃຫ້ສົມບູນສຳລັບບັນດາເຄື່ອງມືແຫ່ງກົດໝາຍ, ແຜນການ, ບັນດາສະຖາບັນຍັດການເງິນ, ເງິນຕາ ແລະ ບັນດາພາຫະນະແຫ່ງວັດຖຸ ແລະ ການຈັດຕັ້ງທີ່ຈຳເປັນໃຫ້ແກ່ການຄຸ້ມຄອງຂອງລັດ, ສ້າງເງື່ອນໄຂໃຫ້ແກ່ກົນໄກຕະຫລາດເຄື່ອນໄຫວຢ່າງມີຜົນສັກສິດ.

ຈັດ ແລະ ແກ້ໄຂສາຍພົວພັນລະຫວ່າງແຜນການ ແລະ ຕະຫລາດເປັນຢ່າງດີ. ຕະຫລາດທັ້ງເປັນທີ່ຕັ້ງ, ທັ້ງເປັນເປົ້າໝາຍຂອງແຜນການ. ແຜນການຕ້ອງເຊື່ອມຊຶມແນວທາງ, ແຜນນະໂຍບາຍຂອງພັກທັ້ງນີ້ກໍ່ເພື່ອວາງລະບົບຈຸດໝາຍມະຫາພາກລະບົບໜຶ່ງອອກ, ເພື່ອຢືນຢັນຄວາມໄວແຫ່ງການເຕີບໂຕ, ໂຄງປະກອບ ແລະ ບັນດາການດຸ່ນດ່ຽງໃຫຍ່, ເລືອກເຟັ້ນແຜນແກ້, ນະໂຍບາຍ ແລະ ວິທີແກ້ໄຂເພື່ອກຳນົດທິດໃຫ້ແກ່ເສດຖະກິດທັງໝົດ.

ກົນໄກຕະຫລາດຮຽກຮ້ອງຕ້ອງສ້າງສິ່ງແວດລ້ອມແຂ່ງຂັນກັນອັນ

ສົດໃສ, ຖືກກົດໝາຍ, ສີວິໄລປະກົດເປັນຮູບເປັນຮ່າງຂຶ້ນ. ແຂ່ງຂັນ ເພື່ອຜົນປະໂຫຍດໃຫ້ພັດທະນາປະເທດຊາດ, ຫາກບໍ່ແມ່ນຈະເຮັດໃຫ້ ລົ້ມຈົມເປັນລວາດໆ, ບັນດາແຫລ່ງກຳລັງຖືກຟຸມເຟືອຍ, ຍຶດຊິງຊິ່ງກັນ ແລະ ກັນ.

ປະຕິບັດໃຫ້ຖືກຕ້ອງຕາມພາລະບົດບາດຄຸ້ມຄອງຂອງລັດວ່າດ້ວຍເສດ ຖະກິດ ແລະ ພາລະບົດບາດ ເປັນເຈົ້າກຳມະສິດກ່ຽວກັບຊັບສົມບັດ ສ່ວນລວມຂອງລັດ. ເຄົ້າລົບນັບຖື ແລະ ເສີມຂະຫຍາຍສິດເປັນເຈົ້າຕົນ ເອງໃນການທຸລະກິດຂອງວິສາຫະກິດໃນກົນໄກຕະຫລາດຢ່າງຄົບ ຖ້ວນ. ບັນດາອົງການປົກຄອງບໍ່ແຊກແຊງເຂົ້າວຽກງານຕ່າງໆ ທີ່ຂຶ້ນ ກັບພາລະບົດບາດຄຸ້ມຄອງທຸລະກິດຂອງວິສາຫະກິດ.

IV-ເອົາໃຈໃສ່ຈົດຈ່ຳຢ່າງຕັ້ງໜ້າໃນການຂະ ຫຍາຍແຫລ່ງກຳລັງຄົນ, ປະຕິບັດຄວາມຍຸດຕິທຳທາງສັງ ຄົມ

ໂຄງການການເມືອງຂອງພັກເຮົາກໍ່ຊີ້ແຈ້ງ: "ນະໂຍບາຍສັງຄົມ ອັນຖືກຕ້ອງເພື່ອຄວາມສົມບູນພຸນສຸກຂອງຄົນແມ່ນກຳລັງໜູນອັນໃຫຍ່ ໂຕໃຫ້ແກ່ການເສີມຂະຫຍາຍທຸກໆຄວາມບົ່ມຊ້ອນອັນປະດິດສ້າງຂອງ ປະຊາຊົນໃນພາລະກິດກໍ່ສ້າງສັງຄົມນິຍົມ".

ບັນຫາສັງຄົມເປັນລວາດໆ ພວມໄດ້ຮັບການວາງອອກ, ຫລືເປັນ ຍ້ອນຜົນຮ້າຍຍ້ອນຫລັງອັນໜັກໜ່ວງໃນຫລາຍປີແຫ່ງສົງຄາມ, ເສດ

ຖະກິດດ້ອຍພັດທະນາ, ຫລືວ່າມັນຫາກໍ່ກຳເນີດເກີດຂຶ້ນໃນຂະບວນວິວັດ ທັນມາສູ່ກົນໄກຕະຫລາດ ແລະ ເປີດກວ້າງການແລກປ່ຽນກັບສາກົນ. ບໍ່ອາດແກ້ໄຂທຸກບັນຫາໄປພ້ອມບາດດຽວໄດ້ໃນເມື່ອສະມັດຖະພາບ ຂອງງານທາງສັງຄົມຍັງຕົກຕ່ຳ, ແຫລ່ງລາຍໄດ້ເຂົ້າງົບປະມານຍັງ ຄັບແຄບ, ຈຸ້ຳຍັງຕ້ອງສະສົມໃຫ້ແກ່ການຫັນປະເທດຊາດເປັນອຸດສາ ຫະກຳ, ເປັນທັນສະໄໝອີກ. ລາຍງານການເມືອງພຽງແຕ່ຕ້ອງເວົ້າ ເຖິງບັນຫາຈຳນວນໜຶ່ງທີ່ຄັບຂັນກວ່າໝູ່ວ່າດ້ວຍຄົນ ແລະ ສັງຄົມ ເທົ່ານັ້ນ.

ລາຍງານການເມືອງຈະສະເໜີບັນດາທິດທາງຕົ້ນຕໍໃນການຂະ ຫຍາຍ*ຫົວຄິດປັນຍາ*ຂອງຄົນຫວຽດນາມເຊິ່ງສະແດງໃຫ້ເຫັນໃນບັນ ດາຂົງເຂດວິທະຍາສາດ ແລະ ເຕັກໂນໂລຢີ, ສຶກສາອົບຮົມ ແລະ ກໍ່ ສ້າງແນໃສ່ຍົກຄວາມຮູ້ຂອງປະຊາຊົນໃຫ້ສູງຂຶ້ນ, ກໍ່ສ້າງກຳລັງຄົນ, ບຳລຸງສ້າງຜູ້ທີ່ເກັ່ງກ້າສາມາດ. ບັນດາຂະແໜງການວິທະຍາສາດ ສັງຄົມ ແລະ ມະນຸດອະລິຍະທຳ, ວິທະຍາສາດທຳມະຊາດ ແລະ ເຕັກ ໂນໂລຢີຕ້ອງໄດ້ຮັບການເອົາໃຈໃສ່ໃນການລົງທຶນພັດທະນາ, ເອົາໃຈ ໃສ່ຄົ້ນຄວ້າ ແລະ ນຳໃຊ້ລັດທິມາກ-ເລນິນ, ແນວຄິດໂຮ່ຈິມິນ, ບັນ ດາ ຜົນງານຂອງວິທະຍາສາດ ແລະ ເຕັກໂນໂລຢີຂອງມະນຸດຊາດ ຢ່າງປະດິດສ້າງເພື່ອປະກອບສ່ວນຢ່າງໄດ້ການໄດ້ງານໃສ່ການວາງ ແຜນກຳນົດສຳລັບແນວທາງ, ແຜນນະໂຍບາຍ, ນະໂຍບາຍ, ແຜນ ການຂະຫຍາຍການຜະລິດທຸລະກິດ, ບຳລຸງ ແລະ ເສີມຂະຫຍາຍແຫລ່ງ

ກຳລັງຄົນ.

ການສຶກສາ ແລະ ການກໍ່ສ້າງຕ້ອງກາຍເປັນນະໂຍບາຍຂອງປະເທດເປັນອັນດັບໜຶ່ງຢ່າງແທ້ຈິງ. ດ້ວຍຮູບການອັນຫລາຍຮູບຫລາຍສີເພື່ອຮັບປະກັນໃຫ້ທຸກໆຄົນຕ່າງກໍ່ໄດ້ຮ່ຳໄດ້ຮຽນ, ໂດຍສະເພາະຢ່າງຍິ່ງແມ່ນຄົນທຸກຍາກ ແລະ ລູກເຕົ້າຂອງບັນດາຄອບຄົວທີ່ເປັນເປົ້າໝາຍຂອງນະໂຍບາຍ. ລະດົມສົ່ງເສີມຂະບວນການມວນຊົນທຳການແຂ່ງຂັນກັນລົບລ້າງໄພກຶກໜັງສື, ທຳການສຶກສາຊັ້ນປະຖົມແບບບັງຄັບໃນທົ່ວປະເທດ ໃຫ້ສຳເລັດຜົນດີ ແລະ ເຜີຍແຜ່ມັດທະຍົມສຶກສາຂັ້ນຟື້ນຖານແບບບັງຄັບຢູ່ໃນບໍລິເວນທີ່ມີເງື່ອນໄຂ. ດັດແປງຄຸນນະພາບຂອງການສິດສອນ ແລະ ຮ່ຳຮຽນ, ຜ່ານຜ່າແກ້ໄຂບັນດາຂໍ້ຫຍໍ້ທໍ້, ອ່ອນແອໃນຂະແໜງການສຶກສາເພື່ອເຮັດໃຫ້ການກໍ່ສ້າງ, ບຳລຸງສ້າງແຫລ່ງກຳລັງຄົນໃຫ້ສຳເລັດຜົນດີແກ່ການຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝຂອງປະເທດຊາດໄປພ້ອມກັບການປ່ຽນແປງໃໝ່ສຳລັບເນື້ອໃນການສຶກສາຜົນລະເມືອງຕາມທິດຟື້ນຖານ, ທັນສະໄໝ ຕ້ອງເຜີ່ມທະວີສຶກສາປະຊາຊົນ, ສຶກສາໂລກາກະທັດວິທະຍາສາດ, ຈິດໃຈຮັກຊາດ, ເຈດຈຳນົງປັ້ນຕົວຂຶ້ນເພື່ອອະນາຄົດຂອງຕົນເອງ ແລະ ອະນາຄົນຂອງປະເທດຊາດ.

ວັດທະນະທຳແມ່ນຟື້ນຖານທາງຈິດໃຈຂອງສັງຄົມ, ທັງເປັນຈຸດໝາຍທັງເປັນກຳລັງໜູນຊຸກຍູ້ການພັດທະນາເສດຖະກິດ, ສັງຄົມ. ພ້ອມກັນກັບວິທະຍາສາດ ແລະ ເຕັກນິກໂນໂລຢີ, ການສຶກສາ ແລະ

ການກໍ່ສ້າງ, ບັນດາການເຄື່ອນໄຫວທາງດ້ານສິລະປະວັນນະຄະດີມີທີ່ຕັ້ງອັນສຳຄັນໃນການເຮັດໃຫ້ຖານະເປັນມະນຸດປະກົດຕົວເປັນຮູບເປັນຮ່າງ, ເຮັດໃຫ້ຊີວິດການເປັນຢູ່ທາງຈິດໃຈຂອງຄົນຫວຽດນາມອຸດົມສົມບູນຂຶ້ນ. ເອກະລັກແຫ່ງຊາດ ແລະ ລັກສະນະກ້າວໜ້າຂອງວັດທະນະທຳຕ້ອງໄດ້ຮັບການເຊື່ອມຊຶມໃຫ້ດີບໍ່ພຽງແຕ່ໃນວຽກງານສິລະປະວັນນະຄະດີເທົ່ານັ້ນ, ຫາກລວມທັງໃນທຸກການເຄື່ອນໄຫວກໍ່ສ້າງ, ປະດິດສ້າງວັດຖຸ, ນຳໃຊ້ບັນດາຜົນສຳເລັດຂອງວິທະຍາສາດ, ເຕັກໂນໂລຢີ, ສຶກສາ ແລະ ກໍ່ສ້າງ... ເຮັດແນວໃດໃຫ້ທຸກຂົງເຂດນັ້ນພວກເຮົາຈະມີວິທີຈິດຕະນາການເປັນເອກະລາດ, ມີວິທີເຮັດທັງທັນສະໄໝທັງຖືເອກະລັກຫວຽດນາມ. ເດີນໄປເຂົ້າເສດຖະກິດຕະຫລາດ, ເປີດກວ້າງການແລກປ່ຽນກັບສາກົນ, ເຮັດໃຫ້ປະເທດຊາດເປັນອຸດສາຫະກຳເປັນທັນສະໄໝ, ຮັບເອົາບັນດາຍອດແຍ້ຂອງມະນຸດຊາດ, ແຕ່ວ່າຈະຕ້ອງຖືສຳຄັນບັນດາຄຸນຄ່າແຫ່ງມູນເຊື້ອ ແລະ ເອກະລັກຂອງຊາດຢູ່ສະເໝີ, ເດັດດ່ຽວບໍ່ເຮັດເສຍຄົນໂດຍຕົນເອງ, ກາຍເປັນເງົາມົວໆ ຫລື ເປັນສະບັບທີ່ຈົດກ່າຍຈາກຜູ້ອື່ນຊ້ຳ.

ຄວາມລ້ຳສັນກ່ຽວກັບສຸຂະພາບຮ່າງກາຍ ແມ່ນຄວາມຕ້ອງການຂອງກະໂຕຄົນເອງ, ພ້ອມກັນນັ້ນກໍ່ແມ່ນທຶນອັນລ້ຳຄ່າເພື່ອສ້າງຊັບພາຍະກອນດ້ານຫົວຄິດປັນຍາ ແລະ ວັດຖຸຂຶ້ນໃຫ້ແກ່ສັງຄົມ. ເອົາໃຈໃສ່ຈົດຈ່ຳຄົນກ່ຽວກັບສຸຂະພາບຮ່າງກາຍແມ່ນຄວາມຮັບຜິດຊອບຂອງສັງຄົມທັງໝົດ, ຂອງຂັ້ນຕ່າງໆ, ຂະແໜງການຕ່າງໆ, ບັນດາອົງການຈັດຕັ້ງມະຫາຊົນທັງໝົດ. ຄຽງຄູ່ກັນກັບການພັດທະນາເສດຖະ

ກິດ, ເອົາໃຈໃສ່ຈັດຈໍ່ນຳການກິນ, ການຢູ່ຂອງປະຊາຊົນໃຫ້ນັບມື້ນັບດີຂຶ້ນກວ່າເກົ່າ, ທັງນີ້ບັນດາຂະແໜງການສາທາລະນະສຸກ, ກິລາກາຍະກຳ, ຈຳນວນພົນລະເມືອງ ແລະ ການຫັນຄອບຄົວເປັນແຜນການຕ້ອງເຮັດໜ້າທີ່ດູແລເບິ່ງແຍງສຸຂະພາບຂອງປະຊາຊົນເປັນຢ່າງດີ. ໃນນັ້ນຕ້ອງເອົາໃຈໃສ່ທີ່ສຸດເຖິງການກໍ່ສ້າງ ແລະ ປັບປຸງລະບົບສາທາລະນະສຸກຂັ້ນຮາກຖານ, ເຮັດໃຫ້ດີສຳລັບວຽກງານສາທາລະນະສຸກກຽມເຝື້ອ, ປ້ອງກັນ ແລະ ຕ້ານບັນດາພະຍາດໂລກລະບາດ, ດູແລເບິ່ງແຍງສຸຂະພາບຂອງແມ່ ແລະ ເດັກນ້ອຍ, ປຸກລະດົມຂະບວນການກິລາກາຍະກຳແບບມວນຊົນຢ່າງກວ້າງຂວາງ. ຕ້ອງປຽນແປງໃໝ່ສຳລັບກົນໄກ ແລະ ທ່າທີຮັບໃຊ້, ລະດົມຢ່າງເໝາະສົມ ແລະ ໃຊ້ບັນດາແຫລ່ງການເງິນທີ່ຈັ່ງໄວ້ໃຫ້ແກ່ການເຄື່ອນໄຫວສາທາລະນະສຸຂຢ່າງມີຜົນສັກສິດ. ຮັບປະກັນໃຫ້ບັນດາຄົນທຸກ, ບັນດາຄົນທີ່ໄດ້ຮັບນະໂຍບາຍດູແລເບິ່ງແຍງສຸຂະພາບ, ຖືກຫລຸດຜ່ອນຫລືຍົກເວັ້ນການເສຍຄ່າກວດພະຍາດຄ່າຢຸກຢາ.

ຜ່ານພຶດຕິກຳໃນສິບປີແຫ່ງການປຽນແປງໃໝ່, ພວກເຮົາໄດ້ຮັບຮູ້ຢ່າງຈະແຈ້ງວ່າຈະບໍ່ລໍຖ້າໃຫ້ເສດຖະກິດຂະຫຍາຍຕົວສູງແລ້ວຈຶ່ງແກ້ໄຂບັນດາບັນຫາສັງຄົມ, ເຊິ່ງໃນແຕ່ລະບາດກ້າວນີ້ເອງ ແລະ ຕະຫລອດວິວັດທະນາການຂະຫຍາຍຕົວ, ເຕີບໂຕ ຂອງເສດຖະກິດຕ້ອງຕິດພັນກັບຄວາມກ້າວໜ້າ ແລະ ຄວາມຍຸດຕິທຳທາງສັງຄົມຢູ່ສະເໝີ. ຄວາມຍຸດຕິທຳທາງສັງຄົມບໍ່ພຽງແຕ່ຖືກປະຕິບັດໃນການແຈກຢາຍຜົນໄດ້ຂອງການຜະລິດເທົ່ານັ້ນ, ຫາກຍັງໄດ້ຮັບການປະຕິບັດຈາກ

ຂອດແຈກຢາຍຜາຫະນະການຜະລິດ, ໃນການສ້າງບັນດາເງື່ອນໄຂ ຂຶ້ນໃຫ້ແກ່ທຸກຄົນທຳການເສີມຂະຫຍາຍກຳລັງຄວາມສາມາດຂອງຕົນ ໃຫ້ດີ. ສົ່ງເສີມການສ້າງຄວາມຮັ່ງຖືກກົດໝາຍ, ຕ້ານການສ້າງ ຄວາມຮັ່ງມີແບບຜິດກົດໝາຍໄປຄຽງຄູ່ກັນກັບການເປັນຫ່ວງເປັນໄຍ ນຳການລົບລ້າງຄວາມອຶດຢາກຫລຸດຜ່ອນຄວາມທຸກຍາກ, ເຮັດໃຫ້ໄລ ຍະຫ່າງກັນກ່ຽວກັບລະດັບຂະຫຍາຍຕົວ, ກ່ຽວກັບລະດັບຊີວິດການ ເປັນຢູ, ລະຫວ່າງເຂດຕ່າງໆ, ລະຫວ່າງຊົນເຜົ່າຕ່າງໆ, ລະຫວ່າງບັນ ດາຊັ້ນຄົນໃຫ້ຫຍັບເຂົ້າໃຫ້ກັນ, ເປັນພິເສດແມ່ນບັນດາເຂດທີ່ໜັ້ນປະ ຕິວັດ ແລະ ຕໍ່ຕ້ານເກົ່າ, ບັນດາຄອບຄົວທີ່ຖືກປະຕິບັດນະໂຍບາຍ, ເຮັດ ໃຫ້ທຸກໆຄົນ, ທຸກໆ ຄອບຄົວລ້ວນແຕ່ກ້າວຂຶ້ນສູ່ການດຳລົງຊີວິດອີ່ມ ໜຳສຳລານ, ສົມບູນພຸນສຸກ, ໃຜໆກໍ່ມີວຽກເຮັດງານທຳ, ມີເຂົ້າກິນ, ມີເສື້ອນຸ່ງ, ໃຜໆກໍ່ໄດ້ຮ່ຳໄດ້ຮຽນ ແລະ ປົວພະຍາດ, ສູ້ຊົນປະຕິບັດຄວາມ ອ່າວໜ້ວງຂອງປະທານໂຮ່ຈິມິນໃຫ້ປະກົດເປັນຈິງເປັນກ້າວໆ.

ເລີ່ມຈາກຄວາມຮັບຮູ້ວ່າເປັນຫ່ວງເປັນໄຍນຳຄົນ, ນຳວົງຄະນາ ຍາດສັງຄົມແມ່ນຄວາມຮັບຜິດຊອບຂອງສັງຄົມທັງໝົດ, ຂອງແຕ່ລະ ຫົວໜ່ວຍ, ຂອງແຕ່ລະຄອບຄົວ, ແມ່ນພາລະກິດຂອງພັກ, ລັດ ແລະ ຂອງມວນຊົນ, ພວກເຮົາວາງແຜນນະໂຍບາຍໃຫ້ແກ້ໄຂບັນດາບັນຫາ ສັງຄົມຕາມຈິດໃຈ*ທັນເປັນຂອງສັງຄົມ*, ເຊິ່ງໃນນັ້ນລັດດຳລົງບົດບາດ ຫົວຈັກຫຼັກແຫລ່ງ.ອີງຕາມລະດັບພັດທະນາເສດຖະກິດ, ລັດຈະຄ່ອຍ ເພີ່ມຄ່ອຍທະວີແຫລ່ງລົງທຶນໃຫ້ແກ່ວິທະຍາສາດ, ການສຶກສາ, ວັດທະ ນະທຳ, ຖູແລເບິ່ງແຍງສຸຂະພາບ ແລະ ບັນດາບັນຫາສັງຄົມ; ພ້ອມກັນ

ນັ້ນກໍ່ຂຸດຄົ້ນທຸກຄວາມສາມາດບົ່ມຊ້ອນຂອງປະຊາຊົນ, ຂອງທ້ອງຖິ່ນ, ຂອງສະມາຄົມຕ່າງໆ, ຍາດແຍ່ງບັນດາແຫລ່ງຊ່ວຍເຫລືອຈາກຕ່າງປະເທດ ແລະ ໃຊ້ຢ່າງມີຜົນສັກສິດເພື່ອເປັນຫ່ວງເປັນໃຍນຳຄົນ ແລະ ສັງຄົມ. ພາລະກິດປະຕິວັດແມ່ນພາລະກິດຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນ, ລັດ ແລະ ປະຊາຊົນພ້ອມກັນເຮັດ, ທຸກວຽກງານຕ່າງກໍ່ອີງໃສ່ປະຊາຊົນ..., ນັ້ນແມ່ນບັນດາທັດສະນະ ແລະ ບົດຮຽນໃນປະຫວັດສາດແຫ່ງການສ້ຽງຄາມປະຊາຊົນ ແລະ ໃນ 10 ປີແຫ່ງການປ່ຽນແປງໃໝ່ທັ້ງນັ້ນຈະຕ້ອງກຳແໜ້ນ ແລະ ເສີມຂະຫຍາຍເພື່ອສ້າງແຫລ່ງກຳລັງເພື່ອແກ້ໄຂບັນຫາຄົນ ແລະ ສັງຄົມໃນໄລຍະປະຈຸບັນນີ້.

V- ຈຸດໝາຍ, ໜ້າທີ່ ແລະ ບັນດາໂຄງການໃຫຍ່ ດ້ານເສດຖະກິດສັງຄົມ ໃນແຜນການ 5 ປີ 1996-2000

ບ້ານເມືອງເຮົາກ້າວເຂົ້າສູ່ 5 ປີ ສຸດທ້າຍຂອງສະຕະວັດນີ້ດ້ວຍບັນດາຄວາມອາດສາມາດແລະ ກາລະໂອກາດໃຫຍ່ກວ່າຕັ້ງຫລາຍຢ່າງ ເມື່ອປຽບກັບ 5 ປີກ່ອນ, ພ້ອມກັນນັ້ນກໍ່ຢືນຕໍ່ໜ້າຄວາມທ້ົດສອບຕ່າງໆຢ່າງເຄັ່ງຮ້ອນທີ່ສຸດ.

ແຜນການ 5 ປີ 1996-2000 ໄດ້ຮັບການກໍ່ສ້າງຂຶ້ນບົນພື້ນຖານເຊື່ອມຊຶມບັນດາຈິດໃຈຊີ້ນຳຕໍ່ໄປນີ້:

- *ໜຶ່ງ*: ປະຕິບັດ 3 ຈຸດໝາຍເສດຖະກິດໄປພ້ອມໆກັນ: ຊຸກຍູ້ການຫັນເປັນອຸດສາຫະກຳຢ່າງແຂງແຮງດ້ວຍຈັງຫວະເຕີບໂຕສູງ, ໝັ້ນ

ຄົງ ແລະ ມີຜົນສັກສິດ; ເຮັດໃຫ້ເສດຖະກິດມະຫາພາກມີຄວາມສະຖຽຍ ລະພາບອັນຫນັກແຫນ້ນ; ກຽມຂໍ້ມູນຕ່າງໆໃຫ້ແກ່ບາດກ້າວຂະຫຍາຍ ຕົວສູງກວ່ານັ້ນໃນພາຍຫລັງປີ 2000, ເຊິ່ງເປັນຕົ້ນຕໍກ່າວຄືຂະຫຍາຍ ແຫລ່ງກຳລັງຄົນ, ວິທະຍາສາດ ແລະ ເຕັກໂນໂລຢີ,ໂຄງປະກອບ ໂຄງ ລ່າງ, ບູລະນະສະຖາບັນຍັດໃຫ້ສົມບູນ.

- *ສອງ:* ສືບຕໍ່ປະຕິບັດນະໂຍບາຍເສດຖະກິດຢ່າງສະເຫມີຕົ້ນສະ ເຫມີປາຍ ແລະ ຍາວນານ, ເສີມຂະຫຍາຍທຸກໆແຫລ່ງກຳລັງເພື່ອຂະ ຫຍາຍກຳລັງການຜະລິດ, ພ້ອມກັນນັ້ນກໍບູລະນະກົນໄກຕະຫລາດໃຫ້ ສົມບູນໂດຍມີການຄຸ້ມຄອງຂອງລັດຕາມກຳນົດທິດສັງຄົມນິຍົມ.

- *ສາມ:* ປະສານສົມທົບຢ່າງກົມກຽວລະຫວ່າງຄວາມເຕີບໂຕທາງ ເສດຖະກິດກັບການພັດທະນາສັງຄົມ, ສຸມໃສ່ໃນການແກ້ໄຂບັນດາບັນ ຫາທີ່ຄັບຂັນແນໃສ່ສ້າງຄວາມຫັນປ່ຽນຢ່າງຈະແຈ້ງກ່ຽວກັບການປະ ຕິບັດຄວາມກ້າວຫນ້າ ແລະ ຄວາມຍຸດຕິທຳທາງສັງຄົມ.

- *ສີ່:* ປະສານສົມທົບລະຫວ່າງເສດຖະກິດກັບການປ້ອງກັນຊາດ, ປ້ອງກັນຄວາມສະຫງົບຢ່າງແຫນ້ນແຟ້ນ, ຍົກສູງຜົນສັກສິດໃນການ ໃຊ້ບັນດາແຫລ່ງກຳລັງທັງຮັບໃຊ້ພາລະກິດພັດທະນາເສດຖະກິດທັງ ຮັບໃຊ້ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ.

- *ຫ້າ:* ປະສານສົມທົບການຂະຫຍາຍບັນດາເຂດເສດຖະກິດທີ່ເປັນ ຈຸດສຸມກັບບັນດາເຂດອື່ນໆ, ສ້າງເງື່ອນໄຂໃຫ້ແກ່ເຂດຕ່າງໆຕ່າງກໍຂະ ຫຍາຍຕົວ; ເສີມຂະຫຍາຍທ່າດີຂອງແຕ່ລະເຂດ, ຫລີກລ່ຽງການ

ຜິດໂຕນກັນທີ່ຫ່າງໄກກັນໂພດກ່ຽວກັບຈັງຫວະເຕີບໂຕລະຫວ່າງເຂດ ຕ່າງໆ.

ໃນ 5 ປີທີ່ຈະເຖິງ, ພວກເຮົາໂຮມສຸມກຳລັງແກ່ຈຸດໝາຍພັດທະນາ, ບັນລຸຄວາມໄວໃຫ້ເພີ່ມ GDP ສະເລ່ຍ 9-10% ຕໍ່ປີ. ມາຮອດປີ 2000 GDP ສະເລ່ຍຕາມຫົວຄົນເພີ່ມຂຶ້ນ 2 ເທົ່າເມື່ອປຽບກັບປີ 1990. ຄຸນ ຄ່າການຜະລິດອຸດສາຫະກຳເພີ່ມຂຶ້ນສະເລ່ຍ 14-15% ຕໍ່ປີ, ກະສິກຳ ເພີ່ມຂຶ້ນ 4,5-5%, ການບໍລິການເພີ່ມຂຶ້ນ 12-13% ແລະ ໃນການຊີ້ ນຳໃຫ້ປະຕິບັດກໍ່ຕ້ອງຍາດແຍ່ງທຸກໆຄວາມສາມາດໃໝ່, ສູ້ຊົນໃຫ້ບັນ ລຸສູງ ກວ່ານັ້ນ.

ການກຳນົດບັນດາຈຸດໝາຍດັ່ງກ່າວເທິງນີ້ແມ່ນເລີ່ມຈາກຄວາມ ສາມາດຕົວຈິງ ແລະ ຄວາມຕ້ອງການທີ່ຄັບຂັນຂອງການດຳເນີນຊີ ວິດ, ຂອງຍຸກສະໄໝແນໃສ່ຍົກສູງທຸກໜ້າດ້ານຊີວິດການເປັນຢູ່ຂອງ ບັນດາຊັ້ນຄົນ, ປ່ຽນແປງໃບໜ້າຂອງປະເທດຊາດ, ສ້າງທ່າອັນ ໜັ້ນແກ່ນໃຫ້ແກ່ປະເທດເຮົາເຂົ້າຮ່ວມການແຂ່ງຂັນ ແລະ ຮ່ວມມືໃນ ວິວັດທະນາການຮ່ວມຕົວເຂົ້າວົງຄະນາຍາດສາກົນ.

ທິດທາງ ແລະ ວິທີແກ້ໄຂອັນໃຫຍ່ໆແນໃສ່ປະຕິບັດຈຸດໝາຍຕ່າງໆ ເທິງນີ້ຖືກສະແດງໃຫ້ເຫັນໃນ 11 ໂຄງການ ແລະ ຂົງເຂດພັດທະນາຂອງ ແຜນການທີ່ຈະເຖິງເຊິ່ງເນື້ອໃນຕົ້ນຕໍກໍ່ສາມາດເວົ້າໂດຍຍໍ້ດັ່ງຕໍ່ໄປນີ້:

ພາກສ່ວນບັນດາ ໂຄງການ ແລະ ຂົງເຂດພັດທະນາວ່າດ້ວຍກະສິກຳ, ເສດຖະກິດຊົນນະບົດ, ເຂດຄົນແຄນ, ເຂດພູດອຍ ແລະ ຊົນຊາດສ່ວນ

ໜ້ອຍ ເຊິ່ງສຸມໃສ່ບັນດາຈຸດໝາຍ ແລະ ທິດທາງຕົ້ນຕໍຄື: ຂະຫຍາຍ ກະສິກຳ, ການປ່າໄມ້, ການປະມົງຢ່າງຮອບດ້ານໃຫ້ຕິດພັນກັບການ ປຸງແຕ່ງກະເສດຕະພັນ-ເຄື່ອງປ່າຂອງດົງ ແລະ ສິນນ້ຳ, ປ່ຽນແປງ ໃໝ່ສຳລັບໂຄງປະກອບເສດຖະກິດກະສິກຳ ແລະ ຊົນນະບົດຕາມທິດ ທັນເປັນອຸດສາຫະກຳ, ທັນເປັນທັນສະໄໝ. ຮັບປະກັນຄວາມປອດ ໄພໃຫ້ແກ່ທັນຍາຫານແຫ່ງຊາດໃນທຸກສະພາວະການກໍລະນີ. ສ້າງ ເງື່ອນໄຂໃຫ້ແກ່ເຂດຕ່າງໆ ລ້ວນແຕ່ຂະຫຍາຍຕົວບົນພື້ນຖານເສີມຂະ ຫຍາຍທ່າແຮງ ແລະ ຄວາມສາມາດບົ່ມຊ້ອນຂອງແຕ່ລະບໍລິເວນ, ຮ່ວມສຳພັນກັນລະຫວ່າງບໍລິເວນຕ່າງໆ, ເຮັດໃຫ້ແຕ່ລະບໍລິເວນລ້ວນ ແຕ່ມີຄວາມທັນປ່ຽນຢ່າງຈະແຈ້ງ, ກຸດຜ່ອນການຫລຸດໂຕນກັນທີ່ຫ່າງ ໄກກັນໂພດກ່ອງກັບຈັງຫວະເຕີບໂຕລະຫວ່າງບໍລິເວນນຕ່າງໆ. ກ່ອນ ອື່ນໝົດແມ່ນບູລິມະສິດໃນການຊ່ວຍເຫລືອບັນດາອາມາເຂດທີ່ສຳຄັນ ຍິ່ງດ້ານການທະຫານ, ບັນດາເຂດທີ່ໝັ້ນປະຕິວັດ, ບັນດາເຂດພູດອຍ ແລະ ເຂດຜີ້ນ້ອງຮ່ວມຊາດບັນດາຊົນຊາດສ່ວນໜ້ອຍທີ່ຍັງມີຂໍ້ຫຍຸ້ງ ຍາກຫລາຍປະການ, ສ້າງເງື່ອນໄຂເບື້ອງຕົ້ນເພື່ອໃຫ້ເຂດຕ່າງໆ ດັ່ງ ກ່າວປົນຕົວຂຶ້ນເອງເປັນກ້າວໆ. ຂຸດຄົ້ນຄວາມສາມາດບົ່ມຊ້ອນ ແລະ ທ່າດີຂອງເຂດທະເລ, ແຄມຝັ່ງທະເລໃຫ້ໄດ້ຫລາຍທີ່ສຸດເທົ່າທີ່ຈະຫລາຍ ໄດ້ເພື່ອພັດທະນາເສດຖະກິດ, ປະສານສົມທົບກັບການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ເປັນເຈົ້າເຂດທະເລຂອງປະເທດຊາດ.

- ພາກສ່ວນບັນດາໂຄງການ ແລະ ຂົງເຂດພັດທະນາທາງດ້ານອຸດ ສາຫະກຳກໍ່ສ້າງພື້ນຖານ ໂຄງລ່າງ ແລະ ການບໍລິການ ກໍ່ສຸມໃສ່ບັນ

ດາຈຸດໝາຍ ແລະ ທິດທາງຕົ້ນຕໍຄື: ຂະຫຍາຍໂດຍໄວສຳລັບບັນດາ ຂະແໜງອຸດສາຫະກຳທີ່ມີທ່າດີ, ມີກຳລັງແຂ່ງຂັນໃນຕະຫລາດ, ຫັນ ມາຫາການຂາອອກຢ່າງແຂງແຮງ, ເຮັດໃຫ້ຂະແໜງການ ແລະ ຜະ ລິດຕະພັນປະກົດເປັນຮູບເຊິ່ງເປັນປາຍແຫລມໃນບັນດາຂົງເຂດຄືປຸງ ແຕ່ງທັນຍາຫານ, ອາຫານການກິນ, ຜະລິດສິນຄ້າໃຊ້ສອຍ, ຂຸດຄົ້ນ ແລະ ປຸງແຕ່ງນ້ຳມັນອາຍແກັດ, ອຸດສາຫະກຳເອເລັກຕຣົງ ແລະ ເຕັກ ໂນໂລຍີສື່ສານ, ກົນຈັກປະດິດສ້າງ, ຜະລິດອຸປະກອນ. ຍົກລະດັບຄຸນ ນະພາບ ແລະ ດັດແປງບັນດາພື້ນຖານອຸດສາຫະກຳທີ່ມີໃນປະຈຸບັນ, ເຮັດໃຫ້ບັນດາເຂດອຸດສາຫະກຳລວມສູນປະກົດເປັນຮູບ, ສ້າງສະຖານ ທີ່ອັນອຳນວຍຄວາມສະດວກໃຫ້ແກ່ການກໍ່ສ້າງບັນດາພື້ນຖານອຸດສາ ຫະກຳໃໝ່ໆ; ຂະຫຍາຍອຸດສາຫະກຳຢູ່ຊົນນະບົດ ແລະ ບໍລິເວນຢູ່ອ້ອມ ຂ້າງຕົວເມືອງຢ່າງແຂງແຮງ. ຂະຫຍາຍການຄົມມະນາຄົມທາງບົກ ທາງລົດໄຟ, ທາງນ້ຳ, ທາງອາກາດ, ຮັບປະກັນການສັນຈອນທະລຸ ໄປໃນທຸກໆລະດູການຂອງບັນດາເສັ້ນທາງຄົມມະນາຄົມ ທີ່ເປັນສາຍ ເລືອດ, ສາຍຕົ້ງ ແລະ ບັນດາສາຍຂວາງທີ່ພາໄປຍັງບໍລິເວນຕ່າງໆ, ບັນດາໃຈກາງຂອງເຂດພູດອຍ, ເອົາໃຈໃສ່ສຳຄັນໃນການຂະຫຍາຍ ໂຄງປະກອບໂຄງລ່າງເສດຖະກິດ-ສັງຄົມຢູ່ເຂດພູດອຍ, ຊົນນະບົດ, ເປັນ ພິເສດແມ່ນຖະໜົນຫົນທາງ, ໄຟຟ້າ, ໂຮງຮຽນ, ສຸກສາລາ, ນ້ຳສະ ອາດ, ຕິດຕໍ່ສື່ສານ...

ບັນດາຂະແໜງການບໍລິການ, ການຄ້າປົນຕົວຂຶ້ນຮັບປະກັນການ ຈໍລະຈອນສິນຄ້າໃຫ້ທະລຸໄປທົ່ວປະເທດ, ເອົາໃຈໃສ່ສຳຄັນສຳລັບເຂດ

ຊຸມນະບົດ, ເຂດສອກຫລີກ, ເຂດພູດອຍ; ເປີດກວ້າງການຄ້າສາກົນ. ປັບປຸງ ແລະ ຂະຫຍາຍການຄ້າແຫ່ງລັດໃນບັນດາຂະແໜງສິນຄ້າທີ່ຈຳເປັນຍິ່ງ, ເຊິ່ງກ່ອນອື່ນໝົດແມ່ນບັນດາບໍລິເວນທີ່ຍັງວ່າງເປົ່າ, ກຳການຂາຍຍົກ, ຄວບຄຸມການຂາຍຍ່ອຍ. ຈັດຕັ້ງສະຫະກອນຄ້າຂາຍ ແລະ ຕາໜ່າງສາຂາຈຳໜ່າຍເປັນກ້າວໆເພື່ອພ້ອມກັນກັບການຄ້າແຫ່ງລັດມີກຳລັງຢ່າງພຽງພໍໃນການກັນໄວ້ການຜັນຜວນຕ່າງໆທີ່ຜິດປົກກະຕິ, ປະກອບສ່ວນເຮັດໃຫ້ລາຄາເປັນປົກກະຕິ. ຂະຫຍາຍການທ່ອງທ່ຽວ ແລະ ບັນດາການບໍລິການທາງການເງິນ, ກວດກາການສະໜຸດບັນຊີ, ທະນາຄານ, ປະກັນໄພ, ສື່ສານ, ທີ່ປຶກສາກ່ຽວກັບເຕັກໂນໂລຍີ, ກົນໝາຍ...

- *ໂຄງການພົວພັນເສດຖະກິດ ກັບພາຍນອກ* ແນໃສ່ຂະຫຍາຍ ແລະ ຍົກສູງຜົນສັກສິດຂອງບັນດາການເຄື່ອນໄຫວກ່ຽວກັບການຄ້າຕ່າງປະເທດ, ກ່ຽວກັບການດູດດຶງທຶນ, ເຕັກໂນໂລຍີຈາກພາຍນອກ ແລະ ບັນດາການບໍລິການເກັບເງິນຕາຕ່າງປະເທດອື່ນໆ, ຊຸກຍູ້ໂດຍໄວສຳລັບຂະບວນວິວັດການຮ່ວມຕົວທາງເສດຖະກິດຂອງພາກພື້ນ ແລະ ຂອງ ໂລກ. ເປີດຕະຫລາດຂາອອກຂາເຂົ້າຢ່າງກວ້າງຂວາງ; ເພີ່ມຖ່ວງແໜ້ນຂາອອກສິນຄ້າຊະນິດຕ່າງໆທີ່ໄດ້ຜ່ານການປຸງແຕ່ງ, ສ້າງບັນດາຫຍ່ອມສິນຄ້າ, ຊະນິດສິນຄ້າທີ່ມີກ້ອນປະລິມານ ແລະ ຄຸນຄ່າໃຫຍ່ຂຶ້ນຕື່ມ. ກ້ອນເງິນຕາຂາອອກເພີ່ມຂຶ້ນສະເລ່ຍປະມານ 28% ຕໍ່ປີ; ກ້ອນເງິນຕາຂາເຂົ້າເພີ່ມຂຶ້ນປະມານ 24%; ບໍ່ຕ້ອງຂາເຂົ້າຊະນິດສິນຄ້າ

ຈຳນວນໜຶ່ງເຊິ່ງພາຍໃນປະເທດໄດ້ຜະລິດອອກຢ່າງມີຜົນສັກສິດນຳ ແທນທີ່.

ສືບຕໍ່ດັດແປງສະພາບແວດລ້ອມລົງທຶນໃຫ້ດີຂຶ້ນ, ໃຊ້ກາລະໂອກາດ ໃຫ້ໝົດເພື່ອເພີ່ມໂດຍໄວສຳລັບຄວາມສາມາດຮັບເອົາ, ດູດດຶງ ແລະ ໃຊ້ທຶນຂອງການລົງທຶນ ແລະ ເຕັກໂນໂລຍີທີ່ກ້າວໜ້າ, ທັນສະໄໝ ຂອງຕ່າງປະເທດຢ່າງມີຜົນສັກສິດ, ພ້ອມກັນນັ້ນກໍ່ຄ່ອຍຍົກມາດຕາ ສ່ວນປະກອບທຶນຂອງຝ່າຍຫວຽດນາມເຂົ້າໃນບັນດາຣາກຖານຮ່ວມ ສຳພັນທຸລະກິດ.

-ພາກສ່ວນບັນດາ ໂຄງການກ່ຽວກັບວິທະຍາສາດ ແລະ ເຕັກໂນ ໂລຍີ, ການສຶກສາ ແລະ ກໍ່ສ້າງ ສຸມໃສ່ບັນດາຈຸດໝາຍ ແລະ ທິດ ທາງຕົ້ນຕໍຄື:

ຂະຫຍາຍວິທະຍາສາດ ແລະ ເຕັກໂນໂລຍີ, ຍົກສູງກຳລັງຄວາມສາ ມາດທີ່ເກີດຂຶ້ນຢູ່ພາຍໃນເພື່ອຊຸກຍູ້ພາລະກິດຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝ; ກຳເອົາບັນດາຜົນສຳເລັດທາງວິທະຍາສາດ ແລະ ເຕັກໂນໂລຍີຂອງ ໂລກ, ເລືອກເຟັ້ນ ແລະ ເປັນເຈົ້າການສຳລັບເຕັກ ໂນໂລຍີທີ່ມອບສົ່ງເຂົ້າຫວຽດນາມ. ເບື້ອງຕົ້ນແມ່ນຂະຫຍາຍຂົງເຂດ ເຕັກໂນໂລຍີຂະໜາດສູງຈຳນວນໜຶ່ງຄືເອເລກຕຣົງສື່ສານ, ຊີວະ ສາດ, ອຸປະກອນໃໝ່ ແລະ ຫັນເປັນອັດຕະໂນມັດ. ຍົກມາດຕາສ່ວນ ປ່ຽນແປງໃໝ່ສຳລັບເຄື່ອງປະກອບໃນຂະແໜງການຜະລິດຕ່າງໆ ປີ ລະ 10% ຂຶ້ນໄປ. ຍາດແຍ່ງເຕັກໂນໂລຍີກ້າວໜ້າໃຫ້ຫລາຍທີ່ສຸດເທົ່າ

ທີ່ຈະຫລາຍໄດ້, ພາເຕັກໂນໂລຍີຂອງປະເທດເຮົາບັນລຸລະດັບຊັ້ນກາງ ຂອງພາກພື້ນເປັນກ້າວໆ. ປະຕິບັດຕາມຢ່າງເຂັ້ມງວດກ່ຽວກັບຄວາມ ຕ້ອງການຮັກສາ ແລະ ປົວແປງສິ່ງແວດລ້ອມມົນລະພິດໃຫ້ດີຂຶ້ນ.

ຍົກສູງໜ້າດ້ານພຽງກັນສຳລັບຄວາມຮູ້ຂອງປະຊາຊົນ. ກໍ່ສ້າງ, ບຳລຸງສ້າງແຫລ່ງກຳລັງຄົນໃຫ້ຕອບສະໜອງຄວາມຕ້ອງການຂອງ ພາລະກິດຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝ. ເພີ່ມອັດຕາສ່ວນ ຄົນງານທີ່ໄດ້ຮັບການກໍ່ສ້າງໃນຍອດປະລິມານຄົນງານແຕ່ 20 ຫາ25% ໃນປີ 2000.

ກໍ່ສ້າງຖັນແຖວພະນັກງານວິທະຍາສາດ ແລະ ເຕັກໂນໂລຍີອັນ ໜັ້ນແກ່ນເຂັ້ມແຂງ, ຄົ້ນພົບ, ບຳລຸງ ແລະ ໃຊ້ຜູ້ເກັ່ງກ້າເປັນຢ່າງດີ ໃນບັນດາຂົງເຂດວິທະຍາສາດ - ເຕັກໂນໂລຍີ, ວັດທະນະທຳ, ສິລະ ປະ, ຄຸ້ມຄອງເສດຖະກິດ-ສັງຄົມ ແລະ ຄຸ້ມຄອງການຜະລິດທຸລະກິດ, ຕອບສະໜອງຄວາມຕ້ອງການສະເພາະໜ້າ ແລະ ກະກຽມໃຫ້ແກ່ ບາດກ້າວຂະຫຍາຍຕົວອັນສູງສົ່ງກ່ວານັ້ນໃນພາຍຫລັງປີ 2000.

- *ພາກສ່ວນບັນດາ ໂຄງການວ່າດ້ວຍການພັດທະນາວັດທະນະ ທຳ-ສັງຄົມ* ສຸມໃສ່ບັນດາຈຸດໝາຍ ແລະ ທິດທາງຕໍ່ໄປນີ້:

ແກ້ໄຂວຽກເຮັດງານທຳ. ລັດລົງທຶນເພື່ອສ້າງບ່ອນເຮັດວຽກຂຶ້ນ ຕື່ມ. ແລະ ສ້າງເງື່ອນໄຂໃຫ້ແກ່ທຸກໆຄົນສ້າງວຽກເຮັດງານທຳໃຫ້ຕົນ ເອງ ແລະ ຊ່ວຍຜູ້ອື່ນມີວຽກເຮັດງານທຳອີກ, ຫລຸດຜ່ອນອັດຕາສ່ວນ ຜູ້ທີ່ບໍ່ມີວຽກຢູ່ຕົວເມືອງລົງ 5% ແລະ ຍົກອັດຕາສ່ວນໃຊ້ເວລາອອກ

ແຮງງານຢູ່ຊົນນະບົດຂຶ້ນ 75% ໃນປີ 2000.

ລົບລ້າງຄວາມອຶດຢາກ,ຫລຸດຜ່ອນມາດຕາສ່ວນທຸກຍາກແຕ່ 20 ຫາ 25% ໃນປະຈຸບັນນີ້ລົງປະມານ 10% ໃນຍອດປະລິມານຄອບຄົວ ໃນທົ່ວປະເທດໃນປີ 2000.

ເປີດກວ້າງບັນດາການເຄື່ອນໄຫວຕອບບຸນແທນຄຸນໃຫ້ບັນດາບຸກຄົນທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ, ຮັບປະກັນໃຫ້ຄົນມີຄຸນງາມຄວາມດີ ແລະ ຄອບຄົວຂອງເຂົາເຈົ້າມີລະດັບຊີວິດການເປັນຢູ່ເທົ່າທຽມຫລືສູງກວ່າລະດັບຊັ້ນກາງຂອງຕາແສງ, ຄຸ້ມເມືອງທີ່ອາໃສຢູ່ຂອງເຂົາ.

ປະຕິບັດທິດນຳຊຸກຍູ້ຢ່າງແຂງແຮງຕໍ່ການຫັນເປັນຂອງສັງຄົມສຳລັບບັນດາການເຄື່ອນໄຫວວັດທະນະທຳ, ສິ່ສານ, ກິລາກາຍະກຳ, ສາທາລະນະສຸກ, ຈຳນວນພົນລະເມືອງ, ຫັນຄອບຄົວເປັນແຜນການ ແລະ ບັນດາດ້ານສັງຄົມອື່ນໆ, ສຸມໃສ່ການຍົກສູງຄຸນນະພາບຂອງການດຳລົງຊີວິດດ້ານວັດຖຸ, ຈິດໃຈ ແລະ ກຳລັງກາຍຂອງປະຊາຊົນ. ປະສານສົມທົບຢ່າງກົມກຽວລະຫວ່າງການເຕີບໂຕທາງເສດຖະກິດກັບການປະຕິບັດຄວາມກ້າວໜ້າ ແລະ ຄວາມຍຸດຕິທຳທາງສັງຄົມ, ສ້າງຄວາມຫັນປ່ຽນຢ່າງແຂງແຮງໃນການແກ້ໄຂບັນດາບັນຫາສັງຄົມທີ່ຄັບຂັນ, ຍູ້ຄວາມຫຍໍ້ທໍ້, ຄວາມບໍ່ຍຸດຕິທຳ ແລະ ບັນດາໄພຮ້າຍຂອງສັງຄົມໃຫ້ລະຖອຍໄປ.

ສູ້ຊົນເຮັດໃຫ້ຍ່ານຫ່າງກັນກ່ຽວກັບລະດັບຂະຫຍາຍຕົວລະຫວ່າງເຂດ

ຕ່າງໆຄ່ອຍຫຍັບເຂົ້າກັນ. ເອົາໃຈໃສ່ເປັນພິເສດໃນການລົງທຶນຂະ ຫຍາຍບັນດາຂົງເຂດສັງຄົມຢູ່ບັນດາເຂດທີ່ຍັງມີຂໍ້ຫຍຸ້ງຍາກຫລາຍປະ ການ, ເຂດສອກຫລີກ, ເຂດຫ່າງໄກ... ໂດຍສະເພາະຢ່າງຍິ່ງແມ່ນ ສາທາລະນະສຸກ, ການສຶກສາ, ວິທະຍຸກະຈາຍສຽງ, ໂທລະພາບ, ວັດ ທະນະທຳອັນມະຄະດີ...

VI- ປັບປຸງການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ

ໃນເມື່ອວາງຈຸດໃຈການໃສ່ໜ້າທີ່ກໍ່ສ້າງສັງຄົມນິຍົມ, ພວກເຮົາກໍ່ ບໍ່ຫລົ້ມເຫລວໜ້າທີ່ປົກປັກຮັກສາປະເທດຊາດຈັກເມັດເລີຍ, ຖືການ ປ້ອງກັນຊາດ, ປ້ອງກັນຄວາມສະຫງົບເປັນສຳຄັນຢູ່ສະເໝີ, ຖືສອງ ໜ້າທີ່ດັ່ງກ່າວແມ່ນສອງໜ້າທີ່ຍຸດທະສາດທີ່ຕິດພັນກັນຢ່າງແໜ້ນ ແຟ້ນ.

ໜ້າທີ່ປ້ອງກັນຊາດ, ປ້ອງກັນຄວາມສະຫງົບໃນຊຸມປີ ທີ່ຈວນຈະ ມາເຖິງກ່າວຄື: ເສີມຂະຫຍາຍກຳລັງສັງລວມຂອງທົ່ວປວງຊົນ, ຂອງ ລະບົບການເມືອງ, ເພີ່ມທະວີກຳລັງບົ່ມຊ້ອນຂອງການປ້ອງກັນຊາດ, ປ້ອງກັນຄວາມສະຫງົບຂອງປະເທດຊາດເປັນກ້າວໆ, ກໍ່ສ້າງຢ່າງ ໜັກແໜ້ນຕໍ່ການການປ້ອງກັນຊາດທົ່ວປວງຊົນ, ທ່າສູ້ຮົບແຫ່ງການ ປ້ອງກັນຊາດທົ່ວປວງຊົນຕິດພັນກັບການປ້ອງກັນຄວາມສະຫງົບທົ່ວ ປວງຊົນ ແລະ ທ່າສູ້ຮົບແຫ່ງການປ້ອງກັນຄວາມສະຫງົບປະຊາຊົນ, ຍົກສູງຄຸນນະພາບຂອງບັນດາກຳລັງປະກອບອາວຸດ, ປົກປັກຮັກສາເອ

ກະລາດ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງປະເທດຊາດ ຢ່າງໜັກແໜ້ນ, ປົກປັກຮັກສາປະຊາຊົນ, ປົກປັກຮັກສາພັກ, ປົກປົກ ຮັກສາລະບອບສັງຄົມນິຍົມ; ສະກັດກັ້ນໄວ້ ແລະ ເຮັດໃຫ້ປະລາໄຊສຳ ລັບທຸກກົນອຸບາຍ ແລະ ການເຄື່ອນໄຫວກໍ່ຄວາມບໍ່ມີສະຖຽຍລະພາບ ທາງການເມືອງສັງຄົມ, ລ່ວງລະເມີດ ເອກະລາດ, ອະທິປະໄຕ, ຜືນ ແຜ່ນດິນອັນຄົບຖ້ວນ, ກໍ່ຄວາມເສຍຫາຍແກ່ກິດຈະການກໍ່ສ້າງ ແລະ ພັດທະນາປະເທດຊາດ; ກັນໄວ້ຢ່າງມີຜົນສັກສິດ ແລະ ປາບກຳຈັດພວກ ນັກໂທດທຸກປະເພດຢ່າງເດັ່ງຄັດ, ຮັບປະກັນຄວາມເປັນລະບຽບຮຽບ ຮ້ອຍ, ຄວາມປອດໄພທາງສັງຄົມເປັນຢ່າງດີ.

ປະສານສົມທົບສອງໜ້າທີ່ຍຸດທະນາດກໍ່ສ້າງ ແລະ ປົກປັກຮັກສາ ປະເທດຊາດຢ່າງແໜ້ນແຟ້ນ. ປະສານສົມທົບການປ້ອງກັນຊາດ, ປ້ອງກັນຄວາມສະຫງົບກັບເສດຖະກິດ. ເຮັດໃຫ້ໜ້າທີ່ປ້ອງກັນຊາດ ກັບໜ້າທີ່ປ້ອງກັນຄວາມສະຫງົບຕິດພັນກັນຢ່າງແໜ້ນໜາ, ສອງ ໜ້າດ້ານມີສາຍກ່ຽວພັນຢ່າງສະໜິດແໜ້ນໃນໜ້າທີ່ປົກປັກຮັກສາ ປະເທດຊາດ, ປົກປັກຮັກສາລະບອບໃນສະພາບການໃໝ່. ປະສົມປະ ສານການເຄື່ອນໄຫວປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບກັບ ການເຄື່ອນໄຫວພົວພັນການຕ່າງປະເທດຢ່າງແໜ້ນແຟ້ນ.

ບູລະນະລະບົບກົດໝາຍວ່າດ້ວຍການປົກປັກຮັກສາປະເທດຊາດ ໃຫ້ສົມບູນ; ຫັນເປັນສະຖາບັນໃຫ້ບັນດາແຜນນະໂຍບາຍ, ນະໂຍບາຍ ຂອງພັກໃນການກໍ່ສ້າງຝຶ້ນຖານປ້ອງກັນຊາດທົ່ວປວງຊົນ ແລະ ປ້ອງ ກັນຄວາມສະຫງົບຮຽບຮ້ອຍປະຊາຊົນ. ເອົາໃຈໃສ່ຢ່າງຈົດຈ່ໃນການ

ກໍ່ສ້າງພັກຢ່າງເປັນປະຈຳ, ເພີ່ມທະວີການນຳພາຂອງພັກຕໍ່ກອງທັບ ແລະ ເຈົ້າໜ້າທີ່ຕຳຫລວດ, ຕໍ່ພາລະກິດປັບປຸງ ການປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ. ເພີ່ມທະວີການຄຸ້ມຄອງຂອງລັດກ່ຽວ ກັບການປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ.

VII- ເປີດກວ້າງການພົວພັນການຕ່າງປະເທດ

ໜ້າທີ່ການຕ່າງປະເທດໃນການລະເວລາທີ່ຈະເຖິງກ່າວຄືປັບປຸງສະ ພາບແວດລ້ອມສັນຕິພາບ ແລະ ສ້າງເງື່ອນໄຂທາງສາກົນອັນອຳນວຍ ກວ່ານັ້ນອີກເພື່ອຊຸກຍູ້ຢ່າງແຂງແຮງສຳລັບການພັດທະນາເສດຖະ ກິດ-ສັງຄົມ, ຫັນປະເທດເປັນອຸດສາຫະກຳ, ເປັນທັນສະໄໝ, ຮັບໃຊ້ພາ ລະກິດກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດ, ພ້ອມກັນນັ້ນກໍ່ປະກອບ ສ່ວນຢ່າງຕັ້ງໜ້າໃນການຕໍ່ສູ້ລວມຂອງປະຊາຊົນໃນໂລກເພື່ອສັນຕິ ພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າທາງ ສັງຄົມ.

ສືບຕໍ່ປະຕິບັດນະໂຍບາຍການຕ່າງປະເທດເອກະລາດເປັນເຈົ້າຕົນ ເອງ, ເປີດກວ້າງ, ຫັນເປັນຫລາຍຝ່າຍ ແລະ ຫັນເປັນຫລາຍຮູບຫລາຍ ສີດ້ວຍຈິດໃຈວ່າຫວຽດນາມປາຖະໜາຢາກເປັນເພື່ອນເປັນມິດກັບ ປັນດາປະເທດທັງໝົດໃນວົງຄະນາຍາດຂອງ ໂລກ, ສູ້ຊົນເພື່ອສັນຕິ ພາບ, ເອກະລາດ ແລະ ພັດທະນາ.

ເປີດກວ້າງຄວາມພົວພັນກັບສາກົນ, ຮ່ວມມືໃນຫລາຍດ້ານ, ສອງ

ຝ່າຍ ແລະ ຫລາຍຝ່າຍກັບບັນດາປະເທດ, ບັນດາການຈັດຕັ້ງສາກົນ ແລະ ພາກພື້ນບົນຫລັກການເຄົາລົບນັບຖືເອກະລາດ, ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນຂອງກັນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ, ສະເໝີພາບ, ຕ່າງຝ່າຍຕ່າງກໍ່ມີຜົນປະໂຫຍດ, ຜ່ານການເຈລະຈາເພື່ອຫາວິທີແກ້ໄຂອັນສອດຄ່ອງກັບການແກ້ໄຂບັນດາບັນຫາທີ່ຍັງຄົງຄ້າງ ແລະ ບັນດາການທະເລາະວິວາດ, ຮັບປະກັນສັນຕິພາບ, ສະຖຽນລະພາບ, ຄວາມສະຫງົບ, ຮ່ວມມື ແລະ ພັດທະນາ.

ເພີ່ມທະວີການພົວພັນກັບບັນດາປະເທດໃກ້ຄຽງ ແລະ ບັນດາປະເທດໃນອົງການຈັດຕັ້ງອາຊຽນ(ASEAN), ປັບປຸງການພົວພັນກັບບັນດາປະເທດເພື່ອນມິດມູນເຊື້ອຢ່າງບໍ່ຢຸດບໍ່ເຊົາ, ຖືສຳຄັນການພົວພັນກັບບັນດາປະເທດພັດທະນາ ແລະ ບັນດາສູນກາງເສດຖະກິດ-ການເມືອງໃນໂລກ, ພ້ອມກັນນັ້ນກໍ່ຍົກສູງຈິດໃຈສາມັກຄີຖານອ້າຍນ້ອງກັບບັນດາປະເທດທີ່ພວມພັດທະນາຢູ່ທະວີບອາຊີ, ທະວີບອາຟຣິກາ, ອາເມລິກາລາຕິນ, ກັບຂະບວນການບໍ່ຮ່ວມກຸ່ມ.

ເພີ່ມທະວີການພົວພັນກັບການຈັດຕັ້ງຕ່າງໆຂອງສະຫະປະຊາຊາດ ແລະ ບັນດາການຈັດຕັ້ງສາກົນອື່ນໆ. ຕັ້ງໜ້າເຄື່ອນໄຫວໃນບັນດາເວທີປາຖະກະຖາສາກົນ, ເຂົ້າຮ່ວມການແກ້ໄຂບັນດາບັນຫາທົ່ວໂລກ. ສະໜັບສະໜູນການຕໍ່ສູ້ກຳຈັດປັດເຊີຍອາວຸດນິວເຄຼຍ ແລະ ບັນດາພາຫະນະຂ້າຄົນເປັນລວາດໆຊະນິດອື່ນໆ.

ຂະຫຍາຍຄວາມພົວພັນກັບບັນດາພັກກອມມູນິດ ແລະ ກຳມະກອນ,

ບັນດາກຳລັງປະຕິວັດ, ເອກະລາດແຫ່ງຊາດ ແລະ ກ້າວໜ້າ; ສ້າງ ຕັ້ງ ແລະ ເປີດກວ້າງຄວາມພົວພັນກັບບັນດາພັກກຳອຳນາດອື່ນໆ.

ເປີດກວ້າງຄວາມພົວພັນການຕ່າງປະເທດແບບປະຊາຊົນ, ຄວາມ ພົວພັນກັບບັນດາການຈັດຕັ້ງບໍ່ຂຶ້ນກັບລັດຖະບານ, ຍາດແຍ່ງຄວາມ ເປັນໃຈ ແລະ ສະໜັບສະໜູນອັນກວ້າງຂວາງຈາກປະຊາຊົນປະເທດ ຕ່າງໆ, ປະກອບສ່ວນຊຸກຍູ້ທ່າອ່ຽງສັນຕິພາບ, ຮ່ວມມື, ພັດທະນາ.

VIII- ເພີ່ມທະວີກ້ອນກຳລັງສາມັກຄີຊົນຊາດ, ເສີມ ຂະຫຍາຍບົດບາດເປັນເຈົ້າຂອງປະຊາຊົນ, ກໍ່ສ້າງ ແລະ ບູລະນະສາທາລະນະລັດສັງຄົມນິຍົມຫວຽດນາມ

ພາລະກິດກໍ່ສ້າງປະເທດຊາດຈະຮຽກຮ້ອງໃຫ້ເປີດກ້ອນສາມັກຄີ ຊົນຊາດໃຫ້ກວ້າງກວ່ານັ້ນອີກ, ເຊິ່ງເອົາຄວາມສຳພັນທະພາບລະ ຫວ່າງຊົນຊັ້ນກຳມະກອນກັບຊົນຊັ້ນຊາວກະສິກອນ ແລະ ຊັ້ນຄົນນັກ ຮຽນຮູ້ປັນຍາຊົນເປັນພື້ນຖານ, ສາມັກຄີທຸກໆຄົນໃນມະຫາຄອບຄົວ ແຫ່ງຊາດຫວຽດນາມເຖິງວ່າດຳລົງຊີວິດຢູ່ພາຍໃນປະເທດຫລືວ່າ ພວມຕັ້ງພຸມລຳເນົາຢູ່ຕ່າງປະເທດກໍ່ຕາມ. ເສີມຂະຫຍາຍກຳລັງແຮງ ຂອງວົງຄະນາຍາດທັງໝົດ, ຍົກສູງມູນເຊື້ອຮັກຊາດ ແລະ ນ້ຳໃຈເອກ ອ້າງທະນົງໃຈແຫ່ງຊາດ, ເອົາຈຸດໝາຍຮັກສາເອກະລາດ, ເອກະ ພາບຢ່າງໜັກແໜ້ນ, ກ້າວຂຶ້ນເຮັດໃຫ້ປະຊາຊົນຮັ່ງມີ, ປະເທດເຂັ້ມ ແຂງ, ສັງຄົມຍຸດຕິທຳ, ສີວິໄລເປັນຈຸດທີ່ປອງດອງກັນ; ພ້ອມນັ້ນກໍ່ຮັບ

ຮອງບັນດາຈຸດທີ່ຕ່າງກັນເຊິ່ງບໍ່ກົງກັນຂ້າມກັບຜົນປະໂຫຍດລວມຂອງ ຊາດ, ພ້ອມກັນລົບລ້າງຄວາມຄິດຕາຍຕົວ, ຕີຕົວຕໍ່າ, ຫັນໄປສູ່ອະນາ ຄົດ, ກໍ່ສ້າງຈິດໃຈມະຫາສາມັກຄີ, ເປີດເຜີຍ ແລະ ໄວ້ເນື້ອເຊື່ອໃຈ.

ການປະຕິວັດແມ່ນພາລະກິດຂອງປະຊາຊົນ. ລະບອບເຮົາແມ່ນລະ ບອບໂດຍປະຊາຊົນເຮົາເປັນເຈົ້າການ ພາຍໃຕ້ການນຳພາຂອງພັກ. ເສີມຂະຫຍາຍບົດບາດເປັນເຈົ້າການຂອງປະຊາຊົນໃນພາລະກິດປ່ຽນ ແປງໃໝ່, ຫັນປະເທດເປັນອຸດສາຫະກຳ, ເປັນຫັນສະໄໝແມ່ນບັນຫາ ຫນຶ່ງທີ່ມີຄວາມໝາຍຍຸດທະສາດ.

ປະຕິບັດນະໂຍບາຍມະຫາສາມັກຄີແຫ່ງຊາດ, ເສີມຂະຫຍາຍບົດ ບາດເປັນເຈົ້າການຂອງປະຊາຊົນເຊິ່ງກ່ອນອື່ນໝົດຕ້ອງສະແດງໃຫ້ ເຫັນໃນນະໂຍບາຍອັນລະອຽດ, ເປັນຮູບປະທຳ, ຕອບສະໜອງຜົນປະ ໂຫຍດອັນຖືກຕ້ອງກົດໝາຍຂອງບັນດາຊົນຊັ້ນ, ບັນດາຊັ້ນຄົນ, ບັນ ດາຊົນຊາດ, ບັນດາສາສະໜາ, ສ້າງກຳລັງໜຸ່ນໃໝ່ໃຫ້ການຊຸກຍູ້ ຂະບວນການປະຕິວັດ. ໃນນັ້ນ, ເປັນຫ່ວງເປັນໃຍນຳການກໍ່ສ້າງຊົນຊັ້ນ ກຳມະກອນມີຄວາມເຕີບໃຫຍ່ເຂັ້ມແຂງໃນທຸກດ້ານມີຄວາມໝາຍສຳ ຄັນເປັນພິເສດ.

ກໍ່ສ້າງປະຊາທິປະໄຕສັງຄົມນິຍົມແມ່ນເນື້ອໃນພື້ນຖານຂອງການປ່ຽນ ແປງໃໝ່ຕໍ່ລະບົບການເມືອງຢູ່ປະເທດເຮົາ. ຕ້ອງມີກົນໄກ ແລະ ວິທີເຮັດ ອັນລະອຽດເພື່ອປະຕິບັດທິດນຳ"ປະຊາຊົນເຂົ້າໃຈ, ປະຊາຊົນປຶກສາ ຫາລື, ປະຊາຊົນເຮັດ, ປະຊາຊົນກວດກາ" ສຳລັບບັນດາແຜນນະໂຍ

ບາຍ, ນະໂຍບາຍໃຫຍ່ຂອງພັກ ແລະ ລັດ. ປະຕິບັດກົນໄກເປັນເຈົ້າ ການຂອງປະຊາຊົນເປັນຢ່າງດີ: ເປັນເຈົ້າການໂດຍຜ່ານຜູ້ຕາງໜ້າ, ເປັນເຈົ້າການໂດຍກົງພ້ອມກັບຍັນດາຮູບການຄຸ້ມຄອງຕົນເອງຢູ່ທີ່ຮາກຖານ.

ສືບຕໍ່ປ່ຽນແປງໃໝ່ສຳລັບການຈັດຕັ້ງ ແລະ ແບບວິທີເຄື່ອນໄຫວ ຂອງແນວໂຮມ ປະເທດຊາດ ແລະ ບັນດາອົງການຈັດຕັ້ງປະຊາ ຊົນ, ເຮັດໃຫ້ແນວໂຮມ ແລະ ບັນດາການຈັດຕັ້ງທີ່ເປັນພາຄີນັ້ນເປັນ ພື້ນຖານດ້ານການເມືອງທີ່ແທ້ຈິງຂອງອຳນາດການປົກຄອງປະຊາ ຊົນ, ພາຍໃຕ້ການນຳພາຂອງພັກ.

ລັດ ເຮົາເປັນຫລັກແຫລ່ງຂອງລະບົບການເມືອງ, ເປັນເຄື່ອງມືປະ ຕິບັດກຳລັງອຳນາດຂອງປະຊາຊົນ. ການກໍ່ສ້າງ ແລະ ບູລະນະລັດໃຫ້ ສົມບູນຕ້ອງໄດ້ຮັບການດຳເນີນງານບົນພື້ນຖານຊາບຊຶມບັນດາທັດສະນະ ພື້ນຖານຕໍ່ໄປນີ້:

-ກໍ່ສ້າງລັດສັງຄົມນິຍົມຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອ ປະຊາຊົນ; ເອົາການສຳພັນທະພາບຊົນຊັ້ນກຳມະກອນກັບຊົນຊັ້ນຊາວ ກະສິກອນ ແລະ ຊັ້ນນັກຮຽນຮູ້ປັນຍາຊົນເປັນພື້ນຖານ. ປະຕິບັດສິດເປັນ ເຈົ້າຂອງປະຊາຊົນຢ່າງເຕັມສ່ວນ, ຮັກສາລະບຽບແບບແຜນທາງສັງ ຄົມຢ່າງເຂັ້ມງວດ, ພະເດັດການກັບທຸກໆການກະທຳລ່ວງລະເມີດ ຜົນ ປະໂຫຍດຂອງປະເທດຊາດ ແລະ ຂອງປະຊາຊົນ.

- ກຳລັງອຳນາດແຫ່ງລັດແມ່ນເອກະພາບ, ເຊິ່ງມີການແບ່ງງານ ແລະ ປະສົມປະສານລະຫວ່າງບັນດາອົງການແຫ່ງລັດໃນການປະຕິບັດ ບັນດາສິດນິຕິບັນຍັດ, ປະຕິບັດກົດໝາຍ, ຕຸລາການ.

- ປະຕິບັດຫລັກການລວມສູນປະຊາທິປະໄຕໃນການຈັດຕັ້ງ ແລະ ໃນການເຄື່ອນໄຫວຂອງລັດ.

- ເພີ່ມທະວີລະບອບກົດໝາຍ, ກໍ່ສ້າງລັດອຳນາດກົດໝາຍສັງຄົມນິຍົມຫວຽດນາມ. ຄຸ້ມຄອງສັງຄົມດ້ວຍກົດໝາຍ, ພ້ອມກັນນັ້ນກໍ່ຖືສຳຄັນການສຶກສາອົບຮົມ, ຍົກຄຸນສົມບັດໃຫ້ສູງຂຶ້ນ.

-ເພີ່ມທະວີບົດບາດການນຳພາຂອງພັກຕໍ່ລັດ.

ເພື່ອໃຫ້ລັດເຮົາແມ່ນລັດຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນຢ່າງແທ້ຈິງ, ລັດຫນຶ່ງທີ່ໃສສະອາດ, ໝັ້ນແກ່ນເຂັ້ມແຂງ, ມີກຳລັງສັກສິດ ແລະ ຜົນສັກສິດ, ສະນັ້ນຕ້ອງປະຕິບັດໜ້າທີ່ຕ່າງໆ ເປັນຢ່າງດີ ແລະ ຄົບຊຸດ: ປ່ຽນແປງໃໝ່, ຍົກສູງຄຸນນະພາບວຽກງານນິຕິບັນຍັດ ແລະ ຄວບຄຸມສູງສຸດຂອງລັດຖະສະພາຕໍ່ການເຄື່ອນໄຫວທັງໝົດຂອງລັດ; ດັດແປງການບໍລິຫານແຫ່ງລັດ, ເຊິ່ງປະກອບດ້ວຍການດັດແປງສະຖາບັນບໍລິຫານການຈັດຕັ້ງກົງຈັກ ແລະ ປັບປຸງຖັນແຖວພະນັກງານ, ລັດຖະກອນໃຫ້ດີຂຶ້ນ; ດັດແປງການຈັດຕັ້ງ ແລະ ການເຄື່ອນໄຫວຕຸລາການໃຫ້ດີຂຶ້ນ.

ປະຈຸບັນນີ້, ພະນັກງານ, ສະມາຊິກພັກ ແລະ ປະຊາຊົນເຮົາເອົາໃຈໃສ່ຢ່າງສຸດຂີດເຖິງການຕໍ່ສູ້ຕ້ານການສໍ້ລາດບັງຫລວງ. ໄພສໍ້ລາດ

ບັງຫລວງພວມເປັນໄພອັນຕະລາຍອັນຫນຶ່ງທີ່ມີການພົວພັນໂດຍກົງ ເຖິງການເປັນຕາຍຂອງລະບົບການເມືອງ. ພັກ, ລັດ ແລະ ປະຊາຊົນ ເຮົາໄດ້ມີວິທີການຜ່ານຜ່າແກ້ໄຂ, ແຕ່ຜົນສັກສິດກໍ່ຍັງອ່ອນ.

ຕ້ອງດຳເນີນການຕໍ່ສູ້ຢ່າງເດັດດ່ຽວ, ເປັນປົກກະຕິ ແລະ ມີຜົນສັກ ສິດໃນການຕ້ານໄພສໍ້ລາດບັງຫລວງໃນກົງຈັກລັດ, ໃນບັນດາຂະ ແຫນງການ, ຂັ້ນຕ່າງໆ ແຕ່ສູນກາງລົງຮອດພື້ນຖານ. ປະສານສົມ ທົບບັນດາວິທີການອັນຮີບດ່ວນກັບບັນດາວິທີແກ້ໄຂທີ່ມີຂະຫນາດຍຸດທະ ສາດແນໃສ່ທັງບູລະນະກົນໄກ, ນະໂຍບາຍໃຫ້ສົມບູນ, ປັບປຸງການຈັດ ຕັ້ງໃຫ້ດີຂຶ້ນ, ປັບປຸງວຽກງານຄຸ້ມຄອງ, ຜ່ານຜ່າແກ້ໄຂການເຜີຕົວ, ທັງຈັດ ແລະ ແກ້ໄຂຢ່າງເຂັ້ມງວດ, ທັນເວລາຕໍ່ທຸກໆການລະເມີດ, ຕ້ອງໂທດ, ລະດົມ ແລະ ປະສົມປະສານທຸກໆ ກຳລັງຢ່າງແຫນ້ນແຟ້ນ ໃຫ້ການຕໍ່ສູ້ແນໃສ່ກົດກັນ, ຍູ້ຖອຍ ແລະ ກຳຈັດປັດເຂ່ຍການສໍ້ລາດບັງ ຫລວງ. ຫົວຫນ້າອົງການ, ກົມກອງ, ພະນັກງານຫລັກແຫລ່ງຂັ້ນຕ່າງໆ ຕ້ອງເປັນແບບຢ່າງນຳຫນ້າໃນການຕໍ່ສູ້ຕ້ານການສໍ້ລາດບັນຫລວງ, ເຊິ່ງກ່ອນອື່ນຫມົດແມ່ນຕົນເອງ.

ການຕໍ່ສູ້ຕ້ານການສໍ້ລາດບັງຫລວງຕ້ອງຕິດພັນກັບການຕໍ່ສູ້ຕ້ານ ການຄ້າເຖື່ອນ, ຟຸມເຟືອຍ, ອາດຍາສິດ; ສຸມໃສ່ບັນດາການກະທຳໂລບ ມາກໂລພາ, ຢຶດຊິງ, ເຮັດໃຫ້ຊັບສົມບັດຂອງລັດສູນຫາຍເສຍໄປ, ກີນ ສິນບົນ, ມອບສິ່ງ ແລະ ຮັບສິນບົນ; ເອົາໃຈໃສ່ຂົງເຂດເປັນຈຸດຫນັກ ຈຳນວນຫນຶ່ງ.

IX - ກໍ່ສ້າງພັກ ແລະເພີ່ມເຕີມ, ດັດແປງກົດລະບຽບ ຂອງພັກ

ກໍ່ສ້າງພັກໃຫ້ນັບມື້ນັບໜັ້ນແກ່ນເຂັ້ມແຂງທັງທາງດ້ານການ ເມືອງ, ແນວຄິດ ແລະ ການຈັດຕັ້ງແມ່ນໜ້າທີ່ກຸນແຈ, ໂດຍສະເພາະ ຢ່າງຍິ່ງໃນສະພາບການປະຈຸບັນ, ເມື່ອປະເທດຊາດບ້ານເມືອງຫັນໄປ ສູ່ໄລຍະພັດທະນາໃໝ່.

ຜົນງານ ແລະ ຂໍ້ບົກພ່ອງທັງໝົດໃນຂະບວນວິວັດແຫ່ງການປ່ຽນ ແປງໃໝ່ຕິດແໜ້ນກັບຄວາມຮັບຜິດຊອບການນຳພາ ແລະ ການ ເຄື່ອນໄຫວຂອງພັກ. ການນຳພາຂອງພັກແມ່ນປັດໄຈຕັດສິນຊີ ຂາດຢ່າງໜຶ່ງໃນການສ້າງບັນດາຜົນງານຂອງການປ່ຽນແປງໃໝ່ ຂຶ້ນ; ພ້ອມກັນນັ້ນພັກມີຄວາມຮັບຜິດຊອບໃນການປະໃຫ້ມີດ້ານ ອ່ອນໆຫລາຍດ້ານ, ຄວາມຫຍໍ້ທໍ້ແກ່ຍາວໄປໃນກົງຈັກພັກ ແລະ ລັດ ແລະ ໃນສັງຄົມ. ໃນຂະບວນວິວັດນຳພາກິດຈະການປ່ຽນແປງໃໝ່ນີ້ ເອງ, ພັກເຮົານັບມື້ນັບເຕີບໃຫຍ່, ເຫັນໄດ້ບັນດາດ້ານອ່ອນໆ ຂອງຕົນ ຢ່າງຈະແຈ້ງກວ່າເພື່ອມີວິທີການຜ່ານຜ່າແກ້ໄຂ.

ຕ້ອງຍຶດໝັ້ນການນຳພາຂອງພັກ, ເພາະວ່າຢູ່ປະເທດເຮົາ, ຖ້າບໍ່ ມີການນຳພາຂອງພັກກໍ່ບໍ່ສາມາດມີເອກະລາດແຫ່ງຊາດ, ບໍ່ມີສິດ ເປັນເຈົ້າການຢ່າງແທ້ຈິງຂອງປະຊາຊົນ, ບໍ່ມີລັດຂອງປະຊາຊົນ, ໂດຍ ປະຊາຊົນ, ເພື່ອປະຊາຊົນ, ບໍ່ສາມາດມີສັງຄົມນິຍົມ. ໃນເວລາທຳມະ ດາສາມັນ, ບົດບາດຂອງພັກກໍ່ສຳຄັນທີ່ສຸດແລ້ວ; ໃນບັນດາບາດກ້າວ

ທັນປ່ຽນໄລຍະ, ບົດບາດດັ່ງກ່າວຊໍ້າພັດສຳຄັນຍິ່ງ.

ແນ່ນອນວ່າ, ເພື່ອທຳການນຳພາເປັນຢ່າງດີ, ພັກຕ້ອງປ່ຽນແປງໃໝ່ໂດຍຕົນເອງ, ປັບປຸງຕົນເອງຢ່າງເປັນປະຈຳ. ເປັນພັກຜູ້ກຳອຳນາດ, ຊໍ້າພັດເຄື່ອນໄຫວໃນເງື່ອນໄຂໃໝ່ທີ່ສັບສົນຢ່າງສຸດຂີດ, ພັກເຮົາເຂົ້າໃຈສິ່ງດັ່ງກ່າວຢ່າງເລິກເຊິ່ງ, ຖືອັນນີ້ກໍ່ແມ່ນກົດເກນຂະຫຍາຍຕົວຂອງພັກ.

ປ່ຽນແປງໃໝ່ ແລະ ປັບປຸງພັກແມ່ນແນໃສ່ຍົກສູງຄຸນນະພາບ ແລະ ຄວາມສາມາດການນຳພາຂອງພັກ, ກໍ່ສ້າງ, ປັບປຸງ ແລະ ປົກປັກຮັກສາພັກ, ເຮັດໃຫ້ພັກໃສສະອາດ, ໜັ້ນແຂງຢູ່ເລື້ອຍໆ, ຕອບສະໜອງຄວາມຕ້ອງການຂອງໜ້າທີ່ການເມືອງໃນໄລຍະໃໝ່. ຍ້ອນແນວນັ້ນ, ມັນຈະຕ້ອງຕິດພັນກັບການປ່ຽນແປງໃໝ່ໃຫ້ບັນດາຂົງເຂດເສດຖະກິດ, ສັງຄົມ, ກັບການປັບປຸງລະບົບການເມືອງໃຫ້ດີຂຶ້ນ, ກັບການເສີມຂະຫຍາຍຫົວຄິດປະດິດສ້າງ ແລະ ປຸກລຸກຂະບວນການກະທຳປະຕິວັດຂອງປະຊາຊົນ.

ໃນຂະບວນວິວັດແຫ່ງການປ່ຽນແປງໃໝ່ໃຫ້ຕົນເອງ ແລະ ປັບປຸງນີ້, ພັກຕ້ອງຍຶດໝັ້ນ ແລະ ຂະຫຍາຍການປະດິດສ້າງບັນດາທັດສະນະພື້ນຖານຂອງລັດທິມາກ-ເລນິນ ແລະ ແນວຄິດໂຮ່ຈິມິນ ໃນການກໍ່ສ້າງພັກ. ຕ້ອງເລີ່ມຈາກຜົດຕິກຳເພື່ອວາງວິທີແກ້ໄຂວ່າດ້ວຍການກໍ່ສ້າງພັກ. ຕ້ານບັນດາທ່າອ່ຽງສວຍໃຊ້ໂອກາດ, ນິຍົມຮັກສາເດີມ, ຈັດໂຜດ.

ຈຸດສອດທະນຸທີ່ມີຄວາມໝາຍສຳຄັນອັນດັບໜຶ່ງຕໍ່ພັກເຮົາໃນໄລ

ยะปะจุบันถื *ຮັກສາແຫນ້ນ ແລະ ເພີ່ມທະວີທາດແທ້ຊົນຊັ້ນກຳມະກອນ ຂອງພັກ.* ທາດແທ້ດັ່ງກ່າວສະແດງໃຫ້ເຫັນເຊິ່ງກ່ອນອື່ນໝົດແມ່ນໃນ ຈຸດປະສົງ, ອຸດົມຄະຕິຂອງພັກໃນໂຄງການການເມືອງ ແລະ ແນວທາງ ພະນັກງານຂອງພັກ; ໃນສາຍພົວພັນທີ່ສະໜິດຕິດພັນລະຫວ່າງພັກກັບ ປະຊາຊົນ ແລະ ຊາດ, ໃນການປະສານສົມທົບຢ່າງຖືກຕ້ອງລະຫວ່າງ ລັດທິຮັກຊາດອັນແທ້ຈິງກັບລັດທິສາກົນຂອງຊົນຊັ້ນກຳມະກອນ.

ຕ້ອງເຮັດໃຫ້ຄວາມຮູ້ເປັນເອກະພາບ: ພັກກອມມູນິດຫວຽດນາມ ແມ່ນກອງນຳໜ້າຂອງຊົນຊັ້ນກຳມະກອນຫວຽດນາມ, ເປັນຜູ້ແທນທີ່ ຈົງຮັກພັກດີສຳລັບຜົນປະໂຫຍດຂອງຊົນຊັ້ນກຳມະກອນ, ປະຊາຊົນຜູ້ ອອກແຮງງານ ແລະ ຂອງໝົດທັງຊາດ. ຈຸດປະສົງຂອງພັກກ່າວຄື ກໍ່ສ້າງປະເທດຫວຽດນາມເອກະລາດ, ປະຊາທິປະໄຕ, ຮັ່ງມີເຂັ້ມແຂງ, ສັງຄົມຍຸດຕິທຳ, ສີວິໄລ, ປະຕິບັດການກໍ່ສ້າງສັງຄົມນິຍົມສຳເລັດຜົນ ດີ ແລະ ສຸດທ້າຍແມ່ນລັດທິກອມມູນິດ. ຝຶ້ນຖານແນວຄິດຂອງພັກແມ່ນ ລັດທິມາກ-ເລນິນ ແລະ ແນວຄິດໂຮ່ຈິມິນ. ຫລັກການລວມສູນ, ນຳພາ ລວມໝູ່, ບຸກຄົນຮັບຜິດຊອບແມ່ນຫລັກການຈັດຕັ້ງຂອງພັກ. ດຳເນີນ ການຕຳນິຕົນເອງ ແລະ ຕຳ ນິໝູ່ຄູ່ຢ່າງເປັນປະຈຳແມ່ນກົດເກນ ຝຶ້ນຖານອັນໜຶ່ງໃນການຂະຫຍາຍຕົວ, ກ້າວໜ້າຂອງພັກ.

ທາດແທ້ຊົນຊັ້ນ, ຈຸດໝາຍ, ອຸດົມຄະຕິຂອງພັກຮຽກຮ້ອງສະມາ ຊິກພັກທຸກຄົນຕ້ອງຍົກສູງບົດບາດນຳໜ້າເປັນແບບຢ່າງ, ເຂົ້າຮ່ວມ ການອອກແຮງງານ, ບໍ່ຂູດຮີດ, ບໍ່ເຮັດເສດຖະກິດທຶນນິຍົມເອກະຊົນ,

ມີຄຸນສົມບັດປະຕິວັດ ແລະ ແບບດຳລົງຊີວິດອັນສົດໃສ, ມີສະຕິນັບຖືສາຍ ການຈັດຕັ້ງລະບຽບວິໄນ, ສະໜິດຕິດແໜ້ນກັບປະຊາຊົນ... ທຸກໆ ການກະທຳທີ່ຜິດກັບບັນດາຂໍ້ກຳນົດທີ່ກ່າວມາເທິງນີ້ລ້ວນແຕ່ບໍ່ສອດ ຄ່ອງກັບຄວາມຕ້ອງການກ່ຽວກັບຖານະເປັນສະມາຊິກພັກ.

ໃນສະພາບການປະຈຸບັນນີ້, ຕ້ອງ *ເອົາໃຈໃສ່ຢ່າງຈົດຈໍ່ທີ່ສຸດເຖິງ ການສຶກສາອົບຮົມ, ເຝິກຝົນຫລໍ່ຫລອມ, ຍົກສູງຄຸນວຸດທິດ້ານການເມືອງ, ຄຸນສົມບັດປະຕິວັດ ແລະ ລະດັບຫົວຄິດປັນຍາ* ຂອງພະນັກງານ, ສະ ມາຊິກພັກ. ດັດແກ້ບັນດາຄວາມຮູ້ທີ່ຜິດພາດ, ບັນດາທັດສະນະລະເມີ ເຜີ້ຝັນ, ບັນດາປະກົດການກະວົນກະວາຍທາງແນວຄິດ, ຫລຸດຜ່ອນ ຄວາມເຊື່ອໝັ້ນຕໍ່ສັງຄົມນິຍົມ ແລະ ການນຳພາຂອງພັກ. ຕຳນິວິພາກ ແລະ ບອກປັດບັນດາທັດສະນະຜິດເຂວ, ເປັນສັດຕູ. ພະນັກງານ, ສະ ມາຊິກພັກທຸກຄົນເຊິ່ງກ່ອນອື່ນໝົດແມ່ນພະນັກງານນຳພາເປັນຫລັກ ແຫລ່ງ, ຕ້ອງເປັນແບບຢ່າງໃນການຮ່ຳຮຽນ, ເຝິກຝົນຫລໍ່ຫລອມ, ສູ້ ຊົນໃຫ້ຍົກສູງລະດັບທຸກດ້ານ, ຮັກສາຄຸນສົມບັດປະຕິວັດ, ຜ່ານຜ່າແກ້ ໄຂລັດທິເອກະຊົນນິຍົມ. ບັນດາການຈັດຕັ້ງພັກຕ້ອງສຶກສາອົບຮົມ, ຄຸ້ມ ຄອງສະມາຊິກພັກ ຢ່າງເປັນປະຈຳ, ລວມທັງສະມາຊິກພັກເປັນພະນັກ ງານນຳພາ. ຈັດ ແລະ ແກ້ໄຂບັນດາສະມາຊິກພັກຜູ້ເສື່ອມເສຍ, ເສຍ ຫາດຢ່າງທັນການ ແລະ ເດັ່ງຂັດ.

ຍິ່ງເດີນໄປເຂົ້າກົນໄກຕະຫລາດ, ເປີດກວ້າງການແລກປ່ຽນກັບສາ ກົນ, ລະບົບການຈັດຕັ້ງຂອງພັກກໍ່ຍິ່ງວິທະຍາສາດ, ໝັ້ນແກ່ນເຂັ້ມ

ແຂວ, ຮັບປະກັນການນຳພາອັນຮອບດ້ານຂອງພັກ ໃນບັນດາຂົງເຂດ ທັງໝົດຂອງຊີວິດການເປັນຢູ່ຂອງສັງຄົມ. ເມື່ອເປັນແນວນັ້ນ, ດ້ານ ໜຶ່ງ*ຕ້ອງປະຕິບັດຫລັກການລວມສູນປະຊາທິປະໄຕຢ່າງເຂັ້ມງວດ* ໃນ ການດຳເນີນຊີວິດພັກ, ເສີມຂະຫຍາຍປະຊາທິປະໄຕ ແລະ ຮັກສາລະ ບຽບວິໄນ, ເພີ່ມທະວີຄວາມສາມັກຄີ, ເປັນເອກະພາບພາຍໃນພັກ; ດ້ານອື່ນຕ້ອງ*ປັບປຸງລະບົບການຈັດຕັ້ງຂອງພັກ* ແລະ ບັນດາການຈັດ ຕັ້ງອື່ນໆ ໃນລະບົບການເມືອງໃຫ້ດີຂຶ້ນ, ມີກົນໄກ ແລະ ແບບວິທີເຄື່ອນ ໄຫວອັນເໝາະສົມ, ທັງຮັບປະກັນການນຳພາຂອງພັກ, ທັງເສີມຂະ ຫຍາຍບົດບາດເປັນເຈົ້າການ, ຕັ້ງໜ້າ, ຈູບຈ້າວຂອງລັດ,ບັນດາການ ຈັດຕັ້ງການເມືອງ-ສັງຄົມ, ບັນດາໜ່ວຍເສດຖະກິດ, ບັນດາອົງ ການຈັດຕັ້ງປະຊາຊົນ.

ໃນການກໍ່ສ້າງລະບົບການຈັດຕັ້ງຂອງພັກ, ພ້ອມກັບການປັບປຸງ ການຈັດຕັ້ງພັກຂັ້ນຕ່າງໆ, ເຊິ່ງເປັນພື້ເສດແມ່ນຢູ່ຂັ້ນສູນກາງ, ຕ້ອງ ເອົາໃຈໃສ່ທີ່ສຸດເຖິງການ*ປັບປຸງການຈັດຕັ້ງຣາກຖານພັກ* ເສີມຂະ ຫຍາຍຜົນໄດ້ ແລະ ບົດຮຽນໃນການປະຕິບັດມະຕິຂອງສູນກາງຄັ້ງ ທີສາມ(ສະໄໝທີ VII), ຕ້ອງຍົກສູງຈິດໃຈນຳໜ້າສູ້ຮົບຂອງບັນດາ ຣາກຖານພັກ ແລະ ຂອງສະມາຊິກພັກໃນກິດຈະການປ່ຽນແປງໃໝ່, ໃນການປະຕິບັດບັນດາແຜນນະໂຍບາຍ, ນະໂຍບາຍຂອງພັກ ແລະ ກົດ ໝາຍຂອງລັດ; ກໍ່ສ້າງຣາກຖານພັກໃສສະອາດ, ໜັ້ນແກ່ນເຂັ້ມແຂງ, ປັບປຸງບັນດາຣາກຖານທີ່ອ່ອນໆ, ຜ່ານຜ່າແກ້ໄຂການປ່ອຍປະຫລົ້ມ ເຫລວສຳລັບວຽກງານພັກ, ດັດແປງເນື້ອໃນດຳລົງຊີວິດພັກໃຫ້ດີຂຶ້ນ,

ເຊິ່ງຕິດພັນກັບພາກປະຕິບັດຕົວຈິງຢູ່ບໍລິເວນ. ປະຈຸບັນນີ້, ໃນເງື່ອນໄຂ ເສດຖະກິດທີ່ມີຫລາຍພາກສ່ວນ, ໝຸນໃຊ້ກົນໄກຄຸ້ມຄອງໃໝ່ຈຶ່ງຈະມີ ຮູບປະເພດຣາກຖານພັກຫລາຍຮູບທີ່ສຸດເຊິ່ງກວມດ້ວຍບັນດາພາລະ ບົດບາດ, ໜ້າທີ່ທີ່ບໍ່ຄືກັນອີຫລີ. ຕ້ອງມີແຜນການກວດຄົ້ນ, ຕີລາຄາ ສຳລັບແຕ່ລະຮູບປະເພດຣາກຖານຢ່າງຖືກຕ້ອງທັງນີ້ກໍ່ເພື່ອໃຫ້ມີວິທີ ການປ່ຽນແປງໃໝ່, ປັບປຸງໃຫ້ສອດຄ່ອງ, ຮັບປະກັນໃຫ້ແຕ່ລະຮູບປະ ເພດທຳການເຄື່ອນໄຫວຕາມພາລະບົດບາດ ແລະ ໜ້າທີ່ຂອງຕົນ ຢ່າງຖືກຕ້ອງ.

ສະພາບການ ແລະ ໜ້າທີ່ໃໝ່ຮຽກຮ້ອງທົ່ວພັກຕ້ອງ*ເປັນຫ່ວງ ເປັນໃຍນຳການກໍ່ສ້າງຖັນແຖວພະນັກງານ*, ເອົາໃຈໃສ່ຢ່າງຈົດຈໍ່ໃຫ້ ກໍ່ສ້າງຖັນແຖວພະນັກງານຫລັກແຫລ່ງຂັ້ນຕ່າງໆ, ກອງຖັນແຖວພະ ນັກງານສືບທອດຕໍ່ເນື່ອງເປັນຢ່າງດີ. ກໍ່ສ້າງຍຸດທະສາດພະນັກງານ ຂອງສະໄໝໃໝ່ໃຫ້ໄດ້ໂດຍໄວ. ເປັນພັກຜູ້ກຳອຳນາດ, ພັກຕ້ອງເປັນ ຫ່ວງເປັນໃຍນຳການກໍ່ສ້າງ, ຈັດວາງພະນັກງານແຕ່ລະບົບການເມືອງ ທັງໝົດ. ພັກນຳພາວຽກງານພະນັກງານ ແລະ ຄຸ້ມຄອງຖັນແຖວພະ ນັກງານຢ່າງເປັນເອກະພາບ, ພ້ອມກັນນັ້ນກໍ່ເສີມຂະຫຍາຍຄວາມຮັບ ຜິດຊອບຂອງບັນດາການຈັດຕັ້ງທີ່ເປັນພາຄີໃນລະບົບການເມືອງ. ຮັບ ປະກັນຫລັກການລວມໝູ່ໄປຄຽງຄູ່ກັນກັບການເສີມຂະຫຍາຍຄວາມ ຮັບຜິດຊອບຂອງບຸກຄົນໃນວຽກງານພະນັກງານ.

ບົນພື້ນຖານກຳມາດຕະຖານໃຫ້ແໜ້ນ, ປະຕິບັດການຫັນຖັນແຖວ

ພະນັກງານເປັນໜຸ່ມນ້ອຍພ້ອມກັນນັ້ນປະສານສົມທົບບັນດາໄວອາຍຸ ໃຫ້ດີ, ຮັບປະກັນລັກສະນະຕໍ່ເນື່ອງ ແລະ ລັກສະນະຂະຫຍາຍຕົວໃນຖັນ ແຖວພະນັກງານ. ມີກົນໄກ, ນະໂຍບາຍສາມັກຄີ, ເຕົ້າໂຮມຖັນແຖວ ພະນັກງານຢ່າງກວ້າງຂວາງ, ຊອກໃຫ້ເຫັນ ແລະ ໃຊ້ຜູ້ເກັ່ງກ້າຂອງ ປະເທດເປັນຢ່າງດີ. ພະນັກງານຂອງສະໄໝໃໝ່ຈຳຕ້ອງເປັນບັນດາ ຄົນຜູ້ມີຄຸນນະພາບດ້ານການເມືອງອັນໜັກແໜ້ນ, ຈົງຮັກພັກດີກັບອຸ ດົມຄະຕິປະຕິວັດ, ຕັ້ງໜັ້ນກັບຈຸດໝາຍເອກະລາດ ແຫ່ງຊາດ ແລະ ສັງຄົມນິຍົມ, ມີລະດັບວິຊາສະເພາະ ແລະ ຄວາມສາມາດຜົດຕິກຳ, ມີສະຕິນັບຖືສາຍການຈັດຕັ້ງລະບຽບວິໄນ, ເປັນແບບຢ່າງໃນຄຸນສົມ ບັດ ແລະ ແບບດຳລົງຊີວິດ; ລວມຄວາມວ່າຈະມີຄຸນສົມບັດ ແລະ ຄວາມສາມາດຢ່າງພຽງພໍ, ເຊິ່ງໃນນັ້ນຄຸນສົມບັດເປັນກົກຮາກ.

ປ່ຽນແປງໃໝ່ສຳລັບຄວາມຄິດ ແລະ ວິທີດຳເນີນວຽກງານພະນັກ ງານຕາມທິດປະຊາທິປະໄຕຢ່າງແທ້ຈົງ, ຕາແຜນກຳນົດອັນແໜ້ນ ແຟ້ນ.

ມີບັນຫາໜຶ່ງທີ່ຖືກເນັ້ນໜັກໃນບັນດາເອກະສານຄັ້ງນີ້ກ່າວຄື *ເພີ່ມ ທະວີ ແລະ ປ່ຽນແປງໃໝ່ສຳລັບວຽກງານກວດກາຂອງພັກ*. ເພີ່ມທະ ວີຄວາມຮັບຜິດຊອບໃນການກວດກາຂອງບັນດາຄະນະພັກ, ບັນດາອົງ ການຂອງຄະນະພັກ, ເພີ່ມທະວີໜ້າທີ່, ສິດອຳນາດ ແລະ ຄວາມຮັບ ຜິດຊອບຂອງບັນດາຄະນະກຳມະການກວດກາຂັ້ນຕ່າງໆ. ກົດລະບຽບ ຂອງພັກຢັ້ງຢືນວ່າ: ກວດກາແມ່ນໜຶ່ງໃນບັນດາພາລະບົດບາດນຳພາ

ຂອງພັກ. ການຈັດຕັ້ງຂອງພັກຕ້ອງດຳເນີນການກວດກາຢ່າງເປັນປະຈຳການຈັດຕັ້ງຂອງພັກ ແລະ ສະມາຊິກພັກຕ້ອງພາຍໃຕ້ການກວດກາຂອງພັກ. ບັນດາຄະນະພັກນຳພາວຽກງານກວດກາ ແລະ ຈັດຕັ້ງການປະຕິບັດໜ້າທີ່ກວດກາການປະຕິບັດໂຄງການການເມືອງ, ກົດລະບຽບຂອງພັກ, ມະຕິ, ຄຳສັ່ງຂອງພັກ. ບັນດາຄະນະພັກ ແລະ ການຈັດຕັ້ງຂອງພັກຕ້ອງກວດກາໂດຍກົງ ແລະ ໃຊ້ບັນດາອົງການເພື່ອກວດກາ. ຜ່ານການກວດກາເພື່ອຊອກເຫັນປັດໃຈໃໝ່, ເສີມຂະຫຍາຍຈຸດດີສະກັດກັ້ນ ແລະ ຜ່ານຜ່າແກ້ໄຂຈຸດອ່ອນ; ເພີ່ມເຕີມ, ຂະຫຍາຍຫລີດັດແຜນນະໂຍບາຍ, ນະໂຍບາຍໃຫ້ຖືກຕ້ອງພໍເໝາະ...

ຄະນະກຳມະການກວດກາຂັ້ນຕ່າງໆ ສຸມໃສ່ການກວດກາສະມາຊິກພັກທີ່ມີປະກົດການລ່ວງລະເມີດ ຕໍ່ມາດຕະຖານເປັນສະມາຊິກພັກລ່ວງລະເມີດ ມາດຕະຖານເປັນກຳມະການຄະນະພັກ ແລະ ການປະຕິບັດໜ້າທີ່ຂອງສະມາຊິກພັກ; ກວດກາການຈັດຕັ້ງຂອງພັກຂັ້ນລຸ່ມມີປະກົດການລ່ວງລະເມີດ ໃນການປະຕິບັດໂຄງການການເມືອງ, ກົດລະບຽບຂອງພັກ, ມະຕິ, ຄຳສັ່ງ ແລະ ຫລັກການຂອງພັກ; ຈັດການ ແລະ ຊ່ວຍຄະນະພັກທຳການຈັດ ແລະ ແກ້ໄຂສະມາຊິກພັກ ແລະ ການຈັດຕັ້ງຂອງພັກທີ່ລ່ວງລະເມີດ ນັ້ນຢ່າງທ່ຽງທຳ ແລະ ທັນເວລາ.

ເອົາໃຈໃສ່ເປັນພິເສດເຮັດວຽກງານ*ປ້ອງກັນທາງການເມືອງພາຍໃນພັກ* ໃຫ້ດີຂຶ້ນໃນສະພາບການໃໝ່.

ຮ່ວມສະຫາຍທັ້ງຫລາຍ,

ກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກແມ່ນກອງປະຊຸມໃຫຍ່ສືບຕໍ່ການປ່ຽນແປງໃໝ່ຕາມເສັ້ນທາງສັງຄົມນິຍົມ. ບັນດາທິດທາງ ແລະ ໜ້າທີ່ທີ່ລະບຸໄວ້ໃນບັນດາເອກະສານສະເໜີຕໍ່ກອງປະຊຸມໃຫຍ່ຄັ້ງນີ້ແມ່ນການຫັນເປັນລະອຽດ ແລະ ເຮັດໃຫ້ແນວທາງປ່ຽນແປງໃໝ່ທີ່ໄດ້ຮັບການຢືນຢັນໂດຍຜ່ານກອງປະຊຸມໃຫຍ່ຄັ້ງທີ VI ແລະ ກອງປະຊຸມໃຫຍ່ຄັ້ງທີ VII ຂອງພັກຂະຫຍາຍຕົວກວ່ານັ້ນອີກ. ປະຕິບັດບັນດາທິດທາງ, ໜ້າທີ່ເຫລົ່ານັ້ນໃຫ້ສຳເລັດຜົນດີແມ່ນວິທີທີ່ດີກວ່າໝູ່ເພື່ອສ້າງທ່ວງທີໃຫ້ແກ່ບັນດາບາດກ້າວໃຫຍ່ກວ່າອີກໃນພາລະກິດກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດ, ກຽມເຄື່ອງໂດຍສານໃຫ້ແກ່ຊາດເຮົາກ້າວເຂົ້າສູ່ສະຕະວັດທີ XXI.

ທົ່ວພັກ, ທົ່ວປວງຊົນ ແລະ ທົ່ວກອງທັບເຮົາຈົ່ງສ.ມັກຄີເປັນຈິດໜຶ່ງໃຈດຽວ, ເສີມຂະຫຍາຍມູນເຊື້ອອັນສະຫງ່າງາມຂອງຊາດ, ຫົວຄິດປັນຍາ ແລະ ຄຸນວຸດທິຂອງຄົນຫວຽດນາມ, ຍົກສູງເຈດຈຳນົງເອກະລາດເປັນເຈົ້າຕົນເອງ, ເພິ່ງກຳລັງຕົນເອງຫາຄວາມເຂັ້ມແຂງດ້ວຍຕົນເອງ, ກຳແໜ້ນໂຊກອຳນວຍ, ຍາດແຍ່ງກາລະໂອກາດດີ, ຍູ້ໄພອັນຕະລາຍໃຫ້ລະຖອຍໄປ, ຜ່ານຜ່າຄວາມທ້ົດສອບ, ຕັດສິນໃຈຫັນເນື້ອໃນມະຕິກອງປະຊຸມໃຫຍ່ຄັ້ງທີ VIII ກາຍເປັນພາກປະຕິບັດຕົວຈິງ; ສືບຕໍ່ພາລະກິດປ່ຽນແປງໃໝ່, ຊຸກຍູ້ການຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝຢ່າງແຂງແຮງເພື່ອຈຸດໝາຍຄວາມສົມບູນພຸນສຸກຂອງປະ

ຊາຊົນ, ປະເທດເຂັ້ມແຂງ, ສັງຄົມຍຸດຕິທຳ, ສີວິໄລ, ກ້າວຂຶ້ນສູ່ສັງຄົມ
ນິຍົມຢ່າງໜັກແໜ້ນ.

ລາຍງານການເມືອງ
ຂອງຄະນະບໍລິຫານງານສູນກາງພັກສະໄໝ ທີ VII ທີ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ VIII ຂອງພັກ.

ຮອງກອງປະຊຸມໃຫຍ່ທີ່ນັບຖື,

ຮອງບັນດາສະຫາຍ ແລະ ເພື່ອນມິດທັງຫລາຍ,

ກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກກອມມູນິດຫວຽດນາມໄດ້ດຳເນີນໃນຈຸດເວລາປະຫວັດສາດທີ່ມີຄວາມໝາຍສຳຄັນຢ່າງສຸດຂີດ. ການປ່ຽນແປງໃໝ່ຮອບດ້ານໄດ້ເລີ່ມຕົ້ນແຕ່ກອງປະຊຸມໃຫຍ່ຄັ້ງທີ VI, ດຳເນີນການສະຫລຸບສິບປີແຫ່ງການປ່ຽນແປງໃໝ່, ວາງບັນດາຈຸດໝາຍ, ທິດທາງ ແລະ ໜ້າທີ່ຂອງທົ່ວພັກ, ທົ່ວປວງຊົນເຮົາໃນໄລຍະໃໝ່ຂອງພາລະກິດກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດເຊິ່ງໜ້າທີ່ໃຈກາງຄື: ຊຸກຍູ້ຢ່າງແຂງແຮງສຳລັບການຫັນປະເທດຊາດເປັນອຸດສາຫະກຳ ແລະ ເປັນທັນສະໄໝ.

ພາກທີຫນຶ່ງ

ປະເທດຊາດພາຍຫລັງສິບປີ ແຫ່ງການປ່ຽນແປງໃຫມ່

ນັບແຕ່ທ້າຍຊຸມປີເຈັດສິບ, ໃນຂະນະທີ່ປະເທດເຮົາໄດ້ຕົກໃສ່ວິກິດ ການທາງດ້ານເສດຖະກິດ-ສັງຄົມ, ເຊິ່ງບົນພື້ນຖານສະຫລຸບຈາກພຶດ ຕິກຳ ແລະ ບັນດາບົດຮຽນອັນປະດິດສ້າງຂອງປະຊາຊົນ, ພັກເຮົາໄດ້ ວາງແຜນນະໂຍບາຍປ່ຽນແປງໃຫມ່ໃນແຕ່ລະພາກສ່ວນ. ເຖິງຢ່າງ ນັ້ນກໍ່ຕາມ, ບັນດາຈຸດອ່ອນຂອງຕົວແບບກໍ່ສ້າງສັງຄົມນິຍົມໃນເວລາ ນັ້ນຍັງບໍ່ທັນໄດ້ແກ້ໄຂຢ່າງພື້ນຖານ. ປະເທດເຮົາໄດ້ຖືກປິດລ້ອມ ແລະ ຂໍ້ຳບາດ. ໃນຂະບວນວິວັດແຫ່ງການປະຕິບັດບັນດາວິທີການປະຕິຮູບ, ພວກເຮົາພັດມີຂໍ້ຜິດພາດໃຫມ່ຈຳນວນຫນຶ່ງ ແລະ ວິກິດການທາງດ້ານ ເສດຖະກິດ - ສັງຄົມທີ່ຜັນໄປນັບມື້ນັບຂ້ຽວຂາດ, ອັດຕາສ່ວນເງິນເຟີ ໃນປີ 1986 ຖືບສູງຂຶ້ນຮອດ 774,7%.

ໃນທ້າຍປີ 1986, ທີ່ກອງປະຊຸມໃຫຍ່ຄັ້ງທີ VI ຂອງພັກໄດ້ດຳເນີນ ໄປດ້ວຍຈິດໃຈ: "ເບິ່ງຄວາມຈິງໃຫ້ຊື່ຕົງ , ຕີລາຄາຖືກກັບຄວາມຈິງ, ເວົ້າຄວາມຈິງຢ່າງຈະແຈ້ງ" ພັກເຮົາໄດ້ສຳຫລວດການນຳພາຂອງ ຕົນຢ່າງເຂັ້ມງວດ, ຢັ້ງຢືນບັນດາດ້ານທີ່ເຮັດໄດ້, ໄຈ້ແຍກບັນດາຂໍ້ຜິດ ພາດ ແລະ ວາງແນວທາງປ່ຽນແປງໃຫມ່ຮອບດ້ານ, ສ້າງບາດລ້ຽວ ໃຫມ່ ໃນການກໍ່ສ້າງສັງຄົມນິຍົມຢູ່ປະເທດເຮົາ.

ພາຍຫລັງກອງປະຊຸມໃຫຍ່ຄັ້ງທີ VI, ການປ່ຽນແປງໃຫມ່ໄດ້ຂະ ຫຍາຍຢ່າງແຂງແຮງ. ແຕ່ວ່າສະພາບການຫາກມີການຜັນແປຢ່າງ

ສັບສົນ, ບາງເທື່ອໄດ້ພົບຄວາມຫຍຸ້ງຍາກເກີດຂຶ້ນຄິດວ່າຜ່ານຜ່າໄດ້ຍາກ: ໃນສາມປີລຽນຕິດໄພເງິນເຝີ້ເພີ່ມຂຶ້ນໃນລະດັບສາມຕົວເລກ; ຊີວິດການເປັນຢູ່ຂອງຜູ້ກິນເງິນເດືອນ ແລະ ເບ້ຍລ້ຽງຖືກຫລຸດຜ່ອນລົງຢ່າງແຮງ. ລັດວິສາຫະກິດ ແລະ ສະຫະກອນອຸດສາຫະກຳນ້ອຍ ແລະ ຫັດຖະກຳ ຢູ່ຫລາຍແຫ່ງຖືກຊຸດໂຊມຢຸດຊະງັກ, ຫລຸບທຶນ; ການຜະລິດບໍ່ເຕັມເມັດເຕັມໜ່ວຍ, ບໍ່ໜຳຍັງມີບາງແຫ່ງຕ້ອງອັດໂຮງງານຊ້ຳ; ກຳມະກອນເປັນໜື່ນຄົນຕ້ອງເອົາຕົວອອກຈາກໂຮງງານ; ຄູອາຈານເປັນໜື່ນໆຄົນຕ້ອງປະອາຊີບ; ບັນດາເຫດການຄັ້ງສົມເຊື່ອຖືກລົ້ມລະລາຍເກີດຂຶ້ນຢູ່ຫລາຍແຫ່ງ, ບັນດາການຜັນແປອັນສັບສົນຂອງສາກົນໄດ້ສົ່ງຜົນກະທົບອັນບໍ່ດີຕໍ່ສະພາບການຂອງປະເທດເຮົາ.

ໃນສະພາບແວດລ້ອມແນວນັ້ນ, ພັກ, ລັດ ແລະ ປະຊາຊົນເຮົາໄດ້ສະແດງໃຫ້ເຫັນຄຸນທາດອັນໜັກແໜ້ນເພື່ອອອກແຮງແກ້ໄຂຄວາມຫຍຸ້ງຍາກ, ຮັກສາສະຖຽຍລະພາບທາງການເມືອງຢ່າງໜັ້ນຄົງ, ແກ້ໄຂບັນດາບັນຫາເສດຖະກິດ-ສັງຄົມທີ່ຮີບຮ້ອນ, ເຮັດໃຫ້ມະຕິຂອງກອງປະຊຸມໃຫຍ່ຄັ້ງທີ VI ໄດ້ຜັນຂະຫຍາຍເຂົ້າໃນການດຳລົງຊີວິດສັງຄົມ. ໃນຕົ້ນປີ 1988 ເກີດໄພອຶດຫິວຂະໜາດໃຫຍ່ຢູ່ຫລາຍບ່ອນ ແລະ ໄພເງິນເຝີ້ຍັງຢູ່ໃນລະດັບ 393,8% ແຕ່ຫາກນັບແຕ່ປີ 1988 ເປັນຕົ້ນມານີ້ປະເທດເຮົາເລີ່ມຂາອອກເຂົ້າສາມປີລະ 1 ຫາ 1,5 ລ້ານໂຕນ; ໄພເງິນເຝີ້ຍັງເຫລືອແຕ່ 67,4%. ການປະຕິບັດສາມໂຄງການໃຫຍ່ຂອງເສດຖະກິດມີຄວາມກ້າວໜ້າຢ່າງຈະແຈ້ງ. ເສດຖະກິດສິນຄ້າມີຫລາຍພາກສ່ວນທີ່ເຄື່ອນໄຫວຕາມກົນໄກຕະຫລາດໂດຍມີການຄຸ້ມ

ຄອງຂອງລັດເຊິ່ງປະກົດເປັນຮູບໃນບາດກ້າວເບື້ອງຕົ້ນ. ຊີວິດການ ເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງໃຫ້ດີຂຶ້ນ; ປະຊາທິປະໄຕຢູ່ໃນ ສັງຄົມມີການເສີມຂະຫຍາຍ. ວຽກງານປ້ອງກັນຊາດ, ປ້ອງກັນຄວາມ ສະຫງົບໄດ້ຮັກສາຢ່າງໜັກແໜ້ນ; ການເຄື່ອນໄຫວທາງດ້ານພົວພັນ ກັບຕ່າງປະເທດໄດ້ເປີດກວ້າງ, ສະພາບການຖືກປິດລ້ອມ ແລະ ໂດດ ດ່ຽວຖືກຍູ້ໃຫ້ລະຖອຍໄປ. ວຽກງານກໍ່ສ້າງພັກມີຄວາມກ້າວໜ້າ. ຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ພັກໄດ້ຮັບການຟື້ນຟູເທື່ອລະກ້າວ.

ຢ່າງໃດກໍ່ດີຜົນໄດ້ຍັງຖືກຈຳກັດ ແລະ ຍັງບໍ່ທັນໜັກແໜ້ນ. ຫລາຍ ບັນຫາເຄັ່ງຮ້ອນເກີດຂຶ້ນໃໝ່. ກອງປະຊຸມໃຫຍ່ຄັ້ງທີ VII ໄດ້ສັງເກດຕີ ລາຄາວ່າ: **ພາລະກິດປ່ຽນແປງໃໝ່ບັນລຸບັນດາຜົນສຳເລັດມາ ໄດ້ໃນບາດກ້າວເບື້ອງຕົ້ນທີ່ມີຄວາມສຳຄັນຍິ່ງ, ແຕ່ວ່າປະເທດ ເຮົາຍັງບໍ່ທັນຫລຸດພົ້ນວິກິດການທາງດ້ານເສດຖະກິດ-ສັງຄົມ.**

ກອງປະຊຸມໃຫຍ່ຄັ້ງທີ VII ໄດ້ຜ່ານໂຄງການການເມືອງກໍ່ສ້າງປະ ເທດຊາດໃນໄລຍະຂ້າມຜ່ານກ້າວຂຶ້ນສູ່ສັງຄົມນິຍົມ, ຍຸດທະສາດສ້າງ ສະຖຽຍລະພາບ ແລະ ພັດທະນາເສດຖະກິດສັງຄົມຮອດປີ 2000, ຜ່ານ ລາຍງານການເມືອງ ແລະ ກົດລະບຽບຂອງພັກ(ສະບັບດັດແປງ). ກອງ ປະຊຸມໃຫຍ່ໄດ້ວາງຈຸດໝາຍກວມລວມໃນ 5 ປີ (1991-1995) ຄື: **ຜ່ານຜ່າຂໍ້ຫຍຸ້ງຍາກ, ການທົດສອບ, ສ້າງຄວາມສະຖຽຍລະ ພາບ ແລະ ພັດທະນາເສດຖະກິດ-ສັງຄົມ, ເພີ່ມທະວີສະຖຽຍ ລະພາບທາງດ້ານການເມືອງເຮັດໃຫ້ຄວາມຫຍໍ້ທໍ້ ແລະ ຄວາມ**

ບ່ຍຸດຕິທຳຢູ່ໃນສັງຄົມໃຫ້ລະຖອຍໄປສູ່ຊຸມນຳເອົາປະເທດເຮົາ ອອກຈາກສະພາບວິກິດການໂດຍພື້ນຖານ. ກອງປະຊຸມກໍ່ໄດ້ປະ ກາດຢ່າງສະຫງ່າຜ່າເຜີຍວ່າ: ປະເທດຫວຽດນາມຢາກເປັນເພື່ອນມິດ ກັບບັນດາປະເທດຢູ່ໃນວົງຄະນາຍາດແຫ່ງ ໂລກ, ສູ້ຊົນເພື່ອສັນຕິພາບ, ເອກະລາດ ແລະ ພັດທະນາ.

ພາຍຫລັງກອງປະຊຸມໃຫຍ່ຄັ້ງທີ VII, ເຫດການລົ້ມລະລາຍຂອງ ສະຫະພາບໂຊວຽດໄດ້ສ້າງການກະທົບຢ່າງເລິກເຊິ່ງຕໍ່ປະເທດເຮົາ. ພະນັກງານ ແລະ ປະຊາຊົນຈຳນວນຫລວງຫລາຍເກີດມີຄວາມເປັນ ຫ່ວງເປັນໄຍ, ບາງຄົນມີຄວາມຄອນແຄນລະແວງສົງໄສກັບອະນາຄົດ ຂອງສັງຄົມນິຍົມ. ການພົວພັນທາງດ້ານເສດຖະກິດລະຫວ່າງປະເທດ ເຮົາກັບບັນດາຕະຫລາດທີ່ມີມູນເຊື້ອມາແລ້ວຖືກປັ້ນປ່ຽນໄປ. ໃນເວລາ ດຽວກັນນັ້ນອາເມລິກາຍັງສືບຕໍ່ການຂໍ້າບາດ. ບັນດາອິດທິກຳລັງ ເປັນສັດຕູຊຸກຍູ້ການເຄື່ອນໄຫວຢ່າງແຂງແຮງໃນການກໍ່ຄວາມບໍ່ມີສະ ຖຽນລະພາບ ແລະ ກໍ່ຄວາມສຸກເສີນໂຄ່ນລົ້ມ. ອີກເທື່ອໜຶ່ງປະເທດເຮົາ ໄດ້ປະເຊີນກັບສິ່ງທີ່ທົດສອບອັນທຸລະກັນດານ.

ພັກ ແລະ ປະຊາຊົນເຮົາໄດ້ຍຶດໝັ້ນແນວທາງປ່ຽນແປງໃໝ່, ອອກແຮງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VII, ຜ່ານຜ່າທຸກຄວາມ ຫຍຸ້ງຍາກ, ອຸປະສັກຕ່າງໆ ເຊິ່ງຍາດເອົາຜົນສຳເລັດໃໝ່ຢ່າງຫລວງ ຫລາຍກວ່າເກົ່າ.

I- ທນາທຜົນທີ່ບັນລຸໄດ້

1- ສຸກຍູ້ຈັງຫວະພັດທະນາເສດຖະກິດຢ່າງແຂງແຮງ, ສຳເລັດຈຸດໝາຍຫລາຍຢ່າງຂອງແຜນການຫ້າປີໃຫ້ລື່ນລະດັບຄາດໝາຍ.

ໃນຫ້າປີ 1991-1995 ຈັງຫວະໃນຍອດປະລິມານຜະລິດຕະພັນເພີ່ມຂຶ້ນສະເລ່ຍ 8,2% ຕໍ່ປີ(ໃນແຜນການແມ່ນແຕ່ 5,5 ຫາ 6,5%) ຜະລິດອຸດສາຫະກຳແມ່ນ 13,3%, ຜະລິດກະສິກຳແມ່ນ 4,5% ກ້ອນເງິນຕາຂາອອກເພີ່ມຂຶ້ນ 20%. ໂຄງປະກອບເສດຖະກິດມີບາດກ້າວຫັນປ່ຽນຢ່າງດີ. ອັດຕາສ່ວນອຸດສາຫະກຳ ແລະ ກໍ່ສ້າງໃນ GDP ແຕ່ 22,6% ໃນປີ 1990 ຂຶ້ນຫາ 29,1% ໃນປີ 1995; ການບໍລິການແຕ່ 38,6% ຫາ 41,9% ເລີ່ມມີການສະສົມຈາກພາຍໃນເສດຖະກິດແຫ່ງຊາດ. ການລົງທຶນຝຶ້ນຖານທີ່ສັງຄົມ ກວມເອົາ 15,8% GDP ໃນປີ 1990; ຂຶ້ນເປັນ 27,4% ໃນປີ 1995(ໃນນັ້ນກອງທຶນພາຍໃນກວມ 16,7% GDP). ມາຮອດທ້າຍປີ 1995 ລວມຍອດທຶນທີ່ຂຶ້ນທະບຽນແລ້ວຂອງບັນດາແຜນຮ່າງລົງທຶນໂດຍກົງຈາກຕ່າງປະເທດບັນລຸໄດ້ 19 ຕື້ USD, ເຊິ່ງໃນນັ້ນກໍ່ມີເກືອບ 1/3 ໄດ້ຮັບການປະຕິບັດໃຫ້ປະກົດເປັນຈິງ. ເງິນເຟ້ຈາກ 67,1% ໃນປີ 1991 ຫລຸດລົງຍັງ 12,7% ໃນປີ 1995.

ການເຊື່ອມໄຫວທາງດ້ານວິທະຍາສາດ ແລະ ເຕັກໂນໂລຢີຕິດແໜ້ນກວ່ານັ້ນອີກກັບຄວາມຕ້ອງການຂອງການພັດທະນາເສດຖະ

ກິດ-ສັງຄົມ, ຄ່ອຍໆຄຸ້ນເຄີຍກັບກົນໄກຕະຫລາດ.

ການພົວພັນແຕ່ງການຜະລິດຖືກດັດສົມໃຫ້ສອດຄ່ອງກັບການຂະ ຫຍາຍຕົວຂອງກຳລັງການຜະລິດ. ເສດຖະກິດສິນຄ້າມີຫລາຍພາກ ສ່ວນ ເຄື່ອນໄຫວຕາມກົນໄກຕະຫລາດໂດຍມີການຄຸ້ມຄອງຂອງລັດ ຕາມກຳນົດທິດສັງຄົມນິຍົມສືບຕໍ່ໄດ້ຮັບການກໍ່ຕັ້ງຂຶ້ນ.

2- ສ້າງເງື່ອນໄຂຈຳນວນຫນຶ່ງດ້ານການຫັນປຽນຢ່າງ ຕັ້ງຫນ້າດ້ານສັງຄົມ.

ຊີວິດການເປັນຢູ່ທາງດ້ານວັດຖຸຂອງປະຊາຊົນສ່ວນຫລວງຫລາຍໄດ້ ຮັບການປັບປຸງດີຂຶ້ນ. ຈຳນວນຄອບຄົວທີ່ມີລາຍໄດ້ລະດັບຊັ້ນກາງ ແລະ ຈຳນວນຄອບຄົວຮັ່ງມີໄດ້ເພີ່ມຂຶ້ນ. ຈຳນວນຄອບຄົວຍາກຈົນໄດ້ຫລຸດລົງ. ໃນແຕ່ລະປີມີແຮງງານຫນຶ່ງລ້ານກວ່າຄົນມີວຽກເຮັດງານທຳ. ເຮືອນ ຢູ ແລະ ຖະຫນົນຫົນທາງຫລາຍແຫ່ງໄດ້ຮັບການຍົກລະດັບຄຸນນະພາບ ແລະ ກໍ່ສ້າງໃຫມ່ທັງຢູໃນຊົນນະບົດ ແລະ ຕົວເມືອງ.

ລະດັບຄວາມຮູ້ຂອງປະຊາຊົນ ແລະ ລະດັບຊົມໃຊ້ທາງດ້ານວັດທະ ນະທຳ ໄດ້ຍົກສູງຂຶ້ນ. ພາລະກິດສຶກສາ, ກໍ່ສ້າງ, ເບິ່ງແຍງສຸຂະພາບ, ບັນດາການເຄື່ອນໄຫວທາງດ້ານວັດທະນະທຳ, ສິລະປະວັນນະຄາດີ, ວຽກງານກິລາກາຍະກຳ, ວຽກງານສື່ມວນຊົນ, ວຽກງານຫັນເປັນ ແຜນການຂອງຄອບຄົວ ແລະ ການເຄື່ອນໄຫວສັງຄົມອື່ນໆໄດ້ຂະ ຫຍາຍຕົວ ແລະ ກ້າວຫນ້າໃນດ້ານຕ່າງໆ.

ຜູ້ອອກແຮງງານໄດ້ຮັບການປົດປ່ອຍອອກຈາກການຜູກມັດຂອງ ກົນໄກທີ່ບໍ່ສົມເຫດສົມຜົນ, ເສີມຂະຫຍາຍສິດເປັນເຈົ້າການ ແລະ ລັກ ສະນະຄ່ອງຕົວ, ປະດິດສ້າງເປັນເຈົ້າການໃນການຊອກຫາວຽກເຮັດ ງານທຳ, ເພີ່ມລາຍໄດ້, ເຂົ້າຮ່ວມບັນດາການເຄື່ອນໄຫວໃນວົງຄະນາ ຍາດສັງຄົມ.

ແຜນນະໂຍບາຍຕອບບຸນແທນຄຸນຕໍ່ຜູ້ມີຄຸນງາມຄວາມດີຕໍ່ຊາດຖືກ ປະຊາຊົນສະໜັບສະໜູນ. ຂະບວນລົບລ້າງຄວາມອຶດຫິວ, ຫລຸດຜ່ອນ ຄວາມທຸກຍາກ ແລະ ການເຄື່ອນໄຫວທາງດ້ານສັງເຄາະນັບມື້ນັບເປີດ ກວ້າງ, ພວມກາຍເປັນລາຍລັກອັນຈົບງາມຂອງສັງຄົມ.

ຄວາມເຊື່ອໝັ້ນຂອງປະຊາຊົນຕໍ່ລະບອບ ແລະ ຕໍ່ອະນາຄົດຂອງ ປະເທດຊາດ, ຕໍ່ພັກ ແລະ ລັດໄດ້ຍົກສູງຂຶ້ນ.

3 - ຮັກສາຄວາມສະຖຽນລະພາບທາງການເມືອງຢ່າງ ໜັກແໜ້ນ, ປັບປຸງການປ້ອງກັນຊາດ, ປ້ອງກັນຄວາມ ສະຫງົບ.

ພວກເຮົາຮັກສາຄວາມມີສະຖຽນລະພາບທາງດ້ານການເມືອງ, ເອກະລາດ, ອະທິປະໄຕ ແລະ ສິ່ງແວດລ້ອມສັນຕິພາບຂອງປະເທດ ຊາດ, ສ້າງເງື່ອນໄຂອຳນວຍອັນເປັນພື້ນຖານໃຫ້ແກ່ພາລະກິດປ່ຽນ ແປງໃໝ່.

ພັກໄດ້ກຳນົດທິດທາງ, ໜ້າທີ່ ແລະ ທັດສະນະຊີ້ນຳພາລະກິດປົກປັກ ຮັກສາປະເທດຊາດ ໃນສະພາບການໃໝ່ຢ່າງຈະແຈ້ງ. ສືບຕໍ່ປະຕິບັດ

ການດັດສົມຍຸດທະສາດທາງດ້ານປ້ອງກັນຊາດ, ປ້ອງກັນຄວາມສະຫງົບຢ່າງມີຜົນດີ, ຄວາມຕ້ອງການຕ່າງໆ ໃນການປັບປຸງການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ປ໋ວແປງ ຊີວິດການເປັນຢູ່ຂອງກຳລັງອາວຸດໄດ້ຕອບສະໜອງຢ່າງດີກວ່າເກົ່າ. ຄຸນນະພາບ ແລະ ກຳລັງແຮງສູ້ຮົບຂອງກອງທັບ ແລະ ຕຳຫລວດໄດ້ຍົກສູງຂຶ້ນ. ທ່າສະໜາມປ້ອງກັນຊາດທົ່ວປວງຊົນແລະປ້ອງກັນຄວາມສະຫງົບປະຊາຊົນໄດ້ຮັບການປັບປຸງ. ວຽກງານປ້ອງກັນຄວາມສະຫງົບປອດໄພທາງດ້ານການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມໄດ້ເພີ່ມທະວີຂຶ້ນ.

4- ປະຕິບັດການປ ຽນແປງໃຫມ່ ທາງດ້ານລະບົບການເມືອງບັນລຸໄດ້ຫມາກຜົນອັນສຳຄັນຈຳນວນຫນຶ່ງ.

ບົນພື້ນຖານໂຄງການການເມືອງກໍ່ສ້າງປະເທດໃນໄລຍະຂ້າມຜ່ານກ້າວຂຶ້ນສູ່ສັງຄົມນິຍົມ, ພວກເຮົາໄດ້ຫັນແນວທາງປ ຽນແປງໃຫມ່ໃຫ້ເປັນອັນລະອຽດຢູ່ໃນຂົງເຂດຕ່າງໆ, ປັບປຸງພັກທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ, ເພີ່ມທະວີບົດບາດນຳພາຂອງພັກຢູ່ໃນສັງຄົມ; ໄດ້ປະກາດໃຊ້ລັດຖະທຳມະນູນສະບັບໃຫມ່ໃນປີ 1992, ໄດ້ດັດແປງ, ເພີ່ມເຕີມ ແລະ ປະກາດໃຊ້ເອກະສານແຫ່ງກົດຫມາຍຫລາຍສະບັບອັນສຳຄັນ, ດຳເນີນການປະຕິຮູບການບໍລິຫານແຫ່ງລັດຕື່ມອີກກ້າວຫນຶ່ງ, ສືບຕໍ່ກໍ່ສ້າງ ແລະ ບູລະນະລັດອຳນາດ ກົດຫມາຍຂອງສາທາລະນະລັດສັງຄົມນິຍົມຫວຽດນາມ. ແນວໂຮມປະເທດຊາດ, ບັນດາ

ອົງການຈັດຕັ້ງການເມືອງ, ສັງຄົມໄດ້ປຽນແປງໃໝ່ເນື້ອໃນ ແລະ ແບບແຜນວິທີການເຄື່ອນໄຫວເປັນກ້າວໆບັນລຸໄດ້ປະສິດທິຜົນຢ່າງເປັນຮູບປະທຳຫລາຍກວ່າເກົ່າ, ສິດເປັນເຈົ້າຂອງປະຊາຊົນທາງດ້ານເສດຖະກິດສັງຄົມ, ການເມືອງ, ແນວຄິດ , ວັດທະນະທຳ ໄດ້ເສີມຂະຫຍາຍ. ບັນດາຜີ້ນ້ອງຮ່ວມຊາດບັນດາຊົນຊາດມີຄວາມສະມັກຄີເປັນປຶກແຜ່ນຢູ່ໃນພາລະກິດເຮັດໃຫ້ປະຊາຊົນຮັ່ງມີ, ປະເທດຊາດເຂັ້ມແຂງ, ສັງຄົມມີຄວາມຍຸດຕິທຳ ແລະ ສີວິໄລ. ຜີ້ນ້ອງຮ່ວມຊາດອາໄສຢູ່ຕ່າງປະເທດນັບມື້ນັບຫັນມາສູ່ບ້ານເກີດເມືອງນອນເພື່ອພາລະກິດອັນມະຫາສານດັ່ງກ່າວ.

5- ຂະຫຍາຍການພົວພັນກັບຕ່າງປະເທດຢ່າງແຂງແຮງ ທັບມ້າງການປິດລ້ອມ, ຂວ້ຳບາດ, ເຂົ້າຮ່ວມຊີວິດຂອງວົງຄະນາຍາດຢູ່ໃນໂລກຢ່າງຕັ້ງໜ້າ.

ພວກເຮົາໄດ້ຜັນຂະຫຍາຍແນວທາງການພົວພັນກັບຕ່າງປະເທດເອກະລາດ, ເປັນເຈົ້າຕົນເອງ, ຫັນເປັນຫລາຍຮູບຫລາຍຝ່າຍ ຢ່າງຕັ້ງໜ້າ ແລະ ຕ່ອງຕົວ. ຟື້ນຟູ ແລະ ເປີດກວ້າງການພົວພັນມິດຕະພາບ, ຮ່ວມມືໃນຫລາຍດ້ານກັບຈີນ; ເພີ່ມທະວີການພົວພັນມິດຕະພາບ, ຄວາມສາມັກຄີແບບພິເສດກັບລາວ; ສ້າງຄວາມພົວພັນອັນດີກັບກຳປູເຈຍ, ຂະຫຍາຍການພົວພັນກັບບັນດາປະເທດໃນພາກພື້ນ; ກາຍເປັນສະມາຊິກຢ່າງສົມບູນຂອງອົງການຈັດຕັ້ງອາຊຽນ, ປັບປຸງການພົວພັນມິດຕະພາບອັນມີມູນເຊື້ອກັບປະເທດຕ່າງໆ; ປຽນແປງໃໝ່ສຳລັບການພົວພັນກັບສະຫະພາບລັດເຊຍ ແລະ ບັນດາປະເທດໃນວົງຄະນາ

ຍາດເອກະລາດ ແລະ ບັນດາປະເທດເອີລົບຕາເວັນອອກເປັນກ້າວໆ; ເປີດກວ້າງການພົວພັນກັບບັນດາປະເທດມີອຸດສາຫະກຳຂະຫຍາຍຕົວ; ຟື້ນຟູ ເປັນປົກກະຕິການພົວພັນກັບອາເມລິກາ. ກໍ່ຕັ້ງ ແລະ ເປີດກວ້າງການພົວພັນກັບຫລາຍປະເທດຢູ່ອາຊີໃຕ້, ປາຊີຟິກໃຕ້, ຕາເວັນອອກກາງ, ອາຟລິກາ, ອາເມລິກາລາຕິນ. ເປີດກວ້າງການພົວພັນກັບຂະບວນການບໍ່ຮ່ວມກຸ່ມ, ບັນດາອົງການຈັດຕັ້ງສາກົນ ແລະ ບັນດາປະເທດຢູ່ໃນພາກພື້ນ.

ພັກເຮົາໄດ້ສືບຕໍ່ເປີດກວ້າງການພົວພັນສາມັກຄີ, ມິດຕະພາບກັບບັນດາພັກກອມມູນິດ ແລະ ກຳມະກອນ, ບັນດາຂະບວນເອກະລາດແຫ່ງຊາດ, ບັນດາການຈັດຕັ້ງ ແລະ ຂະບວນການທີ່ກ້າວໜ້າຢູ່ໃນໂລກ; ກໍ່ຕັ້ງການພົວພັນກັບພັກກຳອຳນາດໃນປະເທດຈຳນວນໜຶ່ງ. ເປີດກວ້າງການເຊື່ອມໄຫວທາງດ້ານການຕ່າງປະເທດກັບບັນດາອົງການຈັດຕັ້ງປະຊາຊົນ, ການຈັດຕັ້ງສັງຄົມ. ຂະຫຍາຍການພົວພັນກັບອົງການຈັດຕັ້ງທີ່ບໍ່ແມ່ນຂອງລັດຖະບານໃນໂລກ.

ມາຮອດປະຈຸບັນນີ້, ປະເທດເຮົາມີການພົວພັນຕ່າງປະເທດກັບ 160 ປະເທດ; ມີການພົວພັນດ້ານການຄ້າກັບ 100 ກວ່າປະເທດ. ບັນດາບໍລິສັດຂອງ 50 ກວ່າປະເທດໄດ້ມາລົງທຶນໂດຍກົງຢູ່ປະເທດເຮົາ. ພວກເຮົາໄດ້ຮັບການຊ່ວຍເຫລືອລ້ຳໆຫລືກູ້ຢືມຈາກລັດຖະບານປະເທດຕ່າງໆ ແລະ ອົງການຈັດຕັ້ງສາກົນຕ່າງໆ.

ພົນງານໃນດ້ານການຕ່າງປະເທດເປັນປັດໄຈທີ່ສຳຄັນປະກອບ

ສ່ວນໃນການຮັກສາສັນຕິພາບ, ມ້າງວົ້ງປິດລ້ອມ ແລະ ຂວ້ຳບາດ, ປ້ອ
ແປງພາບພົບອັນດີງາມ ແລະ ເຊີດຊູບົດບາດຂອງປະເທດເຮົາໃນເວ
ທີສາກົນ, ສ້າງສະພາບແວດລ້ອມອັນດີງາມ ໃຫ້ແກ່ພາລະກິດກໍ່ສ້າງ
ແລະ ປົກປັກຮັກສາປະເທດຊາດ. ສິ່ງດັ່ງກ່າວປະກອບສ່ວນຢ່າງຕັ້ງ
ໜ້າຂອງປະຊາຊົນເຮົາເຂົ້າໃນພາລະກິດລວມຂອງປະຊາຊົນໂລກ
ເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມ
ກ້າວໜ້າທາງສັງຄົມ.

II - ຂໍ້ ຂາດຕົກບົກພ່ອງ ແລະ ຈຸດອ່ອນ

ພ້ອມກັບການຕີລາຄາຜົນງານຢ່າງຖືກຕ້ອງນັ້ນ, ພວກເຮົາຕ້ອງ
ຮັບຮູ້ບັນດາຂໍ້ຂາດຕົກບົກພ່ອງ ແລະ ອ່ອນແອຢ່າງຈະແຈ້ງ.

1/ ປະເທດເຮົາຍັງຕົກທຸກໄດ້ຍາກ ແລະ ດ້ອຍພັດທະນາ. ພວກເຮົາຊ້ຳພັດຍັງບໍ່ທັນປະຕິບັດການໝັ້ນປະຢັດໃນການຜະລິດ, ປະຢັດໃນການໃຊ້ຈ່າຍ, ລວມສູນທຶນຮອນໃຫ້ແກ່ການລົງທຶນເພື່ອພັດທະນາເປັນຢ່າງດີ.

ຈົນມາຮອດປະຈຸບັນນີ້, ປະເທດເຮົາຍັງເປັນປະເທດໜຶ່ງຢູ່ໃນບັນ
ດາປະເທດຍາກຈົນທີ່ສຸດຢູ່ໃນໂລກ; ລະດັບຂະຫຍາຍຕົວທາງດ້ານເສດ
ຖະກິດ, ສະມັດຖະພາບຂອງງານ, ປະສິດທິຜົນການຜະລິດ ແລະ ທຸລະ
ກິດຍັງຕ່ຳ, ພື້ນຖານວັດຖຸເຕັກນິກ ຍັງຫລ້າຫລັງ, ການຕິດໜີ້ຍັງ

ຫລາຍ. ໃນຂະນະຄວາມຕ້ອງການວ່າດ້ວຍທຶນໃຫ້ແກ່ການລົງທຶນ ແລະ ການພັດທະນາຍັງໃຫຍ່ໂຕ ແລະ ຮີບຮ້ອນ, ອົງການລັດ, ອົງການພັກ ແລະ ອົງການຈັດຕັ້ງມະຫາຊົນຈຳນວນໜຶ່ງ, ພະນັກງານ ແລະ ປະຊາຊົນພາກສ່ວນໜຶ່ງຍັງໃຊ້ຈ່າຍແບບຟຸມເຟືອຍຫລາຍເກີນຄວາມສາມາດທີ່ຕົນຫາມາໄດ້, ຍັງບໍ່ທັນປະຢັດເພື່ອລວມສູນທຶນຮອນໃຫ້ແກ່ການລົງທຶນພັດທະນາ. ລັດເຮົາຍັງຂາດນະໂຍບາຍສຳລັບການລະດົມກອງທຶນຢູ່ໃນໝູ່ປະຊາຊົນຢ່າງມີປະສິດທິຜົນ. ໃນປີ 1995 ການລົງທຶນກໍ່ສ້າງພື້ນຖານດ້ວຍທຶນຈາກພາຍໃນກວມເອົາແຕ່ 16,7% ຂອງGDP (ນັບທັງກອງທຶນຮັບຈາກຄ່າຫລຸຍຫ້ອນພື້ນຖານ), ໃນນັ້ນສ່ວນທຶນຂອງງົບປະມານ ກວມເອົາແຕ່ 4,2% ຂອງGDP, ຍັງຕ່ຳໂພດເມື່ອທຽບໃສ່ກັບຄວາມຕ້ອງການພັດທະນາເສດຖະກິດ. ການໃຊ້ແຫລ່ງກຳລັງຍັງກະແຈກກະຈາຍ, ປະສິດທິຜົນຍັງຕ່ຳ, ຍັງບໍ່ທັນເດັດກ່ຽວໃນການລວມສູນໃຫ້ແກ່ບັນດາໂຄງການ, ຮ່າງຍັດຕິເສດຖະກິດ-ສັງຄົມທີ່ຈຳເປັນດ່ວນໆ.

2- ສະພາບສັງຄົມຍັງມີຄວາມຫຍໍ້ທໍ້ຫລາຍປະການ ແລະ ມີຫລາຍບັນຫາທີ່ຕ້ອງແກ້ໄຂ.

ການສໍ້ລາດບັງຫລວງ, ຄ້າເຖື່ອນ, ການຟຸມເຟືອຍທຶນຮອນຊັບສົມບັດຂອງສ່ວນລວມຍັງບໍ່ທັນສະກັດກັ້ນໄດ້ເປັນຢ່າງດີ. ຄວາມຫຍໍ້ທໍ້ໃນກົງຈັກລັດ, ອົງການພັກ ແລະ ອົງການຈັດຕັ້ງມະຫາຊົນ, ໃນບັນດາລັດວິສາຫະກິດໂດຍສະເພາະຢູ່ໃນຂົງເຂດທີ່ດິນ, ເຮືອນຊານ, ກໍ່ສ້າງພື້ນຖານ ການຮ່ວມມືລົງທຶນກັບຕ່າງປະເທດ, ພາສີ, ການຂາອອກຂາເຂົ້າ ແລະ

ທັງຢູ່ໃນການເຄື່ອນໄຫວຂອງບັນດາອົງການປະຕິບັດກົດໝາຍ,...ແກ່ຍາວ ຢ່າງໜັກໜ່ວງ. ການຈັດຫາວຽກເຮັດງານທຳເປັນບັນຫາຂ້ຽວຂາດ. ການຜັນແຍກຄວາມຮັ່ງມີ ແລະ ຄວາມທຸກຍາກລະຫວ່າງບໍລິເວນຕ່າງໆ, ລະຫວ່າງຕົວເມືອງກັບຊົນນະບົດ, ລະຫວ່າງຊັ້ນຄົນຕ່າງໆ ໃນໝູ່ປະຊາຊົນໄດ້ເພີ່ມຂຶ້ນຢ່າງໄວວາ. ຊີວິດການເປັນຢູ່ຂອງປະຊາຊົນພາກສ່ວນໜຶ່ງ ໂດຍສະເພາະແມ່ນປະຊາຊົນຢູ່ໃນເຂດຖານທີ່ໝັ້ນປະຕິວັດເກົ່າ, ເຂດຊົນນະນາດສ່ວນໜ້ອຍຍັງທຸກຍາກເກີນຄວນ. ຄຸນນະພາບທາງດ້ານສຶກສາ, ກໍ່ສ້າງ ແລະ ສາທາລະນະສຸກໃນຫລາຍບ່ອນຍັງຕ່ຳທີ່ສຸດ. ຜູ້ທຸກຍາກກໍ່ບໍ່ມີເງິນພຽງພໍເພື່ອປິ່ນປົວພະຍາດ ແລະ ໃຫ້ລູກຫລານໄປຮຽນ. ໃນເວລານັ້ນກອງເງິນຈາກງົບປະມານແລະ ແຫລ່ງກຳລັງອື່ນໆທີ່ລະດົມໄດ້ເພື່ອຕອບສະໜອງຄວາມຕ້ອງການສະໜອັດຕິການທາງສັງຄົມຍັງຖືກຈຳກັດທັງໃຊ້ເງິນບໍ່ມີປະສິດທິຜົນ. ສະພາບຕິດຂັດທາງ ຄົມມະນາຄົມ, ເຮັດໃຫ້ສິ່ງແວດລ້ອມມີມົນລະພິດເປື້ອນເປ, ການທຳລາຍຊັບພະຍາກອນທຳມະຊາດນັບມື້ນັບເພີ່ມຂຶ້ນ. ພະລິດຕະພັນວັດທະນະທຳອັນເຊື່ອມຊາມທາງດ້ານສັງຄົມກໍ່ແຜ່ລາມໄປຊ້ຳ. ໄພຮ້າຍໃນສັງຄົມຂະຫຍາຍຕົວ. ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພ ທາງດ້ານສັງຄົມຍັງມີຄວາມສັບສົນຫລາຍປະການ.

3 - ການນຳພາກໍ່ສ້າງຄວາມພົວພັນການຜະລິດແບບໃໝ່ ທັງມີຂໍ້ອຶດອາດແລະ ຖືກປ່ອຍປະລະເລີຍໃນສ່ວນໃດສ່ວນໜຶ່ງ.

ການແກ້ໄຂບັນດາການຕິດຂັດທາງດ້ານກົນໄກ, ນະໂຍບາຍເພື່ອ ສ້າງກຳລັງຫນູນ ແລະ ເງື່ອນໄຂສະດວກໃຫ້ແກ່ລັດວິສາຫະກິດຍົກສູງ ປະສິດທິຜົນໃນການເຄື່ອນໄຫວ ແລະ ເສີມຂະຫຍາຍຄວາມເປັນເຈົ້າພາ ທາງຢູ່ໃນເສດຖະກິດແຫ່ງຊາດທັງນັ້ນຍັງຊັກຊ້າແລ້ວ. ການເຣັດທົດລອງ ຫັນເປັນຫຸ້ນສ່ວນຢູ່ໃນລັດວິສາຫະກິດ ຍັງຊ້າ ໂພດ. ສ່ວນເສດຖະກິດຮ່ວມ ມືຍັງບໍ່ທັນເອົາໃຈໃສ່ໃນການສະຫລຸບຜົດຕິກຳເພື່ອວາງທິດທາງມາດ ຕະການປຽນແປງໃຫມ່ທາງດ້ານເສດຖະກິດສະຫະກອນຢ່າງທັນການ, ປະໃຫ້ສະຫະກອນຢູຫລາຍແຫ່ງຖືກແຕກທະລາຍຫລືຍັງແຕ່ຮູບນອກ ເທົ່ານັ້ນ, ເຊິ່ງກີດຂວາງການຜະລິດຂະຫຍາຍຕົວ. ພວກເຮົາຍັງບໍ່ທັນ ສະຫລຸບບົດຮຽນຢ່າງທັນການເພື່ອ ຊ່ວຍເຫລືອຕໍ່ພາກສ່ວນເສດຖະກິດ ສະຫະກອນແບບໃຫມ່ຂະຫຍາຍຕົວ. ຍັງບໍ່ທັນແກ້ໄຂຢ່າງດີຕໍ່ນະໂຍ ບາຍຈຳນວນຫນຶ່ງເພື່ອສົ່ງເສີມເສດຖະກິດເອກະຊົນເສີມຂະຫຍາຍ ຄວາມສາມາດບົ່ມຊ້ອນຂອງຕົນ. ພ້ອມກັນນັ້ນກໍ່ຍັງບໍ່ທັນຄຸ້ມຄອງຢ່າງ ດີຕໍ່ພາກສ່ວນເສດຖະກິດດັ່ງກ່າວນີ້. ການຄຸ້ມຄອງເສດຖະກິດຮ່ວມມື ແລະ ຮ່ວມທຸລະກິດກັບຕ່າງປະເທດຍັງມີຊ່ອງວ່າງຫລາຍປະການ.

4 - ການຄຸ້ມຄອງລັດທາງດ້ານເສດຖະກິດ, ສັງຄົມຍັງ ອ່ອນ.

ລະບົບກົດໝາຍ, ກົນໄກ, ນະໂຍບາຍຍັງບໍ່ທັນຄົບຊຸດ ແລະ ສະເໝີ ຕົ້ນສະເໝີປາຍ, ການປະຕິບັດຍັງບໍ່ທັນເຂັ້ມງວດ.

ວຽກງານການເງິນ, ທະນາຄານ, ລາຄາ, ຫັນເປັນແຜນການ,

ວາງແຜນກໍ່ສ້າງຄຸ້ມຄອງທີ່ດິນຍັງອ່ອນຫລາຍ; ລະບຽບການບໍລິ
ຫານ...ຍັງຊັກຊ້າໃນການປຽນແປງໃໝ່. ການຄ້າຂອງລັດຖືກປ່ອຍ
ປະໄນຫລາຍດ້ານທີ່ສຳຄັນ, ຍັງບໍ່ທັນເສີມຂະຫຍາຍບົດບາດເປັນເຈົ້າ
ພາທາງຢູ່ໃນຕະຫລາດເປັນຢ່າງດີ. ການຄຸ້ມຄອງທາງດ້ານຂາອອກ
ຂາເຂົ້າຍັງມີຊ່ອງວ່າງ ແລະ ຄວາມຫຍໍ້ທໍ້ຫລາຍບ່ອນ, ມີກໍລະນີ້ຈຳ
ນວນໜຶ່ງສິ່ງຜົນສະທ້ອນທີ່ບໍ່ດີຕໍ່ການຜະລິດ. ລະບອບແຈກຢາຍລາຍ
ໄດ້ຍັງບໍ່ທັນສົມເຫດສົມຜົນ. ການຈ່າຍເກີນງົບປະມານເກີນຄວນ
ແລະ ການຂາອອກລົ້ນກວ່າຂາເຂົ້າຍັງໃຫຍ່ໂຕ, ເງິນເຟີ້ຖືກສະກັດກັ້ນ
ແຕ່ຍັງບໍ່ທັນໜັກແໜ້ນ.

ການຄຸ້ມຄອງລັດຕໍ່ການເຄື່ອນໄຫວທາງດ້ານວິທະຍາສາດ ແລະ ເຕັກ
ໂນໂລຢີ, ປົກປັກຮັກສາຊັບພະຍາກອນ ແລະ ສິ່ງແວດລ້ອມມີນລະພິດ,
ການສຶກສາ, ກໍ່ສ້າງ, ສື່ສານ, ໜັງສືພິມວາລະສານ, ພິມຈຳໜ່າຍ,
ວັດທະນະທຳ, ສິລະປະວັນນະຄະດີ ບໍ່ທັນໜັກແໜ້ນ.

5 - ລະບົບການເມືອງຍັງມີຫລາຍຈຸດອ່ອນ.

ຄວາມສາມາດ ແລະ ປະສິດທິຜົນໃນການນຳພາຂອງພັກ, ຄວາມ
ສັກສິດທາງດ້ານຄຸ້ມຄອງການຈັດຕັ້ງປະຕິບັດຂອງລັດ, ປະສິດທິຜົນໃນ
ການເຄື່ອນໄຫວຂອງບັນດາອົງການຈັດຕັ້ງການເມືອງ, ສັງຄົມຍັງບໍ່
ທັນຕອບສະໜອງກັບການເລັ່ງໜວງຂອງສະພາບການ. ກົງຈັກພັກ,
ລັດ, ອົງການຈັດຕັ້ງມາຫະຊົນຖືກສັບຊ້ອນຄືນໃໝ່ຍັງຊັກຊ້າ, ທັ້ງການ
ປັບປຸງໃຫ້ກະທັດລັດເບົາບາງເພື່ອຍົກຄຸນນະພາບ ໃຫ້ສູງຂຶ້ນ; ຍັງມີປະ

ກົດການອາດຍາສິດ, ລະເມີດສິດປະຊາທິປະໄຕຂອງປະຊາຊົນຢ່າງ
ຮ້າຍແຮງຫລາຍປະການ. ວຽກງານພະນັກງານຄືເລືອກເຟັ້ນບຳລຸງ,
ປ່ຽນແທນຫັນເປັນໜຸ່ມໜ້ອຍ, ການກະກຽມຖັນແຖວພະນັກງານທີ່ສືບ
ທອດຍັງອີດອາດ, ຊັກຊ້າ. ຄວາມສາມາດ ແລະ ຄຸນສົມບັດສົມທຳຂອງ
ຖັນແຖວພະນັກງານຍັງບໍ່ທັນຕອບສະໜອງກັບການເລັ່ງໜ່ວງຂອງ
ໜ້າທີ່. ບັນຫາທີ່ເປັນຫ່ວງເປັນໄຍວ່າມີພະນັກງານສະມາຊິກພັກຈຳ
ນວນບໍ່ໜ້ອຍໄດ້ເກີດມີສະພາບອຸດົມຄະຕິປະຕິວັດເສຍຫາດຂາດຄຸນ;
ກຳລັງແຮງສູ້ຮົບຂອງພາກສ່ວນໜຶ່ງຢູ່ໃນຣາກຖານຂອງພັກໄດ້ຫລຸດ
ໜ້ອຍຖອຍລົງ.

III - ຕີລາຄາຢ່າງສັງລວມ

ພາຍຫລັງສິບປີປະຕິບັດແນວທາງປ່ຽນແປງໃໝ່ຢ່າງຮອບດ້ານ
ແລະ ຫ້າປີປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VII ຂອງພັກ, ປະເທດ
ເຮົາໄດ້ຜ່ານຜ່າໄລຍະທົດສອບທີ່ຂ້ຽວຂາດ. ໃນສະພາບແວດລ້ອມສັບ
ສົນ ແລະ ຫຍຸ້ງຍາກທີ່ສຸດ, ປະຊາຊົນເຮົາບໍ່ພຽງແຕ່ຕັ້ງໜັ້ນໄດ້ເທົ່ານັ້ນ ຫາກຍັງປົ່ນຂຶ້ນ ແລະ ບັນລຸໄດ້ໄຊຊະນະອັນພົ້ນເດັ່ນໃນຫລາຍດ້ານ.

ການປ່ຽນແປງໃໝ່ໃນສິບປີທີ່ຜ່ານມາ, ສົມຜົນທີ່ບັນ ລຸໄດ້ຢ່າງໃຫຍ່ຫລວງ ແລະ ມີຄວາມໝາຍສຳຄັນທີ່ສຸດ. ໜ້າທີ່ທີ່ກອງປະຊຸມໃຫຍ່ຄັ້ງທີ VII ໄດ້ວາງອອກໃນໄລຍະ ຫ້າປີ 1991-1995 ໄດ້ປະຕິບັດສຳເລັດໂດຍພື້ນຖານ.

ປະເທດເຮົາໄດ້ຫລຸດພົ້ນຈາກວິກິດການເສດຖະກິດ-ສັງຄົມແລ້ວ, ແຕ່ມີບາງດ້ານບໍ່ທັນຫນັກແຫນ້ນ.

ຫນ້າທີ່ທີ່ພັກເຮົາໄດ້ວາງອອກໃນໄລຍະທໍາອິດຂອງສະໄຫມຂ້າມຜ່ານແມ່ນສ້າງບັນດາປະຖົມປັດໄຈໃຫ້ແກ່ການຫັນເປັນອຸດສາຫະກໍາໄດ້ສໍາເລັດລົງໂດຍພື້ນຖານເຊິ່ງອານຸຍາດໃຫ້ປະເທດເຮົາຫັນມາສູ່ໄລຍະໃຫມ່, ຊຸກຍູ້ການຫັນເປັນອຸດສາຫະກໍາ, ຫັນເປັນທັນສະໄຫມຢ່າງແຂງແຮງ.

ເສັ້ນທາງກ້າວຂຶ້ນສັງຄົມນິຍົມຢູ່ປະເທດເຮົາໄດ້ກໍານົດນັບມື້ນັບຈະແຈ້ງຕື່ມ.

ເປັ່ງຢ່າງກວມລວມແລ້ວ, ການກໍານົດ ແລະ ປະຕິບັດແນວທາງປ່ຽນແປງໃຫມ່ໃນຊຸມປີທີ່ຜ່ານມາໃນດ້ານພື້ນຖານແມ່ນຖືກຕ້ອງ, ດໍາເນີນຖືກກໍານົດທິດສັງຄົມນິຍົມແຕ່ຫາກວ່າໃນຂະບວນວິວັດແຫ່ງການປະຕິບັດໄດ້ມີຂໍ້ຂາດຕົກບົກພ່ອງຜິດເຂວໃຫຍ່ ແລະ ແກ່ຍາວທີ່ພາເຖິງການພົກໄປສູ່ທິດທາງຢູ່ຂົງເຂດນີ້ຫລືຂົງເຂດອື່ນ, ດ້ວຍລະດັບນີ້ຫລືລະດັບອື່ນ.

IV-ບັນດາບົດຮຽນຕົ້ນຕໍ.

ບັນດາຜົນງານທີ່ກ່າວມານັ້ນແມ່ນຫມາກຜົນຂອງຂະບວນວິວັດ

ແຫ່ງການຊອກຄົ້ນປ່ຽນແປງໃໝ່, ຕິດແທດກັບຜິດຕິກຳ, ສູ້ຊົນຢ່າງ ລຳບາກຂອງພັກ ແລະ ປະຊາຊົນເຮົາ. ສິ່ງດັ່ງກ່າວແມ່ນ: ມະຕິ ຂອງກອງປະຊຸມສູນກາງພັກຄັ້ງທີ່ຫົກ(ສະໄໝທີ IV) ໂດຍມີບັນດາມະ ໂຍບາຍເຮັດໃຫ້ການຜະລິດ "ແຜ່ອອກ"; ຄຳສັ່ງສະບັບເລກທີ 100 ຂອງຄະນະເລຂາ (ສະໄໝທີ IV) ກ່ຽວກັບການມອບໝາຜະລິດຕະ ພັນສຸດທ້າຍຮອດໜ່ວຍ ແລະ ຜູ້ອອກແຮງງານໃນສະຫະກອນກະເສດ; ບັນດາຂໍ້ຕົກລົງເລກທີ 25,26 ຂອງນາຍົກລັດຖະມຸນຕີວ່າດ້ວຍແຫລ່ງ ດຸ່ນດ່ຽງຕ່າງໆ ແລະ ສາມພາກສ່ວນຂອງແຜນການ; ກອງປະຊຸມໃຫຍ່ ຄັ້ງທີ V ຂອງພັກດ້ວຍການກຳນົດຄືນໃໝ່ສຳລັບການບູລິມະສິດຕາມ ລຳດັບໃນການພັດທະນາເສດຖະກິດ, ຢັ້ງຢືນ ກະສິກຳເປັນແນວຣົບທີ່ ແຖວໜ້າ. ມະຕິຂອງກອງປະຊຸມສູນກາງຄັ້ງທີ່ແປດ(ສະໄໝທີ V) ໃນ ເດືອນມີຖຸນາ 1985 ກ່ຽວກັບລາຄາ, ເງິນເດືອນ ແລະ ເງິນຕາ; ຂໍ້ສະ ຫລຸບຂອງກົນການເມືອງ(ສະໄໝທີ V) ເດືອນສິງຫາ 1986 ກ່ຽວ ກັບບາງບັນຫາໃຫຍ່ກ່ຽວກັບທັດສະນະເສດຖະກິດ...

ບັນດາການທົດລອງເບື້ອງຕົ້ນກ່ຽວກັບການປ່ຽນແປງໃໝ່ທີ່ກ່າວມາ ນັ້ນເປັນປະຖົມປັດໄຈກ່າວເຖິງແນວທາງປ່ຽນແປງໃໝ່ຮອບດ້ານທີ່ ກອງປະຊຸມໃຫຍ່ຄັ້ງທີ VI. ແນວທາງດັ່ງກ່າວໄດ້ເກີດເປັນຕົນເປັນຕົວ ບົນພື້ນຖານເສີມຂະຫຍາຍນ້ຳໃຈ ເອກະລາດ, ເປັນເຈົ້າຕົນເອງ, ສະ ຫລຸບບົດຮຽນປະດິດສ້າງຂອງປະຊາຊົນ, ຂອງບັນດາຊັ້ນ, ຂະແໜງ ການຕ່າງໆ ທີ່ສອດຄ່ອງກັບກົດເກນ ແລະ ຖືກກັບຄວາມປາຖະໜາ ຂອງປະຊາຊົນ, ສະນັ້ນແນວທາງປ່ຽນແປງໃໝ່ໄດ້ເຂົ້າສູ່ການດຳລົງ

ຊີວິດສັງຄົມຢ່າງໄວວາ.

ໃນຂະບວນການປ່ຽນແປງໃໝ່, ເຊິ່ງເປັນພິເສດແມ່ນໃນຈຸດເວລາ ມີລັກສະນະບາດລ້ຽວ, ພັກເຮົາໄດ້ມີບັນດາຂໍ້ຕົກລົງທີ່ສຳຄັນຍິ່ງ. ນັ້ນແມ່ນ ວ່າບັນດາການສະຫລຸບທີ່ທັນການຂອງກອງປະຊຸມສູນກາງຄັ້ງທີ ຫົກ (ສະໄໝທີ VI) ໄດ້ຢັ້ງຢືນຫລັກການຫ້າຂໍ້ຂອງການປ່ຽນແປງໃໝ່; ນັ້ນແມ່ນການຕັດສິນໃຈຢ່າງເດັດຂາດຂອງຄະນະບໍລິຫານງານສູນ ກາງພັກຢູ່ໃນບັນດາກອງປະຊຸມສູນກາງພັກຄັ້ງທີຫົກ, ເຈັດ, ແປດ(ສະ ໄໝທີ VI) ປະຕິເສດຢ່າງສິ້ນເຊີງຕໍ່ບັນດາຫນໍ່ແໜງເປື້ອງຕົ້ນກ່ຽວ ກັບບັນຫາຫລາຍຂໍ້ວການເມືອງຢູ່ພາຍໃນພັກ; ນັ້ນແມ່ນບັນດາມະຕິ ຂອງສູນກາງໄດ້ສັງເກດຕີລາຄາທີ່ແທລມຄົມ ແລະ ທັນການກ່ຽວກັບ ການຜັນແປຂອງສະພາບການສາກົນໃນຊຸມປີທ້າຍທົດຕະວັດທີ່ແປດ ສິບ; ຕົ້ນທົດຕະວັດທີ່ເກົ້າສິບ; ການຜ່ານອະນຸມັດໂຄງການການເມືອງ ຍຸດທະສາດ, ກົດລະບຽບຂອງພັກ(ສະບັບດັດແປງ) ຢູ່ກອງປະຊຸມໃຫຍ່ ຄັ້ງທີ VII; ຜ່ານລັດຖະທຳມະນູນສະບັບໃໝ່ 1992; ທັງນັ້ນກໍ່ບົ່ງແຈ້ງ ກາລະໂອກາດ ແລະ ໄພພິບັດ, ກຳນົດໜ້າທີ່ກ້າວເຖິງການຫັນປະເທດ ເປັນອຸດສາຫະກຳ, ເປັນທັນສະໄໝບາດກ້າວໜຶ່ງທີ່ກອງປະຊຸມຜູ້ແທນ ທົ່ວປະເທດລະຫວ່າງກາງອາຍຸການໄດ້ວາງອອກ; ບັນດາມະຕິ ແລະ ຂໍ້ຕົກລົງໃຫຍ່ຕ່າງໆຂອງພັກ ແລະ ລັດໄດ້ຫັນເປັນລະອຽດ, ເພີ່ມເຕີມ ແລະ ຂະຫຍາຍແນວທາງປ່ຽນແປງໃໝ່ຢູ່ໃນທຸກໆຂົງເຂດ. ດ້ວຍບັນ ດາຂໍ້ຕົກລົງອັນຖືກຕ້ອງດັ່ງກ່າວ, ທົ່ວພັກທົ່ວປວງຊົນໄດ້ຜ່ານຜ່າ ຄວາມຫຍຸ້ງຍາກ ແລະ ອຸປະສັກຕ່າງໆ ເຊິ່ງພາໃຫ້ການປ່ຽນແປງໃໝ່

ໄປສູ່ໄຊຊະນະຄືໃນປະຈຸບັນນີ້.

ໂດຍສະຫລຸບໄລຍະປ່ຽນແປງໃໝ່ໃນສິບປີທີ່ຜ່ານມາສາມາດຖອດຖອນ**ບົດຮຽນອັນຕົ້ນຕໍ**ຈຳນວນໜຶ່ງຄືດັ່ງລຸ່ມນີ້:

1) ຍຶດໝັ້ນຈຸດໝາຍເອກະລາດແຫ່ງຊາດ ແລະ ສັງຄົມນິຍົມໃນຂະບວນວິວັດການປ່ຽນແປງໃໝ່; ກຳແໜ້ນສອງໜ້າທີ່ຍຸດທະສາດກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດ; ຍຶດໝັ້ນລັດທິມາກ-ເລນິນ ແລະ ແນວຄິດໂຮ່ຈິມິນ.

ກຳນົດຢ່າງຈະແຈ້ງຕໍ່ການປ່ຽນແປງໃໝ່ເຊິ່ງບໍ່ແມ່ນວ່າການປ່ຽນຈຸດໝາຍຂອງສັງຄົມນິຍົມຫາກແມ່ນທັດສະນະອັນຖືກຕ້ອງກ່ວາເກົ່າກ່ຽວກັບສັງຄົມນິຍົມ ແລະ ປະຕິບັດຈຸດໝາຍດັ່ງກ່າວດ້ວຍບັນດາຮູບການ, ບາດກ້າວເດີນ ແລະ ວິທີການອັນເໝາະສົມ, ການຍຶດໝັ້ນທາງດ້ານຫລັກການ ແລະ ຍຸດທະສາດປະຕິວັດປະສານສົມທົບກັບການຄ່ອງຕົວປະດິດສ້າງໃນຍຸດທະວິທີຄ່ອງແຄ້ວໃນການຈັບເອົາອັນໃໝ່.

ການປ່ຽນແປງໃໝ່ຕ້ອງໄດ້ປະຕິບັດບົນພື້ນຖານປົກປັກຮັກສາ, ສືບທອດ ແລະ ເສີມຂະຫຍາຍມູນເຊື້ອອັນປະເສີດ ຂອງຊາດ ແລະ ບັນດາຜົນງານຂອງການປະຕິວັດທີ່ຍາດມາໄດ້. ການຕຳນິວິພາກວິຈານຂໍ້ຜິດພາດຂາດຕົກບົກພ່ອງຢ່າງເຂັ້ມງວດຕ້ອງໄປຄຽງຄູ່ກັບການຢັ້ງຢືນບັນດາວຽກທີ່ດຳເນີນໄປຢ່າງຖືກຕ້ອງ; ບໍ່ປະຕິເສດຢ່າງສິ້ນເຊີງກັບອາດີດ; ບໍ່ກະວົນກະວາຍ, ເສຍທິດເສຍທາງ, ແຕ່ຂໍ້ວ່ານີ້ຫັນໄປຫາຂໍ້ວ່າອື່ນ.

2) ສົມທົບຢ່າງໜັກແໜ້ນສຳລັບການປ່ຽນແປງໃໝ່

ທາງດ້ານເສດຖະກິດກັບການປ່ຽນແປງໃຫມ່ທາງດ້ານການເມືອງເລີ່ມແຕ່ຫົວທີ, ເອົາການປ່ຽນແປງໃຫມ່ທາງດ້ານເສດຖະກິດເປັນຈຸດໜັກ, ພ້ອມກັນນັ້ນກໍ່ປ່ຽນແປງໃຫມ່ ທາງດ້ານການເມືອງເປັນກ້າວໆ.

ເບິ່ງຢ່າງກວມລວມ, ພັກເຮົາໄດ້ດຳເນີນການປ່ຽນແປງໃໝ່ໂດຍເລີ່ມແຕ່ການປ່ຽນແປງໃໝ່ທາງຈິດຕະນາການດ້ານການເມືອງໃນການກຳນົດແນວທາງ ແລະ ນັບດານະໂຍບາຍຕ່ໍພາຍໃນ ແລະ ພົວພັນກັບຕ່າງປະເທດ. ບ່ໍມີການປ່ຽນແປງໃໝ່ດັ່ງກ່າວກໍ່ບ່ໍມີການປ່ຽນແປງໃໝ່ອື່ນ. ແຕ່ວ່າ, ພັກເຮົາໄດ້ມີຄວາມຖືກຕ້ອງເພາະວ່າກ່ອນອື່ນໝົດລວມສູນໃສ່ການປະຕິບັດໜ້າທີ່ປ່ຽນແປງໃໝ່ທາງດ້ານເສດຖະກິດ, ແກ້ໄຂວິກິດການທາງດ້ານເສດຖະກິດ-ສັງຄົມຢ່າງມີໄຊຊະນະ, ສ້າງປະຖົມປັດໄຈອັນຈຳເປັນທາງດ້ານວັດຖຸ ແລະ ຈິດໃຈເພ່ືອຮັກສາສະຖຽລະພາບທາງການເມືອງຢ່າງໜັ້ນຄົງ, ກໍ່ສ້າງ ແລະ ປັບປຸງຄວາມເຊ່ືອໜັ້ນຂອງປະຊາຊົນ, ສ້າງເງ່ືອນໄຂອຳນວຍໃຫ້ແກ່ການປ່ຽນແປງໃໝ່ທາງດ້ານອ່ືນໆຂອງການດຳລົງຊ່ີວິດໃນສັງຄົມ.

ໃນການປ່ຽນແປງໃໝ່ທາງດ້ານການຈັດຕັ້ງ ແລະ ກົນໄກເຄ່ືອນໄຫວຂອງລະບົບການເມືອງ, ພວກເຮົາໄດ້ມີບັນດາບາດກ້າວເດ່ືອນອັນຮອບຄອບ ແລະ ໜັກແໜ້ນ, ເຊ່ິງເລ່ີມຈາກການແກ້ໄຂບັນດາບັນຫາທ່ີເຄ່ືອງຮ້ອນກວ່າໝູ່ ແລະ ສຸກງອມ, ດ້ວຍຄວາມຮັບຮູ້ວ່າສ່ິງດັ່ງກ່າວແມ່ນບັນຫາຈຳເປັນທ່ີສຸດແຕ່ມີຄວາມສັບສົນເລ່ືອກແລບເປັນພ່ິເສດ, ເຊ່ິງ

ມີຄວາມສຳພັດໄວ ແລະ ຖ້າຫາກວ່າຮ້ອນຮົນຈິ່ງອາດຈະເກີດຄວາມ ຜິດພາດຈະຕ້ອງໃຊ້ຄ່າທົດແທນອັນແພງທີ່ສຸດ, ມີບາງເທື່ອບໍ່ກອບກູ້ຄືນ ໄດ້.

ຈຸດໝາຍອັນຕົ້ນຕໍຂອງການປ່ຽນແປງໃໝ່ໃນລະບົບການເມືອງ ແມ່ນແນໃສ່ປະຕິບັດປະຊາທິປະໄຕສັງຄົມນິຍົມຢ່າງດີ, ເສີມຂະຫຍາຍ ສິດເປັນເຈົ້າຂອງປະຊາຊົນຢ່າງຄົບຖ້ວນ. ບົດຮຽນໃຫຍ່ແມ່ນປະຊາ ທິປະໄຕຕ້ອງໄປຄຽງຄູ່ກັບລະບຽບວິໄນ. ແກ້ໄຂບັນດາປະກົດການລະ ເມີດສິດເປັນເຈົ້າຂອງປະຊາຊົນໄປພ້ອມກັນກັບການຕ້ານທ່າອ່ຽງ ປະ ຊາທິປະໄຕແບບຂວາຈັດ, ລ່ວງເກີນ. ດ້ວຍຄວາມຂາດຕົວໃນ ການບອກປັດທຸກກົນອຸບາຍສວຍໃຊ້ "ປະຊາທິປະໄຕ" ແບບຂວາຈັດ, ລ່ວງເກີນສິດ "ສິດຂອງມະນຸດ" ເພື່ອກໍ່ການກຸກວນວຸ່ນວາມທາງການ ເມືອງ, ຕ້ານການທຳລາຍລະບອບ ແລະ ແຊກແຊງເຂົ້າໃນກິດຈະການ ພາຍໃນຂອງປະເທດເຮົາ. ບໍ່ຮັບຮອງຫລາຍຂົ້ວຫລາຍພັກ.

3) ກໍ່ສ້າງເສດຖະກິດສິນຄ້າຫລາຍພາກສ່ວນເຄື່ອນໄຫວ ຕາມກົນໄກຕະຫລາດ, ໄປຄຽງຄູ່ກັບເພີ່ມທະວີບົດບາດຄຸ້ມ ຄອງຂອງລັດຕາມກຳນົດທິດສັງຄົມນິຍົມ. ຂະຫຍາຍເສດຖະ ກິດໃຫ້ເຕີບໂຕຕິດພັນກັບຄວາມກ້າວໜ້າ ແລະ ຍຸດຕິທຳ ທາງສັງຄົມ. ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອເອ ກະລັກອັດທະນະທຳຂອງຊາດ, ຮັກສາສິ່ງແວດລ້ອມມີນລະ ພິດ.

ໝຸນໃຊ້ບັນດາຮູບການເສດຖະກິດ ແລະ ວິທີຄຸ້ມຄອງເສດຖະກິດ ຕະຫລາດແມ່ນການໃຊ້ດ້ານຕັ້ງໜ້າຂອງມັນເພື່ອຮັບໃຊ້ຈຸດໝາຍກໍ່ສ້າງສັງຄົມນິຍົມຫາກບໍ່ແມ່ນໄປຕາມເສັ້ນທາງທຶນນິຍົມ.

ເສດຖະກິດຕະຫລາດກໍ່ມີບັນດາດ້ານຫຍໍ້ທໍ້ ຂັດແຍ້ງກັບຫາດແທ້ສັງຄົມນິຍົມ. ສິ່ງດັ່ງກ່າວແມ່ນທ່າອ່ຽງຜັນແຍກລະຫວ່າງຂົ້ວທຸກຍາກ ແລະ ຂົ້ວຮັ່ງມີຢ່າງເກີນຄວນ, ແມ່ນຈິດຕະສາດນິຍົມເງິນເປັນໃຫຍ່ເພື່ອໃຫ້ມີເງິນຈ່ຽຍປ່ຽນຄຸນສົມບັດສົມທຳຂອງຄົນ... ກ້າວເຂົ້າສູ່ເສດຖະກິດຕະຫລາດຕ້ອງຕັດສິນໃຈຕໍ່ສູ້ເພື່ອແກ້ໄຂກຳຈັດປັດເປົ່າບັນດາທ່າອ່ຽງອັນຫຍໍ້ທໍ້ດັ່ງກ່າວໃຫ້ມີໜ້ອຍທີ່ສຸດ.

ເພື່ອພັດທະນາການຜະລິດຕ້ອງເສີມຂະຫຍາຍກຳລັງແຮງຂອງທຸກພາກສ່ວນເສດຖະກິດ, ຮັບຮອງວ່າໃນພາກປະຕິບັດຕົວຈິງຍັງມີການຂູດຮີດ ແລະ ການຜັນແຍກຂົ້ວທຸກ ແລະ ຂົ້ວຮັ່ງຢູ່ໃນສັງຄົມຢ່າງແນ່ນອນ, ແຕ່ຕ້ອງເອົາໃຈໃສ່ຮັກສາຜົນປະໂຫຍດຂອງຜູ້ອອກແຮງງານ, ທັງສົ່ງເສີມວິທີສ້າງຄວາມຮັ່ງມີຢ່າງຖືກກົດໝາຍ, ຕ້ານການກະທຳຜິດກົດໝາຍທັງຖືສຳຄັນການລົບລ້າງຄວາມອຶດຫິວ,ຫລຸດຜ່ອນຄວາມທຸກຍາກ, ປະຕິບັດຄວາມຍຸດຕິທຳສັງຄົມເປັນກ້າວໆ, ກ້າວເຖິງທຸກຄົນທຸກຄອບຄົວມີຄວາມຈະເລີນຮັ່ງມີ.

4) ເປີດກວ້າງ ແລະ ເພີ່ມທະວີກ້ອນກຳລັງມະຫາສາມັກຄີທົ່ວປວງຊົນ, ເສີມຂະຫຍາຍກຳລັງແຮງສັງລວມແຫ່ງຊາດ.

ການປະຕິວັດແມ່ນພາລະກິດຂອງປະຊາຊົນ, ເພື່ອປະຊາຊົນ ແລະ ໂດຍປະຊາຊົນ. ບັນດາຄວາມຄິດຄວາມເຫັນ, ຄວາມປາຖະຫນາ, ຄວາມປະດິດສ້າງຂອງປະຊາຊົນແມ່ນກົກຮາກແຫ່ງການ ສ້າງແນວທາງປ່ຽນແປງໃຫມ່ຂອງພັກໃຫ້ເປັນຕົນເປັນຕົວ. ຍ້ອນປະຊາຊົນສະຫນັບສະຫນູນສູ້ຊົນຢ່າງອົງອາດກ້າຫານຜ່ານຜ່າຄວາມຫຍຸ້ງຍາກທົດສອບນານາປະການຈຶ່ງເຮັດໃຫ້ການປ່ຽນແປງໃຫມ່ບັນລຸໄດ້ຜົນສໍາເລັດຕ່າງໆຄືສູ່ມື້ນີ້. ເພື່ອສືບຕໍ່ນໍາເອົາການປ່ຽນແປງໃຫມ່ກ້າວຂຶ້ນ, ຍາດເອົາບັນດາຜົນງານໃຫຍ່ກວ່າເກົ່າຕ້ອງດໍາເນີນການເປີດກວ້າງ, ເພີ່ມທະວີກ້ອນກໍາລັງມະຫາສາມັກຄີທົ່ວປວງຊົນເປັນຢ່າງດີທັງພາຍໃນ ແລະ ຕ່າງປະເທດ, ເສີມຂະຫຍາຍປະຊາທິປະໄຕລະດົມກໍາລັງແຮງຂອງຊາດຢ່າງສຸດຂີດເພື່ອຈຸດຫມາຍປະຊາຊົນຮັ່ງມີ, ປະເທດຊາດເຂັ້ມແຂງ, ສັງຄົມ ຍຸດຕິທໍາ, ສີວິໄລ.

5) ເປີດກວ້າງການຮ່ວມມືກັບສາກົນ, ຍາດແຍ່ງຄວາມເປັນໃຈສະຫນັບສະຫນູນ, ຊ່ວຍເຫລືອຈາກປະຊາຊົນຢູ ໃນໂລກ, ສົມທົບກໍາລັງແຮງຂອງຊາດກັບກໍາລັງແຮງຂອງຍຸກສະໄຫມ.

ພາລະກິດປ່ຽນແປງໃຫມ່ຂອງປະຊາຊົນເຮົາໃນປະຈຸບັນນີ້ສອດຄ່ອງກັບທ່າອ່ຽງຂະຫຍາຍຕົວຂອງຍຸກສະໄຫມ, ໄດ້ຮັບຄວາມເປັນໃຈ, ສະຫນັບສະຫນູນຈາກປະຊາຊົນບັນດາປະເທດຢູ ໃນໂລກ. ໄປຄຽງຄູ່ກັບການເສີມຂະຫຍາຍມານະຈິດເຜິ່ງກໍາລັງຕົນເອງສ້າງຄວາມເຂັ້ມແຂງ

ດ້ວຍຕົນເອງຢ່າງສຸດຊຶດ, ຕ້ອງຂຸດຄົ້ນລະດົມທຸກແຫລ່ງກຳລັງແຮງພາຍໃນສ້າງບັນດາເງື່ອນໄຂທີ່ອຳນວຍຄວາມສະດວກໃໝ່ໃນການພົວພັນກັບຕ່າງປະເທດເປັນຢ່າງດີ, ເປີດກວ້າງສາຍພົວພັນມິດຈິດມິດໃຈ ແລະ ການຮ່ວມມືກັບປະເທດຕ່າງໆເພື່ອສັນຕິພາບ, ເອກະລາດ ແລະ ພັດທະນາ, ສ້າງສະພາບແວດລ້ອມສາກົນທີ່ອຳນວຍ ແລະ ຍາດແຍ່ງບັນດາປັດໄຈທີ່ຕັ້ງໜ້າຮັບໃຊ້ການກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດ. ການເປີດກວ້າງຄວາມພົວພັນຕ່າງປະເທດຕ້ອງບົນພື້ນຖານເຄົາລົບເອກະລາດ, ອະທິປະໄຕ, ສະເໝີພາບ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດ, ປົກປັກຮັກສາ ແລະ ເສີມຂະຫຍາຍເອກະລັກ ແລະ ບັນດາມູນເຊື້ອອັນສວຍສົດງົດງາມຂອງຊາດ. ປະຕິບັດການພົວພັນກັບຕ່າງປະເທດຕາມແບບທັນເປັນຫລາຍຮູບຫລາຍຝ່າຍ. ສືບຕໍ່ເສີມຂະຫຍາຍ ແລະ ຖືສຳຄັນສາຍພົວພັນຕ່າງໆ ອັນເປັນມູນເຊື້ອ.

6) ເພີ່ມທະວີບົດບາດນຳພາຂອງພັກ, ຖືເອົາການກໍ່ສ້າງພັກເປັນໜ້າທີ່ກຸນແຈ.

ພາລະກິດປະຕິວັດຂອງປະເທດເຮົາໂດຍພັກກອມມູນິດເປັນຜູ້ນຳພາ. ພັກເຮົາເປັນພັກກຳອຳນາດ. ບັນດາໄຊຊະນະ ແລະ ຜົນງານຕ່າງໆຫລືການປາລາໄຊ ແລະ ເສຍຫາຍຂອງການປະຕິວັດເປັນສິ່ງທີ່ຕິດພັນກັບຄວາມຮັບຜິດຊອບຂອງພັກເຮົາ. ໃນຂະບວນວິວັດແຫ່ງການປຽນແປງໃໝ່ຕໍ່ປະເທດຊາດ, ພັກເຮົາຕ້ອງພິຈາລະນາແກ້ໄຂບັນດາຂໍ້ຜິດພາດ, ຂໍ້ຂາດຕົກບົກພ່ອງ ແລະ ອ່ອນໜ້ອຍຂອງຕົນຢ່າງ

ເຂັ້ມງວດ, ປຽນແປງໃໝ່ ແລະ ປັບປຸງພັກໃຫ້ດີຂຶ້ນ, ຍົກສູງກຳລັງສູ້ຮົບຂອງພັກ ແລະ ຄວາມສາມາດນຳພາຂອງພັກ. ບັນດາອົດທີກຳລັງຕ້ານສັງຄົມນິຍົມ ແລະ ຕ້ານເອກະລາດ ແຫ່ງຊາດຍາມໃດກໍ່ສຸມປາຍແຫລມໃສ່ພັກເຮົາ, ສຸມກຳລັງທຳລາຍມ້າງຟື້ນຖານແນວຄິດ ແລະ ການຈັດຕັ້ງຂອງພັກ. ເລ່ລ່ຽມທີ່ເຂົ້າເຈົ້າເຄີຍໃຊ້ແມ່ນໃສ່ຮ້າຍປ້າຍສີ ປະຫວັດສາດ, ປະຕິເສດຜົນສຳເລັດຂອງການປະຕິວັດ, ປະຕິເສດຕໍ່ ການເສຍສະຫລະ ແລະ ຄຸນງາມຄວາມດີຂອງບັນດານັກກອມມູນິດ. ເຂົ້າທຳການຂະຫຍາຍເຜີຍແຜ່ຄວາມຂາດຕົກບົກພ່ອງຂອງພັກຢ່າງ ເກີນຄວາມຈິງ. ເລັ່ງຫວ່ງປະຕິບັດສິດທີຂອງມະນຸດ ແລະ ປະຊາທິປະ ໄຕແບບທຶນນິຍົມ, ເລ່ງຫວ່ງຫັນກົນຈັກແຫ່ງລັດບໍ່ມີການເມືອງ, ເລັ່ງ ຫວ່ງໃຫ້ມີຫລາຍຂົ້ວຫລາຍພັກແນໃສ່ລົບລ້າງບົດບາດນຳພາຂອງພັກ. ເຂົ້າເຈົ້າສວຍໃຊ້ພວກສວຍໂອກາດທໍລະຍົດທາງການເມືອງຫລີເສຍ ຫາດຂາດຄຸນເພື່ອແບ່ງແຍກພາຍໃນພັກ, ເຮັດໃຫ້ພັກອ່ອນເພຍ, ມ້າງ ເພພັກເລີ່ມແຕ່ພາຍໃນ.

ຮັບຮູ້ຄວາມຮຽກຮ້ອງຕ້ອງການໃໝ່ຂອງການປະຕິວັດ ແລະ ກົນອຸ ບາຍມ້າງເພຕ້ານພັກທີ່ກ່າວມາເທິງນັ້ນພັກເຮົາໄດ້ບົ່ງຊາດວ່າ: ໃນໄລ ຍະປະຈຸບັນນີ້ການນຳພາເສດຖະກິດເປັນໜ້າທີ່ໃຈກາງ, ກໍ່ສ້າງພັກເປັນ ໜ້າທີ່ກຸນແຈ. ຖືສຳຄັນຕໍ່ການສະຫລຸບວຽກງານກໍ່ສ້າງພັກ. ປັບປຸງພັກ ທັງທາງດ້ານການເມືອງແນວຄິດການຈັດຕັ້ງ, ພະນັກງານ. ເພີ່ມທະ ວີຫາດແທ້ຊຶ້ນຊັ້ນກຳມະກອນ ແລະ ລັກສະນະນຳໜ້າຕໍ່ສູ້ຂອງພັກ. ສະ ກັດກັ້ນທ່າອ່ຽງລົດຜ່ອນບົດບາດນຳພາຂອງພັກ. ປຽນແປງໃໝ່ຕໍ່

ແບບວິທີນຳພາ, ຍົກສູງລະດັບຄວາມຮູ ແລະ ປະສິດທິຜົນການນຳພາ ຂອງພັກຕໍ່ລະບົບການເມືອງ ແລະ ທົ່ວສັງຄົມ.

ພາກທີສອງ

ຈຸດໝາຍສູ້ຊົນຮອດປີ 2020 ແລະ ປີ 2000

I - ສະພາບແວດລ້ອມລວມ

1-ຈຸດພິເສດຂອງສະພາບການໂລກ.

ພາລະກິດປ່ຽນແປງໃໝ່, ກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດ ໄດ້ສືບຕໍ່ຂະຫຍາຍຕົວຢູ່ໃນສະຖານະການຂອງໂລກມີການຜັນແປຢ່າງ ໄວວາ, ສັບສົນ ແລະ ບັນຈຸດ້ວຍບັນດາປັດໄຈທີ່ຄາດຄະເນບໍ່ໄດ້.

ບັນດາຈຸດພິເສດອັນພື້ນເດັ່ນຄື:

- ລະບອບສັງຄົມນິຍົມຢູ່ສະຫະພາບໂຊວຽດ ແລະ ຢູ່ບັນດາປະເທດ ເອີລົບຕາເວັນອອກຖືກລົ້ມລະລາຍເຮັດໃຫ້ລະບົບສັງຄົມນິຍົມຕົກໃສ່ທ່າ ຖອຍຫລັງ, ແຕ່ວ່າເຫດການດັ່ງກ່າວບໍ່ເຮັດໃຫ້ລັກສະນະຂອງຍຸກສະ ໃໝປ່ຽນແປງໄປ, ມະນຸດຊາດຍັງຢູ່ໃນຍຸກສະໄໝຂ້າມຜ່ານແຕ່ລັດ ທິທຶນນິຍົມກ້າວຂຶ້ນສູ່ສັງຄົມນິຍົມ. ບັນດາຂໍ້ຂັດແຍ່ງອັນພື້ນຖານຢູ່ໃນ ໂລກຍັງຄົງຕົວ ແລະຂະຫຍາຍ, ໃນນັ້ນມີບາງດ້ານຜັນແປຢ່າງ

ເລິກເຊິ່ງກວ່າເກົ່າ, ເນື້ອໃນ ແລະ ຮູບການປະກົດວ່າມີຮູບແບບໃໝ່. ການຕໍ່ສູ້ທາງຊົນຊາດ ແລະ ຕໍ່ສູ້ທາງຊົນຊັ້ນຍັງສືບຕໍ່ເກີດຂຶ້ນດ້ວຍຫລາຍຮູບການ.

- ໄພອັນຕະລາຍແຫ່ງສົງຄາມລ້າງຜານໄດ້ຫລຸດໜ້ອຍຖອຍລົງ, ແຕ່ວ່າການປະທະກັນດ້ວຍກຳລັງອາວຸດ, ສົງຄາມພາກສ່ວນ, ການປະທະກັນທາງດ້ານຊົນເຜົ່າ ແລະ ສາສະໜາ, ການຊ່ວງເສັງອາວຸດ, ການເຄື່ອນໄຫວແຊກແຊງ ໂຄ່ນລົ້ມ, ປາບປາມຍັງເກີດຂຶ້ນຢູ່ຫລາຍແຫ່ງ.

- ການປະຕິວັດທາງດ້ານວິທະຍາສາດ ແລະ ເຕັກໂນໂລຍີສືບຕໍ່ຂະຫຍາຍຕົວດ້ວຍລະດັບນັບມື້ນັບສູງ; ກຳລັງແຫ່ງການຜະລິດເພີ່ມຂຶ້ນຢ່າງໄວວາ, ພ້ອມກັນນັ້ນມັນກໍ່ຊຸກຍູ້ຂະບວນວິວັດແຫ່ງການຫັນປ່ຽນໂຄງປະກອບເສດຖະກິດຂອງໂລກ, ຫັນຝັ້ນຖານເສດຖະກິດ ແລະ ຊີວິດສັງຄົມກາຍເປັນຂອງສາກົນ.

ບັນດາປະເທດພວມຢືນຢູ່ຕໍ່ໜ້າກາລະໂອກາດຕ່າງໆເພື່ອພັດທະນາ. ແຕ່ວ່າຍ້ອນທ່າດີທາງດ້ານທຶນຮອນ, ເຕັກໂນໂລຍີ, ຕະຫລາດ ແລະ ອື່ນໆ... ຍັງຂຶ້ນກັບບັນດາປະເທດທຶນນິຍົມພັດທະນາ ແລະ ບັນດາບໍລິສັດຂ້າມຊາດ, ເພາະເຫດນັ້ນບັນດາປະເທດດ້ອຍພັດທະນາກໍ່ຄືພວມພັດທະນາພວມຢືນຢູ່ ຕໍ່ໜ້າການທ້າທາຍອັນໃຫຍ່ໂຕຕ່າງໆ. ການຜິດດ່ຽງທາງດ້ານຄວາມຮັ່ງມີກັບຄວາມຍາກຈົນລະຫວ່າງບັນດາປະເທດດັ່ງກ່າວນັບມື້ນັບກວ້າງໄກກັນ. ການແຂ່ງຂັນທາງດ້ານເສດຖະກິດ, ການ

ຄ້າ, ວິທະຍາສາດ-ເຕັກໂນໂລຍີ ພວມເກີດຂຶ້ນຢ່າງຮຸນແຮງຂ້ຽວຂາດ.

- ວົງຄະນາຍາດແຫ່ງ ໂລກພວມຢືນຕໍ່ໜ້າຫລາຍບັນຫາທີ່ມີລັກສະນະທົ່ວ ໂລກ (ເຊັ່ນ: ການປົກປັກຮັກສາສິ່ງແວດລ້ອມ, ກຳຈັດປັດເປົ່າ ການເພີ່ມຂຶ້ນທາງດ້ານພົນລະເມືອງ, ສະກັດກັ້ນ ແລະ ຕີພະຍາດ ໂລ ຄາອັນຮ້າຍກາດຕ່າງໆ ໃຫ້ລະຖອຍໄປ, ເຊິ່ງບໍ່ມີປະເທດໃດໜຶ່ງສາ ມາດແກ້ໄຂ ໂດຍຕົນເອງໄດ້, ຫາກຕ້ອງມີການຮ່ວມມືລະຫວ່າງຫລາຍ ຝ່າຍຈຶ່ງຈະແກ້ໄຂໄດ້.

- ໃນພາກພື້ນອາຊີ-ປາຊີຟິກພວມມີການພັດທະນາຢ່າງຄ່ອງຕົວ ແລະ ສືບຕໍ່ຂະຫຍາຍຕົວດ້ວຍຄວາມ ໄວ ໃນລະດັບສູງ. ພ້ອມນັ້ນ, ຢູ່ໃນ ພາກພື້ນນີ້ຍັງບົ່ມຊ້ອນບາງປັດໄຈທີ່ອາດສາມາດສ້າງໃຫ້ມີສະພາບ ຂາດຄວາມສະຫງົບປົກກະຕິ.

ໃນການພົວພັນສາກົນ, ໄດ້ມີ ແລະ ພວມມີ**ບັນດາທ່າອ່ຽງຕົ້ນ ຕໍ**ພົ້ນເດັ່ນຂຶ້ນດັ່ງນີ້:

- ສັນຕິພາບ, ສະຖຽນລະພາບ ແລະ ການຮ່ວມມືເພື່ອພັດທະນານັບ ມື້ນັບກາຍເປັນສິ່ງຮຽກຮ້ອງຕ້ອງການອັນເຄັ່ງຮ້ອນຂອງ ບາງ ຊາດຢູ່ໃນ ໂລກ. ປະເທດຕ່າງໆພວມໃຫ້ບູລິມະສິດຕໍ່ການພັດທະນາເສດຖະກິດ, ຖືເອົາການພັດທະນາເສດຖະກິດ ມີ ຄວາມໝາຍຕັດສິນ ສຳ ລັບ ການ ເພີ່ມ ທະ ວີ ກຳ ລັງ ແຮງ ສັງ ລວມ ຂອງ ຊາດ.

- ບັນດາປະເທດບໍ່ວ່າໃຫຍ່ຫລືນ້ອຍລ້ວນແລ້ວ ໄດ້ ເຂົ້າ ຮ່ວມ ຂະ ບວນ

ວິວັດແຫ່ງການຮ່ວມມື ແລະ ຮ່ວມສຳພັນໃນພາກພື້ນ, ຮ່ວມສຳພັນໃນ ສາກົນໃນດ້ານເສດຖະກິດ, ການຄ້າ ແລະ ຂົງເຂດເຄື່ອນໄຫວອື່ນໆ. ການຮ່ວມມືນັບມື້ນັບເພີ່ມຂຶ້ນແຕ່ການແຂ່ງຂັນກໍ່ຮຸນແຮງຂ້ຽວຂາດທີ່ ສຸດ.

- ປະຊາຊາດຕ່າງໆກໍ່ມີການເຊີດຊູສະຕິເອກະລາດເປັນເຈົ້າຕົນ ເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ຕໍ່ສູ້ຕ້ານແບບບ່ຽງການ ແລະ ການແຊກແຊງຂອງປະເທດນອກ, ປົກປັກຮັກສາເອກະລາດອະທິປະໄຕ ແລະ ວັດທະນະທຳຂອງຊາດ.

- ບັນດາປະເທດສັງຄົມນິຍົມ, ບັນດາພັກກອມມູນິດ ແລະ ກຳມະ ກອນ, ບັນດາກຳລັງປະຕິວັດ ແລະ ກ້າວໜ້າໃນໂລກຕໍ່ສູ້ຢ່າງໜຽວ ແໜ້ນເພື່ອສັນຕິພາບ, ເອກະລາດແຫ່ງຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າທາງສັງຄົມ.

- ບັນດາປະເທດທີ່ມີລະບອບການເມືອງ-ສັງຄົມແຕກຕ່າງກັນທັງ ຮ່ວມມືທັງຕໍ່ສູ້ເພື່ອຢືນຍົງຄົງຕົວນຳກັນ ໂດຍສັນຕິພາບ.

ບັນດາຈຸດພິເສດ ແລະ ທ່າອ່ຽງດັ່ງກ່າວມານັ້ນໄດ້ເຮັດໃຫ້ການພົວ ພັນສາກົນ ແລະ ນະໂຍບາຍການຕ່າງປະເທດຂອງບັນດາປະເທດມີລັກ ສະນະຫລາຍຝ່າຍ, ຫລາຍຮູບແບບກຳເນີດເກີດຂຶ້ນ.

ສະພາບການຂອງໂລກ ແລະ ພາກພື້ນໄດ້ກະທົບຢ່າງເລິກເຊິ່ງໃສ່ ທຸກດ້ານຊີວິດສັງຄົມຢູ່ໃນປະເທດເຮົາ, ສ້າງບັນດາຂໍ້ສະດວກແຕ່ພ້ອມ

ນັ້ນມັນໄດ້ສ້າງໃຫ້ມີສິ່ງທ້າທາຍຕ່າງໆອັນໃຫຍ່ໂຕອີກດ້ວຍ.

2 - ການລະໂອກາດ ແລະ ການທ້າທາຍ.

ຜົນສຳເລັດຕ່າງໆ ຂອງການປ່ຽນແປງໃໝ່ໄດ້ສ້າງ ແລະ ພວມສ້າງທ່ວງທ່າ ແລະ ກຳລັງແຮງໃໝ່ຢູ່ທັງພາຍໃນກໍຄືຢູ່ພາຍນອກເພື່ອໃຫ້ພວກເຮົາກ້າວເຂົ້າສູ່ໄລລະຍະຂະຫຍາຍຕົວໃໝ່. ຫລາຍປະຖົມປັດໄຈອັນຈຳເປັນໃຫ້ແກ່ການຫັນເປັນອຸດສະຫະກຳ, ຫັນເປັນທັນສະໄໝໄດ້ປະກົດຕົວຂຶ້ນ. ການພົວພັນລະຫວ່າງປະເທດເຮົາກັບບັນດາປະເທດຢູ່ໃນໂລກໄດ້ເປີດກວ້າງກວ່າເວລາໃດໝົດ. ຄວາມສາມາດໃນການປົກປັກຮັກສາເອກະລາດເປັນເຈົ້າຕົນເອງຢ່າງໝັ້ນຄົງ ແລະ ການຮ່ວມຕົວເຂົ້າວົງຄະນາຍາດໂລກໄດ້ເພີ່ມຂຶ້ນ. ສິ່ງດັ່ງກ່າວແມ່ນການລະໂອກາດອັນໃຫຍ່ໂຕ.

ແຕ່ວ່າໄພຂົ່ມຂູ່ສີ່ປະການທີ່ກອງປະຊຸມຜູ້ແທນທົ່ວປະເທດລະຫວ່າງກາງອາຍຸການ (ເດືອນມັງກອນ 1994) ໄດ້ຊີ້ອອກນັ້ນຮອດປະຈຸບັນນີ້ຍັງເປັນບັນດາຂໍ້ທ້າທາຍອັນໃຫຍ່ໂຕຂອງພວກເຮົາຢູ່. ໄພຂົ່ມຂູ່ດັ່ງກ່າວມີສາຍພົວພັນກະທົບຊຶ່ງກັນ ແລະ ກັນ ແລະ ລ້ວນແລ້ວເປັນສິ່ງອັນຕະລາຍທີ່ບໍ່ອາດຖືເບົາອັນໃດອັນໜຶ່ງໄດ້.

ໄພຂົ່ມຂູ່ແຫ່ງການຖອຍຫລັງຢ່າງໄກທາງດ້ານເສດຖະກິດທຽບກັບຫລາຍປະເທດຢູ່ໃນພາກພື້ນຍັງແມ່ນການທ້າທາຍໃຫຍ່ໂຕ ແລະ ຮຸນແຮງ ຍ້ອນວ່າຈຸດເລີ່ມຂອງພວກເຮົາຕ່ຳໂພດ ແລະ ຕ້ອງກ້າວຂຶ້ນຢູ່ໃນສະ

ພາບແວດລ້ອມທີ່ມີການແຂ່ງຂັນເປັນໄປຢ່າງຮ້ອນຮາດ. ບັນດາອົດທີ ກຳລັງຍັງສືບຕໍ່ປະຕິບັດກົນອຸບາຍຫັນປ່ຽນໂດຍສັນຕິ, ນຳໃຊ້ໃບໄພ້ "ປະ ຊາທິປະໄຕ", "ສິດທິມະນຸດ" ເພື່ອແຊກແຊງເຂົ້າກິດຈະການພາຍໃນ ຂອງປະເທດເຮົາ. ສະພາບການຢູ່ໃນພາກພື້ນອາຊີ-ປາຊີຟິກ ແລະ ເຂດທະເລຕາເວັນອອກຍັງມີການຜັນແປຢ່າງສັບສົນ. ການຜິກຕົວ ອອກຈາກເສັ້ນທາງສັງຄົມນິຍົມກໍ່ຄືພະຍາດອາດຍາສິດ, ສໍ້ລາດບັງ ຫລວງພວມກາຍເປັນໄພອັນຢູ່ອັນໃຫຍ່ໂຕ. ພະຍາດອາດຍາສິດ, ສໍ້ລາດ ບັງຫລວງ ແລະ ເສຍຫາດຂາດຄຸນຢູ່ໃນພາກສ່ວນໜຶ່ງຂອງຖັນແຖວ ພະນັກງານ, ສະມາຊິກພັກໄດ້ເຮັດໃຫ້ກົງຈັກຂອງພັກ ແລະ ລັດອ່ອນ ເພຍລົງ, ຄວາມເຊື່ອໝັ້ນຂອງປະຊາຊົນທີ່ມີຕໍ່ພັກ, ຕໍ່ລະບອບໃໝ່ພວມ ຖືກຫລຸ້ຍຫ້ຽນໄປ; ແຜນນະໂຍບາຍ ແລະ ນະໂຍບາຍຕ່າງໆຂອງພັກ, ລັດຖືກປະຕິບັດຢ່າງຜິດເຂວນຳໄປສູ່ການຜິກຕົວອອກຈາກທິດທາງ; ສິ່ງດັ່ງກ່າວແມ່ນແຜ່ນດິນອັນສະດວກໃຫ້ແກ່ການຫັນປ່ຽນໂດຍສັນຕິ ເກີດໜໍ່ກໍ່ຕົວຂຶ້ນ.

ຂໍ້ສະດວກ ແລະ ຄວາມຫຍຸ້ງຍາກ, ກາລະໂອກາດ ແລະ ໄພອັ່ນຢູ່ ໄດ້ສະຫລັບສັບຊ້ອນນຳກັນ. ພວກເຮົາຕ້ອງເປັນເຈົ້າການກຳເອົາກາ ລະໂອກາດ, ປັ້ນຂຶ້ນເພື່ອພັດທະນາຕົນເອງຢ່າງໄວວາ ແລະ ໜັກ ແໜ້ນ, ສ້າງທ່າ ແລະ ກຳລັງແຮງໃໝ່; ພ້ອມນັ້ນກໍ່ຕ້ອງມີຄວາມສ່ອງ ໃສຢູ່ສະເໝີ, ເດັດດ່ຽວກຳຈັດປັດເປົ່າ ແລະ ແກ້ໄຂໄພອັ່ນຢູ່ຕ່າງໆ, ນັບທັງບັນດາໄພອັ່ນຢູ່ທີ່ເກີດຂຶ້ນໃໝ່, ຮັບປະກັນໃຫ້ການພັດທະນາປະ ເທດຖືກກັບທິດທາງທີ່ວາງອອກ.

II - ຈຸດໝາຍ

ໂດຍເລີ່ມຈາກສະພາບການທີ່ໄດ້ກ່າວມາຂ້າງເທິງນັ້ນ ແລະ ອີງໃສ່ໂຄງການການເມືອງຂອງພັກ, ຕ້ອງ**ສືບຕໍ່ກໍາແໜ້ນສອງໜ້າ ທີ່ຍຸດທະສາດກໍ່ສ້າງສັງຄົມນິຍົມ ແລະ ປົກປັກຮັກສາປະ ເທດຊາດ, ຊຸກຍູ້ການຫັນເປັນອຸດສາຫະກໍາ, ຫັນເປັນທັນສະ ໄໝຢ່າງແຂງແຮງ.**

ຈຸດໝາຍຂອງການຫັນເປັນອຸດສາຫະກໍາ, ຫັນເປັນທັນ ສະໄໝແມ່ນສ້າງປະເທດເຮົາໃຫ້ກາຍເປັນປະເທດອຸດສາ ຫະກໍາທີ່ມີພື້ນຖານວັດຖຸ-ເຕັກນິກທັນສະໄໝ, ມີໂຄງປະ ກອບເສດຖະກິດອັນສົມເຫດສົມຜົນ, ຄວາມພົວພັນແຫ່ງການ ຜະລິດກ້າວໜ້າ, ສອດຄ່ອງກັບລະດັບຂະຫຍາຍຕົວຂອງ ກໍາລັງແຫ່ງການຜະລິດ, ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈມີລະດັບສູງ, ການປ້ອງກັນຊາດ, ປ້ອງກັນ ຄວາມສະຫງົບໝັກແໜ້ນ; ປະຊາຊົນຮັ່ງມີ, ປະເທດຊາດ ເຂັ້ມແຂງ; ສັງຄົມມີຄວາມຍຸດຕິທໍາ, ສີວິໄລ.

ແຕ່ນີ້ຮອດປີ 2020, ຕ້ອງອອກແຮງສູ້ຊົນສ້າງປະເທດ ເຮົາໃຫ້ກາຍເປັນປະເທດອຸດສາຫະກໍາໂດຍພື້ນຖານ.

ຮອດເວລານັ້ນ *ກໍາລັງແຫ່ງການຜະລິດ*ຈະບັນລຸ ໄດ້ລະດັບທັນສະ ໄໝພໍສົມຄວນ, ແຮງງານແບບຫັດຖະກໍາສ່ວນຫລວງຫລາຍໄດ້ປ່ຽນ ແທນດ້ວຍແຮງງານໃຊ້ເຄື່ອງຈັກໃນການຜະລິດ, ການຫັນເປັນໄຟຟ້າ

ທົ່ວປະເທດໂດຍພື້ນຖານໄດ້ຮັບການປະຕິບັດໃນທົ່ວປະເທດ, ສະມັດຖະພາບຂອງງານສັງຄົມກໍ່ຄືປະສິດທິຜົນຂອງການຜະລິດທຸລະກິດທຽບກັບປະຈຸບັນກໍ່ສູງກວ່າຫລາຍເທົ່າຍອດຜະລິດຕະພັນພາຍໃນ (GDP) ທຽບກັບປີ 1990 ຈະເພີ່ມຂຶ້ນທົບ 8 ຫາ 10 ເທົ່າ. ຢູ່ໃນໂຄງປະກອບເສດຖະກິດ, ເຖິງວ່າກະສິກຳໄດ້ສືບຕໍ່ຂະຫຍາຍຕົວຢ່າງແຂງແຮງ, ແຕ່ອຸດສາຫະກຳ ແລະ ການບໍລິການຈະກວມເອົາອັດຕາສ່ວນສູງຢູ່ໃນຍອດຜະລິດຕະພັນພາຍໃນ (GDP) ແລະຢູ່ໃນແຮງງານສັງຄົມ.

ວິທະຍາສາດທຳມະຊາດ ແລະ ເຕັກໂນໂລຍີມີຄວາມສາມາດຮັບເອົາ ແລະ ໝຸນໃຊ້ໄດ້ບັນດາຜົນງານອັນໃໝ່ອ່ຽມຂອງການປະຕິວັດທາງດ້ານວິທະຍາສາດ ແລະ ເຕັກໂນໂລຍີ. ວິທະຍາສາດສັງຄົມ ແລະ ວັດທະນະທຳມະນຸດສະຍະຊາດມີຄວາມສາມາດເປັນພື້ນຖານໃຫ້ການກໍ່ສ້າງຮູບຖານກ່ຽວກັບສະຕິສັງຄົມແບບໃໝ່. ການຂະຫຍາຍຕົວຂອງວິທະຍາສາດຈະມີຄວາມສາມາດຢ່າງພຽງພໍເພື່ອສະໜອງດ້ານທິດສະດີຊຶ່ງເປັນຫລັກຖານໃຫ້ການກຳນົດບັນດານະໂຍບາຍ, ຍຸດທະສາດ ແລະ ແຜນກຳນົດແຫ່ງການພັດທະນາປະເທດຊາດ.

ໃນດ້ານການພົວພັນແຫ່ງການຜະລິດ, ລະບອບກຳມະສິດ, ກົນໄກຄຸ້ມຄອງ ແລະ ລະບອບແຈກຢາຍຈະຕິດແໜ້ນນຳກັນ, ເສີມຂະຫຍາຍໄດ້ບັນດາແຫລ່ງກຳລັງແຮງງານ, ສ້າງໄດ້ກຳລັງໜູນຢ່າງແຂງແຮງເພື່ອກະຕຸກຊຸກຍູ້ເສດຖະກິດຂະຫຍາຍຕົວ, ປະຕິບັດຄວາມຍຸດຕິທຳສັງຄົມຢ່າງດີ.

ເສດຖະກິດແຫ່ງລັດປະຕິບັດບົດບາດເປັນເຈົ້າພາຫາງຢ່າງດີ ແລະ ພ້ອມກັບເສດຖະກິດລວມໝູ່ສະຫະກອນຈະກາຍເປັນພື້ນຖານຂອງເສດຖະກິດແຫ່ງຊາດ. ເສດຖະກິດເອກະເທດ, ເຈົ້າຊັບນ້ອຍ, ເສດຖະກິດທຶນນິຍົມເອກະຊົນກວມເອົາອັດຕາສ່ວນພໍສົມຄວນ. ເສດຖະກິດທຶນນິຍົມແຫ່ງລັດທີ່ເຄື່ອນໄຫວດ້ວຍບັນດາຮູບການແຕກຕ່າງກັນຈະຄົງຕົວຢ່າງແຜ່ຫລາຍ.

ສຳລັບຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ວັດທະນະທຳ, ປະຊາຊົນຈະມີກິນມີຢູ່ຢ່າງຜຽງພໍ, ມີເຮືອນຢູ່ອາໄສຢ່າງດີພໍຄວນ, ມີເງື່ອນໄຂອັນສະດວກໃນການສັນຈອນໄປມາຫາສູ່ກັນ, ທາງດ້ານຮ່ຳຮຽນ, ປິ່ນປົວພະຍາດໂລຄາ; ໄດ້ຊົມໃຊ້ທາງດ້ານວັດທະນະທຳດ້ວຍລະດັບດີພໍຄວນ. ການພົວພັນສັງຄົມມີຄວາມສົດໃສຈົບງາມ, ມີແບບແຜນດຳລົງຊີວິດຢ່າງສີວິໄລ, ຄອບຄົວສົມບູນພຸນສຸກ.

ຫາກວ່າເຮັດໄດ້ບັນດາສິ່ງດັ່ງກ່າວມາຂ້າງເທິງນັ້ນຈະເປັນບາດກ້າວຄືບໜ້າຢ່າງໃຫຍ່ໂຕບົນເສັ້ນທາງຂ້າມຜ່ານກ້າວຂຶ້ນສັງຄົມນິຍົມຢູ່ປະເທດເຮົາ.

ໄລຍະແຕ່ນີ້ຮອດປີ 2000 ແມ່ນບາດກ້າວສຳຄັນທີ່ສຸດຂອງສະໄໝແຫ່ງການພັດທະນາໃໝ່ ຄືຊຸກຍູ້ການຫັນປະເທດເປັນອຸດສາຫະກຳ, ເປັນທັນສະໄໝຢ່າງແຂງແຮງ. ໜ້າທີ່ຂອງປະຊາຊົນເຮົາແມ່ນສຸມທຸກກຳລັງ, ຍາດເອົາການະໂອກາດ, ຜ່ານຜ່າການທົດສອບ, ຍູ້ແຮງພາລະກິດປ່ຽນ

ແປງໃຫມ່ຢ່າງຮອບດ້ານ ແລະ ຄົບຊຸດ, ສືບຕໍ່ຂະຫຍາຍເສດ ຖະກິດມີຫລາຍພາກສ່ວນທີ່ເຄື່ອນໄຫວຕາມກົນໄກຕະຫລາດ ໂດຍມີການຄຸ້ມຄອງຂອງລັດຕາມກຳນົດທິດສັງຄົມນິຍົມ, ສູ້ ຊົນບັນລຸ ແລະ ລົ່ນກາຍຈຸດຫມາຍທີ່ໄດ້ກຳນົດຢູ ໃນແຜນ ຍຸດທະສາດຮັກສາສະຖຽຍລະພາບ ແລະ ພັດທະນາເສດຖະ ກິດ-ສັງຄົມຮອດປີ 2000: ເສດຖະກິດຂະຫຍາຍຕົວໄວວາ, ມີປະສິດທິຜົນສູງ ແລະ ຫນັກແຫນ້ນໄປຄຽງຄູ່ກັບການແກ້ ໄຂບັນດາບັນຫາອັນເຄ່ັງຮ້ອນທາງດ້ານສັງຄົມ, ຮັບປະກັນ ການປ້ອງກັນຄວາມສະຫງົບ ແລະ ປ້ອງກັນຊາດ, ຊີວິດການ ເປັນຢູ ຂອງປະຊາຊົນໄດ້ຮັບການປົ່ອແປງຢ່າງດີ, ການສະ ສົມຈາກພາຍໃນເສດຖະກິດເພີ່ມຂ້ຶນ, ສ້າງປະຖົມປັດໄຈອັນ ຫນັກແຫນ້ນໃຫ້ບາດກ້າວຂະຫຍາຍຕົວສູງກວ່າເກ່ົາໃນໄລ ຍະຕົ້ນສະຕະວັດຕ່ໍຫນ້ານ້ີ.

- ຮອດປີ 2000, ທຽບໃສ່ປີ 1990 ຍອດຜະລິດຕະພັນພາຍໃນ (GDP) ສະເລ່ຍຕາມຫົວຄົນຈະເພີ່ມຂ້ຶນທົບສອງເທ່ົາ. GDP ສະເລ່ຍ ໃນແຕ່ລະປີຈະເພີ່ມຂ້ຶນປະມານ ແຕ່ 9-10%, ການຜະລິດກະສິກຳ-ປ່າ ໄມ້ ແລະ ການປະມົງເພີ່ມຂ້ຶນປະມານ 4,5-5%, ອຸດສາຫະກຳ 14-15%, ການບໍລິການ 12-13%, ການຂາອອກປະມານ 28%. ອັດຕາສ່ວນລົງທຶນ/GDP ປະມານ 30%. ປີ 2000, ກະສິກຳກວມ ເອົາປະມານ 19-20%, ອຸດສາຫະກຳ ແລະ ກໍ່ສ້າງ 34-35%, ການ ບໍລິການ 45-46% ຂອງ GDP.

ຂະຫຍາຍ ແລະ ເສີມຂະຫຍາຍກຳລັງແຮງບົ່ມຊ້ອນຂອງວິທະຍາ ສາດ ແລະ ເຕັກໂນໂລຍີໃຫ້ດີທີ່ສຸດ; ເລືອກເຟັ້ນ ແລະ ເປັນເຈົ້າຕໍ່ບັນ ດາຮູບປະເພດເຕັກໂນໂລຍີທີ່ຈະນຳເຂົ້າປະເທດ ແລະ ຕັ້ງໜ້າໃນການ ກະກຽມໃຫ້ບາດກ້າວຂະຫຍາຍຕົວສູງກວ່າເກົ່າໃນໄລຍະຕໍ່ໜ້າ. ຄວາມໄວໃນການປ່ຽນແປງໃໝ່ທາງດ້ານເຕັກໂນໂລຍີພັນລຸ 10% ຂຶ້ນໄປຕໍ່ປີ.

ປ່ຽນແປງໃໝ່ໂດຍພື້ນຖານທາງດ້ານການຈັດຕັ້ງ, ຄຸ້ມຄອງ ແລະ ຍົກສູງປະສິດທິຜົນຂອງຂົງເຂດລັດວິສາຫະກິດ. ປ່ຽນແປງໃໝ່ ແລະ ຂະຫຍາຍບັນດາຮູບການເສດຖະກິດແບບຮ່ວມມືຢ່າງຫລາຍຮູບຫລາຍ ແບບ, ແຕ່ລະດັບຕ່ຳຮອດລະດັບສູງ, ໃນນັ້ນຖືເອົາບັນດາໜ່ວຍສະຫະ ກອນເປັນຫລັກແຫລ່ງ, ແກ່ນສານ. ຂະຫຍາຍບັນດາຮູບການຮ່ວມທຸ ລະກິດຮ່ວມສຳພັນໂດຍກົງລະຫວ່າງບັນດາລັດວິສາຫະກິດນຳກັນ, ລະ ຫວ່າງພາກສ່ວນເສດຖະກິດຂອງລັດກັບພາກສ່ວນເສດຖະກິດລວມໝູ່, ກັບເສດຖະກິດທຶນນິຍົມເອກະຊົນ, ເອກະເທດ ແລະ ກັບບັນດາບໍລິສັດ ຕ່າງປະເທດ.

- ສ້າງວຽກເຮັດງານທຳໃຫ້ຫລາຍກວ່າຈຳນວນແຮງງານທີ່ເພີ່ມ ຂຶ້ນໃນແຕ່ລະປີ, ເຮັດໃຫ້ໄພວ່າງງານຫລຸດໜ້ອຍລົງຢ່າງເທົ່າທີ່ຄວນ; ລົບລ້າງຄວາມອຶດຫິວ, ຫລຸດຜ່ອນຄວາມທຸກຈົນ. ປ່ຽນແປງເງື່ອນໄຂການ ຫົນຢູ, ຮ່ຳຮຽນ, ປິ່ນປົວພະຍາດ, ສັນຈອນໄປມາໃຫ້ດີຂຶ້ນ, ຍົກສູງລະດັບ ຊົມໃຊ້ທາງດ້ານວັດທະນະທຳ ຂອງປະຊາຊົນ, ເອົາໃຈໃສ່ເປັນພິເສດ

ຕໍ່ບັນດາເຂດຊົນນະບົດ, ເຂດພູດອຍ. ຮອດປີ 2000, ລະດັບເພີ່ມຂຶ້ນ ຂອງຜົນລະເມືອງບໍ່ເກີນ 1,8%. ແກ້ໄຂພາວະການຂາດທາດບຳລຸງ ລ້ຽງຊີບ ຢ່າງໜັກຕໍ່ເດັກນ້ອຍມີອາຍຸຕ່ຳກວ່າ 5 ປີ. ລົບລ້າງຄວາມ ກີດໜັ້ງສີໃຫ້ຈຳນວນຄົນຢູ່ໃນໄວອາຍຸ ແຕ່ 15-35 ປີ, ເຜີຍແຜ່ການ ສຶກສາຊັ້ນປະຖົມແບບບັງຄັບ, ຍົກມາດຕາສ່ວນແຮງງານໄດ້ຮັບການ ກໍ່ສ້າງວິຊາຊີບໃຫ້ເພີ່ມຂຶ້ນ 22-25%. ສະກັດກັ້ນສະພາບສິ່ງແວດລ້ອມ ຖືກເປື້ອນເປ. ເຮັດໃຫ້ການຫຍໍ້ທໍ ແລະ ໄພສັງຄົມຕ່າງໆລະຖອຍໄປ.

- ຮັກສາສະຖຽນລະພາບການເມືອງ ແລະ ກຳມົດທິດສັງຄົມນິຍົມ ຢ່າງໜັ້ນຄົງ ຢູ່ໃນຂະບວນວິວັດແຫ່ງການພັດທະນາປະເທດ. ສ້າງໄດ້ ການຫັນປ່ຽນໂດຍພື້ນຖານໃນການປ່ຽນແປງໃໝ່ ແລະ ປັບປຸງບູລະ ນະພັກ, ເຊີດຊູບົດບາດການນຳພາຂອງພັກ. ສືບຕໍ່ກໍ່ສ້າງ ແລະ ບູລະ ນະລັດໃຫ້ສົມບູນ, ຈຸດໃຈກາງແມ່ນປະຕິຮູບທາງດ້ານບໍລິຫານ, ຍົກສູງ ຄວາມສັກສິດ ແລະ ປະສິດທິຜົນການເຄື່ອນໄຫວຂອງກົງຈັກລັດ; ເປີດ ກວ້າງປະຊາທິປະໄຕ, ສ້າງໃຫ້ມີຄວາມເປັນລະບຽບວິໄນ, ຮັບປະກັນ ຄວາມເປັນລະບຽບຮຽບຮ້ອຍຄວາມປອດໄພຢູ່ໃນສັງຄົມ. ເພີ່ມທະວີມະ ຫາສາມັກຄີທົ່ວປວງຊົນເປັນປຶກແຜ່ນ.

ປັບປຸງການປ້ອງກັນຊາດ, ຮັກສາຄວາມສະຫງົບຮຽບຮ້ອຍຢ່າງ ໜັ້ນຄົງ.

ເປີດກວ້າງການພົວພັນກັບຕ່າງປະເທດ, ເຂົ້າຮ່ວມອົງການຈັດຕັ້ງ ສາກົນ ແລະ ພາກພື້ນຢ່າງເປັນເຈົ້າການ, ປັບປຸງ ແລະ ເຊີດຊູບົດບາດ

ຂອງປະເທດເຮົາຢູ່ໃນເວທີສາກົນ.

ພາກທີສາມ

ທິດທາງຂະຫຍາຍບັນດາຂົງເຂດຕົ້ນຕໍ

I -ຂະຫຍາຍ ແລະ ຫັນປ່ຽນໂຄງປະກອບເສດຖະກິດຕາມທິດຫັນເປັນອຸດສາຫະກຳ, ຫັນເປັນຫັນສະໄໝ.

ເຊື່ອມຊຶມບັນດາຫັດສະນະກ່ຽວກັບການຫັນເປັນອຸດສາຫະກຳ, ຫັນເປັນຫັນສະໄໝດັ່ງຕໍ່ໄປນີ້:

- ຍຶດໝັ້ນເອກະລາດເປັນເຈົ້າຕົນເອງໄປຄຽງຄູ່ກັບເປີດກວ້າງການຮ່ວມມືສາກົນ, ຫັນການພົວພັນກັບຕ່າງປະເທດໃຫ້ກາຍເປັນການພົວພັນແບບຫລາຍຝ່າຍ, ຫລາຍຮູບແບບ. ອີງໃສ່ກຳລັງພາຍໃນເປັນຕົ້ນຕໍໄປຄຽງຄູ່ກັບການຍາດແຍ່ງເອົາການຊ່ວຍໜູນຈາກກຳລັງພາຍນອກຢ່າງຫລາຍທີ່ສຸດ. ກໍ່ສ້າງເສດຖະກິດເປີດ. ຮ່ວມຕົວເຂົ້າພາກພື້ນ ແລະ ສາກົນ; ຫັນທິດເຂົ້າສູ່ການຂາອອກຢ່າງແຂງແຮງ, ພ້ອມນັ້ນຕ້ອງປ່ຽນແທນການຂາເຂົ້າດ້ວຍການນຳໃຊ້ຜະລິດຕະພັນພາຍໃນຢ່າງມີປະສິດທິຜົນ.

- ການຫັນເປັນອຸດສາຫະກຳ, ຫັນເປັນຫັນສະໄໝ ແມ່ນພາລະກິດຂອງທົ່ວປວງຊົນ, ຂອງທຸກໆພາກສ່ວນເສດຖະກິດ, ໃນນັ້ນເສດຖະກິດ

ຂອງລັດເປັນເຈົ້າພາຫາງ.

- ເອົາການເສີມຂະຫຍາຍແຫລ່ງກຳລັງມະນຸດເປັນປັດໄຈອັນພື້ນຖານເພື່ອພັດທະນາຢ່າງໄວວາ ແລະ ໜັກແໜ້ນ. ລະດົມທົ່ວປວງຊົນປະຕິບັດການປະຢັດເພື່ອສ້າງສາພັດທະນາປະເທດ, ເພີ່ມການສະສົມໃຫ້ຫລາຍຂຶ້ນຢ່າງບໍ່ຢຸດຢ່ອນເພື່ອລົງທຶນໃຫ້ການພັດທະນາ. ພັດທະນາເສດຖະກິດຕ້ອງຕິດພັນກັບການປ່ຽນແປງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ຂະຫຍາຍວັດທະນະທຳ, ການສຶກສາ, ປະຕິບັດການຍຸດຕິທຳ ແລະ ກ້າວໜ້າໃນສັງຄົມ, ປົກປັກຮັກສາສິ່ງແວດລ້ອມ.

- ວິທະຍາສາດ ແລະ ເຕັກໂນໂລຍີແມ່ນກຳລັງໜູນຂອງການຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝ. ສົມທົບເຕັກໂນໂລຍີອັນມີມູນເຊື້ອມາແລ້ວກັບເຕັກໂນໂລຍີທັນສະໄໝ; ຍາດແຍ່ງນຳເອົາບັນດາຈຸດທີ່ມີຄວາມໝາຍຕັດສິນກ້າວເຂົ້າການທັນສະໄໝໂດຍໄວ.

- ເອົາປະສິດທິຜົນທາງດ້ານເສດຖະກິດ- ສັງຄົມເປັນມາດຕະຖານຕົ້ນຕໍເພື່ອກຳນົດແຜນແກ້ພັດທະນາ, ເລືອກເຟັ້ນເອົາບັນດາໂຄງການລົງທຶນ ແລະ ເຕັກໂນໂລຍີ. ລົງທຶນຕາມລວງເລິກເພື່ອຂຸດຄົ້ນຄວາມສາມາດຂອງການຜະລິດ ທີ່ມີໃນປະຈຸບັນໃຫ້ຫລາຍທີ່ສຸດ. ໃນການພັດທະນາໃໝ່ຕ້ອງໃຫ້ບູລິມະສິດຕໍ່ຂະໜາດກາງ ແລະ ຂະໜາດນ້ອຍ, ໃຫ້ເຕັກໂນໂລຍີທີ່ກ້າວໜ້າ, ສ້າງວຽກເຮັດງານທຳໄດ້ຫລາຍ, ເກັບກູ້ທຶນຮອນໄດ້ໄວ; ພ້ອມນັ້ນຕ້ອງກໍ່ສ້າງກິດຈະການຂະໜາດໃຫຍ່ຈຳນວນໜຶ່ງທີ່ມີຄວາມຕ້ອງການຢ່າງແທ້ຈິງ ແລະ ມີປະສິດທິຜົນ.

ສ້າງໃຫ້ໄດ້ບັນດາປາຍແຫລມໃນແຕ່ລະບາດກ້າວຂະຫຍາຍຕົວ. ລວມ ສູນແຫລ່ງກຳລັງແຮງໃຫ້ບັນດາຂົງເຂດ, ບັນດາທ້ອງຖິ່ນທີ່ເປັນຈຸດສຸມ ຢ່າງເທົ່າທີ່ຄວນ; ພ້ອມນັ້ນຕ້ອງເອົາໃຈໃສ່ຕອບສະໜອງຄວາມຕ້ອງ ການຂອງທຸກໆເຂດໃນທົ່ວປະເທດ; ມີນະໂຍບາຍຊ່ວຍຊູຍູ້ໜູນໃຫ້ບັນ ດາເຂດທີ່ມີຄວາມຫຍຸ້ງຍາກເພື່ອສ້າງເງື່ອນໄຂໃຫ້ບັນດາເຂດຂະ ຫຍາຍຕົວພ້ອມພຽງກັນ.

- ປະສານສົມທົບເສດຖະກິດກັບການປ້ອງກັນຊາດ- ປ້ອງກັນຄວາມ ສະຫງົບ.

ເນື້ອໃນຟື້ນຖານຂອງການຫັນເປັນອຸດສາຫະກຳ, ຫັນເປັນ ທັນສະໄໝໃນຊຸມປີຕໍ່ໜ້າຂອງທົດສະວັດທີ 90 ຄືດັ່ງນີ້:

ຖືເອົາການຫັນເປັນອຸດສາຫະກຳ ແລະ ຫັນເປັນທັນສະໄໝຢູ່ໃນຂົງ ເຂດກະສິກຳ ແລະ ຊົນນະບົດເປັນສິ່ງສຳຄັນພິເສດ; ຂະຫຍາຍກະສິກຳ, ການປ່າໄມ້, ການປະມົງຢ່າງຮອບດ້ານ ໂດຍຕິດແໜ້ນກັບການຂະ ຫຍາຍອຸດສາຫະກຳປຸງແຕ່ງກະເສດຕະກຳ, ເຄື່ອງປ່າຂອງດົງ, ສິນ ນ້ຳ; ຂະຫຍາຍອຸດສາຫະກຳຜະລິດເຄື່ອງໃຊ້ສອຍ ແລະ ສິນຄ້າຂາອອກ. ຍົກລະດັບຄຸນນະພາບ, ດັດສ້າງ, ເປີດກວ້າງ ແລະ ກໍ່ສ້າງໂຄງຮ່າງ ເສດຖະກິດຢ່າງມີຈຸດສຸມເຊິ່ງກ່ອນອື່ນໝົດແມ່ນຢູ່ໃນບັນດາຂອດທີ່ມີ ຄວາມຕິດຂັດ ແລະ ອ່ອນນ້ອຍກວ່າໝູ່ທີ່ພວມກີດກັ້ນການພັດທະນາ ເສດຖະກິດ-ສັງຄົມ. ກໍ່ສ້າງກິດຈະການອຸດສາຫະກຳໜັກຈຳນວນໜຶ່ງ ທີ່ມີຄວາມສຳຄັນ ແລະ ມີຄວາມຕ້ອງການທີ່ສຸດຢ່າງມີການເລືອກເຟັ້ນ,

ມີເງື່ອນໄຂທາງດ້ານທຶນຮອນ, ເຕັກໂນໂລຍີ, ຕະຫລາດ, ເສີມຂະຫຍາຍ ຄຸນປະໂຫຍດໄດ້ຢ່າງໄວວາ ແລະ ມີປະສິດທິຜົນສູງ. ເປີດກວ້າງຂະ ແໜງການຄ້າ, ທ່ອງທ່ຽວ, ການບໍລິການ. ຊຸກຍູ້ບັນດາການເຄື່ອນ ໄຫວຂອງການພົວພັນເສດຖະກິດກັບຕ່າງປະເທດຢ່າງແຂງແຮງ. ຄ່ອຍໆສ້າງຂະແໜງປາຍແຫລມຈຳນວນຫນຶ່ງໃຫ້ເປັນຕົ້ນເປັນຕົວ ເຊັ່ນຂະແໜງປຸງແຕ່ງກະເສດຕະກຳ, ເຄື່ອງປ່າຂອງດົງ, ສິນນ້ຳ, ຂະ ແໜງຂຸດຄົ້ນ ແລະ ປຸງແຕ່ງນ້ຳມັນ-ອາຍແກັດ, ຂະແໜງການກົນ ຈັກປະດິດອຸປະກອນເຄື່ອງຈັກ ອຸດສາຫະກຳເອເລກຕຣົງ ແລະ ເຕັກ ໂນໂລຍີທາງດ້ານສື່ສານ, ທ່ອງທ່ຽວ. ຂະຫຍາຍພາລະກິດການສຶກສາ ແລະ ກໍ່ສ້າງ, ວິທະຍາສາດ ແລະ ເຕັກໂນໂລຍີ.

1- ທັນເປັນອຸດສາຫະກຳ, ທັນເປັນທັນສະໄຫມໃນຂົງເຂດກະສິກຳ ແລະ ຊົນນະບົດ.

-ພັດທະນາກະສິກຳ, ການປ່າໄມ້, ການປະມົງຢ່າງຮອບດ້ານ; ສ້າງ ບັນດາເຂດລວມສູນປູກຝຶດສະເພາະໂດຍມີໂຄງປະກອບອັນສົມເຫັດສົມ ຜົນທາງດ້ານແນວພັນພືດ, ສັດລ້ຽງ, ມີຜະລິດຕະພັນເປັນສິນຄ້າດ້ວຍ ຈຳນວນຫລາຍ, ຄຸນນະພາບດີ, ຮັບປະກັນສະບຽງອາຫານໃຫ້ສັງຄົມ ຢ່າງປອດໄພ, ຕອບສະຫນອງຄວາມຕ້ອງການຂອງອຸດສາຫະກຳປຸງ ແຕ່ງ ແລະ ຂອງຕະຫລາດພາຍໃນກໍ່ຄືພາຍນອກ.

- ປະຕິບັດການທັນເປັນຊົນລະປະທານ, ທັນເປັນໄຟຟ້າ, ທັນເປັນກົນ

ຈັກ, ທັນເປັນຊີວະວິທະຍາ...

- ຂະຫຍາຍອຸດສາຫະກຳປຸງແຕ່ງກະເສດຕະພັນ, ເຄື່ອງປ່າຂອງດົງ, ສິນນ້ຳດ້ວຍເຕັກໂນໂລຍີນັບມື້ນັບສູງ ໂດຍຕິດແໜ້ນກັບແຫລ່ງວັດຖຸດິບ ແລະ ຮ່ວມສຳພັນກັບອຸດສາຫະກຳຢູ່ໃນຕົວເມືອງ.

- ຂະຫຍາຍບັນດາຂະແໜງວິຊາຊີບ, ໝູ່ບ້ານທີ່ມີອາຊີບມູນເຊື້ອ ແລະ ຂະແໜງອາຊີບເກີດໃໝ່ລວມມີຂະແໜງຫັດຖະກຳ, ອຸດສາຫະກຳນ້ອຍ, ອຸດສາຫະກຳຜະລິດເຄື່ອງໃຊ້ສອຍ, ສິນຄ້າຂາອອກ, ອຸດສາຫະກຳຂຸດຄົ້ນ ແລະ ປຸງແຕ່ງບັນດາແຫລ່ງວັດຖຸດິບທີ່ບໍ່ແມ່ນມາຈາກກະສິກຳ, ບັນດາຮູບການບໍລິການຮັບໃຊ້ການຜະລິດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ.

- ກໍ່ສ້າງໂຄງປະກອບໂຄງລ່າງທາງດ້ານເສດຖະກິດແລະ ສັງຄົມ. ສ້າງຊຸມນະບົດໃໝ່ມີຄວາມສີວິໄລ, ທັນສະໄໝເທື່ອລະກ້າວ.

ປະຕິບັດການມອບດິນ, ມອບປ່າໃຫ້ຄອບຄົວຊາວກະສິກອນໃຫ້ສຳເລັດໂດຍພື້ນຖານ. ດັດສົມການຈັດແບ່ງທີມຮອນ ແລະ ລະດົມແຫລ່ງທຶນຕ່າງໆເຂົ້າໃນການຂະຫຍາຍການຜະລິດກະສິກຳ, ການປ່າໄມ້, ການປະມົງ ແລະ ເສດຖະກິດຊຸມນະບົດ. ມີນະໂຍບາຍສົ່ງເສີມ ແລະ ຊ່ວຍຊູຊາວກະສິກອນໃນການກໍ່ສ້າງໂຄງປະກອບ ຊັ້ນລ່າງ, ມອບສົ່ງເຕັກໂນໂລຍີ, ແກ້ໄຂຄວາມຫຍຸ້ງຍາກທາງດ້ານທຶນຮອນ, ທາງດ້ານລາຄາວັດຖຸອຸປະກອນ ກະສິກຳ ແລະ ສິນຄ້າກະເສດຕະກຳ, ທາງດ້ານ

ຕະຫລາດຈຳໜ່າຍຜະລິດຕະພັນ...

2- ຂະຫຍາຍອຸດສາຫະກຳ: ຈັດບູລິມະສິດໃຫ້ບັນດາຂະແໜງປຸງແຕ່ງສະບຽງອາຫານ, ຜະລິດສິນຄ້າໃຊ້ສອຍ, ສິນຄ້າຂາອອກ, ເຕັກໂນໂລຢີເອເລັກຕຣ໋ງ ແລະ ເຕັກໂນໂລຢີ ສື່ສານ. ຂະຫຍາຍຝຶ້ນຖານອຸດສາຫະກຳໜັກຈຳນວນໜຶ່ງຢ່າງມີການເລືອກເຟັ້ນ(ເຊັ່ນ: ຜະລັ໋ງງານ-ເຊື້ອໄຟ, ວັດສະດຸກໍ່ສ້າງ, ກົນຈັກຜະລິດອຸປະກອນເຄື່ອງຈັກ, ຕໍ່ກຳປັ່ນ ແລະ ສ້ອມແປງກຳປັ່ນ, ຫຼໍ່ໂລຫະ, ທາດເຄມີ), ເຮັດໃຫ້ຄວາມສາມາດຜະລິດເພີ່ມຂຶ້ນສົມຄູ່ກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາເສດຖະກິດ, ຍົກສູງຄວາມສາມາດແຫ່ງຄວາມເປັນເອກະລາດ, ເປັນເຈົ້າຕົນເອງທາງດ້ານເສດຖະກິດ ແລະ ປ້ອງກັນຊາດ.

ປະສານສົມທົບຢ່າງໜັກແໜ້ນລະຫວ່າງເສດຖະກິດກັບການປ້ອງກັນຊາດ, ກໍ່ສ້າງ ແລະ ຂະຫຍາຍອຸດສາຫະກຳຮັບໃຊ້ການປ້ອງກັນຊາດເພື່ອຕອບສະໜອງບັນດາຄວາມຮຽກຮ້ອງຕ້ອງການອັນຈຳເປັນໃນແຕ່ລະໄລຍະ.

ດັດສ້າງບັນດາເຂດອຸດສາຫະກຳທີ່ມີໃນປະຈຸບັນໃຫ້ດີຂຶ້ນທັ໋ງໃນດ້ານໂຄງຮ່າງ ແລະ ເຕັກໂນໂລຢີຜະລິດ. ກໍ່ສ້າງໃໝ່ບາງເຂດອຸດສາຫະກຳໂດຍຈັດແບ່ງໃຫ້ກວ້າງຂວາງທົ່ວເຖິງໃນບໍລິເວນຕ່າງໆ.

3 - ກໍ່ສ້າງໂຄງປະກອບໂຄງລ່າງ.

ແກ້ໄຂຢ່າງດີຕໍ່ສະພາບຂຸດໂຊມເປ້ເພຂອງລະບົບ*ຄົມມະນາຄົມ* ທີ່

ມີໃນປະຈຸບັນ; ຟື້ນຟູ, ຍົກລະດັບຄຸນນະພາບ ແລະ ເປີດກວ້າງເສັ້ນທາງຄົມມະນາຄົມຂົນສົ່ງສຳຄັນຈຳນວນໜຶ່ງ, ສົມທົບລະຫວ່າງການຄົມມະນາຄົມຂົນສົ່ງກັບຊົນລະປະທານ, ນຳໃຊ້ໃຫ້ໝົດຄວາມສາມາດຂອງການລຳລຽງຂົນສົ່ງທາງນ້ຳ; ຂະຫຍາຍເສັ້ນທາງຄົມມະນາ ຄົມຮອດບັນດາເຂດຫ່າງໄກ, ສອກຫລີກ; ປ່ຽນແປງເສັ້ນທາງຄົມມະນາຄົມຢູ່ໃນບັນດາຕົວເມືອງໃຫຍ່. ປ່ຽນແປງ, ຍົກລະດັບຄຸນນະພາບຂອງທ່າເຮືອ, ທ່າກຳປັ່ນທະເລ; ເດີ່ນບິນຈຳນວນໜຶ່ງ, ຄ່ອຍໆກໍ່ສ້າງທ່າກຳປັ່ນນ້ຳເລິກ.

ສືບຕໍ່ຂະຫຍາຍ ແລະ ທັນເປັນທັນສະໄໝລະບົບ*ຕິດຕໍ່ສື່ສານ* ແຕ່ງລັດ, ເປີດກວ້າງການຕິດຕໍ່ດ້ວຍໂທລະສັບຮອດທຸກໆຕາແສງ.

ຂະຫຍາຍແຫລ່ງໄຟຟ້າ; ປ່ຽນແປງ ແລະ ເປີດກວ້າງຕາມ*ຄ່າງໄຟຟ້າ* ເພື່ອຕອບສະໜອງໃຫ້ຄວາມຕ້ອງການຢ່າງສະໜ່ຳສະເໝີປົກກະຕິ. ປ່ຽນແປງລະບົບສະໜອງນ້ຳ ແລະ ລະບົບລະບາຍ*ນ້ຳ* ຢູ່ໃນຕົວເມືອງໃຫ້ດີຂຶ້ນ. ເພີ່ມຕື່ມແຫລ່ງນ້ຳສະອາດຢູ່ຊົນນະບົດ.

ເພີ່ມການລົງທຶນໃຫ້ *ໂຄງປະກອບໂຄງລ່າງສັງຄົມ* (ເຊັ່ນ: ການສຶກສາ, ສາທາລະນະສຸກ, ວິທະຍາສາດ, ວັດທະນະທຳ, ສື່ຂ່າວ, ກິລາ...).

4 - ຂະຫຍາຍຢ່າງໄວວາສຳລັບການທ່ອງທ່ຽວການບໍລິການດ້ານ ການບິນ, ເດີ່ນທະເລ, ໄປສະນີ-ໂທລະຄົມມະນາຄົມ, ການຄ້າ, ຂົນສົ່ງ, ການເງິນ, ທະນາຄານ, ກວດບັນຊີ, ປະກັນໄພ, ເຕັກໂນໂລຢີ, ນິຕິທຳ, ສື່ສານ... ແລະ ບັນດາການບໍລິການຮັບໃຊ້ຊີວິດການເປັນຢູ່ຂອງປະຊາ

ຊົນ.

ຄ່ອຍໆເຮັດໃຫ້ປະເທດເຮົາກາຍເປັນໃຈກາງແຫ່ງໜຶ່ງທາງດ້ານທ່ອງທ່ຽວ, ການຄ້າ-ການບໍລິການດ້ວຍລະດັບສູງຢູ່ໃນພາກພື້ນ.

5 - ພັດທະນາເຂດແຄວ້ນດິນແດນຕ່າງໆ ຢ່າງສົມເຫດສົມຜົນ.

- ຫັນປ່ຽນໂຄງປະກອບເສດຖະກິດຂອງເຂດແຄວ້ນບົນພື້ນຖານຂຸດຄົ້ນບັນດາທ່າແຮງ, ຄວາມສາມາດບົ່ມຊ້ອນຂອງແຕ່ລະເຂດຢ່າງສຸດຂີດ, ຮ່ວມສຳພັນຊ່ວຍຊູຍູ້ໜູນຊຶ່ງກັນ ແລະ ກັນເພື່ອເຮັດໃຫ້ບັນດາເຂດຂະຫຍາຍຕົວພ້ອມພ້ຽງກັນ.

ລົງທຶນໃນລະດັບເທົ່າທີ່ຄວນໃຫ້ບັນດາເຂດເສດຖະກິດຈຸດສຸມເພື່ອຊຸກຍູ້ການຂະຫຍາຍຕົວຂອງທົ່ວພື້ນຖານເສດຖະກິດ. ຈັດແບ່ງແຫລ່ງກຳລັງແຮງຕ່າງໆຢ່າງເໝາະສົມໃຫ້ການແກ້ໄຂບັນດາຄວາມຕ້ອງການອັນເຄັ່ງຮ້ອນໃນນັ້ນເອົາໃຈໃສ່ເປັນພິເສດຕໍ່ໂຄງປະກອບໂຄງລ່າງເສດຖະກິດ-ສັງຄົມເພື່ອເຮັດໃຫ້ບັນດາເຂດທີ່ຍັງດ້ອຍພັດທະນາໂດຍສະເພາະແມ່ນເຂດພູດອຍ, ເຂດຊາຍແດນ, ໝູ່ເກາະທະເລ, ເຂດຊົນຊາດສ່ວນນ້ອຍ, ເຂດຫ່າງໄກ, ສອກຫລີກ, ເຂດທີ່ໝັ້ນຂອງການປະຕິວັດມີບາດກ້າວຂະຫຍາຍຕົວໄວວາ, ຄ່ອຍໆເຮັດໃຫ້ການຫລຸດໂຕນກັນທາງດ້ານລະດັບຂະຫຍາຍເສດຖະກິດ-ສັງຄົມລະຫວ່າງບັນດາເຂດໃຫ້ຫລຸດໜ້ອຍລົງ ແລະ ຕ້ອງຖືເອົາວຽກງານນີ້ແມ່ນວຽກງານໃຈກາງໃນການຊີ້ນຳຂອງບັນດາຂະແໜງການ ແລະ ຂັ້ນຕ່າງໆ. ເອົາໃຈໃສ່ເປັນພິເສດຕໍ່ການພັດທະນາເສດຖະກິດເຂດທະເລ ໂດຍສົມທົບກັບວຽກງານ

ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ສ້າງຕາມ່າງຕົວເມືອງໃຫ້ເປັນຕົນເປັນຕົວຂຶ້ນເທື່ອລະກ້າວຢ່າງ ສົມເຫັດສົມຜົນ, ຫລີກເວັ້ນບໍ່ໃຫ້ເກີດມີບັນດາຕົວເມືອງຂະໜາດໃຫຍ່ ເກີນຄວນ. ເພີ່ມທະວີວຽກງານຜັງເມືອງ ແລະ ຄຸ້ມຄອງຕົວເມືອງ.

6 - ເປີດກວ້າງ ແລະ ຍົກສູງປະສິດທິຜົນຂອງການພົວພັນເສດຖະ ກິດກັບຕ່າງປະເທດ.

ຊຸກຍູ້ການຂາອອກຢ່າງແຂງແຮງ, ຖືເອົາການຂາອອກແມ່ນທິດ ເລັ່ງບູລິມະສິດ ແລະ ເປັນຈຸດສຸມຂອງການພົວພັນເສດຖະກິດກັບຕ່າງ ປະເທດ. ຜະລິດໄດ້ຫລາຍຊະນິດສິນຄ້າຂາອອກຊຶ່ງເປັນກຳລັງຫລວງ ຂອງການຂາອອກ. ຍົກສູງຄວາມສາມາດແຂ່ງຂັນຂອງສິນຄ້າຂາ ອອກຢູ່ໃນຕະຫລາດໂລກ. ຫລຸດຜ່ອນບໍລິມາດຂອງຜະລິດຕະພັນດິບ ແລະ ປຸງແຕ່ງແບບປະຖົມປະຖານ ແລະ ເພີ່ມບໍລິມາດຂອງຜະລິດຕະ ພັນສຳເລັດຮູບທີ່ປຸງແຕ່ງຢ່າງປານີດຢູ່ໃນບໍລິມາດສິນຄ້າຂາອອກ. ເພີ່ມການຂາອອກຕໍ່ການບໍລິການໂດຍໄວ. ຍົກສູງບໍລິມາດມູນຄ່າເພີ່ມ ຂຶ້ນຢູ່ໃນມູນຄ່າສິນຄ້າຂາອອກ. ຄ່ອຍໆຫລຸດໜ້ອຍຂາເຂົ້າ. ໃຫ້ບູລິມະ ສິດຕໍ່ສິນຄ້າຂາເຂົ້າເພື່ອຂະຫຍາຍການຜະລິດຮັບໃຊ້ການຂາອອກ, ກຳ ຈັດການຂາເຂົ້າບັນດາສິນຄ້າໃຊ້ສອຍທີ່ບໍ່ຈຳເປັນ. ມີນະໂຍບາຍປົກ ປ້ອງໃຫ້ການຜະລິດພາຍໃນຢ່າງສົມເຫດສົມຜົນ.

ດັດສົມໂຄງປະກອບຂອງຕະຫລາດເພື່ອຮ່ວມຕົວເຂົ້າພາກພື້ນ ແລະ ທົ່ວໂລກ, ແກ້ໄຂບັນຫາຜົນປະໂຫຍດຢ່າງຖືກຕ້ອງລະຫວ່າງເຮົາກັບ

ບັນດາຄູ່ຮ່ວມມື. ເຂົ້າຮ່ວມວົງຄະນາຍາດການຄ້າຂອງໂລກ, ບັນດາ ເວທີ ແລະ ບັນດາອົງການຈັດຕັ້ງສາກົນຢ່າງເປັນເຈົ້າການ ແລະ ມີ ວິທີເລືອກເຟັ້ນ, ດ້ວຍບາດກ້າວອັນເໝາະສົມ.

ການນຳໃຊ້ທຶນກູ້ຢືມ ແລະ ດູດດຶງການລົງທຶນໂດຍກົງຈາກຕ່າງ ປະເທດຕ້ອງປະຕິບັດຕາມແຜນກຳນົດ ແລະ ແຜນການພັດທະນາຂະ ແໜງການ ແລະ ເຂດແຄວ້ນດິນແດນ, ຮັບປະກັນການປະຕິບັດໄດ້ບັນ ດາຈຸດໝາຍ, ໜ້າທີ່ວາງອອກເປັນຢ່າງດີ.

ມີການຄິດໄລ່ໄຕ່ຕອງຄວາມສາມາດໃນການກູ້ຢືມທຶນຢ່າງຮອບ ຄອບ, ນຳໃຊ້ທຶນກູ້ຢືມຢ່າງມີປະສິດທິຜົນ ແລະ ມີຄວາມສາມາດຊຳລະ ໜີ້ສິນໄດ້. ປ່ຽນແປງການສົມດຸ່ນໃນການຊຳລະສະສາງໃຫ້ມີຜົນດີ. ເພີ່ມ ການທ້ອນແຮງເງິນຕາຕ່າງປະເທດ. ບົ່ງແຈ້ງ ແລະ ປະຕິບັດຄວາມຮັບ ຜິດຊອບ, ສິດຂອບເຂດຂອງອົງການຄຸ້ມຄອງໜີ້ສິນຂອງຕ່າງປະເທດ, ຂອງຜູ້ໄປກູ້ຢືມທຶນ ແລະ ຂອງຜູ້ນຳໃຊ້ທຶນກູ້ຢືມຢ່າງຖືກຕ້ອງເໝາະສົມ.

ດຳເນີນການທົດລອງເພື່ອກ້າວເຖິງປະຕິບັດການລົງທຶນອອກນອກ ປະເທດ.

II - ນະໂຍບາຍຕໍ່ບັນດາພາກສ່ວນເສດຖະກິດ ກຳແໜ້ນທິດກ້າວຂຶ້ນສັງຄົມນິຍົມໃນການກໍ່ສ້າງຟື້ນ

ຖານເສດຖະກິດທີ່ມີຫລາຍພາກສ່ວນ:

- ປະຕິບັດນະໂຍບາຍຂະຫຍາຍເສດຖະກິດສິນຄ້າທີ່ມີຫລາຍພາກສ່ວນຢ່າງສະເໝີຕົ້ນສະເໝີປາຍ ແລະ ຍາວນານ. ເອົາການປົດປ່ອຍກຳລັງແຫ່ງການຜະລິດ, ລະດົມທຸກໆແຫລ່ງກຳລັງແຮງພາຍໃນ ແລະ ພາຍນອກຢ່າງສຸດຂີດໃຫ້ການຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝ, ຍົກສູງປະສິດທິຜົນທາງດ້ານເສດຖະກິດ-ສັງຄົມ, ປັບປ່ຽນຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນຈຸດໝາຍເປັນອັນດັບໜຶ່ງໃນການສົ່ງເສີມ ແລະ ຂະຫຍາຍບັນດາພາກສ່ວນເສດຖະກິດ ແລະ ຮູບການຈັດຕັ້ງທຸລະກິດຕ່າງໆ.

- ເປັນເຈົ້າການໃນການປ່ຽນແປງໃໝ່, ຂະຫຍາຍ ແລະ ຍົກສູງປະສິດທິຜົນຂອງເສດຖະກິດແຫ່ງລັດ, ເສດຖະກິດລວມໝູ່ສະຫະກອນ. ເສດຖະກິດຂອງລັດມີບົດບາດເປັນເຈົ້າພາທາງພ້ອມກັບເສດຖະກິດລວມໝູ່ສະຫະກອນຕ້ອງຄ່ອຍໆກາຍເປັນພື້ນຖານອັນໜັກແໜ້ນຂອງເສດຖະກິດແຫ່ງຊາດ. ສ້າງເງື່ອນໄຂສະດວກທາງດ້ານເສດຖະກິດ ແລະ ນິຕິບັນຍັດໃຫ້ບັນດານັກທຸລະກິດເອກະຊົນມີຄວາມອຸ່ນອ່ຽນໃຈດຳເນີນການລົງທຶນ ແລະ ຜະລິດທຸລະກິດຢ່າງຍາວນານ. ເປີດກວ້າງບັນດາຮູບການຮ່ວມທຸລະກິດ, ຮ່ວມສຳພັນເສດຖະກິດລະຫວ່າງພາກສ່ວນເສດຖະກິດຂອງລັດກັບບັນດາພາກສ່ວນເສດຖະກິດອື່ນໆຢູ່ພາຍໃນປະເທດ ແລະ ຕ່າງປະເທດ. ນຳໃຊ້ບັນດາຮູບການເສດຖະກິດທຶນນິຍົມແຫ່ງລັດຢ່າງແຜ່ຫລາຍ.

- ກໍ່ຕັ້ງ, ປັງປຸງ ແລະ ເຊີດຊູຖານະເປັນເຈົ້າຂອງຜູ້ອອກແຮງງານ ຢູ່ໃນການຜະລິດໃນສັງຄົມ, ປະຕິບັດຄວາມຍຸດຕິທຳສັງຄົມໃຫ້ນັບມື້ນັບດີ ກວ່າເກົ່າ.

- ປະຕິບັດຫຼາຍຮູບການແຈກຢາຍ, ເອົາການແຈກຢາຍຕາມຜົນ ໄດ້ຂອງການອອກແຮງງານ ແລະ ປະສິດທິຜົນຂອງເສດຖະກິດເປັນ ຕົ້ນຕໍ, ພ້ອມນັ້ນການແຈກຢາຍຕ້ອງອີງໃສ່ລະດັບການປະກອບສ່ວນໃນ ດ້ານຕ່າງໆ ເຂົ້າຢູ່ໃນໜາກຜົນຂອງການຜະລິດ-ທຸລະກິດ ແລະ ແຈກ ຢາຍໂດຍຜ່ານສະວັດດີການສັງຄົມ. ຮັບຮອງຕໍ່ການດຳລົງຄົງຕົວຢ່າງ ຍາວນານຂອງບັນດາຮູບການຮັບຈ້າງແຮງງານແຕ່ບໍ່ໃຫ້ມັນກາຍ ເປັນການພົວພັນແບບປົກຄອງທີ່ພາໄປເຖິງການພັນແຍກສັງຄົມເປັນ ສອງຂົ້ວປໍລະປັກກັນ. ແຈກຢາຍ ແລະ ແຈກຢາຍຄືນໃໝ່ຕໍ່ລາຍໄດ້ ຕ່າງໆຢ່າງສົມເຫດສົມຜົນ; ສົ່ງເສີມການສ້າງຄວາມຮັ່ງມີຢ່າງຖືກກົດ ໝາຍໄປຄຽງຄູ່ກັບການລົບລ້າງຄວາມອຶດຫີວ, ຫລຸດຜ່ອນຄວາມທຸກ ຈົນ, ບໍ່ໃຫ້ເກີດມີຄວາມຜິດໂຕນກັນທາງດ້ານລະດັບຄອງຊີບ ແລະ ລະ ດັບຂະຫຍາຍຕົວຢ່າງເໝາະຄວນລະຫວ່າງບັນດາບໍລິເວນ, ລະຫວ່າງຊັ້ນ ຄົນພົນລະເມືອງຕ່າງໆຢູ່ໃນສັງຄົມ.

- ເພີ່ມທະວີປະສິດທິພາບ ການຄຸ້ມຄອງມະຫາພາກຂອງລັດ, ຂຸດ ຄົ້ນດ້ານຕັ້ງໜ້າຂອງກົນໄກຕະຫລາດຢ່າງສຸດຂີດໄປຄຽງຄູ່ກັບການ ກຳຈັດປັດເປົ່າ ແລະ ສະກັດກັ້ນບັນດາສິ່ງກະທົບອັນຫຍໍ້ທໍ້ຂອງກົນໄກ ຕະຫລາດ. ຮັບປະກັນຄວາມສະເໝີພາບທາງດ້ານສິດຜົນປະໂຫຍດ

ແລະ ພົນທະຕໍ່ໜ້າກົດໝາຍຂອງທຸກໆວິສາຫະກິດ ແລະ ຂອງບຸກຄົນ ໂດຍບໍ່ຈຳແນກພາກສ່ວນເສດຖະກິດໃດໜຶ່ງ.

- ປົກປັກຮັກສາເອກະລາດ, ອະທິປະໄຕຢ່າງໜັກແໜ້ນ ແລະ ຮັກສາຜົນປະໂຫຍດຂອງຊາດໃນການພົວພັນເສດຖະກິດກັບພາຍນອກ.

ປະຕິບັດນັນດາແຜນນະໂຍບາຍ, ນະໂຍບາຍຕໍ່ພາກສ່ວນເສດຖະກິດຕ່າງໆດັ່ງລຸ່ມນີ້:

1/ສືບຕໍ່ປຽນແປງໃໝ່ ແລະ ຂະຫຍາຍ*ເສດຖະກິດ*ຂອງລັດຢ່າງມີປະສິດທິຜົນເພື່ອປະຕິບັດບົດບາດເປັນເຈົ້າພາບ ໄດ້ເປັນຢ່າງດີ: ເປັນໄມ້ງັດຊຸກຍູ້ເສດຖະກິດຂະຫຍາຍຕົວຢ່າງໄວ ແລະ ແກ້ໄຂບັນດາບັນຫາສັງຄົມ; ເປີດທາງ, ແນະນຳ, ຊ່ວຍຊຸຍູ້ໜູນໃຫ້ບັນດາພາກສ່ວນເສດຖະກິດອື່ນໆພ້ອມກັນຂະຫຍາຍຕົວ; ເປັນກຳລັງທາງດ້ານວັດຖຸເພື່ອໃຫ້ລັດປະຕິບັດພາລະບົດບາດດັດສົມ ແລະ ຄຸ້ມຄອງມະຫາພາກເປັນຢ່າງດີ; ສ້າງພື້ນຖານອັນໜັ້ນຄົງໃຫ້ລະບອບສັງຄົມໃໝ່.

ລວມສູນທຸກແຫລ່ງກຳລັງເພື່ອພັດທະນາເສດຖະກິດຂອງລັດຢູ່ໃນບັນດາຂະແໜງການ, ຂົງເຂດອັນສຳຄັນຕົ້ນຕໍຄື ໂຄງປະກອບໂຄງລ່າງເສດຖະກິດ; ສັງຄົມ, ລະບົບການເງິນ, ທະນາຄານ, ປະກັນໄຟ, ບັນດາຮາກຖານການຜະລິດ ແລະ ການຄ້າ, ການບໍລິການທີ່ມີຄວາມສຳຄັນ, ຢູ່ໃນບາງວິສາຫະກິດທີ່ປະຕິບັດໜ້າທີ່ກ່ຽວພັນເຖິງການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ. ລັດວິສາຫະກິດເວົ້າລວມຕ້ອງມີຂະໜາດປານກາງ ແລະ ຂະໜາດໃຫຍ່, ມີເຕັກໂນໂລຢີທີ່ກ້າວໜ້າ, ດຳ

ເນີນທຸລະກິດມີປະສິດທິຜົນສູງ, ສ້າງແຫລ່ງລາຍໄດ້ຢ່າງຫລວງຫລາຍ ໃຫ້ງົບປະມານ.

ຖືເອົາຜົນກຳໄລໄດ້ມາຈາກການໝຸນໃຊ້ທຶນເປັນມາດຕະຖານຕົ້ນຕໍ ອັນໜຶ່ງເພື່ອຕີລາຄາໝາກຜົນຂອງວິສາຫະກິດທຸລະກິດ; ຖືເອົາ ໝາກຜົນຂອງການປະຕິບັດນະໂຍບາຍສັງຄົມເປັນມາດຕະ ຖານຕົ້ນຕໍເພື່ອຕີລາຄາປະສິດທິຜົນຂອງວິສາຫະກິດຮັບໃຊ້ສາທາລະນະ ປະໂຫຍດ.

ປຮຸງແປງໃໝ່ ແລະ ເພີ່ມທະວີການເຄື່ອນໄຫວຂອງພາກສ່ວນເສດ ຖະກິດລັດຢູ່ໃນຂົງເຂດຈໍລະຈອນແຈກຢາຍ. ເສີມຂະຫຍາຍບົດບາດເປັນ ໃຈກາງເສດຖະກິດ, ວິທະຍາສາດ-ເຕັກໂນໂລຍີ, ວັດທະນະທຳ-ສັງຄົມ ຂອງລັດວິສາຫະກິດ ຢູ່ໃນຂົງເຂດກະສິກຳ, ປ່າໄມ້ ແລະ ການປະມົງ, ໂດຍສະເພາະແມ່ນຢູ່ເຂດພູດອຍ, ໝູ່ເກາະທະເລ, ເຂດຊົນຊາດສ່ວນ ໜ້ອຍ.

ຜັນຂະຫຍາຍການຫັນເປັນຫຸ້ນສ່ວນຢູ່ໃນລັດວິສາຫະກິດຢ່າງຕັ້ງ ໜ້າ ແລະ ໜັກແໜ້ນເພື່ອລະດົມທຶນຮອບໄດ້ຫລາຍ, ສ້າງໄດ້ກຳລັງ ໜູນເພື່ອຊຸກຍູ້ວິສາຫະກິດດຳເນີນການຜະລິດທຸລະກິດຢ່າງມີປະສິດທິ ຜົນສູງ, ເຮັດໃຫ້ຊັບສົມບັດຂອງລັດເພີ່ມຂຶ້ນຢ່າງບໍ່ຢຸດຢັ້ງ, ແຕ່ບໍ່ແມ່ນ ວ່າປະໃຫ້ຫັນເປັນເອກະຊົນ. ຄຽງຄູ່ກັບບັນດາວິສາຫະກິດເຊິ່ງທຶນຂອງ ລັດກວມເອົາ 100% ຈະມີຫລາຍວິສາຫະກິດທີ່ລັດຖືຫຸ້ນສ່ວນຫລາຍ ກວ່າພາກສ່ວນອື່ນ, ຫລືຖືເອົາອັດຕາສ່ວນຫຸ້ນສ່ວນແບບຄອບງຳ. ລະ

ດົນຫຸ້ນສ່ວນຫລືຂາຍຫຸ້ນສ່ວນໃຫ້ຜູ້ອອກແຮງງານຢູ່ໃນວິສາຫະກິດ, ໃຫ້ບັນດາອົງການຈັດຕັ້ງ ແລະ ບຸກຄົນຢູ່ນອກວິສາຫະກິດຕາມແຕ່ລະກໍລະນີຕົວຈິງ; ທຶນຮອນທີ່ລະດົມໄດ້ຈາກການປະກອບຫຸ້ນສ່ວນຕ່າງໆ ຕ້ອງໄດ້ນຳໃຊ້ເຂົ້າໃນການລົງທຶນເປີດກວ້າງການຜະລິດທຸລະກິດ.

ຈັດຕັ້ງບັນດາສະຫະບໍລິສັດຢ່າງສົມເຫັດສົມຜົນ, ທັງຮັບປະກັນບໍ່ໃຫ້ກຳລັງຖືກກະແຈກກະຈາຍ, ທັງຕ້ານສິດຜູກຂາດຫລືການເປັນຂັ້ນບໍລິຫານລະຫວ່າງກາງ.

2 - *ເສດຖະກິດສະຫະກອນເຊິ່ງມີບັນດາສະຫະກອນເປັນຫລັກແຫລ່ງ* ແມ່ນຮູບການຮ່ວມສຳພັນຢ່າງສະໝັກໃຈຂອງບັນດາຜູ້ອອກແຮງງານແບໃສ່ປະສານສົມທົບກຳລັງແຮງຂອງແຕ່ລະສະມາຊິກກັບກຳລັງແຮງຂອງລວມໝູ່ເພື່ອແກ້ໄຂບັນດາບັນຫາຂອງການຜະລິດທຸລະກິດ ແລະ ຊີວິດການເປັນຢູ່ຢ່າງມີປະສິດທິຜົນ.

ຂະຫຍາຍເສດຖະກິດສະຫະກອນດ້ວຍຫລາຍຮູບຫລາຍແບບ, ແຕ່ຕ່ຳຫາສູງ, ແຕ່ຈຸສະຫະກອນຫາໜ່ວຍສະຫະກອນ; ປະຕິບັດຫລັກການສະໝັກໃຈ, ສະເໝີພາບ, ຕ່າງຝ່າຍຕ່າງມີຜົນປະໂຫຍດ, ຄຸ້ມຄອງຢ່າງປະຊາທິປະໄຕ.

ສະຫະກອນໄດ້ຈັດຕັ້ງຂຶ້ນບົນພື້ນຖານການປະກອບຫຸ້ນສ່ວນ ແລະ ເຂົ້າຮ່ວມການອອກແຮງງານໂດຍກົງຂອງສະມາຊິກ, ແຈກຢ່າຍຕາມມາກຜົນຂອງການອອກແຮງງານ ແລະ ຕາມຈຳນວນຫຸ້ນສ່ວນ, ສະມາຊິກແຕ່ລະຄົນມີສິດຄືກັນໃນທຸກວຽກງານຂອງສ່ວນລວມ.

ເພີ່ມທະວີການນຳພາ, ຊີ້ນຳ ແລະ ມີນະໂຍບາຍສົ່ງເສີມ, ບູລິມະສິດ, ຊ່ວຍເຫລືອເສດຖະກິດສະຫະກອນຂະຫຍາຍຕົວຢ່າງມີປະສິດທິຜົນ. ປະຕິບັດກົດໝາຍວ່າດ້ວຍສະຫະກອນເປັນຢ່າງດີ.

3 - *ເສດຖະກິດທຶນນິຍົມແຫ່ງລັດ*ລວມມີບັນດາຮູບການຮ່ວມມື, ຮ່ວມທຸລະກິດລະຫວ່າງເສດຖະກິດຂອງລັດກັບນາຍທຶນເອກະຊົນຢູ່ພາຍໃນປະເທດ ແລະ ຮ່ວມມື, ຮ່ວມທຸລະກິດລະຫວ່າງເສດຖະກິດຂອງລັດກັບນາຍທຶນຕ່າງປະເທດ. ເສດຖະກິດທຶນນິຍົມແຫ່ງລັດມີບົດບາດສຳຄັນໃນການປຸກລະດົມຄວາມສາມາດບົ່ມຊ້ອນອັນໃຫຍ່ໂຕທາງດ້ານທຶນຮອນ, ເຕັກໂນໂລຢີ, ຄວາມສາມາດໃນການຈັດຕັ້ງຄຸ້ມຄອງ... ຂອງບັນດານາຍທຶນເພື່ອຜົນປະໂຫຍດຂອງເຂົາເຈົ້າເອງກໍ່ຄືຂອງການກໍ່ສ້າງ ແລະ ພັດທະນາປະເທດຊາດ.

ນຳໃຊ້ຫລາຍແບບວິທີປະກອບທຶນເຂົ້າຮ່ວມທຸລະກິດລະຫວ່າງລັດກັບບັນດານັກທຸລະກິດເອກະຊົນພາຍໃນປະເທດແນໃສ່ສ້າງທ່າດີ ແລະ ກຳລັງແຮງໃຫ້ບັນດານັກທຸລະກິດຫວອດນາມຂະຫຍາຍຕົວ, ເພີ່ມກຳລັງ ແລະ ຄວາມສາມາດໃນການຮ່ວມມືກໍ່ຄືແຂ່ງຂັນກັນກັບພາຍນອກ.

ປ໋ວແປງສິ່ງແວດລ້ອມແຫ່ງການລົງທຶນ ແລະ ຍົກສູງຄວາມສາມາດໃນການຄຸ້ມຄອງເພື່ອດູດດຶງເອົາການລົງທຶນໂດຍກົງຂອງປະເທດນອກຢ່າງມີປະສິດທິຜົນ. ຄ້ຳປະກັນສິດ ແລະ ຜົນປະໂຫຍດອັນຖືກກົດໝາຍຂອງຜູ້ອອກແຮງງານຢູ່ໃນບັນດາໂຮງງານຮ່ວມມື, ຮ່ວມ

ທຸລະກິດ.

4 - *ເສດຖະກິດເອກະເທດ, ເຈົ້າຊັບນ້ອຍ* ມີທີ່ຕັ້ງສຳຄັນ ແລະ ຍາວນານ, ຊ່ວຍເຫລືອເສດຖະກິດເອກະເທດ, ເຈົ້າຊັບນ້ອຍແກ້ໄຂຄວາມຫຍຸ້ງຍາກທາງດ້ານທຶນຮອນ, ທາງດ້ານວິທະຍາສາດ ແລະ ເຕັກໂນໂລຢີ, ທາງດ້ານຕະຫລາດບໍລິໂພກຜະລິດຕະພັນ. ແນະນຳໃຫ້ເສດຖະກິດເອກະເທດ, ເຈົ້າຊັບນ້ອຍເຝື່ອຜົນປະໂຫຍດຂອງຕົວເອງ ແລະ ຄວາມຮຽກຮ້ອງຕ້ອງການຂະຫຍາຍຕົວຂອງການຜະລິດ, ຈົ່ງເອົາຕົວເຂົ້າຮ່ວມການທຳມາຫາກິນແບບຮ່ວມມື ນຳກັນຢ່າງສະໜັກໃຈ, ຫລືເປັນຫົວໜ່ວຍຜະລິດແບບດາວທຽມໃຫ້ລັດວິສາຫະກິດຫລືໃຫ້ສະຫະກອນ.

5 - *ເສດຖະກິດທຶນນິຍົມເອກະຊົນ* ມີຄວາມສາມາດປະກອບສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ. ສົ່ງເສີມທຶນນິຍົມເອກະຊົນລົງທຶນໃສ່ການຜະລິດ, ອຸ່ນອຽນໃຈທຳມາຫາກິນຢ່າງຍາວນານ; ປົກປ້ອງກຳມະສິດ ແລະ ຜົນປະໂຫຍດອັນຊອບກົດໝາຍ, ສ້າງເງື່ອນໄຂສະດວກໄປຄຽງຄູ່ກັບການເພີ່ມທະວີການຄຸ້ມຄອງ, ແນະນຳເຂົ້າເຈົ້າທຳມາຫາກິນຖືກຕາມກົດໝາຍ, ມີປະໂຫຍດໃຫ້ແກ່ແຜນພັດທະນາປະເທດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ.

III - ສືບຕໍ່ດຳເນີນການປ່ຽນແປງໃໝ່ກົນໄກຄຸ້ມຄອງເສດຖະກິດ.

ໂດຍເລີ່ມຈາກພຶດຕິກຳໃນ 10 ກວ່າປີ ທີ່ຜ່ານມາ, ສາມາດຢັ້ງຢືນ ໄດ້ບາງຄວາມຮັບຮູ້ກ່ຽວກັບກົນໄກຄຸ້ມຄອງເສດຖະກິດໃໝ່ຄື:

- ການຜະລິດສິນຄ້າບໍ່ປ່ອຍປັກກັບສັງຄົມນິຍົມ, ເຊິ່ງແມ່ນຜົນງານ ແຫ່ງການຂະຫຍາຍຕົວແຫ່ງຄວາມສີວິໄລຂອງມະນຸດຊາດ, ມັນຍືນຍົງ ຄົງຕົວຢ່າງຜາວະວິໄສ, ແມ່ນຄວາມຕ້ອງການອັນຈຳເປັນໃນການກໍ່ ສ້າງສັງຄົມນິຍົມນັບທັງໄລຍະເວລາທີ່ສັງຄົມນິຍົມໄດ້ກໍ່ຕັ້ງຂຶ້ນເປັນຕົ້ນ ເປັນຕົວແລ້ວ.

- ຢູ່ໃນພື້ນຖານເສດຖະກິດ ສິນຄ້າທີ່ມີຫລາຍພາກສ່ວນຂອງປະເທດ ເຮົາ, ຕະຫລາດທີ່ດຳເນີນຕາມກຳນົດທິດສັງຄົມນິຍົມແມ່ນພາກສ່ວນໜຶ່ງ ທີ່ເອກະພາບກັບຫລາຍໆກຳລັງເຂົ້າຮ່ວມການຜະລິດ ແລະ ຈຳລະຈອມ ຊຶ່ງໃນນັ້ນເສດຖະກິດຂອງລັດມີບົດບາດເປັນເຈົ້າພາທາງ. ຕະຫລາດ ພາຍໃນປະເທດຕິດແໜ້ນກັບຕະຫລາດໂລກ.

- ຕະຫລາດທັງເປັນຫລັກຖານທັງເປັນເປົ້າໝາຍຂອງແຜນການ. ແຜນການມີລັກສະນະກຳນົດທິດທາງເປັນຕົ້ນຕໍ ແລະ ມີຄວາມສຳຄັນເປັນ ພິເສດໃນໜ້າພຽງຂອງມະຫາພາກ. ຕະຫລາດມີບົດບາດໂດຍກົງໃນ ການແນະນຳໃຫ້ບັນດາຫົວໜ່ວຍເສດຖະກິດເລືອກເຟັ້ນເອົາຂົງເຂດ ເຄື່ອນໄຫວ ແລະ ແຜນແກ້ແຫ່ງການຈັດຕັ້ງຜະລິດທຸລະກິດ.

- ໝຸນໃຊ້ກົນໄກຕະຫລາດມັນຮຽກຮ້ອງຕ້ອງຍົກສູງຄວາມສາ ມາດ ທາງດ້ານຄຸ້ມຄອງມະຫາພາກຂອງລັດ, ພ້ອມກັນນັ້ນຕ້ອງສ້າງ ຕັ້ງລະບອບເປັນເຈົ້າຕົນເອງຢ່າງຄົບຖ້ວນຂອງບັນດາຫົວໜ່ວຍຜະ

ລິດທຸລະກິດ, ແນໃສ່ເສີມຂະຫຍາຍການກະທົບອັນຕົ້ງໜ້າໃຫຍ່ໂຕຂອງ ຕະຫລາດ, ໄປຄຽງຄູ່ກັບການສະກັດກັ້ນກຳຈັດປັດເປົ່າ ແລະ ແກ້ໄຂ ບັນດາດ້ານຫຍໍ້ທໍ້ຂອງຕະຫລາດ. ລັດຄຸ້ມຄອງຕະຫລາດດ້ວຍກົດ ໝາຍ, ແຜນການ, ກົນໄກ, ນະໂຍບາຍ, ດ້ວຍບັນດາເຄື່ອງມືທີ່ເປັນ ໄມ້ງັດເສດຖະກິດ ແລະ ດ້ວຍແຫລ່ງກຳລັງຕ່າງໆຂອງອົງເຂດເສດ ຖະກິດຂອງລັດ.

ແຕ່ນີ້ຮອດປີ 2000, ສືບຕໍ່ປຽນແປງໃໝ່ກົນໄກຄຸ້ມຄອງເສດຖະ ກິດດ້ວຍຈຸດໝາຍລົບລ້າງກົນໄກລວມສູນອາດຍາສິດ, ເກື້ອກຸນ, ສ້າງ ກົນໄກຕະຫລາດຢ່າງຄົບຊຸດພ້ອມຄວນໃຫ້ເປັນຕົນເປັນຕົວຂຶ້ນໂດຍມີ ການຄຸ້ມຄອງຂອງລັດຕາມກຳນົດທິດສັງຄົມນິຍົມ.

1- ກໍ່ຕັ້ງບັນດາປັດໄຈຂອງຕະຫລາດຢ່າງຄົບຊຸດ.

- ຂະຫຍາຍ*ຕະຫລາດສິນຄ້າ ແລະ ການບໍລິການ* ຢ່າງແຂງແຮງ.

ເປີດກວ້າງຕະຫລາດ, ປະຕິບັດການແລກປຽນສິນຄ້າຢ່າງທະລຸ ໄປໃນທົ່ວປະເທດ. ຂະຫຍາຍຕະຫລາດເຕັກໂນໂລຢີ, ບັນດາການບໍລິ ການທາງດ້ານສື່ສານ, ທີ່ປຶກສາ, ສຳຜັດຕະຫລາດ, ນິຕິທຳ, ການເງິນ, ທະນາຄານ, ກວດບັນຊີ, ປະກັນໄພ, ປະກັນຕົວ...

ແກ້ໄຂສະພາບທຸລະກິດຜິດກົດໝາຍ, ຫລົບຫລີກພາສີ. ກວດຕາ. ຄວບຄຸມ ແລະ ຈັດແກ້ບັນດາກໍລະນີລະເມີດຕໍ່ກົດໝາຍຢ່າງເຂັ້ມງວດ. ສ້າງສິ່ງແວດລ້ອມໃນການຮ່ວມມື ແລະ ແຂ່ງຂັນແບບສົດໄສຢູ່ໃນການ ຜະລິດ, ທຸລະກິດ. ປະຕິບັດການຜູກຂາດຂອງລັດໃນບາງຂະແໜງ

ການ, ບາງຂົງເຂດທີ່ແມ່ນອນເພື່ອພົນປະໂຫຍດຂອງປະເທດຊາດ; ກຳ ຈັດການຜູກຂາດທາງດ້ານທຸລະກິດ, ບໍ່ໃຫ້ສວຍໃຊ້ຖານະຜູກຂາດເພື່ອ ປົກປ້ອງອະພິສິດ, ຜົນປະໂຫຍດພິເສດ, ຜູກຂາດຕໍ່ຕະຫລາດ.

ປັບປຸງບູລະນະການເຄື່ອນໄຫວຂອງບັນດາອົງການຈັດຕັ້ງການຄ້າ ຢູ່ໃນທຸກໆພາກສ່ວນເສດຖະກິດ. ປ່ຽນແປງໃໝ່ລະບົບການຄ້າຂອງ ລັດເພື່ອປະຕິບັດບົດບາດເປັນເຈົ້າພາທາງເປັນຢ່າງດີ; ແກ້ໄຂສະພາບ ປ່ອຍປະລະເລີຍຕໍ່ຕະຫລາດຢູ່ຊົນນະບົດ ແລະ ເຂດພູດອຍ.

- ຈັດຕັ້ງການຄຸ້ມຄອງ ແລະ ແນະນຳເປັນຢ່າງດີຕໍ່ການ *ຈ້າງ ແລະ ໃຊ້ແຮງງານ.*

ຮັບປະກັນວຽກເຮັດງານທຳໃຫ້ປະຊາຊົນແມ່ນຈຸດໝາຍອັນດັບ ໜຶ່ງທາງດ້ານສັງຄົມ, ບໍ່ປະໃຫ້ໄພວ່າງງານກາຍເປັນພະຍາດຊໍ້າ ເຮື້ອ. ລັດຕ້ອງເອົາໃຈໃສ່ໃນການລົງທຶນເພື່ອສ້າງໃຫ້ມີວຽກເຮັດງານ ທຳ, ພ້ອມກັນນັ້ນຕ້ອງສ້າງເງື່ອນໄຂໃຫ້ບັນດາພາກສ່ວນເສດຖະກິດ ແລະ ຜູ້ອອກແຮງງານສ້າງບ່ອນເຮັດວຽກໃຫ້ຫລາຍຂຶ້ນຕື່ມ ແລະ ຊອກ ຫາວຽກເຮັດງານທຳໂດຍຕົນເອງ; ສົ່ງເສີມບັນດາອົງການຈັດຕັ້ງ ແລະ ບຸກຄົນພ້ອມກັບລັດຈັດຕັ້ງການບໍລິການຊອກຫາງານທຳ, ກໍ່ສ້າງວິຊາຊີບເປັນຢ່າງດີ.

ໃນການຮັບຈ້າງແຮງງານ, ຜູ້ອອກແຮງງານ ແລະ ຜູ້ນຳໃຊ້ແຮງ ງານມີຄວາມສະເໝີພາບຕໍ່ໜ້າກົດໝາຍ. ລັດ, ເຊິ່ງດ້ວຍການເຂົ້າ ຮ່ວມຂອງກຳມະບານ, ບັນດາອົງການຈັດຕັ້ງສັງຄົມ-ວິຊາຊີບຕ້ອງດຳ

ເນີນການກວດການການຈ້າງ, ໃຊ້ ແລະ ໃຫ້ຄ່າຈ້າງແຮງງານ, ກວດ
ການການປ່ຽນແປງເງື່ອນໄຂເຮັດວຽກ; ຮັບປະກັນການປະຕິບັດບັນດາ
ຂໍ້ກຳນົດກ່ຽວກັບການປົກປ້ອງ ແລະ ຄວາມປອດໄພ ຂອງແຮງງານ;
ແກ້ໄຂສາຍພົວພັນລະຫວ່າງຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ
ໃຫ້ຖືກຕ້ອງຕາມກົດໝາຍ, ປົກປັກຮັກສາ ຜົນປະໂຫຍດອັນຊອບທຳ
ຂອງຜູ້ອອກແຮງງານ.

ສືບຕໍ່ດັດແປງ ລະບອບເງິນເດືອນຢູ່ໃນຂົງເຂດລັດ. ມີນະ
ໂຍບາຍແນະນຳ ແລະ ດັດສົມເງິນເດືອນກໍ່ຄືລາຍຮັບຂອງສ່ວນບຸກຄົນ
ໃນທົ່ວສັງຄົມ. ປະຕິບັດລະບອບປະກັນສັງຄົມຕໍ່ຜູ້ອອກແຮງງານຢູ່ໃນ
ທຸກພາກສ່ວນເສດຖະກິດ.

- ຄຸ້ມຄອງ*ທີ່ດິນ ແລະ ຕະຫລາດຊັບສົມບັດຄົງທີ່* ຢ່າງແໜ້ນໜາ.

ທີ່ດິນແມ່ນກຳມະສິດຂອງທົ່ວປວງຊົນ, ບໍ່ໃຫ້ຫັນເປັນຂອງເອກະຊົນ,
ບໍ່ອະນຸຍາດໃຫ້ຊື້ຂາຍດິນ. ປະຕິບັດກົດໝາຍວ່າດ້ວຍທີ່ດິນຢ່າງຖືກຕ້ອງ;
ເພີ່ມເຕີ່ມ, ບູລະນະລະບົບກົດໝາຍ ແລະ ນະໂຍບາຍກ່ຽວກັບທີ່ດິນ ໃຫ້
ສົມບູນ. ໃນການມອບສິດນຳໃຊ້ຫລືໃຫ້ເຊົ່າຈ້າງທີ່ດິນຕ້ອງກຳນົດລາຄາ
ຂອງບັນດາປະເພດດິນຢ່າງຖືກຕ້ອງເພື່ອນຳໃຊ້ດິນໃຫ້ມີປະສິດທິຜົນ, ຮັກ
ສາ ແລະ ຂະຫຍາຍຄັງທີ່ດິນ, ຮັບປະກັນຜົນປະໂຫຍດຂອງປະຊາຊົນ. ກຳ
ຈັດປັດເປົ່າການຫຍໍ້ທໍ້, ອ່ອນນ້ອຍຢູ່ໃນການຄຸ້ມຄອງ ແລະ ໃຊ້ດິນ, ກໍ່
ຄືສະພາວະກັກຕຸນດິນ.

ຈັດຕັ້ງ, ຄຸ້ມຄອງຕະຫລາດຊັບສົມບັດຄົງທີ່ໃຫ້ດີ. ເປັນຫ່ວງເປັນໃຍ

ໃນການແກ້ໄຂບັນຫາເຮືອນຢູ່ຂອງປະຊາຊົນໂດຍສະເພາະແມ່ນຢູ່ໃນ ບັນດາຕົວເມືອງ; ຂະຫຍາຍບັນດາລັດວິສາຫະກິດກໍ່ສ້າງ ແລະ ທຸລະ ກິດເຮືອນຢູ. ສົ່ງເສີມທຸກພາກສ່ວນເສດຖະກິດເຂົ້າຮ່ວມການກໍ່ສ້າງ ແລະ ທຸລະກິດເຮືອນຢູ່ຕາມການແນະນຳ ແລະ ຄຸ້ມຄອງຂອງລັດ.

- *ກໍ່ສ້າງຕະຫລາດທຶນຮອນ*, ສ້າງຕະຫລາດຊື້ຂາຍຫຸ້ນພັນທະບັດໃຫ້ ເປັນຕົນເປັນຕົວຂຶ້ນເທື່ອລະກ້າວ.

ຂະຫຍາຍຕະຫລາດທຶນ, ດູດດຶງບັນດາແຫລ່ງທຶນຕາມກຳນົດເວລາ ໄລຍະກາງ, ໄລຍະຍາວ ໂດຍຜ່ານທະນາຄານ ແລະ ບັນດາບໍລິສັດການ ເງິນເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການໃຫ້ກູ້ຢືມທຶນເພື່ອລົງ ທຶນສຳລັບການພັດທະນາ.

ກະກຽມບັນດາເງື່ອນໄຂອັນຈຳເປັນເພື່ອກໍ່ສ້າງຕະຫລາດຊື້ຂາຍຫຸ້ນ ສ່ວນພັນທະບັດເທື່ອລະກ້າວທີ່ສອດຄ່ອງເໝາະສົມກັບເງື່ອນໄຂຂອງ ຫວຽດນາມ ແລະ ຕາມທິດພັດທະນາເສດຖະກິດ-ສັງຄົມຂອງປະເທດ ເຮົາ.

2 - ບູລະນະສົມບູນຕໍ່ລະບົບກົດໝາຍກ່ຽວກັບເສດຖະກິດ.

ປະກາດໃຊ້ກົດໝາຍສະບັບໃໝ່ ແລະ ສະບັບປັບປຸງຈຳນວນໜຶ່ງ; ປັບປຸງເພີ່ມຕື່ມບາງກົດໝາຍ ແລະ ກົດດຳລັດພວມໃຊ້ໃນປະຈຸບັນເພື່ອ ສືບຕໍ່ຫັນເປັນລະອຽດໃນໂຄງການການເມືອງ, ຍຸດທະສາດ ແລະ ບັນ ດາແຜນນະໂຍບາຍ, ນະໂຍບາຍຕ່າງໆຂອງພັກ, ສ້າງລະບົບກົດ ໝາຍຄົບຊຸດທີ່ຈຳເປັນໃຫ້ແກ່ບັນດາການເຄື່ອນໄຫວເສດຖະກິດ.

3 -ສືບຕໍ່ປຽນແປງໃຫມ່ສຳລັບອຽກງານຫັນເປັນແຜນການ.

ແຜນການແຫ່ງລັດຕ້ອງເຊື່ອມຊຶມແນວທາງ, ແຜນນະໂຍບາຍ ຂອງພັກເພື່ອວາງລະບົບໜຶ່ງທີ່ລວມມີບັນດາຈຸດໝາຍມະຫາພາກ, ກຳນົດລະດັບຄວາມໄວແຫ່ງການຂະຫຍາຍຕົວ, ໂຄງປະກອບ ແລະ ບັນດາການດຸ່ນດ່ຽງໃຫຍ່, ບັນດານະໂຍບາຍ, ວິທີການເພື່ອຊັກຈູງຜົ້ນ ຖານເສດຖະກິດໄປຕາມທິດກຳນົດຂອງແຜນການ.

ສຸມກຳລັງໃສ່ການກໍ່ສ້າງຍຸດທະນາດ ແລະ ແຜນພັດທະນາ, ສ້າງ ບັນດາໂຄງການ ແລະ ແຜນແກ້ອັນໃຫຍ່ໆໃຫ້ທົ່ວປະເທດ ແລະ ໃຫ້ແຕ່ ລະຂະແໜງການ, ແຕ່ລະບໍລິເວນ, ແຕ່ລະຂົງເຂດ. ຄ່ອຍໆຫັນມາສ້າງ ແຜນການ 5 ປີເປັນຕົ້ນຕໍ, ໃນນັ້ນແບ່ງອອກເປັນແຕ່ລະປີ: ຫລຸດຜ່ອນ ການສ້າງ ແລະ ອະນຸມັດແຜນການປະຈຳປີ.

ແຜນການຕ້ອງກວມລວມບັນດາຂະແໜງການ, ບັນດາບໍລິເວນ, ບັນ ດາຂົງເຂດ ແລະ ພາກສ່ວນເສດຖະກິດຕ່າງໆ.

4 - ປຽນແປງໃຫມ່ສຳລັບບັນດານະໂຍບາຍທາງດ້ານ ການເງິນ, ເງິນຕາ, ລາຄາ.

- *ນະໂຍບາຍການເງິນ* ຕ້ອງເລງໃສ່ຈຸດໝາຍຊຸກຍູ້ການຜະລິດຂະ ຫຍາຍຕົວ; ລະດົມ ແລະ ນຳໃຊ້ແຫລ່ງກຳລັງຕ່າງໆ ຢ່າງມີປະສິດທິ ຜົນ; ເພີ່ມການສະສົມເພື່ອມີທຶນສະໜອງໃຫ້ການລົງທຶນເພື່ອພັດທະນາ; ຕອບສະໜອງບັນດາລາຍຈ່າຍເປັນປະຈຳທີ່ຈຳເປັນຢ່າງແທ້ຈິງ ແລະ

ເຄັ່ງຮ້ອນ; ຮັບປະກັນຄຸ້ມຄອງການເງິນແຫ່ງລັດຢ່າງເປັນເອກະພາບ; ຫລຸດຜ່ອນລາຍຈ່າຍເກີນງົບປະມານ, ປະກອບສ່ວນໃນການຄອບງຳ ແລະ ຄວບຄຸມໄພເງິນເຟີ້. ຈັດແກ້ບັນດາສາຍພົວພັນຢ່າງຖືກຕ້ອງຄື: ລະຫວ່າງການສະສົມກັບການໃຊ້ສອຍ, ການເງິນຂອງລັດ, ການເງິນຂອງວິສາຫະກິດ ແລະ ການເງິນຂອງພົນລະເມືອງ; ລະຫວ່າງງົບປະມານສູນກາງ ແລະ ງົບປະມານທ້ອງຖິ່ນ; ລະຫວ່າງລາຍຈ່າຍເປັນປະຈຳ ແລະ ລາຍຈ່າຍໃຫ້ການລົງທຶນເພື່ອພັດທະນາ, ລາຍຈ່າຍເພື່ອຮັບປະກັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ລະຫວ່າງ ການລະດົມທຶນພາຍໃນປະເທດ ແລະ ທຶນຈາກຕ່າງປະເທດ; ກູ້ຢືມ ແລະ ຊຳລະສະສາງໜີ້ສິນ...

ເພື່ອສ້າງໃຫ້ມີທຶນສຳລັບລົງທຶນເພື່ອພັດທະນາ, ວິທີແກ້ໄຂອັນເປັນພື້ນຖານ ແລະ ຍາວນານກໍ່ຄືຕ້ອງທຳມາຫາກິນຢ່າງມີປະສິດທິຜົນ, ພັດທະນາເສດຖະກິດ, ປະຕິບັດການປະຢັດຢ່າງສຸດຂີດທັງຢູ່ໃນການໃຊ້ຈ່າຍຂອງລັດ, ທັງຢູ່ໃນການຜະລິດທຸລະກິດ ແລະ ໃນການໃຊ້ຈ່າຍຂອງພົນລະເມືອງ; ສົ່ງເສີມການປະຢັດ ແລະ ການລົງທຶນມີຫລາຍຮູບຫລາຍແບບ.

ມີສາຍຕາເບິ່ງໄກມອງກວ້າງໃນນະໂຍບາຍລາຍຮັບ, ມີການຄິດໄລ່ໄຕ່ຕອງເຖິງຄວາມຕ້ອງການຈ່າຍອັນຈຳເປັນເຄັ່ງຮ້ອນໃນສະເພາະໜ້າ, ແຕ່ວ່າຕ້ອງເອົາໃຈໃສ່ບຳລຸງເພີ່ມຕື່ມໃຫ້ແຫລ່ງລາຍຮັບຢ່າງຍາວນານ. ປຽນແປງໃໝ່ສຳລັບນະໂຍບາຍພາສີຕາມທິດກະທັດ

ລັດເບົາບາງ; ສະຫງົບປົກກະຕິ, ຍຸດຕິທຳ, ສົ່ງເສີມການທຳມາຫາກິນ ແບບຖືກກົດໝາຍ; ຮັບປະກັນອັດຕາສ່ວນລະດົມເຂົ້າງົບປະມານຂອງ ລັດຢ່າງສົມເຫດສົມຜົນ, ພ້ອມນັ້ນຕ້ອງສ້າງເງື່ອນໄຂໃຫ້ບັນດາວິສາ ຫະກິດທ້ອນຮົມທຶນເພື່ອລົງທຶນພັດທະນາ. ປະຕິບັດນະໂຍບາຍບູລິມະສິດ ຕໍ່ພາສີສຳລັບການລົງທຶນເພື່ອພັດທະນາໃຫ້ດີກວ່າເກົ່າ ແລະ ຕໍ່ບັນດາ ເຂດທີ່ມີຄວາມຫຍຸ້ງຍາກຫລາຍປະການ.

ປະຕິບັດລະບອບການສະໝຸດບັນຊີ, ກວດບັນຊີ ແລະ ລະບອບກວດ ກາ, ກວດການຕໍ່ການເງິນຢ່າງແໜ້ນໜາ.

- *ຫັນປ່ຽນນະໂຍບາຍເງິນຕາ ແລະ ການເຄື່ອນໄຫວຂອງທະນາ ຄານ* ຢ່າງແຂງແຮງໃຫ້ສອດຄ່ອງກັບກົນໄກຕະຫລາດ, ປະກອບສ່ວນ ເຂົ້າໃນການເຮັດໃຫ້ຄຸນຄ່າຊື້ຂາຍຂອງເງິນດົ້ງຫວຽດນາມມີຄວາມສະ ຫງົບປົກກະຕິ, ກຳຈັດໄພເງິນເຟີ້ຢູ່ໃນລະດັບຕ່ຳສຸດ, ລະດົມທຶນ ແລະ ໃຫ້ກູ້ຢືມທຶນຢ່າງມີປະສິດທິຜົນ... ທະນາຄານສູນກາງມີຄວາມຮັບຜິດ ຊອບອັນຕົ້ນຕໍໃນການຄວບຄຸມໄພເງິນເຟີ້, ຮັກສາຄຸນຄ່າຂອງເງິນໃຫ້ ສະຫງົບປົກກະຕິ, ຄຸ້ມຄອງເງິນຕາຕ່າງປະເທດ ແລະ ຄຳ.

ຈັດຕັ້ງລະບົບຄັງສິນເຊື່ອປະຊາຊົນເປັນຢ່າງດີ. ຄຸ້ມຄອງການເຄື່ອນ ໄຫວຂອງບັນດາທະນາຄານການຄ້າ ແລະ ບັນດາສາຂາທະນາຄານ ຂອງຕ່າງປະເທດຢ່າງແໜ້ນໜາ. ມີວິທີການຢ່າງຄົບຊຸດເພື່ອຄ່ອຍໆ ຫລຸດຜ່ອນດອກເບ້ຍລົງ, ສ້າງເງື່ອນໄຂໃຫ້ການລົງທຶນເພື່ອພັດທະນາ.

ມີນະໂຍບາຍອັດຕາສ່ວນແລກປ່ຽນເງິນຕາຕ່າງປະເທດ ແລະ ຄຸ້ມ

ຄອງເງິນຕາຕ່າງປະເທດຢ່າງສົມເຫັດສົມຜົນ, ຊຸກຍູ້ການຂາອອກ ແລະ ດັດສົມການຂາເຂົ້າໃຫ້ໄດ້, ເຮັດໃຫ້ເງິນດົ່ງຫວຽດນາມມີຄຸນຄ່າ ແລກປ່ຽນຢ່າງຄົບຖ້ວນ ແລະ ກາຍເປັນພາຫະນະຈໍລະຈອນ ເງິນຕາ ອັນດຽວຢູ່ໃນປະເທດ.

- ສືບຕໍ່ບູລະນະສົມບູນໃຫ້*ລະບົບລາຄາ* ແລະ ປ່ຽນແປງໃໝ່ສຳລັບ ວຽກງານຄຸ້ມຄອງລາຄາ.

ເພີ່ນທະວີກຳລັງຂອງການທ້ອນແຮໄວ້ແຫ່ງຊາດ, ປ່ຽນແປງ ໃໝ່ສຳລັບກົນໄກໃນການທ້ອນແຮໄວ້ ແລະ ຈໍລະຈອນ, ກົນໄກໃນການ ສ້າງຕັ້ງ ແລະ ເຄື່ອນໄຫວຂອງລະບົບຄັງເງິນເພື່ອຄວາມສະຫງົບປົກ ກະຕິຂອງລາຄາ, ກໍ່ຄືແບບວິທີແຊກແຊງເພື່ອເຮັດໃຫ້ລາຄາຂອງບັນ ດາປະເພດສິນຄ້າທີ່ຈຳເປັນມີຄວາມສະຫງົບປົກກະຕິ.

5 - ຍົກສູງຄວາມສາມາດ ແລະ ປະສິດທິຜົນໃນການຄຸ້ມ ຄອງເສດຖະກິດຂອງລັດ.

ລັດຕ້ອງປະຕິບັດບັນດາພາລະບົດບາດຂອງຕົນເປັນຢ່າງດີຄື: ກຳ ນົດທິດທາງໃຫ້ແກ່ການພັດທະນາ; ລົງທຶນໂດຍກົງເຂົ້າບາງຂົງເຂດ ເພື່ອຊຸກຍູ້ຄວາມບຸກປືນໃນການພັດທະນາ; ສ້າງຂອບເຂດກົດໝາຍ ແລະ ມີລະບົບນະໂຍບາຍຕ່າງໆ ຢ່າງສະເໝີຕົ້ນສະເໝີປາຍເພື່ອສ້າງ ໄດ້ສິ່ງແວດລ້ອມອັນສະຫງົບປົກກະຕິ ແລະ ສະດວກໃຫ້ວົງການທຸລະ ກິດທຳມາຫາກິນຢ່າງຄ່ອຍໆຈະເລີນ; ແກ້ໄຂ, ກຳຈັດປັດເປົ່າດ້ານຫຍໍ້ ທໍ້ຂອງກົນໄກຕະຫລາດ; ແຈກຢາຍ ແລະ ແຈກຢາຍຄືນໃໝ່ລາຍໄດ້

ແຫ່ງຊາດ; ຄຸ້ມຄອງຊັບສົມບັດສ່ວນລວມ ແລະ ກວດສະຖິຕິ, ຄວບຄຸມທຸກໆການເຄື່ອນໄຫວທາງເສດຖະກິດ, ສັງຄົມ.

ປະຕິບັດພາລະບົດບາດຄຸ້ມຄອງແຫ່ງລັດທາງດ້ານເສດຖະກິດ ແລະ ພາລະບົດບາດເປັນເຈົ້າໃນການກຳມະສິດຊັບສົມບັດສ່ວນລວມຂອງລັດຢ່າງຖືກຕ້ອງເໝາະສົມ. ພະນັກງານ ແລະ ອົງການປົກຄອງຂັ້ນຕ່າງໆ ບໍ່ແຊກແຊງເຂົ້າພາລະບົດບາດຄຸ້ມຄອງທຸລະກິດ ແລະ ສິດເປັນເຈົ້າຕົນເອງທາງດ້ານໄລ່ລຽງເສດຖະກິດຂອງວິສາຫະກິດ.

IV - ຂະຫຍາຍວິທະຍາສາດ ແລະ ເຕັກໂນໂລຢີ, ການສຶກສາ ແລະການກໍ່ສ້າງ.

1- ວຽກງານວິທະຍາສາດ ແລະ ເຕັກໂນໂລຢີ.

ການເຄື່ອນໄຫວທາງດ້ານວິທະຍາສາດ ແລະ ເຕັກໂນໂລຢີ ຂອງປະເທດເຮົາໃນໄລຍະຕໍ່ໜ້າຕ້ອງໄດ້ສຸມໃສ່ບັນດາທິດອັນຕົ້ນຕໍດັ່ງນີ້:

- ໝຸນໃຊ້ຢ່າງປະດິດສ້າງ ແລະ ຂະຫຍາຍທິດສະດີມາກ-ເລນິນ ແລະ ແນວຄິດໂຮ່ຈິມິນ; ຂະຫຍາຍ ແລະ ສົມທົບບັນດາຂະແໜງວິທະຍາສາດ ສັງຄົມ ແລະ ວັດທະນະທຳມະນຸດຊາດ, ວິທະຍາສາດທຳມະຊາດ ແລະ ເຕັກໂນໂລຢີ...ຢ່າງແໜ້ນແກ່ນເພື່ອເປັນບ່ອນອີງທາງດ້ານວິທະຍາສາດໃຫ້ການຜັນຂະຫຍາຍປະຕິບັດໂຄງການການເມືອງ, ລັດຖະທຳມະນູນ, ກຳນົດທິດທາງ, ບາດກ້າວເດີນຂອງການຫັນເປັນ

ອຸດສາຫະກຳ, ທັນເປັນທັນສະໄໝ, ກໍ່ສ້າງກົດໝາຍ, ບັນດານະໂຍ ບາຍ, ແຜນການ ແລະ ໂຄງການເສດຖະກິດ-ສັງຄົມ.

- ຊຸກຍູ້ການຄົ້ນຄວ້າ, ນຳໃຊ້ຜົນສຳເລັດຕ່າງໆຂອງວິທະຍາສາດ ທຳມະຊາດ ແລະ ເຕັກໂນໂລຍີທີ່ກ້າວໜ້າທັນສະໄໝຢ່າງແຂງແຮງ ຢູ່ໃນທຸກໆຂະແໜງການຜະລິດທຸລະກິດ, ບໍລິການ, ຄຸ້ມຄອງ ແລະ ປ້ອງ ກັນຊາດ-ປ້ອງກັນຄວາມສະຫງົບ.

ຈັບເອົາເຕັກໂນໂລຍີລະດັບສູງເຊັ່ນເຕັກໂນໂລຍີສື່ສານ, ເຕັກໂນໂລ ຍີຊີວະວິທະຍາ, ເຕັກໂຕໂລຍີຜະລິດວັດສະດຸໃໝ່, ບັນດາເຕັກໂນໂລ ຍີໃໝ່ຢູ່ໃນຂະແໜງການປະດິດເຄື່ອງຈັກ... ເພື່ອມີຄວາມສາມາດ ກ້າວເຂົ້າສູ່ການທັນເປັນທັນສະໄໝຢ່າງໄວວາຢູ່ໃນບັນດາຂອດສຳຄັນ ທີ່ມີລັກສະນະຕັດສິນ.

ຕີລາຄາຢ່າງຊັດເຈນຕໍ່ແຫຼ່ງຊັບພະຍາກອນແຫ່ງຊາດເພື່ອສະເໜີ ຍຸດທະສາດ ໃນການຂຸດຄົ້ນ, ນຳໃຊ້, ປົກປັກຮັກສາຊັບພະຍາກອນຢ່າງ ຖືກຕ້ອງ. ຮັບປະກັນຫລັກຖານທາງດ້ານວິທະຍາສາດ ແລະ ເຕັກໂນໂລ ຍີໃຫ້ການຂຸດຄົ້ນ, ນຳໃຊ້ຊັບພະຍາກອນທຳມະຊາດຢ່າງສົມເຫດສົມ ຜົນ ແລະ ປະຢັດ, ປົກປັກຮັກສາສິ່ງແວດລ້ອມມົນລະພິດເປັນຢ່າງດີ. ນຳໃຊ້ເຕັກໂນໂລຍີ ທັນສະໄໝຢູ່ໃນການຄວບຄຸມ, ຕີລາຄາ ແລະ ແກ້ ໄຂການກະທົບຂອງສິ່ງແວດລ້ອມ. ໃຫ້ບູລິມະສິດຕໍ່ເຕັກໂນໂລຍີສະ ອາດ, ໃຊ້ວັດຖຸດິບ ແລະ ເຊື້ອໄຟໜ້ອຍທີ່ສຸດ. ສະເໜີບັນດາວິທີການ ວິທະຍາສາດ ແລະ ນຳໃຊ້ພາຫະນະເຕັກນິກຕ່າງໆເພື່ອກຳຈັດຜົນຮ້າຍ

ຢ້ອນຫລັງຂອງໄພທຳມະຊາດ.

- ເອົາໃຈໃສ່ຢ່າງຈົດຈໍ່ຕໍ່ການຄົ້ນຄວ້າຟື້ນຖານທາງດ້ານວິທະຍາສາດສັງຄົມ, ວັດທະນະທຳມະນຸດຊາດ ແລະ ວິທະຍາສາດ ທຳມະຊາດ ເພື່ອເປັນບ່ອນອີງຢ່າງຍາວນານ ແລະ ໜັກແໜ້ນໃຫ້ແກ່ການຄົ້ນຄວ້າ, ນຳໃຊ້, ຜັນຂະຫຍາຍ ແລະ ຮັບເອົາບັນດາຜົນສຳເລັດໃໝ່ຂອງວິທະຍາສາດ ແລະ ເຕັກໂນໂລຍີ.

- ສ້າງກຳລັງແຮງບົ່ມຊ້ອນເພື່ອແນໃສ່ຂະຫຍາຍຟື້ນຖານວິທະຍາສາດ ແລະ ເຕັກໂນໂລຍີອັນທັນສະໄໝ. ຊຸກຍູ້ບັນດາຮູບການກໍ່ສ້າງພະນັກງານວິທະຍາສາດຢູ່ພາຍໃນປະເທດ ແລະ ຢູ່ຕ່າງປະເທດ. ກໍ່ສ້າງຄຸ້ມແຖວຊຸ່ຮວຊຸ້ານແຖວໜ້າໂດຍໄວ. ນຳໃຊ້ຄຸ້ມແຖວພະນັກງານທີ່ມີໃນປະຈຸບັນໃຫ້ມີປະສິດທິຜົນ: ເພີ່ມເຕີມພະນັກງານໜຸ່ມໜ້ອຍໃຫ້ບັນດາອົງການສຳນັກງານທີ່ມີພາລະບົດບາດຄົ້ນຄວ້າ, ຜັນຂະຫຍາຍວຽກງານວິທະຍາສາດ ແລະ ໃຫ້ບັນດາໂຮງຮຽນມະຫາວິທະຍາໄລ. ສັບຊ້ອນກຳລັງພະນັກງານວິທະຍາສາດ ແລະ ເຕັກໂນໂລຍີຄືນໃໝ່ຕາມທິດຕິດແໜ້ນວິທະຍາສາດ ແລະ ເຕັກໂນໂລຍີກັບການສຶກສາ, ກໍ່ສ້າງພະນັກງານ, ຕິດແໜ້ນການຄົ້ນຄວ້າ-ຜັນຂະຫຍາຍກັບການຜະລິດ ແລະ ການບໍລິການ.

ເພີ່ມທະວີຟື້ນຖານວັດຖຸເຕັກນິກ ໃຫ້ບັນດາຂະແໜງວິທະຍາສາດ ແລະ ເຕັກໂນໂລຍີ; ເອົາໃຈໃສ່ຢ່າງຈົດຈໍ່ຕໍ່ການກໍ່ສ້າງລະບົບຫ້ອງທົດລອງວິທະຍາສາດທີ່ທັນສະໄໝຢູ່ໃນບັນດາໂຮງຮຽນມະຫາວິທະຍາໄລ

ແລະ ສະຖາບັນຄົ້ນຄວ້າ; ກໍ່ສ້າງ ແລະ ຍົກລະດັບຕາມ່າງບໍລິການເຕັກ ນິກເຊັ່ນວັດແທກ, ວາງມາດຕະຖານ, ຕີລາຄາເຕັກໂນໂລຍີ, ສື່ສານ ທາງດ້ານວິທະຍາສາດ ແລະ ເຕັກໂນໂລຍີ.

- ກໍ່ສ້າງ ແລະ ປະຕິບັດລະບົບນະໂຍບາຍ ແລະ ກົນໄກຄົບຊຸດເປັນ ຢ່າງດີເພື່ອຂະຫຍາຍວິທະຍາສາດ ແລະ ເຕັກໂນໂລຍີ, ລະອຽດຄື:

ເສີມຂະຫຍາຍການຊອກຫາ ແລະ ປະດິດສ້າງໃນວຽກງານຄົ້ນຄວ້າ, ພ້ອມກັນນັ້ນຕ້ອງເຊີດຊູຄວາມຮັບຜິດຊອບທາງດ້ານສັງຄົມຂອງຜູ້ເຮັດ ວຽກງານວິທະຍາສາດ ແລະ ເຕັກໂນໂລຍີ ທີ່ມີຕໍ່ປະເທດຊາດ. ກໍ່ຕັ້ງຕະ ຫລາດໃຫ້ບັນດາການເຄື່ອນໄຫວທາງດ້ານວິທະຍາສາດ ແລະ ເຕັກໂນ ໂລຍີ. ຄວບຄຸມເຕັກໂນໂລຍີນຳເຂົ້າປະເທດ. ຊຸກຍູ້ບັນດາວິສາຫະກິດ, ໂດຍສະເພາະແມ່ນວິສາຫະກິດຂະໜາດໃຫຍ່ຂອງລັດໃຫ້ດຳເນີນການ ປຽນແປງໃໝ່ທາງດ້ານເຕັກໂນໂລຍີ, ດຶງດູດເອົາກຳລັງຄົ້ນຄວ້າ-ພັນ ຂະຫຍາຍວິທະຍາສາດ-ເຕັກໂນໂລຍີເຂົ້າເຮັດວຽກຢູ່ໃນວິສາຫະກິດ ຕ່າງໆ.

ມີນະໂຍບາຍເອົາໃຈໃສ່ຢ່າງຈິດຈໍ່ ເງື່ອນໄຂເຮັດວຽກ, ຜົນປະໂຫຍດ ທາງດ້ານວັດຖຸ ແລະ ຈິດໃຈຂອງນັກຄົ້ນຄວ້າ, ປະດິດແຕ່ງ ແລະ ຂອງ ຜູ້ນຳໃຊ້ວິທະຍາສາດ, ເຕັກໂນໂລຍີ; ປົກປ້ອງສິດກ່ຽວກັບກຳມະສິດທາງ ດ້ານສະຕິປັນຍາ, ໃຫ້ເອື້ອເຟື້ອຜູ້ມີຄວາມເກັ່ງກ້າທີ່ອຸທິດອັນສຳຄັນ; ສົ່ງ ເສີມພະນັກງານວິທະຍາສາດໄປເຮັດວຽກຢູ່ເຂດຫ່າງໄກ, ສອກຫລີກ. ສະກັດກັ້ນສະພາບ"ທາດຫນີ່ນໄຫລອອກພາຍນອກ".

ເຮັດໃຫ້ບັນດາແຫຼ່ງທຶນທີ່ລົງທຶນໃສ່ບັນດາການເຄື່ອນໄຫວວິທະຍາສາດ ແລະ ເຕັກໂນໂລຍີມີຫລາຍຮູບຫລາຍແບບ. ກໍ່ສ້າງຄັງສົມເຊື່ອ ແລະ ທະນາຄານສຳລັບລົງທຶນເພື່ອຂະຫຍາຍວິທະຍາສາດ ແລະ ເຕັກໂນໂລຍີ. ຄ່ອຍໆຍົກສູງລະດັບການລົງທຶນຂອງທະນາຄານແຫ່ງລັດໃນຂົງເຂດວິທະຍາສາດ ແລະ ເຕັກໂນໂລຍີ.

ປຸກລຸກນ້ຳໃຈຮັກຊາດ, ມານະຈິດບຸກບືນໃນໝູ່ປະຊາຊົນ, ເສີມຂະຫຍາຍຄວາມເກັ່ງກ້າສະຕິປັນຍາຂອງຄົນຫວຽດນາມ, ຕັດສິນໃຈນຳເອົາປະເທດເຮົາອອກຈາກຄວາມທຸກຈົນ ແລະ ຫລ້າຫລັງດ້ວຍການຂະຫຍາຍວິທະຍາສາດ ແລະ ເຕັກໂນໂລຍີ.

2 - ສຶກສາ ແລະ ກໍ່ສ້າງ.

ການສຶກສາ ແລະ ການກໍ່ສ້າງແມ່ນ*ນະໂຍບາຍແຖວໜ້າ*ຂອງປະ*ເທດ* ແນໃສ່ຍົກສູງລະດັບຄວາມຮູ້ຂອງປະຊາຊົນ, ກໍ່ສ້າງ ກຳລັງຄົນ, ບຳລຸງຜູ້ທີ່ມີຄວາມເກັ່ງກ້າສາມາດ. ຕ້ອງຖືສຳຄັນທັງສາມດ້ານຄື: ເປີດກວ້າງຂະໜາດຂອງການສຶກສາ, ກໍ່ສ້າງ, ຍົກສູງຄຸນນະພາບ ແລະ ເສີມຂະຫຍາຍປະສິດທິຜົນ. ທິດທາງລວມຂອງການສຶກສາ, ກໍ່ສ້າງໃນ 5 ປີ ຕໍ່ໜ້າຄືພັດທະນາແຫລ່ງກຳລັງມະນຸດເພື່ອຕອບສະໜອງໃຫ້ຄວາມຕ້ອງການຂອງການຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝ, ສ້າງເງື່ອນໄຂໃຫ້ປະຊາຊົນ, ໂດຍພິເສດແມ່ນໃຫ້ຊາວໜຸ່ມມີວຽກເຮັດງານທຳ; ແກ້ໄຂບັນດາສິ່ງຫຍໍ້ທໍ້, ອ່ອນແອໃນວຽກງານສຶກສາ ແລະ ກໍ່ສ້າງ.

ຮອດປີ 2000 ຮັບປະກັນສ່ວນຫລວງຫລາຍໃນຈຳນວນເດັກນ້ອຍ ທີ່ມີອາຍຸ 5 ປີ ໄດ້ຊຸ້ມໃຊ້ຫລັກສູດສຶກສານ້ອງນ້ອຍ; ລົບລ້າງຄວາມກຶກ ໜ້ງສືໃຫ້ຈຳພວກຄົນຢູ່ໃນໄວອາຍຸແຕ່ 15 ຫາ 35 ປີ, ຮັດແຄບຈຳ ນວນຄົນກຶກໜ້ງສືຢູ່ໃນໄວອາຍຸອື່ນໆ ໃຫ້ຫລຸດໜ້ອຍລົງ; ປະຕິບັດສຳ ເລັດໂດຍພື້ນຖານກ່ຽວກັບການເຜີຍແຜ່ສຶກສາຊັ້ນປະຖົມແບບບ້ງຄັບ ໃນທົ່ວປະເທດ, ເຊິ່ງກ່ອນອື່ນໝົດແມ່ນເຜີຍແຜ່ໂດຍທົ່ວໄປໃຫ້ຈຳນວນ ເດັກນ້ອຍຢູ່ໃນໄວອາຍຸ ແຕ່ 6 ຫາ 14 ປີ; ປະຕິບັດການເຜີຍແຜ່ສາ ມັນຮາກຖານສຶກສາຊັ້ນກາງຕາມແບບບ້ງຄັບຢູ່ໃນຕົວເມືອງໃຫຍ່, ເຂດອຸດສາຫະກຳລວມສູນ ແລະ ບັນດາບ່ອນມີເງື່ອນໄຂອະນຸຍາດ. ມີ ນະໂຍບາຍຮັບປະກັນໃຫ້ລູກຫລານຂອງຄອບຄົວມີຄຸນງາມຄວາມດີຕໍ່ ຊາດ ແລະ ຄອບຄົວຍາກຈົນໄດ້ເຂົ້າໂຮງຮຽນ, ປຸກລະດົມ ແລະ ຊ່ວຍ ເຫລືອບັນດານັກຮຽນຜູ້ຮຽນເກ່ັງມີອະນາຄົດແຈ່ມໃສ. ຈັດຕັ້ງຂະບວນ ຂົ່ນຂວາຍຢ່າງກວ້າງຂວາງໃນໝູ່ປະຊາຊົນຕັດສິນໃຈລົບລ້າງຄວາມ ກຶກໜ້ງສື ແລະ ຕ້ານໄພຂາດການສຶກສາ.

ກໍ່ສ້າງລະບົບໂຮງຮຽນສຶກສາສະເພາະ, ໂຮງຮຽນຈຸດສຸມ, ສູນສຶກ ສາທີ່ມີຄຸນນະພາບສູງຢູ່ບັນດາຊັ້ນສຶກສາ. ຖືສຳຄັນຕໍ່ການສອນພາສາ ຕ່າງປະເທດ ແລະ ວິຊາຄອມຜິວເຕີໃນຂັ້ນສາມັນສຶກສາ. ສ້າງບັນດາ ໂຮງຮຽນສາມັນສຶກສາກິນນອນກັບທີ່ຢູ່ໃນບັນດາເຂດມີຄວາມຫຍຸ້ງ ຍາກກັນດານ, ເຂດຊົນຊາດສ່ວນໜ້ອຍ. ຖືສຳຄັນຕໍ່ການສຶກສາໃນ ຄອບຄົວ.

ປຽນແປງໃໝ່ສຳລັບລະບົບການສຶກສາວິຊາສະເພາະ ແລະ ມະຫາວິທະຍາໄລ, ສົມທົບການກໍ່ສ້າງກັບການຄົ້ນຄວ້າ, ກໍ່ສ້າງແຫລ່ງກຳລັງຄົນມີຄວາມສາມາດພຽງພໍເພື່ອສຳພັດກັບເຕັກໂນໂລຢີອັນກ້າວໜ້າ. ປັບປຸງ ແລະ ຍົກສູງຄຸນນະພາບຂອງລະບົບສະໜັນສຶກສາ. ຂະຫຍາຍພື້ນຖານຮູບການສຶກສາແຕ່ໄກ. ເປີດກວ້າງລະບົບໂຮງຮຽນສອນວິຊາຊີບ ແລະ ກໍ່ສ້າງກຳມະກອນມືອາຊີບຢ່າງຊຳນານ. ໃນເວລາສຸມກຳລັງເຂົ້າໃນການກໍ່ສ້າງລະບົບໂຮງຮຽນຂອງຫລວງ, ຕ້ອງມີນະໂຍບາຍຊ່ວຍເຫລືອ, ແນະນຳການຂະຫຍາຍ ແລະ ຄຸ້ມຄອງພື້ນຖານໂຮງຮຽນເຄິ່ງຫລວງ ໂຮງຮຽນໂດຍປະຊາຊົນສ້າງຂຶ້ນ ແລະ ໂຮງຮຽນເອກະຊົນໃຫ້ເປັນຢ່າງດີ. ສົ່ງເສີມການສອນອາຊີບກັບທີ່ຢູ່ໃນວິສາຫະກິດ. ຂະຫຍາຍການກໍ່ສ້າງລະດັບເໜືອມະຫາວິທະຍາໄລ; ເພີ່ມຈຳນວນນັກສຶກສາມະຫາວິທະຍາໄລ ແລະ ເໜືອມະຫາວິທະຍາໄລຮຽນຢູ່ຕ່າງປະເທດ ແລະ ຢູ່ສູນສຶກສາສາກົນຢູ່ພາຍໃນປະເທດ. ສົ່ງເສີມການໄປສຶກສາຮ່ຳຮຽນ ຢູ່ຕ່າງປະເທດໂດຍທຶນຂອງຕົນເອງ. ແກ້ໄຂສາຍພົວພັນລະຫວ່າງການກໍ່ສ້າງກັບການນຳໃຊ້ໃຫ້ເປັນຢ່າງດີ. ກໍ່ສ້າງຖັນແຖວປັນຍາຊົນທາງດ້ານວິທະຍາສາດເຕັກໂນໂລຢີ, ວັດທະນະທຳ ວັນນະຄະດີສິລະປະກຳ, ຄຸ້ມຄອງເສດຖະກິດ, ຄຸ້ມຄອງສັງຄົມ... ຢ່າງຄົບຊຸດ. ກໍ່ສ້າງຖັນແຖວລັດຖະກອນ ແລະ ພາລະກອນຂອງລະບົບບໍລິຫານຂັ້ນຕ່າງໆຢ່າງໄວວາ. ກໍ່ສ້າງຖັນແຖວນັກຄຸ້ມຄອງວິສາຫະກິດທີ່ຊຳນານ. ຍົກສູງອັດຕາສ່ວນແຮງງານໄດ້ຮັບການກໍ່ສ້າງແຕ່ 10% ໃນປະຈຸບັນຂຶ້ນເປັນ 22 ຫາ 25%. ຍົກສູງຄວາມຮູ້ທາງດ້ານວັດທະນະທຳ, ວິຊາ

ຊຸບໃຫ້ເອື້ອຍນ້ອງແມ່ຍິງ, ບຳລຸງກຳລັງພະນັກງານເພດຍິງ.

ກຳນົດຈຸດໝາຍໃຫ້ຈະແຈ້ງ, ສ້າງເນື້ອໃນຂອງຫລັກຊູດ, ປຽນແປງໃໝ່ວິທີການສຶກສາ, ກໍ່ສ້າງ, ເລືອກເອົາບັນດາເນື້ອໃນທີ່ມີລັກສະນະຟື້ນຖານ, ທັນສະໄໝ. ເພີ່ມທະວີການສຶກສາພົນລະເມືອງ, ອົບຮົມນ້ຳໃຈຮັກຊາດ, ລັດທິມາກ-ເລນິນ ແລະ ແນວຄິດໂຮ່ຈິມິນ, ອົບຮົມຄຸນສົມບັດສິນທຳ ແລະ ວັດທະນະທຳມະນຸດຊາດ, ປະວັດສາດຂອງຊາດ ແລະ ເອກະລັກ ຂອງວັດທະນະທຳແຫ່ງຊາດ; ມານະຈິດປົນຂຶ້ນເພື່ອອະນາຄົດແຈ່ມໃສຂອງຕົວເອງ ແລະ ຂອງປະເທດຊາດ. ໝຸນໃຊ້ບັນດາວິທີການອັນກ້າວໜ້າ ແລະ ນຳໃຊ້ອຸປະກອນທັນສະໄໝເຂົ້າຂະບວນການກໍ່ສ້າງ; ຂະຫຍາຍຂະບວນການຮ່ຳຮຽນໂດຍຕົນເອງຢ່າງແຂງແຮງ, ກໍ່ສ້າງໂດຍຕົນເອງເປັນປະຈຳ ແລະ ກວ້າງຂວາງ. ສະກັດກັ້ນ ແລະ ແກ້ໄຂບັນດາຄວາມຫຍໍ້ທໍ້ຢ່າງເຂັ້ມງວດຢູ່ໃນການສິດສອນ, ການຮຽນ, ສອບເສງ, ແລະ ການມອບປະກາດສະນິຍະບັດ, ໃບຢັ້ງຢືນຈົບຊັ້ນສຶກສາ.

ປຽນແປງໃໝ່ຕໍ່ວຽກງານກໍ່ສ້າງ, ບຳລຸງຄົ້ນແຖວຄູອາຈານ ແລະ ພະນັກງານຄຸ້ມຄອງການສຶກສາ. ນຳໃຊ້ຄູອາຈານໃຫ້ຖືກກັບຄວາມສາມາດ, ປະຕິບັດນະໂຍບາຍຕອບແທນໃຫ້ຖືກຕາມເຫື່ອແຮງ ແລະ ຄວາມສາມາດຂອງຄູອາຈານດ້ວຍຈິດໃຈເອື້ອເຟື້ອ ແລະ ສົ່ງເສີມວິຊາສອນໜັງສື.

ສະຫລຸບການປະຕິຮູບທາງດ້ານສຶກສາ; ສ້າງຍຸດທະສາດພັດທະນາ

ການສຶກສາ ແລະ ກໍ່ສ້າງຢູ່ໃນໄລຍະຫັນເປັນອຸດສາຫະກຳ, ຫັນເປັນທັນ ສະໄໝ. ກໍ່ສ້າງ ແລະ ບູລະນະລະບົບກົດໝາຍ ແລະ ນະໂຍບາຍຂອງ ລັດກ່ຽວກັບການສຶກສາ, ກໍ່ສ້າງໃຫ້ສົມບູນ. ເພີ່ມທະວີການຄຸ້ມຄອງ ຂອງລັດຕໍ່ບັນດາປະເພດໂຮງຮຽນ ແລະ ຮູບການສຶກສາ ແລະ ກໍ່ສ້າງ.

ຄ່ອຍໆຍົກອັດຕາສ່ວນຂອງລາຍຈ່າຍງົບປະມານໃຫ້ຂົງເຂດສຶກ ສາ, ກໍ່ສ້າງ. ປຸກລະດົມການປະກອບສ່ວນຂອງແຕ່ລະຄອບຄົວ, ແຕ່ ລະຄົນ, ດູດດຶງການລົງທຶນຈາກວົງຄະນາຍາດແຫ່ງຊາດ, ບັນດາວົງ ການພາຍ ໃນ ແລະ ພາຍນອກປະເທດໃຫ້ແກ່ການສຶກສາ, ກໍ່ສ້າງ. ຊຸກ ຍູ້ການຮ່ວມມືສາກົນຢູ່ໃນຂົງເຂດສຶກສາ, ກໍ່ສ້າງຢ່າງແຂງແຮງ.

ເສີມຂະຫຍາຍຄວາມຮັບຜິດຊອບຂອງຄະນະພັກ, ຄະນະປົກຄອງ ຂັ້ນຕ່າງໆ, ຂອງອົງການຈັດຕັ້ງມະຫາຊົນ, ບັນດາວິສາຫະກິດຕໍ່ພາລະ ກິດສຶກສາ, ກໍ່ສ້າງ.

V - ກໍ່ສ້າງພື້ນຖານວັດທະນະທຳອັນກ້າວໜ້າ, ມີເອກະລັກແຫ່ງ ຊາດຢ່າງຈູບຈ້າວ.

ວັດທະນະທຳແມ່ນພື້ນຖານທາງດ້ານຈິດໃຈຂອງສັງຄົມ, ທັງເປັນຈຸດ ໝາຍ, ທັງເປັນກຳລັງໜູນຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ.

ທຸກໆການເຄື່ອນໄຫວທາງດ້ານວັດທະນະທຳ, ສິລະປະວັນນະຄະດີ ຕ້ອງແນໃສ່ການກໍ່ສ້າງ ແລະ ຂະຫຍາຍພື້ນຖານວັດທະນະທຳອັນກ້າວ ໜ້າ, ມີເອກະລັກແຫ່ງຊາດຢ່າງຈູບຈ້າວ, ກໍ່ສ້າງຄົນຫວຽດນາມທາງ

ດ້ານແນວຄິດຈິດໃຈ, ຄຸນສົມບັດສິນທຳ, ແບບແຜນດຳລົງຊີວິດ, ກໍ່ສ້າງ ສິ່ງແວດລ້ອມທາງດ້ານວັດທະນະທຳອັນສົດໃສສີວິໄລໃຫ້ການພັດທະ ນາສັງຄົມ.

ສືບທອດ ແລະ ເສີມຂະຫຍາຍບັນດາຄຸນຄ່າທາງດ້ານຈິດໃຈ, ຄຸນ ສົມບັດສິນທຳ ແລະ ຄວາມງາມ, ບັນດາມູນມໍລະດົກວັດທະນະທຳ, ສີ ລະປະກຳຂອງຊາດ. ຜິທັກຮັກສາ ແລະ ບູລະນະບັນດາອະນຸສອນສະ ຖານປະຫວັດສາດ, ວັດທະນະທຳ ແລະ ທີວທັດທຳມະຊາດຂອງປະເທດ. ໃນເງື່ອນໄຂເສດຖະກິດຕະຫລາດ ແລະ ເປີດກວ້າງການພົວພັນກັບສາ ກົນຕ້ອງເອົາໃຈໃສ່ເປັນພິເສດຕໍ່ການຮັກສາ ແລະ ຂະຫຍາຍເອກະລັກ ອັນດີງາມຂອງວັດທະນະທຳແຫ່ງຊາດ, ສືບທອດ ແລະ ເສີມຂະຫຍາຍ ມູນເຊື້ອຄຸນສົມບັດສິນທຳ, ຮີດຄອງປະເພນີອັນດີງາມ ແລະ ຄວາມທະ ນົງໃຈຂອງຊາດ. ຮັບເອົາສິ່ງຍອດຍິ່ງຂອງນາໆຊາດຢູ່ໃນໂລກ, ເຮັດ ໃຫ້ຟື້ນຖານວັດທະນະທຳ ຂອງຫວຽດນາມນັບມື້ນັບຈົບງາມ ແລະ ອຸ ດົມສົມບູນ; ຕໍ່ສູ້ຕ້ານການແຊກຊຶມຂອງບັນດາປະເພດວັດທະນະທຳ ອັນຜິດຮ້າຍ, ຕ້ານທ່າອ່ຽງນິຍົມຊົມຊອບຕ່າງປະເທດ, ຊອດກະຈາ ເສຍກົກຂາດຮາກ. ແກ້ໄຂຈິດຕະສາດນິຍົມນັບຖືເງິນຄຳເປັນໃຫຍ່, ບໍ່ ນັບຖືຈັນຍາທຳ ແລະ ຖືເບົາບັນດາຄຸນຄ່າຂອງວັດທະນະທຳມະນຸດ ຊາດ.

ປັບປຸງ, ເພີ່ມທະວີຕາມ່າງວັດທະນະທຳຮາກຖານ. ຄຸ້ມຄອງບັນດາ ການເຄື່ອນໄຫວວັດທະນະທຳ, ສິລະປະກຳໃຫ້ດີ. ຂຸດຄົ້ນ ແລະ ຂະຫຍາຍ

ທຸກເອກະລັກ ແລະ ຄຸນຄ່າວັດທະນະທຳ, ສີລະປະກຳຂອງບັນດາຊົນຊາດສ່ວນຫນ້ອຍຢູ່ໃນປະເທດເຮົາ,ສ້າງຄວາມເປັນເອກະພາບຢູ່ໃນພື້ນຖານວັດທະນະທຳຫວຽດນາມທີ່ມີລັກສະນະຫລາຍຮູບຫລາຍແບບ ແລະ ອຸດົມສົມບູນ.

ຍົກສູງຄວາມຮູ ແລະ ລະດັບຊົມໃຊ້ວັດທະນະທຳຂອງປະຊາຊົນໃນທຸກເຂດແຄວ້ນຂອງປະເທດ. ແນະນຳປະຊາຊົນກ່ຽວກັບແບບດຳລົງຊີວິດວັດທະນະທຳ, ສີວິໄລ. ຕ້ານຣິດຄອງອັນຫລ້າຫລັງ, ເຊື່ອຖືງວມງວາຍຕ່າງໆ.

ຂະຫຍາຍໄປຄຽງຄູ່ກັບຄຸ້ມຄອງຢ່າງດີຕໍ່ຕາມ່າງສື່ສານ, ຫນັງສືພິມວາລະສານ, ພິມຈຳຫນ່າຍ, ວິທະຍຸກະຈາຍສຽງ, ໂທລະພາບ, ຮູບເງົາ ແລະ ບັນດາຮູບການສິລະປະກຳອື່ນໆ. ວາງແຜນສ້າງຍຸດທະສາດທາງດ້ານສື່ສານໂດຍໄວ; ຖືສຳຄັນການຍົກສູງຄຸນນະພາບສື່ນວນຊົນ, ລັກສະນະຊີ້ຊັດ, ລັກສະນະສູ້ຮົບ ແລະ ລັກສະນະຫລາຍຮູບຫລາຍແບບຂອງການສື່ສານ; ຖືສຳຄັນການຄົ້ນເຫັນ ແລະ ເຊີດຊູປັດໄຈໃຫມ່ພ້ອມກັນນັ້ນກໍ່ຕຳນິວິຈານບັນດາຮູບການຫຍໍ້ທໍ້. ເພີ່ມທະວີຮ່ວມງານສື່ສານກັບຕ່າງປະເທດ.

ຮັບປະກັນປະຊາທິປະໄຕ; ສິດເສລີພາບໃຫ້ທຸກໆການປະດິດສ້າງ ແລະ ເຄື່ອນໄຫວວັດທະນະທຳ, ເສີມສ້າງຜູ້ມີປັນຍາສາມາດ, ພ້ອມນັ້ນກໍ່ເຊີດຊູຄວາມຮັບຜິດຊອບຂອງນັກສິລະປິນຕໍ່ມະຫາຊົນ, ຕໍ່ຊາດ ແລະ ຍຸກສະໄຫມ. ສົ່ງເສີມ, ສ້າງເງື່ອນໄຂຊຸກຍູ້ການປະດິດຄິດແຕ່ງວັນນະ

ຄະດີສີລະປະກຳ ທີ່ສ່ອງແສງບັນດາປັດໄຈໃໝ່ຢູ່ໃນສັງຄົມ, ປຸກລະດົມ ອັນດີອັນເດັ່ນ, ສິ່ງດີງາມລະຫວ່າງຄົນກັບຄົນ, ລະຫວ່າງຄົນກັບສັງຄົມ ກັບທຳມະຊາດ; ຕຳນິວິຈານອັນຜິດອັນຊົ່ວຮ້າຍ, ຫັນເຂົ້າສູ່ສິ່ງທີ່ເປັນ ສັດຈະທຳ, ຈັນຍາທຳ, ສິນທຳ ແລະ ຄວາມງາມ. ເຜີຍແຜ່ບັນດາບົດ ປະພັນມີເນື້ອໃນດີຢ່າງຫັນການ, ນຳເອົາບັນດາປັດໄຈວັດທະນະທຳທີ່ ດີ, ຈິດໃຈມະນຸດອະລິຍະທຳຊຸ່ມເລິກເຂົ້າບັນດາຂົງເຂດຂອງຊີວິດສັງ ຄົມ, ຈາກການປະຕິດຢູ່ໃນຄອບຄົວ, ໂຮງຮຽນ, ສັງຄົມຈົນຮອດບັນດາ ການເຄື່ອນໄຫວຜະລິດ, ທຸລະກິດ, ແລກປ່ຽນ...

ກໍ່ສ້າງຄອບຄົວອົ່ມໜຳສຳລານ, ສະເໜີພາບ, ກ້າວໜ້າ ແລະ ສົມບູນພຸນສຸກ, ເຮັດໃຫ້ຄອບຄົວເປັນຈຸລັນທີ່ເຂັ້ມແຂງຂອງສັງຄົມ, ເປັນ ເຮືອນຮັງທີ່ອົບອຸ່ນຂອງແຕ່ລະຄົນ. ເສີມຂະຫຍາຍຄວາມຮັບຜິດຊອບ ຂອງຄອບຄົວໃນການຮັກສາຖ່າຍທອດບັນດາຄຸນຄ່າວັດທະນະທຳ ຂອງຊາດແຕ່ຮຸ້ນຄົນສະໄໝນີ້ຮອດຮຸ້ນຄົນສະໄໝອື່ນໆໃນຕໍ່ໜ້າ. ປະ ຕິບັດກົດໝາຍແຕ່ງງານ ແລະ ຄອບຄົວ.

ເສີມຂະຫຍາຍວຽກດີຄົນເດັ່ນ. ສ້າງລະບອບຄຸນຄ່າ ແລະ ລະດັບ ມາດຕະຖານຂອງສັງຄົມແບບໃໝ່ທີ່ສອດຄ່ອງເໝາະສົມກັບມູນເຊື້ອ, ເອກະລັກຂອງຊາດ ແລະ ຄວາມຮຽກຮ້ອງຕ້ອງການຂອງຍຸກສະໄໝ.

ກໍ່ສ້າງວັດທະນະທຳແມ່ນໜ້າທີ່ລວມຂອງທົ່ວສັງຄົມ. ມີນະໂຍບາຍ ລົງທຶນຢ່າງເໝາະທີ່ຄວນໃຫ້ຂົງເຂດວັດທະນະທຳ-ສີລະປະວັນນະຄະດີ. ຂະຫຍາຍການເຄື່ອນໄຫວຕ່າງໆທາງດ້ານວັດທະນະທຳ ແລະ ສີລະປະ

ວັນນະຄະດີຂອງລັດ, ຂອງລວມໝູ່ ແລະ ບຸກຄົນຕາມແນວທາງຂອງ ພັກ ແລະ ການຄຸ້ມຄອງຂອງລັດ.

VI- ນະໂຍບາຍແກ້ໄຂບາງບັນຫາວ່າດ້ວຍສັງຄົມ.

ລະບົບນະໂຍບາຍທາງດ້ານສັງຄົມໄດ້ສ້າງຂຶ້ນບົນພື້ນຖານບັນດາ ຫັດສະນະດັ່ງຕໍ່ໄປນີ້:

- ຂະຫຍາຍເສດຖະກິດຕ້ອງຕິດແໜ້ນກັບຄວາມກ້າວໜ້າ ແລະ ຍຸດຕິທຳສັງຄົມນັບຕັ້ງແຕ່ຫົວທີນີ້ເອງໃນແຕ່ລະບາດກ້າວ ແລະ ໃນຕະ ຫລອດຂະບວນວິວັດແຫ່ງການຂະຫຍາຍຕົວ. ຄວາມຍຸດຕິທຳສັງຄົມ ຕ້ອງໄດ້ສະແດງອອກທັງຢູ່ໃນຂອດແຈກຢາຍຜາຫະນະແຫ່ງການຜະ ລິດຢ່າງສົມເຫດສົມຜົນທັງຢູ່ໃນຂອດແຈກຢາຍໝາກຜົນຂອງການຜະ ລິດ, ຢູ່ໃນການສ້າງເງື່ອນໄຂໃຫ້ທຸກຄົນໄດ້ມີໂອກາດຂະຫຍາຍ ແລະ ນຳໃຊ້ຄວາມສາມາດຂອງຕົນເອງເປັນຢ່າງດີ.

- ປະຕິບັດຫລາຍຮູບການແຈກຢາຍ, ເອົາການແຈກຢາຍຕາມ ໝາກຜົນຂອງການອອກແຮງງານ ແລະ ປະສິດທິຜົນຂອງເສດຖະກິດ ເປັນຕົ້ນຕໍ, ພ້ອມກັນນັ້ນການແຈກຢາຍຕ້ອງອີງໃສ່ລະດັບການປະກອບ ແຫລ່ງກຳລັງອື່ນໆເຂົ້າໃນໝາກຜົນຂອງການຜະລິດທຸລະກິດ ແລະ ແຈກຢາຍໂດຍຜ່ານສະຫວັດດີການສັງຄົມ, ໄປຄຽງຄູ່ກັບນະໂຍບາຍ ດັດສະເລ່ຍ ແລະ ຄ້ຳປະກັນສິດຜົນປະໂຫຍດຂອງຜູ້ອອກແຮງງານ

ຢ່າງສົມເຫັດສົມຜົນ.

- ສິ່ງເສີມສ້າງຄວາມຮັ່ງມີຢ່າງຖືກກົດໝາຍໄປຄຽງຄູ່ກັບການລົບລ້າງຄວາມອຶດຫິວ, ຫລຸດຜ່ອນຄວາມຍາກຈົນຢ່າງຕັ້ງໜ້າ. ຄ່ອຍໆ ຮັດແຄບຄວາມຫລຸດໂຕນກັນທາງດ້ານລະດັບຂອງການຂະຫຍາຍຕົວ, ລະດັບຊີວິດການເປັນຢູ່ລະຫວ່າງບັນດາບໍລິເວນ, ບັນດາຊົນຊາດສ່ວນໜ້ອຍ, ແລະ ຊັ້ນຄົນຕ່າງໆຢູ່ໃນສັງຄົມ.

- ເສີມຂະຫຍາຍມູນເຊື້ອອັນດີງາມຂອງຊາດ"ກິນນ້ຳຄິດຮອດບໍ່ນ້ຳ", "ຕອບບຸນແທນຄຸນຕໍ່ຜູ້ມີຄຸນງາມຄວາມດີ", ມີສິນທຳ, ບໍລິສຸດຜຸດຜ່ອງ.

- ບັນດາບັນຫາ ແລະ ໂຍບາຍສັງຄົມຕ້ອງໄດ້ແກ້ໄຂຕາມຈິດໃຈທັນເປັນຂອງສັງຄົມ. ລັດຖືບົດບາດຫລັກແຫລ່ງແກ່ນສານອັນເປັນພ້ອມບາດດຽວກັບການປຸກລະດົມຍົກຍ້ອງປະຊາຊົນແຕ່ລະຄົນ, ບັນດາວິສາຫະກິດ, ບັນດາອົງການຈັດຕັ້ງໃນສັງຄົມ, ບຸກຄົນຕ່າງໆ ແລະ ອົງການຕ່າງປະເທດເຂົ້າຮ່ວມການແກ້ໄຂບັນດາບັນຫາສັງຄົມ.

ໃນຊຸມປີຕໍ່ໜ້າຕ້ອງແກ້ໄຂບາງບັນຫາສັງຄົມເປັນຢ່າງດີຄືດັ່ງຕໍ່ໄປນີ້:

- ສຸມກຳລັງເຂົ້າການສ້າງອຽກເຮັດງານທຳ.

ທິດທາງອັນສຳຄັນກ່ວາໝູ່ຄືລັດ ແລະ ປະຊາຊົນພ້ອມກັນອອກແຮງລົງທຶນໃສ່ການພັດທະນາປະເທດ, ປະຕິບັດແຜນການ ແລະ ບັນ

ດາໂຄງການເສດຖະກິດ-ສັງຄົມເປັນຢ່າງດີ. ສົ່ງເສີມທຸກພາກສ່ວນເສດຖະກິດ, ພົນລະເມືອງທຸກຄົນ, ບັນດານັກລົງທຶນຈັດຕັ້ງເປີດກວ້າງຂະແໜງອາຊີບ, ສ້າງວຽກເຮັດງານທຳຢ່າງຫລວງຫລາຍໃຫ້ຜູ້ອອກແຮງງານ. ພົນລະເມືອງທຸກຄົນລ້ວນແຕ່ມີສິດເສລີໃນການດຳເນີນວິຊາຊີບ, ເຊົ່າຈ້າງແຮງງານຕາມກົດໝາຍ. ຂະຫຍາຍການບໍລິການຊອກຫາງານທຳ. ສືບຕໍ່ສັບຊ້ອນພົນລະເມືອງ ແລະ ແຮງງານຢູ່ເຂດແຄວ້ນຕ່າງໆ ໃນທົ່ວປະເທດຄືນໄໝ່ໃຫ້ແທດເໝາະ, ເພີ່ມຈຳນວນພົນລະເມືອງຢູ່ໃນບັນດາເຂດທີ່ມີລັກສະນະຍຸດທະສາດທາງດ້ານເສດຖະກິດ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ. ເປີດກວ້າງການພົວພັນເສດຖະກິດກັບຕ່າງປະເທດຊຸກຍູ້ການຈັດສົ່ງແຮງງານໄປເຮັດວຽກຢູ່ຕ່າງປະເທດຢ່າງແຂງແຮງ. ເຮັດໃຫ້ອັດຕາສ່ວນຜູ້ວ່າງງານຢູ່ໃນຕົວເມືອງ ແລະ ຜູ້ຂາດວຽກເຮັດງານທຳຢູ່ຊົນນະບົດຫລຸດໜ້ອຍລົງຢ່າງຜໍ່ຄວນ.

- ປະຕິບັດການລົບລ້າງຄວາມອຶດຫິວ, ຫລຸດຜ່ອນຄວາມຍາກຈົນ, ຕອບບຸນແທນຄູນຕໍ່ຜູ້ມີຄຸນງາມຄວາມດີ, ປະກັນສັງຄົມ ແລະ ບັນດາການເຄື່ອນໄຫວທາງດ້ານມະນຸດສະທຳ, ສັງຄົມສົງເຄາະ.

ປະຕິບັດໂຄງການ*ລົບລ້າງຄວາມອຶດຫິວ,ຫລຸດຜ່ອນຄວາມຍາກຈົນ* ຢູ່ໃນເຂດຕ່າງໆໂດຍສະເພາະແມ່ນຢູ່ໃນເຂດທີ່ໝັ້ນຂອງການປະຕິວັດ, ເຂດຊົນຊາດສ່ວນໜ້ອຍເປັນຢ່າງດີ. ກໍ່ສ້າງ ແລະ ຂະຫຍາຍຄັງສຳ

ລັບການລົບລ້າງຄວາມອຶດຫິວ, ຫຼຸດຜ່ອນຄວາມຍາກຈົນດ້ວຍ
ຫລາຍກອງທຶນຈາກພາຍໃນປະເທດ ແລະ ຕ່າງປະເທດ; ຄຸ້ມຄອງຢ່າງ
ແໜ້ນໜາ, ລົງທຶນໃຫ້ຖືກກັບເປົ້າໝາຍ ແລະ ມີປະສິດທິຜົນ.

ຈັດຕັ້ງຊີວິດສັງຄົມເປັນຢ່າງດີຢູ່ແຕ່ລະເຂດແຄ້ວນເພື່ອເຮັດໃຫ້ຊີວິດ
ການເປັນຢູ່ຂອງປະຊາຊົນທີ່ດີຂຶ້ນໃນເງື່ອນໄຂທີ່ລາຍໄດ້ສະເລ່ຍຕາມ
ຫົວຄົນຍັງຕ່ຳ. ເພີ່ມຈຳນວນຕາແສງທີ່ມີໄຟຟ້າ, ມີເສັ້ນທາງຄົມມະນາ
ຄົມ, ມີໂຮງຮຽນ, ມີສຸກສາລາ, ມີນ້ຳສະອາດ... ໃຫ້ນັບມື້ນັບຫລາຍຂຶ້ນ.

ຈັດຕັ້ງຢ່າງດີຕໍ່ການປະຕິບັດດຳລັດວ່າດ້ວຍຜູ້ມີຄຸນງາມຄວາມດີຕໍ່
ຊາດ, ຮັບປະກັນໃຫ້ຜູ້ມີຄຸນງາມຄວາມດີຕໍ່ຊາດຕໍ່ການປະຕິວັດມີຊີວິດ
ການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈໂດຍຕ່ຳສຸດກໍ່ຕ້ອງເທົ່າທຽມ
ກັບລະດັບຊີວິດການເປັນຢູ່ປານກາງຂອງປະຊາຊົນອາໃສຢູ່ໃນເຂດ
ນັ້ນ; ບຳລຸງ ແລະ ສ້າງເງື່ອນໄຂໃຫ້ລູກຫລານຂອງຜູ້ມີຄຸນງາມຄວາມ
ດີຕໍ່ການປະຕິວັດໄດ້ສືບຕໍ່ມູນເຊື້ອຂອງຄອບຄົວເຂົາເຈົ້າ. ຂະຫຍາຍ
ກວ້າງຂະບວນການ*ຕອບບຸນແທນຄຸນ*, ດູແລເບິ່ງແຍງຕໍ່ນັກຮົບຜູ້ຖືກ
ບາດເຈັບ, ຕໍ່ຄອບຄົວຜູ້ເສຍສະຫລະຊີວິດເພື່ອຊາດເພື່ອປະຊາຊົນ.

ປະຕິບັດ ແລະ ບູລະນະລະບອບ*ປະກັນສັງຄົມ*, ຮັບປະກັນໃຫ້ຊີວິດ
ການເປັນຢູ່ຂອງຜູ້ອອກບຳນານມີຄວາມສະຫງົບປົກກະຕິ, ແລະ ໄດ້ຮັບ
ການປັບປຸງດີຂຶ້ນເປັນກ້າວໆ. ສ້າງກົດໝາຍປະກັນສັງຄົມ.

ຊຸກຍູ້ບັນດາການເຄື່ອນໄຫວ*ມະນຸດສະທຳ, ສັງຄົມສົງເຄາະ*ຢ່າງ
ແຂງແຮງ. ປະຕິບັດບັນດານະໂຍບາຍອຸປະຖຳປົກປ້ອງເດັກກຳພ້າ,

ກຳພອຍບໍ່ມີບ່ອນຢູ່ບ່ອນອາໃສ, ຜູ້ເຖົ້າປ່ຽວພອຍດ້ອຍໂອກາດ, ຜູ້ຖືກເຄາະຮ້າຍຈາກສົງຄາມ, ຄົນພິການ; ສ້າງຄັງສາຍໃຈແຫ່ງຄວາມຮັກແພງ ໂດຍມີສ່ວນປະກອບຂອງງົບປະມານ ແລະ ປຸກລະດົມທົ່ວສັງຄົມປະກອບສ່ວນໃຫ້ຄັງດັ່ງກ່າວ; ກ້າວເຖິງການສ້າງກົດໝາຍວ່າດ້ວຍການອຸປະຖຳປົກປ້ອງຄົນພິການ, ເດັກກຳພ້າ. ຊ່ວຍເຫລືອຜູ້ຖືກເຄາະຮ້າຍຈາກໄພທຳມະຊາດ ແລະ ເຄາະຮ້າຍອື່ນໆ.

- ດູແລເບິ່ງແຍງ ແລະ ປົກປັກຮັກສາສຸຂະພາບ, ຍົກສູງຄຸນນະພາບຮ່າງກາຍຂອງປະຊາຊົນ.

ສູ້ຊົນຮອດປີ 2000 ຫລຸດຜ່ອນອັດຕາສ່ວນຜູ້ຕິດພະຍາດລະບາດ, ບັນດາພະຍາດເກີດຈາກແມ່ພະຍາດກາຝາກ ຕ່າງໆ ແລະ ຂຸດໂຊມໂດຍເສຍເຖິງສຸຂະພາບ. ປ່ຽນແປງບັນດາຕົວເລກຄາດໝາຍອັນພື້ນຖານກ່ຽວກັບສຸຂະພາບຂອງພົນລະເມືອງ ໂດຍສະເພາະແມ່ນສຸຂະພາບຂອງແມ່ ແລະ ເດັກໃຫ້ສົມບູນຂຶ້ນ, ຍົກສູງລະດັບອາຍຸຍືນສະເລ່ຍຂອງຄົນ ແລະ ຫຼຸດຜ່ອນອັດຕາສ່ວນຄົນຕາຍລົງ.

ສືບຕໍ່ປັບປຸງລະບົບສາທາລະນະສຸກຂອງລັດ, ພິເສດແມ່ນສາທາລະນະສຸກຢູ່ຕາແສງ, ເມືອງ. ເປີດກວ້າງ, ຫັນເປັນຫລາຍຮູບແບບ, ຍົກສູງຄຸນນະພາບ ແລະ ປະສິດທິຜົນທາງດ້ານບໍລິການບົ່ວລະບັດເບິ່ງແຍງສຸຂະພາບ. ປ່ຽນແປງໃໝ່ ແລະ ເພີ່ມທະວີອຸກງານຄຸ້ມຄອງໂຮງໝໍ, ບູລະນະລະບົບກວດ ແລະ ປິ່ນປົວພະຍາດໃຫ້ມີຄວາມສາມາດຢ່າງພຽງພໍເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ

ນັບມື້ນັບສູງຂອງປະຊາຊົນ. ປະຕິບັດການກວດ ແລະ ປິ່ນປົວພະຍາດ ແບບບໍ່ເສຍຄ່າໃຫ້ແກ່ຄອບຄົວນະໂຍບາຍ, ໃຫ້ຜູ້ຍາກຈົນ. ເພີ່ມການ ລົງທຶນຂອງລັດສົມທົບກັບການສ້າງກອງທຶນອື່ນໆໃຫ້ຂະແໜງສາທາ ລະນະສຸກເຊັ່ນຂະຫຍາຍການປະກັນໄພ, ເປີດກວ້າງການຮ່ວມມືກັບສາ ກົນ. ສົ່ງເສີມ ແລະ ຄຸ້ມຄອງການບໍລິການປິ່ນປົວບົວລະບັດສຸຂະພາບ ໃຫ້ປະຊາຊົນຂອງບັນດາການຈັດຕັ້ງ ແລະ ບຸກຄົນ. ຂະຫຍາຍການໝໍ ຢາພື້ນເມືອງທີ່ມີມູນເຊື້ອຂອງຊາດ; ສົມທົບການແພດແຜນໃໝ່ກັບ ການແພດພື້ນເມືອງ. ສ້າງນະໂຍບາຍຄຸ້ມຄອງ ແລະ ຂະຫຍາຍອຸດສາ ຫະກຳຢາປົວ, ເຄື່ອງປະກອບສາທາລະນະສຸກເພື່ອຕອບສະໜອງໃຫ້ ຄວາມຕ້ອງການພາຍໃນປະເທດ ແລະ ຂາອອກ. ມີນະໂຍບາຍຕ່າງໆ ໃນການເອື້ອເຟື້ອ ເພື່ອໃຊ້ພະນັກງານແພດໝໍໄດ້ດີ, ໂດຍສະເພາະແມ່ນ ຢູ່ໃນບັນດາເຂດທີ່ມີຄວາມຫຍຸ້ງຍາກ. ສະກັດກັ້ນສະພາບຊຸດໂຊມອ່ອນ ນ້ອຍຢູ່ໃນຂະແໜງສາທາລະນະສຸກນັບແຕ່ພື້ນຖານວັດຖຸເຕັກນິກ, ເຄື່ອງປະກອບການແພດຈົນຮອດຄຸນນະພາບ ແລະ ຈິດໃຈຮັບໃຊ້ຂອງ ຂະແໜງສາທາລະນະສຸກ. ປັບປຸງບູລະນະການເກັບຄ່າໂຮງໝໍ ແລະ ການໃຊ້ຈ່າຍເງິນຄ່າເຂົ້າໂຮງໝໍ. ຕ້ານການທຍໍ້ທ້ຍໃນການບໍລິການ ສາທາລະນະສຸກ. ເຊີດຊູຄຸນສົມບັດສິນທຳຂອງແພດໝໍຄື "ແພດໝໍຄື ດັ່ງແມ່ຜູ້ໃຈດີ".

ຊຸກຍູ້ວຽກງານກັນ ແລະ ຕ້ານພະຍາດ, ປະຕິບັດບັນດາວິທີການ ອະນາໄມສິ່ງແວດລ້ອມ, ອະນາໄມທາງດ້ານອາຫານການກິນ ແລະ ສະໜອງນ້ຳສະອາດຢ່າງກວ້າງຂວາງ.

ຂະຫຍາຍຂະບວນການ*ກິລາກາຍະກຳ* ຢ່າງເລິກເຊິ່ງກວ້າງຂວາງ ໃນທົ່ວປະເທດ, ກ່ອນອື່ນໝົດແມ່ນຢູ່ໃນຊາວໜຸ່ມເຍົາວະຊົນ, ສ້າງ ການຫັນປ່ຽນຢ່າງຕັ້ງໜ້າກ່ຽວກັບຄຸນນະພາບ ແລະ ປະສິດທິຜົນທາງ ດ້ານກາຍຍະສຶກສາຢູ່ໃນບັນດາໂຮງຮຽນ, ຢູ່ໃນບັນດາກຳລັງສຳຮອງ ຂອງການປ້ອງກັນຊາດ ແລະ ກຳລັງປະກອບອາວຸດ. ເປີດກວ້າງການ ພົວພັນທາງດ້ານກິລາ, ກາຍະກຳກັບສາກົນ. ສ້າງບັນດາກຳລັງກິລາ ອາຊີບໃຫ້ເປັນຕົນເປັນຕົວຂຶ້ນເທື່ອລະກ້າວ.

- ຊຸກຍູ້ວຽກງານພົນລະເມືອງ- ຫັນເປັນແຜນການຂອງ ຄອບຄົວຢ່າງແຂງແຮງ

ບູລະນະລະບົບອົງການຈັດຕັ້ງທີ່ເຮັດວຽກງານພົນລະເມືອງ-ຫັນເປັນ ແຜນການຂອງຄອບຄົວ. ຂະຫຍາຍຕາມ່າງບໍລິການວຽກງານຫັນເປັນ ແຜນການຂອງຄອບຄົວລົງຮອດຮາກຖານ, ໂດຍສະເພາະແມ່ນຢູ່ເຂດ ຊົນນະບົດພູດອຍ. ຫັນເຂົ້າສູ່ຈຸດໝາຍຜົວເມຍຄູ່ໜຶ່ງມີລູກແຕ່ 1 ຫາ 2 ຄົນ, ຮອດປີ 2000 ອັດຕາສ່ວນເພີ່ມຂຶ້ນຂອງພົນລະເມືອງໃຫ້ຕ່ຳກວ່າ 1,8% ແລະ ໃນໄລຍະກາງສະຕະວັດໜ້າຕ້ອງເຮັດໃຫ້ຈຳນວນພົນລະ ເມືອງມີຄວາມສະຫງົບປົກກະຕິ.

- ເຮັດໃຫ້ໄພສັງຄົມຫລຸດໜ້ອຍຖອຍລົງ.

ປະຕິບັດບັນດາວິທີການສຶກສາ, ເສດຖະກິດ, ບໍລິຫານ ແລະ ກົດ ໝາຍຢ່າງຄົບຊຸດເພື່ອປ້ອງກັນ ແລະ ຕ້ານໄພສັງຄົມຕ່າງໆຢ່າງມີປະ ສິດທິຜົນໂດຍສະເພາະແມ່ນຕ້ານການຂະໂມຍປຸ້ນຊິງ, ຫລີ້ນເບ້ຍເຈ້ຍ

ໄພ້, ສູບຜີ່ນກິນເຣໂລອີນ, ໂສເພນີ...

VII - ການປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ.

ໜ້າທີ່ຂອງການປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບໃນຊຸມປີຕໍ່ໜ້າຄື:

ເສີມຂະຫຍາຍກຳລັງແຮງສັງລວມຂອງທົ່ວປວງຊົນ, ຂອງທັງໝົດລະບົບການເມືອງ, ເພີ່ມທະວີກຳລັງບົ່ມຊ້ອນທາງດ້ານປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບຂອງປະເທດຊາດໃຫ້ເຂັ້ມແຂງເທື່ອລະກ້າວ, ກໍ່ສ້າງພື້ນຖານປ້ອງກັນຊາດທົ່ວປວງຊົນ, ທ່າສະໜາມປ້ອງກັນຊາດທົ່ວປວງຊົນຕິດແໜ້ນກັບການກໍ່ສ້າງພື້ນຖານປ້ອງກັນຄວາມສະຫງົບປະຊາຊົນ ແລະ ທ່າສະໜາມປ້ອງກັນຄວາມສະຫງົບປະຊາຊົນຢ່າງໜັກແໜ້ນ, ຍົກສູງຄຸນນະພາບຂອງບັນດາກຳລັງປະກອບອາວຸດ, ປົກປັກຮັກສາເອກະລາດ, ຄວາມປອດໄພ, ອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງປະເທດຊາດ, ປົກປັກຮັກສາປະຊາຊົນ, ປົກປັກຮັກສາພັກ, ປົກປັກຮັກສາລະບອບສັງຄົມນິຍົມ, ສະກັດກັ້ນ ແລະ ເຮັດໃຫ້ທຸກກົນອຸບາຍກໍ່ຄືການເຄື່ອນໄຫວສ້າງຄວາມບໍ່ມີສະຖຽຍລະພາບທາງດ້ານສັງຄົມ, ລະເມີດຕໍ່ເອກະລາດ, ອະທິປະໄຕ, ຜືນແຜນດິນອັນຄົບຖ້ວນ, ສ້າງຄວາມເສຍຫາຍຕໍ່ການກໍ່ສ້າງແລະພັດທະນາປະເທດ; ສະກັດກັ້ນ ແລະ ລົ້ງໂທດທຸກປະເພດຢ່າງມີປະສິດທິຜົນ, ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ ແລະປອດໄພຂອງສັງຄົມເປັນຢ່າງດີ.

ປະຕິບັດໜ້າທີ່ປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບໃນສະຖານະການໃໝ່, ຕ້ອງກຳແໜ້ນບັນດາ*ແນວຄິດຊີ້ນຳ* ດັ່ງຕໍ່ໄປນີ້:

- ສົມທົບສອງໜ້າທີ່ຍຸດທະສາດຂອງການປະຕິວັດຫວຽດນາມຢ່າງສະໜິດແໜ້ນຄືກໍ່ສ້າງສັງຄົມນິຍົມ ແລະ ປົກປັກຮັກສາປະເທດຊາດສັງຄົມນິຍົມ.

- ສົມທົບການປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບກັບເສດຖະກິດ.

- ເຮັດໃຫ້ໜ້າທີ່ປ້ອງກັນຊາດຕິດແໜ້ນກັບໜ້າທີ່ປ້ອງກັນຄວາມສະຫງົບຊຶ່ງເປັນສອງດ້ານທີ່ມີການພົວພັນຢ່າງສະໜິດແໜ້ນນຳກັນໃນໜ້າທີ່ປົກປັກຮັກສາປະເທດຊາດ ແລະ ລະບອບສັງຄົມນິຍົມ. ປະສານສົມທົບການເຄື່ອນໄຫວທາງດ້ານປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບກັບການເຄື່ອນໄຫວກັບຕ່າງປະເທດໃຫ້ແໜ້ນແກ່ນ.

- ປ້ຽປຸງວຽກງານປ້ອງກັນຊາດ, ຮັກສາຄວາມເປັນລະບຽບຮຽບຮ້ອຍແຕ່ງຊາດຢ່າງໜັ້ນຄົງແມ່ນໜ້າທີ່ສຳຄັນຕົ້ນຕໍ, ເປັນປະຈຳຂອງພັກ, ລັດ ແລະ ຂອງທົ່ວກອງທັບ, ທົ່ວປວງຊົນ, ເສີມຂະຫຍາຍກຳລັງແຮງສັງລວມຂອງລະບົບການເມືອງເພື່ອເພີ່ມທະວີກຳລັງແຮງປົ່ມຊ້ອນຂອງການປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ; ກໍ່ສ້າງກຳລັງຂອງກອງທັບ ແລະ ຕຳຫລວດປະຊາຊົນປະຕິວັດທີ່ມີແບບແຜນຫລວງ, ມີສິລະປະຍຸດຢ່າງຊຳນານ, ກ້າວຂຶ້ນທັນສະໄໝເທື່ອລະກ້າວ; ກໍ່ສ້າງທ່າສະໜາມຮົບປ້ອງກັນຊາດທົ່ວປວງຊົນຢ່າງໜັ້ນຄົງ ໂດຍ

ສົມທົບຢ່າງໜັກແໜ້ນກັບການປ້ອງກັນຄວາມສະຫງົບປະຊາຊົນ; ເຊື່ອມຊຶມແນວຄິດປະຕິວັດບຸກ, ຕັ້ງໜ້າ, ເປັນເຈົ້າການ, ກຽມພ້ອມທັບມ້າງທຸກກົນອຸບາຍ ແລະ ການເຄື່ອນໄຫວມ້າງເພທຳລາຍປະເທດເຮົາຂອງສັດຕູໃຫ້ປະລາໄຊ.

- ບູລະນະລະບົບກົດໝາຍກ່ຽວກັບການປົກປັກຮັກສາປະເທດຊາດ, ທັນບັນດາແຜນນະໂຍບາຍ, ນະໂຍບາຍຂອງພັກກ່ຽວກັບວຽກງານກໍ່ສ້າງພື້ນຖານປ້ອງກັນຊາດທີ່ວປວງຊົນ ແລະ ປ້ອງກັນຄວາມສະຫງົບປະຊາຊົນເປັນສະຖາບັນ. ເພີ່ມທະວີການຄຸ້ມຄອງຂອງລັດຕໍ່ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ.

- ເອົາໃຈໃສ່ຈົດຈ່ຢ່າງເປັນປະຈຳຕໍ່ການກໍ່ສ້າງພັກ, ເພີ່ມທະວີການນຳພາຂອງພັກຕໍ່ກອງທັບ, ຕຳຫລວດ ແລະ ຕໍ່ພາລະກິດປັບປຸງການປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ.

VIII - ນະໂຍບາຍພົວພັນກັບຕ່າງປະເທດ

ໜ້າທີ່ຂອງການພົວພັນກັບຕ່າງປະເທດໃນໄລຍະຕໍ່ໜ້ານີ້ຄືປັບປຸງສິ່ງແວດລ້ອມທີ່ມີສັນຕິພາບ ແລະ ສ້າງເງື່ອນໄຂສາກົນອັນສະດວກກວ່າເກົ່າເພື່ອຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ, ທັນເປັນອຸດສາຫະກຳ, ທັນເປັນທັນສະໄໝຢ່າງແຂງແຮງ, ຮັບໃຊ້ພາລະກິດກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າການຕໍ່ສູ້ລວມຂອງປະຊາຊົນຢູ່ໃນໂລກເພື່ອສັນຕິພາບ, ເອກະລາດແຫ່ງ

ຊາດ, ປະຊາທິປະໄຕ ແລະ ຄວາມກ້າວໜ້າທາງດ້ານສັງຄົມ.

ສືບຕໍ່ປະຕິບັດແນວທາງການຕ່າງປະເທດເອກະລາດເປັນເຈົ້າຕົນເອງ, ເປີດກວ້າງ, ເຮັດໃຫ້ການພົວພັນກັບຕ່າງປະເທດມີຫລາຍຮູບແບບ, ຫລາຍຝ່າຍດ້ວຍຈິດໃຈປະເທດຫວຽດນາມເປັນເພື່ອນມິດກັບວົງຄະນາຍາດໃນໂລກ, ສູ້ຊົນເພື່ອສັນຕິພາບ, ເອກະລາດ ແລະ ພັດທະນາ. ຮ່ວມມືແບບຫລາຍດ້ານ, ແບບສອງຝ່າຍ ແລະ ຫລາຍຝ່າຍກັບບັນດາປະເທດ,ອົງການຈັດຕັ້ງສາກົນ ແລະ ພາກພື້ນຕ່າງໆບົນຫລັກການນັບຖືເອກະລາດ, ອະທິປະໄຕ, ຜົນແຜ່ນດິນອັນຄົບຖ້ວນຂອງກັນ ແລະ ກັນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ, ສະເໝີພາບ, ຕ່າງຝ່າຍຕ່າງມີຜົນປະໂຫຍດ, ແກ້ໄຂບັນດາບັນຫາຄົງຄ້າງ ແລະ ຂັດແຍ້ງດ້ວຍການເຈລະຈາ.

ອອກແຮງເພີ່ມທະວີການພົວພັນກັບບັນດາປະເທດໃກ້ຄຽງ ແລະ ບັນດາປະເທດຢູ່ໃນສະມາຄົມອາຊຽນ ປັບປຸງການພົວພັນກັບບັນດາປະເທດເພື່ອນມິດທີ່ເຄີຍມີມູນເຊື້ອມາແລ້ວຢ່າງບໍ່ຢຸດຢັ້ງ, ຖືສຳຄັນຕໍ່ການພົວພັນກັບບັນດາປະເທດພັດທະນາ, ກັບບັນດາອົງການຈັດຕັ້ງເສດຖະກິດ-ການເມືອງຢູ່ໃນໂລກ, ພ້ອມກັນນັ້ນກໍ່ເຊີດຊູຈິດໃຈສາມັກຄີແບບອ້າຍນ້ອງກັບບັນດາປະເທດທີ່ພວມພັດທະນາຢູ່ໃນທະວີບອາຊີ, ອາຟຼິກາ, ອາເມລິກາລາຕິນ, ກັບຂະບວນການບໍ່ຮ່ວມກຸ່ມ.

ເພີ່ມທະວີການເຄື່ອນໄຫວໃນອົງການສະຫະປະຊາຊາດ, ອົງການຈັດຕັ້ງຂອງບັນດາປະເທດໃຊ້ພາສາຝະລັ່ງ, ບັນດາອົງການຈັດຕັ້ງການ

ເງິນ - ເງິນຕາສາກົນ, ອົງການຈັດຕັ້ງການຄ້າຢູ່ໃນໂລກ ແລະ ອົງ ການຈັດຕັ້ງສາກົນອື່ນໆ. ປະກອບສ່ວນຢ່າງຕັ້ງໜ້າເຂົ້າການເຄື່ອນ ໄຫວໃນບັນດາເວທີສາກົນ, ເຂົ້າຮ່ວມໃນການແກ້ໄຂບັນດາບັນຫາທີ່ມີ ລັກສະນະທົ່ວໂລກ. ສະໜັບສະໜູນການຕໍ່ສູ້ເພື່ອລົບລ້າງອາວຸດນິວ ເຄຼຍ ແລະ ບັນດາພາຫະນະລ້າງຜານຊີວິດມະນຸດໂລກໃຫ້ໝົດໄປຢ່າງ ສິ້ນເຊີງ.

ຂະຫຍາຍການພົວພັນກັບບັນດາພັກກອມມູນິດ ແລະ ກຳມະກອນ, ກັບບັນດາກຳລັງປະຕິວັດ, ເອກະລາດແຫ່ງຊາດ ແລະ ກ້າວໜ້າ; ເປີດ ກວ້າງການພົວພັນກັບບັນດາພັກກຳອຳນາດ ແລະ ພັກອື່ນໆ.

ເປີດກວ້າງການພົວພັນກັບປະຊາຊົນຕ່າງປະເທດ, ພົວພັນກັບບັນດາ ອົງການຈັດຕັ້ງທີ່ບໍ່ແມ່ນຂອງລັດຖະບານ, ຍາດແຍ່ງຄວາມສະໜັບສະ ໜູນຢ່າງກວ້າງຂວາງຂອງປະຊາຊົນບັນດາປະເທດຢູ່ໃນໂລກ, ປະ ກອບສ່ວນຊຸກຍູ້ຫ່າອ່ຽງສັນຕິພາບ, ຮ່ວມມື ແລະ ພັດທະນາ.

IX - ປະຕິບັດນະໂຍບາຍສາມັກຄີຊົນຊາດ, ເສີມຂະຫຍາຍບົດບາດເປັນເຈົ້າຂອງປະຊາຊົນ.

ໃນໄລຍະໃໝ່ຂອງການກໍ່ສ້າງປະເທດຊາດ, ປະຊາຊົນເຮົາມີເງື່ອນ ໄຂເປີດກວ້າງກ້ອນກຳລັງມະຫາສາມັກຄີຊົນຊາດ ຍິ່ງຂຶ້ນ, ໂດຍຖືເອົາ ພັນທະພາບລະຫວ່າງຊົນຊັ້ນກຳມະກອນກັບຊົນຊັ້ນຊາວກະສິກອນ ແລະ

ບັນດາຊັ້ນຄົນປັນຍາຊົນເປັນພື້ນຖານ. ສາມັກຄີບັນດາຊົນຊັ້ນ, ບັນດາຊັ້ນຄົນ, ບັນດາຊົນຊາດ, ສາດສະໜາຕ່າງໆ, ທຸກເຜດໄວ ແລະ ທຸກຄົນຢູ່ໃນຄອບຄົວໃຫຍ່ແຫ່ງຊາດຫວຽດນາມບໍ່ວ່າຄົນຜູ້ນັ້ນຈະດຳລົງຊີວິດຢູ່ພາຍໃນປະເທດຫລືອາໃສຢູ່ຕ່າງປະເທດ. ເສີມຂະຫຍາຍກຳລັງແຮງຂອງທົ່ວວົງຄະນາຍາດແຫ່ງຊາດ, ມູນເຊື້ອຮັກຊາດ ແລະ ຄວາມເອກອ້າງທະນົງໃຈຂອງຊາດເພື່ອຮັກສາເອກະລາດ, ເອກະພາບຢ່າງໜັ້ນຄົງ, ກ້າວຂຶ້ນເຮັດໃຫ້ປະຊາຊົນຮັ່ງມີ, ປະເທດຊາດເຂັ້ມແຂງ, ສັງຄົມມີຄວາມຍຸດຕິທຳ, ສີວິໄລ, ຖືເອົາຈຸດໝາຍດັ່ງກ່າວເປັນຈຸດປອງດອງກັນ, ພ້ອມນັ້ນຮັບຮອງເອົາບັນດາຈຸດແຕກຕ່າງກັນໂດຍບໍ່ຂັດກັບຜົນປະໂຫຍດລວມຂອງຊາດ, ພ້ອມກັນລົບລ້າງຄວາມອະຄະຕິ, ຄ້າງຄາໃຈ, ຫັນໄປສູ່ອະນາຄົດ, ກໍ່ສ້າງນ້ຳໃຈມະຫາສາມັກຄີ, ເປີດອົກເປີດໃຈ, ໄວ້ເນື້ອເຊື່ອໃຈຊຶ່ງກັນ ແລະ ກັນ.

ໃນຊຸມປີຕໍ່ໜ້າ, ຕ້ອງປຸກລະດົມທຸກໆຄວາມສາມາດບົ່ມຊ້ອນແຫ່ງການປະດິດຄິດແຕ່ງໃນໝູ່ປະຊາຊົນ, ເສີມຂະຫຍາຍບົດບາດເປັນເຈົ້າຂອງປະຊາຊົນເພື່ອແນໃສ່ຊຸກຍູ້ການຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝຢ່າງແຂງແຮງ, ປະຕິບັດບັນດາໜ້າທີ່ຂອງແຜນການພັດທະນາເສດຖະກິດ-ສັງຄົມໃນ 5 ປີ 1996-2000 ຢ່າງມີໄຊ.

- ດ້ວຍບັນດາມະໂຍບາຍອັນລະອຽດທີ່ມີຕໍ່ບັນດາຊົນຊັ້ນ, ບັນດາຊັ້ນຄົນ ແລະ ຊົນຊາດຕ່າງໆພາຍໃນປະເທດຈະສ້າງໄດ້ບັນດາກຳລັງໜູນໃຫ່ຊຸກຍູ້ຂະບວນການປະຕິວັດຂອງປະຊາຊົນ.

ກໍ່ສ້າງຊົນຊັ້ນກຳມະກອນ ໃຫ້ເຂັ້ມແຂງໃນທຸກດ້ານ, ຂະຫຍາຍທາງດ້ານຈຳນວນ, ຕື່ນຕົວທາງດ້ານຊົນຊັ້ນ, ຍົກສູງລະດັບການສຶກສາ ແລະ ວິຊາຊີບ, ມີຄວາມສາມາດນຳໃຊ້ ແລະ ປະດິດສ້າງໃນດ້ານເຕັກໂນໂລຢີໃໝ່, ມີແບບແຜນວິທີອຸດສາຫະກຳ ແລະ ສະຕິໃນການຈັດຕັ້ງ, ລະບຽບວິໄນ, ອອກແຮງງານມີສະມັດຖະພາບ, ມີຄຸນນະພາບ ແລະ ປະສິດທິຜົນນັບມື້ນັບສູງຂຶ້ນ, ເປັນຫລັກແຫລ່ງແກນສານໃຫ້ການກໍ່ສ້າງກ້ອນກຳລັງພັນທະພາບກຳມະກອນ, ຊາວກະສິກອນ, ປັນຍາຊົນ ແລະ ເພີ່ມທະວີກ້ອນກຳລັງມະຫາສາມັກຄີຊົນຊາດ.

ສ້າງວຽກເຮັດງານທຳໃຫ້ຫລາຍຂຶ້ນ; ປ່ຽນແປງເງື່ອນໄຂອອກແຮງງານໃຫ້ດີຂຶ້ນ, ປະຕິບັດຄວາມປອດໄພໃນການອອກແຮງງານ ແລະ ການອະນາໄມໃນອຸດສາຫະກຳ, ກຳຈັດອຸບັດຕິເຫດໃນການອອກແຮງງານ ແລະ ພະຍາດເກີດຈາກວິຊາຊີບຢູ່ໃນລະດັບຕ່ຳສຸດ. ຈັດຕັ້ງກໍ່ສ້າງ ແລະ ກໍ່ສ້າງຄືນໃໝ່ວິຊາຊີບເປັນຢ່າງດີ. ສືບຕໍ່ຄົ້ນຄວ້າເພີ່ມເຕີມ ແລະ ປູລະນະນະໂຍບາຍຄ່າແຮງ ແລະ ບັນດານະໂຍບາຍຮັບປະກັນທາງດ້ານສັງຄົມໃຫ້ສົມບູນ. ສ້າງເງື່ອນໄຂໃຫ້ກຳມະກອນໄດ້ມີຫຸ້ນສ່ວນຢູ່ໃນບັນດາວິສາຫະກິດ. ຍູ້ແຮງການຂະຫຍາຍພັກໃນໝູ່ກຳມະກອນ, ເອົາໃຈໃສ່ບຳລຸງ, ກໍ່ສ້າງພະນັກງານມີຕົ້ນກຳເນີດຈາກກຳມະກອນ.

ຕໍ່ *ຊົນຊັ້ນຊາວກະສິກອນ*, ປະຕິບັດນະໂຍບາຍມອບດິນ, ມອບປ່າ ເປັນຢ່າງດີ; ສະກັດກັ້ນ ແລະ ແກ້ໄຂສະພາບຊາວກະສິກອນບໍ່ມີດິນນາ ເພື່ອຜະລິດ; ຊ່ວຍເຫລືອທາງດ້ານທຶນຮອນ, ເຕັກນິກ, ການບໍລິການສະ

ໜອງວັດຖຸອຸປະກອນ, ຈຳໜ່າຍບໍລິໂພກຜະລິດຕະພັນ, ຂະຫຍາຍອຸດສາຫະ ກຳປຸງແຕ່ງ ແລະ ບັນດາອາຊີບຫັດຖະກຳ, ອຸດສາຫະກຳນ້ອຍ. ຂະຫຍາຍ ສິນເຊື່ອຢູ່ຊົນນະບົດ, ເປີດກວ້າງໃຫ້ຊາວກະສິກອນຜູ້ຍາກຈົນໄດ້ກູ້ຢືມທຶນ ເພື່ອດຳເນີນການຜະລິດ; ຕ້ານການໃຫ້ກູ້ຢືມເງິນດ້ວຍດອກເບ້ຍສູງເກີນ ຄວນ, ການຊື້ຂາຍເຂົ້າອ່ອນ, ຄ້າຂາຍດິນນາຕາກ້າຢ່າງຜິດກົດໝາຍ. ຊ່ວຍເຫລືອຊາວກະສິກອນຂະຫຍາຍບັນດາຮູບການເສດຖະກິດແບບຮ່ວມ ມືກັນ. ມີນະໂຍບາຍປົກປ້ອງການຜະລິດຂອງຊາວກະສິກອນ.

ຕໍ່ຊັ້ນຄົນປັນຊາຊົນ, ສ້າງເງື່ອນໄຂໃຫ້ເຂົາເຈົ້າໄດ້ຮັບຂ່າວຄາວ ເປັນປະຈຳ, ສຳພັດຢ່າງໃກ້ຊິດກັບບັນດາຜົນສຳເລັດໃໝ່ທາງດ້ານວິ ທະຍາສາດ ແລະ ວັດທະນະທຳຂອງໂລກ; ຍົກສູງຄວາມຮູ້ທາງດ້ານ ວິຊາສະເພາະ, ລະດັບການເມືອງ; ສົ່ງເສີມການປະດິດຄິດແຕ່ງ, ນຳ ໃຊ້ຄວາມກ້າວໜ້າທາງດ້ານວິທະຍາສາດ ແລະ ເຕັກໂນໂລຢີຢ່າງ ເສລີ; ເຜີຍແຜ່ບັນດາບົດປະພັນ ແລະ ກິດຈະການສິລະປະວັນນະຄະດີ ທີ່ມີຄຸນຄ່າ; ຄົ້ນຫາ, ບຳລຸງ, ນຳໃຊ້ ແລະ ໃຫ້ບູລິມະສິດຢ່າງເໝາະ ສົມຕໍ່ຜູ້ມີຄວາມສາມາດອັນຍອດຢ້ຽມ. ຈັດຕັ້ງກຳລັງພະນັກງານວິທະ ຍາສາດ ແລະ ວັດທະນະທຳ, ສິລະປະກຳໃຫ້ດີເພື່ອປະຕິບັດບັນດາໂຄງ ການ, ກິດຈະການຄົ້ນຄວ້າວິທະຍາສາດຂອງລັດ. ເສີມຂະຫຍາຍບົດ ບາດຂອງປັນຊາຊົນໃນການສ້າງກົດໝາຍ ແລະ ນະໂຍບາຍຕ່າງໆ.

- *ຕໍ່ຊາວໜຸ່ມ*, ເຜີ່ມທະວີການນຳພາຂອງພັກຕໍ່ຄະນະຊາວໜຸ່ມກອມ ມູນິດໂຮ່ຈິມິນຢູ່ໃນທຸກຂັ້ນ,ທຸກຂະແໜງການ. ຖືສຳຄັນໃຫ້ຫລາຍກວ່າເກົ່າ

ຕໍ່ການອົບຮົມ, ຫຼໍ່ຫລອມທາງດ້ານການເມືອງ, ແນວຄິດ, ວັດທະນະທຳ, ວິຊາຊີບ, ຄຸນສົມບັດ, ແບບແຜນດຳລົງຊີວິດໃຫ້ຮຸ້ນໜຸ່ມ. ເອົາໃຈໃສ່ໃນການກໍ່ສ້າງອາຊີບ ແລະ ແກ້ໄຂບັນຫາວຽກເຮັດງານທຳ, ຕອບສະໜອງຄວາມຮຽກຮ້ອງຕ້ອງການໃນດ້ານຮໍ່າຮຽນ, ອອກແຮງງານປະດິດຄິດແຕ່ງ, ເຄື່ອນໄຫວວັດທະນະທຳ, ສິລະປະກຳ, ກິລາ ແລະ ການບັນເທີງອັນປອດໃສສີວິໄລໃຫ້ຊາວໜຸ່ມ, ເຍົາວະຊົນ. ສ້າງເງື່ອນໄຂໃຫ້ຄະນະຊາວໜຸ່ມປະຕິບັດໜ້າທີ່ຮັບຜິດຊອບຢ່າງດີຕໍ່ກອງເຍົາວະຊົນໂຮ່ຈີມິນ. ສ້າງສິ່ງແວດລ້ອມສັງຄົມອັນປອດໃສສີວິໄລ, ສະກັດກັ້ນບັນດາໄພສັງຄົມ ແລະ ກຳຈັດປັດເປົ່າພະລິດຕະພັນວັດທະນະທຳອັນຊົ່ວຮ້າຍ. ເອົາໃຈໃສ່ຈັດຈ່ໍໃນການສຶກສາອົບຮົມ, ຫຼໍ່ຫລອມຮຸ້ນໜຸ່ມແມ່ນໜ້າທີ່ຮັບຜິດຊອບຂອງພັກ, ລັດ, ບັນດາອົງການຈັດຕັ້ງຢູ່ໃນລະບົບການເມືອງ, ຂອງຄອບຄົວ, ໂຮງຮຽນ ແລະ ຂອງທົ່ວສັງຄົມ. ຄົ້ນຄວ້າເພື່ອປະກາດໃຊ້ກົດໝາຍວ່າດ້ວຍຊາວໜຸ່ມ.

- ຕໍ່*ແມ່ຍິງ*, ກໍ່ສ້າງ ແລະ ປະຕິບັດຍຸດທະສາດພັດທະນາເພື່ອຄວາມກ້າວໜ້າຂອງແມ່ຍິງແຕ່ນີ້ຮອດປີ 2000.

ຖືສຳຄັນເປັນພິເສດຕໍ່ການກໍ່ສ້າງວິຊາຊີບໃຫ້ແມ່ຍິງ, ຊ່ວຍເຫລືອເອື້ອຍນ້ອງມີວຽກເຮັດງານທຳ, ຂະຫຍາຍເສດຖະກິດຄອບຄົວ, ຍົກສູງຊີວິດການເປັນຢູ. ຮັກສາສຸຂະພາບຂອງແມ່ຍິງ ແລະ ເດັກນ້ອຍ.

ເອົາໃຈໃສ່ ຂະຫຍາຍພັກຢູ່ໃນເພດຍິງ ແລະ ກໍ່ສ້າງບຳລຸງພະນັກງານເພດຍິງ; ເພີ່ມອັດຕະສ່ວນພະນັກງານເພດຍິງຢູ່ໃນອົງການການ

ນຳຂອງພັກ ແລະ ລັດໃນບັນດາຊັ້ນ, ຂະແໜງການຕ່າງໆ.

- *ຕໍ່ບັນດານັກວິສາຫະກິດເອກະຊົນ*, ປະຕິບັດນະໂຍບາຍປົກປ້ອງ ກຳມະສິດຊັບສົມບັດ ແລະ ທຶນຮອນ, ສົ່ງເສີມລົງທຶນເປີດກວ້າງການ ຜະລິດ, ສ້າງເງື່ອນໄຂສະດວກໃຫ້ການທຸລະກິດ, ປະຕິບັດບັນດານັບທະ ທີ່ກົດໝາຍໄດ້ກຳນົດໄວ້.

ບັນຫາ*ຊົນຊາດ* ມີທີ່ຕັ້ງຍຸດທະສາດອັນໃຫຍ່ໂຕ. ປະຕິບັດ "ສະເໝີ ພາບ, ສາມັກຄີ, ຊ່ວຍເຫລືອເຊື່ອເຜ່ພັນ"ລະຫວ່າງຊົນຊາດໃນພາລະກິດ ປ່ຽນແປງໃໝ່, ຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝ. ສ້າງກົດ ໝາຍວ່າດ້ວຍຊົນຊາດ. ແຕ່ນີ້ຮອດປີ 2000, ດ້ວຍຫລາຍມາດຕະການ ອັນຕັ້ງໜ້າ ແລະ ໜັກແໜ້ນຈະຕ້ອງປະຕິບັດໃຫ້ໄດ້ 3 ຈຸດໝາຍຕົ້ນ ຕໍ່ຄື: ລົບລ້າງຄວາມອຶດຫິວ, ຫລຸດຜ່ອນຄວາມຍາກຈົນ, ສ້າງຄວາມ ສະຫງົບປົກກະຕິ ແລະ ປ່ຽນແປງໄດ້ດີຕໍ່ຊີວິດການເປັນຢູ່, ສຸຂະພາບຂອງ ພີ່ນ້ອງບັນດາຊົນຊາດ, ພີ່ນ້ອງຢູ່ເຂດພູດອຍ, ເຂດຊາຍແດນ; ລົບລ້າງ ຄວາມກີກໜ້າສີ, ຍົກສູງຄວາມຮູ້, ນັບຖື ແລະ ເສີມຂະຫຍາຍເອກະ ລັກວັດທະນະທຳອັນດີງາມຂອງບັນດາຊົນຊາດ; ກໍ່ສ້າງໄດ້ຮາກຖານ ການເມືອງ, ຖັນແຖວພະນັກງານ ແລະ ສະມາຊິກພັກ ທີ່ມີຄວາມບໍລິ ສຸດພ່ອງໃສ ແລະ ໜັກແໜ້ນຂອງບັນດາຊົນຊາດຢູ່ໃນບັນດາເຂດ, ແລະ ຂັ້ນຕ່າງໆ.

- *ກ່ຽວກັບສາສະໜາ*, ປະຕິບັດນະໂຍບາຍເຄົາລົບສິດເສລີພາບ ໃນການເຊື່ອຖືໜລືບໍ່ເຊື່ອຖືສາສະໜາໃດໜຶ່ງຂອງພົນລະເມືອງ. ບັນ

ດາສາສະໜາລ້ວນແຕ່ມີຄວາມສະເໝີພາບຕໍ່ໜ້າກົດໝາຍ.

ຮັບປະກັນໃຫ້ການດຳເນີນເຄື່ອນໄຫວທາງດ້ານສາສະໜາເປັນປົກກະຕິຖືກຕາມກົດໝາຍຂອງລັດ. ຫ້າມທຸກການກະທຳທີ່ ລະເມີດຕໍ່ສິດເສລີພາບຂອງການເຊື່ອຖືສາສະໜາຫລືສວຍໃຊ້ການເຊື່ອຖືສາສະໜາເພື່ອກະທຳຜິດກົດໝາຍ ແລະ ນະໂຍບາຍຂອງລັດ. ລັດເປັນຫ່ວງເປັນໃຍນຳການຜັດທະນາເສດຖະກິດ, ວັດທະນະທຳ, ສັງຄົມ; ຊ່ວຍເຫລືອພີ່ນ້ອງຮ່ວມຊາດລົບລ້າງຄວາມອຶດຫິວ, ຫຼຸດຜ່ອນຄວາມຍາກຈົນ, ຍົກສູງຊີວິດການເປັນຢູ່, ເຂົ້າຮ່ວມບັນດາວຽກງານສັງຄົມ, ທຳໃນສິນກິນໃນບູນ.

ພີ່ນ້ອງຮ່ວມຊາດທີ່ມີນິຍົມສາສະໜາ ແລະ ບັນດາຜູ້ມີຍົດສັກໃນສາສະໜາຕ່າງໆມີພັນທະເຮັດຫລ້ອນໜ້າທີ່ຮັບຜິດຊອບຂອງພົນລະເມືອງຕໍ່ປະເທດຊາດ, ດຳລົງຊີວິດແບບ"ສ້າງຄວາມດີໃຫ້ສັງຄົມ-ສ້າງສິ່ງຈົບງາມໃຫ້ສາສະໜາ".

- *ຕໍ່ຊາວຫວຽດນາມອາໃສຢູ່ປະເທດນອກ*, ຊຶ່ງແມ່ນພາກສ່ວນໜຶ່ງທີ່ຕັດແຍກອອກຈາກວົງຄະນາຍາດແຫ່ງຊາດຫວຽດນາມບໍ່ໄດ້. ພັກ ແລະ ລັດເຮົາມີແຜນນະໂຍບາຍປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຊາວຫວຽດນາມອາໃສຢູ່ຕ່າງປະເທດ, ຊ່ວຍເຫລືອຍົກສູງສະຕິວົງຄະນາຍາດ, ເພີ່ມທະວີຄວາມສາມັກຄີຊ່ວຍເຫລືອເຜື່ອແຜ່ກັນ, ຮັກສາເອກະລັກວັດທະນະທຳ ແລະ ມູນເຊື້ອອັນດີງາມຂອງຊາດ; ສ້າງເງື່ອນໄຂສະດວກໃຫ້ພີ່ນ້ອງຊາວຫວຽດນາມອາໃສຢູ່ຕ່າງປະເທດກັບມາ

ຢາມບ້ານເກີດເມືອງນອນ, ຊ່ວຍເຫລືອຄອບຄົວຂອງຕົນ, ປະກອບສ່ວນ ນັບມື້ນັບຫລາຍເຂົ້າພາລະກິດກໍ່ສ້າງພັດທະນາປະເທດໂດຍຜ່ານການ ຮ່ວມມືທາງດ້ານເສດຖະກິດ, ວິທະຍາສາດ-ເຕັກໂນໂລຍີ, ວັດທະນະ ທຳ ສິລະປະກຳ... ກັບບັນດາຂະແໜງການ, ທ້ອງຖິ່ນຕ່າງໆຢູ່ພາຍ ໃນປະເທດ.

- ກໍ່ສ້າງກົນໄກອັນລະອຽດເພື່ອປະຕິບັດທິດນຳ "ປະຊາ ຊົນຮູ້, ປະຊາຊົນປຶກສາຫາລື, ປະຊາຊົນເຮັດ, ປະຊາຊົນ ກວດກາ" ຕໍ່ບັນດາແຜນນະໂຍບາຍ, ນະໂຍບາຍໃຫຍ່ຂອງພັກ ແລະ ລັດ.

ປະຕິບັດກົນໄກປະຊາຊົນເປັນເຈົ້າຢ່າງດີຄື: ເປັນເຈົ້າໂດຍຜ່ານຕົວ ແທນຂອງຕົນຄືອົງການໂດຍປະຊາຊົນເລືອກຕັ້ງ ແລະ ບັນດາອົງການ ຈັດຕັ້ງມະຫາຊົນ, ເປັນເຈົ້າໂດຍກົງດ້ວຍບັນດາຮູບການປະຊາຊົນຄຸ້ມ ຄອງໂດຍຕົນເອງ, ດ້ວຍບັນດາສັນຍາຜູກພັນ, ຂໍ້ກຳນົດຂອງບ້ານເມືອງ ຢູ່ຮາກຖານທີ່ສອດຄ່ອງກັບກົດໝາຍຂອງລັດ.

ພັກ ແລະ ລັດສືບຕໍ່ປ່ຽນແປງໃໝ່ໃນດ້ານແບບແຜນວິທີເຮັດວຽກ, ຮັບປະກັນປະຊາທິປະໄຕໃນຂະບວນວິວັດແຫ່ງການກະກຽມສ້າງຂໍ້ຕົກ່ລົງ ຕ່າງໆ ແລະ ປະຕິບັດຂໍ້ຕົກລົງນັ້ນ.

- ສືບຕໍ່ປ່ຽນແປງໃໝ່ ສຳລັບການຈັດຕັ້ງ ແລະ ແບບ ແຜນວິທີເຄື່ອນໄຫວຂອງແນວໂຮມປະເທດຊາດ ແລະ ບັນ

ດາອົງການຈັດຕັ້ງການເມືອງ-ສັງຄົມ.

ປັບປຸງ, ເປີດກວ້າງການຈັດຕັ້ງ ແລະ ການເຄື່ອນໄຫວຂອງແນວໂຮມປະເທດຊາດຫວຽດນາມ, ຊຶ່ງເປັນອົງການຈັດຕັ້ງພັນທະພາບທາງດ້ານການເມືອງ, ສະທະພັນແບບສະໝັກໃຈໂດຍຕົນເອງ ຂອງບັນດາການຈັດຕັ້ງການເມືອງ-ສັງຄົມ ແລະ ບຸກຄົນທີ່ດີເດັ່ນຢູ່ໃນບັນດາຊົນຊັ້ນ ສັງຄົມ ແລະ ຊັ້ນຄົນຕ່າງໆ, ບັນດາຊົນເຜົ່າ, ສາສະໜາ. ແນວໂຮມ ແລະ ບັນດາການຈັດຕັ້ງທີ່ເປັນສະມາຊິກຂອງແນວໂຮມ ເປັນຮາກຖານການເມືອງຂອງອຳນາດການປົກຄອງປະຊາຊົນ, ແມ່ນບ່ອນປະສານສົມທົບຢ່າງເປັນເອກະພາບທາງດ້ານການກະທຳຂອງປະຊາຊົນບັນດາຊັ້ນຄົນໃນການປະຕິບັດແນວທາງ, ນະໂຍບາຍຂອງພັກ, ກົດໝາຍຂອງລັດ; ເຂົ້າຮ່ວມພ້ອມກັບພັກ ແລະ ລັດດຳເນີນການປະຕິບັດ ແລະ ຄວບຄຸມກວດກາຕໍ່ການປະຕິບັດປະຊາທິປະໄຕ, ປົກປັກຮັກສາຜົນປະໂຫຍດອັນຊອບທຳຂອງບັນດາຊັ້ນຄົນໃນສັງຄົມ; ປົກປັກຮັກສາພັກ ແລະ ອຳນາດການປົກຄອງ, ຕໍ່ການປະຕິບັດບັນດາໜ້າທີ່ເສດຖະກິດ, ວັດທະນະທຳ ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການພົວພັນກັບຕ່າງປະເທດ; ປະກອບສ່ວນ ໃນການ ເພີ່ມທະວີສາຍພົວພັນຕິດຕໍ່ ອັນສະໜິດແໜ້ນ ລະຫວ່າງປະຊາຊົນກັບພັກ ແລະ ລັດ.

ປະຕິບັດຢ່າງເປັນລະບຽບແບບແຜນໃນການທີ່ພັກ ແລະ ລັດພ້ອມກັນປຶກສາຫາລື ແລະ ຫາບທາມຄວາມເຫັນກັບແນວໂຮມກ່ຽວກັບບັນ

ດາຂໍ້ຕົກລົງ, ແຜນນະໂຍບາຍທີ່ພັກ ແລະ ລັດວາງອອກ.

ສະຫະພັນໃຫຍ່ຄົນງານ, ຄະນະຊາວໜຸ່ມກອມມູນິດໂຮ່ຈີມິນ, ສະຫະພັນແມ່ຍິງ, ສະມາຄົມຊາວນາ, ສະມາຄົມນັກຮົບເກົ່າ... ຕ້ອງເຕົ້າໂຮມບັນດາສະມາຊິກຢ່າງກວ້າງຂວາງດ້ວຍຫລາຍຮູບການຈັດຕັ້ງ; ປະຕິບັດຢ່າງດີຕໍ່ພາລະບົດບາດສຶກສາອົບຮົມ, ປຸກລະດົມມະຫາຊົນປະຕິບັດບັນດາໜ້າທີ່ຢ່າງມີໄຊ; ເປັນຕົວແທນໃຫ້ຊັ້ນຄົນຂອງຕົນເຂົ້າຮ່ວມວຽກງານຂອງລັດ. ຫັນທິດສູ່ຮາກຖານຢ່າງແຂງແຮງເພື່ອຂະຫຍາຍການຈັດຕັ້ງ, ປັບປຸງການຮ່ວມຊີວິດການເມືອງ, ຫັນບັນດາການເຄື່ອນໄຫວໃຫ້ກາຍເປັນຂອງສັງຄົມ; ກໍ່ສ້າງ, ບຳລຸງຫຼໍ່ຫລອມພະນັກງານ, ແກ້ໄຂພະຍາດອາຍາສິດ, ບໍລິຫານຢູ່ໃນການເຄື່ອນໄຫວຂອງບັນດາອົງການຈັດຕັ້ງມະຫາຊົນ. ລັດຕ້ອງປະກາດໃຊ້ກົດໝາຍວ່າດ້ວຍການສ້າງຕັ້ງສະມາຄົມຕ່າງໆ ແລະ ສ້າງເງື່ອນໄຂອັນຈຳເປັນໃຫ້ການເຄື່ອນໄຫວຂອງບັນດາອົງການຈັດຕັ້ງປະຊາຊົນ.

- ພະນັກງານ, ສະມາຊິກພັກທຸກຄົນຕ້ອງເຮັດວຽກງານຂຶ້ນຂວາຍມະຫາຊົນຕາມໜ້າທີ່ຕຳແໜ່ງຂອງຕົນ. ຄະນະພັກແຕ່ລະຂັ້ນເອົາໃຈໃສ່ຢ່າງຈົດຈໍ່ຕໍ່ວຽກງານຂຶ້ນຂວາຍມະຫາຊົນ, ປຽນແປງໃໝ່ສຳລັບແບບແຜນວິທີນຳພາຕໍ່ແນວໂຮມປະເທດຊາດ, ຕໍ່ບັນດາອົງການຈັດຕັ້ງມະຫາຊົນ, ບັນດາສະມາຄົມປະຊາຊົນ.

X - ສືບຕໍ່ປະຕິຮູບກົງຈັກຂອງລັດ, ກໍ່ສ້າງ ແລະ ບູລະນະລັດສາ

ທາລະນະລັດສັງຄົມນິຍົມຫວຽດນາມ.

ເຊື່ອມຊຶມບັນດາທັດສະນະອັນພື້ນຖານດັ່ງຕໍ່ໄປນີ້:

- ກໍ່ສ້າງລັດສັງຄົມນິຍົມຂອງປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນ, ຖືເອົາພັນທະພາບລະຫວ່າງຊົນຊັ້ນກຳມະກອນກັບຊົນຊັ້ນຊາວກະສິກອນ ແລະ ຊັ້ນຄົນປັນຍາຊົນເປັນພື້ນຖານ ໂດຍພັກກອມມູນິດຫວຽດນາມເປັນຜູ້ນຳພາ. ປະຕິບັດສິດເປັນເຈົ້າຂອງປະຊາຊົນຢ່າງຄົບຖ້ວນ, ຮັກສາລະບຽບວິໄນຂອງສັງຄົມຢ່າງເຂັ້ມງວດ, ພະເດັດການຕໍ່ທຸກການກະທຳທີ່ລະເມີດຕໍ່ຜົນປະໂຫຍດຂອງຊາດ ແລະ ປະຊາຊົນ.

- ກຳລັງອຳນາດແຫ່ງລັດແມ່ນເປັນເອກະພາບ, ມີການແບ່ງງານ ແລະ ສົມທົບລະຫວ່າງບັນດາອົງການລັດໃນການປະຕິບັດບັນດາສິດນິຕິບັນຍັດ, ຕຸລາການ, ໄອຍາການ.

- ປະຕິບັດຫລັກການລວມສູນປະຊາທິປະໄຕໃນການຈັດຕັ້ງ ແລະ ເຄື່ອນໄຫວຂອງລັດ.

- ເພີ່ມທະວີລະບຽບກົດໝາຍສັງຄົມນິຍົມ, ກໍ່ສ້າງລັດອຳນາດແຫ່ງກົດໝາຍຫວຽດນາມ. ຄຸ້ມຄອງສັງຄົມດ້ວຍກົດໝາຍ, ພ້ອມນັ້ນກໍ່ຖືສຳຄັນຕໍ່ການສຶກສາອົບຮົມ, ຍົກສູງຄຸນສົມບັດສິນທຳ.

- ເພີ່ມທະວີບົດບາດນຳພາຂອງພັກຕໍ່ລັດ.

ເພື່ອກໍ່ສ້າງ, ປັບປຸງກົງຈັກລັດໃຫ້ສົມບູນ, ເຂັ້ມແຂງໜັກແໜ້ນ, ປອດໃສ, ມີຄວາມສັກສິດ ແລະ ປະສິດທິຜົນ, ໃນ 5 ປີ ຕໍ່ໜ້າ, ຕ້ອງ

ປະຕິບັດບັນດາໜ້າທີ່ດັ່ງຕໍ່ໄປນີ້ເປັນຢ່າງດີ:

ປຽນແປງໃຫມ່, ຍົກສູງຄຸນນະພາບຂອງວຽກງານນິຕິບັນຍັດ ແລະ ຄວບຄຸມກວດກາສູງສຸດຂອງລັດຖະສະພາຕໍ່ທຸກໆ ການເຄື່ອນໄຫວຂອງລັດ.

- *ກ່ຽວກັບການເຄື່ອນໄຫວທາງດ້ານນິຕິບັນຍັດ*, ປະກາດໃຊ້ບັນດາກົດໝາຍທີ່ຈຳເປັນເພື່ອດັດສົມບັນດາຂົງເຂດຂອງຊີວິດສັງຄົມ. ໃຫ້ບູລິມະສິດຕໍ່ການສ້າງກົດໝາຍທາງດ້ານເສດຖະກິດ, ທາງດ້ານສິດຂອງພົນລະເມືອງ, ບັນດາກົດໝາຍດັດແປງແຫ່ງການປະຕິຮູບກົງຈັກລັດ, ບັນດາກົດໝາຍດັດແປງການເຄື່ອນໄຫວຕ່າງໆທາງດ້ານວັດທະນະທຳ, ຖະແຫລງຂ່າວໃຫ້ຖືກຕ້ອງເໝາະສົມ. ຖືສຳຄັນຕໍ່ການສະຫລຸບຜົດຕິກຳຂອງຫວຽດນາມ, ຍົກສູງຄຸນນະພາບຂອງການກໍ່ສ້າງກົດໝາຍ, ປະກາດໃຊ້ບັນດາສະບັບກົດໝາຍທີ່ບົ່ງແຈ້ງບັນດາຂໍ້ກຳນົດອັນລະອຽດ, ເຂົ້າໃຈງ່າຍ, ປະຕິບັດງ່າຍ. ຫລຸດຜ່ອນບັນດາກົດໝາຍ, ລັດຖະດຳລັດທີ່ມີແຕ່ບັນດາຫລັກການລວມໆຢາກປະຕິບັດໄດ້ຕ້ອງມີເອກະສານແນະນຳການປະຕິບັດຕື່ມອີກຫລາຍສະບັບ.

- *ກ່ຽວກັບການເຄື່ອນໄຫວທາງດ້ານຕິດຕາມກວດກາ:* ຍົກສູງຄຸນນະພາບ, ຄວາມສັກສິດ ແລະ ປະສິດທິຜົນໃນການເຄື່ອນໄຫວຕິດຕາມກວດກາຂອງລັດຖະສະພາ ແລະ ຂອງສະພາປະຊາຊົນ. ກຳນົດຈະແຈ້ງຂອບເຂດ, ເນື້ອໃນ, ກົນໄກຕິດຕາມກວດກາຂອງລັດຖະສະພາ,

ຂອງບັນດາຄະນະກຳມາທິການຢູ່ໃນລັດຖະສະພາ ແລະ ຂອງສະພາ ປະຊາຊົນ ຂັ້ນຕ່າງໆ; ກຳນົດຢ່າງຈະແຈ້ງກ່ຽວກັບລັກສະນະ, ພາລະ ບົດບາດ, ໜ້າທີ່, ສິດຂອບເຂດທີ່ແຕກຕ່າງກັນລະຫວ່າງການເຄື່ອນ ໄຫວຕິດຕາມກວດກາຂອງລັດຖະສະພາ ແລະ ສະພາປະຊາຊົນກັບ ການເຄື່ອນໄຫວກວດກາ, ກວດການ, ອະທິໄອຍະການຂອງບັນດາອົງ ການ ແລະ ການຈັດຕັ້ງອື່ນ. ພ້ອມກັບການຮັບປະກັນການປະຕິບັດສິດ ອູທອນ, ກ່າວຟ້ອງຂອງພົນລະເມືອງ, ຕ້ອງຄົ້ນຄວ້າ, ແນະນຳເພື່ອໃຫ້ ພົນລະເມືອງທຸກຄົນມີເງື່ອນໄຂຄົ້ນພົບ, ສະເໜີຄຳເຫັນ, ຊ່ວຍໃຫ້ການ ເຄື່ອນໄຫວຕິດຕາມກວດກາມີປະສິດທິຜົນ.

ປະຕິຮູບການບໍລິຫານແຫ່ງລັດ.

ແມ່ນຈຸດໃຈກາງຂອງການກໍ່ສ້າງ, ບູລະນະລັດໃຫ້ສົມບູນໃນຊຸມປີຕໍ່ ໜ້າ, ການປະຕິຮູບທາງດ້ານບໍລິຫານຕ້ອງອີງໃສ່ພື້ນຖານກົດໝາຍ ແລະ ດຳເນີນຢ່າງຄົບຊຸດຢູ່ໃນບັນດາດ້ານ: ປະຕິຮູບສະຖາບັນຍັດບໍລິ ຫານ, ການຈັດຕັ້ງກົງຈັກ ແລະ ກໍ່ສ້າງ, ປັບປຸງຖັນແຖວພະນັກງານ, ລັດຖະກອນທີ່ເຮັດວຽກງານບໍລິຫານ.

- *ກ່ຽວກັບການປະຕິຮູບທາງດ້ານສະຖາບັນຍັດບໍລິຫານ:* ປະຕິບັດ ການປະຕິຮູບໂດຍຟື້ນຖານທາງດ້ານລະບຽບການບໍລິຫານທັງໃນດ້ານ ສະຖາບັນຍັດ ແລະ ຈັດຕັ້ງປະຕິບັດຕົວຈິງ; ລົບລ້າງບັນດາຂອດທີ່ບໍ່ສອດ ຄ່ອງເໝາະສົມ ແລະ ສ້າງຄວາມພົດເຄື່ອງໃຫ້ການພົວພັນວຽກງານ; ສະກັດກັ້ນການໃຊ້ອຳນາດບາດໃຫຍ່, ສໍ້ລາດບັງຫລວງ, ກີນສິນບົນ,

ລະເມີດກົດໝາຍ.

- *ກ່ຽວກັບການຈັດຕັ້ງກົງຈັກ:* ປັບປຸງໂຄງປະກອບການຈັດຕັ້ງ, ການບັນຈຸ, ກົດລະບຽບໃນການເຄື່ອນໄຫວຂອງກົງຈັກບໍລິຫານຂັ້ນຕ່າງໆ. ເຮັດໃຫ້ກົງຈັກຈັດຕັ້ງມີຄວາມກະທັດລັດມີຄຸນນະພາບ, ຮັບປະກັນການຄວບຄຸມບັນຊາອຽງການຢ່າງເປັນເອກະພາບ, ທະລຸລົງ, ມີຄວາມສັກສິດ ແຕ່ຂັ້ນລັດຖະບານຮອດອຳນາດການປົກຄອງທ້ອງຖິ່ນ, ຣາກຖານ; ເສີມຂະຫຍາຍລັກສະນະເປັນເຈົ້າການ, ຄ່ອງຕົວຂອງທ້ອງຖິ່ນ, ຣາກຖານ. ກຳນົດພາລະບົດບາດ, ສິດຂອບເຂດ ແລະ ຄວາມຮັບຜິດຊອບຂອງອຳນາດການປົກຄອງທ້ອງຖິ່ນຂັ້ນຕ່າງໆ. ປັບປຸງບູລະນະກົງຈັກອຳນາດການປົກຄອງຂັ້ນເມືອງ ແລະ ຣາກຖານໃຫ້ມີກຳລັງແຮງຢ່າງພຽງພໍເພື່ອຄຸ້ມຄອງ, ແກ້ໄຂບັນດາບັນຫາເກີດຂຶ້ນຢູ່ໃນຊີວິດສັງຄົມ ແລະ ຄວາມຮຽກຮ້ອງຕ້ອງການຂອງປະຊາຊົນຢ່າງທັນການ, ຖືກຕ້ອງຕາມສິດຕັດສິນຂອງຕົນ.

- *ກ່ຽວກັບຄົ້ນແຖວພະນັກງານ, ລັດຖະກອນບໍລິຫານ:* ກໍ່ສ້າງ ແລະ ປະກາດໃຊ້ເອກະສານນິຕິບັນຍັດວ່າດ້ວຍລະບອບລັດຖະການ ແລະລັດຖະກອນ. ກຳນົດແຈ້ງພັນທະ, ໜ້າທີ່ຮັບຜິດຊອບ, ສິດຕັດສິນຜົນປະໂຫຍດ ແລະ ລະບຽບວິໄນຂອງພະນັກງານ ແລະລັດຖະກອນບໍລິຫານ. ກຳນົດບັນດາລະບອບກໍ່ສ້າງ, ນຳເລືອກໃຊ້ພະນັກງານ ແລະລັດຖະກອນ. ກໍ່ສ້າງຄົ້ນແຖວພະນັກງານ, ລັດຖະກອນທັງມີລະດັບວິຊາສະເພາະ ແລະ ຄວາມຊຳນິຊຳນານໃນວິຊາຊີບຢ່າງສູງ, ທັງມີຄວາມຕື່ນຕົວທາງ

ດ້ານການເມືອງ, ມີຄວາມຮັບຜິດຊອບ, ມີຄວາມພະຍາຍາມ, ມີຄວາມຍຸດຕິທຳ, ທັງມີຄຸນສົມບັດບໍລິສຸດຜຸດຜ່ອງໃນການປະຕິບັດລັດຖະການ.

ປະຕິຮູບການຈັດຕັ້ງ ແລະ ການເຄື່ອນໄຫວທາງດ້ານໄອຍະການ .

- ສືບຕໍ່ກໍ່ສ້າງ ແລະ ປັບປຸງບູລະນະລະບົບກົດໝາຍສະບັບຕ່າງໆ ເປັນບ່ອນອີງໃຫ້ການຈັດຕັ້ງ ແລະ ເຄື່ອນໄຫວຂອງບັນດາອົງການໄອຍະການ, ຮັບປະກັນໃຫ້ທຸກໆ ການລະເມີດກົດໝາຍຕ້ອງໄດ້ຮັບການຈັດແກ້, ຜົນລະເມືອງທຸກຄົນມີຄວາມສະເໝີພາບຕໍ່ໜ້າກົດໝາຍ.

- ປັບປຸງບູລະນະກົງຈັກຂອງອົງການໄອຍະການ. ກຳນົດສິດຕັດສິນຄະດີຕ່າງໆຂອງສານປະຊາຊົນຄືນໃໝ່ໃຫ້ຈະແຈ້ງ; ເປີດກວ້າງສິດຕັດສິນໃນການຕັດສິນຄະດີເບື້ອງຕົ້ນໃຫ້ສານປະຊາຊົນຂັ້ນເມືອງ. ປ່ຽນແປງໃໝ່ຕໍ່ການຈັດຕັ້ງ, ເຄື່ອນໄຫວຂອງທະບວງອະທິໄອຍະການປະຊາຊົນ, ຂອງບັນດາອົງການສືບສວນຄະດີ, ອົງການປະຕິບັດຄະດີທີ່ສານໄດ້ຕັດສິນແລ້ວ, ແລະ ຂອງບັນດາອົງການ, ການຈັດຕັ້ງຊ່ວຍຊູເພີ່ມເຕີມໃຫ້ວຽກງານໄອຍະການ.

- ກໍ່ສ້າງຖັນແຖວຜູ້ພິພາກສາ, ເລຂານຸການສານປະຊາຊົນ, ຜູ້ສືບສວນຄະດີ, ພະນັກງານໄອຍະການ, ພາລະກອນປະຕິບັດຄະດີ, ພາລະກອນຢັ້ງຢືນ, ພິສູດຄະດີ, ນັກກົດໝາຍ, ທະນາຍຄວາມ... ມີຄຸນທາດການເມືອງ, ມີຄຸນສົມບັດສົມທຳເຫັນແກ່ແຕ່ສ່ວນລວມບໍ່ເຫັນແກ່ສ່ວນຕົວ, ມີລະດັບວິຊາສະເພາະວິຊາການຢ່າງໜັກແໜ້ນ, ຮັບປະກັນໃຫ້

ກົງຈັກມີຄວາມໃສສະອາດ, ເຂັ້ມແຂງ.

ຍູ້ແຮງການຕໍ່ສູ້ຕ້ານການສໍ້ລາດບັງຫລວງ

- ດຳເນີນການຕໍ່ສູ້ຢ່າງເດັດດ່ຽວ, ເປັນປະຈຳ, ມີປະສິດທິຜົນໃນການຕ້ານສໍ້ລາດບັງຫລວງຢູ່ໃນກົງຈັກລັດ, ຢູ່ໃນຂະແໜງການ, ຂັ້ນຕ່າງໆ ແຕ່ສູນກາງລົງຮອດຮາກຖານ. ສົມທົບບັນດາມາດຕະການອັນເຄັ່ງຮ້ອນກັບບັນດາວິທີການແກ້ໄຂທີ່ມີລະດັບຍຸດທະສາດເພື່ອປັບປຸງບູລະນະກົນໄກ, ນະໂຍບາຍ, ບູລະນະການຈັດຕັ້ງ, ປັບປຸງວຽກງານຄຸ້ມຄອງ, ແກ້ໄຂຊ່ອງວ່າງ, ຕັດສິນລົງໂທດທຸກໆການລະເມີດຕໍ່ກົດໝາຍ, ຜູ້ມີໂທດຢ່າງເຂັ້ມງວດ, ທັນການ; ລະດົມ ແລະ ສົມທົບຢ່າງແໜ້ນໜາທຸກກຳລັງໃນການຕໍ່ສູ້ເພື່ອສະກັດກັ້ນ, ກຳຈັດປັດເປົ່າ ແລະ ຍູ້ໃຫ້ການສໍ້ລາດບັງຫລວງລະຖອຍໄປ.

ການຕໍ່ສູ້ຕ້ານສໍ້ລາດບັງຫລວງຕ້ອງຕິດແໜ້ນກັບການຕໍ່ສູ້ຕ້ານການຄ້າເຖື່ອນ, ຟຸ່ມເຟືອຍ, ອາດຍາສິດ; ສຸມໃສ່ບັນດາການກະທຳສວຍໃຊ້ອຳນາດຕຳແໜ່ງເພື່ອໂລບມາກໂລພາເຮັດໃຫ້ຊັບສົມບັດຂອງລັດເສຍຫາຍ, ກົນສົມບົນ; ເອົາໃຈໃສ່ໃນບັນດາຂົງເຂດຈຸດສຸມເຊັ່ນທີ່ດິນ, ເຮືອນຊານ, ກໍ່ສ້າງພື້ນຖານ, ຮ່ວມມືລົງທຶນ, ການເງິນ, ທະນາຄານ, ຜ່ານແດນເຂົ້າເມືອງ, ພາສີອາກອນ, ເຄື່ອນໄຫວທາງດ້ານໄອຍະການ, ຄຸ້ມຄອງຊັບສົມບັດຂອງສ່ວນລວມ, ຄຸ້ມຄອງທຶນຮອນຢູ່ໃນບັນດາວິສາຫະກິດຂອງລັດ...

ຕ້ອງປະຕິບັດໃຫ້ດີບັນດາວຽກງານດັ່ງຕໍ່ໄປນີ້:

1- ສືບຕໍ່ປັບປຸງບູລະນະກົງຈັກລັດ, ຍູ້ແຮງການປະຕິຮູບການບໍລິຫານ, ເພີ່ມທະວີການຄຸ້ມຄອງລັດ. ປະຕິບັດການຈັດແບ່ງງົບປະມານ, ລາຍຈ່າຍງົບປະມານ, ການພິຈາລະນາຕົກລົງບັນດາໂຄງການ, ຮ່າງ ຍັດຕິລົງທຶນຢ່າງເປີດເຜີຍ ແລະ ປະຊາທິປະໄຕ. ກວດກາການໃຊ້, ການໃຊ້ຈ່າຍງົບປະມານແຫ່ງລັດຢ່າງເຂັ້ມງວດ. ສືບຕໍ່ປຽນແປງ ໃໝ່ກົນໄກຄຸ້ມຄອງທຶນຢູ່ໃນລັດວິສາຫະກິດ, ຄຸ້ມຄອງຊັບສົມບັດສ່ວນ ລວມຢູ່ໃນບັນດາສຳນັກງານອົງການຂອງລັດ. ປັບປຸງບູລະນະບັນດາ ມາດຕະຖານ, ກຳນົດໝາຍທາງດ້ານເສດຖະກິດ-ເຕັກນິກ; ປ່ຽນແປງ ລະບອບສະຖິຕິ, ການບັນຊີ, ກວດບັນຊີ ໃຫ້ສົມບູນ. ສືບຕໍ່ດັດແປງລະ ບອບເງິນເດືອນໃຫ້ດີຂຶ້ນ. ຮັບປະກັນໃຫ້ລັດຖະກອນສາມາດດຳລົງຊີວິດ ດ້ວຍລາຍຮັບຈາກເງິນເດືອນ. ມີແຜນການຜັນຂະຫຍາຍການແຈ້ງ ລາຍຮັບ ແລະ ທີ່ດິນ, ເຮືອນຊານຂອງລັດຖະກອນ ແລະ ພະນັກງານ ຂອງພັກແຕ່ສູນກາງລົງຮອດຂັ້ນຕ່າງໆ.

2 - ດັດແກ້ບັນດາຄະດີສໍ້ລາດບັງຫລວງຢ່າງເຂັ້ມງວດ, ທັນການ ຢູ່ທຸກບ່ອນ, ຕໍ່ທຸກຂັ້ນ ແລະ ທຸກຕຳແໜ່ງງານ.

3 - ປັບປຸງບູລະນະອົງການປົກປັກຮັກສາກົດໝາຍ, ເອົາບັນດາ ພະນັກງານ, ລັດຖະກອນທີ່ມີການສໍ້ລາດບັງຫລວງ, ຫລີ່ປົກປ້ອງ, ສົມ ຮູ້ຮ່ວມຄິດກັບພວກສໍ້ລາດບັງຫລວງອອກຈາກຂະແໜງການຢ່າງ ເດັດຂາດ, ເຮັດໃຫ້ກົງຈັກມີຄວາມບໍລິສຸດຜຸດຜ່ອງ, ເຂັ້ມແຂງຢ່າງແທ້ ຈິງ.

4 - ເພີ່ມທະວີການສຶກສາອົບຮົມການເມືອງ ແລະ ຄຸນທາດ, ຄຸນສົມບັດສິນທຳໃຫ້ພະນັກງານ, ສະມາຊິກພັກ. ຄຸ້ມຄອງ ແລະ ກວດກາ ສະມາຊິກພັກຢ່າງແໜ້ນໜາທັງຢູ່ໃນບ່ອນທຳງານ ແລະ ບ່ອນຢູ່ອາໃສ ເພື່ອເຮັດໃຫ້ພະນັກງານ, ສະມາຊິກພັກ, ລັດຖະກອນແຕ່ລະຄົນບໍ່ວ່າມີຖານະຕຳແໜ່ງໃດໆກໍ່ຕ້ອງບຳລຸງ, ຫຼໍ່ຫລອມຕົນເອງທັງດ້ານຄຸນສົມບັດສິນທຳ, ບໍ່ໃຫ້ເງິນຄຳກາຍເປັນສິ່ງດູດດຶງໃຈເຫົ່ກໃສ່ການສໍ້ລາດບັງຫລວງ ບໍ່ວ່າຢູ່ໃນຮູບການຫລີ່ລະດັບໃດໆ.

5 - ຫົວໜ້າສຳນັກງານອົງການຕ່າງໆຕ້ອງເປັນແບບຢ່າງ ໂດຍ ບໍ່ມີການສໍ້ລາດບັງຫລວງ ແລະ ຕ້ອງຮັບຜິດຊອບຕໍ່ການສໍ້ລາດບັງຫລວງຢູ່ໃນສຳນັກງານ, ກົມກອງຂອງຕົນ. ເລືອກເຟັ້ນເອົາຜູ້ມີຄວາມບໍລິສຸດຜຸດຜ່ອງ, ມີຄຸນວຸດທິການເມືອງ, ມີຄວາມຮູ້ ແລະ ບົດຮຽນທາງດ້ານວິຊາສະເພາະເຂົ້າຮ່ວມວຽກງານຕ້ານການສໍ້ລາດບັງຫລວງ, ສ້າງກົນໄກເພື່ອໃຫ້ແນວໂຮມປະເທດຊາດ ແລະ ອົງການຈັດຕັ້ງການເມືອງ-ສັງຄົມ, ພະນັກງານ, ສະມາຊິກພັກ, ປະຊາຊົນເຂົ້າຮ່ວມວຽກງານຕ້ານການສໍ້ລາດບັງຫລວງ; ປົກປັກຮັກສາຜູ້ມີຈິດໃຈຊື່ສັດສຸດຈະລິດຕໍ່ສ່ວນລວມຢ່າງແທ້ຈິງ ແລະ ເດັດຂາດຕ້ານການສໍ້ລາດບັງຫລວງ; ລົງໂທດຢ່າງເຄັ່ງຄັດຕໍ່ບັນດາອົງການຈັດຕັ້ງ ແລະ ບຸກຄົນທີ່ປົກປ້ອງ, ສົມຮູ້ຮ່ວມຄິດກັບພວກສໍ້ລາດບັງຫລວງ; ພ້ອມນັ້ນກໍ່ສະກັດກັ້ນບັນດາການກະທຳສວຍໃຊ້ການຕ້ານສໍ້ລາດບັງຫລວງເພື່ອໃສ່ຮ້າຍປ້າຍສີ ແລະ ສ້າງຄວາມວຸ້ນວາຍຢູ່ພາຍໃນ. ເສີມຂະຫຍາຍບົດບາດຂອງບັນດາອົງການສື່ມວນຊົນໃນການຕໍ່ສູ້ດັ່ງກ່າວນີ້.

ພາກທີສີ່

ກໍ່ສ້າງພັກໃຫ້ເທົ່າທຽມກັບຄວາມຮຽກຮ້ອງຕ້ອງການ ຂອງໄລຍະໃຫມ່.

ຜົນງານ ແລະ ຈຸດບົກພ່ອງທັງຫມົດຂອງການປຽນແປງໃຫມ່ມີ ການຕິດພັນກັບການນຳພາ ແລະ ເຄື່ອນໄຫວຂອງພັກເຮົາ. ການນຳ ພາ ແລະ ເຄື່ອນໄຫວຂອງພັກເຮົາແມ່ນປັດໄຈຕັດສິນຕໍ່ບັນດາຜົນງານ ຂອງການປຽນແປງໃຫມ່. ພ້ອມກັນນັ້ນ, ຢູ່ໃນຂະບວນວິວັດນຳພາການ ປຽນແປງໃຫມ່ນັ້ນ, ພັກໄດ້ເຕີບໃຫຍ່ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ, ຮັບ ຮູ້ໄດ້ດ້ານອ່ອນນ້ອຍຂອງຕົນເພື່ອມີວິທີການແກ້ໄຂ.

ໄຊຊະນະຂອງການປຽນແປງໃຫມ່ໄດ້ສະແດງອອກຢ່າງຈະ ແຈ້ງວ່າ: ພັກເຮົາສືບຕໍ່ຮັກສາຢ່າງຫມັ້ນຄົງ ແລະ ເສີມຂະຫຍາຍໄດ້ ຄຸນວຸດທິ ແລະ ບົດຮຽນຂອງພັກ ໃນໄລຍະກ່ອນນີ້ເຂົ້າໃນການນຳພາ ພາລະກິດສ້າງສາ ແລະ ປົກປັກຮັກສາປະເທດຊາດຢູ່ໃນສະພາບແວດ ລ້ອມໃຫມ່ທີ່ມີຄວາມສັບສົນທີ່ສຸດຢ່າງມີຜົນດີ.

ເປັ່ງຢ່າງກວມລວມ, ໃນ 10 ປີທີ່ຜ່ານມາ, ວຽກງານກໍ່ສ້າງພັກບັນ ລຸໄດ້ບັນດາຜົນງານດັ່ງຕໍ່ໄປນີ້:

- ພັກໄດ້ວາງ ແລະ ເພີ່ມເຕີມ, ບູລະນະແນວທາງປຽນແປງໃຫມ່ ເປັນກ້າວຢ່າງຖືກຕ້ອງ, ປະດິດສ້າງ, ກຳນົດເສັ້ນທາງກ້າວຂຶ້ນສັງຄົມ

ນິຍົມຂອງປະເທດເຮົາມັບມື້ມັບຈະແຈ້ງຕື່ມ.

- ຢັ້ງຢືນລັດທິມາກ-ເລນິນ ແລະ ແນວຄິດໂຮ່ຈີມິນແມ່ນພື້ນຖານ ຂອງແນວຄິດ ແລະ ເຂັ້ມທິດໃຫ້ການກະທຳຂອງພັກ. ໃນບັນດາບາດ ລ້ຽວຂອງການປະຕິວັດ, ຕໍ່ໜ້າການຜັນແປອັນສັບສົນຂອງສະພາບ ການ, ພັກເຮົາໄດ້ກຳນົດທິດກ່ຽວກັບແນວຄິດການເມືອງຢ່າງຖືກຕ້ອງ ທັນການ, ດັດແປງແກ້ໄຂບັນດາຄວາມຮັບຮູ້ທີ່ຜິດເຂວ, ຕ້ານບັນດາ ຖ້ອຍທຳນອງໃສ່ຮ້າຍປ້າຍສີຂອງອິດທິກຳລັງປໍລະປັກ, ສ້າງພື້ນຖານ ໃຫ້ຄວາມເປັນເອກະພາບທາງດ້ານແນວຄິດໃນທົ່ວພັກ ແລະ ໃນໝູ່ປະ ຊາຊົນ.

- ຍຶດໝັ້ນຫລັກການລວມສູນປະຊາທິປະໄຕ, ນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ. ມີຄວາມກ້າວໜ້າໃນການປະຕິບັດປະຊາທິປະໄຕຢູ່ ພາຍໃນພັກ ແລະ ນຳພາການປະຕິບັດປະຊາທິປະໄຕຢູ່ໃນສັງຄົມ, ເສີມ ຂະຫຍາຍສະຕິປັນຍາຂອງໝູ່ຄະນະ, ກຳລັງແຮງສັງລວມຂອງກ້ອນ ມະຫາສາມັກຄີທົ່ວປວງຊົນ.

- ໄດ້ມີແຜນນະໂຍບາຍ ແລະ ມາດຕະການປ່ຽນແປງໃໝ່, ປັບປຸງ ກໍ່ສ້າງພັກຕິດແໜ້ນກັບໜ້າທີ່ຜັດທະນາເສດຖະກິດ- ສັງຄົມ, ບູລະນະ ລະບົບການເມືອງໃຫ້ສົມບູນເທື່ອລະກ້າວ. ປ່ຽນແປງໃໝ່ຕື່ມອີກບາດ ກ້າວໜຶ່ງທາງດ້ານຈັດຕັ້ງ ແລະ ພະນັກງານ, ຍົກສູງລະດັບຄວາມສາ ມາດ ແລະ ກຳລັງແຮງສູ້ຮົບຂອງຖັນແຖວສະມາຊິກພັກ; ສະກັດກັ້ນໄດ້ ການຊຸດໂຊມ ແລະ ອ່ອນນ້ອຍຂອງຫລາຍອົງການຈັດຕັ້ງຣາກຖານ

ພັກ; ດັດແປງແບບວິທີນຳພາ ແລະ ແບບແຜນເຮັດວຽກໃນບາດກ້າວເປ້ອງຕົ້ນ. ວຽກງານກວດກາການປະຕິບັດຫລັກການຈັດຕັ້ງ ແລະ ຮ່ວມຊີວິດພັກ, ກວດກາການຮັກສາຄຸນທາດ, ຄຸນສົມບັດປະຕິວັດຂອງພະນັກງານ, ສະມາຊິກພັກ ແລະ ການດັດແກ້ລະບຽບວິໄນພາຍໃນພັກມີການກ້າວໜ້າ.

ຢ່າງໃດກໍ່ດີ, ວຽກງານກໍ່ສ້າງພັກໃນໄລຍະທີ່ຜ່ານມາຍັງມີຈຸດບົກພ່ອງຫລາຍປະການ. ປະຈຸບັນນີ້ພວມມີບາງບັນຫາພົ້ນເດັ່ນດັ່ງນີ້:

- ໃນເງື່ອນໄຂກົນໄກຕະຫລາດ, ເສດຖະກິດມີຫລາຍພາກສ່ວນ, ເປີດປະຕູກັບພາຍນອກ. ໃນແຕ່ລະມື້ແຕ່ລະຊົ່ວໂມງພະນັກງານ, ສະມາຊິກພັກຖືກກະທົບຈາກຫລາຍປັດໄຈທີ່ສັບສົນທີ່ສຸດ, ນັບທັງບັນດາການເຄື່ອນໄຫວມ້າງເພທຳລາຍພັກເຮົາ, ບັນຫາຢຶດໝັ້ນຄຸນທາດຊົນຊັ້ນກຳມະກອນຂອງພັກພວມຢືນຢູ່ຕໍ່ໜ້າບັນດາການທົດສອບໃໝ່. ແຕ່ວ່າ, ພັກເຮົາຂາດການກະກຽມຢ່າງຄົບຖ້ວນໃຫ້ບາດກ້າວຫັນປ່ຽນດັ່ງກ່າວ, ຍັງບໍ່ທັນເອົາໃຈໃສ່ຢ່າງເຕັມສ່ວນຕໍ່ບັນຫາສຶກສາອົບຮົມ, ຫຼໍ່ຫລອມຄຸນທາດການເມືອງ ແລະ ຄຸນສົມບັດປະຕິວັດ ຕໍ່ພະນັກງານ, ສະມາຊິກພັກ. ມີພາກສ່ວນບໍ່ໜ້ອຍໃນຖັນແຖວພະນັກງານ, ສະມາຊິກພັກຂາດການບຳລຸງຫລໍ່ຫລອມຕົນເອງ, ອຸດົມຄະຕິຖືກຈືດຈາງຫ່າງເຫີນ, ຂາດສະຕິລະວັງຕົວປະຕິວັດ, ມານະຈິດບຸກບືນຫລຸດໜ້ອຍຖອຍລົງ, ສະຕິໃນການຈັດຕັ້ງ, ລະບຽບວິໄນຖືກຕົກຕ່ຳອ່ອນນ້ອຍ, ຄຸນສົມບັດສົມທຳ ແລະ ແບບແຜນດຳລົງຊີວິດຊຸດໂຊມຫລົ້ມເຫລວ. ມີຈຳນວນໜຶ່ງເສຍ

ທາດຂາດຄຸນທາງດ້ານການເມືອງເຖິງວ່າຈຳນວນນັ້ນມີໜ້ອຍກໍ່ຕາມ ແຕ່ບັນດາການເຄື່ອນໄຫວຂອງເຂົາເຈົ້າສ້າງຜົນຮ້າຍຢ້ອນຫລັງອັນບໍ່ດີທີ່ສຸດ.

- ລະດັບຄວາມຮູ້, ຄວາມສາມາດໃນການນຳພາຂອງພັກມີບາງດ້ານບໍ່ທ່ວງທັນກັບຄວາມຮຽກຮ້ອງຕ້ອງການຂອງພາລະກິດປ່ຽນແປງໃໝ່. ມີຫລາຍບັນຫາທາງດ້ານທິດສະດີ ແລະ ພຶດຕິກຳຍັງບໍ່ທັນກະຈ່າງແຈ້ງ.

- ການຈັດຕັ້ງຮາກຖານຂອງພັກຢູ່ຫລາຍແຫ່ງຍັງອ່ອນນ້ອຍ, ມີບາງບ່ອນຖືກເປ້ຍລ່ອຍ; ແບບວິທີການນຳພາ ແລະ ຮ່ວມຊີວິດພັກຍັງຫຍຸ້ງເຫຍີງ, ມີສະພາບທ້ອງອ່ອນໃນດ້ານປະຊາທິປະໄຕທ້ວງຂາດລະບຽບວິໃນ. ມີພະນັກງານ ແລະ ຄະນະພັກຈຳນວນໜຶ່ງຍັງບໍ່ທັນນັບຖື ແລະ ປະຕິບັດຖືກຕ້ອງຕາມຫລັກການລວມສູນປະຊາທິປະໄຕ; ພະຍາດອາຍາສິດ, ຕັດສິນຄົນດຽວ, ພາກສ່ວນ, ທ້ອງຖິ່ນ, ອິດສາບ້ວງບຽດ, ມັກແຕ່ຕຳແໜ່ງ, ລັດທິເອກະຊົນນິຍົມຍັງໜັກໜ່ວງ. ມີບາງບ່ອນພາຍໃນຂາດຄວາມສາມັກຄີຢ່າງຮ້າຍແຮງ.

- ວຽກງານກວດກາການປະຕິບັດແນວທາງ, ທັດສະນະ, ມະຕິ, ຄຳສັ່ງຂອງພັກຍັງບໍ່ທັນເອົາໃຈໃສ່ຢ່າງຈົດຈໍ່ເທົ່າທີ່ຄວນ.

ເພື່ອປະຕິບັດບັນດາໜ້າທີ່ ແລະ ຈຸດໝາຍທີ່ກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກວາງອອກມາເປັນຢ່າງດີ, ພັກຕ້ອງສືບຕໍ່ປ່ຽນແປງໃໝ່ໂດຍຕົນເອງ, ປັບປຸງຕົນເອງ, ຍົກສູງກຳລັງແຮງສູ້ຮົບ ແລະ ຄວາມ

ສາມາດນຳພາຂອງຕົນ, ແກ້ໄຂໃຫ້ດີບັນດາຂໍ້ຂາດຕົກບົກພ່ອງ, ບັນດາປະກົດການຫຍໍ້ທໍ້ ແລະ ອ່ອນໜ້ອຍ. ພັກຕ້ອງເຂັ້ມແຂງແຕ່ສູນກາງ ລົງຮອດຮາກຖານ, ຢູ່ທຸກຂັ້ນທຸກຂະແໜງການ.

ໃນວຽກງານກໍ່ສ້າງພັກຕ້ອງກຳແໜ້ນ ແລະ ສຸມໃສ່ປະຕິບັດບັນດາ ບັນຫາອັນພື້ນຖານດັ່ງຕໍ່ໄປນີ້ຢ່າງເປັນປະຈຳ:

1- ຍຶດໝັ້ນ ແລະ ເຟີ່ມຫະວີຄຸນທາດຊຶ້ນຊັ້ນກຳ ມະກອນຂອງພັກ.

ອັນນີ້ແມ່ນໜ້າທີ່ມີຄວາມໝາຍສຳຄັນອັນດັບໜຶ່ງຂອງພັກເຮົາ. ໃນເງື່ອນໄຂປະຈຸບັນ, ການຍຶດໝັ້ນ ແລະ ເຟີ່ມຫະວີຄຸນທາດຊຶ້ນຊັ້ນກຳ ມະກອນຂອງພັກຄືດັ່ງນີ້:

- ຍຶດໝັ້ນຕໍ່ຈຸດໝາຍເອກະລາດແຫ່ງຊາດ ແລະ ສັງຄົມນິຍົມ. ບໍ່ ວ່າຢູ່ໃນກໍລະນີຫຍຸ້ງຍາກສັບສົນໃດໆ ກໍ່ບໍ່ຄອນແຄນ, ຫ່າງເຫີນຈາກ ຈຸດໝາຍດັ່ງກ່າວ.

- ຍຶດໝັ້ນ ແລະ ໝຸນໃຊ້ຢ່າງປະດິດສ້າງ, ປະກອບສ່ວນເຂົ້າໃນ ການຂະຫຍາຍລັດທິມາກ-ເລນິນ ແລະ ແນວຄິດໂຮ່ຈິມິນ, ໂດຍເລີ່ມ ຈາກພຶດຕິກຳອັນຄົບຖ້ວນຂອງຫວຽດນາມ, ບົນພື້ນຖານດັ່ງກ່າວເພື່ອ ກໍ່ສ້າງແນວທາງ, ແຜນນະໂຍບາຍ ແລະ ນະໂຍບາຍຕ່າງໆໄດ້ຢ່າງ ຖືກຕ້ອງ.

- ຍຶດໝັ້ນຫລັກການລວມສູນປະຊາທິປະໄຕ, ປະຕິບັດການນຳພາ

ເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ຕຳນິຕົນເອງ ແລະ ຕຳນິຕິຊົມໝູ່ຄູ່ເປັນປະຈຳ, ປົກປັກຮັກສາຄວາມສາມັກຄີເອກະພາບຢູ່ພາຍໃນພັກ.

- ດຳເນີນການສຶກສາອົບຮົມ, ບຳລຸງທັດສະນະຫລັກໝັ້ນ, ສະຕິນັບຖືການຈັດຕັ້ງຂອງຊົນຊັ້ນກຳມະກອນເປັນປະຈຳ; ກໍ່ສ້າງຖັນແຖວພະນັກງານ ແລະ ສະມາຊິກພັກຕາມທັດສະນະຂອງຊົນຊັ້ນກຳມະກອນ.

- ປັບປຸງສາຍພົວພັນອັນສະໜິດແໜ້ນກັບປະຊາຊົນ, ເຝິ້ມທະວີກ້ອນກຳລັງມະຫາສາມັກຄີທົ່ວປວງຊົນ. ເອົາໃຈໃສ່ຢ່າງຈົດຈໍ່ຕໍ່ການປົວແປງຊີວິດການເປັນຢູ, ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນຢ່າງແທ້ຈິງ.

- ຈົ່ງຮັກພັກດີກັບລັດທິສາກົນຂອງຊົນຊັ້ນກຳມະກອນ, ສົມທົບກຳລັງແຮງຂອງຊາດກັບກຳລັງແຮງຂອງຍຸກສະໄໝເປັນຢ່າງດີ.

ໃນຕະຫລອດຂະບວນວິວັດແຫ່ງການດຳເນີນການປະຕິວັດ, ຜົນປະໂຫຍດຂອງຊົນຊັ້ນກຳມະກອນເປັນເອກະພາບກັບຜົນປະໂຫຍດຂອງຊາດ. ພັກເປັນຕົວແທນໃຫ້ຜົນປະໂຫຍດຂອງຊົນຊັ້ນກຳມະກອນພ້ອມກັນນັ້ນກໍ່ເປັນຕົວແທນໃຫ້ຜົນປະໂຫຍດຂອງທົ່ວທັງຊາດ. ກຳລັງແຮງຂອງພັກແມ່ນການປະສານສົມທົບຢ່າງໜຽວແໜ້ນລະຫວ່າງລະບົບແນວຄິດທີ່ນຳໜ້າຂອງຊົນຊັ້ນກຳມະກອນກັບຈິດໃຈອົງອາດກ້າແກ່ນ, ຍອດຍິ່ງ, ມູນເຊື້ອອັນດີງາມຂອງຊາດ ແລະ ສິ່ງດັ່ງກ່າວໄດ້ສະແດງ

ຢ່າງລວມສູນ, ແຈ້ງສະຫວ່າງຢູ່ໃນແນວຄິດໂຮ່ຈີມິນ.

2 - ຍົກສູງຄຸນຫາດການເມືອງ, ຄຸນສົມບັດ ແລະ ຄວາມສາມາດຂອງພະນັກງານ, ສະມາຊິກພັກ.

ອີງໃສ່ໂຄງການການເມືອງ ແລະ ບັນດາມະຕິຂອງພັກ, ດຳເນີນການບຳລຸງຢ່າງເປັນປະຈຳໃຫ້ພະນັກງານ, ສະມາຊິກພັກກ່ຽວກັບແນວທາງ, ແຜນນະໂຍບາຍຂອງພັກ, ກ່ຽວກັບບັນດາບັນຫາພື້ນຖານຂອງລັດທິມາກ-ເລນິນ ແລະ ແນວຄິດໂຮ່ຈີມິນ, ບັນດາມູນເຊື້ອອັນດີງາມຂອງຊາດ, ບັນດາຄວາມຮູ້ໃໝ່ຂອງຍຸກສະໄໝ; ຮັບປະກັນຄວາມເປັນເອກະພາບທາງດ້ານການເມືອງ ແລະ ແນວຄິດໃນທົ່ວພັກ.

ກ່ອນອື່ນໝົດ, ວຽກງານທິດສະດີຕ້ອງຫັນທິດເຂົ້າບັນດາບັນຫາທີ່ຊີວິດສັງຄົມໄດ້ວາງອອກ, ສ້າງຄວາມຈະແຈ້ງກ່ຽວກັບບ່ອນອີງອັນມີວິທະຍາສາດຂອງບັນດາວິທີການແກ້ໄຂ, ຄາດຄະເນລ່ວງໜ້າບັນດາທ່າອ່ຽງຂະຫຍາຍຕົວ, ປະກອບສ່ວນເຂົ້າໃນການເພີ່ມເຕີມ, ບູລະນະແນວທາງຂອງພັກໃຫ້ສົມບູນ, ເຮັດໃຫ້ເສັ້ນທາງກ້າວຂຶ້ນສັງຄົມນິຍົມຢູ່ປະເທດເຮົາມັບມີມັບແຈ້ງຂຶ້ນ.

ພະນັກງານ, ສະມາຊິກພັກທຸກຄົນ, ເຊິ່ງກ່ອນອື່ນໝົດແມ່ນບັນດາພະນັກງານຫລັກແຫລ່ງຕ້ອງມີແຜນການຮ່ຳຮຽນ, ຍົກສູງລະດັບຄວາມຮູ້ທິດສະດີການເມືອງ, ຄວາມສາມາດ ໃນການເຄື່ອນໄຫວຕົວຈິງຢ່າງເປັນປະຈຳ. ການຮ່ຳຮຽນແມ່ນໜ້າທີ່ບັງຄັບຕໍ່ພະນັກງານ, ສະມາຊິກພັກທຸກຄົນ ແລະ ຕ້ອງໄດ້ກຳນົດເປັນລະບອບລະບຽບການ.

ຂີ້ຄ້ານຮ່ຳຮຽນ, ຂີ້ຄ້ານບໍ່ນັກຄິດຫາງຳ, ບໍ່ຍອມຮັບເອົາບັນດາຂ່າວຄາວໃໝ່ຢ່າງເປັນປະຈຳກໍ່ແມ່ນປະກົດການຂອງຄວາມເສຍຫາດຂາດຄຸນ.

ດັດແປງບັນດາຄວາມຮູ້ທີ່ຜິດເຂວ, ບັນດາທັດສະນະລະເມີດເຜີ້ຝັນ, ບັນດາປະກົດການອັນຄອມແຄມທາງດ້ານແນວຄິດ, ຄວາມເຊື່ອຫມັ້ນຕໍ່ສັງຄົມນິຍົມຕໍ່ການນຳພາຂອງພັກທີ່ຖືກຫລຸດຫນ້ອຍຖອຍລົງ. ຕຳນິວິຈານ ແລະ ປັດເຂ້ຍບັນດາທັດສະນະຜິດພາດ, ເປັນສັນຕູ. ສະມາຊິກພັກມີສິດອອກຄຳເຫັນໃນຂອບເຂດການຈັດຕັ້ງ, ໄດ້ຮັກສາຄຳເຫັນຂອງຕົນໄວ້ແຕ່ຕ້ອງປະຕິບັດມະຕິຂອງພັກ, ບໍ່ໄດ້ເຜີຍແຜ່ບັນດາທັດສະນະທີ່ຜິດກັບທັດສະນະ ແລະ ແນວທາງຂອງພັກ, ບໍ່ເຮັດເສຍຄວາມປິດລັບຂອງພັກ ແລະ ລັດ. ການຈັດຕັ້ງຂອງພັກຕ້ອງຄຸ້ນຄອງ, ມີວິທີການແກ້ໄຂຢ່າງທັນການຕໍ່ບັນດາສະມາຊິກພັກ ລະເມີດຫລັກການຂອງພັກຫລືສວຍໃຊ້ປະຊາທິປະໄຕເພື່ອໂຄສະນາຕ້ານພັກ.

ແກ້ໄຂສະພາບພະນັກງານ, ສະມາຊິກພັກຢູ່ໃນພາກສ່ວນໜຶ່ງທີ່ຖືກເສຍຫາດຂາດຄຸນ. ພະນັກງານ, ສະມາຊິກພັກຕ້ອງເປັນແບບຢ່າງໃນການຫຼໍ່ຫລອມຕົນເອງ, ສູ້ຊົນໂດຍຕົນເອງໃນການຍົກສູງຄຸນສົມບັດປະຕິວັດ "ໝັ່ນ, ປະຍັດ, ຊັດທ່ຽງ, ເຫັນແກ່ແຕ່ສ່ວນລວມບໍ່ເຫັນແກ່ສ່ວນຕົວ", ແກ້ໄຂລັດທິເອກະຊົນນິຍົມ. ບໍ່ໄດ້ສວຍໃຊ້ສະພາບກົດໝາຍຍັງບໍ່ທັນຄົບຊຸດຫລືກົນໄກ, ນະໂຍບາຍຍັງມີຊ່ອງວ່າງເພື່ອທຳມາຫາກິນຢ່າງບໍ່ຊອບທຳ, ກອບໂກຍເອົາຊັບສົມບັດເງິນຄຳຂອງສ່ວນລວມ. ບັນດາການຈັດຕັ້ງພັກຕ້ອງສຶກສາອົບຮົມ, ຫຼໍ່ຫຼອມ, ຄຸ້ມຄອງສະມາຊິກພັກ,

ນັບທັງສະມາຊິກພັກທີ່ເປັນພະນັກງານຂັ້ນສູງ ຢ່າງເປັນປະຈຳ. ກຳນົດ ແຈ້ງບັນດາອົງການທີ່ມີການພົວພັນເຖິງການທຸລະກິດຂອງເອກະຊົນ, ເຖິງບັນຫາເຮັດວຽກໃຫ້ຄົນຕ່າງປະເທດທີ່ລັດຖະກອນບໍ່ໄດ້ຮັບອະນຸຍາດ; ກຳນົດຢ່າງເຄັ່ງຄັດຕໍ່ການຮັບເອົາຂອງຕ້ອນ, ການຮັບແຂກ; ກຳນົດລະບອບກ່ຽວກັບພະນັກງານ, ລັດຖະກອນ, ສະມາຊິກພັກ, ເຊິ່ງ ກ່ອນອື່ນໝົດແມ່ນພະນັກງານມີຖານະຕຳແໜ່ງນຳພາຫລັກແຫລ່ງ ຢູ່ໃນຂັ້ນຕ່າງໆຕ້ອງລາຍງານ ແລະ ຍອມໃຕ້ການກວດກາທາງດ້ານ ລາຍໄດ້ ແລະ ຊັບສົມບັດຂອງຕົນ. ບັນດາຜູ້ຮັ່ງມີຂຶ້ນຢ່າງຜິດປົກກະຕິ ຕ້ອງມີການກວດກາຈາກອົງການຈັດຕັ້ງພັກ. ກຳນົດຄວາມຮັບຜິດ ຊອບຂອງບັນດາພະນັກງານ, ສະມາຊິກພັກທີ່ມີລູກເມຍ, ມີຜົວທີ່ມີການ ທຳມາຫາກິນແບບຜິດກົດໝາຍ; ກຳນົດບັນດາປະເພດທຸລະກິດທີ່ຜົວ ເມຍ ແລະ ລູກຂອງພະນັກງານນຳພາຫລັກແຫລ່ງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນບໍ່ໄດ້ຮັບອານຸຍາດເຮັດ. ສະມາຊິກພັກບໍ່ໄດ້ເຮັດໂດຍກົງຫລືໃນ ນາມຂອງຜູ້ອື່ນເພື່ອເຮັດເສດຖະກິດທຶນນິຍົມເອກະຊົນ.

ແກ້ໄຂຢ່າງທັນການ ແລະ ເຂັ້ມງວດຕໍ່ພະນັກງານ, ສະມາຊິກພັກ ຖືກເສຍຫາດຂາດຄຸນບໍ່ວ່າຜູ້ນັ້ນເປັນໃຜມີຖານະຕຳແໜ່ງຄືແນວໃດ.

3 - ປັບປຸງພັກທາງດ້ານຈັດຕັ້ງ, ປະຕິບັດຫລັກການລວມ ສູນປະຊາທິປະໄຕຢ່າງເຄັ່ງຄັດ.

ມີຂໍ້ກຳນົດຢ່າງລະອຽດເພື່ອຮັບປະກັນໃຫ້ສະມາຊິກພັກທຸກຄົນໄດ້ສົນ ທະນາແລກປ່ຽນ ແລະ ເຂົ້າຮ່ວມການຕົກລົງຕໍ່ບັນດາແຜນນະໂຍບາຍ,

ວຽກງານຕ່າງໆຂອງອົງການຈັດຕັ້ງພັກ; ສຽງສ່ວນໜ້ອຍຕ້ອງປະຕິບັດຕາມສຽງຂອງສ່ວນຫລາຍ ບຸກຄົນຕ້ອງປະຕິບັດຕາມການຈັດຕັ້ງ, ຂັ້ນລຸ່ມປະຕິບັດຕາມຂັ້ນເທິງ, ບັນດາອົງການຈັດຕັ້ງຢູ່ໃນທົ່ວພັກຕ້ອງປະຕິບັດຕາມຄະນະບໍລິຫານງານສູນກາງ ແລະ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຂອງພັກ. ບັນດາຂໍ້ຕົກລົງທີ່ຂຶ້ນກັບສິດຂອງໝູ່ຄະນະຕ້ອງໄດ້ລົງຄະແນນສຽງຕາມຈຳນວນຫລາຍ; ສະມາຊິກທຸກຄົນຕ້ອງປະຕິບັດຕາມມະຕິຕົກລົງຂອງໝູ່ຄະນະ.

ສະມາຊິກພັກ, ພະນັກງານຕ້ອງຫຼໍ່ຫລອມສະຕິໃນການຈັດຕັ້ງ, ລະບຽບວິໄນ, ຕື່ນຕົວເອົາຕົນເຂົ້າໃນການຄຸ້ມຄອງຂອງໜ່ວຍພັກ, ເຂົ້າຮ່ວມຊີວິດຂອງໜ່ວຍພັກຢ່າງຄົບຖ້ວນ, ປະຕິບັດລະບຽບວິໄນຂອງພັກຢ່າງຖືກຕ້ອງ. ບໍ່ປະໃຫ້ສະມາຊິກພັກຜູ້ໃດຜູ້ໜຶ່ງຢູ່ນອກການຄຸ້ມຄອງຂອງການຈັດຕັ້ງ.

ປະຕິບັດລະບອບຕຳນິຕິຊົມໝູ່ ແລະ ຕຳນິຕົນເອງຢ່າງເຂັ້ມງວດ; ຕ້ານການເຮັດຕາມແບບຮູບນອກ, ພໍແລ້ວມີໂດຍບໍ່ດັດແປງຂໍ້ຂາດຕົກບົກພ່ອງ. ຫ້າມຢ່າງເດັດຂາດຕໍ່ກໍລະນີປາບປາມທັບຖົມຜູ້ຕຳນິຕິຊົມກໍ່ຄືປະກົດການສວຍໃຊ້ການຕຳນິຕິຊົມເພື່ອໃສ່ຮ້າຍໂດຍບໍ່ມີຄວາມຈິງ, ໂຈມຕີບຸກຄົນ, ສ້າງຄວາມວຸ້ນວາຍຢູ່ພາຍໃນ.

ທຸກໆການເຄື່ອນໄຫວໂດຍບໍ່ຖືກຕ້ອງກັບລະບຽບວິໄນ, ຢູ່ນອກການຈັດຕັ້ງ, ບໍ່ປະຕິບັດຕາມມະຕິ, ຄຳສັ່ງຂອງພັກ, ສ້າງຄວາມແບ່ງແຍກພັກພວກຢູ່ໃນພັກລ້ວນແຕ່ຖືກດັດແກ້ຢ່າງເຄັ່ງຄັດ.

ສືບຕໍ່ປັບປຸງບູລະນະກົງຈັກຂອງພັກ ແລະ ລັດ, ຂອງອົງການຈັດຕັ້ງມະຫາຊົນຕາມທິດກະທັດລັດ ແລະ ຍົກສູງປະສິດທິຜົນ; ກຳນົດພາລະບົດບາດ, ໜ້າທີ່ ແລະ ສາຍພົວພັນລະຫວ່າງບັນດາອົງການຈັດຕັ້ງໃຫ້ຈະແຈ້ງກວ່າເກົ່າ, ປັບປຸງບັນດາຄະນະພັກຂັ້ນຕ່າງໆ ໃຫ້ສົມບູນ, ປັບປຸງບັນດາສາຍພົວພັນ ແລະ ຍົກສູງຄຸນນະພາບໃນການເຄື່ອນໄຫວ ຂອງບັນດາອົງການຂອງສູນກາງພັກ, ຂອງບັນດາອົງຄະນະສະຫະພັກ, ຄະນະປະຕິບັດງານ, ຄະນະພັກຂອງກຸ່ມ, ຄະນະພັກຂອງອົງການສຳນັກງານ.

ສາມັກຄີເປັນເອກະພາບຢູ່ພາຍໃນພັກ, ເຊິ່ງກ່ອນອື່ນໝົດແມ່ນຢູ່ໃນອົງການການນຳມີຄວາມໝາຍຕັດສິນຕໍ່ການສຳເລັດຜົນຂອງການປະຕິວັດ. ພະນັກງານ, ສະມາຊິກພັກຮັກສາຄວາມສາມັກຄີເປັນເອກະພາບພາຍໃນພັກບົນພື້ນຖານແນວທາງການເມືອງ, ຫລັກການຈັດຕັ້ງ ແລະ ຄວາມຮັກແພງສະຫາຍດ້ວຍກັນ. ສຸມກຳລັງແກ້ໄຂໃຫ້ໄດ້ສະພາບຂາດຄວາມສາມັກຄີອັນຮ້າຍແຮງຢູ່ບາງຂະແໜງການ ແລະ ທ້ອງຖິ່ນ, ໄຈ້ແຍກວິເຄາະໃຫ້ຖືກສາເຫດ, ມີມາດຕະການແກ້ໄຂຢ່າງສອດຄ່ອງເໝາະສົມ. ພິເສດຕ້ອງປະຕິບັດຕາມບັນດາຂໍ້ດັ່ງນີ້:

- ສັບຊ້ອນຜູ້ເປັນຫົວໜ້າຂອງອົງການຈັດຕັ້ງພັກ ແລະ ອົງການອຳນາດການປົກຄອງຂັ້ນດຽວກັນຢ່າງຖືກຕ້ອງ;

- ປະຕິບັດຫລັກການລວມສູນປະຊາທິປະໄຕຢ່າງຖືກຕ້ອງ;

- ມີລະບອບລະບຽບການເຮັດວຽກຢ່າງຈະແຈ້ງ, ແໜ້ນໜາໂດຍ

ສະເພາະແມ່ນວຽກງານພະນັກງານ:

- ດຳເນີນການຕຳນິຕົນເອງ ແລະ ເຕັມໃຈຊຸມໜ່ຍ ໆ ເປັນປະຈຳ; ຕໍ່ສູ້ຕ້ານການຊື່ງດີຊື່ງເດັ່ນໃນຖານະຕຳແໜ່ງ, ສວຍໂອກາດ, ຜາກ ສ່ວນ, ເຫັນແກ່ຕົວເອງ, ຜັກພວກ;

- ບຳລຸງຈິດໃຈຮັກແພງສະຫາຍ, ນັບຖືກັນ ແລະ ກັນ;

- ພົບເຫັນບັນດາປະກົດການຂາດຄວາມສາມັກຄີໂດຍໄວ ແລະ ສຸມ ໃສ່ແກ້ໄຂໃຫ້ຂາດຕົວ.

ບໍ່ເປັນອັນໜຶ່ງອັນດຽວກັນສຳລັບບັນດາຄຳຄິດຄຳເຫັນທີ່ແຕກ ຕ່າງກັນໃນເວລາປຶກສາສົນທະນາ, ຖືກຖຽງຢູ່ພາຍໃນການຈັດຕັ້ງຜັກ ດ້ວຍສະພາບຂາດຄວາມສາມັກຄີ , ຕໍ່ໜ້າການຂະຫຍາຍຕົວຂອງ ການປະຕິວັດ, ມີຫລາຍບັນຫາທີ່ດສະດີ ແລະ ຜິດຕິກຳທີ່ມີຄວາມສັບ ສົນ, ບໍ່ທັນແຈ່ມແຈ້ງ, ພາຍໃນພັກຕ້ອງມີການປຶກສາສົນທະນາ, ແລກ ປ່ຽນຖືກຖຽງບັນຫານີ້ຢ່າງເອົາຈິງເອົາຈັງ. ພະນັກງານ, ສະມາຊິກ ພັກທຸກຄົນຕ້ອງຮັບຟັງຢ່າງຈົດຈ່ໍ, ນັບຖືຄຳຄິດຄຳເຫັນຂອງກັນ ແລະ ກັນ, ເພື່ອຄວາມສັດຈະທຳ, ເພື່ອຄວາມຖືກຕ້ອງເປັນທຳຢ່າງແທ້ຈິງ. ພ້ອມກັນນັ້ນບໍ່ຄວນ "ສາມັກຄີ" ແບບຮູບນອກ, ລວງດຽວ, ຈົ່ງຈຸມກັນ ບໍ່ກ້າຕໍ່ສູ້ສ້າງສັນໃຫ້ກັນ ແລະ ກັນ.

4 - ເອົາໃຈໃສ່ຈົດຈ່ໍຕໍ່ການກໍ່ສ້າງຖັນແຖວພະນັກງານ.

ສະພາບການ ແລະ ໜ້າທີ່ໃໝ່ໄດ້ມີຄວາມຮຽກຮ້ອງຕ້ອງການ

ຫລາຍປະການຕໍ່ວຽກງານພະນັກງານ. ທົ່ວພັກຕ້ອງເອົາໃຈໃສ່ຢ່າງ ຈົດຈໍ່ ກໍ່ສ້າງຖັນແຖວພະນັກງານໃຫ້ດີທີ່ສຸດ ໂດຍສະເພາະແມ່ນຖັນແຖວ ພະນັກງານສືບທອດທີ່ໜັກແໜ້ນ, ມີຄຸນຫາດຢ່າງຄົບຖ້ວນໃນທຸກ ດ້ານ. ສ້າງຍຸດທະສາດກ່ຽວກັບພະນັກງານຂອງໄລຍະໃໝ່ ໂດຍໄວ.

ພັກຕ້ອງເອົາໃຈໃສ່ຈົດຈໍ່ໃນການສ້າງພະນັກງານໃຫ້ທັງໃນລະບົບ ການເມືອງ, ແລະ ທຸກຂົງເຂດ. ພັກນຳພາຢ່າງເປັນເອກະພາບຕໍ່ວຽກ ງານພະນັກງານ ແລະ ຄຸ້ມຄອງຖັນແຖວພະນັກງານ, ພ້ອມນັ້ນກໍ່ເສີມ ຂະຫຍາຍໜ້າທີ່ຮັບຜິດຊອບໃນວຽກງານພະນັກງານຂອງບັນດາອົງ ການທີ່ເປັນພາຄີຂອງລະບົບການເມືອງ. ຮັບປະກັນຫລັກການໝູ່ຄະ ນະ, ປະຊາທິປະໄຕໄປຄຽງຄູ່ກັບການເສີມຂະຫຍາຍຄວາມຮັບຜິດຊອບ ສ່ວນບຸກຄົນໃນວຽກງານພະນັກງານ.

ບົນຝັ້ນຖານຮັບປະກັນມາດຕະຖານ, ປະຕິບັດການຫັນຖັນແຖວພະ ນັກງານໃຫ້ໜຸ່ມນ້ອຍ ໂດຍປະສານສົມທົບມີບັນດາໄວອາຍຸຕ່າງກັນ ເປັນຢ່າງດີ, ຮັບປະກັນລັກສະນະຕໍ່ເນື່ອງ, ລັກສະນະຂະຫຍາຍຕົວຢູ່ໃນ ຖັນແຖວພະນັກງານ. ມີນະໂຍບາຍສາມັກຄີ,ເຕົ້າໂຮມບັນດາປະເພດ ພະນັກງານຢ່າງກວ້າງຂວາງ, ນຳໃຊ້ທຸກຄົນທີ່ມີຄວາມເກັ່ງກ້າສາ ມາດຂອງປະເທດ, ຢູ່ພາຍໃນພັກ ແລະ ຢູ່ນອກພັກ.

ກໍ່ສ້າງ, ບຳລຸງພະນັກງານຢ່າງຮອບດ້ານທັງໃນດ້ານທິດສະດີການ ເມືອງ, ຄຸນສົມບັດ, ທັງໃນດ້ານວິຊາສະເພາະ ແລະ ຜົດຕິກຳ. ເອົາ ໃຈໃສ່ກໍ່ສ້າງ, ບຳລຸງພະນັກງານນຳພາ, ພະນັກງານຄຸ້ມຄອງ, ນັກທຸ

ລະກິດ, ຊ່ອງວ່ານເຊິ່ງ ກ່ອນອື່ນໝົດແມ່ນຖັນແຖວພະນັກງານຫລັກ ແຫລ່ງຢູ່ໃນລະບົບການເມືອງ; ຖືສຳຄັນທັງຄຸນສົມບັດ, ທັງຄວາມສາ ມາດໂດຍເອົາຄຸນສົມບັດເປັນກົກ. ການຮ່ຳຮຽນຂອງພະນັກງານຕ້ອງ ໄດ້ກຳນົດເປັນລະບອບລະບຽບການ ແລະ ຕ້ອງປະຕິບັດຢ່າງເຂັ້ມ ງວດ. ພະນັກງານທຸກຄົນຕ້ອງຮ່ຳຮຽນຍົກສູງລະດັບຄວາມສາມາດໃນ ທຸກດ້ານຢ່າງເປັນປະຈຳ, ຫຼໍ່ຫຼອມ, ບຳລຸງຄຸນທາດການເມືອງ, ຄວາມ ຈົງຮັກພັກດີຕໍ່ອຸດົມຄະຕິປະຕິວັດ, ມານະຈິດຍຶດໝັ້ນໃນຈຸດໝາຍເອ ກະລາດແຫ່ງຊາດ ແລະ ສັງຄົມນິຍົມ, ສະຕິໃນການຈັດຕັ້ງ ແລະ ລະ ບຽບວິໄນ, ເປັນແບບຢ່າງໃນດ້ານຄຸນສົມບັດສິນທຳ ແລະ ແບບແຜນ ດຳລົງຊີວິດ, ປະສານສົມທົບຢ່າງກົມກຽວລະຫວ່າງຜົນປະໂຫຍດສ່ວນ ບຸກຄົນກັບຜົນປະໂຫຍດຂອງສ່ວນລວມ, ໃນເມື່ອຜົນປະໂຫຍດຂອງ ສ່ວນບຸກຄົນຂັດແຍ່ງກັບຜົນປະໂຫຍດຂອງສ່ວນລວມຕ້ອງວາງຜົນປະ ໂຫຍດຂອງສ່ວນລວມຢູ່ເໜືອຜົນປະໂຫຍດສ່ວນບຸກຄົນ.

ເອົາໃຈໃສ່ຈັດຕໍ່ໃນການສ້າງແຫລ່ງພະນັກງານຢູ່ໃນຂະບວນການ ຕົວຈິງ ແລະ ຢູ່ໃນບັນດາໂຮງຮຽນມະຫາວິທະຍາໄລ, ໂຮງຮຽນຊັ້ນ ສູງ ແລະ ໂຮງຮຽນສ້າງວິຊາຊີບ. ຖືສຳຄັນຕໍ່ການບຳລຸງອຸດົມຄະຕິ ປະຕິວັດ, ລັດທິມາກ-ເລນິນ ແລະ ແນວຄິດໂຮ່ຈິມິນໃຫ້ຮຸ້ນໜຸ່ມ.

ປຽນແປງໃໝ່ຕໍ່ຄວາມສຳນຶກ ແລະ ວິທີການສັງເກດຕີລາຄາ, ສັບ ຊ້ອນພະນັກງານຕ້ອງຮັບປະກັນປະຊາທິປະໄຕຢ່າງແທ້ຈິງ, ແລະ ມີ ແຜນດຳເນີນງານຢ່າງແໜ້ນໜາ. ຄະນະພັກແຕ່ລະຂັ້ນຕ້ອງມີມາດ

ຕະການຄຸ້ມຄອງ ແລະ ກຳແໜ້ນຂະບວນວິວັດແຜ່ງການຂະຫຍາຍຕົວ ຂອງພະນັກງານ. ການສັງເກດຕີລາຄາພະນັກງານຕ້ອງອີງໃສ່ບັນ ດາວຽກງານຕົວຈິງຂອງແຕ່ລະຄົນລວມທັງຈຸດດີ ແລະ ຂໍ້ຂາດຕົກບົກ ພ່ອງໃນແຕ່ລະໄລຍະເວລາອັນແນ່ນອນ. ບັນດາຂໍ້ສັງເກດ, ສະຫລຸບ ກ່ຽວກັບພະນັກງານ, ກ່ຽວກັບທຸກວຽກງານທາງດ້ານບຸກຄະລາກອນ ຕ້ອງແນ່ນລວມໝູ່ເປັນຜູ້ຕັດສິນຕົກລົງ. ແກ້ໄຂວິທີເຮັດຕາມແບບງ່າຍ ດາຍ, ອະຄະຕິ, ຂາດຄວາມເຫລື້ອມໃສຕໍ່ປະໂຫຍດສ່ວນລວມ, ແບບ ປະຊາທິປະໄຕຮູບນອກ.

ສັບຊ້ອນ ແລະ ນຳໃຊ້ພະນັກງານຕ້ອງຮັບປະກັນຖືກກັບມາດຕະ ຖານ ແລະ ຖືກກັບຄວາມຊຳນິຊຳນານຂອງຜູ້ກ່ຽວ. ການເລື່ອນຊັ້ນ ຕຳແໜ່ງ, ແຕ່ງຕັ້ງພະນັກງານຕ້ອງຖືກກັບຈຸດເວລາ, ມອບວຽກ ມອບງານຖືກກັບລະດັບຄວາມສາມາດ, ໃນເມື່ອຈຳເປັນຕ້ອງປຽນ ແທນຢ່າງທັນການ. ສ້າງລະບອບລະບຽບການກ່ຽວກັບການເລືອກຕັ້ງ ຕາມອາຍຸການ, ແຕ່ງຕັ້ງມີກຳນົດເວລາ. ມີລະບອບໃຫ້ພະນັກງານລາ ຈາກຕຳແໜ່ງຫລືຖອນຕຳແໜ່ງເພື່ອໄປຮັບໜ້າທີ່ວຽກງານໃໝ່ທີ່ ເໝາະສົມ.

ສ້າງລະບອບລະບຽບການຄັດເລືອກເອົາພະນັກງານ, ຄັດເລືອກເອົາ ຜູ້ມີຄວາມເກັ່ງກ້າສາມາດ.

ມີນະໂຍບາຍຢ່າງຖືກຕ້ອງໃນການນຳໃຊ້ພະນັກງານ, ນະໂຍບາຍ ເງິນເດືອນ ແລະ ຄ່າຕອບແທນຢ່າງເໝາະສົມຕໍ່ບັນດາປະເພດພະນັກ

ງານ. ແກ້ໄຂສະພາບບໍ່ຢາກເຮັດວຽກຢູ່ໃນບັນດາອົງການ ຂອງພັກ, ອົງການມະຫາຊົນ ແລະ ກຳຈັດປັດເປົ່າສະພາບ "ທາດຫນີ່ນໄຫລ ອອກນອກປະເທດ" ຢູ່ໃນຂົງເຂດລັດ. ມີມາດຕະການອັນຕັ້ງຫນ້າ ແລະ ເປັນເຈົ້າການໃນການປົກປ້ອງພະນັກງານ; ບໍ່ປະໃຫ້ບັນດາອິດທິກຳລັງ ອັນມືດມົນຊົ່ວຈ້າງ, ຊັກຈູງ, ຄອບງຳຫລືໃສ່ຮ້າຍປ້າຍສີຕໍ່ພະນັກງານ.

5 - ຍົກສູງກຳລັງສູ້ຮົບຂອງການຈັດຕັ້ງຣາກຖານພັກ.

ສຳຫລວດກວດກາແຕ່ລະປະເພດການຈັດຕັ້ງຣາກຖານພັກຢ່າງຖີ່ຖ້ວນ, ຕີລາຄາໃຫ້ຖືກຕ້ອງຕາມສະພາບເປັນຈິງ ແລະ ສາເຫດເພື່ອມີມາດຕະການປ່ຽນແປງໃຫມ່ ແລະ ປັບປຸງບູລະນະໃຫ້ສອດຄ່ອງເຫມາະສົມ. ຮັບປະກັນໃຫ້ແຕ່ລະປະເພດມີການເຄື່ອນໄຫວຢ່າງຖືກຕ້ອງກັບພາລະບົດບາດ ແລະ ຫນ້າທີ່ຂອງຕົນ.

ເສີມຂະຫຍາຍຫມາກຜົນ ແລະ ບົດຮຽນຂອງການປະຕິບັດມະຕິຂອງກອງປະຊຸມສູນກາງຄັ້ງທີ່ສາມ (ສະໄຫມທີ VII), ຊີ້ນຳຢ່າງດີຕໍ່ການຍົນຍວາຍກໍ່ສ້າງຣາກຖານພັກໃຫ້ໃສສະອາດ, ເຂັ້ມແຂງ; ປັບປຸງບູລະນະບັນດາຣາກຖານອ່ອນຫນ້ອຍ; ແກ້ໄຂການປະປ່ອຍວຽກງານພັກ. ຢູ່ໃນບັນດາບ່ອນທີ່ຂາດຄວາມສາມັກຄີ, ພະນັກງານຫລັກແຫລ່ງມີປະກົດການຫຍໍ້ທໍ້ຫລາຍຢ່າງ, ຂັ້ນເທິງຕ້ອງຊີ້ນຳ, ຊ່ວຍເຫລືອໂດຍກົງເພື່ອແກ້ໄຂບັນຫາດັ່ງກ່າວ. ສ້າງບາດກ້າວຫັນປ່ຽນໃຫມ່ຂອງບັນດາຣາກຖານພັກຢູ່ໃນເຂດປະຊາຊົນຖືສາສະຫນາຕ່າງໆ, ຢູ່ໃນເຂດຊົນຊາດສ່ວນຫນ້ອຍ.

ທິດເລັ່ງອັນຕົ້ນຕໍ່ໃນການປັບປຸງບູລະນະບັນດາການຈັດຕັ້ງຣາກ ຖານພັກຄືຕ້ອງເຮັດໃຫ້ບັນດາຣາກຖານດັ່ງກ່າວເຊື່ອມຊຶມແນວທາງ, ນະໂຍບາຍຂອງພັກ ແລະ ລັດ, ວາງແຜນນະໂຍບາຍ, ວິທີການແກ້ ໄຂຢ່າງຖືກຕ້ອງ ແລະ ນຳພາຫົວໜ່ວຍປະຕິບັດໜ້າທີ່ຂອງຕົນເປັນ ຢ່າງດີ, ພັດທະນາເສດຖະກິດ, ລົບລ້າງຄວາມອຶດຫິວຫລຸດຜ່ອນ ຄວາມຍາກຈົນ, ປ່ຽນແປງຊີວິດການເປັນຢູ່ຂອງຜູ້ອອກແຮງງານໃຫ້ດີ ຂຶ້ນ, ຕ້ານການສໍ້ລາດບັງຫລວງ, ຂູ່ເຂນນະຫາຊົນ, ນຳພາແກ້ໄຂບັນ ດາຄວາມປາດຖະໜາອັນຊອບທຳ, ອັດຖະການເຄັ່ງຮ້ອນຂອງປະຊາ ຊົນ. ປັບປຸງ ແລະ ດັດແປງ ການຮ່ວມຊີວິດພັກ; ມີຂໍ້ກຳນົດຢ່າງແໜ້ນ ໜາຕໍ່ບັນດາກໍລະນີທີ່ ພະນັກງານໄປປະຕິບັດງານຢູ່ທາງນອກ, ເຮັດ ວຽກແບບເຄື່ອນທີ່ຢູ່ໄກ, ຢູ່ຕ່າງປະເທດ. ປະຕິບັດການຄຸ້ມຄອງສະມາ ຊິກພັກຢ່າງມີແບບແຜນ.

ຢູ່ໃນບັນດາວິສາຫະກິດເອກະຊົນ, ບັນດາຣາກຖານຮ່ວມທຸລະກິດ ກັບຕ່າງປະເທດ, ຢູ່ບັນດາບ່ອນຍັງບໍ່ທັນມີສະມາຊິກພັກຫລືມີສະມາຊິກ ພັກຈຳນວນໜ້ອຍກໍ່ຕ້ອງເລີ່ມແຕ່ການກໍ່ສ້າງບັນດາອົງການມະຫາ ຊົນ, ເຕົ້າໂຮມ ແລະ ສຶກສາອົບຮົມມະຫາຊົນ, ຂະຫຍາຍສະມາຊິກຊາວ ໜຸ່ມ, ສະມາຊິກຂອງສະມາຄົມ, ສະມາຊິກພັກເພື່ອກ້າວເຖິງການກໍ່ ສ້າງບັນດາຈຸພັກ ແລະ ໜ່ວຍພັກ. ຕ້ອງມີການກຳນົດໂດຍໄວກ່ຽວ ກັບການແນະນຳການເຄື່ອນໄຫວຂອງບັນດາການຈັດຕັ້ງພັກຢູ່ໃນຂົງ ເຂດນີ້.

ແບ່ງປັນງົບປະມານລາຍຈ່າຍຢ່າງເທົ່າທີ່ຄວນໃຫ້ການກໍ່ສ້າງ, ບຳລຸງ, ຄ່າເອື້ອເຟື້ອຕໍ່ພະນັກງານຣາກຖານ; ເອົາໃຈໃສ່ໃນການປັບປຸງ ແລະ ເຝິ້ມທະວີຄຸນແຖວພະນັກງານຫລັກແຫລ່ງ.

ບັນດາການຈັດຕັ້ງຣາກຖານພັກຕ້ອງປຸກລະດົມ ແລະ ຈັດຕັ້ງປະຊາຊົນເຂົ້າຮ່ວມການກໍ່ສ້າງພັກຢ່າງເປັນປະຈຳຄື: ປະກອບຄຳເຫັນຕໍ່ການສ້າງບັນດາມະຕິຂອງພັກ, ຕິດຕາມກວດກາ, ຕຳນິຕິຊົມພະນັກງານ, ສະມາຊິກພັກ; ສະເໜີບັນດາຜູ້ທີ່ດີເດັ່ນເຝື່ອເອົາເຂົ້າພັກ, ເລືອກຕັ້ງເຂົ້າຄະນະພັກ ແລະ ຄະນະປົກຄອງຂັ້ນຕ່າງໆ; ຊ່ວຍເຫລືອການຈັດຕັ້ງພັກປະຕິບັດວຽກງານກວດກາໄດ້ດີ, ຄົ້ນຫາ ແລະ ຕໍ່ສູ້ຕ້ານບັນດາການກະທຳສໍ້ລາດບັງຫລວງ, ຄ້າເຖື່ອນ ແລະ ບັນດາໄພຮ້າຍອື່ນໆ...

ປຽນແປງໃໝ່ວິທີແບ່ງງານ, ສ້າງເງື່ອນໄຂໃຫ້ສະມາຊິກພັກທຸກຄົນຕິດແໜ້ນກັບໜ້າທີ່ຕົວຈິງ. ສຳລັບບັນດາສະຫາຍເຖົ້າແກ່ເຈັບໄຂ, ພະນັກງານອອກບຳນານຕ້ອງໄດ້ຮັບການເອົາໃຈໃສ່ຊ່ວຍເຫລືອຮັບປະກັນຊີວິດການເປັນຢູ ແລະສ້າງເງື່ອນໄຂໃຫ້ບັນດາສະຫາຍເຫລົ່ານັ້ນສືບຕໍ່ເສີມຂະຫຍາຍຄວາມຮູ້ຄວາມສາມາດ ແລະ ບົດຮຽນປະກອບໃຫ້ວຽກງານສ່ວນລວມ.

ຍູ້ແຮງວຽກງານຂະຫຍາຍພັກໂດຍຮັບປະກັນມາດຕະຖານ ແລະ ຄຸນນະພາບ. ບຳລຸງ, ສຶກສາອົບຮົມຊາວໜຸ່ມເຝື່ອສ້າງແຫລ່ງແກ່ການຂະຫຍາຍພັກ.

6 - ສືບຕໍ່ປຽນແປງໃໝ່ແບບແຜນວິທີນຳພາຂອງພັກ.

ພັກນຳພາລະບົບການເມືອງ; ວາງແນວທາງ, ນະໂຍບາຍກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດ; ກຳແໜ້ນອງການຈັດຕັ້ງ ແລະ ພະນັກງານເພື່ອຮັບປະກັນໃຫ້ການປະຕິບັດແນວທາງຂອງພັກ ມີໝາກຜົນ. ພັກນຳພາໂດຍຜ່ານການຈັດຕັ້ງຂອງພັກຫາກບໍ່ແມ່ນມີແຕ່ຜ່ານບຸກຄົນທີ່ເປັນສະມາຊິກພັກເທົ່ານັ້ນ; ນຳພາດ້ວຍບັນດາຂໍ້ຕົກລົງຂອງລວມໝູ່ ແລະ ດ້ວຍການຕິດຕາມ, ໃຫ້ຄຳເຫັນຊີ້ນຳ, ກວດກາການປະຕິບັດ, ສົ່ງເສີມດ້ານດີ, ດັດແປງບັນດາການຜິດເຂວ. ພັກນຳພາເພື່ອເສີມຂະຫຍາຍບົດບາດ ແລະ ຄວາມສັກສິດຂອງລັດຢ່າງແຂງແຮງ ໂດຍບໍ່ແມ່ນຄວບຄຸມບັນຊາອງການແທນລັດ. ພັກ ແລະ ສະມາຊິກພັກທຸກຄົນຕ້ອງເຄື່ອນໄຫວຢູ່ໃນຂອບເຂດລັດຖະທຳມະນູນ, ກົດໝາຍ ແລະ ມີຄວາມຮັບຜິດຊອບຕໍ່ບັນດາການເຄື່ອນໄຫວຂອງຕົນ.

ອົງຄະສະຫະພັກ, ຄະນະປະຕິບັດງານ ໃນບັນດາສຳນັກງານຂອງລັດ ແລະ ອົງການຈັດຕັ້ງມະຫາຊົນຮັບຜິດຊອບຕໍ່ໜ້າຄະນະພັກຂັ້ນເທິງ ກ່ຽວກັບການເຊື່ອມຊຶມແນວທາງ, ນະໂຍບາຍຂອງພັກຢູ່ໃນການເຄື່ອນໄຫວຂອງບັນດາສຳນັກງານອົງການຈັດຕັ້ງດັ່ງກ່າວ; ປະສານສົມທົບກັບຄະນະພັກຂອງກຸ່ມ ແລະ ຄະນະພັກທ້ອງຖິ່ນໃນວຽກງານກໍ່ສ້າງພັກຢູ່ໃນບັນດາພະແນກທີ່ຂຶ້ນກັບການຄຸ້ມຄອງຂອງຕົນ.

ຄະນະພັກ, ອົງຄະສະຫະພັກ, ຄະນະປະຕິບັດງານຂອງພັກ ເຮັດວຽກຕາມຫລັກການນຳພາເປັນໝູ່ຄະນະ, ບຸກຄົນຮັບຜິດຊອບ, ມີລະບອບຮ່ວມຊີວິດພັກຕາມກຳນົດເວລາດ້ວຍເນື້ອໃນຈະແຈ້ງ, ບໍ່ປົນເປກັບການຮ່ວມ

ຊີວິດຂອງອຳນາດການປົກຄອງ.

7 - ປຽນແປງໃຫມ່ວຽກງານກວດກາ ແລະ ລະບຽບວິໄນຂອງພັກ.

ວຽກງານກວດກາມີທີ່ຕັ້ງສຳຄັນທີ່ສຸດຢູ່ໃນທຸກການເຄື່ອນໄຫວນຳພາຂອງພັກ. ການກວດກາ ແລະ ຮັກສາລະບຽບວິໄນຂອງພັກແມ່ນໜ້າທີ່ຂອງທົ່ວພັກ.

ເນື້ອໃນກວດກາລວມມີການກວດກາການປະຕິບັດແນວທາງ, ນະໂຍບາຍ ແລະ ມະຕິຄຳສັ່ງຂອງພັກ, ປະຕິບັດຫລັກການຈັດຕັ້ງ ແລະ ຮ່ວມຊີວິດພັກ, ຮັກສາຄຸນສົມບັດສິນທຳປະຕິວັດຂອງສະມາຊິກພັກ. ໂດຍຜ່ານການກວດກາເພື່ອເສີມຂະຫຍາຍຈຸດດີ, ຄົ້ນພົບປັດໄຈໃຫມ່, ແກ້ໄຂຈຸດຂາດຕົກບົກພ່ອງ, ເພີ່ມເຕີມ, ຂະຫຍາຍຫລືດັດແປງແຜນນະໂຍບາຍ, ນະໂຍບາຍໃຫ້ສົມບູນ, ຈັດແກ້ຄວາມຜິດຕ່າງໆ.

ບັນດາການຈັດຕັ້ງພັກ, ເຊິ່ງກ່ອນອື່ນໝົດແມ່ນຄະນະພັກຂັ້ນຕ່າງໆ, ກົມການເມືອງ ແລະ ຄະນະປະຈຳຂອງຄະນະພັກຂັ້ນຕ່າງໆ ຕ້ອງດຳເນີນການກວດກາຕົນເອງ ແລະ ພ້ອມກັບບັນດາຄະນະທີ່ກ່ຽວຂ້ອງຈັດຕັ້ງການກວດກາເປັນປະຈຳ.

ວຽກງານກວດກາລະບຽບວິໄນຂອງພັກຕ້ອງດຳເນີນໄປຢ່າງມີໂຄງການ, ແຜນການ, ມີຈຸດສຸມຈຸດໃຈກາງ; ຕ້ອງປະສານສົມທົບຢ່າງແໜ້ນໜາກັບວຽກງານກວດກາຂອງລັດ, ກວດກາຂອງປະຊາ

ຊຶ່ນເພື່ອມີການສະຫລຸບຢ່າງຖືກຕ້ອງຊັດເຈນ ແລະ ມີແຜນນະໂຍບາຍ ແກ້ໄຂຕັດສິນຢ່າງຖືກຕ້ອງ, ໂດຍສະເພາະແມ່ນຕໍ່ບັນດາສະມາຊິກພັກ ທີ່ລະເມີດຕໍ່ກົດໝາຍ.

ປັບປຸງບູລະນະກົງຈັກກວດກາຂອງຂັ້ນຕ່າງໆ, ເອົາໃຈໃສ່ຢ່າງ ຈົດຈໍ່ຕໍ່ການກໍ່ສ້າງ, ບຳລຸງຖັນແຖວພະນັກງານກວດກາທາງດ້ານ ແນວທາງ, ທັດສະນະ, ກົດໝາຍ, ເສດຖະກິດ, ທາງດ້ານວິຊາການ ແລະ ແບບແຜນວິທີເຮັດວຽກ. ກໍ່ສ້າງຖັນແຖວພະນັກງານກວດກາມີ ຄຸນທາດການເມືອງທີ່ດີ, ມີສິນທຳ, ບໍລິສຸດຜຸດຜ່ອງ, ມີຄວາມຮູ້ຄວາມ ສາມາດນັບທັງຄວາມສາມາດທາງດ້ານວຽກງານກວດກາການປະຕິ ບັດແນວທາງ, ນະໂຍບາຍຂອງພັກ.

ເອົາໃຈໃສ່ເປັນພິເສດຕໍ່ວຽກງານປົກປັກຮັກສາການເມືອງພາຍໃນ ພັກເປັນຢ່າງດີ.

*

* *

ຮອບກອງປະຊຸມໃຫຍ່ທີ່ນັບຖື,

ຮອບບັນດາສະຫາຍ ແລະ ເພື່ອນມິດທັງຫລາຍ,

ກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກແມ່ນກອງປະຊຸມໃຫ່ຍສືບຕໍ່ ການປ່ຽນແປງໃໝ່ຕາມເສັ້ນທາງສັງຄົມນິຍົມ. ບັນດາທິດທາງ ແລະ

ໜ້າທີ່ໄດ້ສະເໜີຢູ່ຂ້າງເທິງນີ້ແມ່ນການຫັນເປັນລະອຽດ ແລະ ຂະ
ຫຍາຍແນວທາງປ່ຽນແປງໃໝ່ທີ່ກອງປະຊຸມໃຫຍ່ຄັ້ງທີ VI ແລະ ກອງ
ປະຊຸມໃຫຍ່ຄັ້ງທີ VII ຂອງພັກໄດ້ກຳນົດຢັ້ງຢືນແລ້ວນັ້ນໃຫ້ສູງຕື່ມອີກ.
ປະຕິບັດບັນດາທິດທາງ, ໜ້າທີ່ດັ່ງກ່າວ ຢ່າງມີໄຊແມ່ນວິທີການອັນ
ດີກວ່າໝູ່ເພື່ອກະກຽມພາຫະນະການດຳເນີນໃຫ້ຊາດເຮົາກ້າວເຂົ້າສູ່
ສະຕະວັດທີ XXI ຢ່າງໜັກແໜ້ນ, ຜ່ານຜ່າຄວາມຍາກຈົນ, ສ້າງ
ທ່ວງທ່າໃຫ້ບັນດາບາດກ້າວໃຫຍ່ກວ່າເກົ່າໃນພາລະກິດກໍ່ສ້າງ ແລະ
ປົກປັກຮັກສາປະເທດຊາດ.

ທົ່ວພັກ, ທົ່ວກອງທັບ, ທົ່ວປວງຊົນເຮົາສາມັກຄີເປັນຈິດໜຶ່ງໃຈ
ດຽວ, ເສີມຂະຫຍາຍມູນເຊື້ອອັນສະຫງ່າລາສີຂອງຊາດ, ສະຕິປັນຍາ
ແລະ ຄຸນທາດອັນກ້າແກ່ນຂອງຄົນຫວຽດນາມ, ເຊີດຊູມານະຈິດເອ
ກະລາດເປັນເຈົ້າຕົນເອງ, ເຜິ່ງຕົນເອງສ້າງຄວາມເຂັ້ມແຂງດ້ວຍຕົນ
ເອງ, ກຳແໜ້ນການລະໂອກາດ, ຍັ້ງໃຫ້ໄພອັນຕະລາຍລະຖອຍໄປ, ແກ້
ໄຂທຸກຄວາມຫຍຸ້ງຍາກທົ່ດສອບ, ຕັດສິນໃຈຜັນຂະຫຍາຍບັນດາມະຕິ
ຂອງກອງປະຊຸມໃຫຍ່ຄັ້ງທີ VIII ເຂົ້າສູ່ຊີວິດສັງຄົມ, ປະຕິບັດພາລະກິດ
ເຮັດໃຫ້ປະຊາຊົນຮັ່ງມີ, ປະເທດຊາດເຂັ້ມແຂງ, ສັງຄົມມີຄວາມຍຸດຕິ
ທຳ, ສີວິໄລ, ກ້າວຂຶ້ນສັງຄົມນິຍົມເທື່ອລະກ້າວຢ່າງມີໄຊ.

ທິດທາງ, ຫນ້າທີ່ແຜນການພັດທະນາ ເສດຖະກິດ-ສັງຄົມ 5 ປີ 1996-2000

(ລາຍງານຂອງຄະນະບໍລິຫານງານສູນກາງພັກສະ ໄຫມທີ VII ທີ່ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ VIII ຂອງພັກ)

ພາກທີຫນຶ່ງ

ຕີລາຄາສະພາບການປະຕິບັດ ແຜນການ 5 ປີ 1991-1995

ກ້າວເຂົ້າສູ່ທົດສະວັດທີ 90, ກິດຈະການປ່ຽນແປງໃຫມ່ໄດ້ບັນລຸຜົນ ງານຕ່າງໆ ໃນບາດກ້າວເບື້ອງຕົ້ນອັນສໍາຄັນທີ່ສຸດ; ເຖິງຢ່າງນັ້ນກໍ່ ຕາມຟື້ນຖານເສດຖະກິດເຕີບໂຕຊ້າ, ບໍ່ທັນເປັນປົກກະຕິ ແລະ ຍັງຂຸດ ໂຊມໃນຂົງເຂດຈໍານວນຫນຶ່ງ. ດ້ານອື່ນ, ສະພາບການໃນໂລກມີຄວາມ ຫັນປ່ຽນອັນສັບສົນຫລາຍປະການ. ປະເທດເຮົາຍັງຄົງຢູ່ໃນສະພາວະທີ ຍັງມີຂໍ້ຫຍຸ້ງຍາກ, ຄວາມທົດສອບອັນຄັບຂັນຫລາຍຢ່າງ.

ກອງປະຊຸມໃຫຍ່ຂອງພັກຄັ້ງທີ VII ໄດ້ວາງຈຸດໝາຍກວມ ລວມໃນ 5 ປີ 1991-1995 ກ່າວຄື: *ຜ່ານຜ່າຂໍ້ຫຍຸ້ງຍາກ ຄວາມ ທ້າທາຍ, ມີຄວາມສະຖຽຣະພາບ ແລະ ພັດທະນາເສດຖະກິດ-ສັງຄົມ, ເພີ່ມທະວີການເຮັດໃຫ້ການເມືອງເປັນປົກກະຕິ, ຍູ້ຄວາມຫຍໍ້ທໍ້ ແລະ ຄວາມບ່ຍຸດຕິທຳທາງດ້ານສັງຄົມໃຫ້ລະຖອຍໄປ, ພາປະເທດເຮົາພົ້ນ ອອກຈາກສະພາວະວິກິດການ ໂດຍພື້ນຖານ.*

ຜ່ານ 5 ປີ ປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VII, ດ້ວຍຄວາມ ພະຍາຍາມອັນຍິ່ງໃຫຍ່ຂອງພັກ, ລັດ ແລະ ປະຊາຊົນ, ຟື້ນຖານເສດ ຖະກິດຂອງປະເທດເຮົາຈຶ່ງບ່ພຽງແຕ່ຕັ້ງຢູ່ຢ່າງໝັ້ນຄົງຕໍ່ໜ້າບັນດາ ຄວາມທ້າທາຍອັນຄັບຂັນເທົ່ານັ້ນ ຫາກຍັງບັນລຸຜົນງານອັນໃຫຍ່ ໂຕ ຫລາຍຢ່າງ, ເຊິ່ງມີຄວາມໝາຍອັນສຳຄັນທີ່ສຸດ. ຢ່າງໃດກໍ່ດີ, ສະ ພາບການເສດຖະກິດ, ສັງຄົມກໍ່ຍັງມີດ້ານທີ່ອ່ອນໆ ຫລາຍອັນ.

I- ບັນດາດ້ານທີ່ເຮັດໄດ້

1- ຟື້ນຖານ ເສດຖະກິດໄດ້ຜ່ານຜ່າແກ້ໄຂສະພາວະຝືດ ເຄືອງ, ຂຸດໂຊມ; ບັນລຸລະດັບເຕີບໂຕດ້ວຍຂະໜາດສູງພໍ ສົມຄວນ, ຕໍ່ເນື່ອງກັນ ແລະ ຮອບດ້ານພໍສົມຄວນ; ປະຕິບັດ ບັນດາຕົວເລກຄາດໝາຍຕົ້ນຕໍຂອງແຜນການ 5 ປີ 1991-1995 ການລະດັບຄາດໝາຍເກືອບທັງໝົດ.

ຍອດປະລິມານການຜະລິດພາຍໃນປະເທດ(GDP) ເພີ່ມຂຶ້ນສະເລ່ຍ 8,2% ຕໍ່ປີ(ແຜນການ: 5,5-6,5%).

ອຸດສາຫະກຳເພີ່ມຂຶ້ນ ສະເລ່ຍ13,3% ຕໍ່ປີ(ແຜນການ: 7,5-8,5%) ບາງຂະແໜງການມີການເພີ່ມຂຶ້ນດ້ວຍຂະໜາດສູງ: ເມື່ອປຽບທຽບລະຫວ່າງປີ 1995 ກັບປີ 1990, ອຸດສາຫະກຳທາດເຜິ່ງ(ລວມທັງນ້ຳມັນ, ອາຍແກັດ) ເພີ່ມຂຶ້ນ 3,2 ເທົ່າ, ໄຟຟ້າເພີ່ມຂຶ້ນ 1,6 ເທົ່າ, ວັດສະດຸການກໍ່ສ້າງເພີ່ມຂຶ້ນ 2,7 ເທົ່າ, ການປຸງແຕ່ງອາຫານການກິນເພີ່ມຂຶ້ນ 1,9 ເທົ່າ...

ກະສິກຳເພີ່ມຂຶ້ນສະເລ່ຍ 4,5% ຕໍ່ປີ(ຄາດໝາຍທີ່ວາງອອກ 3,7-4,5%). ປະລິມານການຜະລິດທັນຍາຫານໃນ 5 ປີທີ່ຜ່ານມາໄດ້ເພີ່ມຂຶ້ນ 26% ເມື່ອປຽບກັບກ່ອນໜ້າ ນີ້5 ປີ, ອັນໄດ້ສ້າງເງື່ອນໄຂຟື້ນຖານເພື່ອເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນເປັນປົກກະຕິ, ຂະຫຍາຍຂະແໜງການອາຊີບ, ຫັນປ່ຽນໂຄງປະກອບກະສິກຳ ແລະ ເສດຖະກິດຊົນນະບົດ. ລ້ຽງ, ປູກ ແລະ ຫາສິນນ້ຳ, ຂອງທະເລກໍ່ເພີ່ມຂຶ້ນພໍສົມຄວນ; ກ້ອນເງິນຕາໃນການຂາອອກສິນນ້ຳ, ຂອງທະເລເມື່ອປີ 1995 ທົບປີ 1990 3 ເທົ່າ. ນາດຕາສ່ວນໜ້າດິນທີ່ມີປ່າດົງປົກຄຸມກໍ່ເລີ່ມມີການເພີ່ມຂຶ້ນໂດຍຍ້ອນການຊຸກຍູ້ຢ່າງແຂງແຮງສຳລັບການປູກຝັງ, ບົວລະບັດ ແລະ ປົກປັກຮັກສາປ່າດົງ, ຈຳກັດການຂຸດຄົ້ນເອົາໄມ້.

ໃນປີ 1995 ບັນດາຂະແໜງການບໍລິການກໍ່ເພີ່ມຂຶ້ນ 80% ເມື່ອປຽບກັບປີ 1990(ເພີ່ມຂຶ້ນສະເລ່ຍ 12% ຕໍ່ປີ). ການຄົມມະນາຄົມຂົນ

ສິ່ງມີຄວາມຫັນປ່ຽນອັນກ້າວໜ້າ, ການຂົນສົ່ງສິນຄ້າເພີ່ມຂຶ້ນ 62%; ໂທລະຄົມມະນາຄົມຂະຫຍາຍຕົວໂດຍໄວ, ລາຍໄດ້ການທຸລະກິດຂອງໄປ ສະນີ ແລະ ລາຍໄດ້ຂອງການທ່ອງທ່ຽວຕ່າງກໍ່ເພີ່ມຂຶ້ນ 10 ເທົ່າ; ຕະ ຫລາດສິນຄ້າພາຍໃນປະເທດຂະຫຍາຍຕົວ, ຕອບສະໜອງຄວາມ ຕ້ອງການຂອງສັງຄົມກ່ຽວກັບປະລິມານ, ຄຸນນະພາບ, ປະເພດນັບມື ນັບຍິ່ງຂຶ້ນ.

ຂົງເຂດການເງິນ, ເງິນຕາບັນລຸຄວາມກ້າວໜ້າພໍສົມຄວນ, ເຊິ່ງ ເດັ່ນຊັດກວ່າໝູ່ແມ່ນສະກັດກັ້ນໄພເງິນເຟີ້ຂະໜາດສູງໄວ້ໄດ້ແລ້ວ, ຍັບ ໄພເງິນເຟີ້ຖອຍໄປເປັນກ້າວໆ. ເລກຊີ້ລາຄາຂອງສິນຄ້າໃຊ້ສອຍ ແລະ ການບໍລິການຫລຸດຜ່ອນແຕ່ 67,4% ເມື່ອປີ 1991 ລົງ 17,5% ໃນປີ 1992; 5,2% ໃນປີ 1993; 14,4% ໃນປີ 1994 ແລະ 12,7% ໃນປີ 1995.

ເຮັດໃຫ້ລະບົບພາສີປະກົດເປັນຮູບເຊິ່ງນຳໃຊ້ເປັນເອກະພາບສຳລັບ ພາກສ່ວນເສດຖະກິດຕ່າງໆ, ຄ່ອຍຍົກມາດຕາສ່ວນລະດົມພາສີ ແລະ ຄ່າ ໃນ GDP ຂຶ້ນຕາມລຳດັບ, ສ້າງແຫລ່ງລາຍໄດ້ຂອງງົບປະມານ ແຫ່ງລັດຂຶ້ນ, ຮັບປະກັນລາຍຈ່າຍເປັນປະຈຳທັງໝົດ ແລະ ຄ່ອຍເພີ່ມ ຄ່ອຍທະວີສ່ວນທີ່ຈົ່ງໄວ້ໃຫ້ແກ່ການລົງທຶນພັດທະນາ. ມາດຕາສ່ວນງົບ ປະມານຖືກຂາດເຂີນໄດ້ຮັບການກົດໜ່ວງແລ້ວ; ຢຸດຕິການຈຳໜ່າຍ ເງິນເພື່ອທົດແທນລາຍຈ່າຍລຶ້ນລະດັບຄາດໝາຍ, ເຊິ່ງເອົາການກູ້ຢືມ. ເງິນຈາກປະຊາຊົນ, ຈາກຕ່າງປະເທດມາແທນທີ່.

ໃນຂົງເຂດເງິນຕາ, ສິນເຊື່ອ, ໄດ້ແບ່ງກຳນົດພາລະບົດບາດຄຸ້ມຄອງລັດຂອງທະນາຄານແຫ່ງລັດ ແລະ ພາລະບົດບາດທຸລະກິດຂອງທະນາຄານການຄ້າ. ການປະສົມກົມກຽວສຳລັບການຈໍລະຈອນເງິນຕາ, ເຮັດໃຫ້ຄຸນຄ່າເງິນຫວຽດນາມເປັນປົກກະຕິ, ຄຸ້ມຄອງການຊຳລະສະສາງດ້ວຍເງິນຕາຕ່າງປະເທດ, ກໍ່ສ້າງຕະຫລາດແລກປ່ຽນເງິນຕາຕ່າງປະເທດໃຫ້ຖືກກົດໝາຍ ແລະ ບັນດາການເຄື່ອນໄຫວສຳລັບສິນເຊື່ອ, ການຊຳລະສະສາງລ້ວນແຕ່ມີບາດກ້າວຄືບໜ້າຂຶ້ນ.

ຂະໜາດລົງທຶນພັດທະນາໃນທົ່ວສັງຄົມທະວີຂຶ້ນຜ່ສົມຄວນ. ພາຍໃນ 5 ປີ, ຄາດຄະເນທຶນສຳລັບການລົງທຶນພັດທະນາທົ່ວສັງຄົມໄລ່ຕາມເງິນ(USD)ປະມານ 18 ຕື້(ຕາມໜ້າພຽງຂອງລາຄາໃນ ປີ 1995), ເຊິ່ງໃນນັ້ນສ່ວນຂອງລັດກວມເອົາ 43%(ປະກອບດ້ວຍທັງການລົງທຶນໂດຍຜ່ານງົບປະມານ, ສິນເຊື່ອແຫ່ງລັດ ແລະ ວິສາຫະກິດແຫ່ງລັດລົງທຶນໂດຍຕົນເອງ), ການລົງທຶນຂອງປະຊາຊົນກວມເອົາກວ່າ 30%, ການລົງທຶນໂດຍກົງຂອງຕ່າງປະເທດກວມເອົາ 27%. ຕໍ່ບັນດາວິສາຫະກິດແຫ່ງລັດ, ເຊິ່ງດ້ວຍຄວາມແຮງຈຶ່ງໄດ້ຫັນຈາກຮູບການງົບປະມານຈ່າຍທີ່ມີລັກສະນະເກື້ອກຸນມາຫາຮູບການສິນເຊື່ອທຳການລົງທຶນ, ເປີດກວ້າງການສຳພັນທຸລະກິດຮ່ວມສຳພັນກັນ, ຢືມທຶນຈາກພາຍໃນ ແລະ ພາຍນອກປະເທດ... ໄດ້ໂຮມທຶນສຳລັບການລົງທຶນງົບປະມານແຫ່ງລັດໃຫ້ແກ່ໂຄງປະກອບເສດຖະກິດສັງຄົມຊັ້ນລ່າງໄດ້ຫລາຍກວ່າ. ທຶນຂອງປະຊາຊົນໃນການລົງທຶນພັດທະນາທັງຢູ່ຊົນນະບົດ ແລະ ຕົວ

ເມືອງ. ຄວາມໄວໃນການດູດດຶງການລົງທຶນໂດຍກົງຂອງປະເທດນອກ ພາຍໃນ 5 ປີ ເພີ່ມຂຶ້ນສະເລ່ຍ 50% ຕໍ່ປີ; ພາກສ່ວນທຶນທີ່ໄດ້ຮັບການ ປະຕິບັດເປັນຈິງບັນລຸຫນຶ່ງສ່ວນສາມໃນຍອດປະລິມານທຶນທີ່ຈົດທະ ບຽນຕາມຮ່າງຍັດຕິ.

ຜົນໄດ້ຕ່າງໆ ໃນການລົງທຶນພັດທະນາໄດ້ເຮັດໃຫ້ກຳລັງຄວາມສາ ມາດການຜະລິດກະສິກຳ, ການປ່າໄມ້, ການປະມົງ, ອຸດສາຫະກຳ ແລະ ການບໍລິການທະວີຂຶ້ນຕື່ມ, ເຮັດໃຫ້ກິດຈະການທີ່ສຳຄັນຈຳນວນຫນຶ່ງຂອງ ເສດຖະກິດມີການເຄື່ອນໄຫວ, ໂດຍສະເພາະຢ່າງຍິ່ງແມ່ນຄົມມະນາຄົມ, ຊົນລະປະທານ, ນ້ຳມັນອາຍແກັດ, ເຫລັກກ້າ, ຊີມັງ ແລະ ບັນດາຮາກ ຖານທ່ອງທ່ຽວບໍລິການ.

2 - ໂຄງປະກອບເສດຖະກິດຕາມຂະແຫນງການ ແລະ ຕາມເຂດແຄວ້ນໄດ້ເລີ່ມມີການຫັນປ່ຽນຕາມທິດຫັນເປັນອຸດ ສາຫະກຳ; ເຮັດໃຫ້ເສດຖະກິດມີຫລາຍພາກສ່ວນປະກົດຕົວ ເປັນຮູບ.

ໂຄງປະກອບຂະແຫນງການ:

ໃນຍອດປະລິມານການຜະລິດພາຍໃນປະເທດ (GDP), ກະສິກຳ, ການປ່າໄມ້, ການປະມົງເພີ່ມຂຶ້ນພໍສົມຄວນຕາມຕົວເລກເດັດຖານ, ແຕ່ ບໍລິມາດຫລຸດຜ່ອນແຕ່ 38,7% ໃນປີ 1990 ລົງ 29% ໃນປີ 1995ຊ້ຳ; ອຸດສາຫະກຳ ແລະ ກໍ່ສ້າງ ແຕ່ 22,6% ຫະວີຂຶ້ນ 29,1%, ບໍລິການແຕ່ 38,6% ເພີ່ມຂຶ້ນ 41,9%. ໂຄງປະກອບການຜະລິດຂອງ

ກະສິກຳ, ອຸດສາຫະກຳກໍ່ມີຄວາມປ່ຽນແປງຕາມທິດທີ່ມີຜົນສັກສິດດີກວ່າ; ບັນດາຂະແໜງການບໍລິການຂະຫຍາຍຕົວເປັນຫລາຍຮູບຫລາຍແບບ.

ໂຄງປະກອບເສດຖະກິດຕາມເຂດແຄວ້ນ:

ໂຄງປະກອບເສດຖະກິດຕາມເຂດແຄວ້ນພວມປະກົດຕົວເປັນຮູບເປັນຮ່າງໆຕາມແຜນກຳນົດເສດຖະກິດ-ສັງຄົມຂອງບັນດາທ້ອງຖິ່ນ, ບັນດາຕົວເມືອງ, ບັນດາເຂດດິນແດນເຊິ່ງເປັນພື້ເສດແມ່ນເຂດແຄວ້ນຕ່າງໆ ທີ່ເປັນຈຸດສຸມ. ບັນດາເຂດອຸດສາຫະກຳ, ເຂດຜະລິດເຄື່ອງຂາອອກພວມໄດ້ຮັບການກໍ່ສ້າງຂຶ້ນ. ອານາບໍລິເວນເສດຖະກິດຈຳນວນໜຶ່ງ, ເຊິ່ງເປັນພື້ເສດແມ່ນຢູ່ຕົວເມືອງໃຫຍ່ຈຳນວນໜຶ່ງ, ໂດຍເສີມຂະຫຍາຍທ່າແຮງຂອງຕົນຈຶ່ງໄດ້ຊຸກຍູ້ການລົງທຶນຢ່າງແຂງແຮງ, ບັນລຸຈັງຫວະເຕີບໂຕດ້ວຍຂະໜາດສູງ. ເຂດຊຸມນະບົດຈຳນວນໜຶ່ງໄດ້ມີບາດກ້າວຂະຫຍາຍຕົວໄວ ໂດຍຍ້ອນມີການຫັນປ່ຽນໂຄງປະກອບການຜະລິດຕາມທິດຊຸດຄົ້ນທ່າດີອັນປຽບທຽບ, ຕິດພັນກັບຕະຫລາດ.

ໂຄງປະກອບພາກສ່ວນເສດຖະກິດ:

ຂົງເຂດເສດຖະກິດແຫ່ງລັດ ກວມເອົາທີ່ຕັ້ງອັນສຳຄັນໃນການເສດຖະກິດ, ເຊິ່ງຮັບປະກັນບັນດາຂອດກຸນແຈ ແລະ ບັນດາຂົງເຂດອັນສຳຄັນຍິ່ງ, ໂດຍສະເພາະຢ່າງຍິ່ງແມ່ນໃນອຸດສາຫະກຳ, ຟື້ນຖານຊັ້ນລ່າງ ແລະ ການເງິນ, ສິນເຊື່ອ. ວິສາຫະກິດແຫ່ງລັດຫລາຍແຫ່ງໄດ້ໃກ້ຊິດ

ກັບຕະຫລາດ, ລົງທຶນລວງເລິກ, ປ່ຽນແປງໃໝ່ສຳລັບເຕັກໂນໂລຍີ, ທຳການເຄື່ອນໄຫວຢ່າງມີຜົນສັກສິດກວ່າເກົ່າ.

ບັນດາສະຫະກອນໃນບັນດາຂົງເຂດກະສິກຳ, ຫັດຖະກຳອຸດສາຫະກຳນ້ອຍ, ຄ້າຂາຍ, ສິນເຊື່ອ ໃນໄລຍະຫົວທີ່ທີ່ຫັນມາກົນໄກໃໝ່, ຍ້ອນມີສາຍເຫດຫລາຍປະການ, ຈຶ່ງຖືກຊຸດໂຊມໂດຍແຮງ. ມາຮອດປະຈຸບັນນີ້ກໍ່ມີຈຳນວນໜ້ອຍໄດ້ປ່ຽນແປງໃໝ່ໃນການຈັດຕັ້ງ, ຂະໜາດ ແລະ ແບບວິທີການເຄື່ອນໄຫວ, ຟື້ນຟູ ແລະ ຂະຫຍາຍການຜະລິດ, ທຸລະກິດ. ໄດ້ມີບັນດາຮູບການເສດຖະກິດສະຫະກອນແບບໃໝ່ປະກົດຂຶ້ນ, ເຖິງວ່າບໍ່ທັນແຜ່ຫລາຍກໍ່ຕາມ.

ເສດຖະກິດເອກະເທດ, ເຈົ້າຊັບນ້ອຍ ຂະຫຍາຍຕົວໂດຍໄວໃນການກະສິກຳ, ການປ່າໄມ້, ການປະມົງ, ຫັດຖະກຳອຸດສາຫະກຳນ້ອຍ ແລະ ການຄ້າ, ການບໍລິການ, ທັງນີ້ໄດ້ປະກອບສ່ວນອັນສຳຄັນໃນບັນດາຜົນງານທາງດ້ານເສດຖະກິດ-ສັງຄົມ.

ເສດຖະກິດທຶນນິຍົມເອກະຊົນ ພາຍໃນປະເທດກໍ່ຂະຫຍາຍຕົວໃນບາດກ້າວເບື້ອງຕົ້ນ, ເຊິ່ງສ່ວນຫລາຍແມ່ນສຸມໃສ່ຂົງເຂດການຄ້າ, ການບໍລິການ ແລະ ທຸລະກິດຊັບພາຍະກອນທີ່ຄົງຕົວ; ລົງທຶນໃສ່ການຜະລິດກໍ່ຍັງໜ້ອຍໆ ຢູ. ບັນດາວິສາຫະກິດທີ່ມີຂະໜາດກາງ ແລະ ນ້ອຍແມ່ນເປັນຕົ້ນຕໍ, ມີບາງວິສາຫະກິດຂະໜາດໃຫຍ່ຜ່ສົມຄວນ, ໃຊ້ແຮງງານຫລາຍຄົນ.

ເສດຖະກິດທຶນນິຍົມແຫ່ງລັດ ປະກອບດ້ວຍບັນດາຮູບການຮ່ວມສຳ

ພັນທຸລະກິດລະຫວ່າງເສດຖະກິດແຫ່ງລັດກັບທຶນນິຍົມເອກະຊົນພາຍໃນ ປະເທດ ແລະ ກັບທຶນນິຍົມຕ່າງປະເທດທັງນັ້ນພວມພັດທະນາ. ບັນດາ ວິສາຫະກິດທີ່ມີການລົງທຶນຈາກຕ່າງປະເທດນັ້ນໄດ້ເລີ່ມປະກອບສ່ວນ ໃນການເຕີບໂຕທາງດ້ານເສດຖະກິດ, ເພີ່ມກ້ອນເງິນຕາຂາອອກ, ສ້າງວຽກເຮັດງານທຳໂດຍກົງ ແລະ ໂດຍທາງອ້ອມຫລາຍວຽກ ງານ.

3 - ການພົວພັນທາງດ້ານເສດຖະກິດກັບຕ່າງປະເທດຂະຫຍາຍຕົວ ໃນຫລາຍດ້ານ; ຕະຫລາດຂາອອກຂາເຂົ້າໄດ້ຮັບການປັບປຸງ ແລະ ເປີດກວ້າງ; ແຫລ່ງລົງທຶນຂອງຕ່າງປະເທດທະວີຂຶ້ນໂດຍໄວ.

ພາຍໃນ 5 ປີ (1991-1995) ຍອດປະລິມານກ້ອນເງິນຕາຂາອອກ ບັນລຸກວ່າ 17 ຕື້ USD (ແຜນການ: 12-15 ຕື້ USD [1]), ຮັບປະກັນ ໃຫ້ການຂ້າເຂົ້າອຸປະກອນ ແລະ ພາຫະນະ ເຄື່ອງປະກອບ ແລະ ສິນ ຄ້າຊະນິດຕ່າງໆ ຕອບສະໜອງຄວາມຕ້ອງການຂອງການຜະລິດ ແລະ ຊີວິດການເປັນຢູ, ປະກອບສ່ວນດັດແປງໄມ້ຊີ ໃນການຊຳລະ ສະສາງທາງການຄ້າໃຫ້ດີຂຶ້ນ. ໃນໂຄງປະກອບສິນຄ້າຂາອອກໄດ້ມີ ຊະນິດສິນຄ້າປຸງແຕ່ງຈຳນວນໜຶ່ງທະວີຂຶ້ນຕື່ມ ແລະ ເພີ່ມຊະນິດສິນ ຄ້າທີ່ມີກ້ອນປະລິມານໃຫຍ່ໃນການຂາອອກຂຶ້ນຕື່ມເຊັ່ນນ້ຳມັນດິບ, ເຂົ້າ, ກາເຟ, ເຄື່ອງທະເລ, ເຄື່ອງນຸ່ງຂອງຖີ...

---

[1] ເງິນໂດລາຂອງສະຫະລັດອາເມລິກາ.

ຍອດປະລິມານການຄ້າຂອງເຂົ້າ21ກ່ວາຕື້ USD, ລວມທັງ ສ່ວນຂາເຂົ້າຂອງບັນດາວິສາຫະກິດ ທີ່ມີການລົງທຶນຈາກຕ່າງປະ ເທດ; ບໍລິມາດຂາເຂົ້າອຸປະກອນ ແລະ ພາຫະນະ, ເຄື່ອງປະກອບກໍ່ເພີ່ມ ຂຶ້ນ, ຕອບສະໜອງຄວາມຕ້ອງການຂອງການພັດທະນາ. ຄວາມພົວ ພັນການຄ້າໄດ້ຮັບການເປີດກວ້າງກັບ 100 ກວ່າປະເທດ ແລະ ໃກ້ ຊິດກັບຕະຫລາດໃໝ່ຫລາຍແຫ່ງ.

ລັດໄດ້ເປີດກວ້າງສິດຂາອອກ, ຂາເຂົ້າໃຫ້ແກ່ບັນດາວິສາຫະກິດ ທີ່ຂຶ້ນກັບພາກສ່ວນເສດຖະກິດຕ່າງໆ, ປະກາດໃຊ້ນະໂຍບາຍຈຳນວນ ຫນຶ່ງໃນການສົ່ງເສີມຂະຫຍາຍການຂາອອກ...

ທຶນເຊີ່ງປະເທດນອກໃຫ້ການລົງທຶນໂດຍກົງນັ້ນ(FDI) ເພີ່ມຂຶ້ນ ໂດຍໄວ, ເຊີ່ງຮອດທ້າຍປີ 1995 ນັ້ນ, ບັນດາຮ່າງຍັດຕິໄດ້ຮັບໃບອະ ນຸຍາດບັນລຸປະມານ 19 ກວ່າຕື້ USD ຂອງທຶນທີ່ຈົດທະບຽນ. ບໍລິມາດ ໃນການລົງທຶນໃສ່ອຸດສາຫະກຳກວມເອົາ 40% ຂອງຍອດປະລິມານ ທຶນຕາມຮ່າງຍັດຕິ(ຖ້າວ່າໄລ່ທັງນ້ຳມັນ, ອາຍແກັດແມ່ນກວມເອົາ ກວ່າ 60%), ໃນນັ້ນການລົງທຶນລວງເລີກກວມເອົາກວ່າ 60%. ອາ ນາບໍລິເວນລົງທຶນຖືກຈັດແບ່ງໃນບັນດາເຂດຖິ່ນແຄນກວ້າງກວ່າ. ຮູບ ການລົງທຶນຕົ້ນຕໍຄືບັນດາໂຮງງານຮ່ວມສຳພັນທຸລະກິດກວມເອົາກວ່າ 65%ຂອງຍອດປະລິມານທຶນ; ໂຮງງານທີ່ມີ 100% ທຶນຂອງຕ່າງປະ ເທດແມ່ນກວມເອົາເກືອບ 17%. ລັດໄດ້ເພີ່ມເຕີມ ແລະ ບູລະນະຂອບ ເຂດນິຕິທຳໃຫ້ບໍລິບູນ ແກ່ການລົງທຶນຈາກຕ່າງປະເທດ.

ສາຍພົວພັນຮ່ວມມືພັດທະນາໄດ້ຮັບການຟື້ນຟູຂຶ້ນ, ລຸລ່ວງ ແລະ ເປີດກວ້າງອອກກັບຫລາຍປະເທດ ແລະ ບັນດາອົງການການເງິນສາ ກົນ. ກົນໄກດູດດຶງແຫລ່ງຊ່ວຍເຫລືອທາງການເງິນຂະຫຍາຍຕົວຕາມ ຮູບການສອງຝ່າຍ ແລະ ຫລາຍຝ່າຍໄດ້ຮັບການສ້າງຕັ້ງຂຶ້ນ. ແຫລ່ງ ຊ່ວຍເຫລືອທາງການເງິນຂະຫຍາຍຕົວເປັນທາງການ(ODA) ກໍ່ ຄ່ອຍເພີ່ມຄ່ອຍທະວີຂຶ້ນໃນຊຸມປີມໍ່ໆນີ້ ແລະ ຖືກສຸມໃສ່ການກໍ່ສ້າງໂຄງ ປະກອບຊັ້ນລ່າງເສດຖະກິດ, ສັງຄົມເປັນຕົ້ນຕໍ.

4 - ວິທະຍາສາດ ແລະ ເຕັກໂນໂລຢີມີບາດກ້າວຂະຫຍາຍ ຕົວໃຫມ່.

ໄດ້ສຸມໃສ່ການຄົ້ນຄວ້າບັນດາບັນຫາທິດສະດີ ແລະ ພຶດຕິກຳໃນພາ ລະກິດປ່ຽນແປງໃຫມ່ ແລະ ພັດທະນາຂອງປະເທດເຮົາ, ຮັບໃຊ້ໃຫ້ແກ່ ການກໍ່ສ້າງແນວທາງ, ນະໂຍບາຍຂອງພັກ ແລະ ລັດ. ກ່ຽວກັບວິທະ ຍາສາດທຳມະຊາດ ແລະ ເຕັກໂນໂລຢີ, ໄດ້ເອົາໃຈໃສ່ຢ່າງຈົດຈໍ່ກວ່າ ອີກເຖິງການຄົ້ນຄວ້າຫມຸນໃຊ້, ເຊິ່ງສຸມໃສ່ບັນດາຂົງເຂດເຕັກໂນໂລ ຢີທີ່ບູລິມະສິດເຊັ່ນອຸປະກອນໃຫມ່, ເຕັກໂນໂລຢີຊີວະສາດ, ເຕັກໂນໂລ ຢີສີ່ສາມ... ການຫມຸນໃຊ້ບັນດາຜົນໄດ້ໃນການຄົ້ນຄວ້າ ແລະ ມອບສົ່ງ ເຕັກໂນໂລຢີອັນກ້າວຫນ້າໃສ່ການຜະລິດ, ທຸລະກິດໄດ້ຮັບການຊຸກຍູ້ ຢ່າງແຂງແຮງກວ່າແຕ່ກ່ອນ.

5 - ຂົງເຂດວັດທະນະທຳ-ສັງຄົມມີຄວາມຫັນປ່ຽນຢ່າງ

ຕ້ອງໜ້າ,ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປົ່ວ ແປງໃຫ້ດີຂຶ້ນກ້າວໜຶ່ງ.

ວຽກງານສຶກສາ ແລະ ກໍ່ສ້າງ ມີບາດກ້າວຂະຫຍາຍຕົວໃໝ່, ໃນ ພາຍຫລັງຊຸມປີທີ່ຖືກຫຼຸດຜ່ອນ. ມາດຕະສ່ວນຄົນຮູ້ໜັງສືໃນໝູ່ປະຊາ ຊົນໄດ້ຍົກຂຶ້ນບັນລຸລະດັບ 90%; ມາດຕາສ່ວນເດັກນ້ອຍໃນໄວອາຍຸ ສຶກສາ ຊັ້ນປະຖົມຕາມແບບບັງຄັບ ແລະ ຈຳນວນນັກຮຽນສາມັນສຶກ ສາຊັ້ນຕ່າງໆ ລ້ວນແຕ່ທະວີຂຶ້ນຕື່ມ; ມາດຕາສ່ວນຄ້າງຫ້ອງເກົ່າ, ປະ ຮ່ຳປະຮຽນກໍ່ຫລຸດຜ່ອນລົງ. ຕາມ່າງໂຮງຮຽນຂັ້ນສາມັນຖືກເປີດ ກວ້າງຮອດຕາແສງ, ຄຸ້ມເມືອງຢ່າງທົ່ວເຖິງ. ພື້ນຖານວັດຖຸໄດ້ຮັບ ການປົ່ວແປງໃຫ້ດີຂຶ້ນ. ບັນດາແຂວງ ແລະ ເມືອງໃນເຂດພູດອຍຫລາຍ ແຫ່ງມີໂຮງຮຽນກິນນອນໃຫ້ແກ່ລູກຫລານຂອງຊົນຊາດ. ຮູບການ ໂຮງຮຽນຊຳນານໂດຍສະເພາະ, ຫ້ອງເລືອກເຟັ້ນຂະຫຍາຍຕົວຢູ ຫ້ອງຖິ່ນຫລາຍແຫ່ງ. ໂຮງຮຽນເຄື່ອງຫລວງ ແລະ ໂດຍແມ່ນປະຊາຊົນ ເປັນຜູ້ສ້າງຂຶ້ນເອງກໍ່ກຳເນີດເກີດຂຶ້ນ; ເຄື່ອນໄຫວຢ່າງມີຜົນສັກສິດ.

ບັນດາໂຮງຮຽນ, ຫ້ອງຮຽນສອນວິຊາອາຊີບກໍ່ຂະຫຍາຍຕົວພາຍ ໃຕ້ຫລາຍຮູບການ. ລະບົບສຶກສາວິທະຍາໄລ, ຊີວະສຶກສາຊັ້ນກາງຖືກ ເປີດກວ້າງອອກກວ່າແຕ່ກ່ອນລວມທັງຂະໜາດ, ວິຊາອາຊີບ ແລະ ຮູບປະເພດຂອງການກໍ່ສ້າງ. ບັນດາໂຮງຮຽນມະຫາວິທະຍາໄລ ແລະ ວິທະຍາໄລພວມໄດ້ຮັບການຈັດວາງສັບຊ້ອນຄືນໃໝ່; ບັນດາສູນມະ ຫາວິທະຍາໄລແຫ່ງຊາດຢູ່ຮ່າໂນ້ຍ, ນະຄອນໂຮ່ຈິມິນ ແລະ ສູນມະຫາ

ວິທະຍາໄລສາມແຫ່ງຂອງເຂດແຄວ້ນພວມປະກົດຕົວເປັນຮູບ.

ວຽກງານສື່ມວນຊົນ, ບັນດາການເຄື່ອນໄຫວວັດທະນະທຳ, ສິລະປະກຳ ຂະຫຍາຍຕົວຢ່າງອຸດົມສົມບູນລວມທັງຮູບປະເພດ, ຮູບການ ແລະ ເນື້ອໃນຕອບສະໜອງຄວາມຕ້ອງການໃນການສື່ສານ ແລະການຊົມໃຊ້ວັດທະນະທຳຂອງບັນດາຊັ້ນຄົນໃນໝູ່ປະຊາຊົນກໍ່ດີ ຂຶ້ນກວ່າເກົ່າ, ອັນປະກອບສ່ວນຢ່າງຕັ້ງໜ້າໃນວຽກງານໂຄສະນາ, ສຶກສາອົບຮົມ, ເຊິ່ງເປັນພິເສດແມ່ນສຶກສາອົບຮົມມູນເຊື້ອປະຕິວັດ, ຕໍ່ສູ້ຕ້ານບັນດາປະກົດການອັນຫຍໍ້ທໍ້, ຍູ້ຜົນສະທ້ອນຂອງວັດທະນະທຳທີ່ເປັນພິດຮ້າຍໃຫ້ລະຖອຍໄປ. ບໍລິເວນທີ່ໄດ້ຮັບການປົກຫຸ້ມໄປດ້ວຍຄື້ນຝອງຂອງວິທະຍຸກະຈາຍສຽງ, ໂທລະພາບຖືກເປີດກວ້າງ, ຄຸນນະພາບໃນການອັດ ແລະ ກະຈາຍກໍ່ດີກວ່າເກົ່າ.

ໃນຂົງເຂດ*ຮັກສາສຸຂະພາບ*, ໄດ້ມີຄວາມພະຍາຍາມ ແລະ ຄວາມກ້າວໜ້າຕ່າງໆ ທາງດ້ານອະນາໄມກັນພະຍາດ, ປະຕິບັດຢ່າງມີຜົນດີ ສຳລັບບັນດາໂຄງການດູແລເບິ່ງແຍງ ແລະ ປົກປ້ອງເດັກນ້ອຍ, ໂຄງການກັນ ແລະ ຕ້ານໄຂ້ໜາວ, ຄໍເຮີມ, ກັນ ແລະ ຕ້ານອາການຂາດທາດບຳລຸງ; ເພີ່ມບໍລິມາດຜົນລະເມືອງທີ່ໄດ້ຮັບການໃຊ້ນ້ຳສະອາດ, ໄດ້ສະໜອງການບໍລິການສາທາລະນະສຸກມະຫິດຕາແສງ, ຄຸ້ມເມືອງ. ມີສູນສາທາລະນະສຸກຈຳນວນໜຶ່ງໄດ້ຮັບການລົງທຶນແກ່ການຍົກລະດັບຄຸນນະພາບ ແລະ ປະກອບເຄື່ອງໃຊ້ຄືນໃໝ່. ລະບອບປະກັນໄພດ້ານສາທາລະນະສຸກໄດ້ຮັບການເປີດກວ້າງ. ກິລາກາຍະກຳມີບາດກ້າວ

ຂະຫຍາຍຕົວ. ວຽກງານປ້ອງກັນສິ່ງແວດລ້ອມຊີວະພາບຖືກຜັນຂະ ຫຍາຍ.

ແກ້ໄຂວຽກເຮັດງານທຳ ປີລະ 1 ເຖິງ 1,2 ລ້ານຄົນ.

. *ວຽກງານພົນລະເມືອງເຮັດໃຫ້ເປັນແຜນການຂອງຄອບຄົວ* ຂະ ຫຍາຍຕົວຢ່າງເລິກເຊິ່ງກວ້າງຂວາງ, ອັນໄດ້ບັນລຸຜົນຢ່າງແຈ້ງຊັດ. ນາດຕາສ່ວນໃນການອອກລູກໃນຊຸມປີທີ່ຜ່ານມາຫລຸດຜ່ອນລົງປີລະ ເກືອບ 1 ສ່ວນພັນ.

ບັນດາການຍົກຍ້ວງໃຫ້ລົບລ້າງຄວາມອຶດຢາກ, ຫລຸດຜ່ອນ ຄວາມທຸກຍາກ, ຕອບບຸນແທນຄຸນ, ບັນດາການເຄື່ອນໄຫວສັງຄົມສົງ ເຄາະ, ດູແລເບິ່ງແຍງເດັກນ້ອຍທີ່ມີສະພາບແວດລ້ອມຫຍຸ້ງຍາກເປັນ ພິເສດ ນັບມື້ນັບໄດ້ຮັບການສະໜັບສະໜູນຈາກມວນຊົນ.

ລາຍໄດ້ ແລະ ຊີວິດການ ເປັນຢູ່ ຂອງປະຊາຊົນບັນດາຊັ້ນຄົນຢູ່ໃນ ເຂດແຄວ້ນຕ່າງໆ ຕ່າງກໍ່ຖືກປ່ຽນແປງໃຫ້ດີຂຶ້ນດ້ວຍລະດັບອັນຕ່າງກັນ; ຈຳນວນຄອບຄົວທຸກຫລຸດຜ່ອນລົງ. ຫ້ອງຖິ່ນຫລາຍແຫ່ງໄດ້ຊຳລະໄຜ ອຶດຢາກ.

6 - ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບຖືກຮັກ ສາຢ່າງໜັກແໜ້ນ.

ການຈັດວາງສັບຊ້ອນຍຸດທະສາດປ້ອງກັນຊາດໃຫ້ຖືກຕ້ອງ, ປັບ ປຸງທ່າສະໜາມສູ້ຮົບປ້ອງກັນຊາດທົ່ວປວງຊົນໄດ້ຮັບການປະຕິບັດ

ຢ່າງມີຜົນດີ. ບັນດາເຂດປ້ອງກັນຮັກສາຖືກເພີ່ມທະວີກ້າວໜຶ່ງ. ການປະສານສົມທົບລະຫວ່າງເສດຖະກິດ ແລະ ປ້ອງກັນຊາດຖືກດຳເນີນໄປພາຍໃຕ້ຫລາຍຮູບການ ແລະ ນຳເອົາຜົນມາໄດ້ໃນບາດກ້າວເບື້ອງຕົ້ນ.

ການປ້ອງກັນຄວາມສະຫງົບແຫ່ງຊາດຖືກຮັກສາຢ່າງໜັກແໜ້ນ, ທ່າສະໜາມຮົບປ້ອງກັນຄວາມສະຫງົບປະຊາຊົນໄດ້ຮັບການປັບປຸງ. ການຈັດ ແລະ ແກ້ໄຂຢ່າງເດັດດ່ຽວຕໍ່ບັນດາຄະດີລ່ວງລະເມີດຕໍ່ກົດໝາຍໃນຂົງເຂດ ຈຳນວນໜຶ່ງໄດ້ສ້າງຄວາມສາມາດໃນການສ້າງສາ ແລະ ປັບປຸງຄວາມເປັນລະບຽບຮຽບຮ້ອຍ, ຄວາມປອດໄພທາງສັງຄົມ, ກໍ່ສ້າງແບບດຳລົງຊີວິດ ແລະ ເຮັດວຽກຕາມກົດໝາຍ.

II - ບັນດາດ້ານອ່ອນໆ

1- ຄຸນນະພາບ ແລະ ຜົນສັກສິດຂອງການເສດຖະກິດຍັງຕ່ຳ, ໄພອັນຕະລາຍຖອຍຫລັງຍັງໃຫຍ່.

ກຳລັງການຜະລິດຍັງນ້ອຍໆ, ພື້ນຖານວັດຖຸ, ໂດຍສະເພາະຢ່າງຍິ່ງແມ່ນໂຄງປະກອບໂຄງລ່າງຍັງຫລ້າຫລັງ ລະດັບວິທະຍາສາດແລະເຕັກໂນໂລຍີຫັນປ່ຽນຊ້າ; ແຫລ່ງກຳລັງຄົນທີ່ມີຄວາມຮູ້, ສີມືດີ, ກຳລັງຄວາມສາມາດໃນການທຸລະກິດຍັງໜ້ອຍ, ຊ້ຳພັດການໃຊ້ເຂົ້າເຈົ້າກໍ່ບໍ່ທັນດີ; ສະມັດຖະພາບຂອງແຮງງານສັງຄົມຫະວີຂຶ້ນຊ້າໆ. ຄຸນນະ

ພາບຂອງຜະລິດຕະພັນ ແລະ ຄຸນນະພາບຂອງກິດຈະການເວົ້າລວມ ກໍ່ຍັງຕ່ຳ. ສິນຄ້າຫລາຍປະເພດມີຄວາມອ່ອນໃນການແຂ່ງຂັນກັບສິນ ຄ້າຂອງຕ່າງປະເທດ.

ມາດຕາສ່ວນປະຢັດ ແລະ ລົງທຶນຍັງຕ່ຳ, ການເສດຖະກິດຂາດທຶນ ທີ່ສຸດ. ການລົງທຶນຂອງງົບປະມານແຫ່ງລັດຍັງກະຈັດກະຈາຍ, ຖືກຟຸມ ເຟືອຍ, ເສຍຫາຍ, ປະສິດທິຜົນຕ່ຳ. ການລົງທຶນຂອງປະຊາຊົນໃສ່ການ ຜະລິດຍັງໜ້ອຍ. ແຫລ່ງຊ່ວຍເຫລືອດ້ານການເງິນໃຫ້ແກ່ການພັດທະ ນາ ແລະ ການລົງທຶນຂອງພາຍນອກປະຕິບັດຊ້າ.

GDP ສະເລ່ຍຕາມຫົວຄົນຍັງຕ່ຳທີ່ສຸດເມື່ອປຽບກັບປະເທດຈຳ ນວນໜຶ່ງທີ່ຢູ່ອ້ອມຂ້າງ.

2 - ການກໍ່ສ້າງຄວາມພົວພັນແຫ່ງການຜະລິດໃໝ່ ມີ ສ່ວນທັງອຶກອັກ, ທັງປະປ່ອຍໃຫ້ຫລົ້ມເຫລວ.

ເຂດເສດຖະກິດຂອງລັດຍັງບໍ່ທັນຮັບປະກັນຜົນສັກສິດ ແລະ ຍັງບໍ່ທັນ ປະຕິບັດບົດບາດເປັນເຈົ້າການຳພາເປັນຢ່າງດີ. ບັນດາພາກສ່ວນເສດຖະ ກິດອື່ນໆທັງຍັງບໍ່ທັນເສີມຂະຫຍາຍບັນດາຄວາມສາມາດທີ່ບົ່ມຊ້ອນຢ່າງ ແຂງແຮງ, ທັງຍັງບໍ່ທັນຮັບປະກັນການເຄື່ອນໄຫວທີ່ມີລະບຽບ, ລະບຽບ ແບບແຜນຕາມກົດໝາຍ.

3 - ການເງິນ, ເງິນຕາບໍ່ທັນເປັນປົກກະຕິ ແລະ ຂາດ ຄວາມສົດໃສ.

ງົບປະມານແຫ່ງລັດຕົກເຄັ່ງຕຶງຢ່າງເປັນປະຈຳ, ລາຍຈ່າຍລົ້ນ ຫລາຍກວ່າລາຍໄດ້. ລະບົບພາສີສັບສົນ, ສະຫຼັບສັບຊ້ອນກັນ, ບໍ່ທັນສົມ ເຫດສົມຜົນ, ທັງມີຫນ້ອຍໃນການສົ່ງເສີມການຜະລິດ, ທັງມີຊ່ອງວ່າງ ຈະຖືກສວຍໃຊ້ໄດ້ງ່າຍ. ການແບ່ງຂັ້ນທາງງົບປະມານຍັງບໍ່ທັນສົມ ເຫດສົມຜົນ, ທັງກະຈັດກະຈາຍທັງລວມສູນການລະດັບຊ້ຳ, ຂາດ ຄວາມສະຖຽນລະພາບ, ຄວາມຫຍໍ້ທໍ້ເກີດຂຶ້ນຫລາຍປະການ, ຈຳກັດ ລັກສະນະຂົງຂັງມັງມໍ, ປະດິດສ້າງ. ຊັບສົມບັດແຫ່ງຊາດ, ການເງິນ ຂອງຫລວງ ແລະ ການເງິນວິສາຫະກິດແຫ່ງລັດຍັງບໍ່ທັນໄດ້ຮັບການ ຄຸ້ມຄອງຢ່າງແຫນ້ນຫນາ, ຍັງເຜີຕົວສະນັ້ນຈຶ່ງເກີດມີການເສຍຫາຍ, ຟຸມເຟືອຍຫລາຍປະການ.

ຕະຫລາດເງິນຕາ, ຕະຫລາດທຶນຂະຫຍາຍຕົວຊ້າ. ອັດຕາກຳໄລ ຂອງສິນເຊື່ອຍັງບໍ່ທັນສອດຄ່ອງກັບກົນໄກຕະຫລາດ ແລະ ຈຳກັດການ ລົງທຶນຜັດທະນາ. ບັນດາເຄື່ອງມື ໃຫ້ການດັດສົມການຈ່ລະຈອນເງິນ ຕາຍັງບໍ່ທັນໄດ້ຮັບການໃຊ້ຢ່າງຄົບຊຸດ, ມີປະສິດທິຜົນ. ມາດຕາສ່ວນ ໃຊ້ເງິນສົດຍັງຫລາຍທີ່ສຸດ, ການຊຳລະໂດຍບໍ່ຜ່ານທະນາຄານຍັງແຜ່ ຫລາຍ. ເງິນຕາຕ່າງປະເທດຍັງໄດ້ໃຊ້ເປັນຈຳນວນຫລາຍໃນການຈ່ ລະຈອນພາຍໃນປະເທດ. ຫນ່ແຫນງເງິນເຟີ້ສູງຊ້ຳຄືນເປັນເທື່ອໃຫມ່ບໍ່ ທັນຖືກຄັດອອກຢ່າງສິ້ນເຊີງ.

ວຽກງານຄຸ້ມຄອງການຂາອອກຂາເຂົ້າ, ຄຸ້ມຄອງບັນດາຮ່າງຍັດ ຕິໃນການລົງທຶນຂອງຕ່າງປະເທດທັງຂາດການສົ່ງເສີມໃຫ້ຖືກທິດ,

ທັງມີສ່ວນຫລົ້ມເຫລວ.

4 - ບັນດາດ້ານວັດທະນະທຳ-ສັງຄົມຍັງມີຫລາຍບັນຫາ ທີ່ຈຳຕ້ອງທຳການແກ້ໄຂ.

ຄຸນນະພາບການສຶກສາ, ການກໍ່ສ້າງບໍ່ທັນດີ; ວຽກງານສຶກສາຢູ ບັນດາເຂດສອກຫລີກ, ເຂດຫ່າງໄກ, ເຂດພູດອຍຍັງມີຂໍ້ຫຍຸ້ງ ຍາກຫລາຍທີ່ສຸດ. ລະບົບກວດ ແລະ ປ້ອງກັນ ແລະ ປ້ອງກັນພະຍາດສ່ວນຫລາຍຖືກລົ້ງ ຂັ້ນທັງທາງຝຶ້ນຖານວັດຖຸກໍ່ຄືຄຸນນະພາບ, ຈິດໃຈ ແລະ ທ່າທີຮັບໃຊ້. ລະດັບເຮັດໃຫ້ສິ່ງແວດລ້ອມ, ຊີວະພາບເປື້ອນເປິ ແລະ ຖືກທຳລາຍເປັນ ຫນ້າຄິດລະແວງ. ພະຍາດໂລກ, ພະຍາດສັງຄົມຈຳນວນຫນຶ່ງຍັງຢູ່, ເຂນບາງບໍລິເວນ ແລະ ມີຄວາມອັນຕະລາຍໃນການຂະຫຍາຍຕົວ; ຈຳ ນວນຄົນຕິດ HIV ສືບຕໍ່ທະວີຂຶ້ນ. ບັນດາການເຄື່ອນໄຫວວັດທະນະທຳ ທີ່ບໍ່ສົດໃສ ແລະ ໄພສັງຄົມຕ່າງໆ ຍັງຄົງຂະຫຍາຍຕົວ. ຈັງຫວະຂະ ຫຍາຍຜົນລະເມືອງຍັງສູງ. ຈຳນວນຄົນທີ່ບໍ່ທັນມີວຽກເຮັດງານທຳຢູ ເຂດຕົວເມືອງຍັງກວມເອົາປະມານ 7%, ໃຊ້ເວລາໃນການອອກແຮງ ງານຢູ່ຊົນນະບົດຍັງຢູ່ລະດັບຕ່ຳ.

ມາດຕາສ່ວນຄົນທຸກ, ຄອບຄົວທຸກ, ຕາແສງທຸກຍັງສູງ. ການຜັນ ແຍກ ລະຫວ່າງຂົ້ວທຸກກັບຂົ້ວຮັ່ງມີເກີດຂຶ້ນບໍ່ເປັນປົກກະຕິ. ເລກຊີ້ລາ ຄາໃຊ້ສອຍເພີ່ມຂຶ້ນກວ່າ 10% ຕໍ່ປີອັນກໍ່ຄວາມຫຍຸ້ງຍາກຍິ່ງຂຶ້ນໃຫ້ ແກ່ຄົນທີ່ມີລາຍໄດ້ນ້ອຍ. ສະພາວະສໍ້ລາດບັງຫລວງ, ຄ້າເຖື່ອນ, ທຳ ມາຫາກິນແບບຜິດກົດໝາຍຍັງສະກັດກັ້ນບໍ່ທັນໄດ້, ມີບ່ອນຄັບຂັນ

ກວ່າ. ລະບຽບແບບແຜນ, ລະບຽບວິໄນ ແລະ ລະບຽບແຫ່ງສັງຄົມ ຍັງມີຫລາຍບ່ອນບໍ່ທັນດີ.

*

* *

ເບິ່ງລວມແລ້ວ, ໜ້າທີ່ທີ່ເຮັດໃຫ້ເສດຖະກິດ-ສັງຄົມມີຄວາມສະຖຽລະພາບ ແລະ ມີຄວາມພັດທະນາເຊິ່ງກອງປະຊຸມໃຫຍ່ຄັ້ງທີ VII ວາງອອກມາແກ່ 5 ປີ 1991-1995 ໄດ້ຮັບການປະຕິບັດຢ່າງມີໄຊ. ບັນດາຈຸດໝາຍຕົ້ນຕໍຂອງແຜນການ 5 ປີ ໄດ້ຮັບການປະຕິບັດສົມລະດັບຄາດໝາຍ. ປະເທດຊາດໄດ້ຫລຸດພົ້ນອອກຈາກວິກິດການເສດຖະກິດ-ສັງຄົມ, ແຕ່ຍັງມີດ້ານຈຳນວນໜຶ່ງບໍ່ທັນໜັກແໜ້ນ. ອັນໄດ້ສ້າງປະຖົມປັດໄຈຕ່າງໆທີ່ຈຳເປັນເພື່ອຫັນມາສູ່ໄລຍະຂະຫຍາຍຕົວໃໝ່, ຊຸກຍູ້ການຫັນປະເທດຊາດ ເປັນອຸດສາຫະກຳ, ເປັນທັນສະໄໝ ຢ່າງແຂງແຮງ. ເຖິງຢ່າງໃດກໍ່ດີ, ເສດຖະກິດ ແລະ ເຕັກໂນໂລຢີຂອງ ປະເທດເຮົາຍັງຜອມຢູ່ລະດັບດ້ອຍພັດທະນາ. ບັນດາດ້ານວັດທະນະທຳ, ສັງຄົມຍັງຄົງມີຫລາຍບັນຫາທີ່ຄັບຂັນຄົງຕົວຢູ່.

ຜົນງານຕ່າງໆ ໃນ 5 ປີທີ່ຜ່ານມາກໍ່ມີສ່ວນໂດຍຍ້ອນການລະດົມຜົນຂອງການລົງທຶນກໍ່ສ້າງພື້ນຖານວັດຖຸນັບຕັ້ງແຕ່ຊຸມປີກ່ອນໆ,

ແຕ່ປັດໄຈຕັດສິນຊີ້ຂາດແມ່ນແນວທາງ, ນະໂຍບາຍປ່ຽນແປງໃໝ່ ຂອງພັກໄດ້ສ້າງເປັນກຳລັງໜູນຊຸກຍູ້ວິສາຫະກິດເປັນໜື່ນໆ, ແຮງ ງານຢູ່ຊົນນະບົດ ແລະ ຕົວເມືອງຫລາຍສິບລ້ານຄົນເປັນເຈົ້າການຂຸດ ຄົ້ນບັນດາແຫລ່ງກຳລັງ, ຂະຫຍາຍການຜະລິດທຸລະກິດ. ດ້ານອື່ນ, ບັນ ດາຄວາມຊັກຊ້າ,ບັນດາຂໍ້ຂາດຕົກບົກພ່ອງໃນວິວັດທະນາການດຳ ເນີນການປ່ຽນແປງໃໝ່ກໍ່ເປັນສາຍເຫດຕົ້ນຕໍໃນການຄອບງຳຈຳກັດ ການພັດທະນາ.

ຕ້ອງເນັ້ນໜັກວ່າ, ຂະບວນວິວັດທະນາການປ່ຽນແປງໃໝ່ໄດ້ບັນ ລຸຜົນງານອັນໃຫຍ່ໂຕທາງດ້ານເສດຖະກິດ, ສັງຄົມ. ເຖິງຢ່າງໃດກໍ່ດີ, ໄລຍະທາງປ່ຽນແປງໃໝ່ຕໍ່ໄປຈະມີຂອບເຂດອັນກວ້າງເລິກກວ່າ, ມີຂໍ້ ຫຍຸ້ງຍາກກວ່າຕັ້ງຫລາຍຂໍ້, ຕ້ອງໃກ້ຊິດ ແລະ ແກ້ໄຂຫລາຍບັນຫາ ທີ່ສັບສົນຂອງເສດຖະກິດຕະຫລາດ ແລະ ການຮ່ວມຕົວເຂົ້າສາກົນ.

ພາກທີສອງ

ທິດທາງ, ຫນ້າທີ່, ຈຸດຫມາຍຕົ້ນຕໍ ຂອງແຜນການພັດທະນາເສດຖະກິດ-ສັງຄົມ 5 ປີ 1996-2000

I - ຫນ້າທີ່ ແລະ ຈຸດຫມາຍພັດທະນາ

1- ຫນ້າທີ່ ກອມລອມ.

ໄລຍະຕັ້ງແຕ່ປະຈຸບັນນີ້ມາຮອດປີ 2000 ແມ່ນຍາດກ້າວສໍາຄັນ ທີ່ສຸດຂອງໄລຍະຂະຫຍາຍຕົວໃຫມ່-ຍູ້ແຮງການຫັນປະເທດຊາດເປັນ ອຸດສາຫະກໍາ, ເປັນທັນສະໄຫມ. ຫນ້າທີ່ຂອງປະຊາຊົນເຮົາກ່າວຄືເຕົ້າ ໂຮມທຸກກໍາລັງ, ຍາດແຍ່ງກາລະໂອກາດ, ຜ່ານຜ່າຂໍ້ທົດລອງ, ຍູ້ແຮງ ກິດຈະການປ່ຽນແປງໃຫມ່ຢ່າງຮອບດ້ານ ແລະ ຄົບຊຸດ, ສືບຕໍ່ພັດທະ ນາຟື້ນຖານເສດຖະກິດທີ່ມີຫລາຍພາກສ່ວນໃຫ້ເຄື່ອນໄຫວຕາມກົນໄກ ຕະຫລາດ ໂດຍມີການຄຸ້ມຄອງຂອງລັດຕາມທໍານົດທິດສັງຄົມນິຍົມ, ສູ້ ຊົນໃຫ້ບັນລຸ ແລະ ບັນລຸສິ້ນກາຍຈຸດຫມາຍທີ່ໄດ້ວາງອອກມາໃນຍຸດທະ ສາດເຮັດໃຫ້ເສດຖະກິດ-ສັງຄົມຮອດປີ 2000 ມີຄວາມສະຖຽນລະ

ພາບ ແລະ ພັດທະນາ: ເສດຖະກິດເຕີບໂຕ ໂດຍໄວ, ຜົນສັກສິດສູງ ແລະ ໝັ້ນແກ່ນເຊິ່ງໄປຄຽງຄູ່ກັນກັບການແກ້ໄຂບັນດາບັນຫາທີ່ຄັບຂັນທາງ ສັງຄົມ, ຮັບປະກັນການປ້ອງກັນຄວາມສະຫງົບ, ປ້ອງກັນຊາດ, ປົວ ແປງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ຍົກສູງການສະສົມຈາກ ພາຍໃນພື້ນຖານເສດຖະກິດ, ສ້າງປະຖົມປັດໄຈອັນໜັກແໜ້ນໃຫ້ແກ່ ບາດກ້າວຂະຫຍາຍຕົວອັນສູງກວ່ານັ້ນໃນຕົ້ນສະຕະວັດຕໍ່ໄປ.

ໜ້າທີ່ກວມລວມທີ່ກ່າວມາເທິງນີ້ເລັ່ງຫວງການກໍ່ສ້າງ ແລະ ປະ ຕິບັດແຜນການ 5 ປີ 1996-2000 ຕ້ອງເຊື່ອມຊຶມແນວຄິດຊີ້ນຳ ດັ່ງຕໍ່ໄປນີ້:

ປະຕິບັດເປັນພ້ອມບາດດຽວສຳລັບສາມຈຸດໝາຍວ່າດ້ວຍເສດຖະ ກິດເຕີບໂຕສູງ, ໝັ້ນແກ່ນ ແລະ ມີຜົນສັກສິດ; ເຮັດໃຫ້ເສດຖະກິດມະ ຫາພາກມີຄວາມສະຖຽຍລະພາບອັນໜັກແໜ້ນ; ກຽມປະຖົມປັດ ໄຈຕ່າງໆໃຫ້ແກ່ບາດກ້າວພັດທະນາອັນສູງກວ່ານັ້ນໃນພາຍຫລັງປີ 2000, ເຊິ່ງເປັນຕົ້ນຕໍແມ່ນພັດທະນາແຫລ່ງກຳລັງຄົນ, ວິທະຍາສາດ ແລະ ເຕັກໂນໂລຢີ, ໂຄງປະກອບໂຄງລ່າງ, ບູລະນະສະຖາບັນຍັດໃຫ້ ດີຂຶ້ນ.

- ສືບຕໍ່ປະຕິບັດຢ່າງສະເໝີຕົ້ນສະເໝີປາຍ, ຍາວນານຕໍ່ນະໂຍ ບາຍພັດທະນາເສດຖະກິດສິນຄ້າທີ່ມີຫລາຍພາກສ່ວນໃຫ້ເຄື່ອນເດີນ ຕາມກົນໄກຕະຫລາດໂດຍມີການຄຸ້ມຄອງຂອງລັດຕາມກຳນົດທິດສັງ ຄົມນິຍົມ; ເສີມຂະຫຍາຍທຸກແຫລ່ງກຳລັງເພື່ອຂະຫຍາຍກຳລັງການ

ພະລິດ, ຊຸກຍູ້ການຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝຢ່າງແຂງ ແຮງ. ປ່ຽນແປງໃໝ່ຕໍ່ການຈັດຕັ້ງ ແລະ ຄຸ້ມຄອງໂດຍຟື້ນຖານ, ຍົກ ສູງຜົນສັກສິດຂອງຂອບເຂດເສດຖະກິດແຫ່ງລັດ ເພື່ອເສີມຂະຫຍາຍ ບົດບາດເປັນເຈົ້ານຳພາ. ປ່ຽນແປງໃໝ່ ແລະ ຂະຫຍາຍບັນດາຮູບ ການເສດຖະກິດຮ່ວມມືຢ່າງມີຫລາຍຮູບຫລາຍສີແຕ່ຕ່ຳຂຶ້ນຫາສູງ, ຜັນ ຂະຫຍາຍການປະຕິບັດກົດໝາຍສະຫະກອນ. ເປີດກວ້າງບັນດາຮູບ ການສຳພັນທຸລະກິດ, ຮ່ວມສຳພັນລະຫວ່າງເສດຖະກິດ ແຫ່ງລັດກັບ ເສດຖະກິດເອກະຊົນພາຍໃນ ແລະ ພາຍນອກປະເທດ. ເສີມຂະຫຍາຍ ຄວາມສາມາດຂອງເສດຖະກິດເອກະເທດ, ເຈົ້າຊັບນ້ອຍ, ທຶນນິຍົມເອ ກະຊົນ. ສ້າງຕັ້ງ, ປັບປຸງ ແລະ ຍົກສູງຖານະເປັນເຈົ້າການຂອງຊາວ ຜູ້ອອກແຮງງານໃນການພະລິດຂອງສັງຄົມ, ປະຕິບັດຄວາມຍຸດຕິທຳ ທາງສັງຄົມອັນນັບມື້ນັບດີກວ່າເກົ່າ.

- ປະສານສົມທົບຢ່າງກົມກຽວການເຕີບໂຕທາງດ້ານເສດຖະກິດ ກັບການພັດທະນາສັງຄົມ - ວັດທະນະທຳ, ສຸມໃສ່ການແກ້ໄຂບັນດາ ບັນຫາອັນຄັບຂັນ ໂດຍແນໃສ່ສ້າງຄວາມຫັນປ່ຽນຢ່າງແຈ້ງຊັດໃນ ການປະຕິບັດຄວາມຍຸດຕິທຳ ແລະ ຄວາມກ້າວໜ້າທາງສັງຄົມ.

- ປະສານສົມທົບຢ່າງແໜ້ນໜາລະຫວ່າງເສດຖະກິດກັບການ ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ; ຍົກສູງຜົນສັກສິດໃນການໃຊ້ ບັນດາແຫລ່ງກຳລັງທັງຮັບໃຊ້ພາລະກິດພັດທະນາເສດຖະກິດ, ທັງຮັບ ໃຊ້ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ.

- ປະສານສົມທົບການຂະຫຍາຍບັນດາບໍລິເວນເສດຖະກິດທີ່ເປັນຈຸດສຸມກັບບັນດາບໍລິເວນອື່ນໆ, ສ້າງເງື່ອນໄຂໃຫ້ບໍລິເວນຕ່າງໆຕ່າງກໍ່ຂະຫຍາຍຕົວ, ເສີມຂະຫຍາຍທ່າດີຂອງແຕ່ລະບໍລິເວນ, ຫລີກລ່ຽງການຜິດໂຕນກັນກ່ຽວກັບຈັງຫວະເຕີບໂຕລະຫວ່າງບໍລິເວນຕ່າງໆທີ່ຫ່າງໄກກັນໂພດ.

2 - ໜ້າທີ່ ແລະ ຈຸດໝາຍຕົ້ນຕໍ.

ສຸມໃສ່ກຳລັງໃຫ້ແກ່ຈຸດໝາຍພັດທະນາ, ໃຫ້ບັນລຸຄວາມໄວໃນການເຕີບໂຕທາງເສດຖະກິດສະເລ່ຍລາຍປີ 9-10%; ເຖິງປີ 2000, GDP ສະເລ່ຍຕາມຫົວຄົນທົບປີ 1990 ສອງເທົ່າ (ໃນການຊີ້ນຳປະຕິບັດຈະສູ້ຊົນໃຫ້ບັນລຸດ້ວຍຂະໜາດສູງກວ່າ).

ຂະຫຍາຍການກະສິກຳ, ການປ່າໄມ້, ການປະມົງ ຢ່າງຮອບດ້ານ, ເຊິ່ງຕິດພັນກັບອຸດສາຫະກຳປຸງແຕ່ງກະເສດຕະກຳ, ເຄື່ອງປ່າຂອງດົງ, ຂອງນ້ຳ ແລະ ປ່ຽນແປງໃໝ່ຕໍ່ໂຄງປະກອບເສດຖະກິດຊົນນະບົດຕາມທິດທັນເປັນອຸດສາຫະກຳ, ທັນເປັນທັນສະໄໝ. ຄວາມໄວໃນການເພີ່ມຄຸນຄ່າການຜະລິດກະສິກຳ, ການປ່າໄມ້, ການປະມົງສະເລ່ຍລາຍປີ 4,5-5%.

ຂະຫຍາຍບັນດາຂະແໜງການອຸດສາຫະກຳ, ເຊິ່ງກ່ອນອື່ນໝົດແມ່ນເອົາໃຈໃສ່ຢ່າງຈົດຈໍ່ເຖິງອຸດສາຫະກຳປຸງແຕ່ງ, ອຸດສາຫະກຳຜະລິດສິນຄ້າໃຊ້ສອຍ ແລະ ສິນຄ້າຂາອອກ; ດ້ວຍຄວາມເລືອກເຟັ້ນໃນການກໍ່ສ້າງອຸດສາຫະກຳໜັກຄືນ້ຳມັນອາຍແກັດ, ຖ່ານ, ຊີມັງ, ເຄື່ອງຈັກ,

ເອແລກຕຣິງ, ເຫລັກກ້າ, ຝຸ້ນ, ເຄມີຫາດ, ຜົ້ນຖານອຸດສາຫະກຳການ ປ້ອງກັນຊາດຈຳນວນຫນຶ່ງ. ຄວາມໄວໃນການເພີ່ມຄຸ່ນຄ່າການຜະລິດ ອຸດສາຫະກຳສະເລ່ຍລາຍປີ 14-15%.

ດັດສ້າງ, ຍົກລະດັບຄຸນນະພາບ ແລະ ກໍ່ສ້າງໃຫມ່ຢ່າງມີຈຸດສຸມສຳ ລັບໂຄງປະກອບໂຄງລ່າງ, ເຊິ່ງກ່ອນອື່ນຫມົດແມ່ນບັນດາຂອດທີ່ບໍ່ລຸ ລ່ວງ ແລະ ອ່ອນກວ່າຫມູ່ພວມກີດຂວາງການຂະຫຍາຍຕົວ.

ຂະຫຍາຍບັນດາຂະແຫນງການບໍລິການ, ເຊິ່ງສຸມໃສ່ບັນດາຂົງ ເຂດຂົນສົ່ງ, ຕິດຕໍ່ສື່ສານ, ການຄ້າ, ການທ່ອງທ່ຽວ, ບັນດາບໍລິການ ການເງິນ, ທະນາຄານ, ເຕັກໂນໂລຢີ, ນິຕິທຳ...ຄວາມໄວໃນການເພີ່ມ ຄຸນຄ່າບໍລິການສະເລ່ຍ 12-13% ຕໍ່ປີ.

ເພີ່ມການລົງທຶນພັດທະນາທົ່ວສັງຄົມໂດຍໄວ, ເອົາໃຈໃສ່ຢ່າງຈົດ ຈ່ໃນການເພີ່ມທັງທາງດ້ານສະສົມ ແລະ ລົງທຶນພາຍໃນປະເທດໂດຍ ຜ່ານງົບປະມານ, ກໍ່ຄືຂອງວິສາຫະກິດ ແລະ ປະຊາຊົນ. ແກ້ໄຂການ ພົວພັນລະຫວ່າງການສະສົມ-ການໃຊ້ສອຍເປັນຢ່າງດີຕາມທິດຫມັ່ນປະ ຢັດເພື່ອຫັນເປັນອຸດສາຫະກຳ, ຫັນເປັນທັນສະໄຫມ, ບໍ່ໃຊ້ຈ່າຍລື່ນ ຄວາມສາມາດຂອງຜົ້ນຖານເສດຖະກິດທີ່ອະນຸມັດໃຫ້; ເພີ່ມສະມັດຖະ ພາບ ແລະ ຜົນສັກສິດເພື່ອປ່ຽນແປງຊີວິດຄວາມເປັນຢູ່ໃຫ້ດີຂຶ້ນ, ທັງມີ ການສະສົມອັນນັບມື້ນັບຫລາຍໃຫ້ແກ່ການລົງທຶນພັດທະນາ. ຕ້ານການ ເສຍຫາຍ, ຟຸມເຟືອຍ, ສໍ້ລາດບັງຫລວງ. ລະດົມທຸກແຫລ່ງກຳລັງພາຍ ໃນປະເທດໃຫ້ຫລາຍທີ່ສຸດເທົ່າທີ່ຈະຫລາຍໄດ້, ພ້ອມກັນນັ້ນກໍ່ດູດດຶງບັນ

ດາແຫລ່ງທຶນຈາກພາຍນອກຢ່າງແຂງແຮງທັງນີ້ກໍ່ເພື່ອເຮັດໃຫ້ມາດຕາສ່ວນການລົງທຶນພັດທະນາທົ່ວສັງຄົມໃນປີ 2000 ຂຶ້ນປະມານ 30% GDP.

ຂຸດຄົ້ນທ່າແຮງຂອງທົ່ວປະເທດ, ຂອງແຕ່ລະເຂດແຄວ້ນ, ແຕ່ລະຂະແໜງການເພື່ອສ້າງການພັດທະນາຂຶ້ນຢ່າງກົມກຽວລະຫວ່າງບັນດາເຂດ ແຄວ້ນດິນແດນ. ສຸມໃສ່ແຫລ່ງກຳລັງຢ່າງເໝາະສົມໃຫ້ແກ່ບັນດາຂົງເຂດ, ບັນດາບໍລິເວນເປັນຈຸດສຸມທີ່ມີເງື່ອນໄຂນຳເອົາຜົນສັກສິດສູງມາໃຫ້ໂດຍໄວ. ພ້ອມກັນນັ້ນກໍ່ຈົ່ງແຫລ່ງທຶນໄວ້ເພື່ອແກ້ໄຂບັນດາຄວາມຕ້ອງການອັນຄັບຂັນຂອງເຂດແຄ້ວນອື່ນໆ, ໂດຍສະເພາະຢ່າງຍິ່ງແມ່ນຂະຫຍາຍໂຄງປະກອບໂຄງລ່າງ ແລະ ຊ່ວຍໜູນທຶນສິນເຊື່ອ, ສ້າງເງື່ອນໄຂເພື່ອໃຫ້ບັນດາເຂດແຄວ້ນທີ່ຂະຫຍາຍຕົວຊ້ຳ, ບັນດາເຂດຊົນນະບົດ, ເຂດພູດອຍສາມາດຂະຫຍາຍຕົວໄວກວ່າ, ຄ່ອຍຜ່ານຜ່າແກ້ໄຂສະພາວະຜິດໂຕນກັນອັນໃຫຍ່ໂຕທີ່ສຸດກ່ຽວກັບລະດັບພັດທະນາເສດຖະກິດ-ສັງຄົມລະຫວ່າງເຂດແຄວ້ນຕ່າງໆ.

ຮອດປີ 2000, ບໍລິມາດຂອງອຸດສາຫະກຳ ແລະ ກໍ່ສ້າງກວມເອົາປະມານ 34 - 35% ໃນ GDP; ກະສິກຳ, ການປ່າໄມ້, ການປະມົງ ກວມເອົາປະມານ 19 - 20%; ການບໍລິການກວມເອົາປະມານ 45 - 46%.

ເພີ່ມຄວາມສາມາດ ແລະ ກຳລັງບີ່ນຊ້ອນທາງການເງິນ

ຂອງປະເທດຂຶ້ນຕື່ມໂດຍໄວ, ເຮັດໃຫ້ການເງິນແຫ່ງຊາດມີຄວາມສົດໃສ. ລະດົມແຕ່ 21 - 22% GDP ໃສ່ງົບປະມານໂດຍຜ່ານພາສີ ແລະ ຄ່າ; ຈຳກັດລາຍຈ່າຍທີ່ໂພດເຫລືອເຊິ່ງບໍ່ລົ້ນກວ່າ 4,5% GDP; ປະຕິບັດຄຳໝັ້ນສັນຍາໃຊ້ໜີ້. ສືບຕໍ່ປະຕິບັດຈຸດໝາຍກົດໄວ້ ແລະ ສຳຫລວດກວດກາເງິນເຟີ້, ກຳຈັດປັດເຂ່ຍໄພອັນຕະລາຍເງິນເຟີ້ຊ້ຳຄືນເທື່ອໃໝ່ດ້ວຍຂະໜາດສູງ, ຮັກສາລະດັບເພີ່ມເລກຊີ້ລາຄາໃຊ້ສອຍຫລຸດກວ່າ 10% ຕໍ່ປີ. ປ໋ວແປງຕາຊິ່ງຊຳລະສະສາງສາກົນໃຫ້ດີຂຶ້ນ.

ຂະຫາຍຕະຫລາດເງິນຕາ ແລະ ຕະຫລາດທຶນ, ເຮັດໃຫ້ຕະຫລາດຊື້ຂາຍຫຸ້ນພັນທະບັດປະກົດເປັນຮູບແຕ່ລະກ້າວ. ເພີ່ມຄວາມສາມາດພັນປຽນຂອງເງິນຫວຽດນາມ, ຮັດແຄບການໃຊ້ເງິນຕາຕ່າງປະເທດຢູ່ພາຍໃນປະເທດ; ເຮັດໃຫ້ມາດຕາສ່ວນລາຄາປ່ຽນເງິນເປັນປົກກະຕິສອດຄ່ອງກັບກຳລັງຊື້ຕົວຈິງຂອງເງິນ.

ເປີດກວ້າງ ແລະ ຍົກສູງຜົນສັກສິດຂອງການພົວພັນເສດຖະກິດກັບຕ່າງປະເທດ. ເປີດກວ້າງຕະຫລາດຂາອອກຂາເຂົ້າ, ເພີ່ມຄວາມສາມາດການຂາອອກບັນດາປະເພດສິນຄ້າທີ່ໄດ້ຜ່ານການປຸງແຕ່ງຢ່າງຮອບຄອບ. ເພີ່ມກຳລັງແຂ່ງຂັນຂອງສິນຄ້າ ແລະ ບໍລິການ. ກ້ອນເງິນຕາຂາອອກເພີ່ມສະເລ່ຍ ປະມານ 28% ຕໍ່ປີ(ບໍ່ທັນນັບສ່ວນທີ່ຂາອອກປະຈຳທີ່) ຍົກລະດັບຂາອອກສະເລ່ຍຕາມຫົວຄົນຂຶ້ນກວ່າ 200 USDເມື່ອປີ 2000; ຂະຫຍາຍການທ່ອງທ່ຽວ ແລະ ບັນ

ດາການບໍລິການເກັບທ້ອນເອົາເງິນຕາຕ່າງປະແທດຢ່າງແຂງແຮງ. ກ້ອນເງິນຕາຂາເຂົ້າເພີ່ມສະເລ່ຍປະມານ 24% ຕໍ່ປີ.

ເພີ່ມຄວາມສາມາດຮັບເອົາທຶນຂອງການລົງທຶນ ແລະ ເຕັກໂນໂລ ຍີຈາກພາຍນອກ.

ແກ້ໄຂບັນຫາສັງຄົມຈຳນວນຫນຶ່ງເປັນຢ່າງດີ

ໄພກີກໜັງສື ແລະ ສຳເລັດໂດຍພື້ນຖານສຳລັບການການສຶກສາ ຊັ້ນປະຖົມແບບບັງຄັບໃນທົ່ວປະເທດ, ເຜີຍແຜ່ສາມັນສຶກສາຊັ້ນພື້ນ ຖານແບບບັງຄັບ(ຫ້ອງ 9) ຢູ່ຕົວເມືອງ ແລະ ບັນດາບ່ອນທີ່ມີເງື່ອນ ໄຂ. ຈຳນວນແຮງງານທີ່ໄດ້ຜ່ານການກໍ່ສ້າງກວມປະມານ 22-25% ໃນຍອດປະລິມານແຮງງານ. ຫັນປ່ຽນຢ່າງແຂງແຮງກ່ຽວກັບຄຸນນະ ພາບໃນການສຶກສາ ແລະ ກໍ່ສ້າງ. ຂະຫຍາຍ ແລະ ຍົກສູງກຳລັງ ຄວາມສາມາດ, ພົນສັກສິດຂອງການຄົ້ນຄວ້າ, ຜັນຂະຫຍາຍວິທະຍາ ສາດ ແລະ ເຕັກໂນໂລຍີ. ຂະຫຍາຍ ແລະ ຍົກສູງຄຸນນະພາບຂອງບັນ ດາການເຄື່ອນໄຫວວັດທະນະທຳ, ສິ່ລະປະ, ສາທາລະນະສຸກ, ກິລາກາ ຍະກຳ, ເປີດກວ້າງໃຫ້ເຖິງບັນດາເຂດສອກຫລີກ, ເຂດຫ່າງໄກ.

ຫລຸດຜ່ອນຈັງຫວະຂະຫຍາຍພົນລະເມືອງໃນປີ 2000 ລົງໃຕ້ 1,8%. ລົບລ້າງໄພອຶດຢາກ. ມາຮອດປີ 2000, ມາດຕາສ່ວນພົນລະ ເມືອງທີ່ມີລາຍໄດ້ຕ່ຳໂພດ ນີ້ໃຫ້ລົດລົງເຄິ່ງໜຶ່ງເມື່ອປຽບກັບປະຈຸບັນ, ມາດຕາສ່ວນເດັກນ້ອຍອາຍຸບໍ່ທັນເຖິງ 5 ປີ ເຊິ່ງຂາດທາດບຳລຸງຈະ ຫລຸດລົງໃຕ້ 30%. ພົນລະເມືອງຢູ່ຕົວເມືອງ ແລະ 80% ໃນຈຳນວນ

ພົນລະເມືອງຢູ່ຊົນນະບົດຖືກສະໜອງນ້ຳສະອາດ. ເພີ່ມອາຍຸຍືນຂຶ້ນສະເລ່ຍປະມານ 70 ປີ.

ແກ້ໄຂວຽກເຮັດງານທຳໃຫ້ແກ່ 6,5 - 7 ລ້ານຄົນ, ຫລຸດຜ່ອນມາດຕາສ່ວນວ່າງງານຢູ່ຕົວເມືອງລົງໃຕ້ 5% ແລະ ເພີ່ມການໃຊ້ເວລາອອກແຮງງານຢູ່ຊົນນະບົດຂຶ້ນກວ່າ 75%. ດັດສົມເງິນເດືອນ ແລະ ແກ້ໄຂບັນດາຂໍ້ທີ່ບໍ່ສົມເຫດສົມຜົນໃນນະໂຍບາຍເງິນເດືອນ. ເຮັດໃຫ້ຄັງອະນຸເຄາະຕໍ່ການວ່າງງານຢູ່ຕົວເມືອງປະກົດເປັນຮູບເທື່ອລະກ້າວ. ຮັບປະກັນລະດັບດຳເນີນຊີວິດຂອງຜູ້ທີ່ອອກບຳນານ ແລະ ຄອບຄົວທີ່ມີຄຸນງານຄວາມດີຕໍ່ປະເທດຊາດ.

ສຳເລັດໂດຍພື້ນຖານສຳລັບການຕັ້ງພຸມນຳເລົ່າຄົງທີ່ທຳການກະເສດຄົງທີ່ ແລະ ເຮັດໃຫ້ຊີວິດການເປັນຢູ່ຂອງຜີ້ນ້ອງຮ່ວມຊາດບັນດາຊົນຊາດສ່ວນໜ້ອຍເປັນປົກກະຕິ.

ສະກັດກັ້ນ ແລະ ເຮັດໃຫ້ການເປື້ອນເປິ ຕໍ່ສິ່ງແວດລ້ອມຢູ່ຕົວເມືອງ, ເຂດອຸດສາຫະກຳຫລຸດຜ່ອນລົງ.

ຍູ້ໃຫ້ໄພສໍ້ລາດບັງຫລວງ, ບັນດາໄພຮ້າຍທາງສັງຄົມລະຖອຍໄປ, ກຳຈັດປັດເຂ່ຍວັດທະນະທຳຜິດຮ້າຍ.

ປົກປັກຮັກສາເອກະລາດ, ອະທິປະໄຕ, ຄຶມແຜ່ນດິນອັນຄົບຖ້ວນ ແລະ ປ້ອງກັນຄວາມສະຫງົບຂອງປະເທດຊາດຢ່າງໜັກແໜ້ນ, ຮັກສາແໜ້ນຄວາມສະຖຽນລະພາບທາງການ

ເມືອງ ແລະ ຄວາມປອດໄພທາງສັງຄົມ, ຮັບປະກັນການປ້ອງກັນຊາດ, ປ້ອງກັນຄວາມສະຫງົບໃຫ້ມີຄວາມໝັ້ນແກ່ນເຂັ້ມແຂງ, ກຽມພ້ອມປະເຊີນໜ້າກັບທຸກສະພາວະການກໍລະນີ.

ຕັ້ງໜ້າກຽມ ແລະ ສ້າງປະຖິມປັດໄຈອັນໜັກແໜ້ນໃຫ້ແກ່ບາດກ້າວພັດທະນາທີ່ສູງກວ່າເກົ່າໃນພາຍຫລັງ *ປີ 2000,* ເຊິ່ງເປັນຕົ້ນຕໍແມ່ນຂະຫຍາຍແຫລ່ງກຳລັງຄົນ, ຍົກສູງກຳລັງຄວາມສາມາດວິທະຍາສາດ ແລະ ເຕັກໂນໂລຍີ, ກໍ່ສ້າງໂຄງປະກອບຊັ້ນລ່າງ ແລະ ກິດຈະການອຸດສາຫະກຳເປັນກຸນແຈຈຳນວນໜຶ່ງ, ເຮັດໃຫ້ກົນໄກ ຕະຫລາດປະກົດເປັນຮູບຢ່າງຄົບຊຸດ ໂດຍມີການຄຸ້ມຄອງຂອງລັດຕາມກຳນົດທິດສັງຄົມນິຍົມ.

II -ບັນດາໂຄງການ ແລະ ຂົງເຂດພັດທະນາ

1- ໂຄງການພັດທະນາກະສິກຳ ແລະ ເສດຖະກິດຢູ່ຊົນນະບົດ.

ຈຸດໝາຍ:

ພັດທະນາອຸດສາຫະກຳຮອບດ້ານ ໂດຍສຸມໃສ່ຮັບປະກັນຄວາມປອດໄພແກ່ທັນຍາຫານແຫ່ງຊາດ ໃນທຸກສະພາວະການກໍລະນີ, ເພີ່ມແຫລ່ງອາຫານການກິນ ແລະ ຜັກໝາກໄມ້ ໂດຍໄວ, ປ່ຽນແປງຄຸນນະພາບ

ຂອງຄາບກິນໃຫ້ດີຂຶ້ນ, ຫລຸດຜ່ອນການຂາດທາດບຳລຸງ.

ປຽນແປງໂຄງປະກອບກະສິກຳ ແລະ ເສດຖະກິດຢູ່ຊົນນະບົດຢ່າງ ມີຜົນສັກສິດ. ບົນພື້ນຖານຮັບປະກັນຄວາມຕ້ອງການທາງດ້ານທັນຍາ ຫານຢ່າງໜັກແໜ້ນເຊິ່ງເອົາເຂົ້າເປັນຕົ້ນຕໍເປີດກວ້າງເນື້ອທີ່ປູກໄມ້ ອຸດສາຫະກຳ, ໄມ້ກິນໝາກເພີ່ມຝຸງສັດລ້ຽງ, ສັດນ້ຳ ແລະ ຜັດ ທະນາເສດຖະກິດ ທາງທະເລ, ເກາະ, ເສດຖະກິດທາງປ່າດົງ, ຂຸດ ຄົ້ນຄວາມສາມາດທີ່ບໍ່ມຸ້ອນຂອງການກະສິກຳຊີວະຖານ [1] ຢ່າງມີຜົນ ສັກສິດ, ເພີ່ມປະລິມານການຜະລິດສິນຄ້າຂຶ້ນໂດຍໄວເຊິ່ງຕິດພັນກັບອຸດ ສາຫະກຳປຸງແຕ່ງ ແລະ ຂາອອກ, ເປີດກວ້າງຕະຫລາດຊົນນະບົດ; ເພີ່ມລາຍໄດ້ຂອງຊາວ ກະສິກອນ. ຊຸກຍູ້ການກໍ່ສ້າງຢ່າງແຂງແຮງ, ຍົກລະດັບຄຸນນະພາບສຳລັບໂຄງປະກອບໂຄງລ່າງເສດຖະກິດ ແລະ ສັງຄົມ.

ໜ້າທີ່ ແລະ ວິທີແກ້ໄຂ:

ເພີ່ມປະລິມານການຜະລິດ*ທັນຍາຫານ*ສິນຄ້າຢູ່ບັນດາເຂດທົ່ງພຽງ ທີ່ມີສະມັດຖະພາບການຜະລິດ ແລະ ຜົນສັກສິດສູງ. ຈັດວາງລະດູປູກ ຝັງ ແລະ ເກັບກ່ຽວຄືນໃໝ່ເພື່ອຫລີກລ່ຽງໄພພິບັດ, ຫັນໄປສູ່ບັນດາ ລະດູທີ່ມີສະມັດຖະພາບສູງຫລືໄມ້ອື່ນໆ ທີ່ມີຜົນສັກສິດກວ່າ. ຂະຫຍາຍ

---

1) ການພົວພັນລະຫວ່າງສິ່ງທີ່ມີຊີວິດກັບສິ່ງແວດລ້ອມ.

ແນວປູກຊະນິດໃໝ່ທີ່ມີສະມັດຖະພາບສູງ, ຄຸນນະພາບດີ, ເໝາະກັບ ແຕ່ລະບໍລິເວນຊີວະຖານ, ເຊິ່ງເປັນພືເສດແມ່ນເຂົ້າແນວປະສົມພັນ, ໝາກສາລີແນວປະສົມພັນ. ແຜນກຳນົດ ແລະ ພັດທະນາເຂດແຄວ້ນ ຈຳນວນໜຶ່ງທີ່ຜະລິດເຂົ້າ, ເຂົ້າສານແນວແຊບນ໊ອມີຄຸນຄ່າສູງ. ຄາດ ຄະເນ ເມື່ອປີ 2000, ປະລິມານການຜະລິດ ທັນຍາຫານ ບັນລຸປະມານ 30 ລ້ານໂຕນ, ສະເລ່ຍຕາມຫົວຄົນ 360 - 370 ກິໂລກຣາມ ຕໍ່ປີ.

ຂະຫຍາຍຢ່າງແຂງແຮງສຳລັບ*ຕົ້ນໄມ້ຊະນິດຕ່າງໆຄື*ຕົ້ນໄມ້ອຸດສາ*ຫະກຳ ຕົ້ນໄມ້ກິນໝາກ ແລະຜັກໝາກຖົ່ວ* ທີ່ມີຜົນສັກສິດທາງເສດຖະ ກິດສູງ; ເຮັດໃຫ້ບັນດາເຂດຜະລິດລວມສູນປະກົດເປັນຮູບຕິດພັນກັບອຸດ ສາຫະກຳປຸງແຕ່ງປະຈຳທີ່. ປູກຕົ້ນໄມ້ອຸດສາຫະກຳປະສານສົມທົບກັບ ໂຄງການປົກຫຸ້ມດິນວ່າງ, ພູປອກໂລ້ນເປັນສີຂຽວຕາມຮູບການກະສິ ກຳ-ປ່າໄມປະສົມປະສານກັນ. ຖືສຳຄັນບັນດາວິທີການກະເສດສຸມເຜີ່ມ ສະມັດຖະພາບການຜະລິດ; ນຳໃຊ້ບັນດາວິທີການຊີວະສາດທັນສະໄໝ ແລະ ເຕັກໂນໂລຍີຊີວະສາດ, ບ່ໃຊ້ທາດເຄມີ; ຜະລິດກະເສດຕະກຳຊະ ນິດຕ່າງໆ ທີ່ສະອາດ. ຮອດປີ 2000 ຍົກບໍລິມາດຕົ້ນໄມ້ອຸດສາຫະກຳ ຂຶ້ນປະມານ 45% ໃນມູນຄ່າຜະລິດຕະພັນຂະແໜງການປູກຝັງ.

ຂະຫຍາຍບັນດາເຂດ*ລ້ຽງສັດ* ລວມສູນປະກົດເປັນຮູບຕິດພັນກັບອຸດ ສາຫະກຳປຸງແຕ່ງອາຫານການກິນ. ສົ່ງເສີມ ແລະ ແຜ່ກວ້າງບັນດາ ຄອບຄົວເກັ່ງໃນການລ້ຽງສັດ, ບັນດາຖຽງກະສິກຳລ້ຽງສັດ. ປຽນ ແປງໃໝ່ສຳລັບລະບົບພັນສັດທີ່ມີສະມັດຖະພາບສູງ, ຄຸນນະພາບດີ. ປະ

ຕິບັດໂຄງການເຮັດໃຫ້ ຝູງໝູມີສ່ວນຊີ້ນບໍ່ມີມັນ, ດັດສ້າງຝູງງົວ, ຂະ ຫຍາຍງົວພັນນົມ, ງົວພັນຊີ້ນ ແລະ ຊຳລະພະຍາດຈຳນວນໜຶ່ງໃນເຂດ ຮ້ອນ. ຂະຫຍາຍອາຊີບລ້ຽງສັດພັນຕ່າງໆ ເປັນພະລິດຕະພັນພິເສດ. ເປີດກວ້າງຕາໜ່າງປຸງແຕ່ງອາຫານການກິນສຳລັບສັດລ້ຽງ, ສັດຕະ ວະແພດ, ປະກັນສັດລ້ຽງ ແລະ ການບໍລິການອື່ນໆ. ສູ້ຊົນມາຮອດປີ 2000, ຍົກບໍລິມາດຂະແໜງການລ້ຽງສັດໃນຄຸນຄ່າກະເສດຕະກຳ ຂຶ້ນປະມານ 30 - 35%.

ຂະຫຍາຍອາຊີບລ້ຽງ ແລະ ປູກ*ເຄື່ອງນ້ຳຂອງທະເລ* ທັງຢູ່ໃນນ້ຳ ຈືດ, ເຄິ່ງຈືດເຄິ່ງເຄັມ ແລະ ນ້ຳເຄັມ, ປ້ອງກັນ ແລະ ຟື້ນຟູປ່າດົງທີ່ ຖ້ວມໄປດ້ວຍນ້ຳເຄັມ. ຫັນປ່ຽນນາທາມຖືກນ້ຳຖ້ວມເປັນປະຈຳຫລືຖືກ ຕິດນ້ຳເຄັມ, ສະມັດຖະພາບການຜະລິດຕ່ຳມາຫາການລ້ຽງ ແລະ ປູກ ເຄື່ອງນ້ຳ. ດັດສ້າງແນວພັນ, ຈັດຕັ້ງການບໍລິການເປັນພາລາທິການ ກ່ຽວກັບອາຫານການກິນໃຫ້ດີ, ກັນ ແລະ ຕ້ານພະຍາດໂລກ, ນຳໃຊ້ ແບບວິທີລ້ຽງຕາມແບບອຸດສາຫະກຳເປັນກ້າວໆ. ມາຮອດປີ 2000, ເນື້ອທີ່ລ້ຽງ ແລະ ປູກເຄື່ອງນ້ຳບັນລຸລື່ນ ແສນເຮັກຕາ.

ຄຸ້ມຄອງການຫາປາໃນແຕ່ລະສະຖານທີ່ປະມົງເພື່ອພິທັກຮັກສາ ການໃຫ້ກຳເນີດ ແລະ ຂະຫຍາຍຝູງປາ. ສົ່ງເສີມຊາວປະມົງໃຫ້ຊື້ພາ ຫະນະໂດຍຕົນເອງ ແລະ ຈັດຕັ້ງການຂຸດຄົ້ນບັນດາແຫລ່ງປະໂຫຍດ ສິນນ້ຳເຄື່ອງທະເລເປັນຢ່າງດີ. ຂະຫຍາຍອາຊີບຫາປາຢູ່ນອກຝັ່ງຢ່າງ ແຂງແຮງ ໂດຍຜ່ານການຊ່ວຍໜູນໃຫ້ຊາວປະມົງຍືມທຶນ ແລະ ຂະ

ຫຍາຍກຳລັງທຸລະກິດຂອງລັດ. ຕ້ານການເຮັດໃຫ້ສິ່ງແວດລ້ອມຂອງ ທະເລ, ແມ່ນ້ຳລຳເຊ, ໜອງບຶງຖືກເປື້ອນເປິ ແລະ ຫ້ານຢ່າງເຄັ່ງຄັດ ຕໍ່ການຂຸດຄົ້ນສິນນ້ຳເຄື່ອງທະເລດ້ວຍວິທີດັບສູນແນວພັນ. ສືບຕໍ່ສືບຫາ ຊັບໃນດິນສິນໃນນ້ຳ ແລະ ຊີວະສັດຢູ່ທະເລເພື່ອມີແຜນການຂຸດຄົ້ນ, ປົກ ປ້ອງ.

ປະລິມານການຜະລິດສິນນ້ຳເຄື່ອງທະເລເມື່ອປີ 2000 ປະມານ 1,6-1,7 ລ້ານໂຕນ, ໃນນັ້ນປະລິມານການຜະລິດສຳລັບການລ້ຽງ ແລະ ປູກປະມານ 50-55 ໝື່ນໂຕນ; ການຂາອອກສຳລັບສິນນ້ຳ ເຄື່ອງທະເລບັນລຸ 1-1,1 ຕື້ USD.

ຂະຫຍາຍອາຊີບປ່າໄມ້ ຕິດພັນກັບການເຮັດໃຫ້ຊີວິດການເປັນຢູ ຂອງພົນລະເມືອງຢູ່ເຂດພູດອຍມີຄວາມສະຖຽຍລະພາບ ແລະ ຖືກປົວ ແປງໃຫ້ດີຂຶ້ນ; ເພີ່ມຄວາມໄວໃນການປົກຫຸ້ມດິນວ່າງ, ພູປອກໂລ້ນ; ລ້ອມເປັນເຂດບົວລະບັດ, ທຳໃຫ້ເກີດຂຶ້ນເປັນຄັ້ງໃໝ່, ຮັກສາປ່າດົງ; ສ້າງເງື່ອນໄຂໃຫ້ແກ່ເຂດພູດອຍເສີມຂະຫຍາຍທ່າແຮງກ່ຽວກັບການ ປ່າໄມ້. ສຳເລັດການມອບໝາຍປ່າດົງ, ມອບໝາຍດິນຮອດຄອບຄົວ ຊາວກະສິກອນ. ເພີ່ມທະວີວຽກງານກວດກາປ່າໄມ້ເພື່ອຮັກສາທຶນ ແຫ່ງປ່າດົງ, ຮັກສາລະບົບຊີວະຖານ ຢ່າງໜັ້ນແກ່ນ, ຮັກສາຄັງແຢ້ມ [1],

---

[1] ໜ່ວຍທີ່ຈັດແບ່ງຢູ່ໃນຂອງຈຸລັນເຊິ່ງມີການກ່ຽວພັນກັບການສືບເຊື້ອຂອງຊີວະສັດ ຫລືຊາດໄມ້.

ກິດຂວາງທຸກໄພຮ້າຍໃນການຈູດ ແລະ ທຳລາຍປ່າໄມ້, ລ່າເນື້ອຢ່າງ ຊະຊາຍ. ຄຸ້ມຄອງການຂຸດຄົ້ນໄມ້ຢ່າງແໜ້ນໜາ, ສືບຕໍ່ຫ້າມການ ຂາອອກໄມ້ເປັນວັດຖຸດິບ. ກຳນົດແຜນ ແລະ ຂະຫຍາຍອຸດສາຫະກຳ ປຸງແຕ່ງໄມ້ຢ່າງມີຜົນສັກສິດ.

ໃນ 5 ປີ 1996-2000, ຕ້ອງຮັກສາປ່າໄມ້ທີ່ມີໃນປະຈຸບັນອັນປະ ກອບດ້ວຍ 9,3 ລ້ານ ເຮັກຕາ ແລະ ສ້າງປ່າໄມ້ 2,5 ລ້ານ ເຮັກຕາ ຂຶ້ນຕື່ມໃນນັ້ນມີປ່າໄມ້ທີ່ປູກໃໝ່ໆ 1 ລ້ານ ເຮັກຕາ, ຍົກເນື້ອໃນຂອງທີ່ ດິນທີ່ຖືກປົກຫຸ້ມໄປດ້ວຍປ່າໄມ້ ແລະ ໄມ້ນາມປີຂຶ້ນ 40%. ສ້າງວຽກ ເຮັດງານທຳເປັນປົກກະຕິໃຫ້ແກ່ຫນຶ່ງລ້ານຄອບຄົວຊຶ່ງປະກອບດ້ວຍ ແຮງງານສອງລ້ານຄົນ ແລະ ປະຊາລາສະດອນ 6-7 ລ້ານຄົນ.

ຂະຫຍາຍເປັນຫລາຍຮູບຫລາຍສີສຳລັບ *ອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ອຸດສາຫະກຳນ້ອຍ* ຢູ່ຊົນນະບົດ, ຕົວເມືອງຍ່ອຍຂັ້ນ ຕາແສງ, ຕົວເມືອງຍ່ອຍຂັ້ນເມືອງ, ເຊິ່ງຮ່ວມສຳພັນກັບອຸດສາຫະກຳ ຢູ່ຕົວເມືອງໃຫຍ່ ແລະ ເຂດອຸດສາຫະກຳລວມສູນ. ຂະຫຍາຍບັນດາ ບ້ານອາຊີບ, ໂດຍສະເພາະຢ່າງຍິ່ງແມ່ນບັນດາບ້ານອາຊີບທີ່ຜະລິດ ສິນຄ້າຂາອອກ; ຂະຫຍາຍການບໍລິການຮູບແບບຕ່າງໆ. ກໍ່ສ້າງຖະ ໜົນຫົນທາງ, ຕາ່ງສະໜອງໄຟຟ້າ, ສະໜອງນ້ຳ, ໄປສະນີ, ໂຮງ ຮຽນ, ຮາກຖານສາທາລະນະສຸກ, ວັດທະນະທຳ ຢູ່ຊົນນະບົດຂຶ້ນຕື່ມ.

ຂະຫຍາຍ *ລະບົບຊົນລະປະທານ* ໂດຍໄວຢູ່ບັນດາເຂດແຄ້ວັນທ້ຽ ໜົດ, ເຊິ່ງເປັນພື້ເສດແມ່ນຟື້ນຟູ, ສ້ອມແປງ, ຍົກລະດັບຄຸນນະພາບ

ແລະ ເປີດກວ້າງລະບົບຊົນລະປະທານ ທີ່ໄດ້ມີຢູ່ແລ້ວຢູ່ທົ່ງພຽງໃຫຍ່ ສອງແຫ່ງຂອງ ປະເທດຊາດ; ປະຕິບັດໂຄງການຕ້ານການຕິດນ້ຳ ເຄັມ, ສົ້ມ ແລະ ຕ້ານໄພນ້ຳຖ້ວມຢ່າງຮອບດ້ານຢູ່ທົ່ງພຽງແມ່ນ້ຳ ກີວລອງ [1]. ກໍ່ສ້າງອ່າງຂັງນ້ຳຈຳນວນໜຶ່ງຢູ່ບາງບໍລິເວນຂອງເຂດ ພູດອຍ, ເຂດພູສູງທັງຮັບໃຊ້ການຜະລິດທັງປົວແປງ ບໍ່ນ້ຳໃນການດຳ ລົງຊີວິດແກ່ພົນລະເມືອງໃຫ້ດີຂຶ້ນ. ຄາດຄະເນໃນ 5 ປີ, ກຳລັງຄວາມ ສາມາດໃນການລະບາຍນ້ຳເຂົ້ານາ ເພີ່ມຂຶ້ນ ແສນເຮັກຕາ, ກຳລັງ ຄວາມສາມາດໃນການລະບາຍນ້ຳອັ່ງເພີ່ມຂຶ້ນ 2,5 ແສນເຮັກຕາ, ສ້າງແຫລ່ງລະບາຍນ້ຳເຂົ້ານາຫົດສວນຢູ່ນາມໂບ້ 5 ແສນເຮັກຕາ, ກີດ ຂວາງນ້ຳເຄັມ 1 ແສນເຮັກຕາ.

ຮັບປະກັນຝຸ່ນຢ່າງພຽງພໍເພື່ອບົວລະບັດຢ່າງທັນລະດູປູກຝັ່ງດ້ວຍ ລາຄາເປັນປົກກະຕິ. ເປີດກວ້າງການໝຸນໃຊ້ບັນດາວິທີການຊົວະສາດ ໃນການຮັກສາຜົດຊາດ. ຂະຫຍາຍຕາມ່າງສິ່ງເສີມກະສິກຳ, ສິ່ງເສີມ ການປ່າໄມ້, ສິ່ງເສີມການປະມົງ, ມອບສິ່ງເຕັກນິກ ແລະ ການບໍລິການ ສະໜອງອຸປະກອນເຕັກນິກ. ຈັດຕັ້ງການປຸງແຕ່ງ, ບໍລິໂພກບັນດາຜະ ລິດຕະພັນແຫ່ງການກະສິກຳ. ປະຕິບັດນະໂຍບາຍປະກັນໄພ ແລະ ສິ່ງ ເສີມລາຄາຕ່ຳກະເສດຕະພັນ, ເຊິ່ງເປັນຜົເສດແມ່ນເຂົ້າ ແລະ ໄມ້ອຸດສາ

---

[1] ແມ່ນ້ຳຂອງໄຫລລົງພາກໃຕ້ຂອງຫວຽດນາມ, ປະຊາຊົນເອີ້ນຊື່ວ່າແມ່ນ້ຳ ກີວລອງ.

ຫະກຳຂາອອກ. ດັດສົມການແຈກວາງທຶນຂອງລັດ, ລະດົມແຫລ່ງທຶນ ຂຶ້ນຕື່ມເພື່ອເພີ່ມທຶນແກ່ການລົງທຶນ ແລະ ສົມເຊື່ອມັບວ່າຜົນສົມຄວນໃຫ້ ແກ່ກະສິກຳ, ການປ່າໄມ້, ການປະມົງ ແລະ ເສດຖະກິດແຫ່ງຊົນນະ ບົດ.

2 - ໂຄງການພັດທະນາອຸດສາຫະກຳ

ຈຸດໝາຍ:

ສຳລັບເຕັກໂນໂລຢີຂອງວິສາຫະກິດຈະຕ້ອງປ່ຽນແປງໃໝ່ເປັນສ່ວນ ຫລວງຫລາຍ. ຂະຫຍາຍຂະແໜງການທີ່ມີທ່າແຮງຈຳນວນໜຶ່ງ ໂດຍ ໄວ, ເຮັດໃຫ້ຂະແໜງການອຸດສາຫະກຳຈຳນວນໜຶ່ງທີ່ເປັນປາຍແຫລມ ປະກົດເປັນຮູບໃນບັນດາອົງເຂດປຸງແຕ່ງທັນຍາຫານ-ອາຫານການ ກິນ, ຂຸດຄົ້ນ ແລະ ປຸງແຕ່ງນ້ຳມັນອາຍແກັດ, ອຸດສາຫະກຳເອເລັກ ຕຣົງ ແລະ ອຸດສາຫະກຳສີ່ສານ, ກົນຈັກປະດິດສ້າງ, ຜະລິດອຸປະກອນ.

ເຮັດໃຫ້ບັນດາເຂດອຸດສາຫະກຳລວມສູນປະກົດເປັນຮູບ (ປະກອບດ້ວຍ ທັງເຂດປຸງແຕ່ງຂາອອກ ແລະ ເຂດເຕັກໂນໂລຢີສູງ), ສ້າງສະຖານທີ່ ອັນສະດວກໃຫ້ແກ່ການກໍ່ສ້າງບັນດາຟື້ນຖານອຸດສາຫະກຳໃໝ່.ຂະ ຫຍາຍອຸດສາຫະກຳຢູ່ຊົນນະບົດ ແລະ ບໍລິເວນອ້ອມຂ້າງຕົວ ເມືອງຢ່າງແຂງແຮງ. ຢູ່ໃນບັນດາມະຄອນ, ເທດສະບານແຂວງ, ຍົກ ລະດັບຄຸນນະພາບ, ດັດສ້າງບັນດາຮາກຖານອຸດສາຫະກຳທີ່ມີໃນປະ ຈຸບັນ, ຍົກຍ້າຍບັນດາຮາກຖານທີ່ບໍ່ມີຄວາມສາມາດໃນການຈັດ ແລະ ແກ້ໄຂຄວາມເປື້ອນເປີໃຫ້ອອກຈາກຕົວເມືອງ, ຈຳກັດການກໍ່ສ້າງຮາກ

ຖານອຸດສາຫະກຳແຕ່ງໃໝ່ທີ່ແຊກເຂົ້າເຂດພົນລະເມືອງ.

ໜ້າທີ່ ແລະ ວິທີແກ້ໄຂ:

ຂະຫຍາຍ*ອຸດສາຫະກຳປຸງແຕ່ງອາຫານການກິນ* ***ແລະ*** *ອຸດສາຫະກຳຜະລິດສິນຄ້າໃຊ້ສອຍ* ແນໃສ່ຕອບສະໜອງຄວາມຕ້ອງການພາຍໃນປະເທດ, ພ້ອມກັນນັ້ນກໍ່ສຸມໃສ່ການຂາອອກຢ່າງແຂງແຮງ, ໃຫ້ບູລິມະສິດຕໍ່ການຂະຫຍາຍບັນດາຜະລິດຕະພັນທີ່ມີທ່າດີແຂ່ງຂັນ ແລະ ມີຜົນສັກສິດສູງ.

ປະສານສົມທົບຢ່າງກົມກຽວຫລາຍຂະຫຍາດ, ຫລາຍລະດັບເຕັກໂນໂລຍີອັນເໝາະສົມ, ດ້ວຍການເຂົ້າຮ່ວມຂອງບັນດາພາກສ່ວນເສດຖະກິດທັງໝົດຢູ່ພາຍໃນ ແລະ ພາຍນອກປະເທດ, ຮັບປະກັນການປຸງແຕ່ງເຄື່ອງປາຂອງນາ, ສິນນ້ຳເປັນສ່ວນຫລວງຫລາຍຂອງເຂດແຄວ້ນຕ່າງໆ. ລົງທຶນທາງເລິກ, ເປີດກວ້າງສະມັດຖະພາບການຜະລິດ ແລະ ປ່ຽນແປງໃໝ່ໃຫ້ເຕັກໂນໂລຍີຂອງບັນດາຝຶ້ນຖານທີ່ມີໃນປະຈຸບັນ, ພ້ອມກັນນັ້ນກໍ່ກໍ່ສ້າງໃໝ່ສຳລັບຝຶ້ນຖານການຜະລິດຈຳນວນໜຶ່ງດ້ວຍເຕັກໂນໂລຍີທັນສະໄໝ.

ຍົກລະດັບຄຸນນະພາບບັນດາຝຶ້ນຖານ*ສິເຂົ້າ*ທີ່ມີໃນປັດຈຸບັນ, ກໍ່ສ້າງຝຶ້ນຖານໂຮງສີເຂົ້າ, ເຮັດໃຫ້ເຂົ້າເລື່ອມເພື່ອຂາອອກຕື່ມອີກຈຳນວນໜຶ່ງ, ຍົກສະມັດຖະພາບການສີເຂົ້າເປືອກຂຶ້ນປະມານ 15 ລ້ານໂຕນ ເມື່ອປີ 2000. ປັບປຸງຄືນໃໝ່ ແລະ ກໍ່ສ້າງລະບົບເດີ່ນຕາກເຂົ້າ, ສາງ

ປົກປ້ອງ, ທ້ອນແຮ ທັນຍາຫານໄວ້ຂັ້ນຕໍ່ມ; ຫລຸດຜ່ອນການເສຍຫາຍ ໃນພາຍຫລັງການເກັບກ່ຽວ. ຂະຫຍາຍບັນດາຜົ້ນຖານປຸງແຕ່ງເຄື່ອງ ສຳລອງ, ອາຫານການກິນສຳລັບການລ້ຽງສັດ, ເຂົ້າແປ້ງດີເປັນວັດ ຖຸດິບ.

ລົງທຶນລວງເລິກ, ເປີດກວ້າງບັນດາໂຮງງານຜະລິດ*ນ້ຳຕານ* ທີ່ມີ ໃນປະຈຸບັນ. ກໍ່ສ້າງໃຫມ່ໂຮງງານຈຳນວນຫນຶ່ງທີ່ມີຂະຫນາດກາງ ແລະ ນ້ອຍຢູ່ບໍລິເວນທີ່ມີວັດຖຸດິບນ້ອຍ; ຢູ່ບັນດາບໍລິເວນທີ່ມີວັດຖຸດິບ ຮວມສູນ ຂະຫນາດໃຫຍ່, ກໍ່ສ້າງໂຮງງານທີ່ມີເຄື່ອງປະກອບເຕັກໂນ ໂລຍີອັນກ້າວຫນ້າ, ທັນສະໄຫມ, ລວມທັງແບບຮ່ວມສຳພັນກັບ ພາຍນອກ. ຍອດຜະລິດຕະພັນນ້ຳຕານໃນ ປີ 2000 ປະມານຫນຶ່ງ ລ້ານໂຕນ.

ປ່ຽນແປງໃຫມ່ຕໍ່ເຄື່ອງປະກອບ ແລະ ເຕັກໂນໂລຍີຂອງບັນດາໂຮງ ງານຜະລິດຊາ ທີ່ມີໃນປະຈຸບັນເພື່ອຮັບປະກັນ ຜະລິດຕະພັນທີ່ຈະຂາ ອອກໄດ້; ຮ່ວມສຳພັນ, ຮ່ວມມືກັບຕ່າງປະເທດໃນການກໍ່ສ້າງໂຮງງານ ຜະລິດຊາທັນສະໄຫມຈຳນວນຫນຶ່ງ. ສົ່ງເສີມການຂະຫຍາຍບັນດາກຸ່ມ ປຸງແຕ່ງໃນຂັ້ນປະຖົມດ້ວຍຂະຫນາດຄອບຄົວ, ຮ່ວມສຳພັນລະຫວ່າງ ຄອບຄົວ, ຮ່ວມສຳພັນກັບບັນດາໂຮງງານປຸງແຕ່ງເອ້.

ໃຫ້ປະຊາຊົນຍືມທຶນເພື່ອຂະຫຍາຍ*ກາເຟ*ຢ່າງແຂງແຮງ. ເພີ່ມສະ ມັດຖະພາບການປຸງແຕ່ງ, ຍົກສູງຄຸນນະພາບ ແລະ ເຮັດໃຫ້ຜະລິດຕະ ພັນກາເຟມີຫລາຍຮູບຫລາຍຮ່າງ.

ໃນການປະຕິບັດຮ່າງຍັດຕິຂະຫຍາຍ*ຢາງກະຕັງກະຕິ້ວ*, ຕ້ອງຮັບປະກັນຄວາມຕ້ອງການລົງທຶນເພື່ອຍົກສະມັດຖະພາບການປຸງແຕ່ງຢາງກະຕັງກະຕິ້ວແຕ່ 20.000 ໂຕນໃນປະຈຸບັນຂຶ້ນຫາ 70.000 ໂຕນຕໍ່ປີ. ຂະຫຍາຍບັນດາຂະແໜງການອຸດສາຫະກຳປຸງແຕ່ງຜະລິດຕະພັນຈາກຢາງກະຕັງກະຕິ້ວ.

ຂະຫຍາຍການປຸງແຕ່ງ *ຊິ້ນ, ນ້ຳມົນ, ສົມນ້ຳເຄື່ອງທະເລ, ຜັກໝາກໄມ້* ດ້ວຍຫລາຍຂະໜາດ. ດັດສ້າງບັນດາຝຶ້ນຖານທີ່ມີໃນປະຈຸບັນ ແລະ ກໍ່ສ້າງບັນດາຝຶ້ນຖານໃໝ່ ແລະ ທັນສະໄໝ, ໂດຍສະເພາະຢາງຍິ່ງແມ່ນຮັບໃຊ້ການຂາອອກ.

ຂະຫຍາຍ*ອຸດສາຫະກຳເບົາ* ຢ່າງແຂງແຮງ,ໂດຍສະເພາະຢາງຍິ່ງແມ່ນຕຳ , ຕັດຫຍິບ, ໜັງເກີບ, ເຈ້ຍ, ສິນຄ້າປະເພດຕ່າງໆຂອງການຫັດຖະກຳສິລະປະກຳປະນິດ. ລົງທຶນເຮັດໃຫ້ສາຍພານເຕັກໂນໂລຍີທັນສະໄໝ, ຍົກຄຸນນະພາບ ແລະ ກຳລັງແຂ່ງຂັນຂອງຜະລິດຕະພັນ. ຄ່ອຍຫັນຄ່ອຍປຽນການຮັບເໝົາແຮງງານໃນການຕຳ, ຕັດຫຍິບ, ເຄື່ອງເຮັດດ້ວຍໜັງມາຫາການຊື້ວັດຖຸດິບ, ອຸປະກອນເພື່ອທຳການຜະລິດສິນຄ້າຂາອອກ. ຖືສຳຄັນການຍົກສູງຄວາມສາມາດໃກ້ຊິດຕະຫລາດເພື່ອເປີດຕະຫລາດໃຫ້ກວ້າງອອກ. ຜ່ານຜ່າແກ້ໄຂຄວາມຫລ້າຫລັງຂອງຂະແໜງການເສັ້ນຝ້າຍ, ຕຳແພ, ສູ້ຊົນມາຮອດປີ 2000 ຈະຜະລິດແພ, ໄໝໄດ້ 800 ລ້ານແມັດເຊິ່ງຕິດກັບການຂະຫຍາຍຝ້າຍ ແລະ ເສັ້ນໄໝ. ລົງທຶນຕາມລວງເລິກໃສ່ບັນດາໂຮງງານທີ່ມີໃນປະ

ຈຸບັນ ແລະ ກໍ່ສ້າງໂຮງງານໃຫມ່ຈໍານວນຫນຶ່ງໃຫ້ຕິດພັນກັບການຂະ ຫຍາຍເຂດວັດຖຸດິບເພື່ອຍົກປະລິມານການຜະລິດເຈ້ຍໃນປີ 2000 ຂຶ້ນ 30 ລ້ານໂຕນ. ການຜະລິດເຄື່ອງໃຊ້ໄມ້ສອຍດ້ວຍໂລຫະ, ດ້ວຍທາດ ຢາງ, ຜະລິດທາດຖູລ້າງ, ຜະລິດພັນວິຈິດຕະກໍາໃຫ້ແກ່ຄວາມຕ້ອງ ການພາຍໃນປະເທດຢ່າງພຽງພໍ ແລະ ມີສ່ວນຂາອອກ.

ສືບຕໍ່ຍູ້ແຮງການຊອກຫາ, ສືບຮູ້, ຂຸດຄົ້ນ*ນ້ໍາມັນ ແລະ ອາຍແກັດ*, ນ້ໍາມັນດິບໃນປີ 2000 ບັນລຸປະມານ 16 ລ້ານໂຕນ ແລະ ອາຍແກັດ ບັນລຸ 3,7- 4 ຕື້ແມັດກ້ອນ. ເຮັດໃຫ້ບັນດາຮູບການຮ່ວມມືຮ່ວມສໍາ ພັນທຸລະກິດມີຫລາຍຮູບຫລາຍແບບ, ຍົກສູງຄວາມສາມາດຂອງອຸດ ສາຫະກໍານ້ໍາມັນອາຍແກັດແຫ່ງຊາດທັງໃນການສືບຮູ້, ຂຸດຄົ້ນ, ປຸງ ແຕ່ງ ແລະ ບໍລິການ. ກໍ່ສ້າງແຜນກໍານົດສັງລວມໃນການໃຊ້ອາຍແກັດ ທໍາມະຊາດ, ອາຍແກັດຮ່ວມທາງ[1] ສໍາເລັດວິທີການທໍ່ອາຍແກັດ 2 ແຫ່ງເພື່ອໃຊ້ໃຫ້ບັນລຸ 4,5 - 5 ຕື້ ແມັດກ້ອນ ຕໍ່ປີ. ກໍ່ສ້າງໂຮງງານ ຕອງນ້ໍາມັນເລກທີ 1 (6,5 ລ້ານໂຕນຕໍ່ປີ). ກຽມກໍ່ສ້າງໂຮງງານຕອງ ນ້ໍາມັນເລກທີ 2 (ຫລືເປີດກວ້າງໂຮງງານຕອງນ້ໍາມັນເລກທີ 1 ແລະ ກໍ່ສ້າງຂະແຫນງການອຸດສາຫະກໍາໄຈ້ແຍກທາດນ້ໍາມັນ.

ເພີ່ມແຫລ່ງໄຟຟ້າໂດຍໄວ; ສໍາເລັດການກໍ່ສ້າງ ແລະ ກໍ່ສ້າງຊ້ອນ ຟື້ນຖານໄຟຟ້າໃຫຍ່ຈໍານວນຫນຶ່ງເພື່ອເພີ່ມຂຶ້ນຕື່ມປະມານ 3000

---

[1] ອາຍແກັດທີ່ເກີດຂຶ້ນ ແລະ ຂຸດຄົ້ນເປັນພ້ອມບາດຽວກັບນ້ໍາມັນ.

MW ໃນປະລິມານການຜະລິດ ແລະ ໃຊ້ໄຟຟ້າທີ່ຈະລະດົມໃນ 5 ປີ ທີ່ຈະເຖິງນີ້ ແລະ ຊ້ອນປະມານ 1000-MW ໃນປະລິມານການຜະ ລິດ ແລະ ໄຊ້ໄຟຟ້າໃຫ້ແກ່ພາຍຫລັງປີ 2000. ຜະລິດພັນໄຟຟ້າໃນປີ 2000 ປະມານ 30 ຕື້ KWh. ກໍ່ສ້າງ, ດັດສ້າງລະບົບສະຖານທີ່ຜັນ ກຳລັງດັນຂອງໄຟຟ້າ ແລະ ສາຍສົ່ງໄຟຟ້າໃຫ້ຄົບຊຸດກັບແຫລ່ງໄຟຟ້າ. ມີນະໂຍບາຍ ແລະ ວິທີການອັນຕັ້ງໜ້າ, ມີຄວາມສັກສິດເພື່ອໃຊ້ໄຟ ຟ້າຢ່າງສົມເຫດສົມຜົນ, ປະຢັດ.

ຂະຫຍາຍຂະແໜງການ*ຖ່ານຫີນ* ໂດຍສຸມໃສ່ການເພີ່ມປະລິມານ ການຜະລິດທີ່ມີໃນປະຈຸບັນດ້ວຍການຟື້ນຟູ, ດັດສ້າງເປີດກວ້າງ ບໍ່ຖ່ານ ຈຳນວນໜຶ່ງ. ຮັກສາປະລິມານການຜະລິດຂອງບໍ່ຖ່ານຕ່າງໆ ທີ່ພວມ ຂຸດຄົ້ນ. ເມື່ອປີ 2000, ສຳລັບຖ່ານສະອາດບັນລຸປະມານ 10 ລ້ານໂຕນ.

ເພີ່ມປະລິມານການຜະລິດ*ຝຸ່ນຝົດຟ*, ໃຫ້ບັນລຸຜະລິດຕະພັນ 1,2 ລ້ານໂຕນເມື່ອປີ 2000. ດັດສ້າງ ແລະ ເປີດກວ້າງໂຮງງານຜະລິດ ຝຸ່ນອູເຣທີ່ຮ່າບັກ. ກໍ່ສ້າງໂຮງງານຜະລິດຝຸ່ນອູເຣເລກທີ 1 ໂດຍມີປະ ລິມານການຜະລິດ 6 - 8ແສນໂຕນຕໍ່ປີ. ກໍ່ສ້າງຊ້ອນໂຮງງານເລກທີ 2 ທີ່ມີປະລິມານການຜະລິດເໜືອນດຽວກັນຈະນຳເຂົ້າການເດີນເຄື່ອນ ໃນແຜນການ 5 ປີ ຕໍ່ໄປ.

ໃຫ້ບັນດາໂຮງງານ*ຊີມັງ* ທີ່ພວມກໍ່ສ້າງນັ້ນທຳການຜະລິດ; ລະດົມ ແລະ ຍືມທຶນເພື່ອເປີດກວ້າງ, ກໍ່ສ້າງ ໂຮງງານຊີມັງໃໝ່ຈຳນວນໜຶ່ງ, ລວມທັງເຕົາຕັ້ງ; ຮ່ວມສຳພັນທຸລະກິດກັບປະເທດນອກໃນການກໍ່ສ້າງ

ໂຮງງານຈຳນວນໜຶ່ງຂຶ້ນຕື່ມອີກ. ຜະລິດພັນຊີມັງເມື່ອປີ 2000 ບັນ ລຸປະມານແຕ່ 18-20 ລ້ານໂຕນ.

ລົງທຶນໃນການປັບປຸງບັນດາສາຍພານຜະລິດ*ເຫລັກກ້າ* ທີ່ມີໃນປະ ຈຸບັນໃຫ້ສຳເລັດຜົນດີ. ລົງມືກໍ່ສ້າງ ໂຮງງານຜະລິດເຫລັກກ້າແຫ່ງໃໝ່ ຈຳນວນໜຶ່ງ, ເອົາໃຈໃສ່ຢ່າງຈົດຈໍ່ເຖິງຂອດສ້າງໜໍ່ແໜນ. ເມື່ອ ປີ 2000 ການຜະລິດເຫລັກກ້າບັນລຸ 2 ລ້ານໂຕນ. ກຽມກໍ່ສ້າງບໍ່ເຫລັກ ແທກເຄ ແລະ ໂຮງງານຜະລິດເຫລັກກ້າທີ່ປະສານກັນຕາມຫລັກດຳ ເນີນໄປດ້ວຍຂະໜາດໃຫຍ່.

ເຮັດໃຫ້ເຄື່ອງປະກອບ ແລະ ເຕັກໂນໂລຢີມີການປຽນແປງໃໝ່ ເພື່ອຫັນເປັນຫັນສະໄໝກ້າວໜຶ່ງສຳລັບບັນດາ ໂຮງງານ*ກົນຈັກ* ທີ່ມີ ໃນປະຈຸບັນ. ປະສານສົມທົບການປະດິດພາຍໃນປະເທດກັບການຂາ ເຂົ້າເພື່ອປະກອບເຄື່ອງຈັກເຄື່ອງຍົນສ່ວນໜຶ່ງ, ບັນດາສາຍພານ, ເຄື່ອງປະກອບໃຫ້ແກ່ຟື້ນຖານເສດຖະກິດ ແລະ ມີຜະລິດຕະພັນຂາອອກ. ໃນສະເພາະໜ້ານີ້, ສຸມໃສ່ການຜະລິດເຄື່ອງປະກອບທັງໝົດແກ່ອຸດ ສາຫະກຳປຸງແຕ່ງກະເສດຕະພັນ, ພາຫະນະຂົນສົ່ງຊະນິດຕ່າງໆ, ເຄື່ອງປະກອບໃນການຜະລິດຊີມັງເຕົ້າຕັ້ງ, ເຄື່ອງປະກອບໃນການຜະ ລິດດິນຈີ່ດິນຂໍ, ບັນດາເຄື່ອງອາໄຫລ່, ພາກສ່ວນປະກອບຈັກສຳລັບ ແທນທີ...ຂະຫຍາຍຢ່າງແຂງແຮງສຳລັບອຸດສາຫະກຳຕໍ່ກຳປັ່ນ ແລະ ສ້ອມແປງກຳປັ່ນທະເລ, ເຂົ້າຈັກ ແລະ ປະດິດລົດໂອໂຕ, ລົດຈັກ, ປະ ດິດພາກສ່ວນປະກອບຈັກສຳລັບໄຟຟ້າຂະໜາດກາງ ແລະ ເດວອນ

ເຕ. ເລີ່ມປະດິດພາກສ່ວນປະກອບຈັກສຳລັບໄຟຟ້າມີຄວາມດັນສູງ, ໂມເຕີທີ່ມີສະມັດຖະພາບໃນການເຄື່ອນໄຫວຂະໜາດໃຫຍ່, ໂມເຕີໃຫ້ແກ່ກຳປັ່ນທີ່ເຄື່ອນໄຫວຢູ່ໄກຝັ່ງ. ຕອບສະໜອງຄວາມຕ້ອງການກ່ຽວກັບເຄື່ອງໃຊ້ໄມ້ສອຍດ້ວຍມືກຳ. ເພີ່ມກຳລັງຄວາມສາມາດໃນການສ້ອມແປງ; ຟື້ນຟູເຄື່ອງຈັກ, ພາກສ່ວນປະກອບເຂົ້າຈັກ ແລະ ຂະຫຍາຍການບໍລິການໃນພາຍຫລັງການຂາຍຜະລິດຕະພັນ.

ກໍ່ສ້າງ ແລະ ຂະຫຍາຍ*ອຸດສາຫະກຳເອເລັກຕຣ໋ອ ແລະ ເຕັກໂນໂລຢີສື່ສານ*, ຄັດເລືອກ ທິດເດີນຈຳນວນໜຶ່ງເຂົ້າທັນສະໄໝໂດຍໄວ ເພື່ອຮັບໃຊ້ການປະດິດເຄື່ອງຈັກ ແລະ ເຮັດໃຫ້ຂອດຈຳນວນໜຶ່ງເປັນອັດຕະໂນມັດເຊິ່ງມີຜະລິດຕະພັນຂາອອກ. ຄ່ອຍຍົກຄ່ອຍຍໍລະດັບປະດິດສ່ວນປະກອບຕົ້ນຕໍ, ເຄື່ອງອາໄຫລ່ພາຍໃນປະເທດ. ຂະຫຍາຍການບໍລິການຄອມພິວເຕ, ໂດຍສະເພາະຢ່າງຍິ່ງແມ່ນຊອບແວນຳໃຊ້ໃນບັນດາຂົງເຂດຄົ້ນຄວ້າວິທະຍາສາດ, ການຜະລິດ, ການຄຸ້ມຄອງ ແລະ ຊີວິດການເປັນຢູ.

ປະສານສົມທົບຢ່າງແໜ້ນໜາລະຫວ່າງເສດຖະກິດກັບການປ້ອງກັນຊາດ ໃນການວາງແຜນກຳນົດ ແລະ ພັດທະນາບັນດາເຂດເສດຖະກິດ, ບັນດາຂະແໜງການອຸດສາຫະກຳ, ເອົາຜົນສັກສິດທາງເສດຖະກິດຕິດພັນກັບຄວາມຕ້ອງການຮັບປະກັນການປ້ອງກັນຊາດ, ປ້ອງກັນຄວາມສະຫງົບໃຫ້ເປັນຫລັກຖານໃຫ້ແກ່ບັນດາແຜນນະໂຍບາຍອັນລະອຽດ.

ກໍ່ສ້າງ, ຂະຫຍາຍ*ອຸດສາຫະກຳສຳລັບການປ້ອງກັນຊາດ*, ສູ້ຊົນ ຄ່ອຍຜະລິດເຄື່ອງປະກອບເຂົ້າຈັກອັນສຳຄັນໄດ້, ຕອບສະໜອງຄວາມ ຕ້ອງການທີ່ຈຳເປັນອັນໜ້ອຍທີ່ສຸດເພື່ອຮັບປະກັນກຳລັງການຜະລິດ ຂອງກຳລັງປະກອບອາວຸດ, ເພີ່ມທະວີກຳລັງບົ່ມຊ້ອນຂອງການປ້ອງ ກັນຊາດເປັນກ້າວໆ, ມີກຳລັງຢ່າງພຽງພໍເພື່ອປົກປັກຮັກສາປະເທດ ຊາດ.

ຍົກສູງກຳລັງຄວາມສາມາດຂອງບັນດາຂະແໜງການ ແລະ ບັນ ດາຝົ້ນຖານເສດຖະກິດໃນການຕອບສະໜອງຄວາມຕ້ອງການດ້ານວັດ ຖຸ, ເຕັກນິກໃຫ້ແກ່ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ. ຮັບປະ ກັນໃຫ້ມີຄວາມສາມາດໃນການລະດົມທຸກກຳລັງບົ່ມຊ້ອນຂອງເສດຖະ ກິດຢ່າງໄວວາເພື່ອຮັບໃຊ້ການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ໃນເມື່ອສະພາວະການກໍລະນີຮຽກຮ້ອງຕ້ອງການ.

ຂຸດຄົ້ນກຳລັງບົ່ມຊ້ອນຂອງບັນດາຝົ້ນຖານອຸດສາຫະກຳສຳລັບ ການປ້ອງກັນຊາດຢ່າງມີຜົນສັກສິດເພື່ອເຂົ້າຮ່ວມການກໍ່ສ້າງເສດຖະ ກິດ. ມີກົນໄກ, ນະໂຍບາຍຄຸ້ມຄອງບັນດາວິສາຫະກິດປ້ອງກັນຊາດ ແລະ ກຳລັງກອງທັບ, ກອງຕຳຫລວດໃຫ້ທຳການເສດຖະກິດຢ່າງຖືກ ຕ້ອງຕາມກົດໝາຍ ແລະ ສອດຄ່ອງກັບລັກສະນະສະເພາະຂອງການ ປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ.

3 - ໂຄງການຂະຫຍາຍໂຄງປະກອບໂຄງລ່າງ

ຈຸດໝາຍ:

ຂະຫຍາຍໂຄງປະກອບ ໂຄງ ລ່າງ ຮັບປະກັນບັນດາເງື່ອນໄຂທີ່ຈຳ ເປັນໃຫ້ແກ່ໜ້າທີ່ພັດທະນາເສດຖະກິດ-ສັງຄົມໃນ 5 ປີ 1996-2000, ທັງກຽມເງື່ອນໄຂໃຫ້ແກ່ບາດກ້າວຂະຫຍາຍຕົວໃນພາຍຫລັງປີ 2000.

ຮັບປະກັນການສັນຈອນລຸລ່ວງໃນທຸກລະດູຂອງບັນດາສາຍຄົມມະນາ ຄົມທີ່ເປັນສາຍເລືອດ, ສາຍຕັ້ງ ແລະ ບັນດາສາຍຂວາງໄປສູ່ເຂດ ແຄວ້ນຕ່າງໆ, ບັນດາຈຸດສຸມເຂດພູດອຍ. ການສະໜອງໄຟຟ້າ, ນ້ຳ, ຄົມມະນາຄົມ, ສື່ສານກໍ່ລ້ວນແລ້ວແຕ່ຕາມຄວາມຕ້ອງການຂອງລະ ດັບຂະຫຍາຍຕົວໃນແຕ່ລະເຂດແຄວ້ນ. ຂະຫຍາຍໂຄງປະກອບໂຄງ ລ່າງຢູ່ເຂດພູດອຍ, ຊົນນະບົດ, ເຊິ່ງກ່ອນອື່ນໝົດແມ່ນຖະໜົນຫົນ ທາງ, ສື່ສານ, ໄຟຟ້າ, ນ້ຳສະອາດ, ໂຮງຮຽນ, ສຸກສາລາ. ສຸມກຳ ລັງໃນການແກ້ໄຂນ້ຳໃຫ້ບັນດາແຂວງຢູ່ພາກກາງ, ທາງຄົມມະນາຄົມ ໃຫ້ແກ່ບັນດາເຂດພູດອຍ ແລະ ເຂດທົ່ງພຽງແມ່ນ້ຳກົວລອງ.

ໜ້າທີ່ ແລະ ວິທີແກ້ໄຂ:

. ຜ່ານຜ່າແກ້ໄຂການລົ້ງຂັ້ນ, ຍົກລະດັບຄຸນນະພາບໃຫ້ບັນດາກິດຈະ ການ ແລະ ບັນດາສາຍ*ຄົມມະນາຄົມ* ອັນສຳຄັນຍິ່ງເປັນກ້າວໆ. ລົ້ງທຶນ ກໍ່ສ້າງໃໝ່ຕາມທິດຄົບຊຸດ, ທັນສະໄໝສຳລັບບັນດາກິດຈະການຄົມມະ ນາຄົມຢູ່ທີ່ບັນດາດ່ານ(ສະໜາມບິນ, ທ່າເຮືອທະເລສາກົນ), ບັນດາ ລະບ່ຽງທາງຍ່າງອັນສຳຄັນເຊື່ອມຕໍ່ດ່ານກັບພາຍໃນດິນແດນ, ຢູ່ທີ່ບັນ ດາເຂດເສດຖະກິດ ທີ່ເປັນຈຸດສຸມ, ເສັ້ນທາງຫລວງເໜືອ-ໃຕ້.

ສຸມໃສ່ການຟື້ນຟູ, ຍົກລະດັບຄຸນນະພາບໃຫ້ແຕ່ລະຍ່ານທາງຂອງ

ບັນດາເສັ້ນທາງບົກສຳຄັນຕົ້ນຕໍ, ເຊິ່ງເປັນພິເສດແມ່ນບັນດາເສັ້ນທາງແຫ່ງຊາດ; ກໍ່ສ້າງຂົວໃຫຍ່ຈຳນວນໜຶ່ງ. ເປີດກວ້າງ, ຍົກລະດັບຄຸນນະພາບໃຫ້ບັນດາສາຍຕັ້ງ, ບັນດາຖະໜົນຕົ້ນຕໍ ແລະ ເສັ້ນທາງອ້ອມວຽນຢູ່ນະຄອນຫລວງຮ່າໂນ້ຍ ແລະ ນະຄອນໂຮ່ຈິມິນ. ຍົກລະດັບຄຸນນະພາບໃຫ້ບັນດາເສັ້ນທາງບົກຂອງແຂວງຕ່າງໆ ຢູ່ຊາຍແດນ, ເຂດພູດອຍ; ບັນດາເສັ້ນທາງພາໄປເຖິງໃຈກາງຂອງບັນດາເມືອງເຂດສອກຫລີກ, ເຂດຫ່າງໄກ.

ຍົກລະດັບຄຸນນະພາບ, ປັບປຸງຕາມ່າງທາງລົດໄຟທີ່ມີໃນປະຈຸບັນ, ຮັບປະກັນໃຫ້ລົດໄຟແລ່ນຢ່າງປອດໄພ, ສະດວກດີ. ປະກອບເຄື່ອງໃຫ້ລະບົບສື່ສານ ສັນຍານເຄື່ອງອັດຕະໂນມັດ ແລະ ໂທລະສັບອັດຕະໂນມັດຢູ່ບັນດາສະຖານທີ່ ລົດໄຟໃຫຍ່ເພື່ອຮັບປະກັນກຳກັບບັນຊາໃຫ້ລົດໄຟແລ່ນຢ່າງປອດໄພ. ກຽມກໍ່ສ້າງເສັ້ນທາງລົດໄຟຮ່າໂນ້ຍ-ຮ້າລອງ, ນະຄອນໂຮ່ຈິມິນ-ໜວຸງເຕົ່າ, ດັດສ້າງເສັ້ນທາງເໜືອ-ໃຕ້ໃນໄລຍະຜ່ານຮ່ອມພູຫາຍເວີນ.

ເປີດກວ້າງ ແລະ ຍົກລະດັບຄຸນນະພາບໃຫ້ເດີ່ນບິນສາກົນ 3 ແຫ່ງຄ່ອຍບັນລຸລະດັບທັນສະໄໝ, ສາມາດຕ້ອນຮັບຄົນໂດຍສານແຕ່ 12-13 ລ້ານຫ່ຽວຄົນຕໍ່ປີ. ຍົກລະດັບຄຸນນະພາບ ໃຫ້ບັນດາເດີ່ນບິນຂະໜາດນ້ອຍໃນເຂດແຄວ້ນຕ່າງໆ ຄືກາດປີ, ຜຸບາຍ, ຍາຈາງ, ກາມລີ, ກາເມົາ, ກັນເທີ... ເປີດບັນດາສາຍບິນໃໝ່ຂຶ້ນຕື່ມ, ເພີ່ມຈຳນວນຍົນເພື່ອຮັບປະກັນຄວາມຕ້ອງການທາງການບິນສາກົນ ແລະ ພາຍໃນ

ປະເທດ.

ປັບປຸງ, ເປີດກວ້າງເພື່ອເພີ່ມກຳລັງຄວາມສາມາດຂອງບັນດາທ່າເຮືອທະເລທີ່ມີໃນປະຈຸບັນ, ເປີດກວ້າງທ່າເຮືອຫາຍຝອງ, ກຽມ ແລະ ກໍ່ສ້າງເປັນກ້າວໆສຳລັບທ່າເຮືອທະເລກ່າຍເລີນ, ເຈີນໄມ, ລຽນຈ໊ຽວ, ຢຸງກວັດ, ເບ່ນດິ່ງ-ຊາວມາຍ. ກໍ່ສ້າງທ່າເຮືອກັ່ນເທີເປັນທ່າເຮືອໃຈກາງຂອງທ່ຽງແມ່ນ້ຳກ໋ວລອງ. ຂູດກ້ຽງ, ດັດສ້າງບັນດາຝັ່ນແມ່ນ້ຳລຳເຊ ແລະ ຍົກລະດັບຄຸນນະພາບໃຫ້ບັນດາທ່າເຮືອຢູ່ແມ່ນ້ຳຕົ້ນຕໍ, ຮັບປະກັນລະບົບທາງນ້ຳຢູ່ທ່ຽງພຽງບັກໂບ້ເຊ່ຶ່ງເຮືອຂົນສົ່ງຂະໜາດ 1000 ໂຕນສາມາດແລ່ນໄປໄດ້ ແລະ ຢູ່ທ່ຽງພຽງນາມໂບ້ເຊ່ຶ່ງກຳປັ່ນ 2000 ໂຕນສາມາດແລ່ນເດີນເລິກເຂົ້າໃນແຜ່ນດິນ.

ຂະຫຍາຍຕາ*ໜ່າງໄປສະນີໂທລະຄົມມະນາຄົມ* ທັນສະໄໝ, ຄົບຊຸດ, ເປັນເອກະພາບ, ທົ່ວເຖິງ ແລະ ການບໍລິການຫລາຍໜ້າທີ່, ຕອບສະໜອງຄວາມຕ້ອງການໃຫ້ຫລາຍທີ່ສຸດເທົ່າທີ່ຈະຫລາຍໄດ້ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບດ້ວຍຄຸນນະພາບສູງ, ລາຄາສຳເລັດຮູບຫລຸດລົງ. ຂະຫຍາຍອຸດສາຫະກຳສຳລັບ ໄປສະນີໂທລະຄົມມະນາຄົມ. ເມື່ອປີ 2000 ບັນລຸຄວາມໜາແໜ້ນ ແຫ່ງໂທລະສັບ 6 ເຄື່ອງຕໍ່ 100 ຄົນ ແລະ ຕາແສງຕ່າງໆ ຢູ່ຊົນນະບົດ, ເຂດສອກ່ຫລີກ, ເຂດຫ່າງໄກເກືອບທັງໝົດນັ້ນຕ່າງກໍ່ມີ ເຄື່ອງໂທລະສັບ.

ຂະຫຍາຍ ແລະ ຍົກລະດັບຄຸນນະພາບຂອງຕາ*ໜ່າງ*ໄຟຟ້າ, ຮັບປະ

ກັນ*ສະຫນອງໄຟຟ້າ* ຢ່າງພຽງພໍ, ເປັນປົກກະຕິສຳລັບບັນດາຕົວເມືອງ ແລະ ເຂດອຸດສາຫະກຳ. ມາຮອດປີ 2000 ຈະມີເມືອງເຖິງ 100% ແລະ ຈຳນວນຕາແສງເຖິງ 80% ມີໄຟຟ້າໃນຕາມ່າງຫລວງ ແລະ ໄຟຟ້າກັບທີ່.

ກໍ່ສ້າງແຜນກຳນົດຮັກສາ ແລະ ຂຸດຄົ້ນ*ບໍ່ນ້ຳ* ຢ່າງສົມເຫດສົມຜົນ. ປ໋ອແປງສະພາບການສະຫນອງນ້ຳ ແລະ ລະບາຍນ້ຳຢູ່ຕົວເມືອງໃຫ້ດີຂຶ້ນ, ແກ້ໄຂໂດຍຟື້ນຖານຕໍ່ລະບົບສະຫນອງນ້ຳຢູ່ຮ່າໂນ້ຍ, ນະຄອນໂຮ່ຈິມິນ, ຫາຍຝອງ, ດ່າໜັງ, ກັ່ນເທີ, ຮ້າລອງ ແລະ ເຫດສະບານແຂວງ ຈຳນວນໜຶ່ງ, ຂອບເຂດເສັ້ນທາງ 51, ບັນດາເຂດຜະລິດຂາອອກ ແລະ ເຂດອຸດສາຫະກຳ. ສືບຕໍ່ປະຕິບັດໂຄງການນ້ຳສະອາດຢູ່ຊົນນະບົດໂດຍສະເພາະຢ່າງຍິ່ງແມ່ນຢູ່ທົ່ງພຽງແມ່ນ້ຳກົວລອງ ແລະ ເຂດພູດອຍ.

4 - ໂຄງການພັດທະນາວິທະຍາສາດ ແລະ ເຕັກໂນໂລຢີ, ຮັບປະກັນສິ່ງແວດລ້ອມຊີວະຖາບ.

ຈຸດຫມາຍ:

ພັດທະນາວິທະຍາສາດ ແລະ ເຕັກໂນໂລຢີ, ຍົກສູງກຳລັງຄວາມສາມາດຊີວະພາຍໃນ, ຖືສິ່ງນັ້ນເປັນປັດໄຈອັນສຳຄັນເພື່ອຊຸກຍູ້ພາລະກິດຫັນເປັນອຸດສາຫະກຳ, ຫັນເປັນທັນສະໄຫມ. ກໍ່ສ້າງສິ່ງທີ່ເປັນຫລັກຖານໃຫ້ແກ່ການອ້າງເຫດທາງວິທະຍາສາດໃຫ້ແກ່ການກຳນົດທິດພັດທະນາປະເທດຊາດ, ນະໂຍບາຍຕ່າງໆ ແຜນນະໂຍບາຍຕ່າງໆ ຂອງພັກ

ປຽນແປງໃໝ່ສຳລັບພາຫະນະເຕັກນິກໃນການກວດກາ, ວັດຜອງ, ກຳກັບບັນຊາ, ນຳໃຊ້ເຕັກນິກຫັນເປັນອັດຕະໂນມັດເພື່ອຍົກສູງຄຸນນະພາບຂອງຜະລິດຕະພັນໃນບັນດາຂະແໜງການຜະລິດ.

ຂະຫຍາຍບັນດາເຕັກໂນໂລຍີສູງ ມາຮອດປີ 2000 ຈະກໍ່ສ້າງພື້ນຖານໂຄງລ່າງຂຶ້ນໄດ້ໃຫ້ແກ່ເຕັກໂນໂລຍີສີ່ສາມ, ນຳໃຊ້***ເຕັກໂນໂລຍີສີ່ສາມ*** ໃນບັນດາຂົງເຂດເສດຖະກິດແຫ່ງຊາດທັງໝົດ, ສ້າງການຫັນປຽນຂຶ້ນຢ່າງຈະແຈ້ງທາງດ້ານສະມັດຖະພາບ, ຄຸນນະພາບ ແລະ ຜົນສັກສິດ; ເຮັດໃຫ້ຕາມ່ານສີ່ສາມແຫ່ງຊາດ ປະກົດເປັນຮູບ, ຮ່ວມສຳພັນກັນກັບຕາມ່ານສີ່ສາມຈຳນວນໜຶ່ງຂອງສາກົນ. ຂະຫຍາຍ**ເຕັກໂນໂລຍີຊີວະສາດ** ແນໃສ່ສ້າງ ແລະ ຂະຫຍາຍບັນດາແນວປູກ, ສັດລ້ຽງໂຕໃໝ່ໆ ໂດຍໄວ; ປຸງແຕ່ງກະເສດຕະພັນ, ເຄື່ອງປ່າຂອງດົງ, ສິນນ້ຳ; ຜະລິດວັກຊີນ ແລະ ປະຮາເຊຮອມ ຊະນິດຕ່າງໆ, ບັນດາຜະລິດຕະພັນກວດພະຍາດໂດຍໄວ ແລະ ຊັດເຈນ. ຂະຫຍາຍບັນດາເຕັກໂນໂລຍີດັດ ແລະ ແກ້ໄຂການເປື້ອນເປິຂອງສິ່ງແວດລ້ອມ. ຂະຫຍາຍ**ເຕັກໂນໂລຍີອຸປະກອນ**, ຄົ້ນຄວ້າຜະລິດອຸປະກອນໃໝ່ຈຳນວນໜຶ່ງທີ່ມີຜົນສັກສິດສູງ, ຂະຫຍາຍອຸປະກອນຊະນິດຕ່າງໆ ທີ່ມີລະດັບໜັ້ນໜາຮວຍອັນໃຫຍ່ໂຕ ແລະ ເງື່ອນໄຂ ອາກາດເຂດຮ້ອນອັນເຄັ່ງຄັດກໍ່ທົນໄດ້. ຂະຫຍາຍເຕັກນິກຫັນເປັນອັດຕະໂນມັດຢ່າງຄົບຊຸດຢູ່ໃນໂຮງງານກຸນແຈຈຳນວນໜຶ່ງ, ນຳໃຊ້ເຕັກໂນໂລຍີຫັນເປັນອັດຕະໂນມັດຢູ່ບັນດາຂອດຕັດສິນຄຸນນະພາບຂອງຜະລິດຕະພັນ.

ແລະ ລັດ; ຮັບເອົາບັນດາຜົນງານວິທະຍາສາດເຕັກໂນໂລຢີຂອງໂລກ, ເລືອກເຟັ້ນ ແລະ ເປັນເຈົ້າການຕໍ່ເຕັກໂນໂລຢີທີ່ມອບສົ່ງເຂົ້າຫວຽດ ນາມ. ໃນບາດກ້າວເບື້ອງຕົ້ນໃຫ້ຂະຫຍາຍຂົງເຂດເຕັກໂນໂລຢີສູງຈຳ ນວນໜຶ່ງເຊັ່ນ: ເອເລັກຕຣົງ, ກອມຜິວເຕ, ເຕັກໂນໂລຢີຊີວະສາດ, ອຸ ປະກອນໃໝ່ ແລະ ຫັນເປັນອັດຕະໂນມັດ.

ຊຸກຍູ້ການປ່ຽນແປງໃໝ່ສຳລັບເຕັກໂນໂລຢີໃນບັນດາຂະແໜງ ການຜະລິດແຕ່ 10% ຕໍ່ປີຂຶ້ນໄປ, ເຊິ່ງເອົາໃຈໃສ່ເປັນພິເສດເຖິງຄຸນນະ ພາບຂອງເຕັກໂນໂລຢີ; ສຸມໃສ່ການນຳໃຊ້ເຕັກໂນໂລຢີອັນກ້າວໜ້າ, ພາເຕັກໂນໂລຢີຂອງປະເທດເຮົາບັນລຸລະດັບຊັ້ນກາງຂອງພາກພື້ນ ເປັນກ້າວໆ.

ສ້າງບາດກ້າວຜັນປ່ຽນຢ່າງແຈ້ງຊັດໃນການຮັກສາສິ່ງແວດລ້ອມ ຊີວະຖາບ.

ໜ້າທີ່ ແລະ ວິທີແກ້ໄຂ:

ປ່ຽນແປງໃໝ່ ແລະ ຍົກສູງລະດັບເຕັກ ໂນ ໂລ ຍີໃນບັນດາຂະ ແໜງການຜະລິດ ແລະ ບໍລິການຕົ້ນຕໍ, ໄປໂດຍກົງໃສ່ເຕັກໂນໂລຢີ ທັນສະໄໝຕໍ່ບັນດາຂົງເຂດຜະລິດກຸນແຈທີ່ມີການກະທົບເຖິງຫລາຍຂະ ແໜງການອື່ນໆ, ບັນດາຂົງເຂດຜະລິດຜະລິດຕະພັນຂາອອກ, ບັນດາ ຂົງເຂດລົ້ງທຶນໃໝ່. ຈັດຕັ້ງໃຫ້ດີຕໍ່ການຄວບຄຸມກວດກາບັນດາເຕັກ ໂນໂລຢີຂາເຂົ້າ. ສືບຕໍ່ບູລະນະໃຫ້ດີຂຶ້ນ ແລະ ເຮັດໃຫ້ເຕັກໂນໂລຢີມີ ຄວາມປ່ຽນແປງໃໝ່ໃນຂະແໜງການອາຊີບມູນເຊື້ອຈຳນວນໜຶ່ງ,

ກໍ່ສ້າງບັນດາເຂດເຕັກໂນໂລຍີລະດັບສູງຢູ່ຮ່າໂນ້ຍ ແລະ ນະຄອນ ໂຮ່ຈີມິນ, ເຊິ່ງເປັນບ່ອນເຕົ້າໂຮມບັນດາອົງການວິທະຍາສາດ ແລະ ບັນດາວິສາຫະກິດຢູ່ພາຍໃນ ແລະ ພາຍນອກປະເທດ, ແນໃສ່ສ້າງບັນ ດາເຕັກໂນໂລຍີສູງ ແລະ ບັນດາຂະແໜງການທີ່ອີງໃສ່ເຕັກໂນໂລຍີ ສູງ.

ພັດທະນາວິທະຍາສາດສັງຄົມ ແລະ ວັດທະນະທຳ ມະນຸດຊາດ, ກຳ ແໜ້ນຂໍ້ວິນິດໄສ ຟື້ນຖານຂອງທິດສະດີມາກ-ເລນິນ ແລະ ແນວຄິດ ໂຮ່ຈີມິນ, ຄົ້ນຄວ້າບັນດາບັນຫາທິດສະດີຂອງກິດຈະການປ່ຽນແປງ ໃໝ່ ແລະ ຂະຫຍາຍຕົວໃນໄລຍະໃໝ່; ໄຈ້ແຍກໃຫ້ເຫັນແຈ້ງຫາດແທ້ ຂອງຟື້ນຖານເສດຖະກິດທີ່ມີຫລາຍພາກສ່ວນເຄື່ອນໜຸນຕາມກົນໄກ ຕະຫລາດຕາມກຳນົດທິດສັງຄົມນິຍົມ; ໄຈ້ແຍກໃຫ້ເຫັນແຈ້ງບັນຫາລັດ ອຳນາດກົດໝາຍໃນເງື່ອນໄຂພັກກຳອຳນາດ, ຍົກສູງບົດບາດນຳພາ ຂອງພັກໃນໄລຍະໃໝ່; ກໍ່ສ້າງບັນດາແຜນແກ້ໃຫ້ແກ່ວິວັດທະນາການ ປະຕິບັດການຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝ; ຍືນຢັນລະບົບ ນະໂຍບາຍສັງຄົມໃນໄລຍະຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝ; ກໍ່ສ້າງວັດທະນະທຳອັນກ້າວໜ້າ, ມີເອກະລັກແຫ່ງຊາດອັນຈູບຈ້າວ; ຄົ້ນຄວ້າວາງຍຸດທະສາດປ້ອງກັນຄວາມສະຫງົບ-ປ້ອງກັນຊາດ...

ຂະຫຍາຍບັນດາຂະແໜງການວິທະຍາສາດທຳມະຊາດ, ຄົ້ນຄ້ວາ ບັນ ຫາ ຟື້ນຖານຈຳນວນໜຶ່ງທີ່ມີແວ່ໜ້າວັງຂອງວິທະຍາສາດໃນປະຈຸ ບັນນະການ ແລະ ໃນອະນາຄົດຕະການແນໃສ່ໃກ້ຊິດກັບລະດັບຂອງ

ໂລກໃນບັນດາຂົງເຂດກ່ຽວກັບຄະນິດສາດ, ອຳນວຍການວິທະຍາ ແລະ ວິທະຍາສາດຄິດໄລ່, ກ່ຽວກັບຟີຊິກວິທະຍາ, ເມການິກວິທະຍາ, ເຄມີສາດ, ຊີວະສາດ ແລະ ບັນດາວິທະຍາສາດກ່ຽວກັບໜ່ວຍພື້ນ.

ນຳໃຊ້ບັນດາວິທີການວິທະຍາສາດ-ເຕັກໂນໂລຍີ ແລະ ປ່ຽນແປງໃໝ່ສຳລັບສະຖາບັນຍັດ, ນະໂຍບາຍຄຸ້ມຄອງແມ່ໃສ່ຍົກສູງ *ຄຸນນະພາບ ແລະ ກຳລັງແຂ່ງຂັນຂອງຜະລິດຕະພັນ* ລວມທັງຕະຫລາດພາຍໃນ ແລະ ພາຍນອກປະເທດ, ສ້າງຜະລິດຕະພັນຂາອອກຂຶ້ນໃຫ້ບັນລຸມາດຕະຖານສາກົນ, ສຸມໃສ່ສິນຄ້າຕົ້ນຕໍປະເພດຕ່າງໆເຊັ່ນ: ເຂົ້າສານ, ກາເຟຢາງກະຕັງກະຕໍ້ວ, ສິນນ້ຳ, ສິນຄ້າສຳລັບການນຸ່ງຖື, ນ້ຳມັນ, ອາຍແກັດ, ເຄື່ອງກົນຈັກປະກອບ... ກໍ່ສ້າງລະບົບສະຖາບັນຄຸ້ມຄອງທີ່ມີຄຸນນະພາບ ແລະ ຮັບຮອງຄຸນນະພາບຂອງຜະລິດຕະພັນ.

ຊຸກຍູ້ຢ່າງແຂງແຮງ *ການປົກປ້ອງກຳມະສິດອຸດສາຫະກຳ*, ຮັບປະກັນການແຂ່ງຂັນກັນແບບສິດໃສໃນກົນໄກຕະຫລາດ ແລະ ສົ່ງເສີມການປະດິດສ້າງຂອງບັນດານັກວິທະຍາສາດ ແລະ ບັນດາຜູ້ອອກແຮງງານ.

ກໍ່ສ້າງ ໂດຍໄວ ແລະ ປະກາດໃຊ້ກົດໝາຍວິທະຍາສາດ ແລະ ເຕັກໂນໂລຍີ, ສ້າງຕັ້ງຕະຫລາດໃຫ້ແກ່ການເຄື່ອນໄຫວວິທະຍາສາດ ແລະ ເຕັກໂນໂລຍີ; ບັນດາວິສາຫະກິດຕ້ອງຖືສຳຄັນ ການຂະຫຍາຍວິທະຍາສາດ ແລະ ເຕັກໂນໂລຍີ, ອີງໃສ່ວິທະຍາສາດ ແລະ ເຕັກໂນໂລຍີ ເພື່ອຂະຫຍາຍການຜະລິດຢ່າງມີຜົນສັກສິດ. ລັດມີນະໂຍບາຍສົ່ງເສີມໃຫ້ນຳ

ໃຊ້ບັນດາຄວາມກ້າວໜ້າຂອງເຕັກນິກ ໂດຍຜ່ານບັນດາວິທີການເອື້ອ ເຟື້ອ ກ່ຽວກັບພາສີ, ສິນເຊື່ອ, ຂາອອກຂາເຂົ້າ... ຊ່ວຍໜູນໃຫ້ບັນດາ ພາກສ່ວນເສດຖະກິດທີ່ມີຄວາມຕ້ອງການຄົ້ນຄວ້າວິທະຍາສາດ ແລະ ປະດິດສ້າງເຕັກໂນໂລຍີ. ສືບຕໍ່ສັບຊ້ອນບັນດາອົງການວິທະຍາສາດ ແລະ ເຕັກໂນໂລຍີຄືນໃໝ່ຕາມທິດລວມສູນກວ່ານັ້ນອີກໃຫ້ແກ່ບັນດາ ຂົງເຂດວິທະຍາສາດ ແລະ ເຕັກໂນໂລຍີຍຸດທະສາດ, ເຊື່ອມຕິດການ ຄົ້ນຄວ້າວິທະຍາສາດກັບການສຶກສາ, ກໍ່ສ້າງ, ຍົກຍ້າຍສະຖາບັນ ຄົ້ນຄວ້າຂະແໜງການວິຊາສະເພາະຈຳນວນໜຶ່ງທີ່ຂຶ້ນໂດຍກົງກັບ ສະຫະບໍລິສັດ; ຕິດພັນບັນດາໂຄງການວິທະຍາສາດ ແລະ ເຕັກໂນໂລ ຍີກັບບັນດາໂຄງການເສດຖະກິດ-ສັງຄົມ, ກັບແຜນກຳນົດພັດທະນາ ບັນດາເຂດດິນແດນ..

ດູດດຶງທຶນໃຫ້ໄດ້ຫລາຍແຫລ່ງເພື່ອເພີ່ມການລົງທຶນຂຶ້ນຕື່ມໃຫ້ແກ່ວິ ທະຍາສາດ ແລະ ເຕັກໂນໂລຍີໂດຍໄວ. ນອກຈາກແຫລ່ງທຶນຊ່ວຍໜູນ ຈາກງົບປະມານ, ຕ້ອງເຮັດໃຫ້ບັນດາກົນໄກນະໂຍບາຍປະກົດເປັນຮູບ ເພື່ອລະດົມແຫລ່ງທຶນຂອງບັນດາວິສາຫະກິດ, ບັນດາພາກສ່ວນເສດ ຖະກິດ, ບັນດາແຫລ່ງຊ່ວຍເຫລືອຂອງສາກົນ, ທຶນຈາກບັນດາໂຄງ ການເສດຖະກິດ-ສັງຄົມ ແລະ ຈາກບັນດາກິດຈະການກໍ່ສ້າງພື້ນຖານ ຂຶ້ນຕື່ມເພື່ອລົງທຶນ ໃຫ້ແກ່ວິທະຍາສາດ ແລະ ເຕັກໂນໂລຍີ.

ໃຊ້ຊັບພາຍະກອນ ແລະ *ຮັກສາສິ່ງແວດລ້ອມຊີວະຖາບ* ຢ່າງສົມ ເຫດສົມຜົນ. ການສືບສວນຄວາມເປື້ອນເປິ ຕໍ່ສິ່ງແວດລ້ອມຕ້ອງດຳ

ກັ້ນບັນດາຄວາມຜັນຜວນຜິດປົກກະຕິ, ເຮັດໃຫ້ຕະຫລາດ ແລະ ລາ
ຄາເປັນປົກກະຕິ.

ເພີ່ມທະວີການຄຸ້ມຄອງຕະຫລາດ, ແນະນຳບັນດາພາກສ່ວນເສດ
ຖະກິດໃນການຄ້າໃຫ້ຂະຫຍາຍຕົວຢ່າງຖືກຕ້ອງຕາມທິດທາງ, ຕາມ
ນະໂຍບາຍ, ກົດໝາຍ, ແຂ່ງຂັນກັນຢ່າງສົດໃສ; ຕ້ານການຫລີກລ່ຽງ
ພາສີ, ພາສີເຖື່ອນ, ຈໍລະຈອນສິນຄ້າປອມ.

ເພີ່ມທະວີບົດບາດດັດປັບມະຫາພາກຂອງລັດ, ດັດ ແລະ ແກ້ໄຂທຸກ
ກໍລະນີທີ່ເກີດຂຶ້ນອັນບໍ່ມີຜົນປະໂຫຍດຂອງຕະຫລາດຢ່າງທັນເວລາ. ປູ
ລະນະລະບົບ*ແຮໄວ້ແຫ່ງລັດ*, ແຮໄວ້ແຫ່ງການຈໍລະຈອນ.

ຄຸນຄ່າຂອງສິນຄ້າທີ່ຂາຍອອກໃນຕະຫລາດນັບເຖິງປີ 2000 ເມື່ອ
ປຽບກັບປີ 1995 ແມ່ນທຶບ 2,5 ເທົ່າ, ເພີ່ມສະເລ່ຍ 20% ຕໍ່ປີ (ຂຶດໄລ່
ຕາມໜ້າພຽງຂອງລາຄາ)

ເພີ່ມກ້ອນປະລິມານໂດຍໄວ, ຍົກສູງຄຸນນະພາບ ແລະ ລະດັບຄວາມ
ປອດໄພໃນການ*ຂົນສົ່ງ* ແຂກໂດຍສານ, ຂົນສົ່ງສິນຄ້າໃນຮູບຂົນສົ່ງ
ຊະນິດຕ່າງໆ ທັງໝົດ. ຍົກສູງກຳລັງຄວາມສາມາດເຊິ່ງມີກຳ
ລັງຢ່າງພຽງພໍຮັບປະກັນມາດຕາສ່ວນຄ່າຂົນສົ່ງໄວ້ໃຫ້ຄູ່ຮ່ວມມື ຕາມ
ກົດໝາຍ ແລະ ລະບຽບການຂອງສາກົນໃນການຂົນສົ່ງດ້ວຍທາງອາ
ອາດ, ທາງທະເລທີ່ຫ່າງໄກ.

ຜັນຂະຫຍາຍການປະຕິບັດແຜນກຳນົດສົມບູນພາບໃນການຂະ

ຫຍາຍ*ການທ່ອງທ່ຽວ* ໃຫ້ເໝາະສົມກັບກຳລັງບໍ່ມຊ້ອນຂອງການ ທ່ອງທ່ຽວທີ່ໃຫຍ່ໂຕຂອງປະເທດຕາມທິດທ່ອງທ່ຽວວັດທະນະທຳ, ສະ ພາບແວດລ້ອມຂອງຊີວິດ. ກໍ່ສ້າງບັນດາໂຄງການ ແລະ ບັນດາຈຸດ ທ່ອງທ່ຽວທີ່ຈຸບຈ້າວທາງດ້ານວັດທະນະທຳ, ວັດຖຸບູຮານປະຫວັດສາດ ແລະ ເຂດທີ່ມີຄວາມງາມຂອງທິວທັດທຳມະຊາດ. ລະດົມແຫລ່ງກຳ ລັງໃຫ້ເຂົ້າຮ່ວມທຸລະກິດການທ່ອງທ່ຽວ, ໃຫ້ບູລິມະສິດແກ່ການກໍ່ສ້າງ ໂຄງປະກອບໂຄງລ່າງຢູ່ບັນດາເຂດທ່ອງທ່ຽວລວມສູນ, ຢູ່ບັນດາໃຈ ກາງໃຫຍ່. ຍົກສູງລະດັບວັດທະນະທຳ ແລະ ຄຸນນະພາບຂອງການບໍ ລິການໃຫ້ສອດຄ່ອງກັບແຂກທ່ອງທ່ຽວປະເພດຕ່າງໆ ທີ່ຕ່າງກັນ.

ຊຸກຍູ້ການລະດົມທຶນພາຍໃນປະເທດຢ່າງແຂງແຮງເພື່ອລົງທຶນໃສ່ ໂຮງແຮມ. ເຮັດໃຫ້ໂຮງແຮມຈຳນວນໜຶ່ງທີ່ມີໃນປະຈຸບັນເປັນຫຸ້ນສ່ວນ ທັງນີ້ກໍ່ເພື່ອລະດົມບັນດາແຫລ່ງທຶນໃສ່ການລົງທຶນດັດສ້າງ, ຍົກລະດັບ ຄຸນນະພາບ.

ຮ່ວມສຳພັນທຸລະກິດກັບຕ່າງປະເທດໃນການກໍ່ສ້າງບັນດາເຂດ ທ່ອງທ່ຽວ ແລະ ບັນດາໂຮງແຮມຂະໜາດໃຫຍ່, ຄຸນນະພາບສູງ, ເຊີ່ງ ຮຽກຮ້ອງໃຫ້ມີທຶນຫລາຍ. ປຽນບັນດາເຮືອນພັກ, ເຮືອນຕ້ອນແຂກນາ ເປັນການທຸລະກິດໂຮງແຮມ ແລະ ທ່ອງທ່ຽວ.

ຂະຫຍາຍຢ່າງແຂງແຮງສຳລັບບັນດາການບໍລິການສື່ສານ, ທີ່ປຶກ ສາທາງເຕັກໂນໂລຍີ, ກົດໝາຍ, ການເງິນ, ກວດບັນຊີ, ທະນາຄານ, ປະກັນໄພ... ເປີດກວ້າງການບໍລິການປະເພດ ຕ່າງໆອັນຫລາຍຮູບ

ຫລາຍຮ່າງເພື່ອຕອບສະໜອງຄວາມຕ້ອງການກ່ຽວກັບຊີວິດການເປັນຢູ່, ສອດຄ່ອງກັບລະດັບຊີວິດການເປັນຢູ່ຂອງບັນດາຊັ້ນຄົນພົນລະເມືອງ.

6 - ໂຄງການຂະຫຍາຍຄວາມພົວພັນເສດຖະກິດກັບຕ່າງປະເທດ

ຈຸດໝາຍ:

ຍອດປະລິມານກ້ອນເງິນຕາ*ຂາອອກ* ເພີ່ມຂຶ້ນສະເລ່ຍປະມານ 28% ຕໍ່ປີ(ບໍ່ທັນນັບສ່ວນຂາອອກປະຈຳທີ່). ເພີ່ມບໍລິມາດສິນຄ້າທີ່ໄດ້ຜ່ານການປຸງແຕ່ງໃນກ້ອນເງິນຕາຂາອອກຢ່າງວ່ອງໄວ, ຫລຸດຜ່ອນບໍລິມາດຂາເຂົ້າວັດຖຸດິບ ແລະ ສິນຄ້າທີ່ປຸງແຕ່ງຊັ້ນປະຖົມ.

ທິດຂາເຂົ້າ ແມ່ນສຸມໃສ່ວັດຖຸດິບ, ອຸປະກອນ, ສ່ວນປະກອບເຂົ້າຈັກຊະນິດຕ່າງໆຂອງເຕັກໂນໂລຍີເພື່ອຕອບສະໜອງຄວາມຕ້ອງການໃນການຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝ. ເອົາສິນຄ້າເຊິ່ງພາຍໃນປະເທດສາມາດຜະລິດໄດ້ຢ່າງມີຜົນສັກສິດມາແທນທີ່ການຂາເຂົ້າສິນຄ້າດັ່ງກ່າວ. ຍອດປະລິມານການຂາເຂົ້າເພີ່ມຂຶ້ນສະເລ່ຍ 24% ຕໍ່ປີ.

ພາຍໃນ 5 ປີ ຈະດູດດຶງ ແລະ ນຳໃຊ້ຢ່າງມີຜົນສັກສິດຈາກແຫລ່ງຊ່ວຍເຫລືອທາງການເງິນພັດທະນາເປັນທາງການ(ODA) ປະມານ 7 ຕື້ USD ແລະ ຈາກແຫລ່ງລົງທຶນໂດຍກົງຂອງຕ່າງປະເທດ(FDI)

ປະມານ 13-15 ຕື້USD(ຄິດໄລ່ຕາມໜ້າພຽງຂອງລາຄາປີ 1995).

ປ່ຽນແປງຕາຊິ່ງຊຳລະສາສ່ວງສາກົນໃຫ້ດີຂຶ້ນ.

ໜ້າທີ່ ແລະ ວິທີແກ້ໄຂ:

ເປີດກວ້າງຕະຫລາດ*ຂາອອກ*, ເຮັດໃຫ້ໂຄງປະກອບມີການປ່ຽນແປງໃໝ່ ແລະ ຍົກສູງຄຸນນະພາບຂອງສິນຄ້າຂາອອກ. ເພີ່ມບໍລິມາດຜະລິດຕະພັນປຸງແຕ່ງແບບຄັກແນ່ ແລະຄຸນນະພາບດີ, ຫລຸດຜ່ອນການຂາອອກສິນຄ້າດິບຢ່າງແຂງແຮງ. ຄາດຄະເນມາຮອດປີ 2000 ເຊິ່ງຜະລິດຕະພັນຂາອອກໄດ້ຜ່ານການປຸງແຕ່ງນັ້ນຈະກວມເອົາ 80%, ເຊິ່ງໃນນັ້ນມີສ່ວນໄດ້ຜ່ານການປຸງແຕ່ງແບບຄັກແນ່ ແລະ ຄຸນນະພາບດີແມ່ນ 50%. ສ້າງຊະນິດສິນຄ້າ, ພາກສ່ວນສິນຄ້າຂາອອກທີ່ມີກ້ອນປະລິມານ ແລະ ຄຸນຄ່າໃຫຍ່ທະວີຂຶ້ນຕື່ມ. ເພີ່ມກ້ອນປະລິມານບັນດາຊະນິດສິນຄ້າເປັນຜະລິດຕະພັນພິເສດມີຄຸນຄ່າທະວີຂຶ້ນຕື່ມ. ພາກສ່ວນສິນຄ້າອຸດສາຫະກຳໜັກ ແລະ ຜະລິດຕະພັນໂລຫະຂາອອກເພີ່ມຂຶ້ນສະເລ່ຍ 33% ຕໍ່ປີ, ພາກສ່ວນສິນຄ້າອຸດສາຫະກຳເບົາ 38%, ພາກສ່ວນສິນຄ້າກະເສດຕະພັນ, ເຄື່ອງປ່າຂອງດົງ, ສິນນ້ຳ 16%.

ໂຄງປະກອບ*ຂາເຂົ້າ*: ຄາດຄະເນສຳລັບເຄື່ອງຈັກເຄື່ອງຍົນ, ສ່ວນປະກອບເຂົ້າຈັກ ແລະ ເຄື່ອງອາໄຫລ່ກວມເອົາປະມານ 39% ແລະ ເພີ່ມຂຶ້ນສະເລ່ຍ 25% ຕໍ່ປີ; ວັດຖຸດິບ, ຫາດເຝີງ, ອຸປະກອນກວມເອົາປະມານ 52% ແລະ ເພີ່ມຂຶ້ນສະເລ່ຍ 25%; ສິນຄ້າໃຊ້ສອຍກວມເອົາ

ປະມານ 9% ແລະ ເພີ່ມຂຶ້ນ 14%.

ປັບປຸງທີ່ຕັ້ງຢູ່ບັນດາຕະຫລາດທີ່ແກວ່ນເຄີຍ, ຟື້ນຟູຄວາມຜົວພັນກັບຕະຫລາດມູນເຊື້ອ, ຊອກຫາຕະຫລາດ ແລະ ລູກຄ້າເພື່ອນໃໝ່ໆ. ຫລຸດຜ່ອນການຮວມສູນຢ່າງລົ້ນເຫລືອເຂົ້າໃນຕະຫລາດຈຳນວນໜຶ່ງ. ສ້າງຕະຫລາດ ແລະ ເພື່ອນລູກຄ້າຂຶ້ນຢ່າງຍາວນານກ່ຽວກັບບັນດາຊະນິດສິນຄ້າຂາອອກ, ຂາເຂົ້າຕົ້ນຕໍ, ຫລຸດຜ່ອນການຂາອອກ, ຂາເຂົ້າ ໂດຍຜ່ານຕະຫລາດຢູ່ລະຫວ່າງກາງ. ປະຕິບັດບັນດານະໂຍບາຍສົ່ງເສີມການຂາອອກຢ່າງສະເໜີຕົ້ນສະເໜີປາຍ, ເຊິ່ງປະກອບດ້ວຍທັງການປະກັນລາຄາໃຫ້ແກ່ສິນຄ້າຂາອອກ, ດັດປັບມາດຕາສ່ວນລາຄາ ແລກປ່ຽນເງິນຕາຢ່າງສົມເຫດສົມຜົນ, ມີປະໂຫຍດໃຫ້ແກ່ການຂາອອກ.

ພາຍຫລັງການເຂົ້າຮ່ວມ ASEAN (ອາຊຽນ) ແລະ ກະກຽມເຂົ້າຮ່ວມກຸ່ມການຄ້າເສລີພາບ(AFTA), ຕ້ອງດຶກດັນເຂົ້າຮ່ວມອົງການຮ່ວມມືເສດຖະກິດປາຖະກະຖາແຫ່ງອາຊີ-ປາຊີຟິກ(APEC), ອົງການການຄ້າສາກົນ(WTO), ເຂົ້າຮ່ວມບັນດາການເຄື່ອນໄຫວຂອງລະບົບທົ່ວໂລກເປັນກ້າວໆ ກ່ຽວກັບການຊ່ວຍເຫລືອທາງການຄ້າຕໍ່ບັນດາປະເທດທີ່ພວມພັດທະນາ(GSTP), ນຳໃຊ້ບັນດາບັນທັດຖານການຄ້າສາກົນ ແລະ ເລືອກເຟັ້ນໃຫ້ເຂົ້າຮ່ວມສະມາຄົມຂາອອກຈຳນວນໜຶ່ງຂອງສາກົນວ່າດ້ວຍແຕ່ລະຊະນິດສິນຄ້າຂາອອກ.

ສວຍເອົາໂອກາດໃຫ້ດູດດຶງ*ແຫລ່ງຊ່ວຍເຫລືອເງິນພັດທະນາເປັນ ທາງການ* (ODA) ຕາມແບບຫລາຍຝ່າຍ ແລະສອງຝ່າຍ, ສຸມໃສ່ ເຝັ້ນຕົ້ນຕໍໃຫ້ແກ່ການກໍ່ສ້າງ ໂຄງປະກອບ ໂຄງລ່າງເສດຖະກິດ ແລະ ສັງຄົມ, ຍົກສູງລະດັບວິທະຍາສາດ, ເຕັກໂນໂລຍີ, ແລະ ການຄຸ້ມຄອງ, ພ້ອມກັນນັ້ນກໍ່ຈົ່ງທຶນສຶນເຊື່ອພາກສ່ວນໜຶ່ງໄວ້ເພື່ອລົງທຶນໃຫ້ແກ່ບັນ ດາຂະແໜງການກະສິກຳ, ການປ່າໄມ້, ການປະມົງ, ການຜະລິດສິນ ຄ້າໃຊ້ສອຍ. ໃຫ້ບູລິມະສິດເຊິ່ງຈົ່ງການຊ່ວຍເຫລືອທີ່ບໍ່ຕ້ອງສົ່ງຄືນໄວ້ ໃຫ້ແກ່ເຂດຕ່າງໆ ທີ່ຂະຫຍາຍຕົວຊ້າ. ບັນດາຮ່າງຍັດຕິໃຊ້ທຶນຍືມນັ້ນ ຕ້ອງມີແຜນແກ້ໃຊ້ໜີ້ອັນໜັກແໜ້ນ, ຢືນຢັນຄວາມຮັບຜິດຊອບໃຊ້ ໜີ້ຢ່າງຈະແຈ້ງ, ບໍ່ໄດ້ກໍ່ໃຫ້ເກີດຫາບຕິດໜີ້ອັນໜັກໜ່ວງຕື່ນອີກ ເຊິ່ງໃຊ້ໜີ້ບໍ່ໄດ້. ຕ້ອງໃຊ້ແຫລ່ງທຶນ ODA ຢ່າງມີຜົນສັກສິດ ແລະ ມີການກວດກາ, ຄຸ້ມຄອງຢ່າງແໜ້ນໜາ, ຕ້ານການຟຸມເຟືອຍ, ຫຍໍ້ ທໍ້.

ການລົງທຶນໂດຍກົງຈາກຕ່າງປະເທດ (FDI) ສຸມໃສ່ບັນດາຂົງ ເຂດ, ບັນດາຜະລິດຕະພັນ ແລະ ການບໍລິການທີ່ມີເຕັກໂນໂລຍີ ອັນກ້າວ ໜ້າ, ມີມາດຕາສ່ວນຂາອອກສູງ. ຕໍ່ຂະແໜງການຕ່າງໆ ທີ່ບໍ່ຮຽກ ຮ້ອງຕ້ອງມີທຶນຫລາຍ ແລະ ເຕັກໂນໂລຍີລະດັບສູງ, ເຊິ່ງສາມາດເກີດ ມີປະໂຫຍດໂດຍໄວໆ ນັ້ນກໍ່ຕ້ອງໃຊ້ຮູບການຫລາຍຮູບເພື່ອລະດົມທຶນ ພາຍໃນປະເທດໃຫ້ລົງທຶນທັງໝົດຫລີກລ້ຽງເອົາມາດຕາສ່ວນປະກອບ ທຶນຫລາຍຖ້າຕ້ອງການຮ່ວມສຳພັນທຸລະກິດ. ກ່ຽວກັບສະຖານທີ່ລົງ

ທຶນ, ຕ້ອງມີນະໂຍບາຍ ແລະ ວິທີການທີ່ມີຄວາມສັກສິດເພື່ອດຶງດູດເຂົ້າ ບ່ອນຕ່າງໆ ທີ່ມີຄວາມສາມາດບິ່ນຊ້ອນຫາກ ໃນສະເພາະໜ້າຍັງມີ ຂໍ້ຫຍຸ້ງຍາກ. ຮູບການລົງທຶນຕ້ອງສືບຕໍ່ຫັນເປັນຫລາຍຮູບຫລາຍຮ່າງ, ເອົາໃຈໃສ່ເຖິງບັນດາຮູບການໃໝ່ຕື່ມອີກ, ເຊັ່ນລົງທຶນການ ເງິນ (ພາຍນອກປະກອບທຶນ, ຊື້ຫຸ້ນສ່ວນ, ແຕ່ບໍ່ເຂົ້າຮ່ວມໃນການຄຸ້ມ ຄອງຄືໂຮງງານຮ່ວມສຳພັນທຸລະກິດ). ກ່ຽວກັບຄູ່ຮ່ວມມືລົງທຶນນັ້ນ, ຕ້ອງເພີ່ມທະວີການພົວພັນຮ່ວມມືກັບບັນດາບໍລິສັດຂ້າມຊາດເຊື່ອຍາດ ແຍ່ງເຕັກໂນໂລຢີແຫລ່ງມາໄດ້, ໃກ້ສິດກັບວິທີຄຸ້ມຄອງທັນສະໄໝ ແລະ ແຊກຊຶມເຂົ້າຕະຫລາດສາກົນໂດຍໄວ, ເປີດກວ້າງຕະຫລາດ ໃໝ່ໃຫ້ໄດ້.

ໄປຄຽງຄູ່ກັນກັບບັນດາຄວາມພະຍາຍາມໃນການດຶງດູດແຫລ່ງ ທຶນພາຍນອກຕື່ມອີກ, ຕ້ອງເອົາໃຈໃສ່ຢ່າງຈົດຈໍ່ໃຫ້ຫລາຍກວ່ານັ້ນອີກ ເຖິງການລົງມືປະຕິບັດບັນດາຮ່າງຍັດຕິລົງທຶນໂດຍກົງຂອງຕ່າງປະ ເທດເຊິ່ງໄດ້ຮັບໃບອະນຸມັດ, ຜ່ານຜ່າແກ້ໄຂບັນດາກຳລັງກີດຂວາງ ເພື່ອລົງມືໃຊ້ແຫລ່ງທຶນ ODA ໂດຍໄວເຊິ່ງໄດ້ຮັບການໃຫ້ຄຳໝັ້ນ ສັນຍາຈາກບັນດາຜູ້ຊ່ວຍເງິນ.

7 - ໂຄງການຂະຫຍາຍການສຶກສາ ແລະ ການກໍ່ສ້າງ

ຈຸດໝາຍ:

ຍົກສູງໜ້າພຽງແຫ່ງຄວາມ*ຮູ້ຂອງປະຊາຊົນ*, ຮັບປະກັນບັນດາ

ຄວາມຮູ້ທີ່ຈຳເປັນເພື່ອໃຫ້ທຸກໆຄົນ ເຂົ້າຮ່ວມການດຳລົງຊີວິດດ້ານສັງຄົມ ແລະ ເສດຖະກິດສາມາດກ້າວໄປທັນກັບວິວັດທະນາການປ່ຽນແປງໃໝ່ ແລະພັດທະນາປະເທດຊາດ.

ກໍ່ສ້າງ, ບຳລຸງ ແລະ ຍົກສູງຄຸນນະພາບ ຂອງແຫລ່ງ*ກຳລັງຄົນ* ເພື່ອຕອບສະໜອງຄວາມຕ້ອງການຂອງພາລະກິດທັນເປັນອຸດສາຫະກຳ, ທັນເປັນທັນສະໄໝ. ເພີ່ມບໍລິມາດສຳລັບຈຳນວນຄົນທີ່ເສຍຈົບໄດ້ລະດັບສາມັນສຶກສາຊັ້ນຮາກຖານ(ຫ້ອງ 9) ໃນໄວອາຍຸ ອອກແຮງງານຂຶ້ນ 55-60% ແລະ ອັດຕາສ່ວນບັນດາຜູ້ອອກແຮງງານຂຶ້ນ 22-25% ເມື່ອປີ 2000, ຮັບປະກັນແຫລ່ງແຮງງານທີ່ມີຄຸນນະພາບໃຫ້ແກ່ບັນດາຂົງເຂດນຳໃຊ້ເຕັກໂນໂລຢີອັນກ້າວໜ້າ. ກໍ່ສ້າງຖັນແຖວພະນັກງານວິທະຍາສາດ ແລະ ເຕັກໂນໂລຢີອັນໜັກແໜ້ນເຂັ້ມແຂງ, ເຊິ່ງມີກຳລັງຢ່າງພຽງພໍເພື່ອແກ້ໄຂບັນດາບັນຫາທີ່ຖືກລະບຸໄວ້ໃນໂຄງການພັດທະນາວິທະຍາສາດ ແລະ ເຕັກໂນໂລຢີ.

ຄົ້ນພົບ, ບຳລຸງ ແລະ ໃຊ້ຜູ້ທີ່ເກັ່ງກ້າເປັນຢ່າງດີ, ເອົາໃຈໃສ່ຢ່າງຈົດຈໍ່ເຖິງບັນດາຂົງເຂດວິທະຍາສາດ ແລະເຕັກໂນໂລຢີ, ວັດທະນະທຳ, ສິລະປະກຳ, ຄຸ້ມຄອງເສດຖະກິດ, ສັງຄົມ ແລະ ຄຸ້ມຄອງການຜະລິດທຸລະກິດ.

ໜ້າທີ່ ແລະ ວິທີແກ້ໄຂ:

ຂະຫຍາຍການ*ສຶກສານ້ອງນ້ອຍຍຸວະຊົນ*, ເພີ່ມມາດຕາສ່ວນເດັກນ້ອຍທີ່ໄດ້ຮັບການດູແລເບິ່ງແຍງຢູ່ບັນດາໂຮງລ້ຽງເດັກຫລືຫຍ່ອມ

ລ້ຽງເດັກ, ຍົກສູງຄວາມຮູ້ໃຫ້ແກ່ບັນດາຜູ້ເບິ່ງແຍງເດັກນ້ອຍຢູ່ຄອບຄົວ. ສົ່ງເດັກນ້ອຍ ໃນໄວອາຍຸສ່ວນເກືອບທັງໝົດເຂົ້າຫ້ອງຮຽນອະນຸຊົນສຳລັບເດັກໃຫຍ່ເພື່ອກຽມຕົວເຂົ້າປະຖົມສຶກສາ.

ຊຳລະສະສາງໄພກຶກໜັງສື ສຳລັບບັນດາຜູ້ອອກແຮງງານໃນໄວອາຍຸແຕ່ 15-35 ປີ ແລະ ເຮັດໃຫ້ພາກສ່ວນກຶກໜັງສືໃນໄວອາຍຸອື່ນໆ ຫລຸດໜ້ອຍຖອຍລົງ. ຕັ້ງໜ້າລົບລ້າງຄວາມບໍ່ຮູ້ໜັງສືໃຫ້ປະຊາຊົນໃນເຂດສູງ, ເຂດສອກຫລີກ ແລະ ບັນດາເຂດທີ່ຍັງປະສົບກັບຂໍ້ຫຍຸ້ງຍາກ.

ສຳເລັດການ*ສຶກສາຊັ້ນປະຖົມແບບບັງຄັບ* ໃນທົ່ວປະເທດ ໂດຍພື້ນຖານ ແລະ ເຜີຍແຜ່ມັດຖະຍົມສຶກສາຊັ້ນຮາກຖານແບບບັງຄັບຢູ່ບັນດານະຄອນໃຫຍ່ ແລະ ບ່ອນຕ່າງໆທີ່ມີເງື່ອນໄຂ. ມີນະໂຍບາຍຊ່ວຍເຫລືອລູກນ້ອງຂອງຊາວຊົນຊາດສ່ວນໜ້ອຍ, ຄອບຄົວທຸກຍາກ, ຜູ້ເສຍອົງຄະໃຫ້ມີເງື່ອນໄຂຮ່ຳຮຽນ. ຂະຫຍາຍໂຮງຮຽນ, ຫ້ອງຮຽນກິນນອນ, ເຄື່ອງກິນນອນ. ປັບປຸງ ແລະ ເພີ່ມທະວີບັນດາໂຮງຮຽນສະເພາະການ, ຫ້ອງຮຽນເລືອກເຟັ້ນ. ເປີດໂຮງຮຽນໂດຍປະຊາຊົນສ້າງຕັ້ງຂຶ້ນຕື່ມ, ເຄື່ອງທາງການຢູ່ບັນດາຫ້ອງຮຽນຊັ້ນສ.ມັນ. ປະຕິບັດການສຶກສາຮອບດ້ານຢູ່ລະດັບປະຖົມສຶກສາ (ເຊິ່ງເປັນພື້ເສດແມ່ນວິຊາດົນຕີ, ລະບາຍສີ, ກິລາກາຍະກຳ). ເປີດກວ້າງ ແລະ ຍົກສູງຄຸນນະພາບການສິດສອນພາສາຕ່າງປະເທດ, ຄອມພິວເຕີວິທະຍາຕັ້ງແຕ່ຊັ້ນສາມັນສຶກສາ. ສຸມກຳລັງໃຫ້ຍົກສູງຄຸນນະພາບການສິດສອນ ແລະ ຮ່ຳຮຽນ, ປະກອບ

ຄວາມຮູ້ທີ່ຈຳເປັນຢ່າງພຽງພໍໄປຄຽງຄູ່ກັນກັບການສ້າງຄວາມສາ
ມາດໃນການຮຽນໂດຍຕົນເອງ, ຄວາມປະດິດສ້າງຂອງນັກຮຽນ,
ຜ່ານຜ່າແກ້ໄຂສະພາວະຕ້ອງສິດສອນເປັນເວລາຫລາຍຊົ່ວໂມງນອກ
ຢ່າງລົ້ນເຫລືອ.

ຜ່ານການດັດແປງລະບົບສື່ສານກ່ຽວກັບແຮງງານ ແລະ ຜ່ານນະ
ໂຍບາຍຕ່າງໆ, ຂໍ້ກຳນົດຕ່າງໆຂອງລັດເພື່ອດັດສົມໂຄງປະກອບການ
ກໍ່ສ້າງຢ່າງສົມເຫດສົມຜົນ, ແນໃສ່ບັນລຸຄວາມດຸ່ນດ່ຽງລະຫວ່າງການ
ກໍ່ສ້າງ ແລະ ການໃຊ້ຢູ່ລະດັບຕ່າງໆ ແລະ ບັນດາຂະແໜງການອາ
ຊີບທີ່ຕ່າງກັນ, ເປັນພິເສດແມ່ນຮັບປະກັນກຳລັງຄົນໃຫ້ແກ່ບັນດາຂະ
ແໜງການທີ່ເປັນປາຍແຫລມ ແລະ ບັນດາໂຄງການເສດຖະກິດ-ສັງ
ຄົມຈຸດສຸມ: ເພີ່ມບໍລິມາດການບຳລຸງສ້າງຂະແໜງການອາຊີບບໍ່ທັນ
ເຖິງລະດັບມະຫາວິທະຍາໄລຂຶ້ນຕື່ມໂດຍໄວ.

ປັບປຸງ, ຂະຫຍາຍຢ່າງແຂງແຮງ ແລະ ຮັບປະກັນຄຸນນະພາບຂອງ
ບັນດາຮາກຖານ*ບຳລຸງສ້າງອາຊີບ*, ລວມທັງບັນດາຮາກຖານໂດຍ
ປະຊາຊົນເປັນຜູ້ສ້າງຂຶ້ນ, ເອກະຊົນ, ບັນດາວິສາຫະກິດໄປຄຽງຄູ່ກັນ
ກັບການເພີ່ມທະວີການຄຸ້ມຄອງຂອງລັດ.

ເປີດກວ້າງຂະໜາດຢ່າງສົມເຫດສົມຜົນ ແລະ ຍົກສູງຄຸນນະພາບ
ການ*ບຳລຸງສ້າງມະຫາວິທະຍາໄລ*, ປະສານສົມທົບລະຫວ່າງການບຳ
ລຸງສ້າງໃໝ່ໆກັບການບຳລຸງສ້າງຄືນໃໝ່, ຂະຫຍາຍການສຶກ
ສາ-ບຳລຸງສ້າງສູ່ຍອດສູງສຸດກໍ່ແນໃສ່ເລືອກເຟັ້ນ, ກໍ່ສ້າງຖັນແຖວ

ຊ່ຽວຊານວິທະຍາສາດ, ເຕັກໂນໂລຍີ, ວັດທະນະທຳ ແລະ ບັນດານັກທຸລະກິດຜູ້ເກັ່ງກ້າ, ຖັນແຖວລັດຖະກອນ ແລະ ພະນັກງານຜູ້ນຳພາຄຸ້ມຄອງເສດຖະກິດ-ສັງຄົມທີ່ມີຄວາມສາມາດ.

ປະຕິບັດແຜນກຳນົດສັບຊ້ອນຄືນໃໝ່ໃຫ້ບັນດາໂຮງຮຽນມະຫາວິທະຍາໄລ, ວິທະຍາໄລ ແລະ ບັນດາວິທະຍາຄານຄົ້ນຄວ້າ, ກໍ່ສ້າງບັນດາໂຮງຮຽນມະຫາວິທະຍາໄລຫລາຍຂົງເຂດຢູ່ບັນດາສູນເສດຖະກິດ, ວັດທະນະທຳໃນທົ່ວປະເທດ. ຂະຫຍາຍບັນດາມະຫາວິທະຍາໄລ ແລະ ວິທະຍາໄລຢູ່ທ້ອງຖິ່ນເພື່ອຕອບສະໜອງຄວາມຕ້ອງການຂອງການຮ່ຳຮຽນ ແລະ ເສີມຂະຫຍາຍແຫລ່ງກຳລັງຄົນປະຈຳທີ່. ຍາດແຍ່ງບັນດາແຫລ່ງຊ່ວຍເຫລືອການເງິນບໍລິການເບ້ຍລ້ຽງໃຫ້ນັກຮຽນ ແລະ ສົ່ງເສີມການໄປຮຽນຢູ່ຕ່າງປະເທດໂດຍເຜິ່ງຕົນເອງເພື່ອເພີ່ມຈຳນວນຄົນໄປຮຽນມະຫາວິທະຍາໄລ, ເໜືອມະຫາວິທະຍາໄລຊັ້ນຢ່າງໄວວາຢູ່ຕ່າງປະເທດ.

ສຳເລັດຢ່າງຄົບຖ້ວນ ແລະ ປັບປຸງບັນດາ *ໂຮງຮຽນສ້າງຄູສອນ* ໃນທຸກດ້ານ, ຜ່ານຜ່າແກ້ໄຂສະພາວະການຂາດເຂີນຄູສອນໂດຍໄວ ແລະ ຍົກສູງຄຸນນະພາບຂອງຄູສອນຢູ່ບັນດາຊັ້ນຮຽນທັງໝົດ. ເພີ່ມເຕີມນະໂຍບາຍຊ່ວຍເຫລືອຄູສອນ ແລະ ມີນະໂຍບາຍສົ່ງເສີມຄູສອນສະໝັກໃຈໄປສິດສອນຢູ່ບໍລິເວນ ທີ່ມີຂໍ້ຫຍຸ້ງຍາກ. ໃຊ້ຄູສອນໃຫ້ຖືກຕ້ອງຕາມຄວາມສາມາດ ແລະ ຊ່ວຍເຫລືອຄູສອນໃຫ້ຖືກຕ້ອງຕາມກຳລັງເຫື່ອແຮງຂອງເຂົາດ້ວຍຈິດໃຈປະຕິບັດດີຕໍ່ວິຊາສິດສອນ, ເອົາໃຈໃສ່

ຢ່າງຈົດຈໍ່ເຖິງຄູສອນຢູ່ເຂດພູດອຍ, ເຂດສອກຫລີກ ແລະ ບັນດາບໍລິ ເວນທີ່ມີຂໍ້ຫຍຸ້ງຍາກ.

ເພີ່ມທະວີການຄົ້ນຄວ້າວິທະຍາສາດການສຶກສາ; ສືບຕໍ່ເຮັດໃຫ້ວິທີ ສິດສອນ ແລະ ຮໍ່າຮຽນມີຄວາມປ່ຽນແປງໃໝ່. ປະສານສົມທົບການ ສຶກສາຢູ່ໂຮງຮຽນກັບການສຶກສາຢູ່ຄອບຄົວ ແລະ ການສຶກສາໃນສັງ ຄົມ, ກໍ່ສ້າງສິ່ງແວດລ້ອມສຶກສາອັນສົດໃສ.

ເຮັດໃຫ້ແຜນນະໂຍບາຍນະໂຍບາຍຂອງພັກ ແລະ ລັດເປັນລາຍລະ ອຽດ ແລະ ເປັນສະຖາບັນກ່ຽວກັບການ*ຫັນພາລະກິດການສຶກສາ ແລະ ການກໍ່ສ້າງເປັນຂອງສັງຄົມ*, ເຊິ່ງກ່ອນອື່ນໝົດແມ່ນການລົງທຶນພັດທະ ນາ ແລະ ຮັບປະກັນງົບປະມານແຫ່ງການເຄື່ອນໄຫວ. ນອກຈາກການ ທີ່ງົບປະມານຈົ່ງມາດຕາສ່ວນອັນເໝາະສົມໄວ້ໃຫ້ແກ່ພາລະກິດຂະ ຫຍາຍການສຶກສາ ແລະ ການກໍ່ສ້າງມາແລ້ວ, ຈະຕ້ອງດູດດຶງແຫລ່ງ ລົງທຶນຕື່ມອີກຈາກບັນດາວົງຄະນາຍາດ, ບັນດາພາກສ່ວນເສດຖະກິດ, ບັນດາວົງການທຸລະກິດຢູ່ພາຍໃນ ແລະ ພາຍນອກປະເທດໄປຄຽງຄູ່ກັນ ກັບການໃຊ້ແຫລ່ງລົງທຶນແກ່ການສຶກສາ ແລະ ການກໍ່ສ້າງໃຫ້ມີຜົນ ສັກສິດ. ບັນດາວິສາຫະກິດມີພາລະໜ້າທີ່ປະກອບສ່ວນເຂົ້າງົບປະມານ ການສຶກສາ ແລະ ການກໍ່ສ້າງຖ້າວ່າໃຊ້ແຮງງານຜູ້ໄດ້ຮັບການກໍ່ສ້າງ ແລ້ວ. ປ່ຽນແປງໃໝ່ສຳລັບລະບອບຄ່າຮຽນໃຫ້ສອດຄ່ອງກັບການ ແບ່ງຊັ້ນລາຍໄດ້ໃນສັງຄົມ, ລົບລ້າງການປະກອບສ່ວນທີ່ບໍ່ສົມເຫດສົມ ຜົນ, ແນໃສ່ຮັບປະກັນງົບປະມານການສຶກສາເປັນຢ່າງດີ ກ່ວາອີກ;

ພ້ອມກັນນັ້ນກໍ່ປັບປຸງເງື່ອນໄຂຮ່ຳຮຽນໃຫ້ດີຂຶ້ນສຳລັບນັກຮຽນຜູ້ທຸກຍາກ.

ຄົ້ນຄວ້າການຈັດຕັ້ງ ແລະ ປະສົມປະສານກັນໃນການຊີ້ນຳໂຄງການຂະຫຍາຍການສຶກສາ-ກໍ່ສ້າງເພື່ອຮັບໃຊ້ກິດຈະການຫັນປະເທດຊາດເປັນທັນສະໄໝ. ກໍ່ສ້າງ ແລະ ບູລະນະລະບົບກົດໝາຍແຫ່ງລັດວ່າດ້ວຍການສຶກສາໃຫ້ສົມບູນ, ກໍ່ສ້າງ ແລະ ປະກາດໃຊ້ກົດໝາຍວ່າດ້ວຍການສຶກສາໂດຍໄວ. ກຳນົດຄວາມຮັບຜິດຊອບຢ່າງຈະແຈ້ງ, ເປີດກວ້າງສິດອຳນາດ ແລະ ຍົກສູງຄວາມສາມາດຄຸ້ມຄອງໃຫ້ແກ່ບັນດາຝ່ຶນຖານກໍ່ສ້າງ, ເຊິ່ງກ່ອນອື່ນໝົດແມ່ນບັນດາ ໂຮງຮຽນມະຫາວິທະຍາໄລ. ປຮັບແປງໃໝ່ ແລະ ເພີ່ມທະວີອົງການຄຸ້ມຄອງການສຶກສາ, ເຊິ່ງເປັນພິເສດແມ່ນບັນດາຂັ້ນມະຫາພາກ, ທັງນີ້ກໍ່ເພື່ອກວດກາຄຸນນະພາບຂອງການກໍ່ສ້າງໃຫ້ໄດ້, ກຳກັບບັນຊາກົງຈັກສຶກສາໃນຂະໜາດນັບມື້ນັບໃຫຍ່ໂຕ ແລະ ຮັບປະກັນຜົນສັກສິດຂອງການກໍ່ສ້າງໃຫ້ຖືກຕ້ອງຕາມຄວາມປາຖະໜາ.

8 - ໂຄງການແກ້ໄຂບັນດາບັນຫາວັດທະນະທຳ - ສັງຄົມ

ຈຸດໝາຍ:

ແກ້ໄຂວຽກເຮັດງານທຳ, ຂະຫຍາຍຢ່າງຮອບດ້ານກ່ຽວກັບບັນດາການເຄື່ອນໄຫວວ່າດ້ວຍ*ວັດທະນະທຳ, ສີ່ສາມ, ກິລາກາຍະກຳ, ສາທາລະນະສຸກ, ສະຖິຕິພົນລະເມືອງ, ຫັນຄອບຄົວເປັນແຜນການ* ແລະ

ບັນດາດ້ານສັງຄົມອື່ນໆ ແນໃສ່ຍົກສູງຄຸນນະພາບຂອງການດຳລົງຊີ ວິດດ້ານວັດຖຸ, ຈິດໃຈ ແລະ ກຳລັງແຮງຂອງຊາດ, ຕອບສະໜອງ ຄວາມຕ້ອງການໃຫ້ຂະຫຍາຍແຫລ່ງກຳລັງຄົນ ແລະ ຮ່ວມຕົວເຂົ້າວົງ ຄະນາຍາດສາກົນ.

ປະສານສົມທົບຢ່າງກົມກຽວລະຫວ່າງການເຕີບໂຕທາງດ້ານເສດ ຖະກິດກັບການປະຕິບັດຄວາມຍຸດຕິທຳ, ຄວາມກ້າວໜ້າທາງສັງຄົມ, ສ້າງບາດກ້າວຫັນປ່ຽນຢ່າງແຂງແຮງໃນການແກ້ໄຂບັນດາບັນຫາສັງ ຄົມອັນຄັບຂັນ, ຍູ້ຄວາມຫຍໍ້ທໍ້, ຄວາມບໍ່ຍຸດຕິທຳ ແລະ ໄພຮ້າຍໃນສັງ ຄົມໃຫ້ລະຖອຍໄປ.

ໜ້າທີ່ ແລະ ວິທີແກ້ໄຂ:

ພັນຂະຫຍາຍໂຄງການແຫ່ງຊາດແກ້ໄຂວຽກເຮັດງານທຳ, ສ້າງ ເງື່ອນໄຂໃຫ້ຊາວຜູ້ອອກແຮງງານທຸກໆຄົນດຳເນີນການສ້າງ ແລະ ຊອກຫາວຽກເຮັດງານທຳໂດຍຕົນເອງ. ແຕ່ລະປີ ຈະດຶງແຮງງານ ທີ່ມີບ່ອນເຮັດວຽກຕື່ມອີກແຕ່ 1,3-1,4 ລ້ານຄົນ. ໃນການຊີ້ນຳປະຕິ ບັດຈະສ້າງ ໂອກາດດີຂຶ້ນຕື່ມໃຫ້ຊາວຜູ້ອອກແຮງງານເປັນຜູ້ສ້າງ ແລະ ຊອກຫາວຽກເຮັດງານທຳໂດຍຕົນເອງທັງນີ້ກໍ່ເພື່ອຍົກລະດັບດຶງ ດຶງແຮງງານລາຍປີຂຶ້ນສູງກວ່ານັ້ນອີກ. ຫລຸດຜ່ອນມາດຕາສ່ວນວ່າງ ງານຢູ່ຕົວເມືອງລົງໃຕ້ 5% ແລະ ຍົກມາດຕາສ່ວນໃຊ້ເວລາອອກແຮງ ງານຢູ່ຊົນນະບົດຂຶ້ນ 75%.

ຈັດຕັ້ງການປະຕິບັດ ແລະ ກວດກາການປະຕິບັດ*ກົດໝາຍອອກ*

ແຮງງານ, ເພີ່ມທະວີການປົກປັກຮັກສາຊາວຜູ້ອອກແຮງງານ, ເຊີ່ງ ສຸມໃສ່ບັນດາວິສາຫະກິດ. ສືບຕໍ່ດັດແປງລະບອບເງິນເດືອນໃຫ້ດີຂຶ້ນ, ເຮັດໃຫ້ເງິນເດືອນຕິດພັນກັບສະມັດຖະພາບ, ຄຸນນະພາບ ແລະ ຜົນສັກ ສິດຢ່າງແທ້ຈິງ; ກາຍເປັນລາຍໄດ້ຕົ້ນຕໍ ແລະ ເປັນກຳລັງໜູນຕໍ່ຊາວ ຜູ້ອອກແຮງງານ.

ເປີດກວ້າງລະບອບ*ປະກັນສັງຄົມ* ສຳລັບຊາວຜູ້ອອກແຮງງານ ຂອງບັນດາພາກສ່ວນເສດຖະກິດ, ນຳໃຊ້ຕໍ່ອົງການຕ່າງໆ, ວິສາຫະ ກິດຕ່າງໆ ດ້ວຍຄວາມບັງຄັບ. ຈັດຕັ້ງຄຸ້ມຄອງ ແລະ ໃຊ້ຄັງປະກັນໄພ ເປັນຢ່າງດີ; ຮັບປະກັນຊີວິດການເປັນຢູ່ຂອງຄົນອອກບຳນານ. ເປີດ ກວ້າງບັນດາຄັງທີ່ເຮັດວຽກແຫ່ງຄວາມເປັນທຳ, ວຽກກຸສົນຂອງປະ ຊາຊົນ.

ຂະຫຍາຍ ແລະ ຍົກສູງຄຸນນະພາບແຫ່ງການເຄື່ອນໄຫວ*ວັດທະນະ ທຳ, ສິລະປະວັນນະຄະດີ, ສື່ມວນຊົນ* ແລະ ບັນດາພາຫະນະແຫ່ງການ ຫລິ້ນມ່ວນຊື່ນເພີດເພີນໃຈຕອບສະໜອງຄວາມຕ້ອງການກ່ຽວກັບຊີ ວິດການເປັນຢູ່ດ້ານວັດທະນະທຳ-ຈິດໃຈຂອງປະຊາຊົນ. ເອົາໃຈໃສ່ ຢ່າງຈິດຈໍ່ເຖິງບັນດາເຂດພູດອຍ, ຊາຍແດນ, ເກາະທະເລ ແລະ ບັນ ດາເຂດຊົນນະບົດທີ່ມີຂໍ້ຫຍຸ້ງຍາກຫລາຍປະການ.

ເພີ່ມປະລິມານຜະລິຜັນວັດທະນະທຳ, ວັນນະຄະດີສິລະປະກຳ, ໜັງ ສືພິມວາລະສານທີ່ມີຄຸນນະພາບສູງທາງດ້ານເນື້ອໃນແນວຄິດ ແລະ ຄຸນ ຄ່າກ່ຽວກັບສິລະປະກຳໂດຍໄວ. ເພີ່ມທະວີການລົງທຶນ ໃນການດັດ

ສ້າງ ແລະ ກໍ່ສ້າງລະບົບບັນດາຮາກຖານວັດທະນະທຳຖະແຫລງຂ່າວ ແຕ່ສູນກາງລົງຮອດທ້ອງຖິ່ນເຊິ່ງໄດ້ຮັບການວາງແຜນກຳນົດຄືນໃໝ່ ຕາມທິດເຄື່ອນໄຫວດ້ວຍຫລາຍຮູບແບບ, ຕິດແໜ້ນການເຄື່ອນໄຫວ ວັດທະນະທຳກັບການທ່ອງທ່ຽວ, ກິລາ ແລະ ການຫລິ້ນນ່ວນຊື່ນເພີດ ເພີນໃຈ. ຊຸກຍູ້ແຜນດຳເນີນກໍ່ສ້າງບັນດາກິດຈະການວັດທະນະທຳທີ່ມີ ຂະໜາດລະດັບຊາດຢູ່ຮ່າໂນ້ຍ, ນະຄອນໂຮ່ຈິມິນ ແລະ ຢູ່ທີ່ໃຈກາງ ຂະໜາດໃຫຍ່ຂອງປະເທດຊາດໂດຍໄວ.

ທັນບັນດາຂະແໜງການວິທະຍຸກະຈາຍສຽງ, ໂທລະພາບ, ສາຍ ຮູບເງົາ, ພິມ, ພິມຈຳໜ່າຍເປັນທັນສະໄໝເປັນກ້າວໆ. ຍົກສູງຄຸນ ນະພາບບັນດາລາຍການກະຈ່າຍສຽງ ແລະ ໂທລະພາບ, ເພີ່ມສະມັດ ຖະພາບການກະຈາຍຄື້ນກະຈາຍສຽງ, ໂທລະພາບ, ລວມທັງກະຈາຍ ອອກໄປຕ່າງປະເທດ. ເມື່ອປີ 2000, ສູ້ຊົນໃຫ້ຄອບຄົວເບິ່ງໂທລະພາບ ຂອງສູນກາງປະມານ 80% ໃນຍອດປະລິມານຄອບຄົວ; ຍົກຈຳນວນ ຄອບຄົວໄດ້ຟັງວິທະຍຸກະຈາຍສຽງຫວຽດນາມຂຶ້ນ 95%. ສືບຕໍ່ປະຕິ ບັດໂຄງການແຫ່ງຊາດສາມຢ່າງກ່ຽວກັບວັດທະນະທຳ-ຖະແຫລງ ຂ່າວ: ຜິທັກຮັກສາ, ບູລະລະສ້າງບັນດາຮ່ອງຮອຍປະຫວັດສາດ ແລະ ບັນດາມູນມັງມໍລະດົກວັດທະນະທຳແຫ່ງຊາດ; ຂະຫຍາຍຮູບເງົາ ຫວຽດນາມ; ກໍ່ສ້າງຊີວິດການເປັນຢູ່ດ້ານວັດທະນະທຳຢູ່ຮາກຖານ, ເຊິ່ງໃນນັ້ນຈະເອົາໃຈໃສ່ຢ່າງຈົດຈໍ່ເຖິງບັນຫາຄອບຄົວວັດທະນະທຳ, ບ້ານວັດທະນະທຳ, ແບບແຜນດຳເນີນຊີວິດສີວິໄລຢູ່ຕົວເມືອງ. ເພີ່ມທະ

ວິການແລກປ່ຽນວັດທະນະທຳ, ສິລະປະວັນນະຄະດີ, ກິລາກາຍະກຳກັບ ຊາດຕ່າງໆ, ໂດຍສະເພາະຢ່າງຍິ່ງແມ່ນບັນດາປະເທດໃນພາກພື້ນ. ເຜີ່ມທະວີບັນດາວິທີການ ແລະ ການປະສົມປະສານກຳລັງຂອງທົ່ວສັງ ຄົມ, ກໍ່ສ້າງສິ່ງແວດລ້ອມວັດທະນະທຳອັນສົດໃສ, ຕໍ່ສູ້ຢ່າງຫນຽວ ແຫ້ນຫົນທານ ແລະ ແຂງແຮງແມ່ໃສ່ກິດກັນ, ກຳຈັດປັດເຂ້ຍບັນດາ ວັດທະນະທຳທີ່ຜິດຮ້າຍ ແລະ ບັນດາໄພຮ້າຍແຫ່ງສັງຄົມ.

ປ່ຽນແປງໃຫມ່ສຳລັບກົນໄກຄຸ້ມຄອງຕາມທິດທັນບັນດາການ ເຄື່ອນໄຫວວັດທະນະທຳ-ຖະແຫລງຂ່າວເປັນຂອງສັງຄົມ, ພ້ອມກັນນັ້ນ ກໍ່ສືບຕໍ່ກໍ່ສ້າງ ແລະ ປັບປຸງບັນດາລະບອບນະໂຍບາຍໃຫ້ສົມບູນເພື່ອ ສອດຄ່ອງກັບຈຸດພິເສດຂອງຂະແຫນງການ(ເຊັ່ນດູແລລາຄາ, ສັ່ງສົ່ນ ຄ້າ, ທຶນ, ພາສີຕໍ່ຜະລິດຕະພັນວັດທະນະທຳ; ລະບອບລາຍໄດ້ຕໍ່ພາລະ ກິດວັດທະນະທຳ, ນະໂຍບາຍລະດົມບັນດາແຫລ່ງທຶນຢູ່ພາຍໃນ ແລະ ພາຍນອກປະເທດ...)ແມ່ໃສ່ຮັບປະກັນພາລະກິດວັດທະນະທຳ-ຖະ ແຫລງຂ່າວຂະຫຍາຍຕົວໄວໃນຂະບວນວິວັດປ່ຽນແປງໃຫມ່, ຮັກສາ ກຳນົດທິດສັງຄົມນິຍົມມາໄດ້, ກໍ່ສ້າງວັດທະນະທຳອັນກ້າວຫນ້າ, ຈຸ ງ້າວໄປດ້ວຍເອກະລັກແຫ່ງຊາດ. ມີນະໂຍບາຍເປັນຫ່ວງເປັນໃຍນຳ ຊີວິດການເປັນຢູ່ທາງດ້ານວັດຖຸ ແລະ ຈິດໃຈໃຫ້ແກ່ຖັນແຖວບັນດາຄົນ ຜູ້ເຮັດວຽກງານວັດທະນະທຳ, ສິລະປະວັນນະຄະດີ.

ປ໋ວແປງບັນດາເກນກຳນົດພື້ນຖານກ່ຽວກັບ*ສຸຂະພາບໃຫ້ທຸກໆຄົນ*, ຍົກສູງສຸຂະພາບຮ່າງກາຍ ແລະ ຮ່າງຄີງເປັນກ້າວໆ, ເຊີ່ງກ່ອນອື່ນ

ໜົດແມ່ນຍົກສູງກຳລັງກາຍໃຫ້ແມ່ ແລະ ເດັກນ້ອຍ.

ສ້າງຄວາມຫັນປ່ຽນໂດຍໄວໃນການປະຕິບັດ*ຍຸດທະສາດພົນລະ*
*ເມືອງ*ທັ້ງທາງຂະໜາດ, ໂຄງປະກອບ ແລະ ການແຈກຢາຍ, ເຊິ່ງ
ກ່ອນອື່ນໜົດແມ່ນສຸມໃສ່ຈຸດໝາຍຜົວເມຍແຕ່ລະຄູ່ຈະມີລູກແຕ່ບໍ່
ໃຫ້ກາຍສອງຄົນ ແລະ ພວກເຂົາໄດ້ຮັບການລ້ຽງດູສຶດສອນເປັນຢ່າງ
ດີ; ຫລຸດຜ່ອນໂດຍໄວຕໍ່ມາດຕາສ່ວນແມ່ຍິງເກີດລູກຜູ້ທີ່ສາມຂຶ້ນໄປ.
ນອກຈາກການລົງທຶນງົບປະມານ ແລະ ພາຫະນະເຕັກນິກຂຶ້ນຕື່ມແລ້ວ,
ຕ້ອງເພີ່ມທະວີການສຶກສາອົບຮົມໂຄສະນາຖະແຫລງຂ່າວ, ເພີ່ມເຕີມ
ນະໂຍບາຍຕ່າງໆກ່ຽວກັບການຈຳກັດຮັດແຄບການເກີດລູກ, ປັບປຸງ
ລະບົບຄຸ້ມຄອງພົນລະເມືອງ, ຫັນຄອບຄົວເປັນແຜນການຂັ້ນຕ່າງໆ
ເຊິ່ງມີຕາມ່າງລົງຈອດເຖິງບ້ານຊ່ອງ, ຖະໜົນຄຸ້ມເມືອງ. ຫລຸດຜ່ອນ
ຈັງຫວະຂະຫຍາຍພົນລະເມືອງລົງລຸ່ມ 1,8% ເມື່ອປີ 2000.

ປະຕິບັດໂຄງການ*ທາດບຳລຸງລ້ຽງຊີບແຫ່ງຊາດ*, ຫລຸດຜ່ອນມາດ
ຕາສ່ວນຂາດທາດບຳລຸງຂອງເດັກນ້ອຍອາຍຸບໍ່ທັນເຖິງ 5 ປີ ແຕ່ 42%
ໃນປະຈຸບັນນີ້ລົງລຸ່ມ 30% ເມື່ອປີ 2000 ແລະ ບໍ່ໃຫ້ມີອາການຂາດ
ທາດບຳລຸງ. ຍົກມາດຕາສ່ວນພົນລະເມືອງມີລະດັບການກິນບໍ່ເຖິງ
2.100 ກາລໍຕໍ່ມື້ລົງໃຕ້ 10%, ດູແລເບິ່ງແຍງແມ່ຍິງຖືຄັນ, ອອກລູກ,
ຫລຸດຜ່ອນມາດຕາສ່ວນການຕາຍຂອງແມ່ຍິງໃນເມື່ອອອກລູກລົງ 0,5
ສ່ວນພັນ, ຂອງເດັກນ້ອຍອາຍຸບໍ່ທັນເຖິງໜຶ່ງປີລົງໃຕ້ 30 ສ່ວນພັນ,
ຂອງເດັກນ້ອຍອາຍຸບໍ່ທັນເຖິງ 5 ປີລົງໃຕ້ 55 ສ່ວນພັນ.

ຫລຸດຜ່ອນຢ່າງເດັດຂາດສຳລັບມາດຕາສ່ວນຕິດພະຍາດ ແລະ ມາດຕາສ່ວນການຕາຍໂດຍຍ້ອນພະຍາດຕິດຈຸລະຊີບ, ແມ່ພະຍາດການ ຝາກຄື: ເປັນໄຂ້ຫນາວ, ເຈັບປອດແຫ້ງ, ເຈັບທ້ອງຊຸ ແລະ ປອດບ່ວມ ຢູນຳເດັກນ້ອຍ. ເປີດກວ້າງການກັນ ແລະ ຕ້ານພະຍາດເປັນຄໍເອີມ, ທ່ວປວງຊົນປະຕິບັດການກິນເກືອອີອົດ. ຊຳລະພະຍາດເປັນເປ້ຍ, ຂີ້ທູດ, ພະຍາດໂປລິໂອ ຢູນຳເດັກຫາກໍ່ເກີດໃຫມ່, ດັບສູນບັນດາຮ້ງເກີດພະ ຍາດໂລກຢ່າງວ່ອງໄວ, ກັນ ແລະ ຕ້ານພະຍາດຫນາວ້. ຕ້ານໄພຕິດ ແລະ ສູບຢາ, ການໂສເພນີ; ສະກັດກັ້ນການຕິດ HIV/AIDS ແລະ ຈັດຕັ້ງປ້ອພະຍາດໃຫ້ບັນດາຜູ້ທີ່ຕິດພະຍາດດັ່ງກ່າວ.

ຂະຫຍາຍການບໍລິການ*ກວດ, ຢັ້ນປ້ອພະຍາດ ແລະ ປະຖົມພະຍາ ບານ* ຂອງສາທາລະນະສຸກແຫ່ງລັດ, ສາທາລະນະສຸກໂດຍປະຊາຊົນ ເປັນຜູ້ສ້າງຂຶ້ນ. ທົດລອງຮູບການຮ່ວມສຳພັນທຸລະກິດລະຫວ່າງຣາກ ຖານສາທາລະນະສຸກແຫ່ງລັດກັບປະເທດນອກທັງທາງດ້ານການແພດ ແລະ ຢາປ້ວ. ຂະຫຍາຍການແພດທີ່ສືບມາແຕ່ບູຮານຂອງຊາດ, ປະ ສານສົມທົບລະຫວ່າງການແພດທີ່ສືບມາແຕ່ບູຮານກັບການແພດສາດ ທັນສະໄຫມ. ປັບປຸງການຈັດຕັ້ງຄຸ້ມຄອງຂະແຫນງການຢາ, ເຮັດໃຫ້ ເຕັກໂນໂລຢີມີການປ່ຽນແປງໃຫມ່, ເປີດກວ້າງຊະນິດສິນຄ້າ ແລະ ຍົກ ສູງຄຸນນະພາບຂອງຜະລິດຕະພັນ ໂດຍຣາກຖານທຳການຜະລິດ ແລະ ສະຫນອງຢຸກຢາ, ເຄື່ອງປະກອບດ້ານສາທາລະນະສຸກ.

ເພີ່ມລາຍຈ່າຍງົບປະມານ ແລະ ລະດົມທຶນອື່ນໆ ຫລາຍແຫລ່ງເພື່ອ

ລົງທຶນກໍ່ສ້າງ ແລະ ຍົກລະດັບຄຸນນະພາບຂອງບັນດາຮາກຖານສາທາ
ລະນະສຸກ. ມາຮອດປີ 2000, ບັນດາຕາແສງທັງໝົດຢູ່ພາຍໃນປະ
ເທດຕ່າງກໍ່ມີສຸກສາລາສາທາລະນະສຸກ, ເຊິ່ງໃນນັ້ນມີນາຍແພດຊັ້ນ
ສູງ 40%. ບັນດາສຸກສາລາທັງໝົດຕ່າງກໍ່ມີນາຍແພດຊັ້ນກາງດ້ານ
ພະຄຸງຄັນ, ອະນຸຊົນຫລືນາງພະຄຸງຄັນ, ບັນດາບ້ານມີແພດຊັ້ນປະຖົມ.
ທຸກໆເມືອງຕ່າງກໍ່ມີສູນສາທາລະນະສຸກເຊິ່ງມີກຳລັງຢ່າງພຽງພໍໃນ
ການເຮັດໜ້າທີ່ຂອງສາຍຊ່ວຍຊຸຊັ້ນທີໜຶ່ງ. ສູນສາທາລະນະສຸກຢູ
ທຸກໆແຂວງມີເຄື່ອງປະກອບຕົ້ນຕໍຢ່າງເຕັມສ່ວນໃຫ້ແກ່ບັນດາວິຊາ,
ເຊິ່ງມີກຳລັງຢ່າງພຽງພໍເພື່ອເຮັດໜ້າທີ່ຂອງສາຍຊ່ວຍຊຸຊັ້ນທີສອງ.
ສືບຕໍ່ກໍ່ສ້າງສູນສາທາລະນະສຸກເດີນເລີກເຂົ້າວິຊາການສອງແຫ່ງທີ່
ຮ່າໂນ້ຍ ແລະ ນະຄອນໂຮ່ຈິມິນ.

ປ໋ວແປງນະໂຍບາຍ ແລະ ລະບອບເບ້ຍລ້ຽງໃຫ້ພະນັກງານສາທາ
ລະນະສຸກໃຫ້ດີຂຶ້ນ, ໂດຍສະເພາະຢ່າງຍິ່ງແມ່ນພະນັກງານສາທາລະ
ນະສຸກຊັ້ນຮາກຖານ ແລະ ຢູ່ເຂດພູດອຍ. ເຮັດໃຫ້ບັນດາຮູບແບບສາ
ທາລະນະສຸກປະກົດເປັນຫລາຍຮູບຫລາຍຮ່າງ. ລົບລ້າງກ່ານຈຳແນກ
ແຕກຕ່າງລະຫວ່າງການກວດພະຍາດ ແລະ ປິ່ນປົວຕາມລະບອບປະ
ກັນໄພ ແລະ ຕາມລະບອບເກັບຄ່າບໍລິການ. ມີນະໂຍບາຍແກ້ໄຂຄ່າ
ໂຮງໝໍໃຫ້ແກ່ຄົນທຸກ ແລະ ປະຊາຊົນທີ່ຢູ່ເຂດຫ່າງໄກ, ເຂດສອກ
ຫລີກ.

ຫລຸດຜ່ອນເຮືອນຢູ່ແບບຮົ້ວໝູ່ໃນຕົວເມືອງເທົ່າທີ່ຄວນ. *ເຮືອນຢູ່*

ຢູ່ຊຸມນະບົດສ່ວນຫລາຍໄດ້ຮັບການກໍ່ສ້າງຂຶ້ນຢ່າງໜັກແໜ້ນ ແລະ ມີກິດຈະການອະນາໄມ, ເອົາໃຈໃສ່ເຖິງເຂດທົ່ງພຽງແມ່ນ້ຳກົວລອງ.

ສ້າງບາດກ້າວໜ້າໃໝ່ຂອງຂະບວນການ*ກິລາກາຍະກຳ*, ເຊິ່ງ ມີພົນລະເມືອງທຳການເຝິກແອບກິລາກາຍາກຳບັນລຸ 8-10%, 50% ໃນຈຳນວນໂຮງຮຽນຂັ້ນຕ່າງໆ ປະຕິບັດການສຶກສາວ່າດ້ວຍເນື້ອ ກາຍຢ່າງມີລະບຽບການ, ເຮັດໃຫ້ລະບົບບຳລຸງສ້າງຄວາມເກັ່ງກ້າສາ ມາດແຫ່ງຊາດເປັນຮູບເປັນຮ່າງຂຶ້ນ, ຍົກສູງຜົນງານຂອງບັນດາວີ ຊາກິລາ. ກໍ່ສ້າງແຜນກຳນົດ ແລະ ບຶກບືນໃນການລົງທຶນໃຫ້ຂະຫຍາຍ ບັນດາພື້ນຖານວັດຖຸດ້ານກິລາກາຍະກຳໃຫ້ແກ່ບັນດາໂຮງຮຽນ ແລະ ບັນດາເຂດພົນລະເມືອງ. ກໍ່ສ້າງບັນດາສູນກິລາແຫ່ງຊາດ. ເພີ່ມທະ ວີການກໍ່ສ້າງພະນັກງານ ແລະ ຄົ້ນຄວ້າວິທະຍາສາດ ຂອງຂະແໜງ ການກິລາກາຍະກຳ.

ຂະຫຍາຍບັນດາການ*ເຄື່ອນໄຫວຄຸນທຳ*ໃນສັງຄົມ, ດູແລເບິ່ງແຍງ ໃຫ້ດີກວ່ານັ້ນຕໍ່ບັນດາຜູ້ທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ, ຄອບ ຄົວຂອງຜູ້ເສຍສະຫລະຊີວິດເພື່ອຊາດ, ທະຫານຜູ້ຖືກບາດເຈັບ, ບັນດາ ຜູ້ທີ່ມີຂໍ້ຫຍຸ້ງຍາກໃນການດຳເນີນຊີວິດ, ຜູ້ເສຍອົງຄະ, ຜູ້ເຖົ້າຜູ້ແກ່ທີ່ ບໍ່ມີທີ່ອາໃສ ແລະເດັກນ້ອຍທີ່ມີສະພາບແວດລ້ອມຫຍຸ້ງຍາກເປັນພິເສດ.

9 - ໂຄງການຂະຫຍາຍບັນດາບໍລິເວນດິນແດນ

ຈຸດໝາຍ:

ສ້າງເງື່ອນໄຂໃຫ້ທຸກໆເຂດແຄວ້ນຕ່າງກໍ່ຂະຫຍາຍຕົວບົນພື້ນຖານ

ຂຸດຄົ້ນທ່າແຮງ ແລະ ກຳລັງບົ່ມຊ້ອນຂອງແຕ່ລະເຂດແຄວ້ນເພື່ອເຮັດ ໃຫ້ໂຄງປະກອບເສດຖະກິດປະກົດເປັນຮູບຢ່າງສົມເຫດສົມຜົນ ແລະ ມີ ການຮ່ວມສຳພັນລະຫວ່າງເຂດແຄວ້ນຕ່າງໆ, ສ້າງການພັດທະນາ ເສດຖະກິດ-ສັງຄົມຂຶ້ນຢ່າງແຂງແຮງຂອງທົ່ວທັງຊາດ.

ປະສານສົມທົບການພັດທະນາຢ່າງມີຈຸດສຸມກັບການພັດທະນາອັນ ຮອບດ້ານຂອງບັນດາເຂດດິນແດນ, ຫລຸດຜ່ອນຈ້ຽວຫວະຜິດໂຕນກັນໃນ ການພັດທະນາລະຫວ່າງເຂດແຄວ້ນຕ່າງໆ.

ໜ້າທີ່ ແລະ ວິທີແກ້ໄຂ:

ເຂດພູດອຍ ແລະ ເຂດຕ່າງໆທີ່ມີຂໍ້ຫຍຸ້ງຍາກຫລາຍປະການ, ເຊິ່ງ ກ່ອນອື່ນໝົດແມ່ນບັນດາເຂດທີ່ສຳຄັນ, ບັນດາເຂດທີ່ໝັ້ນປະຕິວັດ, ບັນດາເຂດສອກຫລີກ, ເຂດຫ່າງໄກ, ເຂດຜີນ້ອງຮ່ວມຊາດບັນດາຊົນ ຊາດສ່ວນໜ້ອຍຕ້ອງໄດ້ຮັບການບູລິມະສິດໃນການລົງທຶນ, ສ້າງບັນ ດາເງື່ອນໄຂເບື້ອງຕົ້ນເພື່ອຂຸດຄົ້ນໄດ້ທ່າດີ ແລະ ແຫລ່ງກຳລັງປະຈຳ ທີ່, ເພີ່ມກຳລັງດູດດຶງການລົງທຶນ, ຫາດໜົ່ນຈາກບ່ອນອື່ນໆ. ລັດຈະ ຈ່ຶງແຫລ່ງຊ່ວຍເຫລືອທີ່ບໍ່ຕ້ອງສົ່ງຄືນໄວ້ ແລະ ທຶນທີ່ຢືມຕາມເງື່ອນໄຂ ເອື້ອເຟື້ອຂອງຕ່າງປະເທດເພື່ອລົງທຶນກໍ່ສ້າງ ໂຄງປະກອບໂຄງລ່າງ ເສດຖະກິດ ແລະ ສັງຄົມ, ເຊິ່ງກ່ອນອື່ນໝົດແມ່ນທາງຄົມມະນາຄົມ, ຕາໜ່າງໄຟຟ້າ, ການສຶກສາ, ກໍ່ສ້າງ, ດູແລເບິ່ງແຍງສຸຂະພາບ. ນຳ ໃຊ້ນະໂຍບາຍເອື້ອເຟື້ອວ່າດ້ວຍພາສີ, ສິນເຊື່ອ, ມອບສົ່ງເຕັກນິກ, ໃຊ້ ທີ່ດິນ. ສົ່ງເສີມການເຮັດໃຫ້ບັນດາຈຸດສຸມເສດຖະກິດປະກົດເປັນຮູບເຊ່ິງ

ມີຄວາມສາມາດຊຸກຍູ້ເສດຖະກິດສົນຄ້າ, ຫັນປ່ຽນໂຄງປະກອບເສດ ຖະກິດ, ເຮັດໃຫ້ຂະແໜງການອາຊີບເປັນຫລາຍຮູບຫລາຍແບບ, ຂະ ຫຍາຍອຸດສາຫະກຳປຸງແຕ່ງ, ຊຸກຍູ້ການແລກປ່ຽນສົນຄ້າຢ່າງແຂງ ແຮງ, ຂະຫຍາຍການບໍລິການ. ຕັ້ງໜ້າປະຕິບັດໂຄງການລົບລ້າງ ຄວາມອຶດຢາກ, ຫຼຸດຜ່ອນຄວາມທຸກຍາກ, ທຳການກະເສດ ແລະ ການ ຕັ້ງພຸມລຳເນົາຄົງທີ່, ສ້າງຕັ້ງລະບຽບການໃນການຍົກຍ້າຍຜົນລະ ເມືອງ. ເອົາໃຈໃສ່ເປັນພິເສດເຖິງການຍົກສູງຄວາມຮູ້ຂອງປະຊາຊົນ. ໃນການຊີ້ນຳການກຳກັບບັນຊາຕ້ອງມີຄວາມຕັດສິນໃຈສູງ ແລະ ວິທີ ການແຂງແຮງທັງນີ້ກໍ່ເພື່ອພາເຂດພູດອຍຄືບໜ້າຂຶ້ນ, ຄ່ອຍຮັດແຄບ ຕ່ໍສະພາວະແຕກຕ່າງຫ່າງໄກກັນກັບບັນດາເຂດພັດທະນາ.

ບັນດາເຂດຊົນນະບົດຢູ່ທົ່ງພຽງ ມີໜ້າທີ່ຍຸດທະສາດກ່າວຄືຮັບປະ ກັນຄວາມປອດໄພໃຫ້ທັນຍາຫານແຫ່ງຊາດຢ່າງໜັກແໜ້ນ, ສະ ໜອງອາຫານການກິນຢ່າງພຽງພໍດ້ວຍຄຸນນະພາບອັນນັບມື້ນັບດີຂຶ້ນ ໃຫ້ແກ່ຕົວເມືອງຕ່າງໆ, ເຂດອຸດສາຫະກຳ ແລະ ເພີ່ມການຂາອອກ ໂດຍໄວລວມທັງຂາອອກປະຈຳທີ່. ເອົາໃຈໃສ່ຢ່າງຈົດຈ່ໍໃນການຂະ ຫຍາຍຕົວອັນສະໝ່ຳສະເໝີເປັນພ້ອມໆລະຫວ່າງເຂດທົ່ງພຽງຕ່າງໆ ແລະ ຍົກສູງຜົນສັກສິດທາງດ້ານເສດຖະກິດ. ຜ່ານຜ່າແກ້ໄຂສະພາວະ ການເຊິ່ງເຂດກະເສດສະເພາະການປູກເຂົ້າຕົກທຸກໄດ້ຍາກ ແລະ ຖືກ ເສຍຫາຍກວ່າເມື່ອປຽບກັບເຂດຊົນນະບົດອື່ນໆ, ເຊິ່ງກ່ອນອື່ນໝົດ ແມ່ນແກ້ໄຂດ້ວຍນະໂຍບາຍສົນເຊື່ອ, ລາຄາ ແລະ ພາສີ. ສົ່ງເສີມຂະ ຫຍາຍການລ້ຽງສັດເປັນສົນຄ້າ (ລວມທັງການລ້ຽງ ແລະ ປູກສົນນ້ຳ),

ອຸດສາຫະກຳປຸງແຕ່ງກະເສດຕະກຳ, ເຄື່ອງປາຍົງດົງ, ສິນນ້ຳ, ກົນຈັກສ້ອມແປງ ແລະ ປະດິດດ້ວຍລະດັບອັນເໝາະສົມ, ຜະລິດວັດສະດຸການກໍ່ສ້າງ, ຂະຫຍາຍບັນດາຂະແໜງການອາຊີບມູນເຊື້ອປະສົມປະສານກັບຂະແໜງການອາຊີບໃໝ່; ຊຸກຍູ້ອຸດສາຫະກຳຜະລິດສິນຄ້າຂາອອກຢ່າງແຂງແຮງ, ເປັນດາວທຽມໃນການເໜົ້າແຮງງານໃຫ້ແກ່ບັນດາສູນອຸດສາຫະກຳ; ຂະຫຍາຍບັນດາຂະແໜງການບໍລິການຢ່າງສັງລວມ. ຍົກຍ້າຍແຮງງານສ່ວນໃດສ່ວນໜຶ່ງຜູ້ທຳການກະເສດມາຫາຂອບເຂດບໍ່ມີການກະເສດປະຈຳທີ່, ເຮັດໃຫ້ກຳລັງດັນກ່ຽວກັບແຮງງານ ແລະ ພົນລະເມືອງຢູ່ບັນດາຕົວເມືອງໃຫຍ່ຫລຸດຜ່ອນລົງ.

ເຂດທະເລ ແລະ ແຄມຝັ່ງທະເລ ແມ່ນເຂດຍຸດທະສາດທາງດ້ານເສດຖະກິດ ແລະ ປ້ອງກັນຄວາມສະຫງົບປ້ອງກັນຊາດ, ເຊິ່ງມີທ່າດີຫລາຍຢ່າງໃນການພັດທະນາ ແລະ ເປັນປະຕູເປີດກວ້າງແຫ່ງໃຫຍ່ຂອງທົ່ວປະເທດເພື່ອຊຸກຍູ້ການແລກປ່ຽນ ຂອງສາກົນຢ່າງຮຸນແຮງ, ດູດດຶງການລົງທຶນຈາກພາຍນອກ. ຂຸດຄົ້ນກຳລັງບົ່ມຊ້ອນ ແລະ ບັນດາທ່າດີຂອງເຂດທະເລ ແລະ ແຄມຝັ່ງທະເລໃຫ້ໄດ້ຫລາຍທີ່ສຸດເທົ່າທີ່ຈະຫລາຍໄດ້, ປະສານສົມທົບກັບການປ້ອງກັນຄວາມສະຫງົບ, ປ້ອງກັນຊາດ, ສ້າງທ່າ ແລະ ກຳລັງເພື່ອພັດທະນາເສດຖະກິດ-ສັງຄົມຢ່າງແຂງແຮງ, ປົກປັກຮັກສາ ແລະ ເປັນເຈົ້າເຂດທະເລຂອງປະເທດຊາດ.

ກໍ່ສ້າງ ໂຄງປະກອບເສດຖະກິດໃນບໍລິເວນເຂດແຄວ້ນໃຫ້ ທັນມາສູ່

ການຂາອອກຢ່າງແຂງແຮງ, ປະສານສົມທົບການຂຸດຄົ້ນເສດຖະກິດ ຢູ່ແຄມຝັ່ງທະເລ, ເຂດອະພິສິດທາງດ້ານເສດຖະກິດ ແລະ ຝົ້ນທະວີບ ຕໍ່ແຜ່ນທີ່ຂຶ້ນກັບສິດຕົກລົງຊັບສົມບັດແຫ່ງຊາດ, ຕາມຂໍ້ຕົກລົງກົດ ໝາຍທະເລສາກົນ. ເອົາໃຈໃສ່ຢ່າງຈົດຈໍ່ເຖິງເສດຖະກິດໃນເກາະທະ ເລ ແລະ ບັນດາທີ່ຕັ້ງຕົ້ນກຳເນີດຢູ່ແຄມຝັ່ງທະເລ. ແຜນກຳນົດຜັດທະ ນາເສດຖະກິດແຫ່ງທະເລໃນ *ໂຄງການຮ່ວມສຳພັນ* ບັນດາຂະແໜງ ການເສດຖະກິດທີ່ສຳຄັນແຜນໜຶ່ງເຊັ່ນນ້ຳມັນອາຍແກັດ, ຂອງທະເລ, ການຂົນສົ່ງທາງທະເລ, ອຸດສາຫະກຳ, ໂລຫະທາດແຫ່ງທະເລ, ຕໍ່ກຳ ປັ່ນ ແລະ ສ້ອມແປງກຳປັ່ນທະເລ, ຮ້ານສະຫວ່ານ, ການທ່ອງທ່ຽວ ແລະ ການບໍລິການທາງທະເລ, ເຮັດໃຫ້ປະກົດເປັນຮູບສຳລັບຂະແໜງ ການເປັນປາຍແຫລມຈຳນວນໜຶ່ງເຊິ່ງມີເຕັກໂນໂລຢີທັນສະໄໝ, ມີ ຄຸນຄ່າຂາອອກຂະໜາດໃຫຍ່, ສ້າງແຫລ່ງສະສົມຫລາຍໆ ແລະ ເປັນ ປົກກະຕິໃຫ້ແກ່ເສດຖະກິດແຫ່ງຊາດ.

ຜັດທະນາຢ່າງຄົບຊຸດ ແລະ ເຮັດໃຫ້ໂຄງປະກອບໂຄງລ່າງແຄມ ທະເລ ແລະ ບັນດາເມືອງເກາະເປັນທັນສະໄໝ, ເຊື່ອຕິດພັນກັບເຂດ ເສດຖະກິດທີ່ເປັນຈຸດສຸມ. ເຮັດໃຫ້ບັນດາ*ສູນເສດຖະກິດທະເລ*, ບັນດາ ຕົວເມືອງໃຫຍ່, ບັນດາເຂດອຸດສາຫະກຳ, ເຂດຜະລິດສິນຄ້າຂາອອກ, ເຂດທ່ອງທ່ຽວ ແລະ ການຄ້າປະກົດເປັນຮູບດ້ວຍລະບົບທ່າເຮືອທະເລ ຖືກເປີດກວ້າງ ແລະ ກໍ່ສ້າງໃໝ່ໆ ໂດຍສະເພາະຢ່າງຍິ່ງແມ່ນທ່າເຮືອ ນ້ຳເລິກ. ຂະຫຍາຍບັນດາທະບຽງເສດຖະກິດແຄມທະເລເຊິ່ງກ່ອນອື່ນ ໝົດແມ່ນບັນດາສາຍຫາຍຝອງ-ຮ້າລອງ-ມ໋ອງກ໋າຍ, ເຫ໋ວ-ກວາງ

ຫວາຍ, ຫວຸງເຕົ້າ-ບ່າເຮ້ຍ... ກຳນົດແຜນ ແລະ ກໍ່ສ້າງໂຄງການພັດ
ທະນາເສດຖະກິດຢູ່ເກາະທະເລ, ເຊິ່ງກ່ອນອື່ນໝົດແມ່ນສຸມໃສ່ເກາະ
ຈຳນວນໜຶ່ງທີ່ມີຄວາມສຳຄັນທາງດ້ານເສດຖະກິດ ແລະ ປ້ອງກັນ
ຊາດ, ປ້ອງກັນຄວາມສະຫງົບເຊັ່ນ: ຝຸກວັກ, ໂຖຈູ, ກົ່ນເຊີນ, ຝຸກວິ,
ຫລີເຊີນ, ກັດບ່າ, ໂກໂຕ, ຫວິນຖຶກ, ແບກລອງຫວີ... ລົງທຶນກໍ່ສ້າງ
ໂຄງປະກອບໂຄງລ່າງເຊັ່ນບັນດາກິດຈະການທີ່ຈຳເປັນຍິ່ງວ່າດ້ວຍ
ຂົວຂອງທ່າເຮືອ, ຖະໜົນຫົນທາງ, ສະໜອງໄຟຟ້າ, ນ້ຳ, ຕິດຕໍ່ສື່
ສານ... ມີນະໂຍບາຍເອົາໃຈໃສ່ເປັນພິເສດເພື່ອສົ່ງເສີມພົນລະເມືອງ
ມາຕັ້ງພຸມລຳເນົາເພື່ອພັດທະນາເສດຖະກິດໃນເກາະ, ຍົກສູງຊີວິດ
ການເປັນຢູ່ ແລະ ຮັບປະກັນເງື່ອນໄຂທີ່ຈຳເປັນໃຫ້ແກ່ບັນດາມັກຮົບຢູ
ໃນເກາະ. ລັດຈະຈົ່ງທຶນສິນເຊື່ອເອື້ອເຟື້ອໄວ້ຂຶ້ນຕື່ມໃຫ້ປະຊາຊົນຢືມເພື່ອ
ຂະຫຍາຍອາຊີບຫາປາໃນທະເລ. ເພີ່ມທະວີບັນດາການເຄື່ອນໄຫວ
ສືບກວດຝົ້ນຖາມ, ວິທະຍາສາດ ແລະ ເຕັກໂນໂລຍີທາງທະເລ. ເປັນ
ພິເສດແມ່ນເອົາໃຈໃສ່ຮັກສາຊັບພາຍະກອນ ແລະ ສິ່ງແວດລ້ອມຢູ່ແຄມ
ທະເລ. ລົງທຶນຢ່າງເໝາະສົມໃຫ້ແກ່ການເພີ່ມທະວີ, ປັບປຸງການປ້ອງ
ກັນຄວາມສະຫງົບ, ປ້ອງກັນຊາດ, ປົກປັກຮັກສາອະທິປະໄຕ ແລະ ຜົນ
ປະໂຫຍດແຫ່ງຊາດໃນເຂດທະເລ, ເກາະ. ເພີ່ມເຕີມ ແລະ ບູລະນະລະ
ບົບກົດໝາຍ, ນະໂຍບາຍກ່ຽວກັບການຄຸ້ມຄອງ, ຂຸດຄົ້ນທະເລ,
ແຄມຝັ່ງທະເລ ແລະ ບັນດາເກາະທະເລ.

ເຂດຕົວເມືອງ ມີທ່າດີ ແລະ ເງື່ອນໄຂພັດທະນາໄວ; ບັນດາຕົວ
ເມືອງໃຫຍ່ດຳລົງບົດບາດແລກປ່ຽນເສດຖະກິດໃນເຂດແຄວ້ນ ແລະ

ໃນສາກົນ. ເຮັດໃຫ້ຕາມ່າງຕົວເມືອງປະກົດເປັນຮູບຖືພາລະບົດບາດ ເປັນໃຈກາງຂອງເຂດແຄວ້ນຫລືອະນຸເຂດເຄວ້ນເພື່ອເສີມຂະຫຍາຍ ການກະທົບຂອງອຸດສາຫະກຳ ແລະ ການບໍລິການເຖິງບັນດາເຂດ ອື່ນໆ, ຍ້ອນແນວນັ້ນຈຶ່ງສາມາດຂຸດຄົ້ນບັນດາກຳລັງບົ່ມຊ້ອນຂອງແຕ່ ລະບໍລິເວນໄດ້ຫລາຍກວ່າ, ມີຜົນສັກສິດກວ່າ. ໂດຍລ້ວນແລ້ວ ແຕ່ເງື່ອນໄຂຂອງແຕ່ລະບ່ອນ, ບັນດາເຫດສະບານແຂວງ, ບັນດາເຫດ ສະບານເມືອງທັງໝົດນັ້ນຕ່າງກໍ່ຕ້ອງໄດ້ຮັບການຂະຫຍາຍຕົວບົນພື້ນ ຖານຊຸກຍູ້ອຸດສາຫະກຳ ແລະ ການບໍລິການຢ່າງແຂງແຮງເຊິ່ງມີ ຄວາມໝາຍອະນຸເຂດແຄວ້ນເຮັດໃຫ້ບັນດາຕົວເມືອງຍ່ອຍຂັ້ນຕ່ ໍ ແສງປະກົດເປັນຮູບເປັນສູນເສດຖະກິດ, ວັດທະນະທຳໃຫ້ແກ່ແຕ່ລະຕ ໍ ແສງຫລືຕ ໍ ແສງຈຳນວນໜຶ່ງ.

ຂະຫຍາຍບັນດາຕົວເມືອງເປັນດາວທຽມອ້ອມແອ້ມບັນດາຕົວ ເມືອງໃຫຍ່ເພື່ອເຮັດໃຫ້ຜົນລະເມືອງຢາຍອອກ, ຫລີກລ່ຽງການ ລວມສູນເກີນລະດັບຢູ່ຮ ໍ ໂນ້ຍ, ນະຄອນໂຮ່ຈີມິນ. ສ ໍ ງເງື່ອນໄຂທີ່ຈ ໍ ເປັນຂຶ້ນເພື່ອດູດດຶງອຸດສາຫະກຳ ແລະ ຂະຫຍາຍຕົວເມືອງແຫ ໍ ງໃໝ ໍ ຂຶ້ນຫ ໍ ເຂດພູດອຍ, ຫລີກລ ໍ ຽງການໃຊ ໍ ເນື້ອທີ່ດິນປູກເຂົ ໍ ຫລາຍ. ຈ ໍ ກັດການເປີດກວ ໍ ງຂະໜາດຂອງບັນດານະຄອນໃຫຍ ໍ . ວ ໍ ງແຜນກ ໍ ນົດຕາມ ໍ ງຕົວເມືອງໃຫຍ ໍ , ຊັ້ນກາງ ແລະ ນ ໍ ຍໂດຍໄວໃນທົ ໍ ປະເທດ ໃຫ ໍ ສອດຄ ໍ ອງກັບລະດັບເສດຖະກິດ-ສັງຄົມ. ຂະຫຍາຍຕົວເມືອງຕ ໍ ອງ ໄປຄຽງຄູ ໍ ກັນກັບການກ ໍ ສ ໍ ງຢ ໍ ງຄົບຊຸດ ແລະ ຄຸ ໍ ມຄອງບັນດາກິດຈະ

ກຳສາທາລະນະ(ໄຟຟ້າ, ສະໜອງນ້ຳ, ລະບາຍນ້ຳອອກຈາກຕົວ ເມືອງ, ໄມ້ຂຽວ...).

ຖືສຳຄັນການປະສານສົມທົບຢ່າງແໜ້ນແຟ້ນລະຫວ່າງການພັດ ທະນາເສດຖະກິດ ແລະ ວັດທະນະທຳ, ຮັກສາເອກະລັກ ແລະ ມູນເຊື້ອ ແຫ່ງຊາດ ກັບການກ້າວຂຶ້ນສູ່ທັນສະໄໝໃນການຂະຫຍາຍຕົວເມືອງ.

ບໍລິເວນເສດຖະກິດຈຸດສຸມສາມແຫ່ງ ຢູ່ສາມພາກ: ພາກເໜືອ, ພາກ ກາງ, ພາກໃຕ້ມີເງື່ອນໄຂເຕີບໂຕທາງດ້ານເສດຖະກິດໂດຍໄວກວ່າຈັງ ຫວະລວມຂອງທົ່ວປະເທດ, ສະໜອງຜະລິດຕະພັນ ແລະ ການບໍລິການ ທີ່ຈຳເປັນຫລາຍຢ່າງໃຫ້ທົ່ວປະເທດ, ເສີມຂະຫຍາຍບົດບາດເປັນໃຈ ກາງທາງດ້ານອຸດສາຫະກຳ, ບໍລິການ, ການຄ້າ, ການເງິນ, ວິທະຍາ ສາດ, ເຕັກນິກ, ເປັນປະຕູຮ່ວມບ້ານໃນການແລກປ່ຽນກັບສາກົນ. ຂະ ຫຍາຍສາມເຂດເປັນຈຸດສຸມຕ້ອງປະສານສົມທົບຢ່າງແໜ້ນໜາ, ຮັບ ໃຊ້ ແລະ ຊຸກຍູ້ການຂະຫຍາຍບັນດາເຂດອື່ນໆ ແລະ ທົ່ວປະເທດ, ສ້າງ ເງື່ອນໄຂໃຫ້ ບັນດາວິສາຫະກິດຢູ່ເຂດຈຸດສຸມເປີດກວ້າງການທຸລະກິດ ແລະ ລົງທຶນໃຫ້ອອກໄປຫາເຂດອື່ນໆ.

10 - ໂຄງການພັດທະນາເສດຖະກິດ - ສັງຄົມຢູ່ ເຂດພູ ດອຍ ແລະ ເຂດພື້ນ້ອງຮ່ວມຊາດບັນດາຊົນຊາດ, ຊົນເຜົ່າ.

ຈຸດໝາຍ:

ຂຸດຄົ້ນທຸກໆແຫລ່ງກຳລັງຢູ່ທ້ອງຖິ່ນ ແລະ ລະດົມກຳລັງຊັບຂອງ ທົ່ວທັງປະເທດເພື່ອສ້າງບາດກ້າວຂຶ້ນທາງດ້ານເສດຖະກິດ-ສັງຄົມ

ຢ່າງໄວວາກວ່ານັ້ນ, ເຮັດໃຫ້ຊີວິດການເປັນຢູ່ເປັນປົກກະຕິ, ປ້ອແປງ ສິ່ງແວດລ້ອມ, ຊີວະພາບ.

ສູ້ຊົນເຮັດໃຫ້ເສດຖະກິດເຕີບໂຕຂຶ້ນດ້ວຍຄວາມໄວເທົ່າທຽມໜ້ສີ່ລົ່ນ ກວ່າລະດັບສະເລ່ຍທົ່ວໄປຂອງທັງປະເທດ; ເມື່ອປີ 2000 GDP ສະ ເລ່ຍຕາມຫົວຄົນບັນລຸທົບປີ 1994 ສອງເທົ່າ.

ບັນດາເຂດພູດອຍ ແລະ ເຂດຜີ່ນ້ອງຮ່ວມຊາດບັນດາຊົນຊາດຕ່າງ ກໍ່ຕ້ອງມີບາດກ້າວຂະຫຍາຍຕົວ, ເຂດແຄວ້ນທີ່ມີເງື່ອນໄຂອຳນວຍ ຄວາມສະດວກຕ້ອງຂະຫຍາຍຕົວດ້ວຍຄວາມໄວກວ່ານັ້ນອີກເພື່ອຊຸກຍູ້, ຊ່ວຍໜູນບັນດາເຂດແຄວ້ນອື່ນໆ ພ້ອມກັນຂະຫຍາຍຕົວ.

ການເຕີບໂຕທາງດ້ານເສດຖະກິດຕ້ອງປະສານສົມທົບຢ່າງກົມກຽວ ກັບການພັດທະນາສັງຄົມ-ວັດທະນະທຳ, ຮັບປະກັນການປ້ອງກັນຄວາມ ສະຫງົບ-ປ້ອງກັນຊາດ, ສູ້ຊົນເພື່ອຫລຸດຜ່ອນໄລຍະຫ່າງກັນກ່ຽວກັບ ຄວາມກ້າວໜ້າໃນສັງຄົມລະຫວ່າງເຂດແຄວ້ນຕ່າງໆ.

ໜ້າທີ:

ອຸດສາຫະກຳ

ຂະຫຍາຍອຸດສາຫະກຳປຸງແຕ່ງໃຫ້ຕິດພັນກັບເຂດມີວັດຖຸດິບ. ສັບຊ້ອນ ແລະ ລົ້ງທຶນລວງເລິກສຳລັບບັນດາຣາກຖານທີ່ມີໃນປະຈຸບັນ.

ຂະຫຍາຍອຸດສາຫະກຳນ້ອຍ, ຫັດຖະກຳຢູ່ໃນເຂດສອກຫລີກ, ເຂດ ຫ່າງໄກ, ສົ່ງເສີມບັນດາອາຊີບຫັດຖະກຳມູນເຊື້ອ.

ກໍ່ສ້າງບັນດາຣາກຖານຜະລິດວັດສະດຸການກໍ່ສ້າງ, ຊຸກຍູ້ວຽກ
ງານສຶບຮູ້ ແລະ ຂຸດຄົ້ນໂລຫະທາດຢ່າງແຂງແຮງ.

ສຳເລັດບັນດາກິດຈະການໄຟຟ້ານ້ຳຕົກທີ່ພວມກໍ່ສ້າງຂຶ້ນໃຫ້ຖືກ
ຕ້ອງຕາມແຜນດຳເນີນ ແລະ ກຽມກິດຈະການໃໝ່ຈຳນວນຫນຶ່ງຢູ
ເຊີນລາ, ເຊເກີນ, ໄຕ້ວອຽນ...

ການກະສິກຳ-ການປ່າໄມ້.

ແກ້ໄຂທັນຍາຫານຕາມທັດສະນະເສດຖະກິດສິນຄ້າ. ເປີດກວ້າງເນື້ອ
ທີ່ທັນຍາຫານຢູ່ບໍລິເວນທີ່ມີເງື່ອນໄຂຊົນລະປະທານ, ຫັນປ່ຽນໂຄງປະ
ກອບເຄື່ອງປູກໃຫ້ສົມເຫດສົມຜົນໄປຄຽງຄູ່ກັນກັບການກະເສດສຸມເຝີມ
ສະມັດຖະພາບດ້ວຍວິທີນຳໃຊ້ຄວາມກ້າວຫນ້າທາງດ້ານເຕັກນິກ,
ແນວປູກ, ຝຸ່ນ. ຮັບປະກັນຄວາມໄວຂອງທັນຍາຫານເຊິ່ງຜະລິດປະຈຳ
ທີ່ເຝີ່ມຂຶ້ນລາຍປີແຕ່ 3,5 -4% ແລະ ປີ 2000 ໃຫ້ບັນລຸສະເລ່ຍຕາມ
ຫົວຄົນ 250-280 ກິໂລກຣາມ. ເປີດກວ້າງການແລກປ່ຽນກັບບໍລິ
ເວນຕ່າງໆເພື່ອຮັບປະກັນຄວາມປອດໄພທາງດ້ານທັນຍາຫານ.

ຍົກຂະຫນາດປົກຫຸ້ມປ່າໄມ້ຮອດປີ 2000 ຂຶ້ນເຫນືອ 40%. ເຮັກ
ໃຫ້ລະບົບປ່າໄມ້ປ້ອງກັນຍອດຫ້ວຍທີ່ສະຫລັກສຳຄັນ ແລະ ເຂດວັດຖຸ
ດິບຂອງເຈ້ຍ, ໄມ້ຄ້ຳຂອງບໍ່ແຮ່ປະກົດເປັນຮູບເປັນຮ່າງຂຶ້ນ.

ຍົກເນື້ອທີ່ໄມ້ອຸດສາຫະກຳຕາມກຳນົດເວລາອັນຍາວນານແຕ່
17,9 ໝື່ນ ເຮັກຕາໃນປີ 1994 ຂຶ້ນສອງເທົ່າເມື່ອປີ 2000 ເຊິ່ງໃນ
ນັ້ນຢ່າງກະຕັ້ງກະຕໍ້ວ 16,6 ໝື່ນ ເຮັກຕາ; ກາເຟ 10,1 ໝື່ນ ເຮັກ

ຕ່ໍ ແລະ ຊາ 9,7 ໝື່ນ ເຮັກຕາ. ຂະຫຍາຍການລ້ຽງສັດ ຢ່ໍາງແຂ ງ ແຮ ງ, ໂດຍສະເພາະຢ່ໍາງຍິ ງແມ່ນລ້ຽງສັດໃຫຍ່.

ເຊື່ ອມຕິດການຂະຫຍາຍການປ່ໍາໄມ້ກັບວຽກ ງ ານຈັດຕັ ງ ຜຸ ມລ ໍ າ ເມ ໍ ່ ໍ າ, ຈັດອາຊີບຄົ ງ ທີ ່. ເຮັດໃຫ ້ ການຜະລິດ ແລະ ຊີ ວິດການເປັນຢູ ່ ຂ ອ ງ ບັນດາຄອບຄົ ວ ທີ ່ ຫ ໍ ່ ໍ ກ ່ ໍ ຈັດອາຊີບ ແລະ ຕັ ງ ຜຸ ມລ ໍ າ ເມ ໍ ່ ໍ າ ຄົ ງ ທີ ່ ເປັນປົ ກ ກະ ຕິ. ສືບຕ ່ ໍ ລ ໍ ົ ງ ທຶ ນ ເພ ື ່ ອ ສ ໍ ໍ າ ເລັ ດ ບັ ນ ດ າ ຮ ່ ໍ າ ງ ຍັ ດ ຕ ິ ຂ ອ ງ ໂ ຄ ງ ການ 327, ໃ ຫ ້ ບ ູ ລ ິ ມ ະ ສ ິ ດ ປ ະ ຈ ໍ ໍ າ ປ ີ ຈ ະ ເ ປ ິ ດ ຮ ່ ໍ າ ງ ຍ ັ ດ ຕ ິ ແ ຕ ່ 80-100 ແ ຜ ນ ຂ ຶ ້ ນ ຕ ື ່ ມ ໃ ຫ ້ ເ ຂ ດ ທ ີ ່ ຍ ັ ງ ຈ ັ ດ ອ າ ຊ ີ ບ ແ ລ ະ ຕ ັ ້ ງ ຜ ຸ ມ ລ ໍ ໍ າ ເ ມ ໍ ່ ໍ າ ແ ບ ບ ເ ຄ ື ່ ອ ນ ທ ີ ່ . ເ ມ ື ່ ອ ປ ີ 2000 ຈ ະ ສ ໍ ໍ າ ເ ລ ັ ດ ວ ຽ ກ ງ ານ ຈ ັ ດ ອ າ ຊ ີ ບ , ຈ ັ ດ ຕ ັ ້ ງ ຜ ຸ ມ ລ ໍ ໍ າ ເ ມ ໍ ່ ໍ າ ຄ ົ ງ ທ ີ ່ ໂ ດ ຍ ຟ ື ້ ນ ຖ ານ ໃ ນ ທ ົ ່ ວ ປ ະ ເ ທ ດ.

ໂຄງປະກອບໂຄງລ ່ ໍ າ ງ ແລະ ການບໍ ລິ ການ

ກ ່ ຽ ວ ກ ັ ບ ຄ ົ ມ ມ ະ ນ າ ຄ ົ ມ , ລ ົ ງ ທ ຶ ນ ໃ ຫ ້ ຍ ົ ກ ລ ະ ດ ັ ບ ຄ ຸ ນ ນ ະ ພ າ ບ ບ ັ ນ ດ າ ເ ສ ັ ້ ນ ທ າ ງ ແ ຫ ່ ງ ຊ າ ດ ; ເ ສ ັ ້ ນ ທ າ ງ ລ ຽ ບ ຕ າ ມ ຊ າ ຍ ແ ດ ນ ແ ລ ະ ບ ັ ນ ດ າ ເ ສ ັ ້ ນ ທ າ ງ ພ າ ໄ ປ ຫ າ ບ ັ ນ ດ າ ເ ມ ື ອ ງ , ຕ າ ແ ສ ງ ເ ຂ ດ ພ ູ ດ ອ ຍ . ເ ຊ ື ່ ອ ມ ຕ ິ ດ ກ ານ ຈ ັ ດ ແ ບ ่ ງ ພ ື ້ ນ ລ ะ ເ ມ ື ອ ງ ຄ ື ນ ໃ ໝ ่ ກ ັ ບ ກ ານ ກ ໍ ່ ສ ້ າ ງ ຖ ະ ໜ ົ ນ ຫ ົ ນ ທ າ ງ ທ ັ ້ ງ ນ ີ ້ ກ ໍ ່ ເ ພ ื ่ ອ ໃ ຫ ้ ຄ ົ ມ ມ ະ ນ າ ຄ ົ ມ ຮ ັ ບ ໃ ຊ ้ ບ ັ ນ ດ າ ຈ ຸ ດ ພ ື ้ ນ ລ ะ ເ ມ ื ອ ง ເ ป ็ น ย ่ า ง ด ี . ร อ ด ป ี 2000, ບ ັ ນ ດ າ ຕ າ ແ ສ ง ห ส ี ก ุ ่ ม ต า แ ส ง เ ก ื อ บ ท ั ้ ง ห ม ด ล ้ อ ม แ ต ่ ม ี ท า ง ล ็ ด โ อ โ ต ร อ ด ใ จ ก า ง .

ກ ่ ຽ ວ ກ ັ ບ ພ ະ ລ ັ ง ง า ນ , ເ ມ ื ่ อ ป ี 2000 ເ ຊ ื ่ ง ເ ທ ດ ສ ะ ບ ານ ເ ມ ื อ ง ม ี ไ ฟ ฟ ้ า ก ว ม เ อ ็ า 100% ແ ລ ะ ต า แ ส ง ม ี ไ ฟ ฟ ้ า ป ะ ม า น 60-70% ใ ม

ยอดปะลิมาณตาแสง.

ກ່ຽວກັບຊົນລະປະທານ, ຂຸກຍູ້ວຽກງານກໍ່ສ້າງອ່າງຂັງນ້ຳຢ່າງແຂງ ແຮງຮັບປະກັນລະບາຍນ້ຳເຂົ້ານາ ແລະ ລະບາຍນ້ຳອັ່ງໃຫ້ແກ່ບັນດາ ບໍລິເວນຜະລິດທັນຍາຫານແລະ ໄມ້ອຸດສາຫະກຳລວມສູນ, ສະໜອງ ນ້ຳໃຫ້ແກ່ອຸດສາຫະກຳ ແລະ ຕົວເມືອງ, ຖ້າມີເງື່ອນໄຂອະນຸຍາດຈະ ສົມທົບກັບການຂະຫຍາຍໄຟຟ້າ. ສືບຕໍ່ປະຕິບັດນ້ຳສະອາດໃຫ້ແກ່ຊົນ ນະບົດ. ເມື່ອປີ 2000 ຈຳນວນພົນລະເມືອງໄດ້ໃຊ້ນ້ຳສະອາດກວມ ເອົາ 80%.

ກໍ່ສ້າງ ແລະ ຂະຫຍາຍຕົວເມືອງ, ຕົວເມືອງຍ່ອຍຂັ້ນເມືອງ, ຕົວ ເມືອງຍ່ອຍຂັ້ນຕາແສງເພື່ອຂຸກຍູ້ ແລະ ຊ່ວຍຊຸຊົນນະບົດເຂດພູດອຍຂະ ຫຍາຍຕົວ, ຍົກມາດຕາສ່ວນພົນລະເມືອງໃນຕົວເມືອງແຕ່ 14% ແຕ່ ປີ 1994 ຂຶ້ນ 18% ໃນປີ 2000. ເຮັດໃຫ້ບັນດາຈຸດການຄ້າຂັ້ນເຂດ ແຄວ້ນ, ເທດສະບານແຂວງ, ເມືອງ ແລະ ກຸ່ມຕາແສງປະກົດເປັນຮູບ. ລັດຊ່ວຍຊູລາຄາໃຫ້ແກ່ສິນຄ້າຂະນິດພື້ນຖານ(ເກືອອີອົດ, ນ້ຳມັນ, ເຈ້ຍ ໃຫ້ນັກຮຽນ...) ສົ່ງເສີມພາກສ່ວນເສດຖະກິດຕ່າງໆເຂົ້າຮ່ວມການລົງ ທຶນ ແລະ ສະໜອງສິນຄ້າພາຍໃນເຂດແຄວ້ນ. ສູ້ຊົນທຳການຂາອອກ ບັນລຸຄວາມໄວເພີ່ມຂຶ້ນສະເລ່ຍ 20-30% ຕໍ່ປີ.

ພິທັກຮັກສາ ແລະ ຂຸດຄົ້ນຄວາມງາມຂອງທີວທັດທຳມະຊາດ ແລະ ບັນດາວັດຖຸບູຮານດ້ານເປັນປະຫວັດການເພື່ອຂະຫຍາຍການທ່ອງ ທ່ຽວ.

ປະຕິບັດລາຍການກະຈາຍສຽງ, ໂທລະພາບ, ໂຄງການຂະຫຍາຍຕິດຕໍ່ສື່ສານ; ຮອດປີ 2000 ຈຳນວນເມືອງທີ່ມີສະຖານີກະຈາຍໂທລະພາບຄຶນໃໝ່ກວມເອົາ 100%, ຈຳນວນຕາແສງທີ່ມີໂຮງການໄປສະນີເກືອບທັງໝົດ.

ຂະຫຍາຍຕາໜ່າງສາທາລະນະສຸກ, ການສຶກສາຢູ່ຕາແສງ, ບ້ານ: ປີ 2000 ຈຳນວນຕາແສງມີສຸກສາລາສາທາລະນະສຸກແມ່ນ 100%, ມີຮາກຖານຢາປົວພະຍາດ, ເຊິ່ງຮັບປະກັນສະໜອງຢາປົວທຳມະດາຢ່າງພຽງພໍທຸກຊະນິດໃຫ້ແກ່ປະຊາຊົນ, ມີພາຫະນະຢ່າງພຽງພໍທຸກຊະນິດເພື່ອກວດ ແລະ ປິ່ນປົວພະຍາດທຳມະດາ; ເຜີຍແຜ່ການສຶກສາຊັ້ນປະຖົມແບບບັງຄັບ ແລະ ລົບລ້າງຄວາມກຶກໜັງສືໃຫ້ແກ່ບັນດາຄົນໃນໄວອາຍຸຮ່ຳຮຽນ. ເປີດກວ້າງບັນດາຮູບການສຶກສາ, ປັບປຸງ ແລະ ຂະຫຍາຍບັນດາໂຮງຮຽນກິດນອນ ແລະ ເຄິ່ງກິນນອນໃຫ້ແກ່ຊົນຊາດຕ່າງໆ.

ຫຼຸດຜ່ອນມາດຕາສ່ວນຄອບຄົວທຸກລົງໃຕ້ 30% ຮອດປີ 2000, ເຊິ່ງບໍ່ໃຫ້ມີຄອບຄົວອຶດຢາກ.

ວິທີແກ້ໄຂຕົ້ນຕໍ:

ເຂດແຄວ້ນທີ I, ປະກອບດ້ວຍບັນດາໃຈກາງຕົວເມືອງ ຕົວເມືອງຍ່ອຍ ແລະ ເຂດອຸດສາຫະກຳ, ເຊິ່ງປະຈຸບັນນີ້ກວມເອົາປະມານ 0,1% ໃນເນື້ອທີ່ທຳມະຊາດ ແລະ 15% ໃນຈຳນວນພົນລະເມືອງຂອງບັນແຂວງ ແລະ ເມືອງຢູ່ເຂດພູດອຍ. GDP ສະເລ່ຍຕາມຫົວຄົນລື່ນກວ່າ

ລະດັບສະເລ່ຍລວມຕາມຫົວຄົນຂອງທົ່ວປະເທດ. ກົນໄກລົງທຶນຢູ່ທີ່ນີ້ ແມ່ນລະດົມຈາກວົງຄະນາຍາດ ແລະ ທຶນຢືມເປັນຕົ້ນຕໍ, ສ້າງຕະ ຫລາດພາຍໃນເຂດຂຶ້ນເປັນຫົວຂອດແລກປ່ຽນລະຫວ່າງເຂດພູດອຍ ກັບບໍລິເວນຕ່າງໆ ໃນທົ່ວປະເທດ; ເຊິ່ງຂະຫຍາຍຕົວດ້ວຍຈັງຫວະສູງ ກວ່າລະດັບສະເລ່ຍຂອງທົ່ວປະເທດເພື່ອຊຸກຍູ້ການຂະຫຍາຍຕົວຂອງ ເຂດແຄວ້ນ.

ເຂດແຄວ້ນທີ II, ປະກອບດ້ວຍບັນດາເຂດທີ່ຊ້ອນລະຫວ່າງເຂດ ແຄວ້ນຕົວເມືອງກັບເຂດສອກຫລີກ, ເຂດຫ່າງໄກ, ເຂດສູງ, ເຊິ່ງປະ ຈຸບັນນີ້ກວມເອົາເນື້ອທີ່ທຳມະຊາດເກືອບ 15% ແລະ ມີພົນລະ ເມືອງກວມເອົາ 25% ຈຳນວນພົນລະເມືອງຂອງບັນດາແຂວງ ແລະ ເມືອງຢູ່ເຂດພູດອຍ; GDP ສະເລ່ຍຕາມຫົວຄົນເມື່ອປີ 1994 ນັ້ນກໍ ເທົ່າທຽມ 70% ລະດັບປານກາງຂອງທົ່ວປະເທດ. ຄວາມໜາແໜ້ນ ຂອງທາງຄົມມະນາຄົມຍັງຕ່ຳ, ເຊິ່ງຫາກໍ່ມີ 0,18 ກິໂລແມັດ/ກິໂລ ແມັດເນື້ອທີ່. ກົນໄກລົງທຶນສຳລັບເຂດແຄວ້ນດັ່ງກ່າວນີ້ກ່ຽວກັບໂຄງ ລ່າງແມ່ນມີການຊ່ວຍຊູຍູ້ໜູນຢ່າງຕັ້ງໜ້າຈາກລັດ, ລະດົມທຶນ ຈາກວົງຄະນາຍາດ ແລະ ທຶນສິນເຊື່ອ. ລົບລ້າງຄວາມອຶດຢາກ ແລະ ຈັດຕັ້ງຜຸມລຳເນົາ, ຈັດອາຊີບຄົງທີ່ບັນລຸ 100% ຫລຸດຜ່ອນມາດຕາ ສ່ວນທຸກຍາກລົງໃຕ້ 30% ກ່ອນປີ 2000.

ເຂດແຄວ້ນທີ III, ແມ່ນເຂດແຄວ້ນທີ່ມີຂໍ້ຫຍຸ້ງຍາກກວ່າໝູ່, ເຊິ່ງ ໃນປະຈຸບັນນີ້ກວມເອົາ 85% ຂອງເນື້ອທີ່ທຳມະຊາດ ແລະ ກວມເອົາ

60% ພົນລະເມືອງຂອງບັນດາແຂວງ ແລະ ເມືອງຢູ່ເຂດພູດອຍ, ອັນ ປະກອບດ້ວຍເຂດແຄວ້ນຢູ່ເຂດສູງ, ເຂດສອກຫລີກ, ເຊິ່ງເງື່ອນໄຂດຳ ເນີນຊີວິດ ແລະ ການບໍລິການ, ໂຄງລ່າງແມ່ນມີຂໍ້ຫຍຸ້ງຍາກຢ່າງສຸດ ຂີດ; ດິນກະສິກຳແມ່ນຂາດເຂີນ, ຍັງບໍ່ທັນມີເງື່ອນໄຂຢ່າງພຽງພໍເພື່ອ ກ້າວຂຶ້ນທຳການຜະລິດສິນຄ້າ; GDP ສະເລ່ຍຕາມຫົວຄົນເມື່ອປີ 1994 ພຽງແຕ່ເທົ່າທຽມ 31% ລະດັບປານກາງຂອງທົ່ວປະເທດເທົ່ານັ້ນ. ຄວາມໜາແໜ້ນທາງຄົມມະນາຄົມພຽງແຕ່ມີ 0,09 ກິໂລແມັດ/ກິໂລແມັດນົນທົນເທົ່ານັ້ນ, ເຊິ່ງໃນນັ້ນຍັງມີ 464 ຕາແສງອີກ ຍັງບໍ່ທັນມີ ທາງລົດໂອໂຕຊ້ຳ. ຈຸດໝາຍຂອງເຂດແຄວ້ນດັ່ງກ່າວນີ້ ມາຮອດປີ 2000 ກ່າວຄືລົບລ້າງຄວາມອຶດຢາກ, ຫລຸດຜ່ອນຄວາມ ທຸກຍາກ, ຫຼຸດຜ່ອນຈຳນວນຄອບຄົວທຸກທີ່ມີໃນປະຈຸບັນແຕ່ 70% ໃຫ້ລົງ ໃຕ້ 40%; ຈັດຕັ້ງຜຸມລຳເນົາຄົງທີ່ 100%. ລັດຕ້ອງມີວິທີການໂຮມ ສູມທຶນແຫ່ງງົບປະມານໃຫ້ລົງທຶນຕາມໂຄງການສັງລວມ ແລະ ມີການ ຊີ້ນຳຢ່າງແໜ້ນໜາໃນການຊ່ວຍໃຫ້ເຂດແຄວ້ນດັ່ງກ່າວນີ້ຂະຫຍາຍ ຕົວໂດຍໄວ, ຊ່ວຍເຫລືອບັນດາແຂວງຢູ່ເຂດຊາຍແດນທີ່ດເໜືອໃນ ການເຮັດໃຫ້ປະຊາຊົນເຕົ້າໂຮມກັນເຂົ້າ.

ທຶນສຳລັບການລົງທຶນງົບປະມານໃຫ້ແກ່ເຂດພູດອຍ ແລະ ເຂດພື້ ນ້ອງຮ່ວມຊາດບັນດາຊົນຊາດຈະໄດ້ຮັບການໂຮມສູນເພື່ອຊ່ວຍຊຸການ ກໍ່ສ້າງບັນດາພື້ນຖານຄົມມະນາຄົມ, ໄຟຟ້າ, ແນວປູກພັນສັດ, ໂຮງ ຮຽນ, ສຸກສາລາສາທາລະນະສຸກ, ໂຮງໝໍ. ທຶນສິນເຊື່ອຈະໄດ້ຮັບການ ໂຮມສູນເພື່ອຊ່ວຍຊຸການພັດທະນາກະສິກຳ-ປ່າໄມ້, ລົບລ້າງຄວາມອຶດ

ຢາກ, ຫລຸດຜ່ອນຄວາມທຸກຍາກ.

ຊ້ອມ ແລະ ປະສົມປັນດາ ໂຄງການພັດທະນາໃນບໍລິເວນເຂດພູດອຍ ແລະ ເຂດຜີນ້ອງຮ່ວມຊາດປັນດາຊົນຊາດເພື່ອລົງທຶນຢ່າງຄົບຊຸດ, ເປັນຮູບປະທຳຕໍ່ຜົນປະໂຫຍດຂອງເຂດຜີນ້ອງຮ່ວມຊາດປັນດາຊົນຊາດ. ນຳໃຊ້ວິທີຄຸ້ມຄອງອັນສະເພາະລາຍໃນການລົງທຶນໃຫ້ເຂດພູດອຍໃນແຕ່ລະເຂດແຄວ້ນຕົວຈິງ. ມີນະໂຍບາຍບູລິມະສິດໃນການກໍ່ສ້າງ, ບຳລຸງພະນັກງານຄົນຊົນຊາດ, ຍົກສູງຄວາມສາມາດໃຫ້ແກ່ພະນັກງານ, ໂດຍສະເພາະຢ່າງຍິ່ງແມ່ນພະນັກງານນຳພາໃນອຳນາດການປົກຄອງຂັ້ນຕ່າງໆ, ພະນັກງານຄຸ້ມຄອງເສດຖະກິດ. ເພີ່ມທະວີພະນັກງານໃຫ້ແກ່ຮາກຖານ. ປະກາດນະໂຍບາຍຕ່າງໆທີ່ສົ່ງເສີມພະນັກງານຜູ້ເຮັດວຽກຢູ່ເຂດສູງ, ເຂດສອກຫລີກ, ພະນັກງານຢູ່ເຂດທົ່ງພຽງຂຶ້ນເຮັດວຽກຢູ່ເຂດພູດອຍ. ຈັດຕັ້ງປັນດາຖັນແຖວນັກຮຽນຮູ້ທີ່ຫາກໍ່ອອກຈາກໂຮງຮຽນໃໝ່ອາສາສະໝັກລົງໄປຫາບ້ານຊ່ອງເພື່ອຊ່ວຍຜີນ້ອງຮ່ວມຊາດປັນດາຊົນຊາດ.

11 - ໂຄງການວ່າດ້ວຍການລຶບລ້າງຄວາມອຶດຢາກ, ຫຼຸດຜ່ອນຄວາມທຸກຍາກ.

ຈຸດໝາຍ:

ຫຼຸດຜ່ອນມາດຕາສ່ວນຄອບຄົວຜູ້ທຸກຍາກອຶດຢາກໃນຍອດປະລິ

ມາມຄອບຄົວທົ່ວປະເທດແຕ່ 20-25% ໃນປະຈຸບັນນີ້ລົງປະມານ 10% ເມື່ອປີ 2000, ຫລຸດຜ່ອນສະເລ່ຍ 3 ແສນຄອບຄົວຕໍ່ປີ.

ພາຍໃນແຕ່ 2-3 ປີທຳອິດຂອງແຜນການ 5 ປີ, ສຸມໃສ່ລົບລ້າງໄພອຶດຢາກທີ່ເປັນມານປີໂດຍຝຶ້ນຖານ.

ກົນໄກແຫ່ງນະໂຍບາຍຕໍ່ຜູ້ທຸກຍາກ ແລະ ຕາແສງທຸກຍາກ:

ປະຈຸບັນນີ້ໄດ້ມີ 14 ໂຄງການແຫ່ງຊາດ ແລະ ຮ່າງຍັດຕິ ໄດ້ຮັບການປະຕິບັດເປັນຈິງເຊິ່ງມີເນື້ອໃນເຊື່ອມຕິດກັບການລົບລ້າງຄວາມອຶດຢາກ, ຫລຸດຜ່ອນຄວາມທຸກຍາກ. ຕັ້ງແຕ່ປີ 1996 ເປັນຕົ້ນໄປຈະຊ້ອນ ແລະ ປະສົມໂຄງການລົບລ້າງຄວາມອຶດຢາກ, ຫລຸດຜ່ອນຄວາມທຸກຍາກກັບໂຄງການອື່ນໆ, ເຊິ່ງໃນນັ້ນຈະເອົາໂຄງການແຫ່ງຊາດວ່າດ້ວຍການແກ້ໄຂວຽກເຮັດງານທຳ ແລະ ປົກຫຸ້ມດິນວ່າງຜູດຮ້ຍປອກລ້ອນໃຫ້ຂຽວງາມເປັນຫລັກແຫລ່ງ.

ເພີ່ມເຕີມບັນດານະໂຍບາຍຊ່ວຍໃຫ້ຄົນທຸກຍາກ, ຄອບຄົວທຸກຍາກ, ຕາແສງທຸກຍາກຈັດຕັ້ງ ທຳການຜະລິດ, ຮັບປະກັນການດຳເນີນຊີວິດ ແລະ ກ້າວຂຶ້ນຮ່ຳລວຍແດ່, ກ່ອນອື່ນໝົດແມ່ນສຸມໃສ່ບັນດານະໂຍບາຍດັ່ງນີ້:

ຄະນະກຳມະການປົກຄອງປະຊາຊົນບັນດາຂັ້ນແຂວງ, ເມືອງສຳຫລວດຄົ້ນຄືນໃໝ່ຕໍ່ເນື້ອທີ່ດິນທັງໝົດໃນບໍລິເວນຜືນແຜນດິນ, ຮີບໂຮມ

ທີ່ດິນຄືນເຊິ່ງໄດ້ມອບໃຫ້ບໍ່ຖືກຕ້ອງຕາມເປົ້າໝາຍ, ບໍ່ຖືກຕ້ອງຕາມ ນະໂຍບາຍ; ຮົບໂຮມທີ່ດິນຄືນເຊິ່ງໄດ້ມອບໃຫ້ບັນດາວິສາຫະກິດ, ບັນ ດາອົງການໃຊ້ທີ່ບໍ່ຖືກຕ້ອງຕາມຈຸດໝາຍ, ທັງນີ້ກໍ່ເພື່ອມອບໝາຍໃຫ້ ບັນດາຄອບຄົວຊາວກະສິກອນຜູ້ທຸກຍາກເຊິ່ງຍັງບໍ່ທັນໄດ້ຮັບການມອບ ໝາຍໃຫ້ຫລືມອບໝາຍແລ້ວຫາກຍັງບໍ່ທັນຖືກຕ້ອງຕາມລະດັບ. ຂົ ນ ຂວາຍ ແລະ ຊ່ວຍເຫລືອຄອບຄົວຊາວກະສິກອນຜູ້ທຸກຍາກໃຫ້ໄປຫາ ເຂດເສດຖະກິດໃໝ່ເພື່ອເຮັດໃຫ້ການຜະລິດ ແລະ ຊີວິດການເປັນຢູ່ເປັນ ປົກກະຕິໂດຍໄວ.

ເປີດກວ້າງບັນດາຄັງສິນເຊື່ອໃຫ້ບັນດາຄອບຄົວຜູ້ທຸກຍາກຢືມທຶນ ເພື່ອທຳການຜະລິດດ້ວຍກຳໄລຜ່ອນ. ຄະນະກຳມະການປົກຄອງປະຊາ ຊົນຕາແສງ, ຄຸ້ມເມືອງຮັບຮອງໃຫ້ບັນດາຄອບຄົວຜູ້ທຸກຍາກຢືມທຶນ ໂດຍບໍ່ຕ້ອງການໄຖ່ແທນ. ຜ່ານທະນາຄານຮັບໃຊ້ຜູ້ທຸກຍາກ ແລະ ບັນ ດາຄັງອຸດໜູນຂອງບັນດາອົງການຈັດຕັ້ງຮັບປະກັນແຕ່ 90-95% ໃນ ຈຳນວນຄອບຄົວຜູ້ທຸກຍາກໄດ້ຮັບການຢືມທຶນເພື່ອທຳການຜະລິດ, ເຊິ່ງໃນນັ້ນກໍ່ມີບັນດາຄອບຄົວເປັນເປົ້າໝາຍຂອງນະໂຍບາຍ, ບັນດາ ຄອບຄົວທີ່ອຶດຢາກທຸກຍາກກວ່າເພື່ນຈະຖືກຮັບຄວາມບູລິມະສິດໃຫ້ຢືມ ກ່ອນ. ກອງທຶນສຳລັບປະຕິບັດຈຸດໝາຍດັ່ງກ່າວນີ້ປະກອບດ້ວຍທຶນທີ່ ມີໂດຍຕົນເອງຂອງທະນາຄານ, ທຶນຂອງບັນດາໂຄງການ, ທຶນຂອງ ຄັງລົບລ້າງຄວາມອຶດຢາກ, ຫລຸດຜ່ອນຄວາມທຸກຍາກ, ທຶນໂດຍສາ ກົນຊ່ວຍເຫຼືອລວມທັງທຶນຢືມ, ທຶນອຸດໜູນຈາກງົບປະມານແຫ່ງລັດ...

ບັນດາຣາກຖານກໍ່ສ້າງ ແລະ ບັນດາສູນສອນອາຊີບຂອງລັດປະຕິບັດການກໍ່ສ້າງວິຊາການໃຫ້ລູກຫລານຂອງບັນດາຄອບຄົວທຸກໂດຍບໍ່ເອົາຄ່າຮຽນ; ພ້ອມກັນນັ້ນກໍ່ອຸດໜູນງົບປະມານໃຫ້ແກ່ບັນດາວິສາຫະກິດເຊິ່ງເລືອກເຟັ້ນເອົາລູກຫລານຂອງບັນດາຄອບຄົວທຸກເຂົ້າກໍ່ສ້າງ ແລະ ເຮັດວຽກ.

ກໍ່ສ້າງຖັນແຖວຜູ້ອາສາສະໝັກ, ເຊິ່ງປະກອບດ້ວຍບັນດາພະນັກງານເຕັກນິກ, ນັກສຶກສາທີ່ຫາກໍ່ເສັງໄດ້ ແລະ ບັນດາຊາວກະສິກອນຜູ້ເຮັດວຽກທຳງານເກັ່ງໃນບໍລິເວນ, ທັງນີ້ກໍ່ເພື່ອແນະນຳວິທີທຳມາຫາກິນ ແລະ ເຜີຍແຜ່ບັນດາວິທີການເຕັກນິກຊ່ວຍໃຫ້ຜູ້ທຸກຍາກທຳການຜະລິດທະກິດ.

ຕໍ່ບັນດາເຂດສູງ, ເຂດສອກຫລີກ, ເຂດຫ່າງໄກເຊິ່ງບໍລິໂພກຜະລິດຕະພັນປະສົບຂໍ້ຫຍຸ້ງຍາກ, ລາຄາຖືກ, ທັງນັ້ນລັດຈະຜ່ານບັນດາວິສາຫະກິດແຫ່ງລັດເພື່ອເກື້ອກຸນບໍລິໂພກຜະລິດຕະພັນ ແລະ ຊ່ວຍຊູລາຄາໃຫ້.

ກໍ່ສ້າງນະໂຍບາຍຊ່ວຍເງິນໃຫ້ການລົງທຶນສຳລັບກິດຈະການສັງຄົມທີ່ຈຳເປັນຍິ່ງໃຫ້ແກ່ຕາແສງທຸກ ກວ່າເພີ່ນ 1.300 ຕາແສງ (ທາງລົດໂອໂຕ ແລະ ສາຍໄຟຟ້າໄປຮອດໃຈກາງຂອງຕາແສງ; ນ້ຳສະອາດໃຫ້ພົນລະເມືອງ; ຫ້ອງຮຽນສຳລັບນັກຮຽນຊັ້ນ I, II, ລົບລ້າງຫ້ອງຮຽນຄາບທີ 3; ສຸກສາລາສາທາລະນະສຸກ, ຕະຫລາດປະຈຳຕາແສງຫລືສະຫະຕາແສງ).

ລຸກຫລານຂອງບັນດາຄອບຄົວທຸກເຊິ່ງໄປຮຽນຢູ່ໂຮງຮຽນສາມັນ ຕ່າງໆລ້ວນແຕ່ຖືກຍົກເວັ້ນຄ່າຮຽນ (ຫລືຖືກຈ່າຍເບ້ຍລ້ຽງໃຫ້ເພື່ອປະ ກອບຄ່າຮຽນ); ສຳລັບຊັ້ນປະຖົມສຶກສາຈະໃຫ້ຢືມປຶ້ມຫລັກສູດ, ໃຫ້ປຶ້ມ ຂຽນ ໃຫ້ລ້ຳ ແລະ ໄດ້ຮັບການຍົກເວັ້ນທຸກການປະກອບອື່ນໆ. ສຳລັບ ບັນດາຄອບຄົວປະສົບຂໍ້ຫຍຸ້ງຍາກເກີນລະດັບກໍ່ອາດຈະຊ່ວຍເບ້ຍລ້ຽງ ຂຶ້ນຕື່ມ, ຈັດຕັ້ງບັນດາຫ້ອງຮຽນແຕ່ງຄວາມສົງສານ ໃຫ້ແກ່ບັນດາລູກ ຫລານຂອງຊາວຜູ້ທຸກຍາກ ໂດຍແມ່ນບັນດານາຍຄູອາສາສະໝັກເປັນ ຜູ້ສິດສອນ.

ບັນດານັກຮຽນເກັ່ງເຊິ່ງເປັນລູກຫລານຂອງຄອບຄົວທຸກ, ໂດຍສະ ເພາະຢ່າງຍິ່ງແມ່ນລູກນ້ອງຂອງຝ່ີນ້ອງຮ່ວມຊາດບັນດາຊົນຊາດ ສ່ວນຫນ້ອຍ, ໃຫ້ບູລິມະສິດໃນການເລືອກເຟັ້ນເຂົ້າບັນດາໂຮງຮຽນ ກິນນອນຂອງຊົນຊາດ, ບັນດາໂຮງຮຽນມະຫາວິທະຍາໄລ, ວິທະຍາ ໄລ ແລະ ໃຫ້ບູລິມະສິດເບ້ຍລ້ຽງປະຈຳປີ.

ຍົກເວັ້ນຄ່າໃຊ້ຈ່າຍມອບໃບປະກັນສາທາລະນະສຸກໃຫ້ບັນດາຄອບ ຄົວທຸກຕາມຈຳນວນຄົນໃນຄອບຄົວ. ບັນດາແຂວງ, ນະຄອນມີເງື່ອນ ໄຂກໍ່ອາດຈະສ້າງຕັ້ງຮາກຖານກວດ ແລະ ປິ່ນປົວພະຍາດແບບມະນຸດ ສະທຳໃຫ້ຄົນທຸກ.

ປະສານສົມທົບບັນດາໂຄງການສັງຄົມອື່ນໆຄື: ສະຖິຕິພົນລະເມືອງ, ທັນຄອບຄົວເປັນແຜນການ, ຕ້ານພະຍາດເປັນໄຂ້ສັ່ນ, ຄໍເອີ, ສັກຢາ ແບບເປີດກວ້າງ, ກັນ ແລະ ຕ້ານໄພຮ້າຍທາງສັງຄົມ ແລະ ໂຄງການ

ດຳເນີນງານແຫ່ງຊາດເພື່ອເດັກນ້ອຍ 1991-2000 ເພື່ອດູແລເບິ່ງແຍງສຸຂະພາບໃຫ້ຄົນທຸກ.

ຈັດຕັ້ງສຶບສວນເພື່ອບົ່ງຊາດຕໍ່ຈຳນວນຄອບຄົວອຶດຢາກ, ທຸກຍາກ ຂາດຄວາມສາມາດໃນການອອກແຮງງານ ແລະ ກໍ່ສ້າງມາດຕະຖານ ນະໂຍບາຍຊ່ວຍເຫລືອເກື້ອກຸນອັນລະອຽດຕາມນະໂຍບາຍສົງເຄາະ ສັງຄົມແນໃສ່ເຮັດໃຫ້ຊີວິດການເປັນຢູ່ອັນຍາວນານຂອງເຂົ້າເປັນປົກ ກະຕິ.

ພາກທີສາມ

ບັນດາວິທີແກ້ໄຂ ແລະ ນະໂຍບາຍຕົ້ນຕໍ

I-ຄວາມຄຸ່ມຄ່ຽງໃຫຍ່ຈຳນວນຫນຶ່ງຂອງແຜນການ 5ປີ1996-2000

1-ຄວາມດຸນດ່ຽງທາງການເງິນ.

ຄວາມຄຸ່ມຄ່ຽງທາງດ້ານສະສົມ-ໃຊ້ສອຍ:

ປຽນແປງໃໝ່ສຳລັບບັນດາກົນໄກນະໂຍບາຍວ່າດ້ວຍເສດຖະກິດ ແລະ ສັງຄົມເພື່ອແນະນຳການໃຊ້ສອຍຂອງພົນລະເມືອງໃຫ້ສອດຄ່ອງ ກັບຄວາມສາມາດຂອງພື້ນຖານເສດຖະກິດ. ຄາດຄະເນ ໃນ 5 ປີທີ່ຈະ

ເຖິງນີ້ການໃຊ້ສອຍສະເລ່ຍຕາມຫົວຄົນຈະເພີ່ມຂຶ້ນປະມານ 6% ຕໍ່ປີ, ທັງນີ້ຈັ່ງຫວະເພີ່ມຂຶ້ນເກືອບສອງເທົ່າເມື່ອປຽບກັບ 5 ປີກ່ອນໆ ແລະ ຮອດ ປີ 2000 ຈະເພີ່ມຂຶ້ນ 1,5 ເທົ່າເມື່ອປຽບກັບປີ 1990. ການສະສົມ ແລະ ການລົງທຶນພັດທະນາຈະເພີ່ມຂຶ້ນສະເລ່ຍ 15% ຕໍ່ປີ. ການສະສົມຊຸບສົມບັດລວມທັງໝົດໃນ 5 ປີ ປະມານ 33% ເມື່ອປຽບກັບ GDP (5 ປີ 1991-1995, ມາດຕາສ່ວນນີ້ແມ່ນ 24,6%) ອັນປະກອບດ້ວຍ: ການສະສົມຊຸບສົມບັດຄົງຕົວທີ່ກວມເອົາສ່ວນຕົ້ນຕໍ (ປະມານ 90%), ສະສົມຊຸບສົມບັດເຄື່ອນທີ່ ແລະ ເພີ່ມແຮໄວ້ຊຸບສົມບັດອັນລ້ຳຄ່າ ແລະ ຫາໄດ້ຍາກ.

ກ່ຽວກັບເງິນຕາຕ່າງປະເທດ:

ພາຍໃນ5 ປີ 1996-2000 ຄາດຄະເນກອງເງິນຕາຕ່າງປະເທດ ຈະເຂົ້າສູ່ປະເທດເຮົາປະມານ 88-90 ຕື້USD; ເຊິ່ງໃນນັ້ນ, ການຂາອອກປະມານ 58-60 ຕື້USD; ຖ້າວ່າລວມທັງການຂາອອກປະຈຳທີ່ (ທັງສິນຄ້າ ແລະ ການບໍລິການ) ຍອດປະລິມານເງິນຕາຕ່າງປະເທດເປັນລາຍໄດ້ຈາກການຂາອອກປະມານແຕ່ 64,5 ເຖິງ 67 ຕື້USD; ຈາກແຫລ່ງຢືມ ແລະ ຊ່ວຍເຫລືອປະມານ 7-8 ຕື້USD; ສ່ວນທີ່ຍັງແມ່ນການລົງທຶນໂດຍກົງ, ການແລກປ່ຽນເງິນຕາຕ່າງປະເທດ...

ຍອດປະລິມານລາຍຈ່າຍດ້ວຍເງິນຕາຕ່າງປະເທດໃນ 5 ປີ ທີ່ຄາດຄະເນ 86-87 ຕື້USD, ເຊິ່ງໃນນັ້ນ, ລາຍຈ່າຍຂາເຂົ້າ 75 ຕື້USD;

ການໃຊ້ຈ່າຍບໍລິການຂອງບັນດາຂະແໜງການທາງອາກາດ, ໄປສະ ນີ, ການທ່ອງທ່ຽວ... ປະມານ 2 ຕື້USD; ສ່ວນທີ່ຍັງແມ່ນລາຍຈ່າຍ ໃຊ້ໜີ້, ບັນດາໂຮງງານທີ່ມີທຶນໃນການລົງທຶນຈາກຕ່າງປະເທດຈະຈັດ ສົ່ງກຳໄລກັບຄືນຫາປະເທດຂອງເຂົາ...

ເປັນອັນວ່າອີງຕາມການຄາດຄະເນລ່ວງໜ້າໃນບາດກ້າວທຳ ອິດ, ໃນ 5 ປີ 1996-2000, ການຂາເຂົ້າຈະສົ່ນກວ່າການຂາອອກ ດ້ວຍຂະໜາດໃຫຍ່ກໍ່ຕາມແຕ່ຕາຊື່ງຊຳລະສາກົນສາມາດຍັງມີລາຍ ໄດ້ຄຸນຂຶ້ນ. ດ້ວຍເຫດນັ້ນ, ກຳລັງຊື້ຂອງເງິນຫວຽດນາມຈະຫະວີຂຶ້ນ ເມື່ອປຽບກັບເງິນຕາຕ່າງປະເທດທີ່ມີແຮງ, ແຕ່ຍັງບໍ່ທັນມີຄວາມສົດ ໃສ ແລະ ບໍ່ມີປະໂຫຍດໃຫ້ແກ່ການຂາອອກ, ທັງນີ້ຈະຕ້ອງມີວິທີແກ້ໄຂ ຢ່າງມີຜົນສັກສິດເພື່ອຄອບງຳຈຳກັດສະພາວະການດັ່ງກ່າວນີ້.

2 - ຄວາມຕ້ອງການງົບປະມານແຫ່ງລັດ.

ຄາດຄະເນການຈັດວາງຄວາມຕ້ອງການງົບປະມານແຫ່ງ ລັດຄືດັ່ງນີ້:

ຍອດປະລິມານລາຍໄດ້ງົບປະມານແຫ່ງລັດພາຍໃນ 5 ປີ 1996-2000 ປະມານ 21-22% GDP, ເຊິ່ງໃນນັ້ນເກັບພາສີ ແລະ ຄ່າປະມານ 20-21% GDP (1991-1995 ແມ່ນ 20%), ໂດຍ ສະເພາະປີ 1995: 21,6%).

ຍອດປະລິມານລາຍຈ່າຍງົບປະມານແຫ່ງລັດປະມານ 24-25% GDP (1991-1995 ແມ່ນ 25,5%); ເຊິ່ງໃນນັ້ນ, ລາຍຈ່າຍສຳລັບການໃຊ້ສອຍເປັນປະຈຳປະມານ 14% GDP; ໃຊ້ໜີ້ປະມານ 3,5% GDP, ຈັ່ງໄວ້ໃຫ້ແກ່ການລົງທຶນພັດທະນາປະມານ 6,5-7% GDP (1991-1995 ແມ່ນ 6,4%) ແລະ ເທົ່າກັບ 26% ຂອງຍອດປະລິມານລາຍຈ່າຍງົບປະມານແຫ່ງລັດ. ລາຍຈາຍຄຸນຍື້ນຂອງງົບປະມານ 3-3,5% GDP ແລະ ຄາດຄະເນ ການທົດແທນດ້ວຍແຫລ່ງຢືມພາຍໃນປະເທດຂຶ້ນເໜືອ 50%, ການຢືມຕາມກຳນົດເວລາຍາວນານຈາກຕ່າງປະເທດບໍ່ເຖິງ 50%.

ບັນດາມະໂຍບາຍ ແລະ ວິທີແກ້ໄຂປະຕິບັດໃຫ້ປະກົດເປັນຈິງ:

ສືບຕໍ່ດັດແປງລະບົບພາສີໃນບາດກ້າວທີ 2, ອັນຕອບສະໜອງຄວາມຕ້ອງການ ຂອງກິດຈະການປ່ຽນແປງໃໝ່ສຳລັບເສດຖະກິດ ແລະ ສອດຄ່ອງກັບລະບຽບການສາກົນແຕ່ກໍ່ບໍ່ຫລຸດຜ່ອນແຫລ່ງລາຍໄດ້ງົບປະມານ. ໃນການຊີ້ນຳດຳເນີນງານ, ເຊິ່ງນອກຈາກການເກັບພາສີ ແລະ ເກັບຄ່າໃຫ້ໝົດຕາມຂໍ້ກຳນົດກົດໝາຍ, ທັງຕ້ອງບູລະນະເຊິ່ງເຮັດໃຫ້ແຫລ່ງລາຍໄດ້ທະວີຂຶ້ນຕື່ມ, ທັງຂຸດຄົ້ນບັນດາແຫລ່ງລາຍໄດ້ອື່ນໆຢ່າງເດດຖານ(ທີ່ດິນ, ຊັບພາຍະກອນ, ເຮືອນຊານ, ສະຖານທີ່ປະຈຳການ...) ເພື່ອເພີ່ມລາຍໄດ້ງົບປະມານ, ອັນສະໜອງຄວາມຕ້ອງການໃຊ້ຈ່າຍອັນນັບມື້ນັບທະວີຂຶ້ນຂອງລັດໃຫ້ດີກວ່າ

ເກົ່າ. ພ້ອມກັນນັ້ນ, ເພື່ອປະຕິບັດຄວາມຍຸຕິທຳທາງສັງຄົມໃຫ້ປະກົດ ເປັນຈິງເປັນກ້າວໆ, ຕ້ອງດັດແປງ, ເພີ່ມເຕີມບັນດາລັດຖະດຳລັດວ່າ ດ້ວຍພາສີ, ດັດສົມລາຍໄດ້ຂອງບັນດາຊັ້ນຄົນຜົນລະເມືອງຢ່າງມີຜົນ ສັກສິດ.

ຮັບປະກັນລາຍຈ່າຍໃນການໃຊ້ສອຍເປັນປະຈຳຢູ່ລະດັບທີ່ຈຳເປັນ ອັນສົມເຫດສົມຜົນ, ປະຢັດ, ໃຫ້ບູລິມະສິດແກ່ໜ້າທີ່ກໍ່ສ້າງແຫລ່ງກຳ ລັງຄົນ, ຍົກສູງຄວາມຮູ້ຂອງປະຊາຊົນ, ຮັບເອົາເຕັກໂນໂລຢີທັນສະ ໄໝ, ຮັກສາສຸຂະພາບຂອງປະຊາຊົນ, ຮັບປະກັນການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ແກ້ໄຂບັນດາບັນຫາອັນຄັບຂັນໃນຂົງ ເຂດສັງຄົມ...

ບົນພື້ນຖານຊຸກຍູ້ການຜະລິດຢ່າງເຂັ້ມແຂງ ແລະ ປະຢັດໃນການ ຜະລິດກໍ່ຄືໃນການໃຊ້ສອຍເພື່ອເພີ່ມທຶນໂດຍໄວໃນການລົງທຶນກໍ່ສ້າງ ພື້ນຖານ. ສຳລັບທຶນຈາກຕ່າງປະເທດ, ຕ້ອງຮັບປະກັນການໃຊ້ຢ່າງ ມີຜົນສັກສິດ ແລະ ໃຊ້ໜີ້ໄດ້.

ຄວາມໄວໃນການເພີ່ມລາຍຈ່າຍສຳລັບການໃຊ້ສອຍເປັນປະຈຳ ຕ້ອງຫລຸດກວ່າຄວາມໄວໃນການເພີ່ມລາຍຈ່າຍໃຫ້ແກ່ການລົງທຶນ ແລະ ຫລຸດກວ່າຄວາມໄວ ໃນການເພີ່ມລາຍຈ່າຍງົບປະມານ.

ເພື່ອເປັນເຈົ້າການກວ່າອີກໃນການຊີ້ນຳດຳເນີນງານນັ້ນ, ງົບປະ ມານລາຍປີຕ້ອງມີການກຽມເພື່ອຢ່າງສົມເຫດສົມຜົນ ແລະ ມີຄັງແຮ

ໄວ້ແຫ່ງການເງິນຊ້ອນໃຫ້ປີຫນ້າ.

ຫລຸດຜ່ອນລາຍຈ່າຍຄຸນຂຶ້ນຂອງງົບປະມານເປັນກ້າວໆ, ໂດຍບໍ່ທົດແທນລາຍຈ່າຍຄຸນຂຶ້ນດ້ວຍການຈຳຫນ່າຍເງິນພາຍໃຕ້ບໍ່ວ່າຮູບການໃດຮູບການຫນຶ່ງ. ຢືມຈາກປະຊາຊົນ, ຢືມຈາກຕ່າງປະເທດກໍ່ຕ້ອງຄິດໄລ່ຜົນສັກສິດ, ເຊິ່ງຜິເສດແມ່ນຕ້ອງຢຸດຕິໂດຍໄວສະພາວະການຢືມຕາມກຳນົດເວລາອັນສັ້ນໆດ້ວຍມາດຕາສ່ວນກຳໄລສູງພາໃຫ້ການໃຊ້ຫນີ້ຂອງງົບປະມານເປັນການແບກຫາບອັນຫນັກຫນ່ວງທະວີຂຶ້ນ.

3 - ການດຸ່ນດ່ຽງທຶນໃນການລົງທຶນ.

ໃນກິດຈະການກໍ່ສ້າງ ແລະ ພັດທະນາປະເທດຊາດຕາມແນວທາງປ່ຽນແປງໃຫມ່, ພັກ ແລະ ລັດເຮົາວາງແຜນນະໂຍບາຍໃຫ້ລະດົມທຸກໆກອງທຶນພາຍໃນ ແລະ ພາຍນອກປະເທດເພື່ອລົງທຶນພັດທະນາ, ເຊິ່ງໃນນັ້ນທຶນພາຍໃນປະເທດມີຄວາມຫມາຍຕັດສິນຊີ້ຂາດ, ທຶນພາຍນອກປະເທດມີຄວາມຫມາຍສຳຄັນ, ປະສານສົມທົບກຳລັງບົ່ມຊ້ອນແຫ່ງກຳລັງແຮງຂອງພາຍໃນກັບຄວາມອາດສາມາດທີ່ອາດຈະຍາດແຍ່ງໄດ້ຈາກພາຍນອກ. ຍຸດທະສາດອັນຍາວນານກໍ່ແມ່ນລະດົມກອງທຶນພາຍໃນປະເທດຢ່າງຫລາຍທີ່ສຸດເທົ່າທີ່ຈະຫລາຍໄດ້ທັງນີ້ກໍ່ເພື່ອຍຶດເອົາມາດຕາສ່ວນສູງໃນການລົງທຶນ. ເຖິງຢ່າງໃດກໍ່ດີ, ໃນຊຸມປີ ຕົ້ນຂອງໄລຍະຫັນເປັນອຸດສາຫະກຳຈະຮຽກຮ້ອງໃຫ້ມີກອງທຶນໃຫຍ່, ຫາກທຶນພາຍໃນປະເທດຍັງມີທີ່ຈຳກັດ, ສະນັ້ນຈຶ່ງຕ້ອງລະດົມກອງທຶນຈາກພາຍນອກໃຫ້ແກ່ຄວາມຕ້ອງການລົງທຶນພັດທະນາ, ບົນຫລັກການຮັບປະກັນຜົນສັກ

ສິດທາງດ້ານເສດຖະກິດ ແລະ ໃຊ້ຫນີ້ໄດ້. ເພື່ອຮັບປະກັນຄວາມໄວ ຂອງ GDP ເພີ່ມຂຶ້ນ 9-10% ຕໍ່ປີທັງນັ້ນທຶນໃນການລົງທຶນຂອງທົ່ວ ສັງຄົມໃນ 5 ປີທີ່ຈະເຖິງນີ້ຕ້ອງບັນລຸ 41-42 ຕື້USD(ຄິດໄລ່ຕາມໜ້າ ພຽງຂອງລາຄາປີ 1995), ເຊິ່ງໃນນັ້ນທຶນຂອງພາຍໃນປະເທດກວມ ເອົາກວ່າ 50%. ເພີ່ມລະດັບລະດົມທຶນຢ່າງວ່ອງໄວໂດຍຜ່ານບັນດາ ນະໂຍບາຍສົ່ງເສີມການລົງທຶນພັດທະນາ ແລະ ເປີດກວ້າງຕະຫລາດ ທຶນດ້ວຍຫລາຍຮູບການຄື: ເງິນປະຢັດເຊິ່ງຝາກຕາມກຳນົດ ເວລາອັນ ຍາວນານ, ຈຳໜ່າຍພັນທະບັດ, ບັດຫຸ້ນສ່ວນ, ລວມທັງການຈຳໜ່າຍ ພັນທະບັດແຫ່ງລັດຖະບານ, ພັນທະບັດແຫ່ງວິສາຫະກິດອອກໄປຫາຕະ ຫລາດສາກົນ, ເປີດກວ້າງບັນດາຄັງລົງທຶນ ແລະ ບັນດາຮູບການລະ ດົມກອງທຶນຈາກຕ່າງປະເທດ, ເຮັດໃຫ້ຕະຫລາດຊື້ຂາຍພັນທະບັດປະ ກົດເປັນຮູບເທື່ອລະກ້າວໆ.

ຄາດຄະເນໂຄງປະກອບບັນດາກອງທຶນໃນການລົງທຶນ ພັດທະນາຂອງທົ່ວສັງຄົມຄືດັ່ງນີ້:

ຍອດປະລິມານທຶນໃນການລົງທຶນຈາກງົບປະມານ(ປະກອບດ້ວຍ ທັງແຫລ່ງສະສົມຈາກລາຍໄດ້ແຫ່ງງົບປະມານພາຍໃນປະເທດ ແລະ ພາກສ່ວນໜຶ່ງໃນທຶນ ODA) ກວມເອົາ 21%; ທຶນສິນເຊື່ອແຫ່ງລັດ 7%; ທຶນແຫ່ງລັດວິສາຫະກິດທຳການລົງທຶນໂດຍຕົນເອງ 24% (ປະ ກອບດ້ວຍການຫລຸ້ຍຫ້ຽນຜົ້ນຖານທີ່ປະໄວ້, ກຳໄລຫລັງຈາກເກັບພາ ສີ, ຢືມສ່ວນໜຶ່ງຈາກ ODA ແລະ ຢືມຈາກຕະຫລາດທຶນ); ທຶນໃນ

ການລົງທຶນຂອງປະຊາຊົນປະມານ 17%; ທຶນໃນການລົງທຶນໂດຍກົງ ຂອງຕ່າງປະເທດ (FDI) ປະມານ 31%.

ຖ້າວ່າຄິດໄລ່ໂຄງປະກອບທຶນໃນການລົງທຶນໂດຍສະເພາະພາຍໃນ ປະເທດ, ດັ່ງນັ້ນທຶນໃນການລົງທຶນຂອງງົບປະມານ ກວມເອົາ 25%, ທຶນສິນເຊື່ອແຫ່ງລັດກວມເອົາ 14%, ທຶນຂອງວິສາຫະກິດກວມເອົາ 28%, ທຶນຂອງປະຊາຊົນກວມເອົາ 33%.

ກຳນົດທິດໃນການລົງທຶນພັດທະນາຂອງທ້ອສັງຄົມທີ່ມີຕໍ່ບັນດາຂະ ແໜງການ ແລະ ຂົງເຂດເສດຖະກິດຕົ້ນຕໍຄືດັ່ງນີ້: ກະສິກຳ, ປ່າໄມ້, ປະມົງ, ຊົນລະປະທານກວມເອົາ 20%; ອຸດສາຫະກຳກວມເອົາ 43%; ໂຄງລ່າງຄົມມະນາຄົມ, ໄປສະນີກວມເອົາ 18%; ໂຄງ ລ່າງສັງຄົມ, ການສຶກສາ, ສາທາລະນະສຸກ, ວັດທະນະທຳ, ສິ່ງແວດລ້ອມ, ວິທະຍາ ສາດເຕັກໂນໂລຢີກວມເອົາ 14%; ແລະ ການລົງທຶນອື່ນໆ 5%.

ພາກສ່ວນທຶນແຫ່ງລັດສາມາດຄອບຄອງ ໂດຍກົງໄດ້ປະກອບດ້ວຍ: ງົບປະມານແຫ່ງລັດ, ສິນເຊື່ອແຫ່ງລັດ ແລະ ລັດວິສາຫະກິດລົງທຶນກວມ ເອົາ 52%; ເຊິ່ງໃນນັ້ນໂຄງປະກອບແຫ່ງກອງທຶນຈາກງົບປະມານຖືກ ກຳນົດທິດຄືດັ່ງນີ້: ກະສິກຳ, ປ່າໄມ້, ປະມົງ, ຊົນລະປະທານກວມເອົາ 22%; ຄົມມະນາຄົມ, ໄປສະນີກວມເອົາ 35%; ໂຄງລ່າງສັງຄົມກວມ ເອົາ 35%; ຂະແໜງການອື່ນໆກວມເອົາເກືອບ 10%.

ທຶນໃນການລົງທຶນຂອງບັນດາວິສາຫະກິດທີ່ບູລິມະສິດໃຫ້ແກ່ການ ລົງທຶນລວງເລິກ, ປຽນແປງໃຫມ່ສຳລັບເຕັກໂນໂລຢີ. ສຳລັບທຶນໃນ

ການລົງທຶນຂອງປະຊາຊົນ ແລະ ການລົງທຶນ FDI, ລັດຈະຜ່ານກົນໄກ ນະໂຍບາຍເພື່ອກຳນົດທິດ, ແນໃສ່ປະຕິບັດໂຄງປະກອບລົງທຶນຂອງທົ່ວ ສັງຄົມເຊິ່ງໄດ້ກ່າວມາຄັ້ງເທິງນີ້.

ຄວາມພົວພັນລະດັບໃຫຍ່ຈຳນວນຫນຶ່ງວ່າດ້ວຍການລົງທຶນ ໃນການລົງທຶນ:

ລະຫວ່າງເຂດເສດຖະກິດທີ່ເປັນຈຸດສຸມກັບບັນດາເຂດແຄວ້ນອື່ນໆ:

ໃນເມື່ອໂຮມສູນຢ່າງຖືກຕ້ອງຕາມລະດັບໃຫ້ແກ່ເຂດເສດຖະກິດທີ່ ເປັນຈຸດສຸມສາມແຫ່ງນັ້ນ, ຕ້ອງຖືສຳຄັນເປັນພິເສດສຳລັບຫນ້າທີ່ພັດ ທະນາເສດຖະກິດ-ສັງຄົມຕໍ່ເຂດພູດອຍ, ເຂດຊາຍແດນ, ເຂດທະເລ, ເກາະ, ເຂດຝີ່ນ້ອງຮ່ວມຊາດບັນດາຊົນຊາດ, ເຂດທີ່ຫມັ້ນປະຕິວັດ, ຈົ່ງ ແຫລ່ງກຳລັງອັນເຫມາະສົມໄວ້ເພື່ອແກ້ໄຂບັນດາຄວາມຕ້ອງການອັນ ຄັບຂັນຂອງບັນດາເຂດອື່ນໆ.

ທຶນງົບປະມານແຫ່ງລັດ ແລະ ທຶນ ODA ທີ່ຈົ່ງໄວ້ໃຫ້ແກ່ບັນດາຮ່າງ ຍັດຕິໂດຍບັນດາຂະແຫນງການສູນກາງເປັນອົງການຄຸ້ມຄອງ ໂດຍກົງ ນັ້ນຈະຖືກຈັດແບ່ງຢ່າງສະຫມ່ຳສະເຫມີໃຫ້ແກ່ບໍລິເວນຕ່າງໆ ເພື່ອກໍ່ສ້າງ ໂຄງປະກອບໂຄງລ່າງເສດຖະກິດ, ສັງຄົມ. ທຶນໃນການລົງທຶນຂອງ ງົບປະມານໂດຍທ້ອງຖິ່ນເປັນທີ່ຄຸ້ມຄອງນັ້ນຈະຈັດວາງປະມານ 30% ສຳລັບເຂດເສດຖະກິດທີ່ເປັນຈຸດສຸມ 3 ແຫ່ງ ແລະ 70% ໃຫ້ແກ່ບັນ ດາບໍລິເວນອື່ນໆ. ທຶນໂດຍສະເພາະໃນການລົງທຶນຂອງບັນດາວິສາຫະ ກິດ, ຂອງພົນລະເມືອງ ແລະ ການລົງທຶນໂດຍກົງຂອງຕ່າງປະເທດ,

ເຊິ່ງມາດຕາສ່ວນລົງທຶນຢູ່ເຂດຈຸດສຸມຕ່າງໆສາມາດຫລາຍກວ່າ.

ລະຫວ່າງບັນດາຂະແໜງການອຸດສາຫະກຳ:

ທຶນໃນການລົງທຶນໃຫ້ແກ່ບັນດາຂະແໜງການອຸດສາຫະກຳເບົາ ແລະ ອຸດສາຫະກຳປຸງແຕ່ງສຳລັບການໃຊ້ສອຍ ແລະ ຂາອອກ ກວມເອົາ 12% ໃນຍອດປະລິມານທຶນໃນການລົງທຶນຂອງທົ່ວສັງຄົມ (ປະມານ 30% ຂອງທຶນໃນການລົງທຶນໃຫ້ແກ່ບັນດາຂະແໜງການອຸດສາຫະກຳ).

ທຶນໃນການລົງທຶນໃຫ້ແກ່ບັນດາຂະແໜງການອຸດສາຫະກຳໜັກ ກວມເອົາປະມານ 30% ຂອງທຶນໃນການລົງທຶນໃນທົ່ວສັງຄົມ (ປະມານ 70% ຂອງທຶນໃນການລົງທຶນໃຫ້ແກ່ບັນດາຂະແໜງການອຸດສາຫະກຳ) ເພື່ອກໍ່ສ້າງຢ່າງມີການເລືອກເຟັ້ນສຳລັບກິດຈະການຈຳນວນໜຶ່ງທີ່ມີຄວາມຕ້ອງການອັນຮີບດ່ວນທີ່ມີຕໍ່ການພັດທະນາເສດຖະກິດ, ສັງຄົມ, ມີເງື່ອນໄຂວ່າດ້ວຍທຶນ, ວ່າດ້ວຍຕະຫລາດ ແລະ ເຄື່ອນໄຫວຢ່າງມີຜົນສັກສິດເຊັ່ນໄຟຟ້າ, ນ້ຳມັນ ແລະ ອາຍແກັດ, ຊີມັງ, ເຫລັກກ້າ...

II- ນະໂຍບາຍຕໍ່ບັນດາໜ່ວຍເສດຖະກິດ ແລະ ກົນໄກຄຸ້ມຄອງເສດຖະກິດ

1- ປະຕິບັດນະໂຍບາຍພັດທະນາເສດຖະກິດທີ່ມີຫລາຍ

ພາກສ່ວນໃຫ້ປະກົດເປັນຈິງເປັນຢ່າງດີ.

ສືບຕໍ່ປ່ຽນແປງໃໝ່ ແລະ ພັດທະນາຂົງເຂດ*ເສດຖະກິດແຫ່ງລັດ* ຢ່າງມີຜົນສັກສິດເພື່ອດຳເນີນບົດບາດເປັນເຈົ້ານຳພາເປັນຢ່າງດີ. ກຳ ນົດບັນດາຂະແໜງການ ແລະ ຂົງເຂດທີ່ຕ້ອງຮວມສູນແຫລ່ງກຳລັງ ເພື່ອປັບປຸງ ແລະ ຂະຫຍາຍວິສາຫະກິດແຫ່ງລັດ; ຈັດແຍກໃຫ້ແຈ້ງ ແລະ ມີກົນໄກຄຸ້ມຄອງອັນເໝາະສົມຕໍ່ວິສາຫະກິດປະໂຫຍດສ່ວນລວມ ແລະ ວິສາຫະກິດທຸລະກິດ. ສືບຕໍ່ຈັດຕັ້ງຄືນໃໝ່ ແລະ ຈັດວາງບັນດາວິສາ ຫະກິດແຫ່ງລັດ ໃຫ້ສອດຄ່ອງກັບແຜນກຳນົດຂອງຂະແໜງການ, ເຂດດິນແດນ. ສະຫລຸບບົດຮຽນ, ບູລະນະຂອບເຂດນິຕິທຳໃຫ້ສົມບູນ ເພື່ອຜັນຂະຫຍາຍການຫັນວິສາຫະກິດແຫ່ງລັດເປັນຫຸ້ນສ່ວນຢ່າງຕັ້ງ ໜ້າ ແລະ ໜັກແໜ້ນແນໃສ່ສ້າງກຳລັງໜູນໃໝ່ຂຶ້ນຕື່ມໃນການຄຸ້ມ ຄອງ, ລະດົມທຶນຂຶ້ນຕື່ມ ໃຫ້ແກ່ຄວາມຕ້ອງການພັດທະນາ ແລະ ດັດ ສົມໂຄງປະກອບວິສາຫະກິດແຫ່ງລັດ. ໃນຂະບວນວິວັດຫັນເປັນຫຸ້ນ ສ່ວນ ເຊິ່ງເງິນທີ່ເກັບໄດ້ຈາກການຂາຍຫຸ້ນສ່ວນຂອງລັດຕ້ອງລົງທຶນ ຄືນໃໝ່ເພື່ອເປີດກວ້າງການຜະລິດທຸລະກິດເພື່ອເຮັດໃຫ້ຊັບສົມບັດທີ່ ຂຶ້ນຕໍ່ກຳມະສິດແຫ່ງລັດນັບມື້ນັບທະວີຂຶ້ນຕື່ມ, ແຕ່ຫັນເປັນຫຸ້ນສ່ວນຫາກ ບໍ່ມີຄວາມໝາຍເໝືອນດຽວກັນກັບການຫັນເປັນຂອງເອກະຊົນ. ມີ ນະໂຍບາຍອັນລະອຽດເພື່ອສ້າງເງື່ອນໄຂ ແລະ ສົ່ງເສີມຜູ້ອອກແຮງ ງານໃນວິສາຫະກິດຈົ່ງຊື້ຫຸ້ນສ່ວນຫລືປະກອບທຶນເຂົ້າວິສາຫະກິດ. ຮັບ ປະກັນບັນດາຫລັກການເປີດເຜີຍ, ມອບໝາ, ຂາຍປະມູນລາຄາໃສ່ ການຫັນເປັນຫຸ້ນສ່ວນ, ກັນໄວ້ການລ່ວງລະເມີດ ຕໍ່ຊັບສົມບັດຂອງລັດ.

ກຳນົດໜ້າທີ່, ສິດອຳນາດ ແລະ ການປະສົມປະສານຢ່າງຈະແຈ້ງລະ
ຫວ່າງບັນດາອົງການປະຕິບັດພາລະບົດບາດຄຸ້ມຄອງລັດ ແລະ ປະຕິ
ບັດບົດບາດເປັນເຈົ້າກຳມະສິດຂອງລັດຕໍ່ວິສາຫະກິດຕ່າງໆເຊິ່ງລັດປະ
ກອບທຶນ.

ສະຫລຸບສັງລວມ, ຖອດຖອນບົດຮຽນ ແລະ ເປີດກວ້າງບັນດາຮູບ
ການ*ເສດຖະກິດສະຫະກອນ* ອັນຫລາຍຮູບຫລາຍຮ່າງຂອງຜູ້ອອກ
ແຮງງານໃນບັນດາຂະແໜງການອາຊີບບົນພື້ນຖານປະກອບຫຸ້ນ
ສ່ວນ ແລະ ດຳເນີນການອອກແຮງງານໂດຍກົງຂອງສະມາຊິກສະຫະ
ກອນ, ແຈກຢາຍຕາມຜົນໄດ້ຂອງການອອກແຮງງານ ແລະ ຕາມຫຸ້ນ
ສ່ວນ, ຮັບປະກັນຫລັກການສະໝັກໃຈ ແລະ ກົນໄກຄຸ້ມຄອງແບບປະ
ຊາທິປະໄຕ, ເປີດເຜີຍທາງດ້ານການເງິນ ແລະ ທຸລະກິດ. ປະຕິບັດກົດ
ໝາຍແຫ່ງສະຫະກອນເປັນຢ່າງດີ. ລັດຈະສົ່ງເສີມ, ຊ່ວຍເຫລືອເສດ
ຖະກິດສະຫະກອນຂະຫຍາຍຕົວຢ່າງມີຜົນສັກສິດ. ຍາດແຍ່ງກອງທຶນ
ຊ່ວຍເຫລືອເງິນຈາກສາກົນໃຫ້ແກ່ຂົງເຂດເສດຖະກິດດັ່ງກ່າວນີ້.

ຂະຫຍາຍບັນດາຮູບການ*ເສດຖະກິດທຶນນິຍົມແຫ່ງລັດ* ໃຫ້ມີຫລາຍ
ຮູບຫລາຍຮ່າງ, ອັນປະກອບດ້ວຍບັນດາຮູບການຮ່ວມມື, ຮ່ວມສຳພັນ
ທຸລະກິດລະຫວ່າງເສດຖະກິດແຫ່ງລັດກັບທຶນນິຍົມເອກະຊົນພາຍໃນປະ
ເທດ ແລະ ກັບທຶນນິຍົມຕ່າງປະເທດ, ແນໃສ່ລະດົມກຳລັງບໍ່ມຊ້ອນອັນ
ໃຫຍ່ໂຕວ່າດ້ວຍທຶນ, ເຕັກໂນໂລຢີ, ຄວາມສາມາດໃນການຈັດຕັ້ງຄຸ້ມ
ຄອງ... ຂອງບັນດາເຈົ້າທຶນເພື່ອຜົນປະໂຫຍດຂອງກິດຈະການກໍ່ສ້າງ

ປະເທດຊາດບ້ານເມືອງ. ນຳໃຊ້ຫລາຍແບບວິທີປະກອບທຶນຮ່ວມສຳ
ພັນທຸລະກິດລະຫວ່າງເສດຖະກິດແຫ່ງລັດກັບບັນດານັກທຸລະກິດເອກະ
ຊົນພາຍໃນປະເທດແນໃສ່ສ້າງທ່າ, ສ້າງກຳລັງໃຫ້ແກ່ບັນດາວິສາຫະ
ກິດຫວຽດນາມຂະຫຍາຍຕົວ, ເພີ່ນກຳລັງຮ່ວມມື ແລະ ແຂ່ງຂັນກັບ
ພາຍນອກ. ສົ່ງເສີມບັນດາທະນາຄານການຄ້າ, ບັນດາບໍລິສັດການ
ເງິນ ແລະ ບັນດາວິສາຫະກິດແຫ່ງລັດເຂົ້າຫຸ້ນສ່ວນ ແລະ ລະດົມບັນ
ດາພາກສ່ວນເສດຖະກິດອື່ນໆຮ່ວມກັນປະກອບທຶນເພື່ອປະຕິບັດບັນດາ
ຮ່າງຍັດຕີໃຫ້ປະກົດເປັນຈິງ, ຫລືວ່າເພື່ອເພີ່ມມາດຕາສ່ວນປະກອບທຶນ
ຂອງຝ່າຍຫວຽດນາມໃນບັນດາກິດຈະການຮ່ວມມື, ຮ່ວມສຳພັນທຸລະ
ກິດກັບພາຍນອກ.

ຊ່ວຍເຫລືອເສດຖະກິດເອກະຊົນ, ເຈົ້າຊັບນ້ອຍ ໃນການແກ້ໄຂບັນ
ດາຂໍ້ຫຍຸ້ງຍາກວ່າດ້ວຍທຶນ, ເຕັກໂນໂລຢີ, ຕະຫລາດ ແລະ ບົດຮຽນຄຸ້ມ
ຄອງເພື່ອເປີດກວ້າງ ແລະ ຍົກສູງຜົນສັກສິດກວ່ານັ້ນອີກໃສ່ການຜະລິດ,
ທຸລະກິດ. ແນະນຳ ແລະ ມີນະໂຍບາຍອັນເໝາະສົມເພື່ອສົ່ງເສີມເຂົ້າ
ເຈົ້າທຳການຈັດຕັ້ງໂດຍຕົນເອງຫລືເຂົ້າຮ່ວມບັນດາການຈັດຕັ້ງເສດຖະ
ກິດຮ່ວມມື ແລະ ບັນດາຮູບການຮ່ວມສຳພັນທຸລະກິດ, ຮ່ວມສຳພັນກັບ
ເສດຖະກິດແຫ່ງລັດ.

ປະຕິບັດບັນດາວິທີການນະໂຍບາຍເພື່ອສົ່ງເສີມ*ເສດຖະກິດທຶນນິຍົມ
ເອກະຊົນ*ລົງທຶນໃສ່ການຜະລິດໃນຂະແໜງການຕ່າງໆ, ຂົງເຂດຕ່າງໆ
ທີ່ສອດຄ່ອງກັບຈຸດໝາຍ ແລະ ຍຸດທະສາດພັດທະນາຂອງປະເທດ

ຊາດ. ປົກປ້ອງສິດເປັນເຈົ້າກຳມະສິດ ແລະ ຜົນປະໂຫຍດອັນຊອບກົດໝາຍ, ສ້າງເງື່ອນໄຂອຳນວຍຄວາມສະດວກໄປຄຽງຄູ່ກັນກັບການເພີ່ມທະວີການຄຸ້ມຄອງ, ແນະນຳການທຳມາຫາກິນໃຫ້ຖືກຕ້ອງຕາມກົດໝາຍ, ເຊິ່ງມີຜົນປະໂຫຍດໃຫ້ແກ່ແຜນການຂອງລັດຊີວິດການເປັນຢູ່ຂອງປະຊາຊົນ. ສົ່ງເສີມບັນດາເຈົ້າວິສາຫະກິດຈົ່ງຫຸ້ນສ່ວນອຸດໜູນເພື່ອຂາຍໃຫ້ຜູ້ອອກແຮງງານໃນວິສາຫະກິດ. ກໍ່ສ້າງສາຍພົວພັນຮ່ວມມືລະຫວ່າງເຈົ້າຊັບກັບກຳມະກອນບົນພື້ນຖານປະຕິບັດກົດໝາຍອອກແຮງງານ, ຮັບປະກັນຕ່າງຝ່າຍຕ່າງກໍມີຜົນປະໂຫຍດອັນຊອບກົດໝາຍ.

2 - ບູລະນະກົນໄກຕະຫລາດໃຫ້ສົມບູນຕາມກຳນົດທິດສັງຄົມນິຍົມ, ປຽນແປງໃຫມ່ສຳລັບບັນດາເຄື່ອງມືຄຸ້ມຄອງມະຫາພາກຂອງລັດ.

ກໍ່ສ້າງຕະຫລາດປະເພດຕ່າງໆຢ່າງຄົບຊຸດ, ສ້າງສິ່ງແວດລ້ອມໃຫ້ແກ່ການເຄື່ອນໄຫວອັນຈູບຈ້າວຫ້າວຫັນ ແລະ ມີລະບຽບຂອງກົນໄກຕະຫລາດ.

ເອົາໃຈໃສ່ຢ່າງຈົດຈໍ່ນຳການແກ້ໄຂວຽກເຮັດງານທຳໃຫ້ແກ່ຜູ້ອອກແຮງງານໄປຄຽງຄູ່ກັນກັບການເພີ່ມທະວີບົດບາດຂອງລັດໃນການຈັດຕັ້ງຄຸ້ມຄອງ ແລະ ແນະນຳການໃຊ້ ແລະ ຈ້າງແຮງງານ. ຫັນເປັນລາຍລະອຽດ ແລະ ປະຕິບັດບັນດາຂໍ້ກຳນົດໃນຊຸດກົດໝາຍແຫ່ງການອອກແຮງງານຮັບປະກັນສິດຂອງຄົນງານໃນການຊອກຫາວຽກ

ເຮັດງານທຳໂດຍເສລີພາບ. ປະຕິບັດຢ່າງກວ້າງຂວາງລະບອບສັນ ຍາແຮງງານ ແລະ ໃຊ້ເງິນເດືອນຕາມສັນຍາທີ່ໄດ້ເຊັນກັນລະຫວ່າງ ຄົນງານ ແລະ ຜູ້ໃຊ້ແຮງງານ.

ປະກາດໃຊ້ບັນດາຂໍ້ກຳນົດອັນລະອຽດວ່າດ້ວຍກຳມະສິດ ແລະໃຊ້ ຊັບສົມບັດຄົງທີ່, ວ່າດ້ວຍສິດໃຊ້ທີ່ດິນ. ກຳນົດການໄລ່ລຽງລາຄາສຳ ລັບການມອບສິ່ງສິດໃຊ້ທີ່ດິນໃນຄຸນຄ່າຊັບສົມບັດຄົງທີ່. ທັນເປັນເງິນ ຕາສຳລັບຊັບຄົງທີ່ທັນຊັບສົມບັດຄົງທີ່ຂຶ້ນຕໍ່ກຳມະສິດແຫ່ງລັດເພື່ອເປັນ ພື້ນຖານໃຫ້ແກ່ການປະຕິບັດນະໂຍບາຍລົງທຶນກໍ່ສ້າງ ໂຄງປະກອບ ໂຄງລ່າງ, ນະໂຍບາຍທັນວິສາຫະກິດຈຳນວນໜຶ່ງຂອງລັດເປັນຫຸ້ນ ສ່ວນ ນະໂຍບາຍພັດທະນາບັນດາເຂດອຸດສາຫະກຳ ແລະ ເຂດຜົນລະ ເມືອງໃໝ່ໆ, ນະໂຍບາຍວ່າດ້ວຍເຮືອນຢູ່. ທີ່ດິນກະສິກຳ, ຈະປະກາດ ໃຊ້ຂໍ້ກຳນົດອັນລະອຽດເພື່ອອະນຸຍາດໃຫ້ປ່ຽນຈຸດປະສົງໃນການໃຊ້ທີ່ ດິນ, ບົນຫລັກການປະຕິບັດຕາມແຜນກຳນົດ ແລະ ຮັບປະກັນຄວາມ ປອດໄພທາງດ້ານທັນຍາທານ. ກວດກາການທ້ອນໂຮມທີ່ດິນປູກຝັງ ໄວ້, ທັງສົ່ງເສີມການຜະລິດສິນຄ້າ, ທັງກີດກັນສະພາວະການເຊົ່າຜູ້ທຳ ການກະເສດຜັດບ່ໍມີທີ່ດິນເພື່ອທຳການຜະລິດຊ້ຳ. ສົ່ງເສີມບັນດາພາກ ສ່ວນເສດຖະກິດທຳການຖາກຖາງດິນເຮ້ຍ, ຟື້ນຟູດິນປະເປັນເຮ້ຍ, ເປີດກວ້າງເນື້ອທີ່ດິນກະສິກຳ.

ຂະຫຍາຍຕະຫລາດເຕັກໂນໂລຍີໄປຄຽງຄູ່ກັນກັບການຜັນຂະ ຫຍາຍໃຫ້ປະຕິບັດດຳລັດວ່າດ້ວຍກຳມະສິດອຸດສາຫະກຳ ແລະ ດຳເນີນ

ການປະກາດໃຊ້ສະຖາບັນກ່ຽວກັບສິດຂອງຜູ້ແຕ່ງ.

ຂະຫຍາຍຕະຫລາດທຶນດ້ວຍຫລາຍຮູບການດູດດຶງເງິນຝາກຕາມກຳນົດເວລາປານກາງ, ຍາວນານໂດຍຜ່ານທະນາຄານ ແລະ ບັນດາບໍລິສັດກ່ານເງິນເພື່ອໃຫ້ກູ້ຢືມໃນການລົງທຶນພັດທະນາ. ເປີດກວ້າງການຈຳໜ່າຍພັນທະບັດ, ບັດຫຸ້ນສ່ວນ ແລະ ດຳເນີນການກະກຽມກ່ຽວກັບສະຖາບັນ, ພະນັກງານ ແລະ ບັນດາຂໍ້ຄວາມທີ່ຈຳເປັນໃຫ້ແກ່ການສ້າງຕັ້ງຕະຫລາດຊື້ຂາຍຫຸ້ນພັນທະບັດ ແລະ ຮັບປະກັນການເຄື່ອນໄຫວອັນສົດໃສຂອງຕະຫລາດດັ່ງກ່າວ.

ສືບຕໍ່ບູລະນະໃຫ້ສົມບູນ ແລະ ເປີດຕະຫລາດສົມຄ້າ ແລະ ການບໍລິການຕື່ມອີກຫລາຍຮູບຫລາຍປະເພດ, ດ້ວຍການເຂົ້າຮ່ວມອັນສະເໝີພາບຂອງບັນດາພາກສ່ວນເສດຖະກິດ. ຄົ້ນຄວ້າປະກາດໃຊ້ກົດໝາຍຮັບປະກັນການແຂ່ງຂັນ ແລະ ກວດກາສິດຜູກຂາດໃນການທຸລະກິດ.. ຕ້ານການແຂ່ງຂັນທີ່ບໍ່ສົດໃສ ແລະ ຕ້ານການລອບງຳຈຳກັດຕໍ່ການຄ້າ. ເປີດ ກວ້າງໄປຄຽງຄູ່ກັນກັບການຈັດຕັ້ງຕະຫລາດພາຍໃນປະເທດຄືນໃໝ່ໃນບັນດາເຂດຕົວເມືອງ, ຊົນນະບົດ ແລະ ເຂດພູດອຍ.

ສືບຕໍ່ປ່ຽນແປງໃໝ່ສຳລັບວຽກງານຫັນເປັນແຜນການ, ເຊີ່ງສຸມໃສ່ການຍົກສູງຄຸນນະພາບການກໍ່ສ້າງຍຸດທະສາດ ແລະ ວາງແຜນພັດທະນາບັນດາຂະແໜງການ, ເຂດແຄວ້ນຕ່າງໆ ແລະ ຟື້ນຖານເສດຖະກິດທັງໝົດ. ກໍ່ສ້າງບັນດາໂຄງການ, ແຜນການພັດທະນາຕາມກຳນົດເວລາຍາວນານ, ປານກາງ. ຍົກສູງຄຸນນະພາບຂອງບັນດາຄວາມ

ດຸ່ນດ່ຽງຂະໜາດໃຫຍ່ ແລະ ປະກາດລ່ວງໜ້າສຳລັບບັນດາຄວາມ
ອາດສາມາດ ແລະ ທ່າອ່ຽງພັດທະນາໃຫ້ເປັນຫລັກຖານແກ່ການວາງ
ຈຸດໝາຍທາງດ້ານເສດຖະກິດ, ບັນດານະໂຍບາຍ, ວິທີແກ້ໄຂ ແລະ
ກຳນົດທິດວ່າດ້ວຍການຈັດແບ່ງແຫລ່ງກຳລັງເຝື່ອປະຕິບັດ. ຍົກສູງຄຸນ
ນະພາບ ໃນການກໍ່ສ້າງ, ຕີລາຄາສຳລັບບັນດາຮ່າງຍັດຕິລົງທຶນ.
ສ້າງຕັ້ງສະຖາບັນຍັດປະສານສົມທົບຢ່າງແໜ້ນແຟ້ນລະຫວ່າງການ
ກໍ່ສ່າງແຜນການ, ແຜນກຳນົດກັບການວາງແຜນສຳລັບນະໂຍບາຍ
ແລະ ສະຖາບັນເຝື່ອແນະນຳ, ຊີ້ນຳການເຄື່ອນໄຫວເສດຖະກິດຕາມ
ກຳນົດທິດຂອງແຜນການ, ຈັດ ແລະ ແກ້ໄຂບັນດາການເສຍຄວາມ
ດຸ່ນດ່ຽງ ແລະ ບັນດາບັນຫາທີ່ເກີດຂຶ້ນໃນຂະບວນວິວັດປະຕິບັດແຜນ
ການ.

ສືບຕໍ່ດັດແປງ ແລະ ກໍ່ສ້າງລະບົບການເງິນ, ເງິນຕາໃຫ້ເປັນເຄື່ອງ
ມືດັດປັບມະຫາພາກອັນສຳພັດໄວ ແລະ ສອດຄ່ອງກັບວິວັດທະນາການ
ຮ່ວມຕົວເຂົ້າສາກົນ. ສືບຕໍ່ປ່ຽນແປງໃໝ່ສຳລັບນະໂຍບາຍພາສີຕາມ
ທິດທັ້ງຮັບປະກັນແຫລ່ງລາຍໄດ້ໃຫ້ແກ່ງົບປະມານແຫ່ງລັດ, ທັ້ງສົ່ງເສີມ
ການຜະລິດທຸລະກິດ ແລະ ຊຸກຍູ້ການດຳເນີນປະຢັດໃນການຜະລິດ ແລະ
ໃຊ້ສອຍເຝື່ອເພີ່ມການສະສົມຂຶ້ນຕື່ມ. ເຮັດໃຫ້ລະບົບພາສີ ແລະ ຕາຕະ
ລາງພາສີເປັນງ່າຍດ່າຍ; ຍົກລັກສະນະເປັນປົກກະຕິຂອງພາສີ, ນຳ
ໃຊ້ພາສີ TVA[1] ແທນທີ່ໃຫ້ພາສີເກັບຈາກການສ້າງສັນເສດຖະກຳ;

---

[1] ພາສີແຫ່ງການຫະວີຂຶ້ນ.

ເພີ່ມເຕີມໃຫ້ພາສີ ແລະ ຄ່າໃຊ້ຈ່າຍກ່ອນທຳມະຊາດທີ່ບໍ່ສ້າງ
ຄືນເປັນຄັ້ງໃໝ່. ກໍ່ສ້າງສະຖາບັນຍັດຮັບປະກັນລາຍຈ່າຍງົບປະມານ
ຢ່າງປະຢັດ ແລະ ມີຜົນສັກສິດ, ຄ່ອຍຍົກມາດຕາສ່ວນລາຍຈ່າຍຂຶ້ນ
ໃຫ້ແກ່ການລົງທຶນພັດທະນາ, ກົດໜ່ວງລາຍຈ່າຍອັນເກີນຄວນ. ປະ
ຕິບັດລະບອບກວດກາລາຍຈ່າຍງົບປະມານ ແລະ ການເງິນທາງການ
ໂດຍຜ່ານຄັງເງິນ ແລະ ການກວດສະໜຸດບັນຊີແຫ່ງລັດ. ບູລະນະນະ
ໂຍບາຍການເງິນແຫ່ງຊາດໃຫ້ສົມບູນໂດຍໄວ, ປະຕິບັດກົດໝາຍງົບ
ປະມານແຫ່ງລັດເປັນຢ່າງດີ, ເຊິ່ງເປັນພື້ເສດແມ່ນຂໍ້ກຳນົດຕ່າງໆກ່ຽວ
ກັບການແບ່ງຂັ້ນງົບປະມານ.

ບູລະນະກົນໄກຈຳໜ່າຍເງິນ ແລະ ກວດກາການປະຕິບັດຢ່າງ
ເໜັ້ນໜາ. ເປີດກວ້າງບັນດາຮູບການຊຳລະສະສາງ ໂດຍບໍ່ໃຊ້ເງິນ
ສົດ. ສືບຕໍ່ປ່ຽນບັນດາທະນາຄານການຄ້າມາຫາກົນໄກທຸລະກິດ
ຢ່າງເຕັມສ່ວນ. ຂະຫຍາຍທະນາຄານຮັບໃຊ້ຄົນທຸກດ້ວຍກຳໄລເອື້ອ
ເຟື້ອ ແລະ ລະບຽບການໃຫ້ຍືນອັນເໝາະສົມ. ດັດແປງ, ເພີ່ມເຕີມກົດ
ດຳລັດທະນາຄານ ແລະ ຍົກຂຶ້ນເປັນກົດໝາຍ. ໃຫ້ການອະນຸມັດບັນ
ດາຂໍ້ກຳນົດລະບອບການເງິນທຸລະກິດອັນຫລາຍຮູບຫລາຍຮ່າງ, ຂະ
ຫຍາຍບັນດາບໍລິການການເງິນທະນາຄານຢ່າງເຂັ້ມແຂງຕາມກົດ
ໝາຍ ແລະ ບັນດາກົດຂໍ້ບັງຄັບໃນການຄຸ້ມຄອງຂອງທະນາຄານແຫ່ງ
ລັດຢ່າງຖືກຕ້ອງ. ສົ່ງເສີມການພັດທະນາ, ຫັນເປັນຫລາຍຮູບຫລາຍ
ຮ່າງສຳລັບການເຄື່ອນໄຫວທຸລະກິດປະກັນໄພຂອງບັນດາພາກສ່ວນ

ເສດຖະກິດ ແລະ ເປີດການຮ່ວມມືກັບຕ່າງປະເທດ; ປຽນແປງໃໝ່ສຳ ລັບກົນໄກ ແລະ ການຈັດຕັ້ງຄຸ້ມຄອງການປະກັນສັງຄົມ. ກຳນົດຢ່າງ ຈະແຈ້ງສຳລັບຂະໜາດ ແລະ ຂອບເຂດການເຄື່ອນໄຫວຂອງສາຂາ ອັນຕັ້ງໜ້າຂອງເຂົ້າເຈົ້າໃນການເຮັດໃຫ້ເຕັກໂນໂລຢີທະນາຄານມີ ຄວາມປຽນແປງໃໝ່, ພ້ອມກັນນັ້ນກໍ່ຮັບປະກັນການກວດກາຈາກທະ ນາຄານແຫ່ງລັດ.

ປຽນແປງໃໝ່ສຳລັບກົນໄກຄຸ້ມຄອງໜັງສືຊຳລະດ້ວຍເງິນຕາ ຕ່າງປະເທດເປັນກ້າວໆ ໃຫ້ສອດຄ່ອງກັບເງື່ອນໄຂຕົວຈິງ. ກຳນົດ ມາດຕາສ່ວນລາຄາອັນສົມເຫດສົມຜົນຂອງເງິນຫວຽດນາມກັບເງິນ ຕາຕ່າງປະເທດທີ່ມີການພົວພັນກັນຫລາຍເທື່ອໃນການແລກປຽນ, ເຮັດ ໃຫ້ເງິນຫວຽດນາມມີຄຸນຄ່າປຽນແທນອັນຄົບຖ້ວນເປັນກ້າວໆ.

3 - ສືບຕໍ່ປຽນແປງໃໝ່ສຳລັບກົນໄກພົວພັນເສດຖະກິດ ກັບຕ່າງປະເທດ, ຊຸກຍູ້ຂະບວນວິວັດຮ່ວມຕົວໂດຍໄວກັບ ເສດຖະກິດໃນພາກພື້ນ ແລະ ໃນໂລກ.

ບົນພື້ນຖານກຳນົດສິນຄ້າຕ່າງໆ ເຊິ່ງກົດໝາຍຫ້າມທຸລະກິດ, ສິນ ຄ້າຈຳນວນໜຶ່ງເຊິ່ງມີແຕ່ລັດຈຶ່ງໄດ້ຮັບການທຸລະກິດເທົ່ານັ້ນ ແລະ ສິນ ຄ້າຈຳນວນໜຶ່ງຊຶ່ງຕ້ອງກຳນົດງົບປະມານອະນຸມັດ, ອະນຸຍາດໃຫ້ຫົວ ໜ່ວຍຕ່າງໆ, ເຊິ່ງຕົ້ນຕໍແມ່ນບັນດາຫົວໜ່ວຍຜະລິດທີ່ມີການຈົດທະບຽນ ທຸລະກິດຈຶ່ງໄດ້ເຂົ້າຮ່ວມການເຄື່ອນໄຫວຜະລິດ, ຂາເຂົ້າພາຍໃຕ້ການ ຄຸ້ມຄອງ ແລະ ແນະນຳຈາກລັດ. ດັດແປງແບບວິທີ ແລະ ກົນໄກຈັດ

ແບ່ງງົບປະມານອະນຸມັດການຂາອອກ, ຂາເຂົ້າໃຫ້ດີຂຶ້ນ.

ກໍ່ສ້າງນະໂຍບາຍສົ່ງເສີມການຂາອອກຢ່າງຄົບຊຸດ, ອັນປະກອບ ດ້ວຍການຊ່ວຍເຫລືອສ້າງເງື່ອນໄຂໃນການຜະລິດທຸລະກິດ, ມອບສົ່ງ ເຕັກໂນໂລຍີ, ໃກ້ຊິດກັບຕະຫລາດ ແລະ ເອື້ອເຟື້ອວ່າດ້ວຍພາສີ; ບູລະ ນະສະຖາບັນຍັດການເຄື່ອນໄຫວຂອງຄັງຊ່ວຍໜູນການຂາອອກໃຫ້ ສົມບູນ. ແຍກພາສີຂາເຂົ້າອອກ, ເຊິ່ງບໍ່ໂຮມກັນເຂົ້າກັບພາສີແຫ່ງ ລາຍໄດ້ຈາກການທຸລະກິດ(ຫລື TVA) ແລະ ພາສີບໍລິໂພກພິເສດ; ຮັດ ແຄບສຳລັບຕາຕະລາງພາສີ ແລະ ຄ່ອຍຫຼຸດຜ່ອນລະດັບພາສີຂາເຂົ້າ. ນຳໃຊ້ສາລະບານ ແລະ ການຈຳແນກສິນຄ້າເປັນປະເພດ, ສະຖາບັນ ຍັດ ພາສີອາກອນສອດຄ່ອງກັບລະບຽບການສາກົນ ແລະ ຂໍ້ກຳນົດ ລວມຂອງບັນດາປະເທດ ASEAN (ອາຊຽນ), ກຽມໃຫ້ຂະບວນວິວັດ ທະນາການເຂົ້າຮ່ວມກຸ່ມການຄ້າ AFTA. ປະຕິບັດຄວາມປົກປ້ອງ ການຜະລິດທີ່ມີການເລືອກເຟັ້ນ ແລະ ມີກຳນົດເວລາດ້ວຍບັນດາວິທີ ການອັນເໝາະສົມ, ຊ່ວຍຊຸບັນດາຮາກຖານການຜະລິດ ໃນການຍົກ ສູງກຳລັງແຂ່ງຂັນຂອງສິນຄ້າ ແລະ ສະກັດກັ້ນການຄ້າເຖື່ອນ.

ເຮັດໃຫ້ນະໂຍບາຍຕໍ່ການລົງທຶນຂອງພາຍໃນປະເທດ ແລະ ການ ລົງທຶນຂອງຕ່າງປະເທດ ເປັນເອກະພາບເທື່ອລະກ້າວ. ທົດລອງການ ອະນຸມັດໃຫ້ບໍລິສັດ ແລະ ຄົນຕ່າງປະເທດຊື້ຫຸ້ນສ່ວນຈາກບັນດາບໍລິສັດ ຫຸ້ນສ່ວນພາຍໃນປະເທດລວມທັງບັນດາວິສາຫະກິດແຫ່ງລັດ ທັນເປັນ ຫຸ້ນສ່ວນ, ໃນກຳນົດລະດັບທີ່ບົ່ງໄວ້ຕາມຂະແໜງການອາຊີບທຸລະກິດ.

ກໍ່ສ້າງສະຖາບັນຍັດ ແລະ ກຳນົດຄວາມຮັບຜິດຊອບຂອງອົງການ ບໍລິຫານຂັ້ນຕ່າງໆ ໃນການກວດກາການປະຕິບັດບັນດາຮ່າງຍັດຕິ ເຊິ່ງໄດ້ຮັບໃບອະນຸມັດແລ້ວ, ແກ້ໄຂບັນດາຂໍ້ຫຶດຂວາງຕໍ່ການປະຕິບັດ ຮ່າງຍັດຕິດ ກວດກາບັນດາວິສາຫະກິດ ໄດ້ລົງມືເຄື່ອນໄຫວ. ເພີ່ມເຕີມ ສະຖາບັນຍັດໃນການສ້າງຕັ້ງ ແລະ ເຄື່ອນໄຫວຂອງບັນດາຫ້ອງວ່າ ການທີ່ຕາງໜ້າໃຫ້ບໍລິສັດຕ່າງປະເທດປະຈຳຢູ່ຫວຽດນາມ, ສ້າງ ຄວາມສະດວກໃຫ້ແກ່ບໍລິສັດຕ່າງປະເທດດຳເນີນການລົງທຶນ, ທຸລະ ກິດ, ພ້ອມກັນນັ້ນກໍ່ຮັບປະກັນການຄຸ້ມຄອງຂອງລັດ, ສະກັດກັ້ນ ແລະ ຈັດແກ້ຢ່າງທັນເວລາຕໍ່ບັນດາການເຄື່ອນໄຫວທີ່ຜິດກົດໝາຍຂອງ ຫວຽດນາມ.

4 - ປະຕິຮູບຕໍ່ການບໍລິຫານ

ເນື້ອໃນປະຕິຮູບຕໍ່ການບໍລິຫານເຊິ່ງມະຕິກອງປະຊຸມຄະນະບໍລິຫານ ງານສູນກາງຄັ້ງທີ 8 (ສະໄໝທີ VII) ໄດ້ວາງອອກມານັ້ນຕ້ອງໄດ້ຜັນ ຂະຫຍາຍໃຫ້ປະຕິບັດຢ່າງຕັ້ງໜ້າ ຕາມໂຄງການ, ແຜນການ. ສືບຕໍ່ ກໍ່ສ້າງລະບົບກົດໝາຍໃຫ້ສອດຄ່ອງກັບກົນໄກຕະຫລາດຕາມກຳນົດທິດ ສັງຄົມນິຍົມ. ປະກາດໃຊ້ບັນດາກົດໝາຍໃໝ່ເຊັ່ນ: ກົດໝາຍການ ຄ້າ, ກົດໝາຍແຫ່ງທະນາຄານ, ກົດໝາຍພາສີອາກອນ, ກົດໝາຍ ໄປສະນີໂທລະຄົມມະນາຄົມ, ກົດໝາຍໄຟຟ້າ, ກົດໝາຍການກໍ່ສ້າງ, ກົດໝາຍວິທະຍາສາດ ແລະ ເຕັກໂນໂລຍີ, ກົດໝາຍຊັບພະຍາກອນ ຂອງປະເທດ...ປ່ຽນແປງເພີ່ມເຕີມບັນດາກົດໝາຍ ແລະ ຄຳສັ່ງດຳ

ລັດທີ່ປະຕິບັດໃນປະຈຸບັນວ່າດ້ວຍພາສີ, ວ່າດ້ວຍການສົ່ງເສີມໃຫ້ລົງ
ທຶນຢູ່ພາຍໃນປະເທດ ແລະ ການລົງທຶນຈາກຕ່າງປະເທດປະຈຳຢູ
ຫວຽດນາມ, ວ່າດ້ວຍບໍລິສັດ, ວ່າດ້ວຍວິສາຫະກິດເອກະຊົນ... ດັດແປງ
ການປະກາດໃຊ້ບົດບັນທຶກຂໍ້ກຳນົດກົດໝາຍໃນການປະຕິບັດກົດ
ໝາຍ; ຫລັງຈາກການປະກາດໃຊ້ກົດໝາຍແລ້ວຕ້ອງຮັບປະກັນລັກ
ສະນະເປັນເອກະພາບກ່ຽວກັບເນື້ອໃນ, ລັກສະນະທັນເວລາ ແລະ
ຄວາມສັກສິດໃນການປະຕິບັດກົດໝາຍ. ຊຸກຍູ້ການປະຕິຮູບໂດຍຟື້ນ
ຖານຕໍ່ລະບຽບການຢ່າງເຂັ້ມແຂງ. ສຳເລັດໂດຍໄວຕໍ່ການປະກາດໃຊ້
ແລະ ປະກາດເປັນທາງການສຳລັບບັນດາບົດບັນທຶກຂໍ້ກຳນົດກົດ
ໝາຍກ່ຽວກັບລະບຽບການບໍລິຫານທີ່ໄດ້ຮັບການປຽນແປງແລ້ວ.
ກວດກາບົດບັນທຶກຂໍ້ກຳນົດກົດໝາຍຢູ່ຂັ້ນຕ່າງໆ, ລົບລ້າງບັນດາຂໍ້
ຕົກລົງໂດຍຂະແໜງການ, ທ້ອງຖິ່ນປະກາດໃຊ້ເຊິ່ງຜິດກັບບົດບັນທຶກ
ຂໍ້ກຳນົດກົດໝາຍຂອງສະພາແຫ່ງຊາດ ແລະ ລັດຖະບານ; ກໍ່ສ້າງ
ສະຖາບັນຍັດສີ່ສາມຕໍ່ປະຊາຊົນກ່ຽວກັບບັນດາຂໍ້ຕົກລົງ ແລະ ວຽກ
ງານຂອງລັດ. ຜັນຂະຫຍາຍຢ່າງແຂງແຮງສຳລັບວຽກງານໂຄສະ
ນາ ແລະ ສຶກສາອົບຮົມກົດໝາຍ; ລະດົມກຳລັງຂອງບັນດາອົງການ
ຈັດຕັ້ງການເມືອງ, ສັງຄົມ, ວິຊາອາຊີບ, ບັນດາພາຫະນະສື່ມວນຊົນ
ໃຫ້ເຂົ້າຮ່ວມບັນຍົນຂວາຍສ້າງຕັ້ງລະບຽບ, ລະບຽບການ ແລະ ບັນ
ດາການເຄື່ອນໄຫວເປັນປະຈຳໃນການກໍ່ສ້າງແບບດຳລົງຊີວິດ ແລະ
ເຮັດວຽກຕາມກົດໝາຍໃນອົງການແຫ່ງລັດ ແລະ ໃນສັງຄົມ.

ຈັດວາງກົງຈັກບໍລິຫານຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນຄົບໃໝ່, ໂຮມ

ເປັນເອກະພາບສຳລັບອົງການຄຸ້ມຄອງ ໂດຍສະເພາະຂະແໜງການ ກ່ຽວກັບເສດຖະກິດບົນພື້ນຖານກຳນົດຢ່າງຈະແຈ້ງ ແລະ ປະຕິບັດຢ່າງ ຖືກຕ້ອງຕາມພາລະບົດບາດຄຸ້ມຄອງລັດຂອງບັນດາກະຊວງ, ຂະແໜງ ການ. ທັນເປັນລະອຽດຕໍ່ການແບ່ງຂັ້ນຄຸ້ມຄອງລັດລະຫວ່າງບັນດາອົງ ການຂອງລັດຖະບານກັບອຳນາດການປົກຄອງແຂວງ, ນະຄອນຂັ້ນ ຕ່າງໆທີ່ຂຶ້ນຕໍ່ສູນກາງໂດຍກົງ; ຈຳແນກສິດສະເພາະການ ແລະ ຄວາມ ຮັບຜິດຊອບຂອງແຕ່ລະຂັ້ນບໍລິຫານຢ່າງຈະແຈ້ງ; ທັນເປັນລະອຽດສຳ ລັບຫລັກການລວມສູນປະຊາທິປະໄຕໃຫ້ສອດຄ່ອງກັບຄວາມຕ້ອງການ ໃຫ້ຍົກສູງຄວາມສັກສິດໃນການຊີ້ນຳ, ກຳກັບການດຳເນີນເປັນເອກະ ພາບ ແລະ ລຸ່ວງຂອງລະບົບບໍລິຫານແຫ່ງລັດ ແລະ ຂອງຫົວໜ້າ ອົງການບໍລິຫານ ເພີ່ມເຕີມຂໍ້ຕົກລົງກ່ຽວກັບການກວດກາການບໍລິ ຫານ, ເອົາໃຈໃສ່ຢ່າງຈົດຈໍ່ຕໍ່ການກວດກາເປັນປົກກະຕິໂດຍຜ່ານລະ ບອບລາຍງານ, ການສະໜຸດບັນຊີ, ກວດສະໜຸດບັນຊີ; ຜ່ານຜ່າແກ້ ໄຂສະພາວະການມີຄະນະກວດກາ, ກວດການຫລາຍຄະນະເຊິ່ງສັບ ໄຂວ່ກັນ, ກໍ່ຄວາມລຳຄານໃຈ ແລະ ສັ້ນເປືອງຕໍ່ຣາກຖານ.

ປະກາດໃຊ້ສະຖາບັນຍົດລັດຖະກອນ ແລະ ລະບອບລັດຖະການ, ຂໍ້ ກຳນົດສຳລັບການສອບເສງເລືອກເຟັ້ນຫລືກວດກາ, ສອບເສງໃນເມື່ອ ເລືອກໃຊ້ຫລືເລື່ອນຊັ້ນຕຳແໜ່ງ. ເພີ່ມທະວີການບຳລຸງ, ບຳລຸງສ້າງ ໃໝ່ ແລະ ທັນຖັນແຖວພະນັກງານ, ລັດຖະກອນເປັນໜຸ່ມນ້ອຍ. ປະ ຕິບັດແຜນກຳນົດບຳລຸງ ແລະ ຈັດວາງຄືນໃໝ່ຕາມມາດຕະຖານຕຳ ແໜ່ງງານ; ຈັດວາງວຽກງານຄືນໃໝ່ຫລືເອົາບັນດາຜູ້ທີ່ບໍ່ມີຄວາມ

ສາມາດໃນການປະຕິບັດໜ້າທີ່ໃຫ້ອອກຈາກກົງຈັກ; ເດັດດ່ຽວແກ້ໄຂ ແລະ ກຳຈັດປັດເຂ້ຍ່ຕໍ່ບັນດາຜູ້ທີ່ເສື່ອມເສຍ, ປຽນທາດ. ເພີ່ມທະວີວິທີການ ແລະ ປະສານສົມທົບກຳລັງເພື່ອຊຸກຍູ້ຢ່າງແຂງແຮງສຳລັບການຕໍ່ສູ້ຕ້ານການສໍ້ລາດບັງຫລວງ, ຝຸ່ມເຝືອຍ, ອຳນາດບາດໃຫຍ່ໃນກົງຈັກຄຸ້ມຄອງລັດ ແລະ ບັນດາການຈັດຕັ້ງເສດຖະກິດແຫ່ງລັດ.

ດຳເນີນການສ້າງຕັ້ງສຳນັກງານບໍລິຫານໃນສານຍຸດຕິທຳປະຊາຊົນ, ເພີ່ມເຕີມສະຖາບັນຍັດເພື່ອເປັນຫລັກຖານໃຫ້ແກ່ການພິພາກສາ. ກຳນົດຮູບແບບການຈັດຕັ້ງ ແລະ ລະບຽບການຝ່ອງຮ້ອງໃຫ້ສອດຄ່ອງກັບຈຸດພິເສດຂອງບັນດາຄະດີຝ່ອງລະດັບບໍລິຫານ. ເລືອກເຟັ້ນ ແລະ ກໍ່ສ້າງບຳລຸງຕຸລາການບໍລິຫານ.

24/VII
ຫ້າມຈຳໜ່າຍ

ມະຕິ
ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ VIII
ຂອງພັກກອມມູນິດຫວຽດນາມ

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ VIII ຂອງພັກກອມມູນິດ ຫວຽດນາມໄດ້ດຳເນີນມາແຕ່ວັນທີ 28 ມິຖຸນາ 1996 ຫາວັນທີ 1 ກໍ ລະກົດ 1996 ທີ່ຮ່າໂນ້ຍ,

ມະຕິຕົກລົງ

1- ຜ່ານລາຍງານການເມືອງຂອງຄະນະບໍລິຫານງານສູນກາງສະ ໄໝທີ VII ທີ່ສະເໜີຕໍ່ກອງປະຊຸມໃຫຍ່. ມອບໝາຍໃຫ້ຄະນະບໍລິຫານ ງານສູນກາງສະໄໝທີ VIII ໂດຍອີງໃສ່ຜົນໄດ້ໃນການລົງມະຕິ ແລະ ຂໍ້ສະຫລຸບຕ່າງໆ ຂອງກອງປະຊຸມໃຫຍ່ເພື່ອສຳເລັດຢ່າງຄົບຖ້ວນ ແລະ ປະກາດໃຊ້ເປັນທາງການ.

2 - ຜ່ານບົດລາຍງານວ່າດ້ວຍທິດທາງ, ໜ້າທີ່ແຜນການພັດທະ ນາເສດຖະກິດ-ສັງຄົມ 5 ປີ 1996-2000; ມອບໝາຍໃຫ້ຄະນະບໍລິ ຫານງານສູນກາງສະໄໝທີ VIII ໂດຍອີງໃສ່ຜົນໄດ້ໃນການລົງມະຕິ

ແລະ ຂໍ້ສະຫລຸບຂອງກອງປະຊຸມໃຫຍ່ເພື່ອສຳເລັດຢ່າງຄົບຖ້ວນ ແລະ ປະກາດໃຊ້ເປັນທາງການ.

3 - ຜ່ານເປັນລາຍລັກອັກສອນທັງໝົດກ່ຽວກັບກົດລະບຽບຂອງ ພັກກອມມູນິດຫວຽດນາມເຊິ່ງໄດ້ຮັບການເພີ່ມເຕີມ ແລະ ດັດແປງ ແລ້ວ.

4 - ມອບໝາຍໃຫ້ຄະນະບໍລິຫານງານສູນກາງສະໄໝທີ VIII ແລະ ຄະນະພັກຂັ້ນຕ່າງໆຈົ່ງກໍ່ສ້າງ ໂຄງການກະທຳຢ່າງເປັນຮູບປະ ທຳເພື່ອຈັດຕັ້ງປະຕິບັດແຜນນະໂຍບາຍຕ່າງໆທີ່ລະບຸໄວ້ໃນເອກະສານ ຕ່າງໆ ເຊິ່ງໄດ້ຮັບການຜ່ານຈາກກອງປະຊຸມໃຫຍ່ໃຫ້ປະກົດເປັນຈິງ.

ກອງປະຊຸມໃຫຍ່ຜູ້ແທນຄັ້ງທີ VIII ຂອງພັກກອມມູນິດຫວຽດນາມ ຮຽກຮ້ອງທົ່ວພັກ, ທົ່ວປວງຊົນ, ທົ່ວກອງທັບຈົ່ງສາມັກຄີກັນເປັນຈິດ ໜຶ່ງໃຈດຽວ, ຜ່ານຜ່າທຸກຄວາມຫຍຸ້ງຍາກ, ຫ້າວຫັນສູ້ຊົນປະຕິບັດມະ ຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກຢ່າງມີໄຊ, ຍົກພາລະກິດປ່ຽນ ແປງໃໝ່ຂຶ້ນລະດັບສູງໃໝ່, ຊຸກຍູ້ພາລະກິດກໍ່ສ້າງ ແລະ ປົກປັກຮັກ ສາປະເທດຊາດເຊິ່ງໜ້າທີ່ໃຈກາງແມ່ນຫັນປະເທດເປັນອຸດສາຫະກຳ, ເປັນທັນສະໄໝເພື່ອຈຸດໝາຍປະຊາຊົນຮັ່ງມີ, ປະເທດເຂັ້ມແຂງ, ສັງ ຄົມມີຄວາມຍຸດຕິທຳ, ສີວິໄລ, ກ້າວຂຶ້ນສູ່ສັງຄົມນິຍົມຢ່າງໜັກແໜ້ນ.

ຮ່າໂນ້ຍ, ວັນທີ 1 ກໍລະກົດ 1996

ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ VIII

ຂອງພັກກອມມູນິດຫວຽດນາມ

ສຸນທອນພົດ
ອັດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ
ຄັ້ງທີ VIII

(ສະເໜີໂດຍສະຫາຍໂດເມືອຍ, ເລຂາທິການໃຫຍ່
ຄະນະບໍລິຫານງານສູນກາງສະໄໝທີ VIII
ໃນວັນທີ 1 ກໍລະກົດ 1996)

ຮອງຄະນະປະທານ,

ຮອງບັນດາສະຫາຍທີ່ປຶກສາຄະນະບໍລິຫານງານສູນກາງພັກ,

ຮອງສະຫາຍຜູ້ແທນທັງຫລາຍ,

ຮອງບັນດາທ່ານແຂກສາກົນ,

ພາຍຫລັງວັນເວລາຕ່າງໆ ທີ່ເຮັດວຽກຢ່າງຮີບຮ້ອນ, ມື້ນີ້ພວກເຮົາ ໄດ້ສຳເລັດຜົນເປັນຢ່າງດີສຳລັບໂຄງການທັງໝົດຂອງກອງປະຊຸມ ໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ VIII.

ກອງປະຊຸມໃຫຍ່ໄດ້ປຶກສາສົນທະນາ ແລະ ຜ່ານເອກະສານຕ່າງໆ

ອັນສຳຄັນ: ລາຍງານການເມືອງ; ທິດທາງ, ໜ້າທີ່ຂອງແຜນການພັດທະນາເສດຖະກິດ-ສັງຄົມ 5 ປີ 1996-2000; ກົດລະບຽບຂອງພັກ(ເພີ່ມເຕີມ ແລະ ດັດແປງ) ແລະ ມະຕິກອງປະຊຸມໃຫຍ່.

ກອງປະຊຸມໃຫຍ່ໄດ້ເລືອກຕັ້ງຄະນະບໍລິຫານງານສູນກາງຄັ້ງທີ VIII ທີ່ມີຄວາມສາມາດ ແລະ ຄຸນທາດຢ່າງພຽງພໍເພື່ອແບກຫາບພາລະສຳຄັນເຊິ່ງພັກ ແລະ ປະຊາຊົນມອບໝາຍໃຫ້, ອັນສະແດງໃຫ້ເຫັນລັກສະນະຕໍ່ເນື່ອງ, ສືບທອດ, ສືບຕໍ່ການປ່ຽນແປງໃໝ່ເພື່ອພາລະກິດກໍ່ສ້າງ ແລະ ປົກປັກຮັກສາປະເທດຊາດສັງຄົມນິຍົມ. ກອງປະຊຸມໃຫຍ່ມຸ່ງຫວັງ ແລະ ເຊື່ອໝັ້ນວ່າບັນດາສະຫາຍທີ່ຖືກເລືອກຕັ້ງເຂົ້າຄະນະບໍລິຫານງານສູນກາງສະໄໝທີ VIII ຈະອອກແຮງຮ່ຳຮຽນເພື່ອຍົກສູງລະດັບ, ສ້ຊົນສຳເລັດພາລະສຳຄັນທີ່ຖືກມອບໝາຍໃຫ້ຢ່າງດີເດັ່ນ, ເປັນແບບຢ່າງໃນການຮັກສາຖານະນາມ, ຄຸນທາດ, ສົມກຽດເປັນກຳມະການສູນກາງພັກກອມມູນິດຫວຽດນາມ.

ກອງປະຊຸມໃຫຍ່ຕີລາຄາສູງກ່ຽວກັບການອຸທິດທີ່ຜ່ານມາ ແລະ ຮູ້ສຶກສະຖຸງທີ່ສຸດຕໍ່ຄຳສະເໜີຂອງສະຫາຍຫລາຍຄົນໃນກົມການເມືອງ, ຄະນະເລຂາໃນຄະນະບໍລິຫານງານສູນກາງສະໄໝທີ VII ເຊິ່ງບໍ່ອອກຮັບເລືອກຕັ້ງຄືນເທື່ອໃໝ່ອີກເຂົ້າຄະນະບໍລິຫານງານສູນກາງສະໄໝທີ VIII, ສ້າງເງື່ອນໄຂເພື່ອຫັນເປັນໜຸ່ມໆສຳລັບອົງການສູງສຸດຂອງພັກໃນອາຍຸການໃໝ່. ພວກເຮົາອວຍພອນບັນດາສະຫາຍຈົ່ງມີສຸຂະພາບເຂັ້ມແຂງຢູ່ສະເໝີ, ສືບຕໍ່ອຸທິດຄວາມສາມາດ ແລະ ບົດຮຽນຂອງຕົນ

ໃຫ້ແກ່ພາລະກິດປະຕິວັດໃນໄລຍະໃໝ່.

ກອງປະຊຸມໃຫຍ່ພວກເຮົາຂໍຊົມເຊີຍການປະກອບສ່ວນອັນປະເສີດເລີດລ້ຳຈາກບັນດາສະຫາຍທີ່ປຶກສາ ແລະ ບັນດາສະຫາຍໃນຄະນະບໍລິຫານງານສູນກາງສະໄໝທີ VII. ດ້ວຍຄວາມນັບຖືເປັນຢ່າງສູງກອງປະຊຸມຄົບຄະນະຄັ້ງປະຖົມມະລຶກຄະນະບໍລິຫານງານສູນກາງສະໄໝທີ VIII ໄດ້ສະເໜີສະຫາຍທ່ານ ວອ ງວຽນວັນລິນ, ຟ້ຳມວັນດົ່ງ ແລະ ຫວໍ ຈິ ກົ່ງ ສາມສະຫາຍໃຫ້ສືບຕໍ່ເປັນທີ່ປຶກສາຂອງຄະນະບໍລິຫານງານສູນກາງພັກ.

ດ້ວຍຄວາມຈິງໃຈກອງປະຊຸມໃຫຍ່ຂໍຂອບອົກຂອບໃຈບັນດາສະຫາຍປະຕິວັດຜູ້ອາວຸໂສ, ບັນດາຜູ້ຊົງຄຸນວຸດທິ, ປັນຍາຊົນ, ບັນດາທ່ານຜູ້ນຳສາສະໜາ, ບັນດາແມ່ທ້ວຽດນາມຜູ້ວິລະຊົນ, ສະຫາຍ, ຜີ່ນ້ອງຮ່ວມຊາດ, ນັກຮົບໃນທ້ວປະເທດ ແລະ ຜີ່ນ້ອງຮ່ວມຊາດທີ່ອາໃສຢູ່ຕ່າງປະເທດໄດ້ປະກອບສ່ວນຢ່າງຕັ້ງໜ້າໃສ່ຜົນສຳເລັດອັນດີ ຂອງກອງປະຊຸມໃຫຍ່.

ດ້ວຍຄວາມຈິງໃຈກອງປະຊຸມໃຫຍ່ຂໍຂອບອົກຂອບໃຈບັນດາຄະນະຜູ້ແທນສາກົນໄດ້ນຳເອົາບັນດາອາລົມຈິດອັນລ້ຳຄ່າ, ຈິງໃຈມາຫາພັກ ແລະ ປະຊາຊົນທ້ວຽດນາມ, ປະກອບສ່ວນສຳຄັນໃສ່ຜົນສຳເລັດອັນດີ ຂອງກອງປະຊຸມໃຫຍ່.

ດ້ວຍຄວາມຈິງໃຈກອງປະຊຸມໃຫຍ່ຂໍຂອບອົກຂອບໃຈການມີໜ້າ ຂອງຄະນະທູດຕານຸທູດ, ຜູ້ຕາງໜ້າບັນດາການຈັດຕັ້ງສາກົນ, ບັນດາ

ການຈັດຕັ້ງທີ່ບໍ່ແມ່ນຂອງລັດຖະບານປະຈຳທີ່ຮ່ຳໂນ້ຍ, ບັນດາອົງການ ຂ່າວສານ, ໜັງສືພິມວາລະສານ, ວິທະຍຸກະຈາຍສຽງ, ໂທລະພາບ ພາຍໃນປະເທດ ແລະ ຕ່າງປະເທດໄດ້ມີກຽດມາຮ່ວມ ແລະ ເຜີຍຂ່າວ ກ່ຽວກັບກອງປະຊຸມໃຫຍ່ຢ່າງທັນເວລາ.

ກອງປະຊຸມໃຫຍ່ສະແດງຄວາມຊົມເຊີຍ ແລະ ຂອບອົກຂອບໃຈອະ ນຸກຳມະການຈັດຕັ້ງທີ່ຮັບໃຊ້ກອງປະຊຸມໃຫຍ່ຄັ້ງທີ່ VIII ພ້ອມດ້ວຍພະນັກ ງານ, ນັກຮົບ, ກຳມະກອນ, ພາລະກອນທຸກໆຄົນໄດ້ອອກເຫື່ອເທແຮງ ໃນການເຮັດວຽກ ແລະ ຮັບໃຊ້ກອງປະຊຸມໃຫຍ່, ປະກອບສ່ວນຢ່າງຕັ້ງ ໜ້າໃສ່ຜົນສຳເລັດຢ່າງດີຂອງກອງປະຊຸມໃຫຍ່.

ຮອງສະຫາຍທັງຫລາຍ,

ກອງປະຊຸມໃຫຍ່ຄັ້ງທີ VIII, ໄດ້ສຳເລັດລົງຢ່າງງົດງາມ, ຜົນສຳ ເລັດດັ່ງກ່າວນັ້ນແມ່ນເປັນຄວາມມ່ວນຊື່ນອັນຍິ່ງໃຫຍ່ ແລະ ເປັນຄວາມ ປຸກລະດົມທົ່ວພັກ, ທົ່ວປວງຊົນ ແລະ ທົ່ວກອງທັບເຮົາ. ໝາກຜົນ ຂອງກອງປະຊຸມໃຫຍ່ມີຄວາມໝາຍຕັດສິນຕໍ່ຊະຕາກຳແຫ່ງຊາດ ແລະ ອະນາຄົດຂອງບ້ານເມືອງໃນເວລາທີ່ພວກເຮົາຈວນຈະກ້າວເຂົ້າ ສູ່ສະຕະວັດທີ XXI.

ກອງປະຊຸມໃຫຍ່ຄັ້ງທີ VIII ຂອງພັກແມ່ນກອງປະຊຸມໃຫຍ່ສືບຕໍ່ ການປ່ຽນແປງໃໝ່ເພື່ອພາລະກິດກໍ່ສ້າງ ແລະ ປົກປັກຮັກສາປະເທດ ຊາດ, ເພື່ອຄວາມສົມບູນພຸນສຸກຂອງປະຊາຊົນ. ກອງປະຊຸມໃຫຍ່ໄດ້

ຕົກລົງຫລາຍບັນຫາອັນສຳຄັນຍິ່ງ, ເຊິ່ງໄດ້ຮັບການຈັດຕັ້ງປະຕິບັດ ຢ່າງມີຜົນສັກສິດ. ທົ່ວພັກ, ທົ່ວປວງຊົນ ແລະ ທົ່ວກອງທັບເຮົາຈົ່ງເພີ່ມ ທະວີຄວາມສາມັກຄີ, ເປັນຈິດໜຶ່ງໃຈດຽວ, ອອກແຮງສູ້ຊົນສຳເລັດ ຜົນເປັນຢ່າງດີຈຸດໝາຍ ແລະ ວຽກງານຕ່າງໆ ໂດຍກອງປະຊຸມໃຫຍ່ ຄັ້ງທີ VIII ວາງອອກ.

ໃນສະເພາະໜ້ານີ້ພວກເຮົາມີຂໍ້ສະດວກຫລາຍຢ່າງ, ພ້ອມກັນນັ້ນ ກໍ່ມີຂໍ້ຫຍຸ້ງຍາກ, ການທົດສອບກໍ່ບໍ່ໜ້ອຍ. ພະນັກງານ, ສະມາຊິກພັກ, ພົນລະເມືອງແຕ່ລະຄົນຈົ່ງຍົກສູງຄວາມຕັດສິນໃຈ ແລະ ການກະທຳ ເປັນຮູບປະທຳເພື່ອປະກອບສ່ວນເສີມຂະຫຍາຍຂໍ້ສະດວກ, ຍາດເອົາ ການລະໂອກາດດີ, ແກ້ໄຂຂໍ້ຫຍຸ້ງຍາກ, ຜ່ານຜ່າຄວາມທົດສອບ, ບຸກ ບືນປະຕິບັດຈຸດໝາຍປະຊາຊົນຮັ່ງມີ, ປະເທດຊາດເຂັ້ມແຂງ, ສັງຄົມມີ ຄວາມ ຍຸດຕິທຳ, ສີວິໄລ, ກໍ່ສ້າງສັງຄົມນິຍົມໃຫ້ສຳເລັດຜົນດີ.

ເພື່ອເຮັດພາລະກຳປະຫວັດສາດຂອງຕົນໃນໄລຍະໃໝ່ໃຫ້ຫລ້ອມ, ພັກເຮົາຕ້ອງປ່ຽນແປງໃໝ່ໂດຍຕົນເອງ ແລະ ປັບປຸງ, ກໍ່ສ້າງພັກໃຫ້ ໃສສະອາດ, ໜັ້ນແກ່ນເຂັ້ມແຂງຢ່າງແທ້ຈິງ, ຍົກສູງກຳລັງສູ້ຮົບ ແລະ ຄວາມສາມາດໃນການນຳພາ. ຍິ່ງກວ່າເວລາໃດໝົດ, ພວກເຮົາຈື່ ຈຳ ແລະ ຕັດສິນໃຈເຮັດຕາມຄວາມສອນຂອງປະທານ ໂຮ່ຈິມິນຜູ້ຍິ່ງ ໃຫຍ່: "ພັກເຮົາເປັນພັກກຳອຳນາດ. ສະມາຊິກພັກ, ພະນັກງານແຕ່ລະ ຄົນຕ້ອງໜັ່ນປະຢັດ ສັດທ່ຽງ, ເຫັນແກ່ແຕ່ສ່ວນລວມບໍ່ເຫັນແກ່ສ່ວນ ຕົວຢ່າງແທ້ຈິງ, ຕ້ອງເຮັດໃຫ້ສົມກຽດກັບການເປັນຜູ້ນຳພາ, ເປັນຄົນ

ໃຊ້ຜູ້ຈົ່ງຮັກພັກດີອິຫລິຂອງປະຊາຊົນ".

ສິ່ງດັ່ງກ່າວນີ້ກໍ່ແມ່ນປັດໄຈຕັດສິນຊີ້ຂາດໄຊຊະນະໃນຂະບວນວິວັດ ປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VIII.

ໃນບັນຍາກາດ ທີ່ຊື່ນຊົ່ມ, ເບີກບານຕໍ່ ຜົນສຳເລັດເປັນຢ່າງດີ ຂອງກອງປະຊຸມໃຫຍ່, ດ້ວຍຄວາມຄຶກຄື້ນຂ້າພະເຈົ້າປະກາດອັດກອງ ປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີ VIII ຂອງພັກກອມມູນິດຫວຽດ ນາມ.

ສາລະບານ

	ໜ້າ
ຄຳນຳຂອງສຳນັກພິມຈຳໜ່າຍ	3
- ສຸນທອນຜົດໄຂກອງປະຊຸມໃຫຍ່ຜູ້ແທນ ທົ່ວປະເທດ ຄັ້ງທີ VIII	
- ສືບຕໍ່ພາລະກິດປ່ຽນແປງໃໝ່, ຊຸກຍູ້ການຫັນເປັນ ອຸດສາຫະກຳ, ຫັນເປັນຫັນສະໄໝຢ່າງແຂງແຮງ ເພື່ອຈຸດໝາຍໃຫ້ປະຊາຊົນຮັ່ງມີ, ປະເທດຊາດເຂັ້ມ ແຂງ, ສັງຄົມມີຄວາມຍຸດຕິທຳ, ສີວິໄລ, ກ້າວຂຶ້ນ ສັງຄົມນິຍົມຢ່າງໜັກແໜ້ນ	12
- ລາຍງານການເມືອງຂອງ ຄະນະບໍລິຫານງານ ສຸນກາງພັກສະໄໝທີ VII ທີ່ກອງປະຊຸມຜູ້ແທນທົ່ວ ປະເທດຄັ້ງທີ VIII ຂອງພັກ	72
- ທິດທາງ, ໜ້າທີ່ແຜນການພັດທະນາ ເສດຖະກິດ - ສັງຄົມ 5 ປີ 1996-2000	200
- ມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ VIII ຂອງພັກກອມມູນິດຫວຽດນາມ	320
- ສຸນທອນຜົດອັດກອງປະຊຸມໃຫຍ່ ຜູ້ແທນທົ່ວປະເທດຄັ້ງທີ VIII	322

ศูนย์วิทยทรัพยากร
จุฬาลงกรณ์มหาวิทยาลัย

ห02.1.82

ผู้รับผิดชอบการพิมจำหน่าย:
ฝ้ามอบสิง
ผู้บันนาทิการ: ดั้งอบจ่รอ
หน้าปึก: เยืองไทเฮิน
แก้ผิด: ดั้งอบจ่รอ

28.1.2011.

ພິມທີ່ ໂຮງພິມ: ຂອງສຳນັກພິມການເມືອງແຫ່ງຊາດຫ້ອງຄຸມງານເລກພິມ 31/103 ກພ ວັນທີ 13-3-96 ຂະໜາດ 13 x 19, ຈຳນວນ 2000 ຫົວພິມແລ້ວ ແລະ ມອບເປັນ ສຳເນົາໃນວັນທີ 20-12-1996. .

ສຳນັກພິມການເມືອງແຫ່ງຊາດ
24 ກວາງຈຸ, ຮ່າໂນ້ຍ
ໂທ: 8252008 ພ: 84 - 4 - 251881

ຊອກອ່ານ:

ສະຖາບັນຄົ້ນຄວ້າອາຊີອາຄະເນ:

- ວັດຈະນານຸກົມ ລາວ - ຫວຽດ

ຮ.ປ.ລ.ຍ.ເ. - ຮ.ອ.ຈ. ດີງແທນເຫວ, ຈີ້ງດິກຫຽນ

- ແບບຮຽນພາສາຫວຽດ (ສຳລັບຄົນລາວ)

ສະຖາບັນຄົ້ນຄວ້າອາຊີອາຄະເນ:

- ແບບຮຽນພາສາລາວ(ສຳລັບຄົນຫວຽດ)